# ການສໍາຫຼວດລະດັບຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ໃນ ສປປ ລາວ 2014

## ການສຶກສາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ


ຄ ກ ມ ຊ
NCAW

ສຖຕ
LAO STATISTICS BUREAU

UNFPA

UN WOMEN
United Nations Entity for Gender Equality and the Empowerment of Women

World Health Organization

**ຈັດພິມໂດຍ:**

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ, ສປປ ລາວ

ພິມຄັ້ງທີ 1 ປີ 2015

**Photo Credits:**

UNFPA Lao PDR/Micka Perrier

© ສະຫງວນລິຂະສິດ: ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ
ຂໍສະຫງວນລິຂະສິດທັງໝົດໃນການພິມ/ຈຳໜ່າຍ, ພິມຄືນໃໝ່ ຫຼື ແປບົດລາຍງານເຫຼັ້ມນີ້ ໃນທຸກຮູບແບບ. ການຂໍອະນຸມັດໃນການຈັດພິມເອກະສານນີ້ ແລະ/ຫຼື ການແປເອກະສານທັງໝົດ, ໃນທຸກຮູບແບບບໍ່ວ່າຈະເພື່ອຈຸດປະສົງທາງການຄ້າ ຫຼື ເພື່ອຜົນກຳໄລ ຫຼື ບໍ່ຫວັງຜົນກຳໄລກໍ່ຕາມ, ທຸກຈຸດປະສົງ ແມ່ນຕ້ອງໄດ້ຮັບອະນຸມັດເປັນລາຍລັກອັກສອນ ຈາກ ຄກມຊ.

# ການສຳຫຼວດລະດັບຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ໃນ ສປປ ລາວ 2014

## ການສຶກສາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

**ອົງການຈັດຕັ້ງປະຕິບັດ:**

ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ

ສູນສະຖິຕິແຫ່ງຊາດ

# ສາລະບານ


ຕາຕະລາງ ........ vi

ກ່ອງຂໍ້ມູນ ........ vi

ຮູບພາບ........ vii

ຄໍານໍາ ........ x

ບົດຂອບໃຈ ........ xii

ຊື່ ແລະ ຄໍາສັບຫຍໍ້........ xiii

ບົດສັງລວມຫຍໍ້ ........ xv

**ພາກທີ 1. ພາກສະເໜີ ........ 1**

1.1 ຂໍ້ມູນກ່ຽວກັບ ສປປ ລາວ ໂດຍສັງເຂບ........ 1

1.2 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ........ 3

1.3 ຄວາມເປັນມາຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວ........ 7

**ພາກທີ 2. ຈຸດປະສົງ ແລະ ວິທີການວິໄຈ........ 13**

2.1 ຈຸດປະສົງ ແລະ ໂຄງຮ່າງຂອງການສຶກສາ ........ 13

2.2 ການສໍາຫຼວດທາງດ້ານປະລິມານ........ 14

2.3 ການສໍາຫຼວດທາງດ້ານຄຸນນະພາບ ........ 20

2.4 ຫຼັກການທາງດ້ານຈັນຍາທໍາ ແລະ ຄວາມປອດໄພ ........ 23

2.5 ດ້ານດີ ແລະ ຂໍ້ຈໍາກັດຂອງການສໍາຫຼວດ........ 24

**ພາກທີ 3. ສັດສ່ວນໃນຂອງການຕອບ ແລະ ຈຸດພິເສດຂອງຜູ້ໃຫ້ຂໍ້ມູນ ........ 27**

3.1 ອັດຕາໃນການຕອບ ........ 27

3.2.ຈຸດພິເສດທາງດ້ານປະຊາກອນ ແລະ ເສດຖະກິດ-ສັງຄົມ........ 27

3.3 ຄວາມຮູ້ສຶກຂອງຜູ້ໃຫ້ຂໍ້ມູນຫຼັງການສໍາພາດ........ 30

3.4 ຜົນກະທົບຂອງການສຶກສາຕໍ່ພະນັກງານພາກສະໜາມ........ 30

**ພາກທີ 4. ຄວາມຮຸນແຮງຕໍ່ແມ່ຍິງ ໂດຍ ຜົວ/ຄູ່ຮ່ວມຊີວິດ ........ 33**

4.1 ພາກສະເໜີ ........ 33

4.2 ຄວາມຮຸນແຮງທາງດ້ານຮ່າງກາຍ........ 33

4.3 ຄວາມຮຸນແຮງທາງເພດ ........ 38

4.4 ອັດຕາສ່ວນຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຕໍ່ແມ່ຍິງ ........ 41

4.5 ລວມທຸກການໃຊ້ຄວາມຮຸນແຮງຕໍ່ຄູ່ຮ່ວມຊີວິດໃນປະເພດຕ່າງໆ ........ 42

4.6 ຄວາມຮຸນແຮງທາງດ້ານຈິດໃຈ........ 43

4.7 ການຄວບຄຸມພຶດຕິກໍາ........ 47

4.8 ຄວາມຮຸນແຮງທາງດ້ານເສດຖະກິດ ........ 48

4.9 ບົດສົນທະນາ ........ 49

**ພາກທີ 5. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ....................52**

5.1 ພາກສະເໜີ ....................52

5.2 ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດແຕ່ ອາຍຸ 15 ປີ ....................52

5.3 ຜູ້ກະທຳຜິດໃນການໃຊ້ຄວາມຮຸນແຮງໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດແຕ່ ອາຍຸ 15 ປີ....................53

5.4 ການໃຊ້ຄວາມຮຸນແຮງທາງເພດໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແຕ່ອາຍຸ 15 ປີ....................54

5.5 ການໃຊ້ຄວາມຮຸນແຮງທາງເພດໃນໄວເດັກ....................54

5.6 ການຖືກຄວາມຮຸນແຮງຊ້ຳຊ້ອນກັນຈາກຄົນທີ່ແມ່ນ ແລະ ບໍ່ແມ່ນຄູ່ຮ່ວມຊີວິດ....................55

5.7 ບົດສົນທະນາ ....................56

**ພາກທີ 6. ທັດສະນະຄະຕິ ແລະ ຄວາມຮັບຮູ້ທີ່ເປັນປັດໄຈພື້ນຖານ ຂອງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ............58**

6.1 ພາກສະເໜີ ....................58

6.2 ທັດສະນະຄະຕິຂອງແມ່ຍິງຕໍ່ສິດສະເໝີພາບຍິງ-ຊາຍ ແລະການໃຊ້ຄວາມຮຸນແຮງ ....................59

6.3 ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ....................62

6.4 ທັດສະນະຄະຕິຕໍ່ການປົກຄອງຕົນເອງໃນທາງເພດ ....................66

6.5 ທັດສະນະຄະຕິ ແລະ ຄວາມຮັບຮູ້ຂອງຜູ້ຊາຍ ....................68

6.6 ບົດສົນທະນາ....................70

**ພາກທີ 7. ຄວາມສຳພັນລະຫວ່າງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ແລະ ສຸຂະພາບຮ່າງກາຍ, ຈິດໃຈ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ....................73**

7.1 ພາກສະເໜີ ....................73

7.2 ການບາດເຈັບທີ່ເປັນຜົນກະທົບໂດຍກົງຈາກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ....................73

7.3 ສະພາບການໂດຍລວມກ່ຽວກັບບັນຫາສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ ....................75

7.4 ຄວາມສຳພັນກັນລະຫວ່າງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ ....................78

7.5 ບົດສົນທະນາ....................80

**ພາກທີ 8. ຄວາມສຳພັນກັນລະຫວ່າງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ແລະ ເດັກ (ລູກ) ....................82**

8.1 ພາກສະເໜີ....................82

8.2 ຜົນກະທົບຕໍ່ຊີວິດການເປັນຢູ່ຂອງເດັກ (ລູກ)....................82

8.3 ບົດສົນທະນາ....................86

**ພາກທີ 9. ຍຸດທະສາດການປົກປ້ອງຕົນເອງຂອງແມ່ຍິງ ແລະ ການຕອບໂຕ້ ການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ .......88**

9.1 ພາກສະເໜີ ....................88

9.2 ໃຜຈະຮັບແຈ້ງໃນກໍລະນີມີການໃຊ້ຄວາມຮຸນແຮງ?....................89

9.3 ເຫດຜົນໃນການຂໍຄວາມຊ່ວຍເຫຼືອ ຫຼື ບໍ່ຂໍຄວາມຊ່ວຍເຫຼືອ ....................91

9.4 ການໜີອອກຈາກເຮືອນ ຍ້ອນບັນຫາຖືກນຳໃຊ້ຄວາມຮຸນແຮງ....................93

9.5 ການປົກປ້ອງຕົນເອງຂອງແມ່ຍິງ ....................94

9.6 ຄວາມຮັບຮູ້ກ່ຽວກັບກົດໝາຍ ແລະ ການມີສ່ວນຮ່ວມຂອງສານໃນການຊ່ວຍເຫຼືອຜູ້ລອດຊີວິດ ........ 95
9.7 ບົດສົນທະນາ ........ 97

**ພາກທີ 10. ບັນດາປັດໄຈທີ່ມີຄວາມສຳພັນກັບການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ........ 102**
10.1 ພາກສະເໜີ ........ 102
10.2 ວິທີການວິເຄາະ ........ 103
10.3 ບັນດາປັດໄຈທີ່ມີຄວາມສຳພັນກັບການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນ ທີ່ຜ່ານມາ ........ 104
10.4 ບົດສົນທະນາ ........ 105

**ພາກທີ 11. ສະຫຼຸບ ........ 109**
11.1 ພາກສະເໜີ ........ 109
11.2 ການແຜ່ຫຼາຍ, ປະເພດ ແລະ ຄວາມຖີ່ ຂອງການນຳໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ........ 109
11.3 ມຸມມອງ ແລະ ທັດສະນະຄະຕິຂອງແມ່ຍິງ ແລະ ຜູ້ຊາຍກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ........ 110
11.4 ຄວາມສຳພັນກັນລະຫວ່າງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ແລະ ສຸຂະພາບ ແລະ ຊີວິດຂອງແມ່ຍິງ, ລູກ ແລະ ຄອບຄົວ ........ 110
11.5 ການຕອບໂຕ້ຂອງແມ່ຍິງຕໍ່ຄວາມຮຸນແຮງ, ຍຸດທະສາດໃນການຫຼຸດຜ່ອນຜົນກະທົບ ແລະ ລະບົບການຊ່ວຍເຫຼືອ ........ 111
11.6 ບັນດາປັດໄຈ ທີ່ມີຄວາມສຳພັນກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ........ 112

**ພາກທີ 12. ການຈັດຕັ້ງປະຕິບັດນະໂຍບາຍ ແລະ ຄຳແນະນຳ ........ 115**
12.1 ການສົ່ງເສີມພັນທະທາງດ້ານການເມືອງ ແລະ ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ........ 115
12.2 ການສົ່ງເສີມການປ້ອງກັນຂັ້ນພື້ນຖານ ........ 118
12.3 ການກະກຽມລະບົບການປ້ອງກັນ ແລະ ແກ້ໄຂຢ່າງເໝາະສົມ ........ 120

**ເອກະສານອ້າງອີງ ........ 123**
ເອກະສານຊ້ອນທ້າຍ ທີ I: ລາຍຊື່ຄະນະ ແລະ ຜູ້ປະສານງານທັງໝົດ ........ 128
ເອກະສານຊ້ອນທ້າຍ ທີ II: ແບບສອບຖາມໃນການສຳຫຼວດ ........ 132
ເອກະສານຊ້ອນທ້າຍ ທີ III: ຄຳແນະນຳການສຳພາດທາງດ້ານຄຸນນະພາບ (IDI, FGD, KII) ........ 185
ເອກະສານຊ້ອນທ້າຍ ທີ IV: ວິທີວິທະຍາໃນການສ້າງດັດຊະນີສະຖານະພາບພາບທາງເສດຖະກິດ-ສັງຄົມ ........ 200
ເອກະສານຊ້ອນທ້າຍ ທີ V: ການວິເຄາະບັນດາປັດໄຈສ່ຽງຕ່າງໆ ........ 209
ເອກະສານຊ້ອນທ້າຍ ທີ V: ຕາລາງສະຖິຕິ ........ 215

# ຕາຕະລາງ

ຕາລາງທີ 1.1 ຕົວຊີ້ວັດທາງດ້ານສະຖິຕິປະຊາກອນ ແລະ ເສດຖະກິດ-ສັງຄົມ ຂອງ ສປປ ລາວ

ຕາລາງທີ 1.2 ຜົນກະທົບຈາກການນຳໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດຕໍ່ສຸຂະພາບ, ການສືບທອດໃນຫຼາຍຮຸ່ນຄົນ ແລະ ເສດຖະກິດ-ສັງຄົມ

ຕາລາງທີ 2.1 ກຸ່ມຕົວຢ່າງ ໂດຍແບ່ງຕາມຕົວເມືອງ/ຊົນນະບົດ, ແລະ ໃນພາກ

ຕາລາງທີ 2.2 ຂະໜາດກຸ່ມຕົວຢ່າງ ໂດຍແບ່ງຕາມພາກ ແລະ ປະເພດຂອງການສຳພາດ

ຕາລາງທີ 9.1 ເຫດຜົນຫຼັກທີ່ບັນດາແມ່ຍິງທີ່ມີປະສົບການໃນການຖືກນຳໃຊ້ຄວາມຮຸນແຮງທາງຮ່າງກາຍ/ທາງເພດ ຈະຊອກຫາ ຫຼື ບໍ່ຊອກຫາ ການຊ່ວຍເຫຼືອຈາກບັນດາອົງການຈັດຕັ້ງຕ່າງໆ, ສປປ ລາວ, ປີ 2014 (ຈຳນວນ=346)

# ກ່ອງຂໍ້ມູນ

ກັບທີ 1.1 'ຄູ່ຮ່ວມຊີວິດທີ່ໃກ້ຊິດ' ແລະ 'ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ'ແມ່ນຫຍັງ?

ກັບທີ 2.1 ໂຄງສ້າງຂອງແບບສອບຖາມຂອງແມ່ຍິງ

ກັບທີ 2.2 ນິຍາມໃນການປະຕິບັດງານທີ່ໃຊ້ໃນການສຳຫຼວດ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ

ກັບທີ 6.1 P-value ແມ່ນຫຍັງ?

ກັບທີ 10.1 ລະດັບການທົດຖອຍຫຼາຍຕົວແປແມ່ນຫຍັງ?

ກັບທີ 10.2 ອັດຕາສ່ວນທີ່ບໍ່ຖືກກັນ ແລະ ປັດໃຈທີ່ກໍ່ໃຫ້ເກີດຄວາມສັບສົນ

ກັບທີ 12.1 ໂຄງການຕົວແບບ ສຳລັບການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຂັ້ນເບື້ອງຕົ້ນໃນຊຸມຊົນ

ກັບທີ 12.2 ໂຄງການຕົວແບບ ສຳລັບການສຶກສາໃນໂຮງຮຽນ ເພື່ອການປ້ອງກັນຄວາມຮຸນແຮງທີ່ມີພື້ນຖານທາງເພດ

# ຮູບພາບ


ຮູບທີ 1.1 ແຜນທີ່ ສປປ ລາວ

ຮູບທີ 1.2 ຮູບແບບທາງນິເວດວິທະຍາເພື່ອຄວາມເຂົ້າໃຈ ການໃຊ້ຄວາມຮຸນແຮງ

ຮູບທີ 2.1 ການນຳໃຊ້ບັດໜ້າ ເພື່ອການລາຍງານ ກໍລະນີທີ່ເດັກຖືກລ່ວງລະເມີດທາງເພດ

ຮູບທີ 3.1 ການແບ່ງຕາມພູມສັນຖານຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ ປີ 2014 (ຈຳນວນ=2,997)

ຮູບທີ 3.2 ການແບ່ງຕາມຊົນເຜົ່າຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ ປີ 2014 (ຈຳນວນ=2,997)

ຮູບທີ 3.3 ການແບ່ງຕາມອາຍຸຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ ປີ 2014 (ຈຳນວນ=2,997)

ຮູບທີ 3.4 ລະດັບການສຶກສາ ໂດຍແບ່ງຕາມຕົວເມືອງ/ຊົນນະບົດ, ສປປ ລາວ ປີ 2014 (ຈຳນວນ=2,997)

ຮູບທີ 3.5 ການແບ່ງຕາມສະພາບການຂອງຄູ່ຮ່ວມຊີວິດໃນປັດຈຸບັນ ຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ ປີ 2014 (ຈຳນວນ=2,997)

ຮູບທີ 4.1 ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນຊ່ວງຊີວິດ ແລະ ໃນປັດຈຸບັນຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍລວມ ແລະ ແບ່ງຕາມພາກ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.2 ອັດຕາການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍອາຍຸ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.3 ອັດຕາການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍການສຶກສາ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.4 ອັດຕາຂອງພຶດຕິກຳ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.5 ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນໄລຍະຕະຫຼອດຊີວິດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍລະດັບຄວາມຮ້າຍແຮງ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.6 ຄວາມຖີ່ຂອງພຶດຕິກຳຕ່າງໆ ຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.7 ອັດຕາສ່ວນ ຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນລະຫວ່າງການຖືພາ ຂອງແມ່ຍິງທີ່ເຄີຍຖືພາ, ສປປ ລາວ ປີ 2014 (ຈຳນວນ=2,744)

ຮູບທີ 4.8 ອັດຕາຂອງການໃຊ້ຄວາມຮຸນແຮງທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.9 ອັດຕາຂອງການໃຊ້ຄວາມຮຸນແຮງທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດໂດຍກຸ່ມອາຍຸ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.10 ອັດຕາຂອງການໃຊ້ຄວາມຮຸນແຮງທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍລະດັບການສຶກສາ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.11 ອັດຕາຂອງພຶດຕິກຳສະເພາະ ຂອງການໃຊ້ຄວາມຮຸນແຮງທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.12 ຄວາມຖີ່ຂອງພຶດຕິກຳສະເພາະ ຂອງການໃຊ້ຄວາມຮຸນແຮງທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.13 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍແລະ/ຫຼື ທາງເພດໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍພາກພື້ນ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.14 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍແລະ/ຫຼື ທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍອາຍຸ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.15 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍແລະ/ຫຼື ທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍລະດັບການສຶກສາ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 4.16 ລວມຂໍ້ມູນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍແລະ/ຫຼື ທາງເພດ ໃນໄລຍະເວລາຕະຫຼອດຊີວິດ
ຮູບທີ 4.17 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 4.18 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍກຸ່ມອາຍຸ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 4.19 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍລະດັບການສຶກສາ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 4.20 ອັດຕາຂອງພຶດຕິກຳທີ່ແຕກຕ່າງກັນ ຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 4.21 ການໃຊ້ຄວາມຮຸນແຮງທາງຮ່າງກາຍ, ຈິດໃຈ ແລະ ທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດ
ຮູບທີ 4.22 ອັດຕາຂອງປະເພດ ຂອງການຄວບຄຸມການປະພຶດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 4.23 ອັດຕາຂອງປະເພດ ຂອງການລ່ວງລະເມີດທາງດ້ານເສດຖະກິດ ໂດຍຜົວ/ຄູ່ຮ່ວມຊີວິດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 5.1 ອັດຕາຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍ ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 5.2 ເປີເຊັນຂອງແມ່ຍິງທີ່ໄດ້ລາຍງານ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍ ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ໂດຍປະເພດຂອງຜູ້ກະທຳຜິດ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 5.3 ອັດຕາຂອງການໃຊ້ຄວາມຮຸນແຮງທາງເພດ ໃນຊ່ວງຊີວິດໂດຍ ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 5.4 ຜູ້ກະທຳຜິດທີ່ແມ່ຍິງທີ່ໄດ້ລາຍງານ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍ ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ໂດຍປະເພດຂອງຜູ້ກະທຳຜິດ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 6.1 ທັດສະນະຄະຕິກ່ຽວກັບສິດສະເໝີພາບຍິງ-ຊາຍ: ອັດຕາສ່ວນຂອງແມ່ຍິງທີ່ຖືກສຳພາດ ທີ່ເຫັນດີກັບປະໂຫຍກສະເພາະໃດໜຶ່ງ ໂດຍການແຍກຕາມພູມສັນຖານ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 6.2 ທັດສະນະຄະຕິກ່ຽວກັບສິດສະເໝີພາບຍິງ-ຊາຍ: ອັດຕາສ່ວນຂອງແມ່ຍິງທີ່ຖືກສຳພາດ ທີ່ເຫັນດີກັບປະໂຫຍກສະເພາະໃດໜຶ່ງຂອງແມ່ຍິງທີ່ ເຄີຍ/ບໍ່ເຄີຍ ມີປະສົບການໃນການຖືກໃຊ້ຄວາມຮຸນແຮງ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 6.3 ທັດສະນະຄະຕິທີ່ນຳໄປສູ່ການໃນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໃນຄູ່ຮ່ວມຊີວິດ ໃນຈຳນວນຜູ້ຕອບແບບສອບຖາມທັງໝົດ ໂດຍພາກ, ສປປ ລາວ ປີ 2014 (ຈຳນວນ=2,997) 'ຜູ້ຊາຍມີເຫດຜົນທີ່ດີໃນການຕີເມຍຂອງເຂົາ ຖ້າວ່າ...'
ຮູບທີ 6.4 ທັດສະນະຄະຕິທີ່ນຳໄປສູ່ການໃນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໃນຄູ່ຮ່ວມຊີວິດ: ອັດຕາສ່ວນຂອງແມ່ຍິງທີ່ເວົ້າວ່າເຂົາເຈົ້າເຫັນດີວ່າ ຜູ້ຊາຍມີເຫດຜົນທີ່ດີໃນການຕີເມຍຂອງເຂົາ ສຳລັບບັນດາເຫດຜົນດ້ານລຸ່ມ, ສປປ ລາວ ປີ 2014 (ຈຳນວນ=2,997)
ຮູບທີ 6.5 ທັດສະນະຄະຕິຂອງແມ່ຍິງ ໄປສູ່ການປົກຄອງຕົນເອງໃນດ້ານເພດ ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ ໂດຍພາກ, ສປປ ລາວ ປີ 2014 (ຈຳນວນ=2,997) ແມ່ຍິງທີ່ເຫັນດີວ່າ 'ແມ່ຍິງທີ່ສາມາດປະຕິເສດການມີເພດສຳພັນ' ຖ້າວ່າ: 'ຖ້າວ່າເມຍບໍ່ເຫັນດີ'
ຮູບທີ 7.1 ການລາຍງານຂອງແມ່ຍິງວ່າໄດ້ຮັບບາດເຈັບ ເຊິ່ງເປັນຜົນມາຈາກຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດ ໃນຊ່ວງໄລຍະເວລາຕະຫຼອດຊີວິດ, ສປປ ລາວ ປີ 2014 (ຈຳນວນ=470)
ຮູບທີ 7.2 ຄວາມຖີ່ຂອງການໄດ້ຮັບບາດເຈັບຈາກການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=470)
ຮູບທີ 7.3 ສະພາບດ້ານສຸຂະພາບໂດຍລວມຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ທີ່ເຄີຍ ແລະ ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=2,847)
ຮູບທີ 7.4 ການປຽບທຽບຄະແນນສະເລ່ຍຂອງ SRQ ສຳລັບຄວາມເຈັບປວດທາງດ້ານຈິດໃຈໃນໄລຍະເວລາ 4 ອາທິດທີ່ຜ່ານມາຂອງແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=2,846)

ຮູບທີ 7.5 SRQ ໃນຄະແນນ 10 ຫຼືສູງກວ່າ ໃນໄລຍະເວລາ 4 ອາທິດທີ່ຜ່ານມາຂອງແມ່ຍິງທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=2,846)

ຮູບທີ 7.6 ການປຽບທຽບຄະແນນສະເລ່ຍຂອງ SRQ ສຳລັບຄວາມເຈັບປວດທາງດ້ານຈິດໃຈ ຂອງແມ່ຍິງ ທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຈິດໃຈ, ສປປ ລາວ ປີ 2014 (ຈຳນວນ=2,377)

ຮູບທີ 7.7 ການປຽບທຽບຂອງການມີແນວຄິດໃນການຂ້າຕົວຕາຍ ລະຫວ່າງແມ່ຍິງ ທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຈິດໃຈ, ສປປ ລາວ ປີ 2014 (ຈຳນວນ=2,377)

ຮູບທີ 7.8 ຄະແນນ SRQ ໂດຍສະເລ່ຍ ສຳລັບຄວາມເຈັບປວດທາງດ້ານຈິດໃຈລະຫວ່າງແມ່ຍິງ ທີ່ເຄີຍຖືກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ເຄີຍ ແລະ ບໍ່ເຄີຍຖືກລ່ວງລະເມີດທາງດ້ານຈິດໃຈ, ສປປ ລາວ ປີ 2014 (ຈຳນວນ=479)

ຮູບທີ 7.9 ການຄິດຂ້າໂຕຕາຍ ລະຫວ່າງແມ່ຍິງ ທີ່ເຄີຍຖືກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ເຄີຍ ແລະ ບໍ່ເຄີຍຖືກລ່ວງລະເມີດທາງດ້ານຈິດໃຈ, ສປປ ລາວ ປີ 2014 (ຈຳນວນ=479)

ຮູບທີ 7.10 ຜົນໄດ້ຮັບດ້ານການຈະເລີນພັນຂອງແມ່ຍິງທີ່ເຄີຍຖືພາ, ອີງຕາມປະສົບການທີ່ຖືກໃຊ້ຄວາມຮຸນແຮງຈາກຜົວ/ຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=2,744)

ຮູບທີ 7.11 ປັດໃຈທີ່ກ່ຽວຂ້ອງກັບການຖືພາຄັ້ງສຸດທ້າຍຂອງແມ່ຍິງທີ່ມີການເກີດລູກໃນໄລຍະ 5 ປີ ທີ່ຜ່ານມາ, ສປປ ລາວ ປີ 2014 (ຈຳນວນ=968)

ຮູບທີ 7.12 ການຄຸມກຳເນີດ ລະຫວ່າງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດທີ່ເຄີຍ ແລະ ບໍ່ເຄີຍຖືກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=2,845)

ຮູບທີ 8.1 ການເປັນຢູ່ທີ່ດີຂອງເດັກອາຍຸ 6-11 ປີ ທີ່ໄດ້ຮັບການລາຍງານໂດຍແມ່ຍິງ ທີ່ເຄີຍ ແລະ ບໍ່ເຄີຍຖືກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 8.2 ເດັກທີ່ພົບເຫັນການໃຊ້ຄວາມຮຸນແຮງ ທີ່ໄດ້ຮັບການລາຍງານໂດຍແມ່ຍິງທີ່ຖືກໃຊ້ຄວາມຮຸນແຮງທາງຮ່າງກາຍໂດຍຄູ່ຮ່ວມຊີວິດ, ສປປ ລາວ ປີ 2014 (ຈຳນວນ=348)

ຮູບທີ 8.3 ແມ່ຍິງທີ່ລາຍງານການໃຊ້ຄວາມຮຸນແຮງກັບແມ່ຂອງລາວ, ຫຼື ແມ່ຍ່າຂອງລາວ, ແລະ ກັບຄູ່ຮ່ວມຊີວິດຂອງລາວໃນຕອນທີ່ຄູ່ຮ່ວມຊີວິດລາວຍັງນ້ອຍ ໃນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ທີ່ເຄີຍ ແລະ ບໍ່ເຄີຍມີປະສົບການໃນການຖືກໃຊ້ຄວາມຮຸນແຮງ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 9.1 ເປີເຊັນຂອງແມ່ຍິງທີ່ໄດ້ເລົ່າໃຫ້ຄົນອື່ນຟັງກ່ຽວກັບປະສົບທີ່ຖືກໃຊ້ຄວາມຮຸນແຮງ ແລະ ໄດ້ຮັບການຊ່ວຍເຫຼືອຈາກບັນດາແມ່ຍິງທີ່ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=470)

ຮູບທີ 9.2 ເປີເຊັນຂອງແມ່ຍິງທີ່ຮຽກຮ້ອງການຊ່ວຍເຫຼືອ ຈາກອົງການ/ບຸກຄົນ ໃນອຳນາດການປົກຄອງ, ໃນບັນດາແມ່ຍິງທີ່ລາຍງານການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=470)

ຮູບທີ 9.3 ເປີເຊັນຂອງແມ່ຍິງທີ່ໜີອອກຈາກເຮືອນ ແລະ ຄວາມຖີ່ຂອງການໜີອອກຈາກເຮືອນ, ໃນບັນດາແມ່ຍິງທີ່ລາຍງານການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=470)

ຮູບທີ 9.4 ເປີເຊັນຂອງແມ່ຍິງທີ່ຕໍ່ສູ້ຄືນ, ໃນບັນດາແມ່ຍິງທີ່ລາຍງານການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ ປີ 2014 (ຈຳນວນ=357)

ຮູບທີ 9.5 ຜົນກະທົບຂອງການຕໍ່ສູ້ກັບ ໃນບັນດາແມ່ຍິງຜູ້ທີ່ມີການຕໍ່ສູ້ໃນກໍລະນີຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ສປປ ລາວ ປີ 2014 (ຈຳນວນ=137)

ຮູບທີ 9.6 ເປີເຊັນຂອງຄວາມຮູ້ຂອງແມ່ຍິງກ່ຽວກັບ LDPW ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ ໃນບັນດາແມ່ຍິງ ທີ່ ເຄີຍ/ບໍ່ເຄີຍ ມີປະສົບການ ຖືກໃຊ້ຄວາມຮຸນແຮງ, ສປປ ລາວ ປີ 2014 (ຈຳນວນ=2,997)

ຮູບທີ 9.7 ເປີເຊັນຂອງຄວາມຮູ້ຂອງແມ່ຍິງກ່ຽວກັບ LDPW ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ ລະຫວ່າງແມ່ຍິງ ທີ່ ເຄີຍ/ບໍ່ເຄີຍ ມີປະສົບການ ຖືກໃຊ້ຄວາມຮຸນແຮງ, ສປປ ລາວ ປີ 2014 (ຈຳນວນ=2,847)

ຮູບທີ 9.8 ຂະບວນການໃນການຊອກຫາການສະໜັບສະໜູນທີ່ເປັນທາງການ ເພື່ອການໄກ່ເກ່ຍ

ຮູບທີ 10.1 ຈຳນວນຂອງແມ່ຍິງໃນການສຳຫຼວດ ອີງຕາມສະຖານະພາບຂອງຄູ່ຮ່ວມຊີວິດຂອງເຂົາເຈົ້າ ແລະ ປະສົບການຂອງເຂົາເຈົ້າ ທີ່ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດໂດຍຄູ່ຮ່ວມຊີວິດ

ຮູບທີ 10.2 ບັນດາປັດໃຈທີ່ກ່ຽວຂ້ອງກັບ ການຄວາມຮຸນແຮງຈາກຄູ່ຮ່ວມຊີວິດIPVໃນໄລຍະ 12 ເດືອນທີ່ຜ່ານມາ

# ຄຳນຳ

ອັດຕາສ່ວນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ໃນ ສປປລາວ, ໂດຍສະເພາະແມ່ນຄວາມຮຸນແຮງຢູ່ໃນຄອບຄົວແມ່ນເກີດຂື້ນ ແລະ ມີແຜ່ຫຼາຍຂະຫຽາຍຢ່າງກວ້າງຂວາງ. ນອກ ຈາກນີ້, ບັນຫາຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງເປັນບັນຫາໜຶ່ງຂອງສັງຄົມທີ່ບໍ່ມີການເປີດເຜີຍແລະ ເປັນບັນຫາທີ່ຖືກປົກປິດ, ລວມທັງບັນດາສາຍເຫດທີ່ເປັນພື້ນຖານທີ່ພາໃຫ້ເກີດຄວາມຮຸນແຮງ, ການໃຫ້ນິຍາມ ແລະ ການແຍກປະເພດຂອງການໃຊ້ຄວາມຮຸນແຮງທີ່ກຳນົດໄວ້ໃນກົດໝາຍບໍ່ມີຄວາມຊັດເຈນເທົ່າທີ່ຄວນ ຫຼື ບໍ່ໄດ້ກຳນົດໄວ້ໃນກົດໝາຍ, ບັນຫາທາງດ້ານຮີດຄອງປະເພນີເຊິ່ງເຮັດໃຫ້ບໍ່ມີການລົງໂທດຜູ້ກະທຳຜິດ, ນອກຈາກນີ້ການການເຂົ້າເຖິງຂະບວນຍຸຕິທຳຂອງແມ່ຍິງໂດຍສະເພາະແມ່ຍິງໃນເຂດຊົນນະບົດ, ຫ່າງໄກສອກຫຼີກ ແລະ ກຸ້ມຍິງຊົນເຜົ່າຍັງຈຳກັດ, ລວມທັງການຂາດຂໍ້ມູນ ແລະ ຕົວເລກທີ່ເປັນຫຼັກຖານກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຂະແໜງການໃຫ້ບໍລິການແກ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຍັງບໍ່ມີຄວາມເໝາະສົມ.

ໃນປີ 2010, ສະພາແຫ່ງຊາດໄດ້ຈັດກອງປະຊຸມລະດັບຊາດກ່ຽວກັບການໃຊ້ຄວາມຮຸນແຮງທາງເພດ/ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວເປັນຄັ້ງທຳອິດ, ໂດຍການມີສ່ວນຮ່ວມຂອງບັນດາສະມາຊິກສະພາແຫ່ງຊາດ, ອົງການສະຫະປະຊາຊາດ (ສປຊ) ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂື້ນກັບລັດຖະບານ (NGOs). ເຊິ່ງຜົນໄດ້ຮັບໜຶ່ງທີ່ສຳຄັນຂອງກອງປະຊຸມຄັ້ງນີ້ແມ່ນໄດ້ມີການທົບທວນບັນດາກົດໝາຍ ແລະ ນິຕິກຳທີ່ມີຢູ່ໃນ ສປປ ລາວໂດຍແມ່ນກະຊວງຍຸຕິທຳເປັນຜູ້ສ້າງກົດໝາຍທີ່ສຸມໃສ່ແກ້ໄຂການໃຊ້ຄວາມຮຸນແຮງໃນຄອບຄົວ ຫຼື ຄວາມຮຸນແຮງຕໍ່ແມ່ຍິງ ພາຍໃຕ້ການຊີ້ນຳນຳພາຂອງສະພາແຫ່ງຊາດເຖິງແນວໃດກໍ່ຕາມ, ຂັ້ນຕອນໃນການດຳເນີນການສ້າງກົດໝາຍແມ່ນຍັງຂາດຂໍ້ມູນຫຼັກຖານເພື່ອສະໜັບສະໜູນໃຫ້ແກ່ການສ້າງກົດໝາຍດັ່ງກ່າວ.

ຄວາມຈຳກັດທາງດ້ານຂໍ້ມູນ ແລະ ຫຼັກຖານທີ່ຈຳກັດກ່ຽວກັບການໃຊ້ຄວາມຮຸນແຮງທາງເພດ ຫຼື ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (ຂໍ້ມູນສະຖິຕິແຍກເພດ, ກຸ່ມອາຍຸ, ກຸ່ມຊົນເຜົ່າ ສາເຫດຕົ້ນຕໍ ແລະ ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ) ແມ່ນຖືກຍົກຂື້ນໂດຍຄະນະກຳມະການຊີດໍສາກົນຕໍ່ບົດລາຍງານແຫ່ງຊາດປະຈຳໄລຍະທີ 6 ແລະ 7 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາຊີດໍໃນ ສປປ ລາວ[1].

ຄະນະກຳມາທິການເພື່ອຄວາມກ້າວຫນ້າຂອງແມ່ຍິງແຫ່ງຊາດ (ຄກມຊ), ຊຶ່ງແມ່ນກົນໄກປະສານງານຂອງລັດຖະບານກ່ຽວກັບວຽກງານສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ເປັນຕົວແທນໃຫ້ແກ່ລັດຖະບານໃນການຈັດຕັ້ງປະຕິບັດພັນທະຕໍ່ສົນທິສັນຍາຊີດໍ, ກຳນົດນະໂຍບາຍແຫ່ງຊາດກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ 05 ປີຄັ້ງທີ II (2011-2015), ເຊິ່ງແຜນຍຸດທະສາດດັ່ງກ່າວໄດ້ສຸມໃສ່ການພັດທະນາ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານ, ໂຄສະນາປູກຈິດສຳນຶກເພື່ອແກ້ໄຂບັນຫາການໃຊ້ຄວາມຮຸນແຮງແມ່ຍິງ ແລະ ເດັກນ້ອຍ ພ້ອມສ້າງຄວາມເຂັ້ມແຂງໃນການເກັບກຳຂໍ້ມູນສະຖິຕິແຍກເພດ ແລະ ວິໄຈບັນຫາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ຄວາມເຂົ້າໃຈຢ່າງຈຳກັດຕໍ່ກັບບັນຫາ, ສາເຫດ ແລະ ຜົນສະທ້ອນຄວາມຮຸນແຮງຕໍ່ແມ່ຍິງເຊິ່ງບາງກໍລະນີມີລັກສະນະຄ້າຍຄືກັນ ຫຼື ແຕກຕ່າງກັນໃນແຕ່ລະຊຸມຊົນຢູ່ພາຍໃນປະເທດແມ່ນເປັນອຸປະສັກຕໍ່ກັບການແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ບົດລາຍງານການສຶກສາລະດັບຊາດກ່ຽວກັບສຸຂະພາບ ແລະ ປະສົບການການຊີວິດຂອງແມ່ຍິງປີ 2014 ແມ່ນເປັນບົດລາຍງານສະບັບທຳອິດທີ່ສາມາດສະຫນອງຂໍ້ມູນ ແລະ ຕົວເລກກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງທີ່ສາມາດເປັນຕົວແທນໃນລະດັບປະເທດທີ່ເນັ້ນໃສ່ຄວາມຮຸນແຮງໃນຄອບຄົວ. ຜົນຂອງການສຶກສາຄົ້ນຄວ້າໃນຄັ້ງນີ້ໄດ້ສະແດງໃຫ້ໃຫ້ເຫັນວ່າຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງໄດ້ມີການແຜ່ຂະຫຍາຍຢ່າງກວ້າງຂວາງໃນສັງຄົມລາວທຸກລະດັບ. ສັງຄົມຄິດວ່າບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນເປັນເລື່ອງປົກກະຕິທີ່ເກີດຂື້ນໃນສັງຄົມລາວ ແລະ ແມ່ຍິງຈຳນວນໜຶ່ງບໍ່ໄດ້ລາຍງານຕໍ່ການຈັດຕັ້ງຫຼື ຂະແໜງການທີ່ຮັບຜິດຊອບ ເຖິງແມ່ນວ່າຄວາມຮຸນແຮງດັ່ງກ່າວມີຜົນກະທົບໄລຍະຍາວຕໍ່ແມ່ຍິງເອງ ແລະ ຕໍ່ລູກຂອງພວກເຂົາກໍ່ຕາມ.

---

[1] ສປປ ລາວ ໃຫ້ສັດຕະຍາບັນຂອງ ສົນທິສັນຍາCEDAW ໃນປີ 1981 ແລະ ນັ້ນເປັນການຢັ້ນຢືນທີ່ຖືກຕ້ອງດ້ານກົດໝາຍ ໃນການຈັດຕັ້ງປະຕິບັດສົນທະສັນຍາ. ສປປປ ລາວ ໄດ້ໃຫ້ຄຳໝັ້ນສັນຍາຕໍ່ການຂຽນບົດລາຍລະດັບຊາດທີ່ໄດ້ນຳໃຊ້ມາດຕະການຕ່າງໆທີ່ສອດຄ່ອງກັບສົນທິສັນຍາສາກົນ. ບົດລາຍງານລວມຂອງໄລຍະທີ 6 ແລະ 7 ແມ່ນໄດ້ສົ່ງໃຫ້ຄະນະກຳມະການ ໃນປີ 2009 ເພື່ອໃຫ້ຄະນະກຳມະການ CEDAW ທົບທວນ ແລະ ໄດ້ໃຫ້ຂໍ້ສັງເກດ 60 ຂໍ້ແກ່ ສປປ ລາວ.

ບົດລາຍງານການສຶກສາລະດັບຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງແມ່ນມີຂໍ້ມູນທີ່ອຸດົມສົມບູນ ແລະ ຂໍ້ສະເໜີແນະທີ່ສຳຄັນຕໍ່ກັບການສ້າງແຜນງານ ແລະ ການກຳນະໂຍບາຍເພື່ອແກ້ໄຂບັນຫາຄວາມຮຸນແຮງ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ໃນ ສປປ ລາວ.

ບົດລາຍງານສະບັບນີ້ເປັນບາດກ້າວທຳອິດເພື່ອກ້າວໄປສູ່ການສ້າງຄວາມເຂົ້າໃຈເພີ່ມຂຶ້ນກ່ຽວກັບບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ບັນຫາອຸປະສັກ ແລະ ສິ່ງທ້າທາຍຕ່າງໆນັ້ນຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ. ການຕອບໂຕ້ຕໍ່ກັບບັນຫາຄວາມຮຸນແຮງທີ່ໄດ້ຈາກບົດລາຍງານນີ້ໄດ້ສະທ້ອນໃຫ້ເຫັນຄວາມຮຸນແຮງຕໍ່ແມ່ຍິງ, ເດັກຍິງ ແລະ ຄວາມຮຸນແຮງໃນຄອບຄົວເຊິ່ງເປັນສິ່ງທີ່ບໍ່ສາມາດຍອມຮັບໄດ້ ແລະ ຜົນໄດ້ຮັບຈາກບົດສຶກສາດັ່ງກ່າວຈະນຳໃຊ້ເຂົ້າໃນການປັບປຸງແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ.

ແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກໃນ ສປປ ລາວ (2014-2020) ມີຄວາມຈຳເປັນຕ້ອງໄດ້ປະສານສົມທົບກັນລະຫວ່າງພາກສ່ວນລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາຢ່າງເປັນລະບົບ ເພື່ອຕ້ານກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງເຮັດໃຫ້ຊຸມຊົນ ແລະ ປະເທດຊາດມີຄວາມສະຫງົບ/ປອດໄພ ຈາກບັນຫາຄວາມຮຸນແຮງທີ່ມີຜົນກະທົບທາງດ້ານຮ່າງກາຍ ແລະ ຈິດໃຈ ລວມທັງຄ່າໃຊ້ຈ່າຍຕ່າງໆ.



ທ່ານ ນາງ ບັນດິດ ປະທຸມວັນ

ຮັກສາການປະທານ ຄະນະກຳມາທິການ
ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ



ທ່ານ ດຣ. ສະໄໝຈັນ ບຸບຜາ

ຫົວໜ້າສູນສະຖິຕິແຫ່ງຊາດ, ທຽບເທົ່າລັດຖະມົນຕີຊ່ວຍ
ຄະນະຊີ້ນຳການສຳຫຼວດລະດັບຊາດ

# ບົດຂອບໃຈ

ບົດສຳຫຼວດລະດັບຊາດ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງໃນ ສປປ ລາວ ປີ 2014 (ການສຶກສາ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງໃນຄອບຄົວ) ແມ່ນໝາກຜົນຂອງການຮ່ວມມືລະຫວ່າງ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ສູນສະຖິຕິແຫ່ງຊາດ ແລະ ໄດ້ຮັບການຮ່ວມມືຈາກສູນກາງສະຫະພັນແມ່ຍິງລາວ, ກະຊວງ ສາທາລະນະສຸກ, ກະຊວງ ຍຸຕິທຳ ແລະ ກະຊວງ ປ້ອງກັນຄວາມສະຫງົບ; ການສຳຫຼວດລະດັບຊາດກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງໃນຄອບຄົວ ທີ່ເປັນບົດສຳຫຼວດຄັ້ງທຳອິດທີ່ເປັນຕົວແທນຂອງ ສປປ ລາວ ເຊິ່ງຈະບໍ່ສາມາດສຳເລັດໄດ້ ຖ້າຂາດການຊີ້ນຳຢ່າງໃກ້ສິດ, ການຮ່ວມມື, ການຊ່ວຍເຫຼືອ ແລະ ການປະກອບສ່ວນທີ່ມີຄຸນຄ່າຂອງນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ.

ພິເສດ, ຂໍສະແດງຄວາມຮູ້ບຸນຄຸນຕໍ່ການປະກອບສ່ວນຂອງແມ່ຍິງ ຈຳນວນ 3,000 ຄົນ ທີ່ເສຍສະຫຼະເວລາ ແລະ ເຫັນດີໃຫ້ສຳພາດ ແລະ ແບ່ງປັນປະສົບການສ່ວນຕົວ ເຊິ່ງໄດ້ຖືກຮວບຮວມເຂົ້າໃນຜົນການສຳຫຼວດຄັ້ງນີ້.

ນອກນັ້ນ, ບົດສຳຫຼວດສະບັບນີ້ຈະບໍ່ສຳເລັດໄດ້ຖ້າປາສະຈາກນັກເດີນສຳຫຼວດໃນພາກສະໜາມ ທີ່ໄດ້ປະກອບສ່ວນໃນການເຮັດວຽກດ້ວຍຄວາມຮັບຜິດຊອບ ແລະ ມີຈັນຍາບັນ ຕະຫຼອດໄລຍະເວລາຫຼາຍກວ່າສາມເດືອນຢູ່ພາກສະໜາມ ນອກຈາກນັ້ນຍັງຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງການຈັດຕັ້ງທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ທີ່ໄດ້ອຳນວຍຄວາມສະດວກໃຫ້ແກ່ການເກັບກຳຂໍ້ມູນໃນພາກສະໜາມ.

ຂໍຂອບໃຈມາຍັງ ຄະນະຊີ້ນຳລະດັບຊາດຂອງການສຳຫຼວດ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ໃນ ສປປ ລາວ ພ້ອມດ້ວຍຄະນະວິຊາການ ທີ່ໄດ້ໃຫ້ທິດຊີ້ນຳໃນການສຳຫຼວດຄັ້ງນີ້.

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ສູນສະຖິຕິແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນພິເສດມາຍັງບັນດາທ່ານທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການຕໍ່ບົດສຳຫຼວດຄັ້ງນີ້ ໂດຍສະເພາະແມ່ນ ທ່ານ ດຣ. ໂທໂມໂກະ ຮອນດາ (Dr. Tomoko Honda), ຜູ້ທີ່ເຮັດໃຫ້ບົດສຳຫຼວດຄັ້ງນີ້ສຳເລັດ ແລະ ທ່ານ ດຣ. ເຮັນຣຽດ ເຈນເຊັນ (Dr. Henriette Jansen), ນັກຄົ້ນຄວ້າສາກົນກ່ຽວກັບບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຂອງອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA) ທີ່ໄດ້ໃຫ້ຄຳແນະນຳ ແລະ ທິດຊີ້ນຳ ຢ່າງຕໍ່ເນື່ອງຕະຫຼອດຂະບວນການຂອງການສຳຫຼວດຄັ້ງນີ້.

ທ້າຍສຸດນີ້, ບົດສຳຫຼວດຄັ້ງນີ້ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າປາສະຈາກການສະໜັບສະໜູນທາງດ້ານງົບປະມານ ແລະ ວິຊາການຈາກອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA) ແລະ ອົງການສະຫະປະຊາຊາດ ເພື່ອແມ່ຍິງ (UN Women), ລວມທັງການຊ່ວຍເຫຼືອທາງດ້ານວິຊາການ ແລະ ຄຳແນະນຳທີ່ມີຄຸນຄ່າຈາກບັນດາຜູ້ຊ່ຽວຊານຂອງອົງການອະນາໄມໂລກ (WHO) .

# ຊື່ ແລະ ຄຳສັບຫຍໍ້

| | |
|---|---|
| **AIDS** | Acquired Immune Deficiency Syndrome/ພະຍາດພູມຄຸ້ມກັນເສື່ອມ ຫຼື ພະ ຍາດເອດສ໌ |
| **AOR** | Adjusted Odds Ratio/ອັດຕາດັດປັບການຜິດດ່ຽງ |
| **APRO** | Asia-Pacific Regional Office/ຫ້ອງການພາກພື້ນອາຊີ-ປາຊີຟິກ |
| **CASA** | Centre Against Sexual Assault/ສູນຕໍ່ຕ້ານການຖຸກຄາມທາງເພດ |
| **CEDAW** | Convention on the Elimination of All Forms of Discrimination against Women/ ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ |
| **CI** | Confidence Interval/ຄ່າຄວາມເຊື່ອໝັ້ນ |
| **CSA** | Child Sexual Abuse/ການລ່ວງລະເມີດທາງເພດເດັກ |
| **CSO** | Civil Society Organisation/ອົງການຈັດຕັ້ງທາງສັງຄົມ |
| **DoET** | Department of Education and Training/ກົມການສຶກສາ ແລະ ການເຝິກອົບຮົມ |
| **DV** | Domestic Violence/ຄວາມຮຸນແຮງໃນຄອບຄົວ |
| **EA** | Enumeration Area/ພື້ນທີ່ໃນການສຳຫຼວດ |
| **FGD** | Focus Group Discussion/ການສົນທະນາກຸ່ມ |
| **GBV** | Gender-Based Violence/ຄວາມຮຸນແຮງບົນພື້ນຖານທາງເພດ |
| **GDA** | Gender Development Association/ສະມາຄົມສົ່ງເສີມບົດບາດຍິງ-ຊາຍ |
| **GDG** | Gender and Development Group/ກຸ່ມພັດທະນາບົດບາດຍິງ-ຊາຍ |
| **GHQ** | General Health Questionnaire/ແບບສອບຖາມດ້ານສຸຂະພາບໂດຍທົ່ວໄປ |
| **GII** | Gender Inequality Index/ດັດຊະນີຄວາມບໍ່ເທົ່າທຽມລະຫວ່າງຍິງ-ຊາຍ |
| **GRID** | Gender Research and Information for Development/ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ ເພື່ອການພັດທະນາ |
| **HIV** | Human Immunodeficiency Virus/ເຊື້ອໄວຣັສ ທຳລາຍພູມຄຸ້ມກັນຂອງມະນຸດ |
| **IDI** | In-Depth Interview/ການສຳພາດແບບເຈາະຈົ້ມ |
| **ILO** | International Labour Organization/ອົງການແຮງງານສາກົນ |
| **IPV** | Intimate Partner Violence/ການໃຊ້ຄວາມຮຸນແຮງ ຈາກຄູ່ຮ່ວມຊີວິດ |
| **KII** | Key Informant Interview/ການສຳພາດຜູ້ໃຫ້ຂໍ້ມູນຫຼັກ |
| **Lao PDR** | Lao People's Democratic Republic/ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **LDPW** | Law on Development and Protection of Women/ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ |
| **LSB** | Lao Statistics Bureau/ສູນສະຖິຕິແຫ່ງຊາດ |
| **LSIS** | Lao Social Indicator Survey (MICS/DHS)/ການສຳຫຼວດດັດຊະນີໝາຍສັງຄົມລາວ |
| **LWU** | Lao Women's Union/ສູນກາງສະຫະພັນແມ່ຍິງລາວ |
| **LYU** | Lao Youth Union/ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |
| **MoES** | Ministry of Education and Sports/ກະຊວງ ສຶກສາທິການ ແລະ ກິລາ |
| **MoH** | Ministry of Health/ກະຊວງ ສາທາລະນະສຸກ |
| **MoJ** | Ministry of Justice/ກະຊວງ ຍຸຕິທຳ |
| **MoPS** | Ministry of Public Security/ກະຊວງ ປ້ອງກັນຄວາມສະຫງົບ |
| **MPI** | Multi-dimensional Poverty Index/ດັດຊະນີຄວາມທຸກຍາກຫຼາຍດ້ານ |
| **NCAW** | National Commission for the Advancement of Women/ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ |
| **NGO** | Non-Government Organisation/ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ |
| **NPAVAW** | National Plan of Action on Prevention and Elimination of Violence against Women and Children/ ແຜນດຳເນີນງານແຫ່ງຊາດ ກ່ຽວກັບການປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ |
| **NSAW** | National Strategy on Advancement of Women/ຍຸດທະສາດແຫ່ງຊາດເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ |
| **P4P** | Partners for Prevention/ຄູ່ຮ່ວມງານເພື່ອການປ້ອງກັນ |
| **PTSD** | Post Traumatic Stress Disorder/ການຜິດປົກກະຕິຫຼັງຈາກການເກີດຄວາມເຄັ່ງຄຽດ |
| **SPSS** | Statistical Package for Social Sciences/ຊຸດສະຖິຕິ ສຳລັບວິທະຍາສາດສັງຄົມ |
| **SRQ** | Self-Reporting Questionnaires/ແບບສອບຖາມການລາຍງານດ້ວຍຕົນເອງ |
| **STATA** | Data Analysis and Statistics Software/ການວິເຄາະຂໍ້ມູນ ແລະ ຊອບແວຣ໌ທາງດ້ານສະຖິຕິ |

| | |
|---|---|
| **STIs** | Sexuality Transmitted Infections/ພະຍາດຕິດຕໍ່ທາງເພດສຳພັນ |
| **Sub-CAW** | Sub-Committee for Advancement of Women/ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງຂັ້ນກະຊວງ |
| **UN** | United Nations/ອົງການສະຫະປະຊາຊາດ |
| **UNDP** | United Nations Development Programme/ອົງການສະຫະປະຊາຊາດເພື່ອການພັດທະນາ |
| **UNFPA** | United Nations Population Fund/ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ |
| **UN Women** | United Nations Entity for Gender Equality and the Empowerment of Women/ ອົງການສະຫະປະຊາຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ ແລະ ມອບສິດເປັນເຈົ້າໃຫ້ແມ່ຍິງ |
| **US** | United States/ສາຫະລັດ ອາເມຣິກາ |
| **VAW** | Violence Against Women/ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ |
| **VMU** | Village Mediation Unit/ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ |
| **WB** | World Bank/ທະນາຄານໂລກ |
| **WHO** | World Health Organization/ອົງການອະນາໄມໂລກ |

# ບົດສັງລວມຫຍໍ້

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງເປັນບັນຫາທີ່ຮ້າຍແຮງ ແລະ ສົ່ງຜົນກະທົບຕໍ່ວຽກງານສາທາລະນະສຸກ ແລະ ເປັນການລ່ວງລະເມີດສິດທິມະນຸດຂອງແມ່ຍິງ ໄດ້ຖືກຮັບຮູ້ເພີ່ມຂຶ້ນໃນລະດັບສາກົນ ແລະ ລວມທັງໃນ ສປປ ລາວ. ໃນ ສປປ ລາວ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນຍັງຖືກຍອມຮັບດ້ານຮີດຄອງປະເພນີ. ອີງຕາມການສຳຫຼວດດັດສະນີໝາຍທາງສັງຄົມຂອງລາວ ໃນປີ 2011-2012, ພົບວ່າ 58 % ຂອງແມ່ຍິງ ແລະ 49 % ຂອງຜູ້ຊາຍທັງໝົດລາຍງານວ່າ: ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນຖືກຍອມຮັບວ່າບໍ່ແມ່ນສິ່ງທີ່ຜິດ ຖ້າວ່າແມ່ຍິງຄົນນັ້ນບໍ່ປະຕິບັດຕາມລະບຽບປະເພນີ, ພາລະບົດບາດ ແລະ ການພົວພັນລະຫວ່າງຍິງ-ຊາຍໃນສັງຄົມລາວ. ເຖິງຢ່າງໃດກໍ່ຕາມ, ຜົນການສຳຫຼວດຄັ້ງນີ້ ໄດ້ສ່ອງແສງໃຫ້ເຫັນ ບັນຫາພຽງສ່ວນໃດໜຶ່ງຂອງບັນຫາທີ່ແທ້ຈິງ. ເຖິງແມ່ນວ່າການສຳຫຼວດກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຄັ້ງນີ້ ຈະເປັນການສຳຫຼວດຂະໜາດນ້ອຍກໍ່ຕາມ, ແຕ່ກໍ່ບໍ່ມີການສຳຫຼວດລະດັບຊາດ ທີ່ມີຄວາມລະອຽດ ແລະ ກວ້າງຂວາງອື່ນໆອີກ ເພື່ອສືບຕໍ່ຈາກການສຳຫຼວດນີ້. ຈາກຂໍ້ມູນພື້ນຖານດັ່ງກ່າວ, ການສຳຫຼວດລະດັບຊາດ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ປີ 2014 ຈຶ່ງໄດ້ຖືກດຳເນີນການສຳຫຼວດ ແລະ ເກັບກຳບັນດາຂໍ້ມູນທີ່ຕ້ອງການ ເພື່ອສ້າງ ແລະ ປັບປຸງນະໂຍບາຍ ແລະ ນິຕິກຳໃຫ້ມີປະສິດທິຜົນເພື່ອຕອບໂຕ້ບັນຫາດັ່ງກ່າວ. ການສຳຫຼວດນີ້ແມ່ນໄດ້ນຳໃຊ້ເຄື່ອງມືການສຳຫຼວດຂອງອົງການອະນາໄມໂລກ ເຊິ່ງເປັນການສຳຫຼວດທີ່ໄດ້ດຳເນີນໃນຫຼາຍປະເທດ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ (ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວ) ເຊິ່ງເປັນເຈົ້າການໂດຍ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ສູນສະຖິຕິແຫ່ງຊາດ ໂດຍໄດ້ຮັບການສະໜັບສະໜູນຈາກ ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ ແລະ ອົງການສະຫະປະຊາຊາດ ເພື່ອແມ່ຍິງ. ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ໂຄສະນາປຸກລະດົມປູກຈິດສຳນຶກ ແລະ ສ້າງບັນດານິຕິກຳ ແລະ ນະໂຍບາຍກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໂດຍສຸມໃສ່: (1) ແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກໃນ ສປປ ລາວ 2014-2020, (2) ການສ້າງນິຕິກຳເພື່ອແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, (3) ສ້າງບົດລາຍງານແຫ່ງຊາດປະຈຳໄລຍະທີ 8 ແລະ ທີ 9 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໃນ ສປປ ລາວ ປີ 2014, ແລະ (4) ການດຳເນີນການໂຄສະນາປູກຈິດສຳນຶກ ແລະ ສ້າງຂະບວນການເພື່ອຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ຜົນໄດ້ຮັບຕົ້ນຕໍຂອງການສຳຫຼວດ ແລະ ບາງຂໍ້ແນະນຳຕໍ່ການປັບປຸງນະໂຍບາຍ ມີດັ່ງລຸ່ມນີ້

## ອັດຕາສ່ວນ, ປະເພດ ແລະ ຄວາມຖີ່ຂອງການໃຊ້ຄວາມຮຸນແຮງ[2]

### i. ການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ

- ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 11.6% ແມ່ນຖືກຄວາມຮຸນແຮງທາງດ້ານຮ່າງກາຍໃນຊ່ວງຊີວິດ ແລະ 4.0% ໃນໄລຍະ 12 ເດືອນທີ່ຜ່ານມາ (ໃນປັດຈຸບັນ).
- ໃນບັນດາແມ່ຍິງທີ່ເຄີຍຖືພາ, 1.8% ໄດ້ຖືກຄວາມຮຸນແຮງທາງດ້ານຮ່າງກາຍໃນລະຫວ່າງການຖືພາຢ່າງໜ້ອຍໜຶ່ງຄັ້ງ.
- ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 7.2% ແມ່ນເຄີຍຖືກຄວາມຮຸນແຮງທາງເພດ ໃນຊ່ວງຊີວິດ ແລະ 3.1%ໃນໄລຍະ 12 ເດືອນທີ່ຜ່ານມາ.
- ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 15.3% ແມ່ນເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດໃນຊ່ວງຊີວິດ ແລະ 6.0% ໃນໄລຍະ 12 ເດືອນທີ່ຜ່ານມາ.
- ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 26.2% ເປີດເຜີຍວ່າ ເຄີຍຖືກຄວາມຮຸນແຮງທາງດ້ານຈິດໃຈ ໃນຊ່ວງຊີວິດແລະ 10.5% ໃນໄລຍະ 12 ເດືອນທີ່ຜ່ານມາ.
- ເມື່ອເບິ່ງຈາກທັງສາມປະເພດຂອງການໃຊ້ຄວາມຮຸນແຮງ ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ເຫັນວ່າ 30.3% ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ, ທາງເພດ ແລະ/ຫຼື ທາງດ້ານຈິດໃຈ.
- ປະມານ 34.8% ຂອງໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ປະເຊີນກັບການຖືກຄວບຄຸມທາງພຶດຕິກຳໂດຍຄູ່ຮ່ວມຊີວິດ ແລະ 6.8% ເຄີຍຖືກຄວາມຮຸນແຮງດ້ານເສດຖະກິດໃນຊ່ວງຊີວິດຂອງແມ່ຍິງ.

### ii. ການໃຊ້ຄວາມຮຸນແຮງຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ

- ປະມານ 5,1% ຂອງແມ່ຍິງ ທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ. ສ່ວນຫຼາຍຈະແມ່ນເພດຍິງໃນຄອບຄົວທີ່ເປັນຜູ້ກະທຳຄວາມຮຸນແຮງມີ (34.9%), ໂດຍສະເພາະ ແມ່ນແມ່ຄີ່ງຫຼື ແມ່ນ້າ (26.8%).
- ແມ່ຍິງປະມານ 5.3% ທີ່ເຄີຍຖືກຄວາມຮຸນແຮງທາງເພດບາງຮູບແບບ ແລະ 1.1% ທີ່ຖືກບັງຄັບໃຫ້ມີເພດສຳພັນຕັ້ງແຕ່ອາຍຸ 15 ປີ.
- ອັດຕາສ່ວນແມ່ຍິງທີ່ຖືກລ່ວງລະເມີດທາງເພດໃນໄລຍະໄວເດັກ ແມ່ນໄດ້ຮັບຄຳຕອບທີ່ແຕກຕ່າງກັນ ອີງຕາມວິທີການສຳພາດທີ່ໃຊ້ໃນການສຳພາດ. ອັດຕາສ່ວນຂອງແມ່ຍິງທີ່ເປີດເຜີຍກ່ຽວກັບການຖືກລ່ວງລະເມີດທາງເພດໃນໄວເດັກ (Child Sexual Abuse - CSA) ໂດຍການສຳພາດແບບໜ້າເຊິ່ງໜ້າ ມີພຽງ 0.9%. ແຕ່ເມື່ອໃຊ້ວິທີການຖາມໂດຍໃຊ້ຮູບໜ້າໃສ່ເຈ້ຍທີ່ບໍ່ລະບຸຊື່ ເຫັນວ່າແມ່ຍິງເຖິງ 9.9%

[2] ນິຍາມຂອງການນຳໃຊ້ຄວາມຮຸນແຮງປະເພດ ຕ່າງໆ (ທາງຮ່າງກາຍ, ເພດ, ຈິດໃຈ ແລະ ການຄວບຄຸມພຶດຕິກຳ) ແມ່ນໄດ້ນຳສະເໜີໃນບົດທີ 2.

ທີ່ເປີດເຜີຍກ່ຽວກັບການຖືກລ່ວງລະເມີດທາງເພດໃນໄວເດັກ,ເມື່ອລວມຜົນຂອງສອງວິທີເຂົ້າກັນເຫັນວ່າອັດຕາສ່ວນມີສູງ ເຖິງ 10.8% ອັດຕາສ່ວນຂອງແມ່ຍິງທີ່ລາຍງານວ່າ ເຄີຍຖືກຄວາມຮຸນທາງດ້ານຮ່າງກາຍຈາກຄູ່ຮ່ວມຊີວິດ ແລະ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຫຼື ທັງສອງ ກວມ 14.4%, 10.9%ເຄີຍຖືກຄວາມຮຸນທາງເພດ ແລະ 20.2% ຖືກຄວາມຮຸນທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ.

## ທັດສະນະຄະຕິ ແລະ ຄວາມຮັບຮູ້ຕໍ່ກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

ການສຳຫຼວດຄັ້ງນີ້ ແມ່ນພະຍາຍາມທີ່ຈະປະເມີນທັດສະນະຄະຕິ ແລະ ຄວາມຮັບຮູ້ຕໍ່ກັບບົດບາດຍິງ-ຊາຍ ເພື່ອກຳນົດ ສະຖານະການຕ່າງໆທີ່ແມ່ຍິງພິຈາລະນາວ່າ ເປັນສິ່ງທີ່ຍອມຮັບໄດ້ ຖ້າວ່າຜົວທຸບຕີເມຍຂອງຕົນ ຖ້າເມຍປະຕິເສດບໍ່ຮ່ວມເພດກັບຜົວ. ໃນການສຳຫຼວດທາງດ້ານປະລິມານ ແລະ ທາງດ້ານຄຸນນະພາບ, ບັນທັດຖານ (ກົດລະບຽບຮີດຄອງປະເພນີດັ້ງເດີມ), ພາລະບົດບາດ ແລະ ສາຍພົວພັນລະຫວ່າງຍິງ-ຊາຍໃນສັງຄົມລາວ ເຫັນໄດ້ວ່າເປັນສາເຫດຫຼັກຂອງບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ໃນກຸ່ມແມ່ຍິງທີ່ຖືກສຳພາດທັງໝົດ, ມີແມ່ຍິງ35.6% ເຫັນດີກັບຄຳເວົ້າທີ່ວ່າ ເມຍທີ່ດີຄວນເຊື່ອຟັງຜົວເຖິງແມ່ນວ່າເມຍບໍ່ເຫັນດີນຳກໍ່ຕາມ. ທັດສະນະຄະຕິນີ້ຍິ່ງແຜ່ຫຼາຍຢູ່ໃນເຂດຊົນນະບົດ ແລະ ໃນເຂດທາງພາກເໜືອ. ນອກຈາກນັ້ນແລ້ວ, 22.9% ຂອງແມ່ຍິງທີ່ຖືກສຳພາດ ຍັງເຫັນຄູ່ຮ່ວມຊີວິດຂອງເຂົາເຈົ້າເປັນດັ່ງຜູ້ທີ່ມີອຳນາດເໜືອກວ່າ (ຜົວປຽບດັ່ງຫົວໜ້າ), 29.4% ຮູ້ສຶກວ່າຜູ້ເປັນເມຍບໍ່ຄວນທີ່ຈະປະຕິເສດການມີເພດສຳພັນກັບຜົວ ແລະ ເກືອບເຄິ່ງໜຶ່ງຂອງແມ່ຍິງທັງໝົດ (44.9%) ເຫັນດີວ່າ ຜູ້ເປັນຜົວສາມາດຕີເມຍຂອງຕົນໄດ້ຖ້າຫາກເມຍບໍ່ສັດຊື່. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ແລະ/ຫຼື ທາງເພດ ມັກຈະເຫັນດີກັບຄຳເວົ້າທີ່ສະໜັບສະໜູນປະເພນີ (ຄວາມບໍ່ເທົ່າທຽມກັນ) ໃນເລື່ອງບົດບາດຍິງ-ຊາຍຫຼາຍກວ່າຜູ້ທີ່ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງເລີຍ. ອຳນາດຕໍ່ລອງກ່ຽວກັບການມີເພດສຳພັນ ແມ່ຍິງ 76.5% ຢາກປະຕິເສດການມີເພດສຳພັນທີ່ເຂົາເຈົ້າບໍ່ຕ້ອງການ ຕົວຢ່າງໃນເວລາທີ່ເຂົາເຈົ້າບໍ່ສະບາຍ ຫຼື ໃນເວລາທີ່ຜົວເມົາ. ໃນການສຶກສາທາງດ້ານຄຸນນະພາບ, ຮີດຄອງປະເພນີ, ບົດບາດ ແລະ ສາຍພົວພັນດັ້ງເດີມທາງດ້ານບົດບາດຍິງ-ຊາຍ ກໍແມ່ນປັດໄຈຕົ້ນຕໍຂອງ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ຕົວຢ່າງ: ຄວາມຮຸນແຮງທີ່ເກີດຈາກຄູ່ຮ່ວມຊີວິດສາມາດເກີດຂຶ້ນໄດ້ເນື່ອງ ຈາກຜູ້ເປັນເມຍບໍ່ສາມາດປະຕິບັດໜ້ າ ທີ່ໃນກ ານເຮັດວຽກ ເຮືອ ນໄດ້ ຄົບຖ້ວນສົມບູນ. ທັງແມ່ຍິງ ແລະ ຜູ້ຊາຍ ທີ່ໄດ້ເຂົ້າຮ່ວມໃນການສົນທະນາກຸ່ມ ມັກເນັ້ນໜັກວ່າສິ່ງມຶນເມົາ, ຄວາມບໍ່ສັດຊື່ລະຫວ່າງຜົວເມຍ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດຄອບຄົວກໍ່ແມ່ນສາເຫດຫຼັກທີ່ກໍ່ໃຫ້ເກີດຄວາມຮຸນແຮງເຊັ່ນກັນ. ນອກຈາກນີ້ແລ້ວ, ບັນດາປັດໄຈເຫຼົ່ານີ້ ກໍ່ຍັງຊໍ້າຊ້ອນກັນກັບສາເຫດອື່ນໆອີກທີ່ພາໃຫ້ເກີດພຶດຕິກຳໃນການໃຊ້ຄວາມຮຸນແຮງຕ່າງໆ.

## ສາຍພົວພັນລະຫວ່າງຄວາມຮຸນແຮງທີ່ເກີດຈາກຄູ່ຮ່ວມຊີວິດ ແລະ ສຸຂະພາບຮ່າງກາຍ, ຈິດໃຈ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ

- ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ທາງເພດ ແລະ ທາງຈິດໃຈ ສາມາດກໍ່ໃຫ້ເກີດຜົນກະທົບອັນມະຫາສານຕໍ່ສຸຂະພາບຂອງແມ່ຍິງ ແລະ ຄອບຄົວ.
- 43.1% ຂອງແມ່ຍິງທີ່ລາຍງານກ່ຽວກັບ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໃນໄລຍະຕະຫຼອດຊີວິດ ແມ່ນໄດ້ຮັບບາດເຈັບຈາກເຫດການດັ່ງກ່າວ, ໃນນັ້ນ ມີ 20.2%ທີ່ຖືກບາດເຈັບຫຼາຍກວ່າ 5 ຄັ້ງ.
- ແມ່ຍິງທີ່ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນມີສຸຂະພາບທີ່ບໍ່ແຂງແຮງ (22.1%), ມີບັນຫາກ່ຽວກັບການຍ່າງ (9.7%), ພົບຄວາມຫຍຸ້ງຍາກໃນການເຮັດກິດຈະວັດປະຈຳວັນ (7.8%), ມີຄວາມເຈັບປວດ (6.2%) ແລະ ສູນເສຍຄວາມຊົງຈຳ ແລະ ສະມາທິ (10.9%) ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບເຫດການເຫຼົ່ານີ້ (14.0%, 5.9%, 4.7%, 3.5% ແລະ 6.7%, ຕາມລຳດັບ).
- ແມ່ຍິງທີ່ເຄີຍຖືກ ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດແມ່ນຈະມີຄວາມຄິດໃນການຂ້າຕົວຕາຍ(10.5%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບພໍ້ກັບເຫດການເຫຼົ່ານີ້ (2%)
- ແມ່ຍິງທີ່ເຄີຍຖືກ ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດແມ່ນຈະມີຄວາມເຈັບປວດທາງດ້ານຈິດໃຈ (ວັດແທກໂດຍແບບສອບຖາມການລາຍງານດ້ວຍຕົນເອງ-SRQ) ສະເລ່ຍ 5.7 ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບພໍ້ກັບເຫດການເຫຼົ່ານີ້ (3.8).
- ແມ່ຍິງທີ່ເຄີຍຖືພາ ແລະ ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນຈະມີຄວາມສ່ຽງໃນການຫຼຸລູກຫຼາຍກວ່າ (30.6%) ແລະ ການເອົາລູກອອກ(18.5%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບພໍ້ກັບເຫດການເຫຼົ່ານີ້ (20.4% ແລະ 8.7%, ຕາມລຳດັບ).
- ແມ່ຍິງທີ່ເຄີຍຖືກ ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນຈະມີທ່າອ່ຽງໃນການດື່ມເຫຼົ້າໃນລະຫວ່າງການຖືພາ (25.6%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບພໍ້ກັບເຫດການເຫຼົ່ານີ້ (13.3%).
- ແມ່ຍິງທີ່ເຄີຍຖືກ ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດແມ່ນຈະມີທ່າອ່ຽງໃນການຄຸມກຳເນີດ (12.3%, ໃຊ້ຖົງຢາງອະນາໄມເປັນສ່ວນໃຫຍ່) ແລະ ຮ້ອງຂໍໃຫ້ຄູ່ຮ່ວມຊີວິດຂອງເຂົາເຈົ້າໃຊ້ຖົງຢາງອະນາໄມ (11.6%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບພໍ້ກັບເຫດການເຫຼົ່ານີ້ (5.5% ແລະ 5.7%, ຕາມລຳດັບ).
- ແມ່ຍິງທີ່ເຄີຍພົບພໍ້ຄວາມຮຸນແຮງສ່ວນຫຼາຍລາຍງານວ່າ ລູກຂອງເຂົາເຈົ້າແມ່ນມີບັນຫາໃນດ້ານພຶດຕິກຳຕ່າງໆ ເຊັ່ນ: ຝັນຮ້າຍ, ຍ່ຽວໃສ່ບ່ອນ, ເປັນເດັກທີ່ບໍ່ມັກປາກ, ໃຈຮ້າຍງ່າຍ, ເສັງຕົກ/ຄ້າງຫ້ອງ ແລະ ຂາດຮຽນ/ອອກໂຮງຮຽນ ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບພໍ້ກັບເຫດການເຫຼົ່ານີ້.
- ປະມານ 40% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍໂດຍຄູ່ຮ່ວມຊີວິດລາຍງານວ່າ ລູກຂອງເຂົາເຈົ້າເຫັນເຫດການດັ່ງກ່າວຢ່າງໜ້ອຍໜຶ່ງຄັ້ງ.

- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນທີ່ທ່າອ່ຽງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍພົບ ພໍ້ກັບເຫດການເຫຼົ່ານີ້ ໃນການ: 1) ແມ່ຂອງລາວເຄີຍຖືກຕີໂດຍຄູ່ຮ່ວມຊີວິດຂອງແມ່, 2) ຜົວ/ຄູ່ຮ່ວມຊີວິດ ທີ່ມີແມ່ທີ່ຖືກຕີໂດຍຄູ່ຮ່ວມຊີວິດຂອງແມ່ ແລະ 3) ຄູ່ຊີວິດທີ່ຖືກຕີໃນຕອນຍັງເປັນເດັກ.

## ການປ້ອງກັນ ແລະ ວິທີການແກ້ໄຂຄວາມຮຸນແຮງ

ການສຳຫຼວດໃນຄັ້ງນີ້ ໄດ້ສະແດງໃຫ້ເຫັນວ່າ ເກືອບເຄິ່ງໜຶ່ງຂອງແມ່ຍິງ (43.2%) ເຄີຍຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ແຕ່ບໍ່ໄດ້ລາຍງານເຫດການເຫຼົ່ານັ້ນ ເນື່ອງຈາກຄວາມອັບອາຍ ແລະ ຄວາມຢ້ານກົວ ຕໍ່ການມີມົນທິນໃນສັງຄົມ, ແລະ ໜ້ອຍກວ່າ 30% ທີ່ຮ້ອງຂໍຄວາມຊ່ວຍເຫຼືອຈາກການຈັດຕັ້ງຕ່າງໆ ຫຼື ບຸກຄົນອື່ນ. ໃນບັນດາແມ່ຍິງ 64.2%ຮ້ອງຂໍຄວາມຊ່ວຍເຫຼືອ ຍ້ອນວ່າເຂົາເຈົ້າບໍ່ສາມາດອົດກັ້ນກັບຄວາມຮຸນແຮງເຫຼົ່ານີ້ໄດ້ອີກຕໍ່ໄປ, 39.7% ແມ່ນໄດ້ຮັບການຊຸກຍູ້ຈາກຄອບຄົວ ແລະ ໝູ່ເພື່ອນ. ແມ່ຍິງສ່ວນໃຫຍ່ຮ້ອງຂໍຄວາມຊ່ວຍເຫຼືອໃນຂັ້ນທຳອິດຈາກຄອບຄົວ ແລະ ໝູ່ເພື່ອນ ຫຼາຍກວ່າທີ່ຈະເຂົ້າໄປຫາເຄືອຄ່າຍ ແລະ ການບໍລິການທີ່ເປັນທາງການ ເຊັ່ນວ່າ: ອຳນາດການປົກຄອງຂັ້ນບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດ. ທາງອອກໜຶ່ງຂອງການໜີອອກຈາກບັນຫາຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແມ່ນການໜີອອກຈາກເຮືອນ. ໃນຈຳນວນແມ່ຍິງທີ່ເຄີຍຖືກ ໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ຍິງໃນຕົວເມືອງ 15.2% ແລະ ແມ່ຍິງຢູ່ໃນເຂດຊົນນະບົດ 13.6% ເຄີຍໜີອອກຈາກເຮືອນຢ່າງໜ້ອຍໜຶ່ງຄັ້ງ, ໃນຂະນະທີ່ ມີພຽງ 3.1% ຂອງແມ່ຍິງໃນເຂດຊົນນະບົດທີ່ອາໄສຢູ່ເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງ ທີ່ໄດ້ໜີອອກຈາກບ້ານ. ບາງຄົນກໍ່ໄດ້ກັບຄືນມາຍ້ອນເປັນຫ່ວງລູກຂອງເຂົາເຈົ້າ (66.1%), ມີຄວາມຫວັງວ່າຜົວຈະປ່ຽນແປງພຶດຕິກຳ (38.6%) ຫຼື ບໍ່ເຫຼືອຄວາມຮັກໃຫ້ກັບຜົວແລ້ວ (21.7%). ໃນຄວາມເປັນຈິງແລ້ວ, 2/3 ຂອງແມ່ຍິງແມ່ນເລືອກທີ່ຈະອົດທົນຢູ່ໃນເຮືອນຂອງເຂົາເຈົ້າຕໍ່ໄປ ຍ້ອນຢ້ານວ່າການເປີດເຜີຍກ່ຽວກັບຄວາມຮຸນແຮງ ແລະການໜີອອກຈາກເຮືອນຈະສົ່ງຜົນສະທ້ອນຕໍ່ແມ່ຍິງ ແລະ ລູກຂອງເຂົາ ເຊັ່ນດຽວກັນກັບການກາຍເປັນມົນທິນໃນສັງຄົມ ເຊິ່ງເປັນຜົນມາຈາກວັດທະນະທຳ ແລະ ຮີດຄອງປະເພນີທາງດ້ານບົດບາດຍິງ-ຊາຍ ເຊິ່ງພົວພັນເຖິງການແຍກກັນຢູ່ ແລະ ການຢ່າຮ້າງ. ໃນດ້ານການປົກປ້ອງຕົນເອງຂອງແມ່ຍິງ, 21.2% ຂອງຜູ້ທີ່ເຄີຍຖືກຄວາມຮຸນແຮງ ລາຍງານວ່າເຄີຍໄດ້ຕອບໂຕ້ ຢ່າງໜ້ອຍໜຶ່ງຄັ້ງ ແລະ 51% ໄດ້ລາຍງານວ່າ ເຫດການໃນການໃຊ້ຄວາມຮຸນແຮງໄດ້ຫຼຸດລົງຫຼັງຈາກແມ່ຍິງມີການຕອບໂຕ້.

ພາຍໃຕ້ກົດໝາຍແພ່ງ ຂອງ ສປປ ລາວ, ການຜິດຖຽງກັນໃນຄອບຄົວ ແມ່ນຈະໄດ້ຮັບການແກ້ໄຂໂດຍໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ, ເຊິ່ງຈະປະກອບດ້ວຍສະມາຊິກໃນບ້ານ 5 ຫາ 6 ຄົນ. ເຖິງຢ່າງໃດກໍ່ຕາມ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຂ້ອນຂ້າງມີຄວາມຄິດໃນແບບຮີດເກົ່າຄອງເດີມໃນວິທີການຊ່ວຍເຫຼືອແມ່ຍິງ ແລະ ຫຼີກລ້ຽງການເຂົ້າໄປແຊກແຊງຫຼາຍຈົນເກີນໄປ ໃນສະຖານະການທີ່ຜູ້ຖືກເຄາະຮ້າຍໄດ້ພົບພໍ້ຢູ່. ການໃຫ້ການຊ່ວຍເຫຼືອອີກຢ່າງໜຶ່ງ ສຳລັບຜູ້ທີ່ຕ້ອງການບ່ອນພັກເຊົາຊົ່ວຄາວທີ່ປອດໄພ ແມ່ນມີສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ຂອງສູນກາງສະຫະພັນແມ່ຍິງລາວທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ, ເຖິງຢ່າງໃດກໍ່ຕາມ ສູນດັ່ງກ່າວກໍ່ມີພຽງແຕ່ບ່ອນດຽວໃນທົ່ວປະເທດ ແລະ ກໍ່ຍັງມີຂໍ້ຈຳກັດໃນການຕອບສະໜອງຕາມຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍເລົ່ານັ້ນ. ນອກຈາກນີ້ ການຂາດຂໍ້ມູນທາງດ້ານກົດໝາຍ ແລະ ຂະບວນການຍຸຕິທຳສຳລັບແມ່ຍິງ ກໍ່ເປັນອຸປະສັກໜຶ່ງໃນການປົກປ້ອງເຂົາເຈົ້າ. ໂດຍລວມແລ້ວ, ແມ່ຍິງສ່ວນໃຫຍ່ຍັງມີຄວາມຮູ້ທີ່ຈຳກັດໃນດ້ານນິຕິກຳຕ່າງໆ ທີ່ເປັນທາງເລືອກໃນການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງທີ່ເກີດຂຶ້ນ. ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ພຽງ 1 ໃນ 3 ຂອງແມ່ຍິງໃນເຂດຕົວເມືອງ (32.5%) ທີ່ຮູ້ກ່ຽວກັບກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ສຳລັບແມ່ຍິງໃນເຂດຊົນນະບົດແມ່ນມີໜ້ອຍກວ່າ 10%. ໃນບັນດາແມ່ຍິງທີ່ມີຄວາມຮູ້ກ່ຽວກັບສິດທິຂອງຕົນທາງດ້ານກົດໝາຍ ສ່ວນຫຼາຍແມ່ນຜູ້ທີ່ມີການສຶກສາສູງ, ສັງເກດໄດ້ຈາກ 33.4% ຂອງແມ່ຍິງທີ່ມີການສຶກສາຊັ້ນສູງ ເຊິ່ງແຕກຕ່າງຈາກແມ່ຍິງທີ່ມີການສຶກສາຂັ້ນປະຖົມທີ່ມີພຽງ 5% ແລະ 1% ແມ່ນແມ່ຍິງທີ່ບໍ່ໄດ້ຮຽນໃນລະບົບສາມັນ. ເມື່ອປຽບທຽບຄວາມຮູ້ຂອງແມ່ຍິງ ກ່ຽວກັບກົດໝາຍ ເຖິງແມ່ນວ່າ ເຂົາເຈົ້າຈະເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຫຼືບໍ່ກໍ່ຕາມ, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດສ່ວນຫຼາຍແມ່ນ ຮູ້ກ່ຽວກັບກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງໜ້ອຍກວ່າຜູ້ທີ່ບໍ່ເຄີຍພົບພໍ້ກັບປະສົບການເຫຼົ່ານັ້ນ. ເຖິງແມ່ນວ່າແມ່ຍິງຈະມີຄວາມ ຮູ້ກ່ຽວກັບ ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ກົດໝາຍອື່ນໆ ເມື່ອປຽບທຽບກັນແລ້ວເຫັນວ່າ ບໍ່ໄດ້ມີຄວາມແຕກຕ່າງກັນຫຼາຍລະຫວ່າງສອງກຸ່ມນີ້.

## ປັດໄຈທີ່ກ່ຽວພັນເຖິງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

ມີຫຼາຍປັດໄຈທີ່ເພີ່ມຄວາມສ່ຽງໃຫ້ແມ່ຍິງຖືກຄວາມຮຸນແຮງໂດຍຈາກຜູ້ທີ່ແມ່ນ ແລະ ບໍ່ແມ່ນຄູ່ຮ່ວມຊີວິດໄດ້ຖືກກຳນົດທີ່ວ່າເປັນຜົນໄດ້ຮັບມາຈາກຫຼາຍປັດໃຈທີ່ສະແດງອອກດັ່ງລຸ່ມນີ້.

- ໃນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ຜູ້ທີ່ເຄີຍ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ຄວາມຮຸນແຮງທາງເພດ ໂດຍຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດແຕ່ອາຍຸ 15 ປີ ແມ່ນມີທ່າອ່ຽງທີ່ຈະຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເຖິງ 3.9 ເທົ່າ.
- ແມ່ຍິງທີ່ຖືກລ່ວງລະເມີດ/ຖືກຄວາມຮຸນແຮງທາງເພດໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແຕ່ອາຍຸ 15 ປີ ແມ່ນມີທ່າອ່ຽງທີ່ຈະຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເຖິງ 2.9 ເທົ່າ.
- ແມ່ຍິງທີ່ຖືກລ່ວງລະເມີດ/ຖືກຄວາມຮຸນແຮງທາງເພດກ່ອນອາຍຸ 15 ປີ ແມ່ນມີທ່າອ່ຽງທີ່ຈະຖືກ ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເຖິງ 2.4 ເທົ່າ.
- ແມ່ຍິງຜູ້ທີ່ຄູ່ຮ່ວມຊີວິດຂອງລາວຕີກັບຜູ້ຊາຍຄົນອື່ນ ແມ່ນມີທ່າອ່ຽງໃນການ ຖືກ ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເຖິງ 4 ເທົ່າ.

- ແມ່ຍິງທີ່ມີຄູ່ຮ່ວມຊີວິດຂອງລາວໄປມີຄວາມສຳພັນກັບແມ່ຍິງຄົນອື່ນແມ່ນມີທ່າອ່ຽງໃນການ ຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເຖິງ 2.5 ເທົ່າ.
- ແມ່ຍິງຜູ້ທີ່ມີຄູ່ຮ່ວມຊີວິດຂອງລາວດື່ມສິ່ງມຶນເມົາເປັນຈຳນວນຫຼາຍທຸກໆມື້/ທຸກໆອາທິດ ແມ່ນມີທ່າອ່ຽງໃນການ ຖືກຄວາມຮຸນແຮງ ໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເກືອບ 2 ທົບ.
- ແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ເຄີຍຖືກທຸບຕີໃນຕອນຍັງນ້ອຍ ແມ່ນມີທ່າອ່ຽງໃນການ ຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ບໍ່ເຄີຍພົບພໍ້ສິ່ງເຫຼົ່ານີ້ ເຖິງ 3.8 ເທົ່າ.
- ແມ່ຍິງທີ່ດຳລົງຊີວິດໃນໝູ່ບ້ານທີ່ບໍ່ມີລະບົບການຊ່ວຍເຫຼືອໃນເວລາຈຳເປັນ ເຊັ່ນ: ໃນເວລາເຈັບເປັນ ຫຼື ເກີດອຸບັດເຫດໃນຄອບຄົວ ແມ່ນມີທ່າອ່ຽງໃນການ ຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ອາໄສຢູ່ໃນໝູ່ບ້ານທີ່ມີລະບົບການຊ່ວຍເຫຼືອ ເຖິງ 3.5 ເທົ່າ.

ຕາມການລາຍງານຂອງຜູ້ຖືກຄວາມຮຸນແຮງ, ສິ່ງມຶນເມົາ ແລະ ການນອກໃຈ ເປັນປັດໃຈຫຼັກ ທີ່ກໍ່ໃຫ້ເກີດການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ, ແຕ່ບໍ່ແມ່ນສາເຫດໂດຍກົງຂອງການໃຊ້ຄວາມຮຸນແຮງ. ເຊິ່ງ ກົດປະເພນີຕໍ່ຍິງ-ຊາຍ, ແລະ ຄວາມເຊື່ອກ່ຽວກັບຄວາມເປັນຊາຍ ໃນສັງຄົມລາວ ທີ່ສອນໃຫ້ສັງຄົມອົດກັ້ນຕໍ່ພຶດຕິຂອງເພດຊາຍ ແລະ ບັນຫາ ທີ່ກ່ຽວພັນກັບການດື່ມສິ່ງມຶນເມົາ ແລະ ການນອກໃຈ ພົບວ່າແມ່ນບັນຫາຕົ້ນຕໍທີ່ເຮັດໃຫ້ມີການໃຊ້ຄວາມຮຸນແຮງເກີດຂຶ້ນ. ໂດຍລວມແລ້ວ, ຜົນກະທົບເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າ ການລ້ຽງດູ ແລະ ສະພາບແວດລ້ອມໃນຄອບຄົວທີ່ດີ, ຄວາມສາມາດຂອງແມ່ຍິງໃນການຮັບຮູ້ຄວາມສ່ຽງຂອງການໃຊ້ຄວາມຮຸນແຮງທາງເພດ, ການສຶກສາສຳລັບໄວໜຸ່ມຊາຍ, ການຊ່ວຍເຫຼືອຂອງຊຸມຊົນ ລວມທັງຄວາມສະເໝີພາບຍິງ-ຊາຍ ແລະ ສິດສະເໝີພາບ ສາມາດຊ່ວຍປົກປ້ອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໄດ້.

## ຜົນສະທ້ອນຕໍ່ນະໂຍບາຍ ແລະ ຂໍ້ສະເໜີແນະ

ການສຳຫຼວດໃນຄັ້ງນີ້ແມ່ນໄດ້ເຮັດໃຫ້ສາມາດຍົກໃຫ້ເຫັນ ແລະ ສ້າງ, ປັບປຸງບັນດານະໂຍບາຍ ແລະ ຂໍ້ແນະນຳທີ່ສຳຄັນ. ບັນດານະໂຍບາຍ ແລະ ຂໍ້ແນະນຳເຫຼົ່ານີ້ ແມ່ນໄດ້ກວມເຖິງຂອບເຂດຂອງພັນທະທາງດ້ານການເມືອງ ແລະ ການສ້າງສະພາບແວດລ້ອມທີ່ເອື້ອຍອຳນວຍຕໍ່ການປ້ອງກັນ ແລະ ປົກປ້ອງໃນຂັ້ນພື້ນຖານ ລວມທັງການແກ້ໄຂ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ.

### i. ການສົ່ງເສີມສິດທິທາງດ້ານການເມືອງ ແລະ ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

- ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ (ເຊິ່ງຕໍ່ໄປນີ້ຈະເອີ້ນວ່າ'ກົດໝາຍວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່), ນະໂຍບາຍອື່ນໆ ແລະ ແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກໃນ ສປປ ລາວ 2014-2020, ເພື່ອປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍ ຈາກການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດ ເຊັ່ນດຽວກັນກັບການລົງໂທດຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດ ໂດຍອີງຕາມກົດໝາຍວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່. ການປູກຈິດສຳນຶກໃນທົ່ວປະເທດກ່ຽວກັບກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່ ໄດ້ກຳນົດ ການໃຊ້ຄວາມຮຸນແຮງແມ່ນຄວາມຜິດທາງອາຍາ ແລະ ເປັນການລະເມີດຕໍ່ສິດທິມະນຸດ.
- ຮັບປະກັນວ່າຜູ້ຖືກເຄາະຮ້າຍຈະສາມາດເຂົ້າເຖິງໂດຍກົງ ແລະ ທັນເວລາ ຕໍ່ການໃຫ້ຄຳແນະນຳທາງດ້ານກົດໝາຍ ຈາກບັນດານັກກົດໝາຍ ແລະ ຜູ້ໃຫ້ຄຳປຶກສາ ເພື່ອການອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ໄດ້ຮັບຜົນປະໂຫຍດຈາກກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່.
- ດຳເນີນການຕິດຕາມຢ່າງໃກ້ຊິດ ແລະ ເປັນໄລຍະ ເພື່ອສັງເກດການວ່າກົດໝາຍວ່າດ້ວຍການຕ້ານ ແລະ ສະກັດ ກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່ ແມ່ນໄດ້ຖືກ 'ຮັບຮູ້ ແລະ ເຂົ້າເຖິງ' ໂດຍສາທາລະນະ ແລະ ມີການບັງຄັບໃຊ້ໂດຍອຳນາດການປົກຄອງຂັ້ນຕ່າງໆ.
- ແກ້ໄຂທຸກໆຂໍ້ຈຳກັດຂອງບັນດາມາດຕາຂອງກົດໝາຍ ເພື່ອຮັບປະກັນວ່າບັນດາກົດໝາຍຕ່າງໆຈະສາມາດຈັດຕັ້ງປະຕິບັດໄດ້ແທ້ ແລະ ສາມາດຕອບສະໜອງຕາມຄວາມຕ້ອງການຂອງສັງຄົມໄດ້.
- ປັບປຸງແຜນດຳເນີນງານແຫ່ງຊາດເພື່ອການປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໂດຍວິທີໃໝ່ ແລະ ມີເປົ້າໝາຍທີ່ຈະສ້າງຄວາມປ່ຽນແປງ ແລະ ກຳນົດຜົນໄດ້ຮັບທີ່ມີປະສິດທິພາບທາງດ້ານ ກິດຈະກຳ, ກອບເວລາ ແລະ ຊັບພະຍາກອນ (ງົບປະມານ, ຊັບພະຍາກອນມະນຸດ ແລະ ຊັບພະຍາກອນອື່ນໆທີ່ຈຳເປັນເຊັ່ນການປະກອບສ່ວນທາງດ້ານງົບປະມານ, ວິຊາການ ແລະສິ່ງຂອງອື່ນໆ) ໂດຍການຮອບຮວມຂໍ້ມູນຈາກບັນດາບຸກຄົນ ແລະ ຂະແໜງການທີ່ກ່ຽວຂ້ອງທັງໝົດ.

### ii. ສົ່ງເສີມການປ້ອງກັນເປັນສຳຄັນ

- ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ປັບປ່ຽນກົດປະເພນີສຳລັບຍິງ-ຊາຍ ໃນອົງການຈັດຕັ້ງຂອງບ້ານ, ໂຮງຮຽນ ແລະ ສະຖານທີ່ເຮັດວຽກເພື່ອຢຸຕິການໃຊ້ຄວາມຮຸນແຮງຕໍ່ເດັກ.

- ປຸກລະດົມຂົນຂວາຍໃຫ້ຄົນໃນບ້ານບໍ່ເມີນເສີຍຕໍ່ຄວາມຮຸນແຮງໂດຍໃຊ້ມາດຕະການ ຕອບ ໂຕ້ຕໍ່ທຸກຮູບແບບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ໃຫ້ມີການລົງໂທດຜູ້ກະທຳຜິດ ແລະ ຜູ້ທີ່ລະເວັ້ນໂທດໃຫ້ຜູ່ກະທຳຜິດ

- ສະໜອງການຝຶກອົບຮົມໃຫ້ຊຸມຊົນ ກ່ຽວກັບສິດສະເໝີພາບຍິງ-ຊາຍ ແລະ ວິທີການໃນການຕອບໂຕ້ ຄວາມຮຸນແຮງບົນພື້ນຖານທາງເພດ, ໂດຍສະເພາະການຝຶກອົບຮົມໃຫ້ຜູ້ນຳບ້ານ, ຜູ້ຊາຍໃນທຸກກຸ່ມອາຍຸ ລວມທັງຜູ້ປົກປ້ອງກົດໝາຍ.

- ມອບສິດອຳນາດໃຫ້ແມ່ຍິງ ແລະ ສົ່ງເສີມໃຫ້ເຂົາເຈົ້າມີສ່ວນຮ່ວມໃນການປ່ຽນແປງກົດປະເພນີກ່ຽວກັບ ຍິງ-ຊາຍ ແລະ ຄວາມບໍ່ເທົ່າທຽມກັນໃນສັງຄົມ, ໂດຍຜ່ານການຍອມຮັບ, ບົດຮຽນແລະປະສົບການຊີວິດຂອງແມ່ຍິງທີ່ຖືກຄວາມຮຸນແຮງ ແລະ ຊຸກຍູ້ໃຫ້ແມ່ຍິງສາມາດຕັດສິນໃຈ ເອງເພື່ອການປ້ອງກັນ, ປົກປ້ອງ ແລະ ໃຫ້ມີທາງເລືອກທີ່ມີອິດສະຫຼະ.

- ນຳໃຊ້ຫຼາຍມາດຕະການເຂົ້າຫາເພື່ອໃຫ້ຄວາມຮູ້ຜ່ານການອົບຮົມເປັນທາງການກ່ຽວກັບບົດບາດຍິງ-ຊາຍ, ເຊັ່ນວ່າ: ການສະແດງລະຄອນ ແລະ ສະແດງບົດບາດສົມມຸດ, ໂດຍສະເພາະສຳລັບຊາວບ້ານຜູ້ທີ່ບໍ່ສາມາດອ່ານ ແລະ ການຂຽນພາສາລາວ.

- ສົ່ງເສີມ ແລະ ຈັດຕັ້ງປະຕິບັດ ບັນດາກິດຈະກຳກ່ຽວກັບສິດທິມະນຸດ ແລະ ສິດສະເໝີພາບຍິງ-ຊາຍ ເຂົ້າໃນລະບົບການຮຽນ-ການສອນພາກບັງຄັບຢູ່ໃນໂຮງຮຽນ, ເພື່ອການແກ້ໄຂບັນຫາ ເຊັ່ນ: ການໃຊ້ຄວາມຮຸນແຮງພາຍໃນໂຮງຮຽນ ແລະ ການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ແລະ ການເພີ່ມຄວາມຮູ້ ແລະ ການເຂົ້າເຖິງລະບົບການຊ່ວຍເຫຼືອ ໃນກໍລະນີມີການໃຊ້ຄວາມຮຸນແຮງເກີດຂຶ້ນສຳລັບນັກຮຽນ.

- ສ້າງຫຼັກສູດການຮຽນການສອນ ແລະ ອຸປະກອນການຮຽນ,ການສອນ ລວມທັງສະນອງອຸປະກອນໃຫ້ແກ່ຄູ ແລະ ພະນັກງານເພື່ອເຮັດໃຫ້ເຂົາເຈົ້າມີຄວາມຊຳນານທີ່ມີປະສິດທິພາບໃນການສິດສອນ ແລະ ເພີ່ມຄວາມຮັບຮູ້ຕໍ່ບັນຫາທີ່ໄດ້ກ່າວໃນຫົວສຳຄັນກ່ຽວກັບນະໂຍ ບາຍ ແລະ ຂໍ້ສະເໜີແນະຕ່າງໆ.

### iii. ມີລະບົບການປົກປ້ອງ ແລະ ແກ້ໄຂຢ່າງເໝາະສົມ

- ເພີ່ມຈຳນວນບ່ອນພັກເຊົາທີ່ປອດໄພໃນປະເທດ ເພື່ອສະໜອງບ່ອນພັກເຊົາໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ມີລູກນ້ອຍຈົນກວ່າເຂົາເຈົ້າຈະສາມາດພື້ນຟູຕົນເອງ ແລະ ສາມາດກັບຄືນເຂົ້າສູ່ສັງຄົມໄດ້ປົກກະຕິ.

- ສ້າງທີມວິຊາການ ໃນການຊ່ວຍເຫຼືອ ແກ້ໄຂກໍລະນີ ຜູ້ຖືກເຄາະຮ້າຍ, ການປິ່ນປົວສຸຂະພາບ, ດ້ານສະຫວັດດີການ, ການໃຫ້ຄຳປຶກສາ ແລະ ບໍລິການທາງດ້ານກົດໝາຍ ໃນຂັ້ນສູນກາງ ແລະ ຂັ້ນແຂວງ.

- ເພີ່ມ ແລະ ສ້າງຄວາມເຂັ້ມແຂງການບໍລິການໃຫ້ຄຳປຶກສາ ໂດຍການຝຶກອົບຮົມໃຫ້ນັກສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາ ເພື່ອສະໜອງການຊ່ວຍເຫຼືອທາງດ້ານເສດຖະກິດ-ສັງຄົມ ແລະ ທາງດ້ານຈິດໃຈໃຫ້ແກ່ຜູ້ຖືກເຄາະຮ້າຍ ລວມທັງ ການສົ່ງຕໍ່ໄປຫາຂະບວນຍຸຕິທຳ.

- ສ້າງຕັ້ງລະບົບການປິ່ນປົວທາງດ້ານສຸຂະພາບຮ່າງກາຍ ແລະ ຈິດໃຈ ທີ່ສາມາດເຂົ້າເຖິງໄດ້ສະດວກໃນນັ້ນລວມທັງການສຸມໃສ່ກໍລະນີພິເສດຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ. ລະບົບນີ້ສາມາດເຊື່ອມສານເຂົ້າກັບ ສູນຊ່ວຍເຫຼືອສຸກເສີນ.

- ຝຶກ ແລະ ສ້າງຄວາມສາມາດໃຫ້ກັບພະນັກງານແພດ (ພະແນກສຸກເສີນ ແລະ ການບໍລິການໄວຈະເລີນພັນ, ແລະ ຄລີນິກຈິດຕະແພດ) ເພື່ອຮັບປະກັນວ່າເຂົາເຈົ້າຈະມີຄວາມຮູ້ ແລະ ຄວາມຊຳນິຊຳນານທີ່ໄດ້ມາດຕະຖານສາກົນ (ຕົວຢ່າງ: ປື້ມຄູ່ມືການປິ່ນປົວຂອງອົງການອະນາໄມໂລກ)

- ສ້າງຕັ້ງລະບົບການສົ່ງຕໍ່ທີ່ທັນເວລາ ເພື່ອການສົ່ງຕໍ່ຜູ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ໄປຫາຊ່ຽວຊານສະເພາະດ້ານໃນການປິ່ນປົວ ຫຼື ລະບົບການຊ່ວຍເຫຼືອທາງສັງຄົມ ແລະ ການຮັກສາຄວາມປອດໄພທີ່ກ່ຽວຂ້ອງ.

- ຮັບປະກັນວ່າ ບັນດາ ສູນ/ຄລີນິກ/ໂຮງໝໍ ມີຄວາມປອດໄພ ແລະ ສະດວກສະບາຍສຳລັບຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນຂອງເຫດເຫດການການໃຊ້ຄວາມຮຸນແຮງທັງໝົດຈະຖືກປິດລັບ.

- ຮັບປະກັນວ່າ ຕຳຫຼວດ ແລະ ໄອຍະການຈະຕອບສະໜອງ ແລະ ສືບສວນ-ສອບສວນບັນດາກໍລະນີຂອງການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດ ໃຫ້ມີປະສິດທິພາບເພີ່ມຂຶ້ນ.

- ສະໜອງຂໍ້ມູນໃຫ້ແກ່ແມ່ຍິງ ເພື່ອໃຫ້ມີຄວາມຮູ້ເພີ່ມຂຶ້ນກ່ຽວກັບສິດທິທາງດ້ານກົດໝາຍຂອງແມ່ຍິງພາຍໃຕ້ກົດໝາຍພາຍໃນປະເທດ ແລະ ກົດໝາຍສາກົນ ໂດຍຜ່ານຊ່ອງທາງທີ່ເປັນທາງການ ແລະ ບໍ່ເປັນທາງການ.

- ສະໜອງການຝຶກອົບຮົມໃຫ້ກັບບັນດາຜູ້ຈັດຕັ້ງປະຕິບັດ ກົດໝາຍ ແລະ ພະນັກງານທີ່ເຮັດວຽກໃນຂັ້ນເມືອງ ແລະ ຂັ້ນບ້ານ. ການສ້າງຂີດຄວາມສາມາດຕ່າງໆນັ້ນ ຄວນສຸມໃສ່ບັນຫາທີ່ລະອຽດອ່ອນທາງເພດໃນລະບົບກົດໝາຍ ເພື່ອຮັບປະກັນການບໍລິການທີ່ມີຄວາມລະອຽດອ່ອນທາງເພດສຳລັບຜູ້ຖືກເຄາະຮ້າຍ ແລະ ມາດຕະການທີ່ເໝາະສົມເພື່ອການເຂົ້າຫາ ແລະ ຈັດການກັບບັນດາຜູ້ກະທຳຜິດ.

- ອຳນວຍຄວາມສະດວກໃຫ້ຜູ້ຖືກເຄາະຮ້າຍສາມາດເຂົ້າເຖິງລະບົບຍຸຕິທຳຢ່າງງ່າຍດາຍ (ຂັ້ນຕອນການດຳເນີນຄະດີ, ພະນັກງານຍຸຕິທຳ, ທະນາຍຄວາມ), ໂດຍປາສະຈາກຄວາມກັງວົນໃນດ້ານຄ່າໃຊ້ຈ່າຍ.

- ທົບທວນຂັ້ນຕອນ ແລະ ຂະບວນການຕັດສິນ ຂອງສານ ໃນການດຳເນີນຄະດີກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

- ທົບທວນ ຫຼື ກຳນົດບ່ອນໃຫ້ບໍລິການທີ່ມີຢູ່ໃຫ້ແກ່ຜູ້ຖືກຄວາມຮຸນແຮງ ໂດຍສະເພາະການແກ້ໄຂ ຫຼື ບັນຫາທີ່ລະອຽດອ່ອນຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

# ພາກສະເໜີ

# ພາກທີ 1. ພາກສະເໜີ

## 1.1 ສະພາບລວມຂອງ ສປປ ລາວ

### 1.1.1 ສະພາບລວມທາງດ້ານພູມສັນຖານ, ປະຊາກອນ ແລະ ເສດຖະກິດ-ສັງຄົມ

ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ເຊິ່ງຕັ້ງຢູ່ທາງທິດຕາເວັນອອກສ່ຽງໃຕ້ຂອງທະວີບອາຊີ ມີຊາຍແດນຕິດຈອດກັບປະເທດກຳປູເຈຍ, ຈີນ, ມຽນມາ, ຫວຽດນາມ ແລະ ໄທ (ຮູບທີ 1). ພູມສັນຖານຂອງປະເທດສ່ວນໃຫຍ່ເປັນພູ ແລະ ມີປ່າໄມ້ປົກຄຸມ, ແລະ ໄດ້ແບ່ງອອກເປັນເຂດທົ່ງພຽງເລາະລຽບຕາມແມ່ນໍ້າຂອງ ແລະ ເຂດພູພຽງ. ດ້ານການປົກຄອງ, ສປປ ລາວ ປະກອບມີ 17 ແຂວງ ແລະ ໜຶ່ງນະຄອນຫຼວງ ຄື: ນະຄອນຫຼວງວຽງຈັນ, ເຊິ່ງມີ 145 ເມືອງ ແລະ 8,615 ບ້ານ.[3] ໃນປີ 2012, ສ ປປລາວ ມີຈຳນວນປະຊາກອນທັງໝົດປະມານ 6.5 ລ້ານຄົນ ເຊິ່ງປະຊາກອນສ່ວນໃຫຍ່ແມ່ນໄວໜຸ່ມ. ໃນນັ້ນ, ເດັກ ແລະ ໄວໜຸ່ມ ອາຍຸຕໍ່າກວ່າ 25 ປີ ແມ່ນກວມເຖິງ 59% ຂອງພົນລະເມືອງລາວທັງໝົດ[4] ແລະ ປະຊາກອນ 73 % ອາໄສຢູໃນເຂດຊົນນະບົດ, ລວມທັງ 10% ທີ່ອາໄສຢູ່ເຂດຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ (ກະຊວງສາທາລະນະສຸກ ແລະ ສູນສະຖິຕິແຫ່ງຊາດ, 2012). ສປປ ລາວ ເປັນປະເທດທີ່ມີຫຼາຍຊົນເຜົ່າ ເຊິ່ງມີ 49 ຊົນເຜົ່າ. ມີ 4 ກຸ່ມພາສາຕົ້ນຕໍຄື: ລາວ-ໄຕ (ກວມ 68% ຂອງປະຊາກອນທັງໝົດ), ມອນ-ຂະແມ (22%), ມົ້ງມຽນ (7%) ແລະ ຊີໂນ-ທິເບດ (3%).

**ຮູບທີ 1.1 ແຜນທີ່ຂອງ ສປປ ລາວ**




ຕາລາງທີ 1.1 ສະແດງ ຈຳນວນປະຊາກອນ ແລະ ຕົວຊີ້ວັດທາງດ້ານເສດຖະກິດ-ສັງຄົມ ຂອງປະເທດ. ດັດຊະນີການພັດທະນາຊັບພະຍາກອນມະນຸດໃນປີ 2012 ແມ່ນ 0.543, ເຊິ່ງຈັດຢູ່ໃນ "ລະດັບກາງ" ຂອງໝວດການພັດທະນາຊັບພະຍາກອນມະນຸດ, ເຊິ່ງຢູ່ໃນອັນດັບທີ 138 ໃນຈຳນວນ 187 ປະເທດ. ຄ່າດັດສະນີນີ້ໄດ້ເພີ່ມຂຶ້ນ 57% ຕັ້ງແຕ່ປີ 1980, ໂດຍມີອັດຕາເພີ່ມຂຶ້ນສະເລ່ຍໃນແຕ່ລະປີ ປະມານ 1.7%.

[3] ແຕ່ປີ 2014, ການປົກຄອງຂອງ ສປປ ລາວ ໄດ້ຖືກແບ່ງອອກເປັນ 17 ແຂວງ ແລະ 1 ນະຄອນຫຼວງ.

[4] ສູນສະຖິຕິແຫ່ງຊາດ ໄດ້ຄາດຄະເນ ໂດຍອີງຕາມຕົວເລກຈາກການສຳຫຼວດຄົວເຮືອນ ແລະ ປະຊາກອນ ປີ 2005, http://www.nsc.gov.la/en/.

**ຕາຕະລາງທີ 1.1 ຈຳນວນປະຊາກອນ ແລະ ຕົວຊີ້ວັດທາງດ້ານເສດຖະກິດ-ສັງຄົມ ຂອງ ສປປ ລາວ**

| ຕົວຊີ້ວັດ | ປີ | ຈຳນວນ | ແຫຼ່ງຂໍ້ມູນ |
|---|---|---|---|
| ປະຊາກອນ | 2012 | 6.5 ລ້ານ | I |
| ອັດຕາການເພີ່ມຂຶ້ນຂອງປະຊາກອນໃນແຕ່ລະປີ (%) | 2010-2015 | 2.1 | ii |
| ລາຍໄດ້ມວນລວມແຫ່ງຊາດ (GNI) ຕໍ່ຫົວຄົນ (ໂດລາສະຫະລັດ) | 2015<br>2012 | 1,242 (ລາຄາປັດຈຸບັນ)<br>2,435 (2005 PPP: ກຳລັງຊື້) | viii<br>ii |
| ດັດຊະນີການພັດທະນາຊັບພະຍາກອນມະນຸດ (HDI) | 2012 | 0.543 | ii |
| ດັດຊະນີຄວາມບໍ່ເທົ່າທຽມລະຫວ່າງຍິງ-ຊາຍ (GII) | 2012 | 0.483 | ii |
| ດັດຊະນີຄວາມທຸກຍາກຫຼາຍແບບ (MPI) | 2006 | 0.267 | ii |
| ດັດຊະນີ Gini | 2000-2010 | 36.7 | v |
| ອາຍຸຍືນສະເລ່ຍ | 2012 | 67.8 | ii |
| ອັດຕາການຈະເລີນພັນລວມ (ຈຳນວນການເກີດຕໍ່ແມ່ຍິງໜຶ່ງຄົນ) | 2011-12 | 3.2 | vi |
| ອັດຕາການຕາຍໂດຍແຍກຍິງ-ຊາຍ (ອາຍຸ 15-60 ປີ ໂດຍການຕາຍ 1,000 ຄົນ) | 2009 | ຊາຍ: 289 ຍິງ: 259 | ii |
| ອັດຕາການຕາຍຂອງເດັກເກີດໃໝ່ (ຈຳນວນການຕາຍ ຕໍ່ເດັກທີ່ເກີດ 1,000 ຄົນ) | 2011-12 | 68 | vi |
| ອັດຕາການຕາຍຂອງເດັກອາຍຸຕ່ຳກວ່າ 5 ປີ (ຈຳນວນການຕາຍ ຕໍ່ເດັກທີ່ເກີດ 1,000 ຄົນ) | 2011-12 | 79 | vi |
| ອັດຕາການຕາຍຂອງແມ່ (ຈຳນວນການຕາຍ ຕໍ່ເດັກທີ່ເກີດ 100,000 ຄົນ) | 2011-12 | 357 | vi |
| ອັດຕາການຮູ້ໜັງສື (% ຂອງອາຍຸ 15 ປີ ແລະ ສູງກວ່າ) | 2011 | 73.1 | iii |
| ອັດຕາການເຂົ້າຮຽນຊັ້ນປະຖົມໂດຍລວມ (%) | 2011 | 126 | vii |
| ອັດຕາການເຂົ້າຮຽນຊັ້ນປະຖົມໂດຍລວມ ແຍກໂດຍເພດ (%) | 2008-2011 | ຊາຍ: 98 ຍິງ: 96 | iv |
| ອັດຕາການເຂົ້າຮຽນຊັ້ນມັດທະຍົມໂດຍລວມ (%) | 2011 | 46 | vii |

ແຫຼ່ງຂໍ້ມູນ: i. ສູນສະຖິຕິແຫ່ງຊາດ

ii. ອົງການສະຫະປະຊາຊາດເພື່ອການພັດທະນາ (ປີ 2014b) ບົດລາຍງານການພັດທະນາຊັບພະຍາກອນມະນຸດ ປີ 2013

iii. UNICEF ບົດລາຍງານກ່ຽວກັບພື້ນທີ່ຂອງເດັກໃນໂລກປີ 2014

iv. UNESCO EFA ບົດລາຍງານການຕິດຕາມກວດກາ ປີ 2013/14

v. ທະນາຄານໂລກ, ຂໍ້ມູນຂອງປະເທດ, http://data.worldbank.org/indicator/SI.POV.GINI?page=1

vi. ກະຊວງສາທາລະນະສຸກ& ສູນສະຖິຕິແຫ່ງຊາດ, ການສຳຫຼວດດັດຊະນີໝາຍສັງຄົມລາວ 2011-2-1

vii. ເປົ້າໝາຍສະຫັດສະຫວັດ: ບົດລາຍງານຄວາມກ້າວໜ້າຂອງ ສປປ ລາວ ປີ 2013

viii. ບົດລາຍງານທາງເສດຖະກິດ ປີ 2014 ແລະ ທ່າອ່ຽງໃນປີ 2015 (ສະຖາບັນການຄົ້ນຄວ້າເສດຖະກິດແຫ່ງຊາດ).

ຄວາມສະເໝີພາບຍິງ-ຊາຍໃນ ສປປ ລາວ, ດັດຊະນີຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ ໃນ ສປປ ລາວ ແມ່ນ 0.483 ໃນປີ 2012, ເຊິ່ງເປັນອັນດັບທີ 100 ໃນ 148 ປະເທດ. ມີແມ່ຍິງ 1 ສ່ວນ 4 ຂອງຕຳແໜ່ງທີ່ນັ່ງໃນສະພາແຫ່ງຊາດ ແລະ 22.9% ຂອງແມ່ຍິງລາວ ແມ່ນສາມາດເຂົ້າເຖິງການສຶກສາໃນຊັ້ນມັດທະຍົມ ຫຼື ສູງກວ່າ ເຊິ່ງປຽບທຽບກັບຜູ້ຊາຍທີ່ມີເຖິງ 36.8% (ອົງການສະຫະປະຊາຊາດເພື່ອການພັດທະນາ, 2014a). ຈາກການເກີດ 100,000 ຄົນ, ຈະມີການຕາຍຂອງແມ່ຍິງທີ່ສາເຫດມາຈາກການຖືພາເຖິງ 357 ຄົນ ແລະ ອັດຕາການຈະເລີນພັນຂອງໄວໜຸ່ມ ແມ່ນ 94 ຕໍ່ການເກີດ 1,000 ຄົນ. ການມີສ່ວນຮ່ວມຂອງແມ່ຍິງໃນຕະຫຼາດແຮງງານມີ 76.3% ທຽບໃສ່ຜູ້ຊາຍທີ່ມີ 78.9% (Ibid.) ໂດຍລວມແລ້ວ, ອັດຕາສ່ວນໃນການເຂົ້າຮຽນໃນຊັ້ນມັດທະຍົມ ແລະ ອັດຕາການຕາຍຂອງແມ່ ເປັນສິ່ງທີ່ກີດຂວາງການປັບປຸງດັດຊະນີຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ, ຫຼາຍກວ່າບັນດາຕົວຊີ້ວັດອື່ນທີ່ພົວພັນເຖິງດ້ານເສດຖະກິດ (ການມີສ່ວນຮ່ວມຂອງແຮງງານ)ແລະ ການມີສ່ວນຮ່ວມທາງການເມືອງ (ບ່ອນນັ່ງໃນສະພາ)

ໃນດ້ານຄວາມທຸກຍາກ, ອັດຕາສ່ວນຂອງປະຊາຊົນທີ່ຢູ່ຕ່ຳກວ່າລະດັບຄວາມທຸກຍາກແມ່ນມີ 27.6% ໃນປີ 2007/2008 ແລະ 22.0% ໃນປີ 2012/2013 (ລັດຖະບານ ສປປ ລາວ ແລະ ອົງການສະຫະປະຊາຊາດ, ປີ 2013). ຕົວຊີ້ວັດອື່ນຄື ດັດຊະນີຄວາມທຸກຍາກຫຼາຍແບບ (MPI),

ເຊິ່ງໄດ້ຖືກນຳມາໃຊ້ໃນປີ 2006.[5] ຂໍ້ມູນດັ່ງກ່າວໄດ້ບົ່ງບອກວ່າ 47.2% ຂອງຈຳນວນປະຊາກອນທັງໝົດ ແມ່ນອາໄສຢູ່ໃນສະພາບທີ່ມີຄວາມທຸກຍາກຫຼາຍແບບ, ໃນຂະນະທີ່ອີກ 14.1% ແມ່ນຜູ້ທີ່ດ້ອຍໂອກາດທີ່ຂາດເຂີນໃນຫຼາຍໆດ້ານ. ການຂາດເຂີນທີ່ຮ້າຍແຮງເຫຼົ່ານີ້, ອັດຕາສ່ວນສະເລ່ຍຂອງປະສົບການ ຂາດເຂີນຂອງປະຊາກອນທີ່ອາໄສຢູ່ໃນສະພາບທີ່ມີຄວາມທຸກຍາກຫຼາຍແບບ ແມ່ນ 56.5 %. ດັດຊະນີຄວາມທຸກຍາກຫຼາຍແບບ (MPI) ໃນ ສປປ ລາວ ເຊິ່ງແມ່ນບັນດາປະຊາກອນທີ່ທີ່ມີຄວາມທຸກຍາກຫຼາຍແບບ ທີ່ມີການດັດປັບຕາມການຂາດເຂີນທີ່ທີ່ຮ້າຍແຮງ ແມ່ນ 0.267 (UNDP, 2014a). ໃນປີ 2011, ສປປ ລາວ ໄດ້ຍ້າຍຫຼຸດພົ້ນອອກຈາກສະຖານະປະເທດມີລາຍໄດ້ຕ່ຳ ມາເປັນປະເທດທີ່ມີເສດຖະກິດທີ່ມີລາຍໄດ້ຕ່ຳປານກາງ ໂດຍມີລາຍໄດ້ມວນລວມແຫ່ງຊາດຕໍ່ຫົວຄົນ 2,435 ໂດລາສະຫະລັດ (Ibid.). ຕັ້ງແຕ່ການຫັນປ່ຽນທາງດ້ານເສດຖະກິດຈາກແຜນການລວມສູນ ມາເປັນເສດຖະກິດຕະຫຼາດ, ປະເທດລາວກໍ່ມີການພັດທະນາທາງເສດຖະກິດທີ່ໝັ້ນຄົງ ເຊິ່ງມີການຜະລິດມວນລວມໃນແຕ່ລະປີໂດຍສະເລ່ຍເຕີບໂຕເທົ່າກັບ 7.4% ໃນລະຫວ່າງປີ 2001 ຫາ 2011. ໃນຂະນະທີ່ການຈະເລີນເຕີບໂຕຢ່າງວ່ອງໄວທາງດ້ານເສດຖະກິດ ເຮັດໃຫ້ຄວາມທຸກຍາກຫຼຸດຜ່ອນລົງ, ແຕ່ຄວາມບໍ່ເທົ່າທຽມກັນຍິ່ງເພີ່ມສູງຂຶ້ນ ໂດຍສະເພາະຄວາມແຕກໂຕນກັນລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດ. ດັດຊະນີ Gini ທີ່ວັດແທກລະດັບຄວາມບໍ່ເທົ່າທຽມກັນ ໃນການກະຈາຍລາຍໄດ້ຂອງຄອບຄົວໃນທົ່ວປະເທດ, ເຊິ່ງໄດ້ລາຍງານແມ່ນມີ 36.74 ໃນປີ 2008 ແລະ ຕົວຊີ້ວັດທາງສັງຄົມສະແດງໃຫ້ເຫັນວ່າ ຜົນປະໂຫຍດຂອງການຈະເລີນເຕີບໂຕ ບໍ່ໄດ້ຖືກແຂກຢາຍໄປຢ່າງທົ່ວເຖິງ.[6]

## 1.2 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

### 1.2.1 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແມ່ນຫຍັງ?

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW) ແມ່ນເປັນທີ່ຮັບຮູ້ຫຼາຍຂຶ້ນໃນລະດັບສາກົນ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ (GBV) ກໍ່ແມ່ນບັນຫາດ້ານສຸຂະພາບທີ່ເຄັ່ງຮ້ອນ ແລະ ລະເມີດສິດທິມະນຸດຂອງແມ່ຍິງ. ອີງຕາມການທົບທວນຄືນຄັ້ງຫຼ້າສຸດຂອງອົງການອະນາໄມໂລກ ໃນການເກັບກຳຂໍ້ມູນກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (WHO, 2013a),[7] 35% ຂອງແມ່ຍິງໃນທົ່ວ ໂລກ ແມ່ນເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ (IPV) ຫຼື ໃນການໃຊ້ຄວາມຮຸນແຮງທາງເພດໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ. ການໃຊ້ຄວາມຮຸນແຮງສ່ວນໃຫຍ່ແມ່ນເກີດຈາກບັນດາຄູ່ຮ່ວມຊີວິດ ແລະ 30% ຂອງແມ່ຍິງທີ່ມີການພົວພັນໃນທາງຊູ້ສາວ ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ. ຄຳສັບ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ (GBV) ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW) ແມ່ນຖືກໃຊ້ສັບປ່ຽນກັນໄດ້, ເຖິງແມ່ນວ່າ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ເກີດຂຶ້ນຈາກຜົນທີ່ຄາດຫວັງໃຫ້ມີຕໍ່ຍິງ-ຊາຍທີ່ເປັນເລື່ອງປົກກະຕິ ເຊິ່ງພົວພັນກັບແຕ່ລະເພດ, ລວມທັງອຳນາດໃນການພົວພັນທີ່ບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍໃນສະພາບການຂອງສັງຄົມໃດໜຶ່ງ.

ສຳລັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW) ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ (GBV) ແມ່ນບໍ່ມີນິຍາມໃດໜຶ່ງສະເພາະ ແລະ ຕາຍຕົວ, ແຕ່ນິຍາມທີ່ຖືກໃຊ້ຢ່າງແຜ່ຫຼາຍແມ່ນບັນດານິຍາມທີ່ມີການພັດທະນາໂດຍອົງການສະຫະປະຊາຊາດ ດັ່ງລຸ່ມນີ້:

**ຖະແຫຼງການຂອງອົງການສະຫະປະຊາຊາດ ກ່ຽວກັບ ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນປີ 1993 ໄດ້ນິຍາມ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເອົາໄວ້ວ່າ:**

*"ການກະທຳຂອງການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ທີ່ມີຜົນເຮັດໃຫ້, ຫຼື ມີທ່າອ່ຽງທີ່ຈະມີຜົນເຮັດໃຫ້, ເກີດຄວາມເສຍຫາຍທາງດ້ານຮ່າງກາຍ, ທາງເພດ ຫຼື ທາງດ້ານຈິດໃຈ ຕໍ່ແມ່ຍິງ, ລວມທັງການຂົ່ມຂູ່ຕ່າງໆ ເຊັ່ນ: ການປະພຶດ, ການຂົ່ມເຫັງ ຫຼື ການຈຳກັດອິດສະຫຼະພາບ, ເຖິງແມ່ນວ່າຈະເກີດຂຶ້ນໃນສະຖານທີ່ສາທາລະນະ ຫຼື ສ່ວນຕົວກໍ່ຕາມ. " (ຖະແຫຼງການຂອງອົງການສະຫະປະຊາຊາດ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ມາດຕາທີ1.)* [6]

---

5 ບົດລາຍງານການພັດທະນາຊັບພະຍາກອນມະນຸດ ຂອງອົງການສະຫະປະຊາຊາດ ໃນປີ 2010 ໄດ້ນຳໃຊ້ດັດສະນີຄວາມທຸກຍາກຫຼາຍແບບ, ເຊິ່ງໄດ້ລະບຸການຂາດເຂີນຫຼາຍດ້ານໃນຄົວເຮືອນດຽວກັນ ທາງດ້ານການສຶກສາ, ສຸຂະພາບ ແລະ ມາດຕະຖານການດຳລົງຊີວິດ. ຕົວຊີ້ວັດເຫຼົ່ານີ້ໄດ້ວັດແທກເພື່ອສ້າງຄະແນນຂອງການຂາດເຂີນ ແລະ ຄະແນນດັ່ງກ່າວກໍ່ໄດ້ມີການຄິດໄລ່ແຕ່ລະຄົວເຮືອນ. ຄະແນນການຂາດເຂີນ ແມ່ນ 33.3 % (1 ສ່ວນ 3 ຂອງການວັດແທກ) ເຊິ່ງໄດ້ໃຊ້ ເພື່ອການຈຳແນກລະຫວ່າງ "ທຸກຍາກ" ແລະ "ບໍ່ທຸກ". ຖ້າວ່າຄະແນນການຂາດເຂີນຂອງຄົວເຮືອນ ເທົ່າ 33.3 % ຫຼື ຫຼາຍກວ່າ, ຄອບຄົວນັ້ນແມ່ນຢູ່ໃນລະດັບຂອງຄວາມທຸກຍາກໃນຫຼາຍແບບ (UNDP, 2014a).

6 ທະນາຄານໂລກ, ຂໍ້ມູນປະເທດ, http://data.worldbank.org/indicator/SI.POV.GINI?page=1

7 ການທົບທວນທີ່ເປັນລະບົບ ທີ່ສັງລວມເອົາການວິໄຈທີ່ດີທີ່ສຸດ ກ່ຽວກັບຄຳຖາມທີ່ສະເພາະເຈາະຈົງ, ແລະ ພະຍາຍາມທີ່ຈະກຳນົດ, ເລືອກ, ສັງເຄາະ ແລະ ຕີລາຄາ ບົດວິໄຈທີ່ມີຄຸນນະພາບສູງ ແລະ ມີການທົບທວນໂດຍກຸ່ມນັກວິໄຈເຊັ່ນກັນ ເພື່ອການສະໜອງຫຼັກຖານທາງວິທະຍາສາດ ໃນການຕອບຄຳຖາມ, ເຊິ່ງບໍ່ໄດ້ເຈຕະນາເພື່ອສ້າງທ່າອ່ຽງໂດຍລວມ, ມາດຕະຖານສາກົນ ຫຼື ການຊອກຫາຄ່າສະເລ່ຍໃນ ຫົວຂໍ້ສະເພາະໃດໜຶ່ງ.

8 ຂໍ້ມູນເຕັມ : http://www.un.org/documents/ga/res/48/a48r104.htm

**ນິຍາມຂອງອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA) ກ່ຽວກັບການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ (GBV):**

*"ການໃຊ້ຄວາມຮຸນແຮງແມ່ນພົວພັນທັງຜູ້ຊາຍ ແລະ ແມ່ຍິງ, ເຊິ່ງສ່ວນຫຼາຍແລ້ວເພດຍິງຈະເປັນຜູ້ຖືກເຄາະຮ້າຍ; ແລະ ມີສາເຫດມາຈາກຄວາມບໍ່ເທົ່າທຽມກັນໃນດ້ານອຳນາດໃນສາຍພົວພັນລະຫວ່າງຜູ້ຊາຍ ແລະ ແມ່ຍິງ. ການໃຊ້ຄວາມຮຸນແຮງແມ່ນມີຜົນກະທົບໂດຍກົງ ຕໍ່ກັບແມ່ຍິງ ຍ້ອນວ່າ ລາວແມ່ນແມ່ຍິງ, ຫຼື ມີຜົນກະທົບຕໍ່ແມ່ຍິງເຊິ່ງແຕກຕ່າງກັນໄປ. ເຊິ່ງລວມເຖິງ, ແຕ່ບໍ່ຈຳກັດນິຍາມພຽງແຕ່ ຄວາມເສຍຫາຍທາງດ້ານຮ່າງກາຍ, ທາງເພດ ແລະ ທາງດ້ານຈິດໃຈ (ລວມທັງ ການຂົ່ມຂູ່, ຄວາມເຈັບປວດ, ການຂົ່ມເຫງ, ແລະ/ຫຼື ການຂາດອິດສະລະພາບໃນຄອບຄົວ, ຫຼື ໃນຊຸມຊົນ). ການໃຊ້ຄວາມຮຸນແຮງນີ້ ລວມທັງລັດເປັນຜູ້ກະທຳຜິດ ຫຼື ເປັນຜູ້ຍົກເວັ້ນໂທດຂອງປະເທດໃດໜຶ່ງ". (ກຸ່ມເຄືອຂ່າວບົດບາດຍິງ-ຊາຍ ຂອງ UNFPA, ປີ 1998) (UNFPA, ປີ 1998)*

ໃນຂະນະທີ່ນິຍາມຂອງອົງການສະຫະປະຊາຊາດ ອີງໃສ່ຜົນໄດ້ຮັບ ຫຼື ຜົນໄດ້ຮັບໂດຍບໍ່ໄດ້ລະບຸເຖິງຄວາມຕັ້ງໃຈສະເພາະ, ການຕີຄວາມໝາຍຂອງ UNFPA ແມ່ນມີຄວາມລະອຽດຫຼາຍກວ່າ ເຊິ່ງໄດ້ມີການລະບຸຢ່າງລະອຽດກ່ຽວກັບຮູບບບຕ່າງໆແບບຂອງສັງຄົມ ແລະ ຮາກເຫງົ້າຂອງສາເຫດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ. ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ (GBV) ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (VAW) ປຽບດັ່ງຄຳສັບທີ່ເປັນຄັນຮົ່ມ ທີ່ປະກອບດ້ວຍຫຼາຍໆ ຮູບແບບຂອງການໃຊ້ຄວາມຮຸນແຮງ, ເຊິ່ງລວມມີ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ (IPV) ແລະ ການຂົ່ມຂືນ/ການລະເມີດທາງເພດ ແລະ ຮູບແບບອື່ນໆ ຂອງການລ່ວງລະເມີດທາງເພດທີ່ກະທຳໂດຍບຸກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ (ການໃຊ້ຄວາມຮຸນແຮງໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ). ຮູບແບບຕ່າງໆ ຂອງການໃຊ້ຄວາມຮຸນແຮງລວມມີ ການທຳລາຍພົມມະຈັນໃຫ້ຈີກຂາດ, ການຂ້າ ແລະ ການຄ້າມະນຸດໃນແມ່ຍິງ ກໍ່ລວມຢູ່ໃນນິຍາມນີ້ເຊັ່ນກັນ.

### ຮູບທີ 1.1 'ຄູ່ຮ່ວມຊີວິດທີ່ໃກ້ຊິດ' ແລະ 'ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ' ແມ່ນຫຍັງ?

'ຄູ່ຮ່ວມຊີວິດທີ່ໃກ້ຊິດ' ໄດ້ຖືກນິຍາມໃນບົດສຳຫຼວດນີ້ວ່າ ເປັນບຸກຄົນທີ່ມີຄວາມສຳພັນທີ່ໃກ້ຊິດ ເຊິ່ງມີການພົວພັນທາງດ້ານຮ່າງກາຍ, ຈິດໃຈ ແລະ ທາງເພດ ຄືດັ່ງຄູ່ຮ່ວມຊີວິດ, ເຊິ່ງມີຄວາມຮັບຮູ້ໃນຊີວິດຂອງກັນ ແລະ ກັນ. ເຖິງຢ່າງໃດກໍ່ຕາມ, ຄວາມສຳພັນບໍ່ຈຳເປັນຕ້ອງມີທຸກໆ ຢ່າງທີ່ກ່າວມາຂ້າງເທິງນີ້. 'ຄູ່ຮ່ວມຊີວິດທີ່ໃກ້ຊິດ' ອາດຈະລວມ ຫຼື ບໍ່ລວມ ການຢູ່ກິນແບບສາມີພັນລະຍາ ແລະ ການມີຄວາມສຳພັນໃນປັດຈຸບັນ ຫຼື ອາດີດ. ປະເພດທີ່ແຕກຕ່າງກັນຂອງຄູ່ຮ່ວມຊີວິດທີ່ໃກ້ຊິດ ມີຄື:

- ຄູ່ແຕ່ງງານ (ຄູ່ແຕ່ງງານ, ໃນທາງກົດໝາຍແລະ ຢູ່ຮ່ວມກັນເປັນຄອບຄົວ)
- ແຟນ ຍິງ ແລະ ຊາຍ
- ຄູ່ຮັກ
- ຄູ່ທີ່ມີການຮ່ວມເພດກັນເປັນປະຈຳ

ຜູ້ເປັນສາມີ ກໍ່ຖືກນິຍາມເປັນຄູ່ຮ່ວມຊີວິດ ໃນທຸກໆ ຮູບແບບຂອງການແຕ່ງງານ, ແຕ່ການເປັນຄູ່ຮ່ວມຊີວິດ ສາມາດເປັນຄູ່ທີ່ມີຄວາມສຳພັນທີ່ແຕ່ງງານກັນ ຫຼື ບໍ່ແຕ່ງກໍ່ໄດ້. ສາມີ ແລະ ຄູ່ຮ່ວມຊີວິດ ອາດຈະບໍ່ແມ່ນຄົນຜູ້ດຽວ.

ໃນທາງກົງກັນຂ້າມ, 'ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ' ແມ່ນທຸກຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ, ເຊິ່ງບໍ່ໄດ້ມີການພົວພັນກັນຢ່າງສະໜິດແໜ້ນຄືດັ່ງຄູ່ແຕ່ງງານ. ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຖືກນິຍາມວ່າ ແມ່ນ 'ຄົນແປກໜ້າ, ຄົນຮູ້ຈັກ, ໝູ່, ເພື່ອນຮ່ວມງານ, ຮຸ່ນດຽວກັນ, ນາຍຄູ, ເພື່ອນບ້ານ ແລະ ສະມາຊິກຄອບຄົວ'. ການລ່ວງລະເມີດ/ການໃຊ້ຄວາມຮຸນແຮງທາງເພດ ໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແມ່ນຄຳສັບທີ່ໃຊ້ໂດຍທົ່ວໄປ, ແຕ່ການໃຊ້ຄວາມຮຸນແຮງໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ກໍ່ລວມທັງຮູບແບບຕ່າງໆທາງຮ່າງກາຍ ແລະ ທາງຈິດໃຈ. 'ຄູ່ຮ່ວມຊີວິດທີ່ໃກ້ຊິດ' ແລະ 'ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ' ເປັນໄດ້ທັງ ຄູ່ຍິງ ຫຼື ຊາຍ ແລະ ຄູ່ຮັກຮ່ວມເພດດຽວກັນ.

ການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ (IPV) ສ່ວນຫຼາຍຈະເກີດຂຶ້ນໃນຊ່ວງຊີວິດຂອງໄວໜຸ່ມ ຫຼື ໄວຜູ້ໃຫຍ່ທີ່ແຕ່ງງານແລ້ວ, ການຢູ່ກິນແບບຜົວເມຍ ຫຼື ສາຍພົວພັນທີ່ເປັນຄູ່ຮັກໄປນຳກັນຕະຫຼອດ. ການໃຊ້ຄວາມຮຸນແຮງປະເພດນີ້ ປະກອບດ້ວຍການລ່ວງລະເມີດທາງຮ່າງກາຍ, ທາງເພດ ແລະ ທາງຈິດໃຈ ເຊິ່ງລວມທັງການຄວາມຄຸມພຶດຕິກຳ. ການໃຊ້ຄວາມຮຸນແຮງທາງເພດສາມາດເກີດຂຶ້ນໄດ້ໃນທຸກຊ່ວງອາຍຸ ນັບຕັ້ງແຕ່ໄວເດັກ ແລະ ຜູ້ທີ່ລ່ວງລະເມີດອາດຈະແມ່ນພໍ່ແມ່, ສະມາຊິກໃນຄອບຄົວ, ຜູ້ດູແລເດັກ, ຄົນຮູ້ຈັກ ແລະ ຄົນແປກໜ້າ ລວມທັງຄູ່ຮ່ວມຊີວິດໃນຊ່ວງເປັນໄວໜຸ່ມ ແລະ ເປັນຜູ້ໃຫຍ່. ຜູ້ຖືກເຄາະຮ້າຍ ຂອງການໃຊ້ຄວາມຮຸນແຮງທັງສອງປະເພດນີ້ ສ່ວນຫຼາຍແມ່ນແມ່ຍິງໂດຍສັ້ນໃຫຍ່ແມ່ນຜູ້ຊາຍເປັນຜູ້ກໍ່ທະຄວາມຮຸນແຮງ. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງມີບັນດາເດັກຊາຍທີ່ເປັນຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງທາງ

ເພດ. ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ ສາມາດເກີດໂດຍແມ່ຍິງເປັນຜູ້ລ່ວງລະເມີດຜູ້ຊາຍ ແລະ ຍັງສາມາດມີການລ່ວງລະເມີດຈາກເພດດຽວກັນກໍ່ມີ.

ບົດລາຍງານສາກົນກ່ຽວກັບການໃຊ້ຄວາມຮຸນແຮງ ແລະ ສຸຂະພາບ (Heise& Garcia-Moreno, 2002; Jewkes, Sen& Garcia-Moreno, 2002, ອົງການອະນາໄມໂລກ 2010) ໄດ້ໃຫ້ນິຍາມກ່ຽວກັບ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ ແລະ ການໃຊ້ຄວາມຮຸນແຮງທາງເພດ ດັ່ງລຸ່ມນີ້:

- **ການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ:**

  *"ການປະພຶດໃນຄວາມສໍາພັນທີ່ໃກ້ຊິດທີ່ເປັນສາເຫດເຮັດໃຫ້ເກີດຄວາມເສຍຫາຍທາງດ້ານຮ່າງ ກາຍ, ທາງເພດ ແລະ ຈິດໃຈ, ລວມທັງການປະພຶດໃນຮູບແບບບັງຄັບທາງຮ່າງກາຍ, ການຂົ່ມຂູ່ທາງເພດ ການລ່ວງລະເມີດທາງຈິດໃຈ ແລະ ການຄວບຄຸມການປະພຶດຂອງຄົນອື່ນ".*

- **ການໃຊ້ຄວາມຮຸນແຮງທາງເພດ:**

  *"ທຸກໆ ການປະພຶດທາງເພດ, ການພະຍາຍາມມີກິດຈະກໍາທາງເພດສໍາພັນ, ການຮ່ວມເພດທີ່ບໍ່ມີຄວາມຕ້ອງການຈາກທັງສອງຝ່າຍ, ຫຼື ການຄ້າມະນຸດ, ຫຼື ການບັງຄັບຂົ່ມຂູ່ບຸກຄົນອື່ນເພື່ອໃຫ້ມີກິດຈະກໍາທາງເພດ, ໂດຍບຸກຄົນໃດໜຶ່ງໂດຍບໍ່ຈໍາແນກສາຍພົວພັນຕໍ່ຜູ້ເຄາະຮ້າຍ, ໃນທຸກໆ ສະຖານທີ່ ໂດຍບໍ່ຈໍາກັດພຽງແຕ່ ຢູ່ເຮືອນ ຫຼື ຢູ່ສະຖານທີ່ເຮັດວຽກ".*

ນິຍາມຂອງ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ (IPV) ລວມທັງການໃຊ້ຄວາມຮຸນແຮງໂດຍ ຄູ່ຮ່ວມຊີວິດໃນປັດຈຸບັນ ຫຼື ໃນອາດີດ, ດັ່ງທີ່ໄດ້ສະແດງໃນ ຮູບທີ 1.1 ນິຍາມຂອງ 'ການໃຊ້ຄວາມຮຸນແຮງທາງເພດ' ລວມທັງການຂົ່ມຂືນ (ນິຍາມໂດຍການບັງຄັບທາງດ້ານຮ່າງກາຍ ຫຼື ການພະຍາຍາມສອດໃສ່ອະໄວຍະວະເພດຊາຍເຂົ້າໄປໃນອະໄວຍະຂອງເພດຍິງ, ການຮ່ວມເພດທາປາກ ຫຼື ທາງຮູທະວານກັບອະໄວຍະວະເພດຊາຍ, ພາກສ່ວນອື່ນໆຂອງຮ່າງກາຍ ຫຼື ໃຊ້ອຸປະກອນອື່ນໆ), ເຊັ່ນດຽວກັນກັບປະສົບການ ໃນການຮ່ວມເພດທີ່ບໍ່ມີຄວາມຕ້ອງການ ຫຼື ບໍ່ຍິນຍອມ ເຊິ່ງກໍ່ລວມຢູ່ໃນນິຍາມຂອງ 'ການຂົ່ມຂືນ'.

### 1.2.2 ສາເຫດຂອງການໃຊ້ຄວາມຮຸນແຮງ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນການສະແດງອອກທາງຮີດຄອງປະເພນີຂອງຍິງ-ຊາຍ, ສາຍພົວພັນທີ່ບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ, ອໍານາດທີ່ບໍ່ມີຄວາມສົມດູນກັນຢູ່ໃນສັງຄົມ ແລະ ທັດສະນະຂອງຜູ້ຊາຍ ແລະ ເດັກຊາຍທີ່ເຫັນວ່າແມ່ຍິງຢູ່ໃນສະຖານະພາບທີ່ຕໍ່າກວ່າຕົນເອງ. ອໍານາດທີ່ບໍ່ມີຄວາມສົມດູນກັນນີ້ກໍ່ສົ່ງຜົນເຖິງການເອື່ອຍອີງທາງເສດຖະກິດ, ຄວາມບໍ່ໝັ້ນຄົງທາງດ້ານການເງິນ ແລະ ຄວາມຄາດຫວັງ ແລະ ບັນທັດຖານ (ກົດປະເພດນີ) ຕໍ່ເພດຍິງ-ຊາຍ ເຊິ່ງເກີດຂຶ້ນໂດຍ ອໍານາດຂອງເພດຊາຍ (Jewkes, 2002). ເຊິ່ງມັນກໍ່ໄດ້ຖ່າຍທອດມາ ກາຍເປັນຫຼາຍໆ ຮູບການຢູ່ໃນສັງຄົມໃນລະດັບມະຫາພາກ (ກົດປະເພນີສໍາລັບແມ່ຍິງ-ຊາຍ, ວັດທະນະທໍາໃນການໃຊ້ຄວາມຮຸນແຮງ, ການຕອບໂຕ້ຂອງລັດຖະບານ), ຊຸມຊົນ (ຂາດການຊ່ວຍເຫຼືອຈາກສັງຄົມ), ສາຍພົວພັນ (ຄວາມບໍ່ເທົ່າທຽມກັນ/ສິດສະເໝີພາບລະຫວ່າງຍິງ-ຊາຍ, ສາຍພົວພັນທາງອໍານາດ, ຄວາມເປັນສຸຊາຍ) ແລະ ລະດັບປັດໄຈສ່ຽງ ໃນສ່ວນບຸກຄົນ (ອາຍຸ, ປັດໄຈທາງດ້ານເສດຖະກິດ-ສັງຄົມ, ປະສົບການໃນການຖືກຄວາມຮຸນແຮງໃນໄວເດັກ, ທັດສະນະຄະຕິດັ້ງເດີມຕໍ່ຍິງ-ຊາຍ ແລະ ສະຖານະພາບທາງເພດແມ່ຍິງ) (Dahlberg & Krug, 2002, Contreras &Guzmn, 2001, Heise, ພ້ອມດ້ວຍຄະນະ. 1999). ຂອບເຂດວຽກນີ້ແມ່ນເປັນທີ່ຮູ້ຈັກໃນຊື່ 'ຮູບແບບທາງນິເວດວິທະຍາ' ທີ່ອະທິບາຍກ່ຽວກັບການປະຕິບັດຕໍ່ກັນຂອງບຸກຄົນ, ສະພາບການ ແລະ ປັດໄຈຂອງເສດຖະກິດ-ສັງຄົມ ເຮັດໃຫ້ໃຫ້ແມ່ຍິງ ແລະ ເດັກຍິງ ມີຄວາມສ່ຽງໃນການຖືກໃຊ້ຄວາມຮຸນແຮງເພີ່ມຂຶ້ນ (ແລະ ຜູ້ຊາຍກໍ່ມີທ່າອ່ຽງໃນການເປັນຜູ້ລ່ວງລະເມີດ) (Dahlberg & Krug, 2002, Heise, 1998, Belsky, 1980). ຮູບແບບທາງນິເວດວິທະຍາໄດ້ຖືກນໍາໃຊ້ຢ່າງແຜ່ຫຼາຍໃນການວິເຄາະສາເຫດ ແລະ ການພົວພັນກັນຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ເຊັ່ນວ່າ: ຄວາມສ່ຽງ ຫຼື ປັດໄຈການປົກປ້ອງ ແລະ ການພັດທະນາຂອງ ຍຸດທະສາດ/ແຜນງານສໍາລັບການປ້ອງກັນໂດຍມີຫຼາຍໜ່ວຍງານ ຫຼື ການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ (ຮູບທີ 1.2).

**ຮູບທີ 1.2 ຮູບແບບທາງນິເວດວິທະຍາເພື່ອຄວາມເຂົ້າໃຈ ການໃຊ້ຄວາມຮຸນແຮງ**




ແຫຼ່ງຂໍ້ມູນ: Heise ພ້ອມດ້ວຍຄະນະ. (1999)

ຮູບແບບທາງນິເວດວິທະຍານີ້ ໄດ້ສະແດງໃຫ້ເຫັນ ບັນດາປັດໄຈສ່ຽງ ອີງຕາມ 4 ລະດັບທີ່ມີອິດທິພົນທີ່ກໍ່ໃຫ້ເກີດ (ອົງການອະນາໄມໂລກ, 2010):

**ສ່ວນບຸກຄົນ:** ລວມມີບັນດາປັດໄຈທາງຊີວະວິທະຍາ ແລະ ປະຫວັດສ່ວນບຸກຄົນ ທີ່ອາດຈະເພີ່ມທ່າອ່ຽງໃນການທີ່ບຸກຄົນໃດໜຶ່ງຈະກາຍເປັນຜູ້ເຄາະຮ້າຍ ຫຼື ອາດຈະເປັນຜູ້ກະທຳຜິດໃນການໃຊ້ຄວາມຮຸນແຮງ.

**ສາຍພົວພັນ:** ລວມມີບັນດາປັດໄຈ ທີ່ເພີ່ມຄວາມສ່ຽງໃນການໃຊ້ຄວາມຮຸນແຮງ ທີ່ເປັນຜົນມາຈາກການມີຄວາມສຳພັນກັບໝູ່ເພື່ອນ, ຄູ່ຮ່ວມຊີວິດໃກ້ຊິດ ແລະ ສະມາຊິກໃນຄອບຄົວ. ບຸກຄົນເຫຼົ່ານີ້ ແມ່ນຄົນທີ່ມີຄວາມໃກ້ຊິດທີ່ສຸດໃນວົງຈອນຂອງສັງຄົມ ແລະ ສາມາດກຳນົດພຶດຕິກຳ ແລະ ລຳດັບຂອງປະສົບການຕ່າງໆ.

**ຊຸມຊົນ:** ອີງໃສ່ສະພາບຂອງຊຸມຊົນ ທີ່ມີການພົວພັນໃນສັງຄົມ (ເຊັ່ນ: ໂຮງຮຽນ, ສະຖານທີ່ເຮັດວຽກ ແລະ ເພື່ອນບ້ານ) ແລະ ຊອກຫາ ການກຳນົດຮູບແບບ ຂອງສະຖານທີ່ຕ່າງໆ ທີ່ມີການພົວພັນກັບບຸກຄົນທີ່ຈະກາຍເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທຳຜິດ ຂອງຄູ່ຮ່ວມຊີວິດໃກ້ຊິດ ແລະ ການໃຊ້ຄວາມຮຸນແຮງທາງເພດ.

**ສັງຄົມ:** ລວມມີປັດໄຈທີ່ກວ້າງກວ່າ, ປັດໄຈມະຫາພາກ ທີ່ມີອິດທິພົນເຖິງ ການໃຊ້ຄວາມຮຸນແຮງທາງເພດ ແລະ ການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ເຊັ່ນ: ຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ, ສາສະໜາ ຫຼື ລະບົບຄວາມເຊື່ອທາງວັດທະນະທຳ, ຮີດຄອງປະເພນີທາງສັງຄົມ ແລະ ນະໂຍບາຍເສດຖະກິດ ຫຼື ສັງຄົມ ທີ່ສ້າງ ຫຼື ເຮັດໃຫ້ຊ່ອງວ່າງຍັງຄົງຢູ່ ແລະ ຄວາມຕຶງຄຽດຈາກບຸກຄົນໃນແຕ່ລະກຸ່ມ.

### 1.2.3 ຜົນກະທົບຈາກການໃຊ້ຄວາມຮຸນແຮງ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ເຮັດໃຫ້ເກີດຜົນກະທົບ ທັງໃນທາງກົງ ແລະ ທາງອ້ອມຕໍ່ສຸຂະພາບ, ເສດຖະກິດ ແລະ ສັງຄົມ ຕໍ່ບຸກຄົນ, ຄອບຄົວ, ຊຸມຊົນ ແລະ ໃນລະດັບສັງຄົມດັ່ງກ່າວ. ໃນກໍລະນີທີ່ຮ້າຍແຮງ, ການໃຊ້ຄວາມຮຸນແຮງຍັງສົ່ງຜົນສະທ້ອນເຮັດໃຫ້ເກີດຄວາມພິການຢ່າງຮຸນແຮງ ຫຼື ເສຍຊີວິດ. ແຕ່ເຖິງວ່າຈະແມ່ນກໍລະນີທີ່ບໍ່ຮ້າຍແຮງກໍ່ຕາມ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ກໍ່ສົ່ງຜົນກະທົບຕໍ່ການໃຊ້ຊີວິດປະຈຳວັນຂອງແມ່ຍິງ ແລະ ເດັກຍິງ ເຊິ່ງໄດ້ເປັນຂໍ້ຈຳກັດບໍ່ໃຫ້ມີສຸຂະພາບແຂງແຮງ, ການຫາລ້ຽງຊີບ, ການເຂົ້າເຖິງການສຶກສາ ແລະ ການມີສ່ວນຮ່ວມໃນສັງຄົມ ແລະ ໃນຊີວິດການເມືອງ. ສຸດທ້າຍແລ້ວ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເຮັດໃຫ້ແມ່ຍິງຕົກຢູ່ໃນຄວາມທຸກຍາກ ແລະ ຖືກກີດກັ້ນໃນການພັດທະນາ. ໂດຍສະເພາະ, ຜົນກະທົບຕໍ່ສຸຂະພາບ ທີ່ເກີດຈາກການໃຊ້ຄວາມຮຸນແຮງ ແມ່ນມີຄວາມຮ້າຍແຮງ ເຊັ່ນ: ການບາດເຈັບ, ການຖືພາ/ການຫຼຸລູກໂດຍບໍ່ປາຖະໜາ, ການຕິດເຊື້ອເອດສ໌, ການມີບັນຫາທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ການເສຍຊີວິດເນື່ອງຈາກ ການຂ້າຕົວຕາຍ/ການຖືກບາດເຈັບ. ຕາຕະລາງທີ 1.2 ສະແດງເຖິງຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ເດັກ ແລະ ຄອບຄົວ ໃນດ້ານສຸຂະພາບ ແລະ ໃນຊີວິດປະຈຳວັນ.

**ຕາຕະລາງທີ 1.2 ຜົນກະທົບຈາກການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ຕໍ່ສຸຂະພາບ, ການສືບທອດຜ່ານຫຼາຍຮຸ່ນຄົນ ແລະ ເສດຖະກິດ-ສັງຄົມ**

| ຜົນກະທົບໂດຍລວມ | | ຜົນກະທົບສະເພາະ |
|---|---|---|
| ສຸຂະພາບຂອງແມ່ຍິງ | ເສຍຊີວິດ | • ການສັງຫານແມ່ຍິງ<br>• ຂ້າຕົວຕາຍ<br>• ເສຍຊີວິດໂດຍພະຍາດແຊກຊ້ອນຈາກເຊື້ອເອດສ໌<br>• ການເສຍຊີວິດຍ້ອນການເກີດລູກ |
| | ບໍ່ເສຍຊີວິດ | • ຜົນກະທົບຕໍ່ຮ່າງກາຍ:<br>➢ ການຫັກ/ການບາດເຈັບ (ຕັດ, ກັດ, ຊ້ຳ, ໄຄ່, ໄໝ້)<br>➢ ບັນຫາສຸຂະພາບທົ່ວໄປ, ມີຜົນກະທົບຕໍ່ການໃຊ້ຊີວິດປະຈຳວັນ ແລະ ຄວາມຊົງຈຳ<br>➢ ບັນຫາລຳໄສ້<br>• ຜົນກະທົບທາງເພດ / ສຸຂະພາບຈະເລີນພັນ:<br>➢ ພະຍາດພູມຄຸ້ມກັນເສື່ອມ ຫຼື ພະຍາດເອດສ໌<br>➢ ການຖືພາທີ່ບໍ່ປາຖະໜາ, ບັນຫາໃນການຖືພາ<br>➢ ການເກີດພະຍາດຍິງຕ່າງໆ<br>➢ ການຫຼຸລູກ/ເກີດກ່ອນກຳນົດ/ການເອົາລູກອອກທີ່ບໍ່ປອດໄພ<br>➢ ອະໄວຍະວະເພດຈີກຂາດ<br>• ຜົນກະທົບທາງຈິດໃຈ / ພຶດຕິກຳ:<br>➢ ເສົ້າ ແລະ ກັງວົນໃຈ<br>➢ ມີຄວາມຕຶງຄຽດ<br>➢ ບໍ່ເຂົ້າສັງຄົມ, ອາການທີ່ບໍ່ຢາກມີຕົວຕົນ<br>➢ ຂ້າຕົວຕາຍ, ມີແນວຄິດຢາກຂ້າຕົວຕາຍ |

| | | |
|---|---|---|
| | | ➢ ບໍ່ເຫັນຄຸນຄ່າຂອງຕົວເອງ<br>➢ ການໃຊ້ຢາເສບຕິດ ແລະ ສິ່ງມຶນເມົາ<br>➢ ສູບຢາ<br>➢ ກາຍເປັນຜູ້ກະທຳຜິດ ຫຼື ກາຍເປັນຜູ້ຖືກເຄາະຮ້າຍຂອງການໃຊ້ຄວາມຮຸນແຮງໃນອະນາຄົດ (ເດັກ/ໄວໜຸ່ມ)<br>➢ ອັດຕາການຕາຍຂອງເດັກເກີດໃໝ່ທີ່ເພີ່ມຂຶ້ນ |
| ຜົນກະທົບຕໍ່ເດັກ | | ➢ ບັນຫາທາງພຶດຕິກຳ<br>➢ ຄວາມກັງວົນ, ໂສກເສົ້າ ແລະ ພະຍາຍາມຂ້າຕົວຕາຍ<br>➢ ຮຽນໜັງສືບໍ່ໄດ້<br>➢ ຖືກໃຊ້ຄວາມຮຸນແຮງອີກໃນຕອນເປັນຜູ້ໃຫຍ່<br>➢ ການບາດເຈັບ ຫຼື ມີບັນຫາດ້ານສຸຂະພາບ<br>➢ ສູນເສຍການຈະເລີນພັນໃນໄວຜູ້ໃຫຍ່ |
| ຜົນກະທົບຕໍ່ຄອບຄົວ | | ➢ ບໍ່ສາມາດເຮັດວຽກໄດ້<br>➢ ສູນເສຍລາຍໄດ້ຄ່າຈ້າງ ແລະ ການຜະລິດ<br>➢ ບໍ່ມີເຮືອນຢູ່ທີ່ຖາວອນ |
| ຜົນກະທົບຕໍ່ເສດຖະກິດ-ສັງຄົມ | | ➢ ຄ່າໃຊ້ຈ່າຍໃນການບໍລິການ ທີ່ຜູ້ຖືກເຄາະຮ້າຍ ແລະ ຄອບຄົວຕ້ອງຈ່າຍ (ສຸຂະພາບ, ສັງຄົມ ແລະ ຂະບວນການຍຸຕິທຳ)<br>➢ ສູນເສຍກຳລັງແຮງງານ ແລະ ຄ່າໃຊ້ຈ່າຍຕໍ່ນາຍຈ້າງ<br>➢ ເກີດການໃຊ້ຄວາມຮຸນແຮງຕໍ່ໄປ |

ແຫຼ່ງຂໍ້ມູນ: ຖືກປັບປຸງໂດຍອີງໃສ່ 'The Irish Joint Consortium on GBV' (2012)

ອີງຕາມລະບົບການທົບທວນຄືນຂອງອົງການອະນາໄມໂລກ (WHO, 2013a), ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງແມ່ນມີທ່າອ່ຽງ ທີ່ຈະເກີດລູກທີ່ມີນ້ຳໜັກຕ່ຳກວ່າເກນມາດຕະຖານ ເຖິງ 16%. ແມ່ຍິງກຸ່ມນີ້ກໍ່ມີຄວາມສ່ຽງທີ່ຈະເອົາລູກອອກສູງກວ່າກຸ່ມອື່ນເຖິງສອງເທົ່າ, ໃນການທີ່ຈະປະເຊີນກັບສະພາວະໂສກເສົ້າເກືອບສອງເທົ່າ ແລະ ໃນບາງພາກ, ມີຄວາມສ່ຽງທີ່ຈະຕິດເຊື້ອ HIV ປະມານ 1.5 ເທົ່າ ທຽບກັບບັນດາແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ (Ibid.)

ໃນດ້ານເສດຖະກິດ-ສັງຄົມ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນພົວພັນເຖິງຜົນກະທົບຕ່າງໆ ເຊັ່ນ: ບໍ່ສາມາດເຮັດວຽກໄດ້, ສູນເສຍລາຍຮັບຈາກຄ່າຈ້າງ ແລະ ການຜະລິດ, ບໍ່ມີບ່ອນຢູ່ຖາວອນ, ເປັນເດັກຮຽນອ່ອນ, ເພີ່ມຄ່າໃຊ້ຈ່າຍໃຫ້ນາຍຈ້າງ ແລະ ຜູ້ຖືກເຄາະຮ້າຍ (ສຸຂະພາບ ແລະ ການບໍລິການທາງສັງຄົມ).

## 1.3 ຄວາມເປັນມາຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວ

### 1.3.1 ການສຶກສາຄົ້ນຄວ້າກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ/ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ໃນ ສປປ ລາວ

ເຖິງແມ່ນວ່າຈະບໍ່ມີການສຳຫຼວດລະດັບຊາດໃນຫົວຂໍ້ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວມາກ່ອນການສຳຫຼວດໃນຄັ້ງນີ້, ແຕ່ມີບາງການຄົ້ນຄວ້າໄດ້ພະຍາຍາມທີ່ຈະສະແດງໃຫ້ເຫັນສະຖານະການສະເພາະ, ອັດຕາສ່ວນ, ສາເຫດ ແລະ ຜົນກະທົບຂອງການໃຊ້ຄວາມຮຸນແຮງໃນຄອບຄົວໃນ ສປປ ລາວ.

ອີງຕາມການສຳຫຼວດດັດຊະນີໝາຍສັງຄົມລາວ (MICS/DHS, 2011-2012) (ກະຊວງສາທາລະນະສຸກແລະ ສູນສະຖິຕິແຫ່ງຊາດ, 2012), 58% ຂອງແມ່ຍິງ ແລະ 49% ຂອງຜູ້ຊາຍຮັບຮູ້ວ່າ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແມ່ນບໍ່ຜິດໃນສະຖານະການໃດໜຶ່ງ. ການສຳຫຼວດນີ້ໄດ້ສະແດງໃຫ້ເຫັນວ່າ ເຖິງວ່າໄວໜຸ່ມສ່ວນໃຫຍ່ຈະຮັບຮູ້ວ່າສິດສະເໝີພາບແມ່ນສິດທິມະນຸດ, ແຕ່ໄວໜຸ່ມ ຍິງ ແລະ ຊາຍ ອາຍຸ 15-18 ປີ ມີ 60% ລາຍງານໃຫ້ເຫັນເຖິງຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍໃນຂັ້ນຊຸມຊົນ. ກຸ່ມໄວໜຸ່ມຍັງໄດ້ເວົ້າວ່າ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຍັງເປັນເລື່ອງທີ່ບໍ່ຜິດໃນເມື່ອແມ່ຍິງບໍ່ເຮັດຕາມປົກກະຕິ ແລະ ຄວາມຮັບຜິດຊອບຂອງຕົນຕາມຮີດຄອງປະເພນີຂອງ ສປປ ລາວ, ຕົວຢ່າງວິທີການນຸ່ງຖືຂອງແມ່ຍິງ, ການແຕ່ງກິນໃຫ້ຜົວ, ການເບິ່ງແຍງລູກ ແລະ ການຍອມຮັບການມີເພດສຳພັນ. ຜູ້ຕອບແບບສອບຖາມທັງໝົດໄດ້ລາຍງານວ່າ ເຂົາເຈົ້າເຄີຍເຫັນ ຫຼື ເຄີຍຖືກບາງຮູບແບບຂອງການໃຊ້ຄວາມຮຸນແຮງໃນຊຸມຊົນ ແລະ 46% ລາຍງານວ່າເຂົາເຈົ້າເຄີຍຖືກຂົ່ມເຫັງ ຫຼື ຈັບບາຍ ໃນລັກສະນະທີ່ເຮັດໃຫ້ເຂົາເຈົ້າຮູ້ສຶກບໍ່ສະບາຍໃຈຢູ່ໃນໂຮງຮຽນ. ນອກຈາກນັ້ນ, ການສຳຫຼວດຍັງພົບວ່າ ບັນດາໄວໜຸ່ມສະແດງຄວາມຕ້ອງການທີ່ຈະສົນທະນາ ແລະ ແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.

ການສຶກສາຄົ້ນຄວ້າໃນປີ 2009 ໂດຍ ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ (GRID) ແລະ ສູນກາງສະຫະພັນແມ່ຍິງລາວ (GRID & LWU, 2009) ໄດ້ສຳຫຼວດໃນ ນະຄອນຫຼວງວຽງຈັນ, ຫຼວງພະບາງ, ໄຊຍະບູລີ, ສະຫວັນນະເຂດ ແລະ ແຂວງ ຊຽງຂວາງ ເຊິ່ງພົບວ່າມີອັດຕາການໃຊ້ຄວາມຮຸນແຮງໃນຄອບຄົວແມ່ນຢູ່ໃນລະດັບສູງໃນບັນດາຜູ້ເຂົ້າຮ່ວມການຄົ້ນຄວ້າ ຈຳນວນ 1,157 ຄົນ ທີ່ມີອາຍຸສະເລ່ຍ 34.5 ປີ.

ໂດຍສະເພາະ ການໃຊ້ຄວາມຮຸນແຮງທາງດ້ານຈິດໃຈແມ່ນມີອັດຕາສູງເຖິງ (46%) ແລະ ລວມທັງການດູຖູກຈາກສັງຄົມ ຫຼື ເຮັດໃຫ້ອັບອາຍ, ການຂົ່ມຂູ່ ຫຼື ການຂົ່ມເຫັງໂດຍກົງ. ໃນດ້ານການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ມີປະມານ 20% ຂອງແມ່ຍິງທີ່ເຄີຍຖືກລ່ວງລະເມີດ ຢ່າງໜ້ອຍໜຶ່ງຄັ້ງໃນຊ່ວງຊີວິດ, ເຊັ່ນ ການຖືກຕົບ, ເຕະ, ບິບຄໍ, ຕີ ຫຼື ການຊຸກ ແລະ 76% ແມ່ນຖືກບາດເຈັບທີ່ເປັນຜົນມາຈາກການຖືກຄວາມຮຸນແຮງທາງດ້ານຮ່າງກາຍ, ໃນຂະນະທີ່ມີ 36% ທີ່ຖືກທຳຮ້າຍຈົນເກີດບາດເຈັບຊໍ້າໆ. ແມ່ຍິງອີກ 10% ທີ່ເຄີຍຖືກຄວາມຮຸນແຮງທາງເພດ, ແຕ່ອັດຕາສ່ວນເຫຼົ່ານີ້ບໍ່ໄດ້ລວມການຖືກຂົ່ມຂືນໂດຍຄູ່ຮ່ວມຊີວິດ.

ໃນ 'ການສຳຫຼວດກ່ຽວກັບການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ບົດບາດຍິງ-ຊາຍ ໃນເຂດຊົນນະບົດຂອງ ສປປ ລາວ' ເຊິ່ງໄດ້ເຮັດການສຳຫຼວດໂດຍກຸ່ມພັດທະນາບົດບາດຍິງ-ຊາຍ (GDG) ໂດຍໄດ້ຮັບການສະໜັບສະໜູນຈາກສູນຄົ້ນຄວ້າການພັດທະນາສາກົນ (IDRC) ແລະ ກອງທຶນການາດາ ໃນປີ 2005, 7.1% ຂອງຜູ້ຕອບແບບສອບຖາມ 967 ຄົນ (ຍິງ 515 ຄົນ ແລະ ຊາຍ 452 ຄົນ) ອາຍຸ 15-50 ປີ, ໂດຍມີອາຍຸສະເລ່ຍ 33.9 ປີ, ໃນ 5 ແຂວງ (ບໍ່ແກ້ວ, ຫຼວງພະບາງ, ສາລະວັນ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ) ເຂົາເຈົ້າຮັບຮູ້ວ່າ ຜ່ານມາເຄີຍຕີຄູ່ຮ່ວມຊີວິດຂອງຕົນ ຖ້າວ່າເກີດການຜິດຖຽງກັນໃນການຕັດສິນໃຈ. ແມ່ຍິງສ່ວນໃຫຍ່ບໍ່ສາມາດໃຫ້ນິຍາມກ່ຽວກັບການໃຊ້ຄວາມຮຸນແຮງໄດ້ ເຊິ່ງອະທິບາຍໄດ້ພຽງແຕ່ເປັນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ. ເຖິງຢ່າງໃດກໍ່ຕາມ, 45% ຂອງແມ່ຍິງທີ່ຕອບແບບສອບຖາມເປີດເຜີຍວ່າ ຄູ່ຮ່ວມຊີວິດໄດ້ໃຊ້ຄວາມຮຸນແຮງໃນບາງຮູບແບບຕໍ່ພວກເຂົາ, ເຊິ່ງສະແດງໃຫ້ເຫັນວ່າມີອັດຕາສ່ວນຂອງການໃຊ້ຄວາມຮຸນແຮງໃນຄອບຄົວໃນພື້ນທີ່ຂອງການສຳຫຼວດ. ໃນບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ, 35% ແມ່ນມີຄວາມໂສກເສົ້າຕໍ່ການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ, ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ (17%), ແລະ ທາງເພດ (1.6%) ຈາກຄູ່ຮ່ວມຊີວິດ/ສາມີ. ນອກຈາກນັ້ນແລ້ວ, ແມ່ຍິງ 19 ຄົນໄດ້ລາຍງານວ່າເຂົາເຈົ້າຍັງສືບຕໍ່ຖືກຄວາມຮຸນແຮງໃນລະຫວ່າງຖືພາ. ປັດໄຈທີ່ພົວເຖິງການໃຊ້ຄວາມຮຸນແຮງລວມມີ ສິ່ງມຶນເມົາ (31%), ເງິນ (13%) ແລະ ບັນຫາທີ່ກ່ຽວກັບວຽກ (13%). ຜົນກະທົບສ່ວນໃຫຍ່ຂອງການໃຊ້ຄວາມຮຸນແຮງໃນຄອບຄົວ ແມ່ນການຖືກບາດເຈັບທາງດ້ານຮ່າງກາຍ ໂດຍມີແມ່ຍິງ25%ທີ່ເປີດເຜີຍເຖິງຄວາມເຈັບປວດຈາກການຖືກໃຊ້ຄວາມຮຸນແຮງທີ່ເຮັດໃຫ້ເກີດບາດເຈັບທາງຮ່າງກາຍ. ການສຳຫຼວດຍັງພົບວ່າຜູ້ຖືກເຄາະຮ້າຍຫຼາຍກວ່າເຄິ່ງໜຶ່ງໄດ້ໜີອອກຈາກເຮືອນເພື່ອຫຼີກໜີຈາກສະພາບການທີ່ຖືກລ່ວງລະເມີດ, ແຕ່ເກືອບທັງໝົດກໍ່ໄດ້ກັບຄືນມາ. ໃນບັນດາກໍລະນີ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ ເກືອບທັງໝົດ, ຜູ້ຖືກເຄາະຮ້າຍໄດ້ຂໍການຊ່ວຍເຫຼືອຈາກຄອບຄົວ ແລະ ອຳນາດການປົກຄອງບ້ານ, ເຊິ່ງສ່ວນຫຼາຍກໍ່ໄດ້ຮັບຄຳແນະນຳວ່າໃຫ້ສືບຕໍ່ອາໄສຢູ່ກັບສາມີ ແລະ ຮັບຜິດຊອບຄອບຄົວຕໍ່ໄປ.

### 1.3.2 ກອບວຽກທາງດ້ານນິຕິກຳ ແລະ ນະໂຍບາຍ

#### i. ລະບົບນິຕິກຳ

ໃນປັດຈຸບັນ, ສປປ ລາວ ມີກົດໝາຍ ສອງສະບັບທີ່ໄດ້ລະບຸ ການຫ້າມ ແລະ ການລົງໂທດຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ໄດ້ຖືກສ້າງຂຶ້ນຈາກມຸມມອງຂອງການກະທຳຜິດທາງອາຍາ, ການປົກປ້ອງແມ່ຍິງ ແລະ ປ້ອງກັນ ແລະ ການຕອບໂຕ້ການໃຊ້ຄວາມຮຸນແຮງ.

**(1) ກົດໝາຍອາຍາຂອງ ສປປ ລາວ**

ບັນດາເຫດການທົ່ວໄປຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ຈິດໃຈ ແລະ ທາງເພດ ແມ່ນໄດ້ຖືກກຳນົດໃນກົດໝາຍອາຍາ, ແຕ່ນິຍາມຂອງບັນດາຮູບແບບການໃຊ້ຄວາມຮຸນແຮງເຫຼົ່ານີ້ແມ່ນຍັງບໍ່ທັນຈະແຈ້ງເທື່ອ. ການລົງໂທດຕໍ່ການໃຊ້ຄວາມຮຸນແຮງລວມມີການຈຳຄຸກ ແລະ ການປັບໃໝ ຫຼື ການກ່າວຕັກເຕືອນ ໂດຍອີງຕາມຄວາມຮ້າຍແຮງຂອງການໃຊ້ຄວາມຮຸນແຮງ ເຊິ່ງໄດ້ລະບຸໃນມາດຕາທີ 90 (ການທຳຮ້າຍຮ່າງກາຍ), ມາດຕາທີ 95 (ການປ້ອຍດ່າ) ແລະ ມາດຕາທີ 128 (ການຂົ່ມຂືນກະທຳຊຳເລົາ).

**(2) ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ**

ໄດ້ຖືກປະກາດໃຊ້ໃນປີ 2004 ແລະ ກໍ່ເປັນກົດໝາຍສະບັບທຳອິດທີ່ມີຄວາມລະອຽດ ທີ່ຕອບໂຕ້ຕໍ່ບັນຫາການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການຄ້າມະນຸດ. ການລິເລີ່ມນີ້ ເປັນບາດກ້າວອັນສຳຄັນຕໍ່ການປົກປ້ອງແມ່ຍິງ ແລະ ເດັກ ຈາກການລ່ວງລະເມີດໃນຮູບແບບຕ່າງໆ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດກົດໝາຍມີຜົນສຳເລັດນັ້ນ, ສູນກາງສະຫະພັນແມ່ຍິງລາວ ໄດ້ລິເລີ່ມການສ້າງຕັ້ງສູນພັກເຊົາສຸກເສີນ, ການໃຫ້ຄຳປຶກສາ ແລະ ການຝຶກອົບຮົມວິຊາຊີບ ເພື່ອໃຫ້ມີຄວາມໝັ້ນຄົງ ແລະ ກຸ້ມຕົນເອງໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ລູກ. ບັນດາມາດຕາທີ່ກ່ຽວຂ້ອງກັບການໃຊ້ຄວາມຮຸນແຮງໃນຄອບຄົວ ໃນກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ມີ ມາດຕາທີ 37 (ການສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ), ມາດຕາທີ 30 (ຜົນກະທົບຕໍ່ຮ່າງກາຍ), ມາດຕາທີ 31 (ຜົນກະທົບຕໍ່ຈິດໃຈ), ມາດຕາທີ 33 (ສິດຂອງຜູ້ຖືກເຄາະຮ້າຍ), ມາດຕາທີ 50 (ມາດຕະການຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ), ມາດຕາທີ 35 (ການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ) ແລະ ມາດຕາທີ 36 (ການດຳເນີນຄະດີຂອງເຈົ້າໜ້າທີ່ຕຳຫຼວດ).

ການອອກກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ແມ່ນເຫດການອັນສຳຄັນຂອງການລົບລ້າງການໃຊ້ຄວາມຮຸນແຮງພາຍໃຕ້ການຄວບຄຸມຂອງຂະບວນການຍຸຕິທຳ, ອົງການແຄຣ໌ສາກົນປະຈຳ ສປປ ລາວ ໄດ້ຍົກຫຼາຍປະເດັນທີ່ມີຄວາມກັງວົນ ແລະ ບັນດາຂໍ້ຈຳກັດ ທີ່ເກີດຂຶ້ນຈາກການວິເຄາະຫຼາຍບັນຫາຕາມທຳມະຊາດຂອງການໃຊ້ຄວາມຮຸນແຮງ ເຊັ່ນດຽວກັນກັບລະບົບໃນການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ສະມາຊິກໃນຄອບຄົວຂອງເຂົາເຈົ້າ (CARE International, 2009).[9]

---

[9] ອົງການແຄຣ໌ສາກົນ (2009). 'ຄວາມເຂົ້າໃຈສິດທິທາງດ້ານກົດໝາຍຂອງແມ່ຍິງ, ການວິເຄາະສະພາບແວດລ້ອມທາງກົດໝາຍທີ່ເອື້ອອຳນວຍຕໍ່ການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ'. ອົງການແຄຣ໌ສາກົນປະຈຳ ສປປ ລາວ ຮ່ວມກັບສູນກາງສະຫະພັນແມ່ຍິງລາວ, ນະຄອນຫຼວງວຽງຈັນ ໂດຍການສະໜັບສະໜູນຈາກ AusAID.

ຂໍ້ທີໜຶ່ງ, ໃນຂະນະທີ່ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ໄດ້ກວມເຖິງການໃຊ້ຄວາມຮຸນແຮງໃນຄູ່ແຕ່ງງານ, ເຊິ່ງບໍ່ໄດ້ລວມເອົາຄູ່ຮ່ວມຊີວິດທີ່ບໍ່ໄດ້ແຕ່ງງານ ແລະ ຄວາມສຳພັນທີ່ບໍ່ແມ່ນຄູ່ຮ່ວມຊີວິດ. ຂໍ້ທີສອງ ແມ່ນບໍ່ມີການລະບຸເຖິງການຂົ່ມຂືນຄູ່ແຕ່ງງານ ໃນສະພາບການຂອງການໃຊ້ຄວາມຮຸນແຮງທາງເພດ. ຂໍ້ທີສາມ, ສປປ ລາວ ຍັງບໍ່ທັນມີມາດຕະການກ່ອນຂະບວນການຂອງສານ ເພື່ອຍຸຕິການໃຊ້ຄວາມຮຸນແຮງໂດຍທັນທີ, ມາດຕະການໃນການປົກປ້ອງຜູ້ເຄາະຮ້າຍ ຫຼື ການສົ່ງຕໍ່ຜູ້ເຄາະຮ້າຍໄປສູນພັກເຊົາສຸກເສີນ/ສະຖານທີ່ທີ່ປອດໄພຄືດັ່ງກໍລະນີຂອງບັນດາປະເທດອື່ນໆໃນອາຊຽນ. ການຊ່ວຍເຫຼືອທີ່ມີຢູ່ໃນປັດຈຸບັນແມ່ນມີພຽງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. ຂໍ້ທີສີ່, ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ຈັດແບ່ງໝວດຂອງການໃຊ້ຄວາມຮຸນແຮງ ໃນລະດັບ 'ຮ້າຍແຮງ' ແລະ 'ບໍ່ຮ້າຍແຮງ', ເຊິ່ງຖ້າເປັນກໍລະນີທີ່ບໍ່ຮ້າຍແຮງ ແມ່ນຈະຖືກແນະນຳໃຫ້ເຂົ້າສູ່ຂະບວນການໄກເກ່ຍຂອງໜ່ວຍໄກ້ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໂດຍແກ້ໄຂຜ່ານການໄກ່ເກ່ຍ (ມາດຕາທີ 35), ເຊິ່ງອາດຈະ 'ເປັນສາເຫດເຮັດໃຫ້ມີຫຼາຍຂັ້ນຕອນໃນສານ ຫຼື ຂະບວນການທາງອາຍາ ແລະ ອາດຈະຂ້າມຜ່ານການຍອມຮັບຂອງການໃຊ້ຄວາມຮຸນແຮງໃນຄອບຄົວ ເປັນໜຶ່ງໃນຄວາມຮຸນແຮງທາງດ້ານສິດທິມະນຸດ' (UNIFEM, ອິງການແຄຣ໌, 2009). ເຊັ່ນດຽວກັນກັບສົນທິສັນຍາວ່າດ້ວຍ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໄດ້ທົບທວນ ແລະ ຍົກໃຫ້ເຫັນວ່າການແຍກລະຫວ່າງຄວາມເສຍຫາຍຂັ້ນຮ້າຍແຮງ ແລະ ບໍ່ຮ້າຍແຮງໃນບັນດາການກະທຳຄວາມຮຸນແຮງອາດນຳໄປສູ່ການສ້າງຄວາມຊອບທຳຕໍ່ການໃຊ້ຄວາມຮຸນແຮງ ແລະ ຍັງສົ່ງເສີມໃຫ້ເກີດວັດທະນະທຳໃນການປິດງຽບ ແລະ ການຍົກເວັ້ນໂທດຕໍ່ຜູ້ກະທຳຜິດ. ທ້າຍສຸດນີ້, ກົດໝາຍວ່າດ້ວຍ ການພັດທະນາແລະ ປົກປ້ອງແມ່ຍິງ ໄດ້ຍົກໃຫ້ເຫັນເຖິງດ້ານສິດທິຂອງແມ່ຍິງ ເພື່ອຮຽກຮ້ອງ ແລະ ຂໍການຊ່ວຍເຫຼືອ ແລະ ການເຂົ້າເຖິງການຊ່ວຍເຫຼືອ, ແຕ່ກໍ່ຍັງບໍ່ທັນເປັນແບບສະເພາະເຈາະຈົງ ແລະ ສາມາດຮັບປະກັນໜ້າທີ່ໃນການເບິ່ງແຍງ ແລະການບັງຄັບໃຊ້ຢ່າງເປັນທາງການ ຫຼື ການອຳນວຍຄວາມສະດວກໃນການເຂົ້າເຖິງການບໍລິການຊ່ວຍເຫຼືອຕ່າງໆ.

**(3) ກົດໝາຍສະບັບໃໝ່ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ໂດຍຂັດກັບຄວາມເປັນມາເຫຼົ່ານີ້ ແລະ ບົນພື້ນຖານຂອງບັນດາຂໍ້ສະເໜີແນະຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ໄປຄຽງຄູ່ກັບແນວຄິດລິເລີ່ມໃນການສຶກສາຄົ້ນຄວ້າໃນຄັ້ງນີ້, ລັດຖະບານຂອງ ສປປ ລາວ ໄດ້ພັດທະນາແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປ ລາວ (2014-2020) (NPAVAW), ເຊິ່ງໄດ້ຮັບການຮັບຮອງໃນຕົ້ນປີ 2014. ແຜນປະຕິບັດງານດັ່ງກ່າວນີ້ແມ່ນປະກອບມີກິດຈະກຳ ແລະ ການປະຕິບັດສະເພາະເພື່ອການປ້ອງກັນ ແລະ ປົກປ້ອງ ແມ່ຍິງ ແລະ ເດັກຍິງ ຈາກການໃຊ້ຄວາມຮຸນແຮງ ໂດຍຜ່ານການເສີມຂະຫຍາຍຕາໜ່າງການບໍລິການທາງດ້ານສັງຄົມ ແລະ ສາທາລະນະສຸກທີ່ມີຄຸນນະພາບ, ລະບົບຕຳຫຼວດ ແລະ ຕຸລາການ, ຮ່ວມກັບການຝຶກອົບຮົມ ແລະ ການໂຄສະນາປູດຈິດສຳນຶກທີ່ກ່ຽວຂ້ອງ ເພື່ອບັນລຸສິດສະເໝີພາບຍິງ-ຊາຍ ແລະ ຄວາມເທົ່າທຽມກັນ. ນອກນັ້ນ, ກົດໝາຍສະບັບໃໝ່ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ກໍ່ໄດ້ຖືກສ້າງຂຶ້ນ ແລະ ຜ່ານສະພາແຫ່ງຊາດເພື່ອຮັບຮອງໃນເດືອນທັນວາ ປີ 2014, ໂດຍຄາດວ່າຈະອອກກົດໝາຍນີ້ໃນໄລຍະມໍ່ນີ້. ກົດໝາຍສະບັບນີ້ມີເປົ້າໝາຍໃນການຕອບໂຕ້ກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເຊັ່ນດຽວກັນກັບການສະໜອງການຊ່ວຍເຫຼືອແກ່ຜູ້ເຄາະຮ້າຍ ເພື່ອປົກປ້ອງສິດທິຂອງເຂົາເຈົ້າ ແລະ ສົ່ງເສີມສິດສະເໝີພາບຍິງ-ຊາຍ. ໂດຍລວມແລ້ວ, ເຫັນໄດ້ວ່າກົດໝາຍສະບັບນີ້ມີການພັດທະນາໄປອີກໜຶ່ງຂັ້ນ ເພາະວ່າໄດ້ມີການໃຫ້ນິຍາມຢ່າງຊັດເຈນ ແລະ ກໍ່ແມ່ນຄັ້ງທຳອິດທີ່ພາຍໃຕ້ກົດໝາຍໃໝ່ສະບັບນີ້ກຳນົດການຂົ່ມຂືນຄູ່ຮ່ວມຊີວິດຂອງຕົນແມ່ນ ມີຄວາມຜິດທາງອາຍາ, ການກະທຳທີ່ຖືກພິຈາລະນາວ່າແມ່ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມີດັ່ງລຸ່ມນີ້:

1. ການທາລຸນ, ການທໍລະມານ, ການທຸລຕີ, ການບັງຄັບ, ການຂົ່ມຂູ່, ການໂຍນເດັກຖິ້ມ, ການກະທຳທີ່ຫຍາບຊ້າ ຫຼື ການປະພຶດອື່ນ ໂດຍເຈດຕະນາທີ່ແຕະຕ້ອງຕໍ່ສຸຂະພາບ, ຊີວິດ ຫຼື ຈິດໃຈ;
2. ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການເຍາະເຍີ້ຍສຽດສີ, ການໝິ່ນປະໝາດ ຫຼື ການປະພຶດອື່ນ ໂດຍເຈດຕະນາ ທີ່ເຮັດໃຫ້ເສື່ອມເສັຍຊື່ສຽງ, ກຽດສັກສີ ຫຼື ຈິດໃຈ;
3. ການຈຳແນກ, ການເຮັດໃຫ້ໂດດດ່ຽວ, ການໄລ່ອອກຈາກທີ່ພັກອາໄສ ຫຼື ໃຫ້ອອກຈາກວຽກ ໂດຍບໍ່ຖືກຕ້ອງ ຫຼື ສ້າງຄວາມກົດດັນທາງດ້ານຈິດຕະສາດ;
4. ການບໍ່ໃຫ້ໂອກາດ, ການກີດກັ້ນການປະຕິບັດໜ້າທີ່, ການເຄື່ອນໄຫວວຽກງານທາງເສດຖະກິດ-ສັງຄົມ ຫຼື ກີດກັ້ນການປະຕິບັດສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ການທຳລາມົກ, ການກະທຳອະນາຈານ, ການເຜີຍແຜ່ສິ່ງລາມົກ, ການທຳມິດສະຈານ, ການບັງຄັບຮ່ວມເພດ, ການຮ່ວມເພດກັບເດັກ, ການຂົ່ມຂືນທຳຊຳເລົາ, ການບັງຄັບເປັນໂສເພນີ, ການຄ້າໂສເພນີ ຫຼື ການລ່ວງລະເມີດທາງເພດດ້ວຍຮູບການອື່ນ;
6. ການລັກພາຕົວ, ການບັງຄັບໃຫ້ແຕ່ງດອງ ຫຼື ຢ່າຮ້າງ, ການກີດກັ້ນການແຕ່ງດອງ ຫຼື ຢ່າຮ້າງ, ການແຕ່ງດອງແລ້ວນຳໄປຂາຍ;
7. ການບໍ່ປະຕິບັດພັນທະໃນການເບິ່ງແຍງລ້ຽງດູ ແລະ ສຶກສາອົບຮົມລູກ, ບໍ່ຊ່ວຍກັນທຳມາຫາກິນ ຫຼື ການບໍ່ເບິ່ງແຍງດູແລເດັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ການຄອບຄອງ, ຍ້າຍ, ໂອນ, ນຳໃຊ້, ແບ່ງປັນ, ຍຶດ, ຊຸກເຊື່ອງ ຫຼື ການທຳລາຍຊັບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
9. ການໃຊ້ແຮງງານເດັກ, ການບັງຄັບໃຫ້ອອກແຮງງານ ຫຼື ໃຫ້ປະກອບສ່ວນທາງດ້ານການເງິນ;
10. ການປະພຶດອື່ນທີ່ເປັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

### ii. ກົນໄກລະດັບຊາດ

**(1) ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (NCAW)**

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ໄດ້ຮັບການສ້າງຕັ້ງຂຶ້ນເພື່ອຕອບສະໜອງກອບວຽກຂອງສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ເຊິ່ງແມ່ນອົງການຈັດຕັ້ງຂອງລັດ ເພື່ອຊ່ວຍລັດຖະບານໃນການພັດທະນາແຜນຍຸດທະສາດ ແລະ ນະໂຍບາຍແຫ່ງຊາດເພື່ອ ເຊື່ອມສານວຽກງານບົດບາດຍິງ-ຊາຍເຂົ້າໃນທຸກຂະແໜງການ. ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການໂດຍດຳລັດນາຍົກລັດຖະມົນຕີ ເລກທີ 37 ໃນປີ 2003 ແລະ ມີຮອງນາຍົກລັດຖະມົນຕີເປັນປະທານ ແລະ ມີຮອງປະທານໂດຍແມ່ນປະທານສູນກາງສະຫະພັນແມ່ຍິງລາວ, ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ, ລັດຖະມົນຕີວ່າການກະຊວງສາທາລະນະສຸກ ແລະ ລັດຖະມົນຕີວ່າການກະຊວງສຶກສາ ແລະ ກິລາ. ຄະນະກຳມະການ ເພື່ອຄວາມກ້າວໜ້າຂອງແມ່ຍິງ ຂັ້ນກະຊວງ, ແຂວງ (Sub-CAW) ກໍ່ໄດ້ຮັບການສ້າງຕັ້ງຂຶ້ນໃນທົ່ວປະເທດໃນທຸກໆ ກະຊວງ ແລະ ອົງການຈັດຕັ້ງມະຫາຊົນຢູ່ໃນຂັ້ນແຂວງ ແລະ ນະຄອນຫຼວງ ເຊິ່ງໄດ້ສ້າງຕັ້ງເຄືອຄ່າຍປະສານງານຫຼັກທາງດ້ານບົດບາດຍິງ-ຊາຍໃນທົ່ວທຸກຂະແໜງການ.

ເປົ້າໝາຍຫຼັກຂອງ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ຄືດັ່ງທີ່ໄດ້ລະບຸໄດ້ໃນດຳລັດ, ແມ່ນ 'ເພື່ອຊຸກຍູ້, ສົ່ງເສີມ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງໃນທຸກຂົງເຂດວຽກງານ: ທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ຄອບຄົວຕາມທີ່ໄດ້ກຳນົດໄວ້ໃນແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ລັດຖະທຳມະນູນ ແລະ ກົດໝາຍ ເຊັ່ນດຽວກັນກັບບັນດາກົນໄກສາກົນທີ່ ສປປ ລາວ ຍຶດໝັ້ນ ເພື່ອຮັບປະກັນການຜັນຂະຫຍາຍບັນດານະໂຍບາຍດັ່ງກ່າວໃນທົ່ວປະເທດ. ໃນວິໄສທັດຂອງການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ'. ສະນັ້ນ, ໜ້າທີ່ຮັບຜິດຊອບຕົ້ນຕໍທີ່ສຸມໃສ່ບົດບາດຍິງ-ຊາຍ ລວມມີ: 1) ການກະກຽມແຜນຍຸດທະສາດ ແລະ ນະໂຍບາຍແຫ່ງຊາດ, 2) ການໂຄສະນາ, 3) ການເຊື່ອມສານວຽກງານບົດບາດຍິງຊາຍເຂົ້າໃນທຸກໆ ຂະແໜງການ, 4) ການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ, 5) ການຈັດພິມ ແລະ ແປບັນດາເອກະສານທີ່ກ່ຽວຂ້ອງ, 6) ການປະສານງານກັບບັນດາອົງການຈັດຕັ້ງສາກົນ, 7) ການມີສ່ວນຮ່ວມໃນກອງປະຊຸມລະດັບຊາດ ແລະ ສາກົນ, 8) ການກະກຽມບົດລາຍງານ CEDAW ແລະ 9) ການວາງແຜນງົບປະມານທີ່ພິຈາລະນາບັນຫາຍິງ-ຊາຍ.

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ໄດ້ສ້າງແຜນຍຸດທະສາດແຫ່ງຊາດເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ 5 ປີ ຄັ້ງທີ່ II (2011-2015) ເພື່ອຈັດຕັ້ງປະຕິບັດບັນດາຫຼັກການຂອງສົນທິສັນຍາວ່າດ້ວຍ ການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໃນລະດັບຊາດ ໂດຍຜ່ານ 4 ໂຄງການ ຄື: 1) ການພັດທະນາລະບົບຂໍ້ມູນຂ່າວສານ, ສະຖິຕິແຍກເພດ ແລະ ດຳເນີນການໂຄສະນາ,ການເຜີຍແຜ່ປູກຈິດສຳນຶກ ແລະ ສ້າງຂະບວນການເພື່ອສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ມອບສິດເປັນເຈົ້າ ໃຫ້ແມ່ຍິງມີສ່ວນຮ່ວມໃນທຸກດ້ານ, 2) ການສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງ ແລະ ບຸກຄະລາກອນທີ່ເຮັດວຽກ ສ່ວນບຸກຄົນ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, 3) ຮັບປະກັນສິດສະເໝີພາບຍິງ-ຊາຍ ແລະ ການມອບສິດເປັນເຈົ້າໃຫ້ແກ່ແມ່ຍິງ ມີສ່ວນຮ່ວມໃນທຸກດ້ານ, 4) ການປະຕິບັດພັນທະຂອງ ສປປ ລາວ ຕໍ່ສົນທິສັນຍາ ຊີດໍ ແລະ ສົນທິສັນຍາທີ່ກ່ຽວ. ບັນດາພັນທະເຫຼົ່ານີ້ລວມເຖິງການພັດທະນາ ແລະ ຈັດຕັ້ງປະຕິບັດການໂຄສະນາ ແລະ ກຳເນີນແຜນດຳເນີນງານແຫ່ງຊາດ ເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ພັດທະນາການເກັບກຳ ແລະ ວິເຄາະຂໍ້ມູນທີ່ແຍກປະເພດຂອງບັນດາບັນຫາເຫຼົ່ານີ້. ຄຽງຄູ່ກັບບັນດາເປົ້າໝາຍເຫຼົ່ານີ້, ແຜນດຳເນີນງານແຫ່ງຊາດກ່ຽວກັບການ ປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປ ລາວ (2014-2020) ໄດ້ຮັບການພັດທະນາ ແລະ ຮັບຮອງເອົາໂດຍລັດຖະບານໃນປີ 2014.

**(2) ສູນກາງສະຫະພັນແມ່ຍິງລາວ**

ສູນກາງສະຫະພັນແມ່ຍິງລາວ ໄດ້ຮັບມອບໝາຍໃຫ້ເປັນຕົວແທນໃຫ້ກັບແມ່ຍິງທຸກຄົນ, ປົກປ້ອງສິດທິ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງເຊັ່ນດຽວກັນກັບການຈັດຕັ້ງປະຕິບັດ ນະໂຍບາຍແຫ່ງຊາດ ແລະ ຄວາມກ້າວໜ້າຂອງແມ່ຍິງ. ໃນປີ 2006, ກອງປະຊຸມຄັ້ງທີ V ຂອງສູນກາງສະຫະພັນແມ່ຍິງລາວ ໄດ້ຮັບຮອງເອົາ 'ຄຳຂວັນ 3 ດີ' - ເຊິ່ງໝາຍຄວາມວ່າ 'ການເປັນພົນລະເມືອງທີ່ດີ, ມີການພັດທະນາດີ ແລະ ການສ້າງຄວາມຄືທີ່ດີມີຄວາມຜາສຸກ'.

ສູນກາງສະຫະພັນແມ່ຍິງລາວແມ່ນອົງການຈັດຕັ້ງມະຫາຊົນ ເຊິ່ງມີຕາໜ່າງການຈັດຕັ້ງ ແຕ່ຂັ້ນສູນກາງຈົນຮອດທ້ອງຖິ່ນ. ສູນກາງສະຫະພັນແມ່ຍິງລາວ ແມ່ນໄດ້ມີຕົວແທນຢູ່ໃນທຸກໆບ້ານ, ໂດຍມີສະມາຊິກສະຫະພັນແມ່ຍິງໜຶ່ງທ່ານເປັນຕົວແທນຢູ່ໃນອຳນາດການປົກຄອງໃນແຕ່ລະບ້ານ. ສູນກາງສະຫະພັນແມ່ຍິງລາວ ເຮັດໜ້າທີ່ຄືດັ່ງຂົວຕໍ່ລະຫວ່າງພັກປະຊາຊົນປະຕິວັດລາວ, ລັດຖະບານ ແລະ ແມ່ຍິງໃນຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ. ໂດຍຜ່ານເຄືອຄ່າຍທີ່ກວ້າງຂວາງ, ສູນກາງສະຫະພັນແມ່ຍິງລາວໄດ້ເສີມຂະຫຍາຍຄວາມຄິດເຫັນຂອງແມ່ຍິງເຂົ້າໃນການບໍລິຫານສາທາລະນະ.

### iii. ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW)

ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ໄດ້ຖືກຮັບຮອງໃນປີ 1979 ໂດຍສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ, ເຊິ່ງໄດ້ອະທິບາຍວ່າ ແມ່ນ ກົດໝາຍສາກົນຂອງແມ່ຍິງ'. ສປປ ລາວ ໄດ້ລົງນາມໃນສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໃນປີ 1980 ແລະ ໄດ້ໃຫ້ສັດຕະຍາບັນ ໃນປີ 1981, ສ້າງພັນທະໃຫ້ລັດຖະບານແຫ່ງ ສປປ ລາວ ໃນການປະຕິບັດງານ ເພື່ອການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ. ລັດຖະບານຍັງຖືກຮຽກຮ້ອງໃຫ້ມີການສົ່ງບົດລາຍງານແຫ່ງຊາດໃນທຸກໆ 4 ປີ ເພື່ອສະແດງໃຫ້ເຫັນເຖິງສະພາບການຂອງປະເທດໃນການປະຕິບັດຕາມຫຼັກການ ແລະ ລະບຽບການ ຂອງສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW).

ບົດລາຍງານສະບັບຫຼ້າສຸດ ໄດ້ລວມເອົາບົດລາຍງານປະຈຳໄລຍະທີ 6 ແລະ 7, ເຊິ່ງໄດ້ສົ່ງໃຫ້ກັບຄະນະກຳມາການຂອງ CEDAW ໃນປີ 2008. ໃນວາລະການທົບທວນຄັ້ງທີ 44 ຂອງ CEDAW ໃນປີ 2009, ຄະນະກຳມາການດັ່ງກ່າວໄດ້ໃຫ້ຂໍສະເໜີແນະ 60 ຂໍ້ໃນ ການຕອບສະໜອງຕໍ່ບົດລາຍງານຂອງ ສປປ ລາວ. ໃນພາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ການແນະນຳແມ່ນເລັ່ງໃສ່ຄວາມຮັບຜິດຊອບຂອງພາກລັດໃນການສຸມຄວາມພະຍາຍາມເພີ່ມຕື່ມໃສ່ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ. ການຮັບຮອງມາດຕະການທີ່ຈະແຈ້ງໃນການແກ້ໄຂທຸກຮູບການການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ກໍ່ໄດ້ລວມຢູ່ໃນບົດສະເໜີແນະ, ໂດຍສະເພາະໄດ້ລວມ "ມາດຕະການນີ້ ລວມເອົາການຮັບຮອງຂອງກົດໝາຍພິເສດກ່ຽວກັບການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ແລະ ການພັດທະນາ ແລະ ຈັດຕັ້ງປະຕິບັດຂອງແຜນດຳເນີນງານແຫ່ງຊາດທີ່ມີການເຊື່ອມສານກັນໃນຫຼາຍໆ ຂະແໜງການ ເພື່ອປ້ອງກັນ ແລະ ຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ລວມເຖິງຜ່ານການປົກປ້ອງທາງກົດໝາຍ, ມາດຕະການ ການປົກປ້ອງທີ່ມີປະສິດທິພາບ, ການເກັບກຳຂໍ້ມູນທີ່ເປັນລະບົບ ແລະ ການສ້າງຄວາມເຂັ້ມແຂງໃຫ້ກັບການບໍລິການຊ່ວຍເຫຼືອ ແລະ ການສ້າງຂີດຄວາມສາມາດຂອງຜູ້ໃຫ້ບໍລິການ, ໂດຍສະເພາະຜູ້ບັງຄັບໃຊ້ກົດໝາຍ ແລະ ຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ" (ຂໍ້ສະເໜີແນະ CEDAW ເລກທີ 24).

ເພື່ອຕອບສະໜອງຕໍ່ບັນດາສະເໜີແນະເຫຼົ່ານີ້, ຄືດັ່ງທີ່ໄດ້ກ່າວມາໃນເບື້ອງຕົ້ນຂອງບົດລາຍງານນີ້, ສປປ ລາວ ໄດ້ມີການພັດທະນາກົດໝາຍໃໝ່ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ແຜນດຳເນີນງານແຫ່ງຊາດກ່ຽວກັບການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປ ລາວ (2014-2020) ເພື່ອສະໜອງບັນດາມາດຕະການທີ່ເຂັ້ມແຂງ ເພື່ອຈັດຕັ້ງປະຕິບັດກົດໝາຍໃໝ່ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. ນອກຈາກນັ້ນ, ຍ້ອນວ່າຍັງຂາດການສຶກສາຄົ້ນຄວ້າທີ່ມີຫຼັກພື້ນຖານທາງປະຊາກອນຢູ່ໃນ ສປປ ລາວ, ຈຶ່ງເປັນສິ່ງຈຳເປັນອັນຮີບດ່ວນທີ່ ສປປ ລາວ ຄວນມີຖານຂໍ້ມູນ ແລະ ສະຖິຕິທີ່ໜ້າເຊື່ອຖືກ່ຽວກັບການໃຊ້ຄວາມຮຸນແຮງ. ດ້ວຍເຫດນີ້ ການສຳຫຼວດລະດັບຊາດ ຂອງ ສປປ ລາວ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ໃນປີ 2014 ຈຶ່ງດຳເນີນເພື່ອສະໜັບສະໜູນການສ້າງກົດໝາຍ, ນະໂຍບາຍ, ວຽກໂຄສະນາ/ການປູກຈິດສຳນຶກ ແລະ ການມີແຜນງານ ແລະ ໂຄງການຢ່າງພຽງພໍໃນການແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ/ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດໃນສັງຄົມລາວ.

2

# ຈຸດປະສົງ ແລະ ວິທີ ການສຳຫຼວດ

# ພາກທີ 2. ຈຸດປະສົງ ແລະ ວິທີການສຳຫຼວດ

## 2.1 ຈຸດປະສົງ ແລະ ໂຄງຮ່າງຂອງການສຳຫຼວດ

### 2.1.1 ອົງປະກອບ ແລະ ຈຸດປະສົງຂອງການສຳຫຼວດ

ການສຳຫຼວດລະດັບຊາດ ຂອງ ສປປ ລາວ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດ ຂອງແມ່ຍິງ ໃນປີ 2014 ນີ້ແມ່ນໄດ້ມີການດັດປັບມາຈາກການສຳຫຼວດ ແບບຫຼາຍປະເທດຂອງອົງການອະນາໄມໂລກ ກ່ຽວກັບສຸຂະພາບ ແລະ ການຕ້ານການໃຊ້ຄວາມຮຸນແຮງໃນຄອບຄົວຂອງແມ່ຍິງ (ເຊິ່ງຕໍ່ໄປນີ້ຈະເອີ້ນວ່າ 'ການສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ') ເຊິ່ງເປັນທີ່ຮູ້ຈັກກັນດີວ່າເປັນໜຶ່ງໃນມາດຕະຖານຂັ້ນສູງສຳລັບຂໍ້ມູນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ທີ່ມີຄວາມເຂັ້ມແຂງ ແລະ ສາມາດວັດແທກໄດ້ (Garcia-Moreno ພ້ອມດ້ວຍຄະນະ., 2005). ເພື່ອປະຕິບັດຕາມວິທີການສຳຫຼວດນີ້, ການສຳຫຼວດໃນ ສປປ ລາວ ປະກອບມີ 2 ການສຳຫຼວດຄື:

**ການສຳຫຼວດທາງດ້ານປະລິມານ:** ການສຳຫຼວດທາງດ້ານປະລິມານທີ່ມີໂຄງຮ່າງແບບສອບຖາມ ເພື່ອສະ ໜອງຂໍ້ມູນກ່ຽວກັບອັດຕາຂອງຫຼາຍຮູບແບບທີ່ແຕກຕ່າງກັນຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໂດຍຄູ່ຮ່ວມຊີວິດ ແລະ ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ເຊັ່ນດຽວກັນກັບຂໍ້ມູນທາງດ້ານຜົນກະທົບຕໍ່ສຸຂະພາບ, ສາເຫດ, ຄວາມຖີ່ ແລະ ປັດໄຈສ່ຽງຕ່າງໆ. ແບບສອບຖາມໄດ້ຖືກດຳເນີນການໂດຍການສຳພາດແບບວິທີໜ້າເຊິ່ງໜ້າກັບຜູ້ໃຫ້ສຳພາດ.

**ການສຳຫຼວດທາງດ້ານຄຸນນະພາບ:** ໃນດ້ານຄຸນນະພາບຂອງ ການສຳຫຼວດ ລວມມີການທົບທວນບັນດາເອກະສານຕ່າງໆ ຮ່ວມກັບການເລືອກສຳພາດ ແລະ ການສົນທະນາເປັນກຸ່ມ. ໃນຖານະທີ່ເປັນອົງປະກອບສືບຄົ້ນ ແລະ ບັນລະຍາຍ ຈຶ່ງສຸມໃສ່ຄຳຖາມປະເພດ 'ແນວໃດ' ແລະ 'ເປັນຫຍັງ', ເຊິ່ງເຮັດໃຫ້ສາມາດສະໜອງຂໍ້ມູນລະອຽດ ເຊິ່ງເປັນການເພີ່ມຄຸນຄ່າ ແລະ ປະກອບຂໍ້ມູນໃຫ້ແກ່ການເກັບກຳຂໍ້ມູນໃນການສຳຫຼວດ ທາງດ້ານປະລິມານມີຄວາມສົມບູນອີກດ້ວຍ.

ຈຸດປະສົງໂດຍລວມຂອງການສຳຫຼວດໃນຄັ້ງນີ້ ແມ່ນເພື່ອສ້າງບັນດາຫຼັກຖານທີ່ຈຳເປັນ ເພື່ອໃຊ້ເປັນເຄື່ອງມືໂຄສະນາໃນການເຜີຍແຜ່ຄວາມຮູ້, ຄຸ້ມຄອງ ແລະ ປ້ອງກັນການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ/ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ/ການໃຊ້ຄວາມຮຸນແຮງໃນຄອບຄົວ ແລະການອຳນວຍຄວາມສະດວກໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ອົງການທີ່ບໍ່ສັງກັດລັດຖະບານ ແລະ ຄູ່ຮ່ວມພັດທະນາອື່ນໆ ເພື່ອການວາງນະໂຍບາຍ ແລະ ແຜນງານກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຢ່າງພຽງພໍ. ໂດຍສະເພາະແມ່ນ, ຫຼັກຖານຕ່າງໆເຫຼົ່ານີ້ຈະຖືກນຳໃຊ້ເພື່ອສ້າງ ແລະ ປັບປຸງບັນດານະໂຍບາຍ ແລະ ແຜນງານທີ່ເໝາະສົມ ສຳລັບກຸ່ມເປົ້າໝາຍທີ່ແຕກຕ່າງກັນເຊັ່ນ: ກຸ່ມແມ່ຍິງ, ໄວໜຸ່ມ, ຜູ້ຊາຍ ແລະ ບັນດາຄູ່ແຕ່ງງານ:

1. ແຜນດຳເນີນງານແຫ່ງຊາດເພື່ອຕ້ານ ແລະ ປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.
2. ສ້າງນິຕິກຳກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ/ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ/ການໃຊ້ຄວາມຮຸນແຮງໃນຄອບຄົວ.
3. ເຮັດບົດລາຍງານສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ຄັ້ງທີ 8 ແລະ ຄັ້ງທີ່ 9 ໃນປີ 2014.
4. ໂຄສະນາປຸກລະດົມເພື່ອການຍຸຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

- **ຈຸດປະສົງສະເພາະ**

ຈຸດປະສົງຂອງການສຳຫຼວດ:

i. ຄາດຄະເນອັດຕາ, ຄວາມຖີ່, ປະເພດ ແລະ ບັນດາຮູບແບບທີ່ແຕກຕ່າງກັນຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ii. ເກັບກຳຂໍ້ມູນທີ່ມີການບັນຍາຍກ່ຽວກັບປະເພດ ແລະ ລາຍລະອຽດທີ່ແຕກຕ່າງກັນຂອງການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ, ລວມທັງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວ ໃນພື້ນທີ່ ທີ່ຖືກເລືອກເຮັດການສຳຫຼວດ.

iii. ສຶກສາບັນດາປັດໄຈທີ່ເຮັດໃຫ້ແມ່ຍິງມີຄວາມດ້ອຍໂອກາດຫຼາຍຂຶ້ນ ຫຼື ປົກປ້ອງເຂົາເຈົ້າຈາກການໃຊ້ຄວາມຮຸນແຮງ (ຕົວຢ່າງ: ຮີດຄອງປະເພນີທາງດ້ານບົດບາດຍິງ-ຊາຍ, ຄວາມບໍ່ເທົ່າທຽມກັນທາງດ້ານອຳນາດ, ໂອກາດທາງດ້ານເສດຖະກິດ ແລະ ປະສົບການໃນໄວເດັກ).

iv. ກຳນົດຍຸດທະສາດການຫຼຸດຜ່ອນ ແລະ ການຮັບມືຂອງແມ່ຍິງທີ່ໄດ້ຮັບຜົນກະທົບຈາກການໃຊ້ຄວາມຮຸນແຮງ, ລວມທັງການ ການຂະຫຍາຍໄປສູ່ບັນດາບຸກຄົນທີ່ແມ່ຍິງໄດ້ເປີດເຜີຍເຫດການຂອງການໃຊ້ຄວາມຮຸນແຮງ ເຊັ່ນດຽວກັນກັບການເຂົ້າເຖິງ ແລະ ການນຳໃຊ້ບັນດາການບໍລິການຊ່ວຍເຫຼືອຕ່າງໆ.

v. ບັນທຶກຜົນຂອງການໃຊ້ຄວາມຮຸນແຮງຕໍ່ສຸຂະພາບ, ການເຮັດວຽກ, ຄອບຄົວ ແລະ ສາຍພົວພັນຂອງແມ່ຍິງ.

**ຈຸດປະສົງທາງອ້ອມມີຄື:**

- ເພີ່ມທະວີຂີດຄວາມສາມາດລະດັບປະເທດ ແລະ ການຮ່ວມມືກັນໃນບັນດາພາກສ່ວນຕ່າງໆ ທີ່ເຮັດວຽກກ່ຽວຂ້ອງທາງດ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ລວມມີ ຄວາມສາມາດໃນການເກັບກຳ, ວິເຄາະ ແລະ ນຳໃຊ້ບັນດາຂໍ້ມູນທີ່ກ່ຽວຂ້ອງກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ
- ເພີ່ມທະວີຄວາມຮັບຮູ້ ແລະ ຄວາມລະອຽດອ່ອນຕໍ່ການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ/ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນບັນດາຜູ້ວາງນະໂຍບາຍ ແລະ ຜູ້ໃຫ້ການຊ່ວຍເຫຼືອ.

### 2.1.2 ໂຄງຮ່າງການຄຸ້ມຄອງບົດສຳຫຼວດ

ບົດສະເໜີຂໍດຳເນີນການສຳຫຼວດລະດັບຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ໃນປີ 2014 ແມ່ນໄດ້ຖືກອະນຸມັດ ໂດຍກະຊວງແຜນການ ແລະ ການລົງທຶນ ໃນເດືອນສິງຫາ ປີ 2012. ການສຳຫຼວດແມ່ນໄດ້ຮັບການຈັດຕັ້ງປະຕິບັດໂດຍສູນສະຖິຕິແຫ່ງຊາດ ຮ່ວມກັບ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ. ພາລະບົດບາດຕົ້ນຕໍຂອງທັງສອງຂະແໜງການນີ້ແມ່ນຊີ້ນຳ ແລະ ປະສານງານ, ລວມທັງການຈັດກອງປະຊຸມປຶກສາຫາລືຮ່ວມກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອສະແດງຄວາມຄິດເຫັນ ແລະ ຄຳແນະນຳ, ກຳນົດຄວາມຕ້ອງການ, ຈຸດປະສົງ ແລະ ຄວາມຄາດຫວັງ ຂອງການສຳຫຼວດ ແລະ ການລະດົມທຶນ.

ຄະນະກຳມະການຊີ້ນຳລະດັບຊາດໄດ້ຖືກສ້າງຕັ້ງຂຶ້ນ ເພື່ອສະໜອງທິດຊີ້ນຳ ແລະ ນຳພາໂດຍລວມ ແລະ ມີບັນດາສະມາຊິກຈາກ ສູນສະຖິຕິແຫ່ງຊາດ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ, ສູນກາງສະຫະພັນແມ່ຍິງລາວ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງຍຸຕິທຳ. ກຸ່ມວິຊາການປະກອບດ້ວຍສະມາຊິກຂອງສູນສະຖິຕິແຫ່ງຊາດ, ສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ເຊິ່ງໄດ້ມີບົດບາດທີ່ສຳຄັນເປັນຢ່າງຍິ່ງໃນການຂັບເຄື່ອນການສຳຫຼວດນີ້, ໂດຍສະເພາະແມ່ນການວາງແຜນ, ສະຫຼຸບ ແລະ ການທົດສອບແບບສອບຖາມ, ການຈັດຕັ້ງປະຕິບັດວຽກພາກສະໜາມ, ການບໍລິຫານຂໍ້ມູນ, ການຈັດຝຶກອົບຮົມ ແລະ ການວິເຄາະຂໍ້ມູນ.

ການສຳຫຼວດດ້ານຄຸນນະພາບແມ່ນໄດ້ຮັບການຈັດຕັ້ງປະຕິບັດໂດຍສະຖາບັນເບີເນັດ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລຂອງປະເທດອົດສະຕາລີ ໂດຍມີຫ້ອງການປະຈຳຢູ່ນະຄອນຫຼວງວຽງຈັນ ເພື່ອເຮັດການສຳຫຼວດທາງດ້ານສຸຂະພາບ ແລະ ການສຶກສາ, ໂດຍການຊີ້ນຳ-ນຳພາໂດຍກຸ່ມວິຊາການທີ່ນຳພາໂດຍຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ. ບັນດາກອງປະຊຸມ ແລະ ການປຶກສາຫາລື ໄດ້ຮັບການສ້າງຕັ້ງຂຶ້ນເພື່ອສົນທະນາກ່ຽວກັບວິທີການສຳຫຼວດ, ການຄັດເລືອກກຸ່ມເປົ້າໝາຍ ແລະ ຂະໜາດຂອງການສຳຫຼວດ, ການສະຫຼຸບຄຳຖາມຊີ້ນຳ ເຊັ່ນດຽວກັນກັບວຽກບໍລິຫານໃນການເຮັດວຽກພາກສະໜາມ, ການເກັບກຳຂໍ້ມູນ, ວິເຄາະ, ຂຽນບົດລາຍງານ ແລະ ການນຳສະເໜີຂອງຜົນການຄົ້ນຄວ້າເບື້ອງຕົ້ນ.

ພາລະບົດບາດຂອງອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA), ອົງການສະຫະປະຊາຊາດ ເພື່ອແມ່ຍິງ (UN Women) ແລະ ອົງການອະນາໄມໂລກ(WHO) ແມ່ນການສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານ, ລວມທັງໃຫ້ຄຳປຶກສາເພື່ອຮັບປະກັນໃຫ້ບົດສຳຫຼວດມີຄຸນນະພາບສູງ.

## 2.2 ການສຳຫຼວດທາງດ້ານປະລິມານ

### 2.2.1 ການອອກແບບ ແລະ ມາດຖານຂອງຜູ້ເຂົ້າຮ່ວມ

ການສຳຫຼວດທາງດ້ານປະລິມານແມ່ນນຳໃຊ້ວິທີການສຳຫຼວດທີ່ດັດປັບມາຈາກການສຳຫຼວດຮ່ວມກັນໃນຫຼາຍປະເທດ ຂອງອົງການອະນາໄມໂລກ. ເຖິງແມ່ນວ່າການສຳຫຼວດຮ່ວມກັນໃນຫຼາຍປະເທດຂອງອົງການອະນາໄມໂລກຈະນຳໃຊ້ກຸ່ມຕົວຢ່າງຈຳນວນໜ້ອຍ (ຜູ້ຕອບແບບສອບຖາມປະມານ 1,500 ຄົນ) ໃນໜຶ່ງ ຫຼື ສອງຂັ້ນ (ຂັ້ນເມືອງ ຫຼື ຂັ້ນພາກ/ປະເທດ), ການສຳຫຼວດໃນ ສປປ ລາວ ແມ່ນການສຳຫຼວດລະດັບຊາດທີ່ມີກຸ່ມຕົວຢ່າງຫຼາຍກວ່າ.

ຂະໜາດຂອງກຸ່ມຕົວຢ່າງຂອງການສຳຫຼວດໃນຄັ້ງນີ້ ໄດ້ຖືກອອກແບບມາເພື່ອເປັນຕົວແທນໃນຂອບເຂດທົ່ວປະເທດ, ເຊິ່ງລວມມີເຂດຕົວເມືອງ ແລະ ຊົນນະບົດ ເຊັ່ນດຽວກັນກັບໃນລະດັບພາກ (ພາກເໜືອ, ກາງ ແລະ ໃຕ້). ຍຸດທະສາດການຈັດກຸ່ມຕົວຢ່າງແບບຫຼາຍຂັ້ນ ເພື່ອການສຳຫຼວດຄົວເຮືອນໃນທົ່ວປະເທດ ແມ່ນໄດ້ຖືກນຳໃຊ້.

ຂະໜາດຂອງກຸ່ມຕົວຢ່າງແມ່ນ 3,000 ຄົວເຮືອນ (ຕາລາງທີ 2.1), ໂດຍມີອັດຕາສ່ວນຂອງຜູ້ທີ່ບໍ່ຕອບແບບສອບຖາມແມ່ນ 10%. ກຸ່ມຕົວຢ່າງຂອງກຸ່ມບ້ານ ແລະ ຄົວເຮືອນ ແມ່ນໄດ້ຖືກຈັດແບ່ງໂດຍສູດຄິດໄລ່ມາດຕະຖານ. ອີງຕາມຄຳແນະນຳທາງດ້ານຈັນຍາທຳ ແລະ ຄວາມປອດໄພ ໂດຍອົງການອະນາໄມໂລກ ເພື່ອການເຮັດການສຳຫຼວດໃນຄັ້ງນີ້, ແມ່ນຍິງໃນເກນອາຍຸຈະຖືກຄັດເລືອກພຽງໜຶ່ງຄົນຕໍ່ໜຶ່ງຄອບຄົວ. ມາດຖານການຄັດເລືອກແມ່ຍິງທີ່ຢູ່ໃນເກນແມ່ນອີງຕາມສະພາບການຂອງ ສປປ ລາວ ຄືແມ່ຍິງທີ່ມີອາຍຸ 15-64 ປີ (ທີ່ມີ/ບໍ່ມີຄູ່ຮ່ວມຊີວິດ), ທີ່ອາໄສຢູ່ໃນຄົວເຮືອນນັ້ນເປັນປົກກະຕິ, ແຂກຢັ້ງມຢາມທີ່ອາໄສຢູ່ຢ່າງໜ້ອຍ 4 ອາທິດ ຫຼື ຜູ້ໃຊ້ແຮງງານທີ່ອາໄສຢູ່ໃນເຮືອນຫຼັງນັ້ນຢ່າງໜ້ອຍ 5 ມື້ ຕໍ່ 1 ອາທິດ. ຜູ້ຕອບແບບສອບຖາມໄດ້ຖືກຄັດເລືອກ ຈາກບັນດາແມ່ຍິງທີ່ຢູ່ໃນມາດຖານທັງໝົດທີ່ຢູ່ໃນຄົວເຮືອນໜຶ່ງໆ ເຊິ່ງສ່ວນໃຫຍ່ແມ່ນຈະເລືອກເປັນບຸກຄົນຫຼາຍກວ່າການສຸ່ມຕົວເລກ.

**ເຫດຜົນທີ່ເລືອກກຸ່ມເປົ້າໝາຍໃນເກນອາຍຸ 15-64 ປີ:**

(1) ແມ່ຍິງຮຸ່ນໃຫຍ່, ເຊິ່ງອາດມີຄວາມເປັນໄປໄດ້ໃນການເກີດຄວາມເອນອຽງໄປທາງໃດໜຶ່ງ, ເຊິ່ງອາດຈະເປັນຍ້ອນການມີຄູ່ຮ່ວມຊີວິດມາເປັນເວລາດົນ ແລະ ກໍ່ມີປະສົບການຊີວິດຄອບຄົວ.

(2) ຫຼັກຖານໃນການສຳຫຼວດລະດັບສາກົນທີ່ຜ່ານມາໄດ້ສະແດງໃຫ້ເຫັນວ່າ ບັນດາແມ່ຍິງກຸ່ມນີ້ ຈະເກີດຄວາມໂສກເສົ້າຈາກການຖືກລ່ວງລະເມີດສະເພາະດ້ານ.

(3) ຕົວຊີ້ວັດຂອງອົງການສະຫະປະຊາຊາດແມ່ນວັດແທກແມ່ຍິງທຸກໆຄົນ ທີ່ມີອາຍຸຫຼາຍ 15 ປີຂຶ້ນໄປ.

(4) ການສຳຫຼວດຄົ້ນຄວ້າທີ່ຄ້າຍຄືກັນຈາກປະເທດອື່ນໆໃນໄລຍະທີ່ຜ່ານມາ (ຕົວຢ່າງ: ປະເທດ ນິວຊີແລນ, ຕວກກີ ແລະ ຫວຽດນາມ) ແມ່ນນຳໃຊ້ວິທີການສຳຫຼວດທີ່ດັດປັບມາຈາກການສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ ເຊິ່ງລວມມີແມ່ຍິງທີ່ມີອາຍຸຫຼາຍກວ່າ 50 ປີ.

**ຕາລາງທີ 2.1 ກຸ່ມຕົວຢ່າງ ໂດຍແບ່ງຕາມຕົວເມືອງ/ຊົນນະບົດ, ແລະ ໃນພາກ**

| ກຸ່ມ | ກຸ່ມ | ບ້ານກຸ່ມຕົວຢ່າງ | | | | ຄົວເຮືອນ/ແມ່ຍິງ ກຸ່ມຕົວຢ່າງ | | | |
|---|---|---|---|---|---|---|---|---|---|
| | | ລວມ | ຕົວເມືອງ | ຊົນນະບົດ ມີເສັ້ນທາງ | ຊົນນະບົດ ບໍ່ມີເສັ້ນທາງ | ລວມ | ຕົວເມືອງ | ຊົນນະບົດ ມີເສັ້ນທາງ | ຊົນນະບົດ ບໍ່ມີເສັ້ນທາງ |
| | ສປປ ລາວ | 300 | 87 | 183 | 30 | 3,000 | 870 | 1,830 | 300 |
| | ນະຄອນຫຼວງວຽງຈັນ | 37 | 25 | 12 | 0 | 370 | 250 | 120 | 0 |
| 1 | ຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ | 26 | 5 | 17 | 4 | 260 | 50 | 170 | 40 |
| 2 | ອຸດົມໄຊ, ຫຼວງພະບາງ | 35 | 8 | 19 | 8 | 350 | 80 | 190 | 80 |
| 3 | ແຂວງວຽງຈັນ, ຊຽງຂວາງ, ຫົວພັນ | 29 | 7 | 20 | 2 | 290 | 70 | 200 | 20 |
| 4 | ແຂວງວຽງຈັນ, ໄຊຍະບູລີ | 41 | 10 | 29 | 2 | 410 | 100 | 290 | 20 |
| 5 | ແຂວງວຽງຈັນ,ບໍລິຄຳໄຊ, ຄຳມ່ວນ | 33 | 9 | 21 | 3 | 330 | 90 | 210 | 30 |
| 6 | ສະຫວັນນະເຂດ | 33 | 9 | 21 | 3 | 330 | 90 | 210 | 30 |
| 7 | ສະຫວັນນະເຂດ, ສາລະວັນ, ຈຳປາສັກ | 33 | 7 | 22 | 4 | 330 | 70 | 220 | 40 |
| 8 | ຈຳປາສັກ, ສາລະວັນ, ເຊກອງ, ອັດຕະປື | 33 | 7 | 22 | 4 | 330 | 70 | 220 | 40 |

### 2.2.2 ແບບສອບຖາມ

ແບບສອບຖາມປະກອບດ້ວຍ (ເອກະສານຊ້ອນທ້າຍ II):

1. ແບບຟອມຂື້ນບັນຊີຄົວເຮືອນ ແລະ ຕິດຕາມ ກວດກາຄວາມກ້າວໜ້າໃນການເກັບກຳຂໍ້ມູນ
2. ແບບຟອມຄັດເລືອກຄົວເຮືອນ ເພື່ອຈຳແນກ ແລະ ຄັດເລືອກແມ່ຍິງທີ່ຢູ່ໃນເກນ
3. ແບບສອບຖາມຄົວເຮືອນ ເພື່ອການເກັບກຳຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ຂອງຄົວເຮືອນ
4. ແບບສອບຖາມຢ່າງລະອຽດສຳລັບແມ່ຍິງ.

#### ກ) ໂຄງຮ່າງແບບສອບຖາມຂອງແມ່ຍິງ

ແບບສອບຖາມຂອງ ການສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ (Ver. 11.3, ປີ 2013) ເຊິ່ງໄດ້ຖືກດັດປັບສຳລັບ ສປປ ລາວ (ກັບທີ 2.1). ແບບສອບຖາມໄດ້ຖືກແປເປັນພາສາລາວຢ່າງລະມັດລະວັງ ເຊິ່ງໄດ້ໃຊ້ຄຳສັບທີ່ມີຄວາມປອດໄພ ແລະ ໄດ້ຮັບຄຳແນະນຳຈາກຄະນະຊີ້ນຳ ແລະ ວິຊາການ, ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ, ບັນດາຊ່ຽວຊານ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນບັນຫາບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ເຊັ່ນ ບັນດາອົງການຂອງສະຫະປະຊາຊາດ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ເພື່ອສະທ້ອນໃຫ້ເຫັນສະພາບການຂອງ ສປປ ລາວ (ເບິ່ງເອກະສານຊ້ອນທ້າຍທີ II).

**ກັບທີ 2.1. ໂຄງສ້າງຂອງແບບສອບຖາມຂອງແມ່ຍິງ**

ພາກທີ 1: ຜູ້ຕອບແບບສອບຖາມ ແລະ ຊຸມຊົນ.
ພາກທີ 2: ສຸຂະພາບໂດຍລວມ.
ພາກທີ 3: ສຸຂະພາບໄວຈະເລີນພັນ.
ພາກທີ 4: ເດັກນ້ອຍ.
ພາກທີ 5: ຜົວ/ຄູ່ຮ່ວມຊີວິດ ຄົນປັດຈຸບັນ ຫຼື ຄົນສຸດທ້າຍ.
ພາກທີ 6: ທັດສະນະຄະຕິ.
ພາກທີ 7: ຜູ້ຕອບແບບສອບຖາມ ແລະ ສາມີ/ຄູ່ຮ່ວມຊີວິດ.
ພາກທີ 8: ການບາດເຈັບ.
ພາກທີ 9: ຜົນກະທົບ ແລະ ທັກສະໃນການແກ້ໄຂບັນຫາ.
ພາກທີ 10: ປະສົບການອື່ນໆ.
ພາກທີ 11: ການປົກຄອງຕົນເອງໃນດ້ານເສດຖະກິດ.
ພາກທີ 12: ສຳເລັດການສຳພາດ: ຄຳຄິດເຫັນຂອງຜູ້ຕອບແບບສອບຖາມ, ການລາຍງານໂດຍບໍ່ລະບຸແຫຼ່ງຂໍ້ມູນກ່ຽວກັບການຖືກລ່ວງລະເມີດທາງເພດໃນໄວເດັກ, ຄຳຕຳນິຕິຊົມຈາກຜູ້ຕອບແບບສອບຖາມ.

#### ຂ) ນິຍາມໃນການປະຕິບັດງານທີ່ໃຊ້ໃນການສຳຫຼວດ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ

ກັບທີ 2.2 ສະແດງເຖິງ ນິຍາມໃນການປະຕິບັດງານຂອງຫຼາຍຮູບແບບຂອງການໃຊ້ຄວາມຮຸນແຮງ ອີງຕາມການສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ. ການສັບ "ການໃຊ້ຄວາມຮຸນແຮງ" ຫຼື"ການຂົ່ມຂືນ" ແມ່ນບໍ່ໄດ້ຖືກນຳໃຊ້ເຂົ້າໃນການສຳພາດໃດເລີຍ. ແຕ່ຈະນຳໃຊ້ຄຳຖາມກ່ຽວກັບພຶດຕິກຳແບບສະເພາະເຈາະຈົງ. ໃນເວລາທີ່ແມ່ຍິງຢືນຢັນວ່າເຂົາເຈົ້າເຄີຍປະເຊີນກັບການກະທຳເຫຼົ່ານີ້ຢ່າງໜ້ອຍໜຶ່ງການກະທຳ, ຜູ້ຍິງຄົນນັ້ນຈະຖືກພິຈາລະນາວ່າ ເຄີຍປະເຊີນກັບບາງຮູບແບບຂອງການໃຊ້ຄວາມຮຸນແຮງ.

**ກັບທີ 2.2. ນິຍາມໃນການປະຕິບັດງານທີ່ໃຊ້ໃນການສຳຫຼວດ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ**

<u>ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໂດຍຄູ່ຮ່ວມຊີວິດທີ່ໃກ້ຊິດ</u>

- ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໂດຍຄູ່ຮ່ວມຊີວິດທີ່ໃກ້ຊິດ.
- ຖືກຕົບ ຫຼື ຖືກໂຍນວັດຖຸບາງຢ່າງໃສ່ທີ່ເຮັດໃຫ້ເກີດຄວາມເຈັບປວດ.
- ຖືກຍູ້ ຫຼື ຊຸກ.
- ຖືກທຸບດ້ວຍກຳປັ້ນ ຫຼື ສິ່ງອື່ນໆທີ່ເຮັດໃຫ້ເກີດຄວາມເຈັບປວດ.
- ຖືກເຕະ, ລາກ ຫຼື ຖືກທຸບ.
- ຖືກບີບຄໍ ຫຼື ຖືກເຜົາດ້ວຍໄຟໂດຍເຈຕະນາ.
- ຜູ້ກະທຳຜິດໃຊ້ອາວຸດເພື່ອຂົ່ມຂູ່ ຫຼື ນຳໃຊ້ອາວຸດເຫຼົ່ານັ້ນໃນການທຳຮ້າຍແມ່ຍິງເຊັ່ນ: ປືນ, ມີດ ຫຼື ອາວຸດອື່ນໆ.

<u>ການໃຊ້ຄວາມຮຸນແຮງທາງເພດໂດຍຄູ່ຮ່ວມຊີວິດທີ່ໃກ້ຊິດ</u>

- ນຳໃຊ້ກຳລັງບັງຄັບໃນການມີເພດສຳພັນທີ່ຝ່າຍຍິງບໍ່ຕ້ອງການ.
- ການມີເພດສຳພັນທີ່ຝ່າຍຍິງບໍ່ຕ້ອງການ ແຕ່ຈຳໃຈຍິນຍອມຍ້ອນຄວາມຢ້ານກົວ.
- ຖືກບັງຄັບໃຫ້ມີການຮ່ວມເພດ ໃນທ່າທາງ ແລະ ວິທີການທີ່ເຮັດໃຫ້ເສຍກຽດສັກສີ ຫຼື ເຮັດໃຫ້ອັບອາຍ.

<u>ການລ່ວງລະເມີດທາງດ້ານຈິດໃຈໂດຍຄູ່ຮ່ວມຊີວິດທີ່ໃກ້ຊິດ</u>

- ຖືກໝິ່ນປະໝາດ ຫຼື ເຮັດໃຫ້ແມ່ຍິງຮູ້ສຶກບໍ່ດີຕໍ່ຕົນເອງ.
- ຖືກໝິ່ນປະໝາດ ຫຼື ເຮັດໃຫ້ອັບອາຍຕໍ່ໜ້າຄົນອື່ນ.
- ຜູ້ກະທຳຜິດໃຊ້ວິທີການຕ່າງໆໃນການເຮັດໃຫ້ຢ້ານກົວ ຫຼື ຂົ່ມຂູ່ແມ່ຍິງໂດຍ (ຕົວຢ່າງ ການໃຊ້ສາຍຕາ, ການຮ້ອງສຽງດັງ ແລະ ທຳຮ້າຍເຄື່ອງຂອງ).
- ຜູ້ກະທຳຜິດ ຂົ່ມຂູ່ແມ່ຍິງໂດຍການທຳຮ້າຍບຸກຄົນທີ່ແມ່ຍິງເປັນຫ່ວງ ແລະ ເບິ່ງແຍງ.

<u>ການຄວບຄຸມພຶດຕິກຳໂດຍຄູ່ຮ່ວມຊີວິດທີ່ໃກ້ຊິດ</u>

- ຊາຍຄົນນັ້ນພະຍາຍາມບໍ່ໃຫ້ເມຍໄປພົບກັບເພື່ອນຂອງລາວ.
- ຊາຍຄົນນັ້ນພະຍາຍາມບໍ່ໃຫ້ເມຍຕິດຕໍ່ກັບຄອບຄົວທີ່ໃຫ້ກຳເນີດ.
- ຊາຍຄົນນັ້ນພະຍາຍາມຮູ້ທຸກການເຄື່ອນໄຫວ ຫຼື ສະຖານທີ່ ທີ່ເມຍຢູ່ຕະຫຼອດເວລາ.
- ຊາຍຄົນນັ້ນປະຕິເສດ ຫຼື ລ້ຽງດູເມຍແບບບໍ່ໃສ່ໃຈ
- ຊາຍຄົນນັ້ນໂມໂຫຖ້າເມຍໄປໂອ້ລົມກັບຊາຍອື່ນ
- ຊາຍຄົນນັ້ນສົງໃສຢູ່ຕະຫຼອດເວລາວ່າເມຍບໍ່ຊື່ສັດຕໍ່ຕົນເອງ
- ຊາຍຄົນນັ້ນຄາດຫວັງວ່າເມຍຈະຂໍອະນຸຍາດກ່ອນການໄປຮັກສາຕົວຂອງລາວເອງ.

<u>ການໃຊ້ຄວາມຮຸນແຮງໃນລະຫວ່າງຖືພາ</u>

- ຖືກຕົບ, ຕີ ຫຼື ທຳຮ້າຍໃນລະຫວ່າງຖືພາ.
- ຖືກຊັດ ຫຼື ເຕະທ້ອງນ້ອຍໃນລະຫວ່າງຖືພາ.

<u>ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຕັ້ງແຕ່ອາຍຸ 15 ປີ ໂດຍຄົນອື່ນ (ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ)</u>

- ແມ່ຍິງຖືກທຳຮ້າຍທາງດ້ານຮ່າງກາຍ ໂດຍບຸກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ.

<u>ການໃຊ້ຄວາມຮຸນແຮງທາງເພດ ຕັ້ງແຕ່ອາຍຸ 15 ປີ ໂດຍຄົນອື່ນ (ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດ)</u>

- ແມ່ຍິງຖືກບັງຄັບໃຫ້ມີເພດສຳພັນ ຫຼື ກິດຈະກຳທາງເພດອື່ນໆ ໂດຍບຸກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ເຊິ່ງແມ່ຍິງບໍ່ຕ້ອງການ.

<u>ການລ່ວງລະເມີດທາງເພດ (ກ່ອນອາຍຸ 15 ປີ)</u>

- ກ່ອນອາຍຸ 15 ປີ, ມີບຸກຄົນທີ່ລ່ວງລະເມີດທາງເພດໂດຍການຈັບບາຍ ຫຼື ບັງຄັບໃຫ້ມີກິດຈະກຳທາງເພດໂດຍທີ່ແມ່ຍິງບໍ່ເຕັມໃຈ.

ການລ່ວງລະເມີດທາງເພດເດັກ ແມ່ນຫົວຂໍ້ທີ່ລະອຽດອ່ອນຫຼາຍໃນການສຳພາດ ແລະ ການຕອບ ຍ້ອນວ່າຄວາມຊົງຈຳດັ່ງກ່າວເຮັດໃຫ້ເກີດຄວາມເຈັບປວດທາງດ້ານຈິດໃຈ ແລະ ເຮັດໃຫ້ເກີດຄວາມອັບອາຍ, ດັ່ງນັ້ນມັນຈຶ່ງບໍ່ມັກຈະຖືກລາຍງານ. ເມື່ອຄຳນຶງເຖິງຄວາມສະຫຼັບສັບຊ້ອນຂອງຫົວຂໍ້, ຜູ້ຕອບມີຫຼາຍໂອກາດໃນການເປີດເຜີຍບັນດາເຫດການດັ່ງກ່າວ. ທຳອິດ, ຜູ້ຕອບແບບຈະຖືກຖາມວ່າ ຖ້າວ່າເຂົາເຈົ້າເຄີຍຖືກບາງຄົນລ່ວງລະເມີດໂດຍການຈັບບາຍ ຫຼື ເຮັດໃຫ້ເຂົາເຈົ້າເຂົ້າໄປມີສ່ວນຮ່ວມໃນກິດຈະກຳທາງເພດກ່ອນເຂົາເຈົ້າອາຍຸໄດ້ 15 ປີ. ສຸດທ້າຍ, ໃນຂັ້ນຕອນສຸດທ້າຍຂອງການສຳພາດ, ຜູ້ຕອບຈະໄດ້ຮັບບັດທີ່ສະແດງຮູບພາບເຊິ່ງມີສີໜ້າດີໃຈ ແລະ ໂສກເສົ້າ ເຊິ່ງເຂົາເຈົ້າຈະຕ້ອງເລືອກໜ້າໃດໜຶ່ງ (ຮູບທີ 2.1). ບັດນີ້ໄດ້ຖືກອອກແບບເພື່ອຮັບປະກັນການລາຍງານທີ່ບໍ່ລະບຸຕົວຕົນຂອງຜູ້ລາຍງານ. ຜູ້ຕອບຈະເອົາບັດດັ່ງກ່າວຍັດໃສ່ຊອງແລ້ວປິດພະນຶກ.

**ຮູບທີ 2.1 ການນຳໃຊ້ບັດໜ້າ ເພື່ອການລາຍງານ ກໍລະນີທີ່ເດັກຖືກລ່ວງລະເມີດທາງເພດ**





Card Sample:

### ຄ) ໄລຍະເວລາທີ່ໃຊ້ໃນການອ້າງອີງ

ສຳລັບການຢືນຢັນບັນດາພຶດຕິກຳໃນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ຈິດໃຈ ແລະ ທາງເພດ, ຜູ້ໃຫ້ສຳພາດຈະຖືກຖາມກ່ຽວກັບການໃຊ້ຄວາມຮຸນແຮງທີ່ໄດ້ເກີດຂຶ້ນໃນໄລຍະ 12 ເດືອນທີ່ຜ່ານມາ (ປັດຈຸບັນ) ແລະ ເກີດຂຶ້ນເລື້ອຍປານໃດ (ໜຶ່ງຄັ້ງ, ສອງ-ຫ້າຄັ້ງ ຫຼື ຫຼາຍກວ່າຫ້າຄັ້ງໃນໄລຍະ 12 ເດືອນທີ່ຜ່ານມາ ແລະ/ຫຼື ກ່ອນໜ້ານັ້ນ) ເຊິ່ງໄດ້ຖາມກ່ຽວກັບອັດຕາຂອງການໃຊ້ຄວາມຮຸນແຮງທີ່ເກີດຂຶ້ນໃນຊ່ວງໄລຍະເວລາໃດໜຶ່ງ, ການໃຊ້ຄວາມຮຸນແຮງໃນປັດຈຸບັນ ແລະ ໄລຍະຕະຫຼອດຊີວິດ ໄດ້ຖືກນຳມາປະເມີນ. ເຊິ່ງຖ້າການໃຊ້ຄວາມຮຸນແຮງທີ່ເກີດຂຶ້ນໃນປັດຈຸບັນ ກໍ່ຖືວ່າເປັນສ່ວນໜຶ່ງຂອງການໃຊ້ຄວາມຮຸນແຮງໃນໄລຍະເວລາຕະຫຼອດຊີວິດ.

ອັດຕາຂອງການໃຊ້ຄວາມຮຸນແຮງໃນຊ່ວງຊີວິດ ແມ່ນໄດ້ວັດແທກປະເພດຂອງການໃຊ້ຄວາມຮຸນແຮງທີ່ເຄີຍເກີດຂຶ້ນໃນຊີວິດຂອງຜູ້ໃຫ້ສຳພາດ, ເຖິງແມ່ນວ່າຈະເຄີຍເກີດຂຶ້ນພຽງແຕ່ເທື່ອດຽວກໍ່ຕາມ. ເຊິ່ງການໃຊ້ຄວາມຮຸນແຮງດັ່ງກ່າວ ຈະເພີ່ມຂຶ້ນຕາມອາຍຸ. ອັດຕາຄວາມຮຸນແຮງໃນຊ່ວງຊີວິດ ແມ່ນມີຄວາມສຳຄັນຫຼາຍໃນການໂຄສະນາ ແລະ ການໃຫ້ຄວາມຮູ້ (ລັດຖະບານຂອງ ປະເທດຫວຽດນາມ, 2010). ໃນທາງກົງກັນຂ້າມ, ອັດຕາຂອງການໃຊ້ຄວາມຮຸນແຮງທີ່ເກີດຂຶ້ນໃນປັດຈຸບັນແມ່ນລວມທັງກໍລະນີການໃຊ້ຄວາມຮຸນແຮງທີ່ເກີດຂຶ້ນໃນໄລຍະ 12 ເດືອນທີ່ຜ່ານມາ. ດັ່ງນັ້ນ ຈຶ່ງເຮັດໃຫ້ມີສະຖິຕິໜ້ອຍກວ່າ ອັດຕາໃນໄລຍະຕະຫຼອດຊີວິດ. ຂໍ້ມູນຂອງການໃຊ້ຄວາມຮຸນແຮງໃນປັດຈຸບັນ ແມ່ນເປັນຂໍ້ມູນທີ່ມີປະໂຫຍດຫຼາຍໃນຮ່າງຜົນກະທົບຂອງກິດຈະກຳໃນບັນ ດາໂຄງການຕ່າງໆ ທີ່ສາມາດຕິດຕາມກວດກາໄດ້ (Ibid.).

### ງ) ນິຍາມຂອງຄູ່ຮ່ວມຊີວິດ

ໃນການສຳຫຼວດນີ້, ແມ່ຍິງຖືກພິຈາລະນາວ່າເປັນ "ຄົນທີ່ເຄີຍມີຄູ່ຮ່ວມຊີວິດ", ຖ້າເຂົາເຈົ້າເຄີຍແຕ່ງງານ, ອາໄສຢູ່ກັບຄູ່ຮ່ວມຊີວິດ (ຄວາມສຳພັນທີ່ແທ້ຈິງ) ຫຼື ຄູ່ຄອງ. ນິຍາມຂອງຄູ່ຮ່ວມຊີວິດ ແມ່ນລວມທັງຜູ້ທີ່ເປັນສາມີ, ແຕ່ເພື່ອການອະທິບາຍເພີ່ມເຕີມໃນການສຳຫຼວດຄັ້ງນີ້ ຄູ່ຮ່ວມຊີວິດຈຶ່ງໄດ້ລວມມີ "ສາມີ/ຄູ່ຮ່ວມຊີວິດ."

### 2.2.3 ການຝຶກອົບຮົມ ແລະ ວຽກພາກສະໜາມ

ເພື່ອຈະເຮັດການສຳຫຼວດໃນຫົວຂໍ້ທີ່ລະອຽດອ່ອນ ເຊັ່ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ຈຶ່ງເຮັດໃຫ້ການຮັບສະໝັກພະນັກງານພາກສະໜາມໃນການລົງເກັບກຳຂໍ້ມູນໃນພາກສະໜາມ ແລະ ການຝຶກອົບຮົມມີຄວາມສຳຄັນ ແລະ ຕ້ອງໄດ້ລະມັດລະວັງທີ່ສຸດ (ການຕອບໂຕ້ຂັ້ນຕ່ຳ ແລະ ການເປີດເຜີຍທີ່ຖືກຕ້ອງ ຕໍ່ການໃຊ້ຄວາມຮຸນແຮງ) ແລະ ຂໍ້ກຳນົດຂອງສະພາບແວດລ້ອມທີ່ປອດໄພຕໍ່ການສຳພາດ.

ໂດຍລວມແລ້ວ, ໄດ້ມີການເອົາໃຈໃສ່ຢ່າງຖີ່ຖ້ວນໃນການຄັດເລືອກເອົາຜູ້ສຳພາດ ແລະ ທີ່ປຶກສາ. ໃນການສຳຫຼວດໃນຫົວຂໍ້ທີ່ມີຄວາມລະອຽດອ່ອນນີ້, ມີສະເພາະແຕ່ແມ່ຍິງເທົ່ານັ້ນທີ່ຖືກຈ້າງໃຫ້ເປັນຜູ້ສຳພາດ, ເຖິງຢ່າງໃດກໍ່ຕາມ, ຍ້ອນວ່າສູນສະຖິຕິແຫ່ງຊາດບໍ່ມີພະນັກງານແມ່ຍິງທີ່ພຽງພໍ, ການສະໝັກຈຶ່ງຂະຫຍາຍໄປເຖິງພະນັກງານຈາກສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມາທິການເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ລວມທັງຄະນະກຳມະການເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ຂັ້ນກະຊວງ. ທ້າຍສຸດແລ້ວ, ສາມາດຄັດເລືອກພະນັກງານພາກສະໜາມໄດ້ 40 ທ່ານ ແລະ ພະນັກງານສຳຮອງອີກ 3 ທ່ານ.

ພະນັກງານພາກສະໜາມແມ່ນຖືກຄັດເລືອກໂດຍບັນດາມາດຖານດັ່ງລຸ່ມນີ້:

- ແມ່ຍິງ.
- ອາຍຸ 30-60 ປີ.
- ມີປະສົບການທາງດ້ານການສຳຫຼວດ.
- ຄວາມສາມາດໃນການປະຕິສຳພັນກັບທຸກໆຄົນໃນສັງຄົມ.
- ມີທັດສະນະຄະຕິທີ່ບໍ່ຕັດສິນຄົນອື່ນ.
- ມີທັກສະທີ່ດີໃນການເຮັດວຽກຮ່ວມກັບຄົນອື່ນ.
- ມີປະສົບການໃນການປະເຊີນກັບບັນຫາທີ່ມີຄວາມລະອຽດອ່ອນ.
- ຜົນຂອງການປະຕິບັດໜ້າທີ່ວຽກງານໃນລະຫວ່າງການຝຶກອົບຮົມ ແລະ ວຽກພາກສະໜາມ.

ການຝຶກອົບຮົມໄດ້ແບ່ງອອກເປັນ 2 ລະດັບ. ລະດັບທີ 1 ແມ່ນ 'ການຝຶກອົບຮົມການເປັນຄູຝຶກ' ເຊິ່ງໄດ້ຮັບການຝຶກໂດຍຊ່ຽວຊານຈາກ ຫ້ອງການສະຖິຕິຂອງປະເທດຫວຽດນາມ ແລະ ທີ່ປຶກສາອິດສະຫຼະທາງດ້ານບົດບາດຍິງ-ຊາຍ ເປັນໄລຍະເວລາ 2 ອາທິດ. ການຝຶກອົບຮົມດັ່ງກ່າວ ແມ່ນຝຶກທາງດ້ານວິທີການສຳຫຼວດ, ບົດບາດຍິງ-ຊາຍ ແລະ ຄວາມຮູ້ທາງດ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃຫ້ກັບຄະນະຊີ້ນຳຂອງສູນສະຖິຕິແຫ່ງຊາດ (2 ທ່ານ), ຄະນະກຳມາທິການເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (2 ທ່ານຈາກກອງເລຂາ), ກະຊວງສາທາລະນະສຸກ (1 ທ່ານ ຈາກຄະນະກຳມະການເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງກະຊວງສາທາລະນະສຸກ) ແລະ ສູນກາງສະຫະພັນແມ່ຍິງລາວ (2 ທ່ານ ຈາກສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ ແລະ ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງຂອງສູນກາງສະຫະພັນແມ່ຍິງລາວ). ການຝຶກອົບຮົມລວມມີ ການທົດສອບແບບສອບຖາມ, ການດັດແປງບັນດາຄູ່ມື ແລະ ຈຸດປະສົງ ເພື່ອສ້າງຄູຝຶກທີ່ມີປະສິດທິພາບ ແລະ ຄະນະຊີ້ນຳທີ່ຈະຝຶກອົບຮົມໃຫ້ກັບບັນດາພະນັກງານພາກສະໜາມ ແລະ ການນຳໃຊ້ປະສົບການໃນວຽກພາກສະໜາມ ເພື່ອການຫາຈຸດສົມດຸນຂອງແບບສອບຖາມ.

ລະດັບທີ 2 ແມ່ນການຈັດຝຶກອົບຮົມໃຫ້ກັບພະນັກງານພາກສະໜາມ 49 ທ່ານ ໂດຍບັນດາຄູຝຶກທີ່ເປັນຄະນະຊີ້ນຳ, ຮ່ວມກັບບັນດາພະນັກງານທີ່ຖືກຄັດເລືອກ 40 ທ່ານ. ການຝຶກອົບຮົມດັ່ງກ່າວແມ່ນຈັດຂຶ້ນໃນລະຫວ່າງວັນທີ 25 ພະຈິກ ຫາ ວັນທີ 13 ທັນວາ ປີ 2013, ລວມທັງການລົງປະຕິບັດຕົວຈິງໃນແຂວງວຽງຈັນ ເປັນເວລາ 3 ວັນ ເຊິ່ງໄດ້ທົດລອງໃນບ້ານທີ່ບໍ່ແມ່ນບ້ານເປົ້າໝາຍຂອງການສຳຫຼວດລະດັບຊາດໃນຄັ້ງນີ້. ການຝຶກອົບຮົມແມ່ນລວມເຖິງການຄຳນຶງທາງດ້ານຄວາມລະອຽດອ່ອນ, ສຸມໃສ່ດ້ານບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ (Jansen ພ້ອມດ້ວຍຄະນະ, 2004).

ຈຸດປະສົງໃນການຝຶກອົບຮົມມີຄື:

- ເພີ່ມຄວາມລະອຽດອ່ອນຂອງບັນດາພະນັກງານພາກສະໜາມຕໍ່ກັບບັນຫາທາງດ້ານບົດບາດຍິງ-ຊາຍ ໃນລະດັບສ່ວນບຸກຄົນ ແລະ ລະດັບຊຸມຊົນ.
- ພັດທະນາຄວາມເຂົ້າໃຈເບື້ອງຕົ້ນກ່ຽວກັບ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ/ການໃຊ້ຄວາມຮຸນແຮງໃນຄອບຄົວ, ລັກສະນະ, ສາເຫດ ແລະ ຜົນກະທົບຕໍ່ສຸຂະພາບຂອງແມ່ ແລະ ເດັກ.
- ເພື່ອເຂົ້າໃຈເຖິງເປົ້າໝາຍຂອງການສຳຫຼວດໃນຫົວຂໍ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.
- ຮຽນຮູ້ທັກສະການສຳພາດ ທີ່ມີຄວາມປອດໄພ ແລະ ອີງຕາມຫຼັກຈັນຍາທຳ.
- ເພື່ອໃຫ້ມີຄວາມລຶ້ງເຄີຍກັບແບບສອບຖາມ ແລະ ພິທີການໃນການສຳຫຼວດ.

ພາຍຫຼັງການຝຶກອົບຮົມສຳເລັດລົງ, ວຽກພາກສະໜາມກໍ່ໄດ້ເລີ່ມຕົ້ນໃນວັນທີ 15 ທັນວາ ປີ 2013 ໃນນະຄອນຫຼວງວຽງຈັນ ເຊິ່ງກໍ່ເປັນໂອກາດອັນດີທີ່ເຮັດໃຫ້ແຕ່ລະທີມສາມາດສະເໜີບັນດາຂໍ້ກັງວົນ ແລະ ແບ່ງປັນປະສົບການກ່ອນການລົງເກັບກຳຂໍ້ມູນໃນແຕ່ລະແຂວງ. ການສຳຫຼວດດັ່ງກ່າວມີທັງໝົດ 8 ທີມ, ໃນແຕ່ລະທີມປະກອບສະມາຊິກ 5 ທ່ານ (ຜູ້ນຳພາ/ຜູ້ກວດແກ້ 1 ທ່ານ ແລະ ນັກສຳພາດ 4 ທ່ານ) ແລະ ການສຳຫຼວດໃຊ້ເວລາຫຼາຍກວ່າສາມເດືອນ ຈົນເຖິງເດືອນ ມີນາ ປີ 2014. ທີມຜູ້ນຳພາ/ຜູ້ກວດແກ້ ແມ່ນມີໜ້າທີ່ຮັບຜິດຊອບໃນການຄວບຄຸມກິດຈະກຳທັງໝົດຂອງທີມ ໃນພື້ນທີ່ທີ່ຖືກມອບໝາຍ, ລວມທັງພິຈາລະນາໃນຄວາມປອດໄພໃນບັນດາພື້ນທີ່ ທີ່ມີຄວາມງ່າຍ ແລະ ຍາກທີ່ສຸດ, ຜູ້ນຳພາ/ຜູ້ກວດແກ້ແມ່ນມີໜ້າທີ່ຮັບຜິດຊອບໃນການກວດວ່າແບບສອບຖາມແຕ່ລະສະບັບມີການໃສ່ຂໍ້ມູນຖືກຕ້ອງ ແລະ ຄົບຖ້ວນແລ້ວຫຼືບໍ່.

ວຽກພາກສະໜາມໄດ້ມີການຈັດຕັ້ງປະຕິບັດດັ່ງລຸ່ມນີ້:

- ສຳພາດ 10 ຄົນ ຕໍ່ 1 ບ້ານ, ຕໍ່ມື້ (ແມ່ຍິງ 1 ຄົນ ຕໍ່ 1 ຄົວເຮືອນ), ຕໍ່ 1 ທີມ
- ແມ່ຍິງ ໄດ້ຖືກສຳພາດໃນສະຖານທີ່ ທີ່ມີຄວາມປອດໄພ, ເປັນສ່ວນຕົວ ແລະ ສະດວກໃນການຕອບບັນດາຄຳຖາມທີ່ມີຄວາມລະອຽດອ່ອນດັ່ງກ່າວ.

ວຽກພາກສະໜາມໄດ້ຖືກອອກແບບເພື່ອການສຳພາດທັງໝົດໃນແຕ່ລະບ້ານໃຫ້ສຳເລັດພາຍໃນໜຶ່ງມື້ ເນື່ອງຈາກຄຳນຶງເຖິງດ້ານຈັນຍາບັນ ແລະ ຄວາມປອດໄພ. ແຕ່ຍ້ອນວ່າຍັງບໍ່ທັນມີບັນຊີຄົວເຮືອນທີ່ເປັນຂໍ້ມູນໃນປັດຈຸບັນ, ວຽກການເກັບກຳຂໍ້ມູນບັນຊີຄົວເຮືອນຈຶ່ງແມ່ນໜຶ່ງໃນບັນດາວຽກພາກສະໜາມ. ທີມງານພາກສະໜາມທຸກໆທີມ ຈຶ່ງໄດ້ໃຊ້ເວລາມື້ທຳອິດໃນການເກັບກຳຂໍ້ມູນບັນຊີຄົວເຮືອນ ໃນແຕ່ລະບ້ານ/ແຕ່ລະຈຸດສຸມ ແລະ ໄດ້ລະບຸບັນດາແມ່ຍິງທີ່ຢູ່ໃນເກນ ຂອງແຕ່ລະບ້ານ/ແຕ່ລະຄົວເຮືອນ. ຄົວເຮືອນ ແລະ ແມ່ຍິງທີ່ຖືກຄັດເລືອກທັງໝົດ ແມ່ນຖືກສຸ່ມເອົາໃນມື້ທຳອິດ ເຊິ່ງໄດ້ນຳໃຊ້ລະບົບການຄັດເລືອກທີ່ໄດ້ມາດຕະຖານສາກົນ.[10]

### 2.2.4 ການຄວບຄຸມຄຸນນະພາບ

ເພື່ອຮັບປະກັນວຽກພາກສະໜາມທີ່ມີຄຸນນະພາບສູງ, ການຕິດຕາມ ແລະ ການສື່ສານທີ່ມີຄວາມລະອຽດ ແລະ ມີການຄຸ້ມຄອງເປັນລະບົບ ໄດ້ຖືກແນະນຳໃນທຸກໆ ຂັ້ນຂອງວຽກພາກສະໜາມ ຄືດັ່ງລຸ່ມນີ້:

- ແບບສອບຖາມທຸກໆ ສະບັບທີ່ສຳເລັດແລ້ວ ຕ້ອງໄດ້ຮັບການກວດກາໂດຍ ຜູ້ນຳພາ/ຜູ້ກວດແກ້ ເພື່ອກວດກາເບິ່ງຄວາມສອດຄ່ອງ ແລະ ຄຳຖາມທີ່ບໍ່ຖືກຕອບ ເພື່ອລະບຸຊ່ອງວ່າງ, ຄວາມຜິດພາດ ຫຼື ຂໍ້ມູນທີ່ຂາດ ແລະ ດັດແກ້ກ່ອນທີ່ຈະຍ້າຍໄປລົງສຳຫຼວດໃນພື້ນທີ່ໃໝ່.
- ແຕ່ລະທີມຕ້ອງມີການປະຊຸມໃນຕອນທ້າຍຂອງທຸກໆມື້ ເພື່ອແບ່ງປັນປະສົບການ ແລະ ເຮັດບົດລາຍງານພາກສະໜາມໃຫ້ສຳເລັດ. ບົດລາຍງານດັ່ງກ່າວຊ່ວຍໃຫ້ຜູ້ນຳພາທີມສາມາດກວດກາ ແລະ ເກັບກຳບັນດາບັນຫາທີ່ເກີດຂຶ້ນໃນວຽກພາກສະໜາມເພື່ອຫາວິທີການແກ້ໄຂໃນກໍລະນີທີ່ຈຳເປັນ.
- ແຕ່ລະທີມຕ້ອງໄດ້ຮັບການຊີ້ນຳຈາກຄູຝຶກຢ່າງໜ້ອຍສອງຄັ້ງ ໃນລະຫວ່າງການເກັບກຳຂໍ້ມູນ. ເຊັ່ນ ການລົງຕິດຕາມກວດກາໂດຍບັນດາຄູຝຶກໃນໄລຍະອາທິດທຳອິດແມ່ນມີຄວາມສຳຄັນຫຼາຍເພື່ອສະໜອງການສະໜັບສະໜູນທາງດ້ານວິຊາການ. ທີມງານພາກສະໜາມສາມາດຕິດຕໍ່ຫາບັນດາຄູຝຶກໄດ້ຕະຫຼອດ 24 ຊົ່ວໂມງ ໃນທຸກໆ ມື້ຂອງອາທິດ ໃນກໍລະນີທີ່ຕ້ອງການຂໍຄວາມຊ່ວຍເຫຼືອ.

[10] ຫຼັງຈາກເກັບກຳຂໍ້ມູນບັນຊີຄົວເຮືອນແລ້ວ, ໄລຍະຫ່າງໄດ້ຖືກຄິດໄລ່ (I=N/n, I: ໄລຍະຫ່າງ, N: ຕົວເລກຂອງຄົວເຮືອນທີ່ມີແມ່ຍິງທີ່ຢູ່ໃນເກນ). ຕົວເລກນີ້ ໄດ້ຖືກນຳໃຊ້ ເພື່ອກຳນົດເອົາ 10 ຄົວເຮືອນໃນການສຳພາດ. ຫຼັງຈາກການຄັດເລືອກຄົວເຮືອນແລ້ວ, ແມ່ຍິງທີ່ຢູ່ໃນເກນທັງໝົດຈະໄດ້ຮັບໝາຍເລກ ເຊິ່ງຈະໄດ້ເອົາໃສ່ໃນກັບເພື່ອໃຫ້ນາຍບ້ານເປັນຄົນຈົກເພື່ອສຸ່ມເລືອກເອົາແມ່ຍິງທີ່ຈະເປັນຜູ້ຖືກສຳພາດ. ໃນກໍລະນີທີ່ມີແມ່ຍິງພຽງຄົນດຽວໃນຄົວເຮືອນດັ່ງກ່າວ, ແມ່ຍິງຄົນນັ້ນກໍ່ຈະຖືກເລືອກໂດຍອັດຕະໂນມັດ.

### 2.2.5 ການບັນທຶກ ແລະ ການວິເຄາະຂໍ້ມູນ

ການບັນທຶກຂໍ້ມູນໄດ້ເລີ່ມຂຶ້ນໃນກາງເດືອນກຸມພາ ປີ 2014 ເຊິ່ງດຳເນີນໄປພ້ອມກັນກັບການເກັບກຳຂໍ້ມູນ. ລະບົບການບັນທຶກຂໍ້ມູນແມ່ນໄດ້ນຳໃຊ້ລະບົບການສຳຫຼວດພົນລະເມືອງ (CSPRO 4.1), ໂດຍມີລະບົບໃນການກວດກາຂໍ້ຜິດພາດ. ທຸກໆ ຂໍ້ມູນຈາກແບບສອບຖາມ ແມ່ນໄດ້ຖືກບັນທຶກລົງໃນລະບົບດັ່ງກ່າວໂດຍສູນສະຖິຕິແຫ່ງຊາດຢູ່ທີ່ນະຄອນຫຼວງວຽງຈັນ ແລະ ທຸກໆ ຂໍ້ມູນກໍ່ໄດ້ມີການບັນທຶກລົງອີກຄັ້ງເພື່ອກວດສອບເບິ່ງຄວາມຜິດພາດ. ຕາຕະລາງດຳມີ, ພຶດຈະນານຸກົມຂອງຂໍ້ມູນ ແລະ ການສ້າງການວິເຄາະ ໃນຊອຟແວການວິເຄາະຂໍ້ມູນ ແລະ ສະຖິຕິ (STATA) ໄດ້ຖືກດັດປັບ ແລະ ນຳໃຊ້ເພື່ອການວິເຄາະຂໍ້ມູນ. ຂະບວນການດັ່ງກ່າວນີ້ແມ່ນໄດ້ດຳເນີນການໂດຍສູນສະຖິຕິແຫ່ງຊາດ ໂດຍໄດ້ຮັບການຊ່ວຍເຫຼືອຈາກທີ່ປຶກສາໃນລະດັບສາກົນ.

ການອະທິບາຍຂໍ້ມູນ ສຳລັບຄຸນລັກສະນະຂອງຜູ້ຕອບແບບສອບຖາມ ແລະ ຄູ່ຮ່ວມຊີວິດ ເຊັ່ນດຽວກັນກັບຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ອັດຕາຂອງການໃຊ້ຄວາມຮຸນແຮງ (ຄ່າກາງ ແລະ ຄ່າຜິດດ່ຽງມາດຖານ, ຄວາມຖີ່, ສ່ວນຮ້ອຍ) ໄດ້ຖືກຄິດໄລ່ ແລະ ປຽບທຽບລະຫວ່າງໃນຕົວເມືອງ/ຊົນນະບົດ, ພາກ, ອາຍຸ ແລະ ລະດັບການສຶກສາ. ສະຖານະພາບທາງດ້ານສຸຂະພາບ, ໄດ້ຖືກປະເມີນໂດຍລະດັບຂອງສຸຂະພາບທົ່ວໄປ ແລະ ແບບສອບຖາມການລາຍງານດ້ວຍຕົນເອງ ສຳລັບຄວາມເຈັບປວດທາງດ້ານຈິດໃຈທີ່ພົວພັນເຖິງການໃຊ້ຄວາມຮຸນແຮງ, ເຊິ່ງໄດ້ທົດສອບໂດຍ ໄຄສະແຄ (Chi-square tests), ທີທແສ (T-tests), non-parametric Mann Whitney tests ແລະ logistic regression. ການສຳຫຼວດແມ່ນໄດ້ນຳໃຊ້  An STATA 11 (StataCorp LP) ແລະ SPSS 21 (SPSS, IBM Inc.).

ການຊັ່ງຊາຂອງກຸ່ມຕົວຢ່າງ ແມ່ນໄດ້ຖືກຄິດໄລ່ ເພື່ອການຄັດເລືອກຄວາມເປັນໄປໄດ້ ຂອງພື້ນທີ່ໃນການສຳຫຼວດ, ຄົວເຮືອນໃນພື້ນທີ່ຂອງການສຳຫຼວດ ແລະ ແມ່ຍິງທີ່ຢູ່ໃນເກນ. ຜົນສຳຫຼວດທັງໝົດໃນການສຳຫຼວດຄັ້ງນີ້ແມ່ນມີເຄົ້າມາຈາກການວິເຄາະໃນດ້ານການຊັ່ງຊາ.

## 2.3 ການສຳຫຼວດທາງດ້ານຄຸນນະພາບ

### 2.3.1 ການອອກແບບ, ຜູ້ເຂົ້າຮ່ວມ, ຄຳຖາມແນະນຳ ແລະ ກຸ່ມຕົວຢ່າງ

ການສຳຫຼວດທາງດ້ານຄຸນນະພາບ ລວມມີການວິເຄາະແບບບັນລະຍາຍ ແລະ ກໍລະນີສຶກສາ. ການວິເຄາະແບບບັນລະຍາຍ ແມ່ນລະບຸເຖິງເລື່ອງຕ່າງໆໃນຊີວິດຂອງຜູ້ໃຫ້ສຳພາດ, ເລື່ອງສຳຄັນທີ່ເກີດຂຶ້ນໃນຊີວິດ ຫຼື ບັນດາເຫດການທີ່ສຳຄັນຕ່າງໆ. ວິທີການດັ່ງກ່າວແມ່ນເພື່ອເຮັດໃຫ້ເຂົ້າໃຈປະສົບການຂອງຄົນ ແລະ/ຫຼືເຫດການຕ່າງໆ ໃນສັງຄົມ ໂດຍຜ່ານຮູບແບບ ແລະ ເນື້ອໃນຂອງການວິເຄາະແບບບັນລະຍາຍໃນຮູບແບບຂອງການເລື່ອງເລົ່າ. ວິທີການສຳຫຼວດໃນກໍລະນີສຶກສານີ້ ມີເປົ້າໝາຍເພື່ອເຮັດໃຫ້ເຂົ້າໃຈເຫດການທາງສັງຄົມທີ່ມີຄວາມສະຫຼັບສັບຊ້ອນ ໂດຍການການປະເມີນຄຸນລັກສະນະຕ່າງໆ ຂອງເຫດການທີ່ເກີດຂຶ້ນໃນຊີວິດຈິງ ເຊັ່ນ: ວົງຈອນຊີວິດຂອງບຸກຄົນໃດໜຶ່ງ, ລະບົບການບໍລິຫານ ແລະ ຈັດການ, ເພື່ອນບ້ານ/ການປ່ຽນແປງຂອງຊຸມຊົນ (Yin, 2003). ວິທີການດັ່ງກ່າວ ກໍ່ໄດ້ນຳໃຊ້ຍຸດທະສາດຂອງວິທີການໃນການອະທິບາຍໂດຍຄຳຖາມ "ເປັນຫຍັງ" ແລະ "ແນວໃດ" (Scharman, 1971).

ການສຳຫຼວດທາງດ້ານຄຸນນະພາບຄັ້ງນີ້ໄດ້ຊ່ວຍອະທິບາຍຜົນການສຳຫຼວດ ແລະ ສະໜອງບັນດາຂໍ້ມູນ ທີ່ບໍ່ສາມາດເກັບກຳຈາກການສຳຫຼວດທາງດ້ານປະລິມານໄດ້. ໂດຍສະເພາະແມ່ນ, ການບັນທຶກຂໍ້ຄວາມກ່ຽວກັບແມ່ຍິງທີ່ເຄີຍປະເຊີນກັບຄວາມຮຸນແຮງຕໍ່ແມ່ຍິງ ເຊັ່ນດຽວກັນກັບທັດສະນະຄະຕິຂອງຜູ້ຊາຍ ແລະ ບັນດາບຸກຄົນທີ່ຢູ່ໃນບັນດາອົງການທີ່ກ່ຽວຂ້ອງ. ການສຳຫຼວດທາງດ້ານຄຸນນະພາບແມ່ນບໍ່ໄດ້ເປັນຕົວແທນຂໍ້ມູນໃນປະລິມານທີ່ໃຫຍ່, ແຕ່ໄດ້ເປັນຕົວແທນຂອງຂໍ້ມູນໃນທາງເລິກ ໃນຄວາມເຂົ້າໃຈຕໍ່ການນຳໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວ ໂດຍຜ່ານການອະທິບາຍ ແລະ ເລື່ອງເລົ່າຂອງແມ່ຍິງ ໃນປະສົບການ, ສິ່ງທ້າທາຍ, ຂໍ້ຄົງຄ້າງ ແລະ ຜົນສຳເລັດຕ່າງໆທີ່ມີຄວາມຫຼາກຫຼາຍ.

ການສຳຫຼວດທາງດ້ານຄຸນນະພາບໃນຄັ້ງນີ້ແມ່ນໄດ້ປະກອບມີທີມງານອີກກຸ່ມໜຶ່ງ ເຊິ່ງໄດ້ນຳພາໂດຍສະຖາບັນເບີເນັດ, ເຊິ່ງໄດ້ມີການຈຳແນກສະພາບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນປະເທດ (ການທົບທວນບັນດາການສຶກສາທີ່ຜ່ານມາ) ເຊັ່ນດຽວກັນກັບບັນດາຂໍ້ມູນມືສອງ ແລະ ຜົນການສຳຫຼວດເບື້ອງຕົ້ນ ຈາກການສຳຫຼວດທາງດ້ານປະລິມານ ຫຼັງຈາກການທົບທວນເອກະສານ, ແລະ ການສຳພາດໃນວຽກພາກສະໜາມ. ຄືດັ່ງທີ່ຈະໄດ້ອະທິບາຍຢູ່ໃນພາກການເກັບກຳຂໍ້ມູນຢູ່ໃນບົດສຳຫຼວດໃນຄັ້ງນີ້, ການສຳພາດໃນຂັ້ນພາກສະໜາມ ປະກອບມີ ການສຳພາດແບບເຈາະເລິກ, ການສົນທະນາກຸ່ມ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ແລະ ບັນດາຜູ້ເຂົ້າຮ່ວມຕ່າງແມ່ນຖືກຄັດເລືອກໂດຍບັນດາມາດຖານລຸ່ມນີ້:

1. ການສຳພາດແບບເຈາະເລິກ: ແມ່ຍິງທີ່ເຄີຍປະເຊີນກັບການໃຊ້ຄວາມຮຸນແຮງໃນຄອບຄົວ ເພື່ອບັນທຶກມຸມມອງກ່ຽວກັບການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ບັນດາປະສົບການຕ່າງໆ
2. ການສົນທະນາກຸ່ມ: ແມ່ຍິງ ແລະ ຜູ້ຊາຍທີ່ມີກຸ່ມອາຍຸທີ່ແຕກຕ່າງກັນແມ່ນໄດ້ຖືກຄັດເລືອກ ເພື່ອເຮັດໃຫ້ເຂົ້າໃຈມຸມມອງ ແລະ ຄວາມຄິດກ່ຽວກັບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວ. ຍ້ອນວ່າຜູ້ຊາຍບໍ່ໄດ້ເຂົ້າຮ່ວມໃນການສຳຫຼວດທາງດ້ານປະລິມານ, ການສຳຫຼວດທາງດ້ານຄຸນນະພາບນີ້ກໍ່ໄດ້ ລວມເອົາມຸມມອງຂອງບັນດາຜູ້ຊາຍຕໍ່ກັບບັນຫາດັ່ງກ່າວ.
3. ການສຳພາດຜູ້ໃຫ້ຂໍ້ມູນຫຼັກ: ກຸ່ມຂອງບັນດາຜູ້ໃຫ້ຂໍ້ມູນຫຼັກ (ຜູ້ຊ່ຽວຊານ, ຜູ້ນຳທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ) ທີ່ມີການຕິດຕໍ່ພົວພັນກັບຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ/ຫຼື ຜູ້ກະທຳຜິດກໍ່ໄດ້ຖືກສຳພາດເຊັ່ນກັນ ເພື່ອຈະເຂົ້າໃຈມຸມມອງຂອງພວກເຂົາ.

ຄຳຖາມແນະນຳສຳລັບ ການສຳພາດ/ການສົນທະນາ ໄດ້ຖືກພັດທະນາ ແລະ ດັດປັບເພື່ອ ສປປ ລາວ ເຊິ່ງສອດຄ່ອງກັບຄູ່ມືການສຳພາດຂອງອົງການອະນາໄມໂລກເຊິ່ງໄດ້ມີການປັບປຸງໂດຍຄະນະຊີ້ນຳ ໂດຍຊີ້ນຳກັບທີ່ປຶກສາຈາກຫ້ອງການພາກພື້ນອາຊີປາຊີຟິກຂອງອົງການ UNFPA (ເບິ່ງເອກະສານຊ້ອນທ້າຍ ທີ III). ສຳລັບກຸ່ມສົນທະນາ ແມ່ນມີຄູ່ທີ່ແຕກຕ່າງ (ເຫດການ) ເຊິ່ງໄດ້ຮັບການພັດທະນາ ແລະ ນຳໃຊ້ສຳລັບແມ່ຍິງ ແລະ ຜູ້ຊາຍທີ່ແຕ່ງງານແລ້ວ, ແລະ ໄວໜຸ່ມທີ່ຍັງບໍ່ທັນໄດ້ແຕ່ງງານ ໂດຍສະຖານະການໃນປັດຈຸບັນຂອງພວກເຂົາ. ວິທີການສຳຫຼວດດັ່ງກ່າວນີ້ແມ່ນໄດ້ຖືກຮັບຮອງຫຼັງຈາກການເຮັດບົດບາດສົມມຸດໃນລະຫວ່າງການຝຶກອົບຮົມ ແລະ ການທົດສອບການຈັດຕັ້ງປະຕິບັດໃນການສຳພາດໃນວຽກພາກສະໜາມ.

ອີງຕາມກຸ່ມຕົວຢ່າງ, ການສຳຫຼວດໃນຄັ້ງນີ້ແມ່ນໄດ້ນຳໃຊ້ 'ການຈັດແບ່ງກຸ່ມຕົວຢ່າງອີງຕາມຈຸດປະສົງ' ເຊິ່ງໄດ້ສຸມໃສ່ຄຸນລັກສະນະພິເສດຂອງບັນດາກຸ່ມຍ່ອຍສະເພາະເພື່ອການປຽບທຽບ. ຕາລາງທີ 2.2 ສະແດງໃຫ້ເຫັນເຖິງກຸ່ມຕົວຢ່າງອີງຕາມການທົດສອບ ແລະ ພາກຕ່າງໆ ເຊັ່ນດຽວກັນກັບການປະກອບສ່ວນຂອງການສຳພາດແບບເຈາະເລິກ, ການສົນທະນາກຸ່ມ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ. ລວມແລ້ວມີການສຳພາດ 37 ທ່ານ ແລະ ມີການສົນທະນາກຸ່ມ, ລວມທັງກຸ່ມທີ່ຢູ່ໃນໄລຍະທົດລອງ (ຕາລາງທີ 2.2). ການສຳພາດ ແລະ ການສົນທະນາກຸ່ມ ໃນໄລຍະທົດລອງແມ່ນບໍ່ໄດ້ລວມເຂົ້າໃນການສຳຫຼວດໂດຍກົງ, ແຕ່ໄດ້ປະກອບສ່ວນເພື່ອເຮັດໃຫ້ເກີດຄວາມເຂົ້າໃຈໃນສະຖານະການໂດຍລວມ ເພື່ອການອະທິບາຍວຽກພາກສະໜາມດັ່ງກ່າວ.

**ຕາລາງທີ2.2 ຂະໜາດກຸ່ມຕົວຢ່າງ ໂດຍແບ່ງຕາມພາກ ແລະ ປະເພດຂອງການສຳພາດ**

| | ທົດລອງ | ນະຄອນຫຼວງ | ສາລະວັນ | ລວມ |
|---|---|---|---|---|
| **ກຸ່ມສົນທະນາ** | **2** | **4** | **4** | **10** |
| ແມ່ຍິງໄວຜູ້ໃຫຍ່ | 1 | 1 | 1 | |
| ໄວໜຸ່ມຍິງ | | 1 | 1 | |
| ໄວໜຸ່ມຊາຍ | 1 | 1 | 1 | |
| ຜູ້ຊາຍໄວຜູ້ໃຫຍ່ | | 1 | 1 | |
| **ການສຳພາດຜູ້ໃຫ້ຂໍ້ມູນຫຼັກ** | **2** | **9** | **3** | **14** |
| ນາຍບ້ານ | 1 | 1 | 1 | |
| ປກສ ບ້ານ | | 1 | 1 | |
| ສະຫະພັນແມ່ຍິງ | 1 | 1 | 1 | |
| ຕຳຫຼວດເມືອງ | | 1 | | |
| ແພດ | | 2 | | |
| ອົງການຈັດຕັ້ງສາກົນ | | 2 | | |
| ສູນໃຫ້ຄຳປຶກສາຂອງ ສຍລ | | 1 | | |
| **ການສຳພາດແບບເຈາະເລິກ** | **1** | **6** | **6** | **13** |
| ແມ່ຍິງ | 1 | 6 | 6 | 13 |
| **ລວມ** | **5** | **19** | **13** | **37** |

### 2.3.2 ຂະໜາດຂອງການສຳຫຼວດ ແລະ ທີມງານ

ພິຈາລະນາຄຸນລັກສະນະທີ່ແຕກຕ່າງກັນໃນແຕ່ລະພາກ ແລະ ອັດຕາໃນລະດັບສູງຂອງການໃຊ້ຄວາມຮຸນແຮງເຊິ່ງໄດ້ຖືກຈຳແນກໂດຍຂໍ້ມູນທາງດ້ານຄຸນນະພາບ, ນະຄອນຫຼວງວຽງຈັນ (ພາກກາງ) ແລະ ແຂວງສາລະວັນ (ພາກໃຕ້) ໄດ້ຖືກຄັດເລືອກເພື່ອການສຳຫຼວດທາງຄຸນນະພາບ. ໃນເຂດຕົວເມືອງຂອງນະຄອນຫຼວງວຽງຈັນ, ບັນດາຜູ້ໃຫ້ສຳພາດແມ່ນສາມາດເຂົ້າເຖິງການຈ້າງງານ ແລະ ໂອກາດທາງການສຶກສາ ແລະ ການເຂົ້າເຖິງບັນດາຂໍ້ມູນຂ່າວສານທີ່ມີຄວາມກ້າວໜ້າ ແລະ ໄດ້ຮັບອິທິດພົນມາຈາກສື່ຕ່າງໆ, ເຫດການລະດັບສາກົນ ແລະ ການຮຽນຮູ້ບັນດາຄຸນຄ່າທີ່ບໍ່ແມ່ນທາງດ້ານປະເພນີຕ່າງໆ. ໃນທາງກົງກັນຂ້າມ, ຢູ່ໃນເຂດຊົນນະບົດ ແມ່ນມີສະພາບແວດລ້ອມທີ່ມີຄວາມຈຳກັດທາງດ້ານການສຳຫຼວດ ແລະ ໂອກາດໃນການຫາລາຍໄດ້ ແລະ ເປັນເຂດທີ່ມີການເນັ້ນທາງດ້ານຮີດຄອງປະເພນີເປັນຫຼັກ. ນອກຈາກນັ້ນແລ້ວ, ມາດຕະຖານການຄັດເລືອກແມ່ນອີງຕາມ: 1) ພື້ນທີ່ໃນຕົວເມືອງ ແລະ ຊົນນະບົດ, 2) ອັດຕາໃນລະດັບສູງຂອງກໍລະນີການໃຊ້ຄວາມຮຸນແຮງທີ່ຖືກຈຳແນກໂດຍການສຳຫຼວດທາງດ້ານປະລິມານ, 3) ສະພາບການທາງດ້ານເສດຖະກິດ-ສັງຄົມ ທີ່ມີຄວາມແຕກຕ່າງກັນ ແລະ 4) ພື້ນຖານທາງດ້ານຊົນເຜົ່າ.

ການສຳພາດໃນຂັ້ນພາກສະໜາມແມ່ນໄດ້ຖືກນຳພາໂດຍສະຖາບັນເບີເນັດ ເຊິ່ງໄດ້ແບ່ງການສຳຫຼວດອອກເປັນ 2 ທີມ, ທີມແມ່ຍິງ ແລະ ທີມຜູ້ຊາຍ, ໂດຍມີການຊີ້ນຳໂດຍຜູ້ຈັດການ ແລະ ຜູ້ແທນຂອງຫ້ອງການຂັ້ນສູນກາງ. ສະມາຊິກທຸກໆທ່ານ ລວມທັງຜູ້ຈັດການ ແລະ ຜູ້ແທນຂອງຫ້ອງການຂັ້ນສູນກາງໄດ້ເຂົ້າຮ່ວມການຝຶກອົບຮົມກ່ອນການລົງພາກສະໜາມ ເຊິ່ງໄດ້ມີການນຳພາໂດຍຜູ້ຊ່ວຍຊານ ແລະ ການສະໜັບສະໜູນຈາກອົງການ UNFPA ເພື່ອຄວາມຮູ້ ແລະ ທັກສະ ທີ່ຈຳເປັນທາງດ້ານບົດບາດຍິງ-ຊາຍ, ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ, ວິທີການສຳຫຼວດ ໂດຍສຸມໃສ່ວິທີການວິເຄາະທາງດ້ານຄຸນນະພາບ, ທັກສະການສຳພາດ ແລະ ການຝຶກການສະແດງບົດບາດສົມມຸດ.

### 2.3.3 ການເກັບກຳຂໍ້ມູນ

(1) ການສຳພາດແບບເຈາະເລິກ

ການສຳພາດແບບເຈາະເລິກ ໄດ້ສຸມໃສ່ບັນດາແມ່ຍິງທີ່ມີການເປີດເຜີຍການຖືກໃຊ້ຄວາມຮຸນແຮງ, ທັງໃນປັດຈຸບັນ ແລະ ໃນອະດີດ, ໂດຍບັນດາຄູ່ຮ່ວມຊີວິດຂອງພວກເຂົາ ເພື່ອເຮັດໃຫ້ເຂົ້າໃຈເພີ່ມຂຶ້ນກ່ຽວກັບ:

- ບັນຫາຫຼັກທີ່ແມ່ຍິງ ແລະ ຜູ້ຊາຍໄດ້ປະເຊີນ ໃນຄອບຄົວ.
- ທັດສະນະຂອງສະພາບການໃນການເກີດການໃຊ້ຄວາມຮຸນແຮງ ແລະ ສາເຫດ.
- ສະຖານະການທີ່ການປະພຶດໃນການໃຊ້ຄວາມຮຸນແຮງໃນສະຖານທີ່ ທີ່ແຕກຕ່າງກັນຈະຖືກຍອມຮັບໄດ້ ແລະ ຍອມຮັບບໍ່ໄດ້.
- ຜົນກະທົບຂອງການໃຊ້ຄວາມຮຸນແຮງໃນຄອບຄົວຕໍ່ແມ່ຍິງ, ຄອບຄົວ ແລະ ຊຸມຊົນ.
- ລະບົບການປ້ອງກັນ ແລະ ການສະໜັບສະໜູນ ໃນບ້ານທີ່ມີຜູ້ເຄາະຮ້າຍອາໄສຢູ່.
- ຄຳແນະນຳໃນການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

(2) ການສົນທະນາກຸ່ມ

ກຸ່ມຂອງບຸກຄົນ (6 ຫາ 8) ທີ່ມີພື້ນຖານແຕກຕ່າງກັນ (ແມ່ຍິງ ແລະ ຜູ້ຊາຍ ທີ່ເຄີຍມີຄູ່ຮ່ວມຊີວິດ, ໄວໜຸ່ມຍິງ-ຊາຍ ທີ່ຍັງໂສດ) ໄດ້ຖືກສຸ່ມເລືອກໂດຍຄະນະກຳມະການເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ຂັ້ນກະຊວງ ແລະ ຜູ້ນຳຂັ້ນທ້ອງຖິ່ນ ຈາກ 3 ເຂດດັ່ງກ່າວ ເພື່ອການແບ່ງປັນຄວາມສົນໃຈທີ່ຄ້າຍຄືກັນ ແລະ ຄຸນລັກສະນະທີ່ເຊື່ອມໂຍງກັບບັນດາຫົວຂໍ້ທີ່ຈະສົນທະນາກັນ. ບັນດາຜູ້ເຂົ້າຮ່ວມບໍ່ໄດ້ຖືກເລືອກອີງຕາມປະສົບການ ແລະ ຄວາມຮູ້ທາງດ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການສົນທະນາກຸ່ມກໍ່ບໍ່ໄດ້ຈັດຂຶ້ນເພື່ອການໄດ້ມາຂອງເລື່ອງເລົ່າຈາກຜູ້ທີ່ເຄີຍປະເຊີນການຖືກໃຊ້ຄວາມຮຸນແຮງ. ແຕ່ການສົນທະນານີ້ ແມ່ນໄດ້ສຶກສາທັດສະນະຄະຕິ ແລະ ຄວາມເຊື່ອຂອງແມ່ຍິງ ແລະ ຜູ້ຊາຍ ເຊັ່ນດຽວກັນກັບ ມຸມມອງທີ່ຄ້າຍຄືກັນໃນການໃຊ້ຄວາມຮຸນແຮງຕໍ່ແມຍິງ ເຊັ່ນວ່າ:

- ບັນຫາຫຼັກທີ່ແມ່ຍິງ ແລະ ຜູ້ຊາຍໄດ້ປະເຊີນ, ລວມທັງໜ້າທີ່ ແລະ ມຸມມອງຂອງພວກເຂົາ.
- ທັດສະນະຂອງສະພາບການເກີດການໃຊ້ຄວາມຮຸນແຮງ ແລະ ສາເຫດ.
- ສະຖານະການທີ່ການປະພຶດໃນການໃຊ້ຄວາມຮຸນແຮງໃນສະຖານທີ່ ທີ່ແຕກຕ່າງກັນຈະຖືກຍອມຮັບໄດ້ ແລະ ຍອມຮັບບໍ່ໄດ້.
- ສະຖານະການທີ່ມີການແຊກແຊງໂດຍສະມາຊິກຄອບຄົວ, ເພື່ອນບ້ານ ແລະ ໝູ່ເພື່ອນ ມີຄວາມເໝາະສົມ.
- ຜົນກະທົບຂອງການໃຊ້ຄວາມຮຸນແຮງໃນຄອບຄົວຕໍ່ແມ່ຍິງ, ຄອບຄົວ ແລະ ຊຸມຊົນ.
- ມຸມມອງທີ່ການໃຊ້ຄວາມຮຸນແຮງໃນຄອບຄົວ ແມ່ນບັນຫາສຳຄັນ ທາງດ້ານສຸຂະພາບ, ຜູ້ຊາຍ ແລະ/ຫຼື ຄອບຄົວ ເປັນບັນຫາທີ່ມີຄວາມກັງວົນ.
- ການຈຳແນກ ທັດສະນະຄະຕິ ແລະ ການປະຕິບັດງານຂອງຊຸມຊົນ ໃນການຕອບໂຕ້ຕໍ່ການໃຊ້ຄວາມຮຸນແຮງ.
- ປະເມີນລະບົບການຊ່ວຍເຫຼືອ ແລະ ການບໍລິການໃນປັດຈຸບັນ ເພື່ອແມ່ຍິງທີ່ຖືກໃຊ້ຄວາມຮຸນແຮງ.

ເພື່ອສະໜອງຫຼັກການໃນການສົນທະນາ, ຜູ້ເຂົ້າຮ່ວມໃນການສົນທະນາກຸ່ມແມ່ນໄດ້ຖືກສະໜອງຄຳຖາມ ແລະ ຖາມ ໜຶ່ງ ຫຼື ສອງເຫດການ ອີງຕາມຄວາມແຕກຕ່າງທາງດ້ານກຸ່ມອາຍຸ (ຕົວຢ່າງ: ກຸ່ມໄວໜຸ່ມ ແລະ ກຸ່ມອາວຸໂສ/ແຕ່ງງານແລ້ວ) (ເບິ່ງເອກະສານຊ້ອນທ້າຍທີ III).

(3) ການສຳພາດຜູ້ໃຫ້ຂໍ້ມູນຫຼັກ

ການສຳພາດຜູ້ໃຫ້ຂໍ້ມູນຫຼັກໄດ້ຖືກຈັດຕັ້ງຂຶ້ນເພື່ອເກັບກຳຂໍ້ມູນຈາກບັນດາບຸກຄົນທີ່ຢູ່ໃນກຸ່ມ ແລະ ໃນອົງການທີ່ແຕກຕ່າງກັນ ໂດຍມີຄວາມຮູ້ ແລະ ຄວາມສາມາດມີໜຶ່ງໃນການອະທິບາຍສາຍພົວພັນລະຫວ່າງແມ່ຍິງ ແລະ ຜູ້ຊາຍ, ສະຖານະການ, ລະບົບການຕອບໂຕ້ ແລະ ຊ່ວຍເຫຼືອ ໃນການໃຊ້ຄວາມຮຸນແຮງໃນຊຸມຊົນ. ການສຳພາດໃນປະເພດນີ້ ມີເປົ້າໝາຍສະເພາະຄື:

- ອະທິບາຍບັນຫາຄອບຄົວ ແລະ ສາຍພົວພັນລະຫວ່າງແມ່ຍິງ ແລະ ຜູ້ຊາຍ, ທຳມະຊາດ ແລະ ຂະໜາດຂອງການໃຊ້ຄວາມຮຸນແຮງ ຫຼື ຂໍ້ຂັດແຍ່ງ.
- ຈຳແນກມຸມມອງ, ສາເຫດ, ຄວາມສ່ຽງ ແລະ ຜົນກະທົບຂອງການໃຊ້ຄວາມຮຸນແຮງ.
- ສຳຫຼວດມຸມມອງຂອງການແຊກແຊງຈາກພາຍນອກ (ແມ່ນໃຜ, ເມື່ອໃດ ແລະ ແນວໃດ).
- ຈຳແນກຊັບພະຍາກອນ, ບໍລິການ ແລະ ການຊ່ວຍເຫຼືອທີ່ມີຢູ່ ສຳລັບຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ.
- ການສະເໜີບັນດາຄຳແນະນຳສຳລັບການສ້າງນະໂຍບາຍ ແລະ ການພັດທະນາບັນດາໂຄງການຕ່າງໆ.

#### 2.3.4 ການວິເຄາະ

ການສຳຫຼວດທາງດ້ານຄຸນນະພາບ ລວມມີການໃສ່ລະຫັດ ໂດຍຜ່ານເຕັກນິກການຕີຄວາມໝາຍ. ຫຼັງຈາກການຮອບຮອມຂໍ້ມູນເຂົ້າໃນກຸ່ມທີ່ມີຄວາມໝາຍ, ອັດຕາ, ຄວາມຄ້າຍຄືກັນ, ຄວາມແຕກຕ່າງ ແລະ ສາຍພົວພັນລະຫວ່າງບັນດາລະຫັດ ໄດ້ຮັບການຈຳແນກ ແລະ ສະຫຼຸບ. ຂໍ້ມູນທັງໝົດໄດ້ຮັບການໃສ່ລະຫັດ ແລະ ຈັດລຽງລຳດັບ, ໂດຍການຈັດລຽງບັນດາລະຫັດທີ່ແຕກຕ່າງກັນ ຈົນເຖິງໃຈຄວາມທີ່ມີຄວາມເປັນໄປໄດ້. ບັນດາລະຫັດຂໍ້ມູນຕ່າງໆທີ່ຖືກນຳອອກເພື່ອຈຳແນກໃຈຄວາມທີ່ເປັນແຕ່ລະປະເພດສຳລັບການວິເຄາະ. 'ການວິເຄາະໃຈຄວາມ' ນີ້ແມ່ນໄດ້ມີການທົດສອບໂດຍລະອຽດ ຫຼື ມີການວິເຄາະບັນດາໃຈຄວາມທີ່ສຳຄັນໃນການອະທິບາຍບັນດາເຫດການສະເພາະ ແລະ ການປະເຊີນການໃຊ້ຄວາມຮຸນແຮງ. ຫຼັງຈາກການສຳພາດໄດ້ສຳເລັດແລ້ວ, ຂໍ້ມູນດັ່ງກ່າວໄດ້ຖືກບັນທຶກ ແລະ ໃສ່ລະຫັດອີງຕາມ ແຜນທີ່/ແບບ ຂອງໃຈຄວາມ ທີ່ພັດທະນາຂຶ້ນເພື່ອການວິເຄາະ, ໂດຍການນຳໃຊ້ຊອຟແວ ເຊັ່ນ: NVivo ver.10 (QSR Int'l).

### 2.4 ການພິຈາລະນາທາງດ້ານຈັນຍາທຳແລະ ຄວາມປອດໄພ

ຄວາມປອດໄພຂອງຜູ້ຖືກສຳພາດ ແລະ ນັກເດີນສຳຫຼວດ ແມ່ນສິ່ງທີ່ສຳຄັນທີ່ສຸດໃນຕະຫຼອດໄລຍະເວລາຂອງການສຳຫຼວດ ແລະ ເພື່ອໃຫ້ເປັນໄປຕາມຄູ່ມືຂອງອົງການອະນາໄມໂລກ, ສຳລັບການພິຈາລະ ນາທາງດ້ານຈັນຍາບັນ ແລະ ຄວາມປອດໄພ (ອົງການອະນາໄມໂລກ, 2001), ໂດຍສະເພາະການນຳໃຊ້ວິທີການໃນການເອົາແມ່ຍິງເປັນຈຸດໃຈກາງ ແລະ 8 ປະເດັນຢູ່ໃນຄູ່ມືຂອງອົງການອະນາໄມໂລກສຳລັບການພິຈາລະນາທາງດ້ານຈັນຍາບັນ ແລະ ຄວາມປອດໄພ (2001) ເຊິ່ງໄດ້ແນະນຳການສຳຫຼວດກ່ຽວກັບການໃຊ້ຄວາມຮຸນແຮງໃນຄອບຄົວ. ການອະນຸມັດທາງດ້ານຈັນຍາບັນ ສຳລັບການສຳຫຼວດທາງດ້ານປະລິມານ ແມ່ນໄດ້ມາໂດຍຄະນະຊີ້ນຳລະດັບຊາດຂອງການສຳຫຼວດ ເຊິ່ງປະກອບມີບັນດາກະຊວງທີ່ກ່ຽວຂ້ອງເຊັ່ນ: ຄະນະກຳມາທິການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ, ສູນສະຖິຕິແຫ່ງຊາດ,ສູນກາງສະຫະພັນແມ່ຍິງລາວ, ກະຊວງສາທາລະນະສຸກ, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນຄວາມສະຫງົບ. ສຳລັບການສຳຫຼວດທາງດ້ານຄຸນນະພາບແລ້ວ, ການອະນຸມັດດ້ານຈັນຍາບັນ ແມ່ນໄດ້ຮັບອະນຸມັດຈາກຄະນະກຳມະການຈັນຍາບັນແຫ່ງຊາດເພື່ອການສຳຫຼວດທາງດ້ານສຸຂະພາບ.

ເພື່ອຮັບປະກັນການພິຈາລະນາທາງດ້ານຈັນຍາທຳ ແລະ ຄວາມປອດໄພໃນລະດັບສູງ ການສຳຫຼວດນີ້ແມ່ນໄດ້ເນັ້ນຫຼັກການດັ່ງລຸ່ມນີ້:

#### 5) ການຂໍອະນຸຍາດ

ກ່ອນການສຳພາດ/ສົນທະນາກຸ່ມ, ບັນດາຜູ້ໃຫ້ສຳພາດທາງດ້ານປະລິມານ ແລະ ດ້ານຄຸນນະພາບ ທຸກໆຄົນທີ່ເຂົ້າຮ່ວມໃນການສຳຫຼວດແມ່ນໄດ້ຮັບການແຈ້ງເຖິງຈຸດປະສົງທີ່ແທ້ຈິງໃນການສຳຫຼວດ ແລະ ມີການຂໍອະນຸຍາດຕາມລະບຽບການດ້ວຍຄວາມສະໝັກໃຈຂອງຜູ້ຖືກສຳພາດ, ການຮັກສາຄວາມລັບ ການບໍ່ລະບຸຊື່ໃນການບັນທຶກຂໍ້ມູນຕ່າງໆ ແລະ ສິດທິໃນການປະຕິເສດການຕອບບາງຄຳຖາມ. ສຳລັບການສຳຫຼວດທາງດ້ານຄຸນນະພາບນີ້, ກ່ອນການສົນທະນາກຸ່ມ ແລະ ການສຳພາດສ່ວນບຸກຄົນ, ໄດ້ມີການແຈ້ງເພື່ອຂໍອະນຸຍາດໃນການບັນທຶກການສົນທະນາ, ລວມທັງການປິດລັບ ແລະ ການປົກປ້ອງຕົວຕົນຂອງຜູ້ໃຫ້ສຳພາດທັງໝົດ.

#### 6) ການເຫັນດີຈາກຄະນະບ້ານ

ເຖິງວ່າການສຳພາດແມ່ນສຳພາດຂໍ້ມູນສ່ວນບຸກຄົນ, ແຕ່ກໍ່ເປັນສິ່ງສຳຄັນຫຼາຍທີ່ຈະຕ້ອງໄດ້ຮັບການສະໜັບສະໜູນຈາກບ້ານໃນການສຳຫຼວດ. ການມີສ່ວນຮ່ວມຂອງອຳນາດການປົກຄອງທ້ອງຖິ່ນ, ເຊັ່ນ: ນາຍບ້ານ, ໂດຍການປະສານງານຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຕ່ລະຂັ້ນ ກ່ອນການລົງວຽກພາກສະໜາມ ເພື່ອອະທິບາຍຈຸດປະສົງລວມຂອງການສຳຫຼວດ. ເພື່ອເຫດຜົນຂອງຄວາມປອດໄພ, ຄະນະສຳຫຼວດໄດ້ແນະນຳຈຸດປະສົງໃຫ້ຄະນະບ້ານໃນຫົວຂໍ້: 'ການສຳຫຼວດສຸຂະພາບ ຫຼື ປະສົບການຊີວິດຂອງແມ່ຍິງ' ເຊິ່ງບໍ່ໃຫ້ຮູ້ວ່າເປັນການສຳຫຼວດກ່ຽວກັບ 'ການໃຊ້ຄວາມຮຸນແຮງ ຫຼື ການລ່ວງລະເມີດ' ແລະ ວິທີການນີ້ແມ່ນໄດ້ຄຳນຶງເຖິງການສຳຫຼວດທີ່ບໍ່ມີຫົວຂໍ້ສະເພາະ, ມີການໃຊ້ຄຳສັບໂດຍລວມ.

#### 7) ຮັບປະກັນຄວາມປອດໄພຂອງແມ່ຍິງ

ໄລລະຫວ່າງການສຳພາດ, ຄະນະສຳຫຼວດມີບຸລິມະສິດຫຼັກໃນການຈັດສະພາບແວດລ້ອມທີ່ປອດໄພສຳລັບຜູ້ໃຫ້ສຳພາດ ເພື່ອການມີສ່ວນຮ່ວມ ແລະ ຫຼີກລ່ຽງຜົນສະທ້ອນ ຫຼື ການໃຊ້ຄວາມຮຸນແຮງເພີ່ມຂຶ້ນ ຖ້າວ່າຄູ່ຮ່ວມຊີວິດຂອງເຂົາເຈົ້າຮູ້ວ່າແມ່ຍິງໄດ້ບອກຂໍ້ມູນ. ເພື່ອການຫຼີກລ່ຽງຄວາມສ່ຽງດັ່ງກ່າວ, ຄະນະສຳຫຼວດໄດ້ສຳພາດແມ່ຍິງ 1 ຄົນ ຕໍ່ 1 ຄົວເຮືອນ ເພື່ອປົກປ້ອງຄວາມເປັນສ່ວນຕົວ ແລະ ຮັບປະກັນວ່າສະມາຊິກໃນຄອບຄົວຄົນອື່ນໆ ຈະບໍ່ຮູ້ຄຳຖາມດັ່ງກ່າວ. ສິ່ງເຫຼົ່ານີ້ເຮັດໃຫ້ຮັບປະກັນຄວາມປອດໄພຂອງບັນດາຜູ້ໃຫ້ສຳພາດ ລວມທັງນັກເດີນສຳຫຼວດອີກດ້ວຍ.

#### 8) ການປົກປ້ອງຄວາມເປັນສ່ວນຕົວ ແລະ ຄວາມລັບຂອງຜູ້ເຂົ້າຮ່ວມ

ການປົກປ້ອງຄວາມເປັນສ່ວນຕົວຂອງຜູ້ໃຫ້ສຳພາດ ເຊັ່ນດຽວກັນກັບສິດທິ ແລະ ຄວາມປອດໄພແມ່ນມີຄວາມສຳຄັນຫຼາຍ. ອີງຕາມການແນະນຳຂອງອົງການອະນາໄມໂລກ, ການສຳຫຼວດໃນຄັ້ງນີ້ໄດ້ຮັບປະກັນຄວາມເປັນສ່ວນຕົວຢ່າງເຕັມຂັ້ນໃນລະຫວ່າງການສຳພາດ, ຍົກເວັ້ນການເຂົ້າຮ່ວມຂອງເດັກນ້ອຍ (ອາຍຸຕ່ຳກວ່າ 2 ປີ) ແລະ ການສຳຫຼວດກໍ່ມີຄວາມເຂັ້ມງວດຕໍ່ນະໂຍບາຍທີ່ຈະເລືອກແມ່ຍິງພຽງຄົນດຽວຕໍ່ 1 ຄອບຄົວ. ສຳລັບການສຳຫຼວດທາງດ້ານປະລິມານ, ການສຳພາດທັງໝົດແມ່ນຈະໄດ້ຈັດຂຶ້ນຢູ່ເຮືອນ ຫຼື ໃກ້ເຮືອນຂອງຜູ້ຖືກສຳພາດເພື່ອຄວາມປອດໄພ ແລະ ເຮັດໃຫ້ຜູ້ຖືກສຳພາດຮູ້ສຶກສະດວກ. ສຳລັບການສຳຫຼວດທາງດ້ານຄຸນນະພາບ, ການສຳພາດແມ່ຍິງຜູ້ຖືກຄາະຮ້າຍ ແມ່ນຈະສຳພາດຢູ່ເຮືອນຂອງເຂົາເຈົ້າ ຫຼື ຢູ່ໃນ

ສະຖານທີ່ ທີ່ຫ່າງຈາກເຮືອນຂອງເຂົາເຈົ້າຖ້າວ່າສາມີຂອງເຂົາເຈົ້າຍັງອາໄສຢູ່ໃນເຮືອນນັ້ນຢູ່. ການສໍາພາດກໍ່ຍັງຖືກຈັດຂຶ້ນຢູ່ຫ້ອງການຂອງສະຖາບັນເບີເນັດ, ໃນຮ້ານອາຫານ ແລະ ເຮືອນຂອງບຸກຄົນທີສາມ ຖ້າວ່າມີຄວາມສ່ຽງທີ່ຈະປະເຊີນກັບຄູ່ຮ່ວມຊີວິດຂອງແມ່ຍິງຖ້າວ່າແມ່ຍິງຄົນນັ້ນຍັງບໍ່ທັນຢ່າຮ້າງ ຫຼື ເປັນໝ້າຍ.

**9) ການເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມເຈັບປວດໜ້ອຍທີ່ສຸດ**

ການສໍາພາດຈະໃຊ້ເວລາປະມານ 1 ຊົ່ວໂມງ, ເຊິ່ງອາດຈະເຮັດໃຫ້ແມ່ຍິງທີ່ຖືກສໍາພາດຮູ້ສຶກເມື່ອຍພາຍຫຼັງການເປີດເຜີຍການຖືກໃຊ້ຄວາມຮຸນແຮງໃນອະດີດ. ການສໍາພາດໄດ້ມີບັນດາຄໍາຖາມທີ່ມີຄວາມລະອຽດອ່ອນ ທີ່ອາດຈະແຕະຕ້ອງຄວາມຮູ້ສຶກຂອງຜູ້ຖືກສໍາພາດ ແລະ ເຈັບປວດໃນການຮື້ຟື້ນເຫດການ ຫຼື ຄວາມຊົງຈໍາໃນທາງລົບນັ້ນ. ດັ່ງນັ້ນ, ນັກສໍາພາດຈຶ່ງຖືກຝຶກໃຫ້ມີຄວາມເຂົ້າໃຈຕໍ່ບັນດາຜົນກະທົບຂອງຄໍາຖາມຕໍ່ຜູ້ຖືກສໍາພາດ ແລະ ວິທີການທີ່ດີທີ່ສຸດໃນການແກ້ໄຂບັນຫາເຫຼົ່ານັ້ນ. ຖ້າວ່າຄໍາຖາມໃດໜຶ່ງເປັນສາເຫດເຮັດໃຫ້ເກີດຄວາມຕຶງຄຽດຢ່າງຮຸນແຮງທາງດ້ານຈິດໃຈ, ນັກສໍາພາດຕ້ອງຢຸດພັກ ຫຼື ປ່ຽນຄໍາຖາມໃໝ່. ນັກສໍາພາດຍັງຖືກຝຶກມາເພື່ອມີທັກສະໃນການຟັງຢ່າງເຫັນອົກເຫັນໃຈຄົນອື່ນ, ແຕ່ໜ້າທີ່ຂອງເຂົາເຈົ້າບໍ່ແມ່ນການແກ້ໄຂບັນຫາ, ໃຫ້ຄໍາປຶກສາ ຫຼື ການຕັດສິນບັນດາເລື່ອງເຫຼົ່ານັ້ນ.

**10) ການເຜີຍແຜ່ຂໍ້ມູນ ແລະ ການສົ່ງຕໍ່ ເພື່ອການເບິ່ງແຍງ ແລະ ການຊ່ວຍເຫຼືອ**

ຄູ່ມືຂອງອົງການອະນາໄມໂລກແນະນໍາວ່າ ນັກສໍາພາດ/ນັກເດີນສໍາຫຼວດ ມີໜ້າທີ່ ແລະ ຈັນຍາທໍາໃນການສະໜອງຂໍ້ມູນ ຫຼື ສະຖານທີ່ໃຫ້ບໍລິການແກ່ຜູ້ຖືກສໍາພາດຖ້າຕ້ອງການ. ເອກະສານທີ່ເອົາໄປແຈກຢາຍໃຫ້ຜູ້ຖືກສໍາພາດມີຂໍ້ມູນ ສຸຂະພາບຈະເລີນພັນ ແລະ ສຸຂະພາບເດັກ ລວມທັງຂໍ້ມູນກ່ຽວກັບສະຖານທີ່ໃຫ້ຄໍາປຶກສາແກ່ແມ່ຍິງທີ່ຖືກຄວາມຮຸນແຮງ ແລະ ສູນບໍລິການຊ່ວຍເຫຼືອໃນແຕ່ລະແຂວງ. ຂໍ້ມູນດັ່ງກ່າວນີ້ຍັງໄດ້ສະໜອງໃຫ້ແກ່ນັກເດີນສໍາຫຼວດທີ່ອາດຕ້ອງການການໃຫ້ຄໍາປຶກສາພາຍຫຼັງທີ່ໄດ້ຮັບຮູ້ບັນຫາຕ່າງໆທີ່ໄດ້ຮັບຟັງຈາກການສໍາພາດ. ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ຂອງສູນກາງສະຫະພັນແມ່ຍິງລາວ ມີຄວາມພ້ອມໃນການໃຫ້ການຊ່ວຍເຫຼືອທັນທີໃນກໍລະນີທີ່ຕ້ອງການ.

## 2.5 ດ້ານດີ ແລະ ຂໍ້ຈໍາກັດໃນການສໍາຫຼວດ

ການສໍາຫຼວດໃນຄັ້ງນີ້ ແມ່ນການສໍາຫຼວດຄັ້ງທໍາອິດທີ່ມີຄວາມລະອຽດ ແລະ ເປັນການສໍາຫຼວດລະດັບຊາດທີ່ຄິດໄລ່ຕາມຈໍານວນປະຊາກອນເພື່ອຄິດໄລ່ຂະໜາດຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ, ເຊິ່ງລວມມີອັດຕາສ່ວນ, ຮູບແບບ/ປະເພດ, ຜົນກະທົບ, ການຕອບໂຕ້ ແລະ ຍຸດທະສາດຕ່າງໆ. ການສໍາຫຼວດຄັ້ງນີ້ແມ່ນໄດ້ນໍາໃຊ້ເຄື່ອງມືຂອງອົງການອະນາໄມໂລກທີ່ນໍາໃຊ້ສໍາຫຼວດໃນຫຼາຍປະເທດທົ່ວໂລກໃນການອອກແບບ, ການວິໄຈ ແລະ ນໍາສະເໜີຜົນຂອງການສໍາຫຼວດ. ຜົນການສໍາຫຼວດໃນຄັ້ງນີ້ ບໍ່ພຽງແຕ່ຈະເຮັດໃຫ້ເຫັນພາບລວມໃນການໃຊ້ຄວາມຮຸນແຮງທີ່ເກີດຂຶ້ນກັບແມ່ຍິງຫຼາຍໆຄົນເທົ່ານັ້ນ, ແຕ່ຍັງໄດ້ເຮັດໜ້າທີ່ ທີ່ສໍາຄັນໃນການໃຫ້ຄວາມຮູ້ໃຫ້ແກ່ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ສາທາລະນະໄດ້ຮູ້ວ່າບັນຫານີ້ມີຄວາມລະອຽດອ່ອນແນວໃດ, ແລະ ບັນຫານີ້ຄວນໄດ້ຮັບການແກ້ໄຂ. ນອກຈາກນີ້ແລ້ວ, ຍັງມີພະນັກງານຈາກລັດຖະບານຫຼາຍໆທ່ານເຊັ່ນ ຈາກ ສູນສະຖິຕິແຫ່ງຊາດ, ຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ສູນກາງສະຫະພັນແມ່ຍິງລາວ ເຊັ່ນດຽວກັນກັບບັນດາອົງການຕ່າງໆ ຂອງອົງການສະຫະປະຊາຊາດ ແລະ ສະຖາບັນວິໄຈ ໃນການປະກອບສ່ວນ ແລະ ການແບ່ງປັນບັນດາຄວາມຮູ້ ແລະ ປະສົບການ ໂດຍຜ່ານການຮຽນຮູ້ແບບຜູ້ໃຫຍ່. ຜົນທີ່ໄດ້ຮັບຄື ຂີດຄວາມສາມາດຂອງພາກສ່ວນທີ່ກ່ຽວຂ້ອງທັງໝົດເຫຼົ່ານີ້ໄດ້ເພີ່ມຂຶ້ນ ເຊິ່ງເຮັດໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ ເຊັ່ນດຽວກັນກັບການເພີ່ມຂຶ້ນຂອງທັກສະໃນການວັດແທກ ແລະ ການວິເຄາະ ການປຽບທຽບຂໍ້ມູນຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງອີງຕາມມາດຕະຖານສາກົນ.

ຜົນໄດ້ຮັບຂອງການສໍາຫຼວດຄັ້ງນີ້ແມ່ນມີຄຸນນະພາບດີ, ແຕ່ການສໍາຫຼວດກໍ່ຍັງມີບາງຂໍ້ຈໍາກັດເຊັ່ນກັນ. ຂໍ້ຈໍາກັດທໍາອິດ, ທໍາມະຊາດຂອງການສໍາຫຼວດແບບມີຫຼາຍພາກທີ່ສະຫຼັບສັບຊ້ອນທີ່ສະແດງໃຫ້ເຫັນເຖິງການພົວພັນກັນຂອງສອງກຸ່ມຄົນ ຫຼື ສອງເຫດການ, ແຕ່ບໍ່ສາມາດຢັ້ງຢືນຜົນກະທົບຂອງແຕ່ລະສາເຫດໄດ້. ໂດຍທໍາມະຊາດທີ່ມີຄວາມຫຼາກຫຼາຍຂອງບັນຫາ, ການສໍາຫຼວດວິໄຈອື່ນໆທີ່ກ່ຽວກັບຂ້ອງກັບໃຊ້ຄວາມຮຸນແຮງຕໍ່ແມ່ຍິງກໍ່ເປັນຮູບແບບການສໍາຫຼວດໃນພາກທີ່ສະລັບສັບຊ້ອນກັນເຊັ່ນກັນ. ເຊິ່ງໃນອະນາຄົດ, ການສໍາຫຼວດຄວນສຶກສາເພີ່ມເຕີມກ່ຽວກັບຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (ເຊັ່ນ ຜົນກະທົບຕໍ່ສຸຂະພາບ), ສາເຫດຂອງຄວາມຮຸນແຮງ, ການປ້ອງກັນ ແລະ/ຫຼື ໂຄງການສໍາຫຼວດໄລຍະຍາວທີ່ມີປະສິດທິພາບ.

ຂໍ້ຈໍາກັດທີສອງ, ການສໍາຫຼວດໄດ້ນໍາໃຊ້ແບບສອບຖາມທີ່ໄດ້ຮັບການອອກແບບຢ່າງລະອຽດໂດຍອົງການອະນາໄມໂລກ ແລະໄດ້ດັດປັບພຽງເລັກໜ້ອຍເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງ ສປປ ລາວ ຄືກັນກັບການສໍາຫຼວດອື່ນໆຂອງອົງການອະນາໄມໂລກໃນຫຼາຍປະເທດ, ການຕອບແບບສອບຖາມທີ່ອີງໃສ່ການລາຍຂອງບຸກຄົນອາດຈະມີຄວາມລໍາອຽງໃນດ້ານການຈື່ຈໍາ ແລະ ວັດທະນະທໍາຂອງແມ່ຍິງທີ່ບໍ່ກ້າເປີດເຜີຍຄວາມເປັນຈິງ. ມີແມ່ຍິງຫຼາຍຄົນທີ່ເຄີຍຖືກຄວາມຮຸນແຮງໃນຊ່ວງຊີວິດທີ່ຜ່ານມາ ແຕ່ເຂົາເຈົ້າບໍ່ໄດ້ຖືກໃຊ້ຄວາມຮຸນແຮງໃນປັດຈຸບັນ, ຄວາມຈື່ຈໍາຂອງເຂົາເຈົ້າໃນເລື່ອງທີ່ເກີດຂຶ້ນ ຫຼື ການພົວພັນກັນອາດເຊື່ອຖືບໍ່ໄດ້. ຄວາມລໍາອຽງທີ່ເກີດຈາກວັດທະນະທໍາ ເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ສະພາບຈຸດພິເສດຂອງ ສປປ ລາວ, ຍ້ອນປະເພນີທາງສັງຄົມ ແລະ ທາງດ້ານບົດບາດຍິງ-ຊາຍ ເຊິ່ງເຮັດໃຫ້ເກີດມີສະພາບແວດລ້ອມທີ່ຍອມຮັບການໃຊ້ຄວາມຮຸນແຮງໄດ້.

ຂໍ້ຈໍາກັດທີສາມ, ການຄັດເລືອກແມ່ຍິງພຽງຄົນດຽວເປັນຕົວແທນໃຫ້ແຕ່ລະຄອບຄົວ ອາດຈະເຮັດໃຫ້ບໍ່ສາມາດເປັນຕົວແທນໃຫ້ກັບຄົວເຮືອນທີ່ມີແມ່ຍິງຫຼາຍກວ່າໜຶ່ງຄົນ. ການສໍາຫຼວດຂອງອົງການອະນາໄມໂລກທີ່ດໍາເນີນການສໍາຫຼວດໃນຫຼາຍປະເທດ ແມ່ນໄດ້ພະຍາຍາມທົດລອງໂດຍການຊັ່ງຊາອັດຕາສ່ວນຜົນໄດ້ຮັບເພື່ອທົດແທນໃຫ້ຈໍານວນແມ່ຍິງທີ່ມີເງື່ອນໄຂທີ່ເປັນຕົວແທນໃຫ້ແຕ່ລະຄົວເຮືອນ (Garcia-Moreno ພ້ອມດ້ວຍຄະນະ.,

2005). ເພື່ອໃຫ້ສອກຄ່ອງນັ້ນ, ການສຳຫຼວດຄັ້ງນີ້ກໍ່ໄດ້ອີງໃສ່ວິທີການສຳຫຼວດຂອງອົງການອະນາໄມໂລກ.

ຂໍ້ຈຳກັດທີສີ່, ເຖິງວ່າຂໍ້ມູນທາງດ້ານຄຸນນະພາບແມ່ນໄດ້ຖືກເກັບກຳເພື່ອສະໜັບສະໜູນໃຫ້ກັບການອະທິບາຍຂອງຂໍ້ມູນທາງດ້ານປະລິມານ, ຈຳນວນຂອງກຸ່ມຕົວຢ່າງໃນການສຳຫຼວດທາງດ້ານຄຸນນະພາບຍັງມີຈຳກັດ. ນີ້ແມ່ນສະພາບຄວາມເປັນຈິງຂອງບັນດາກໍລະນີການໃຊ້ຄວາມຮຸນແຮງທາງເພດ ແລະ ຂໍ້ມູນໃນແຕ່ລະພາກ, ໂດຍຫຼັກການແລ້ວ ຍັງມີຂໍ້ຈຳກັດໃນດ້ານຊັບພະຍາກອນມະນຸດ, ເວລາ ແລະ ສະພາບອາກາດ. ລະດູຝົນໄດ້ເຮັດໃຫ້ຄະນະສຳຫຼວດມີຄວາມຈຳກັດໃນການເຂົ້າເຖິງບ້ານເປົ້າໝາຍທີ່ບໍ່ມີເສັ້ນທາງຕັດຜ່ານ ແລະ ໃນເຂດພື້ນທີ່ຊົນນະບົດທີ່ມີກຸ່ມເຜົ່າດຳລົງຊີວິດຢູ່. ເຖິງຢ່າງໃດກໍ່ຕາມ, ບັນດາເລື່ອງເລົ່າຕ່າງໆທີ່ມີຄຸນຄ່າ ແລະ ເລິກເຊິ່ງ ແມ່ນຖືກບັນທຶກຈາກບັນດາຜູ້ເຂົ້າຮ່ວມ ເຊິ່ງໄດ້ໃຫ້ຂໍ້ມູນຢ່າງລະອຽດເພີ່ມຕື່ມໃສ່ໃຫ້ສົມບູນ ແກ່ການວິໄຈທາງດ້ານປະລິມານ. ເຊິ່ງດ້ານປະລິມານແມ່ນສຸມໃສ່ພຽງແຕ່ຄຳຕອບ "ແມ່ນ ຫຼື ບໍ່ແມ່ນ", ຫຼາຍກວ່າການຈະສຳຫຼວດໂດຍໃຊ້ຄຳຖາມ "ແນວໃດ" ຫຼື "ເປັນຫຍັງ" ສຳລັບແຕ່ລະສະຖານະການ.

# 3

# ສັດສ່ວນໃນການຕອບແບບສອບຖາມ ແລະ ຄຸນລັກສະນະຂອງຜູ້ໃຫ້ຂໍ້ມູນ

# ພາກທີ 3. ສັດສ່ວນໃນການຕອບແບບສອບຖາມ ແລະ ຄຸນລັກສະນະຂອງຜູ້ໃຫ້ຂໍ້ມູນ

## 3.1 ອັດຕາໃນການຕອບແບບສອບຖາມ

ໃນການສຳຫຼວດທາງດ້ານປະລິມານ ແມ່ຍິງຈຳນວນ 3,000 ຄົນ ທີ່ຖືກຄັດເລືອກເປັນຕົວແທນເຂົ້າຮ່ວມໃນການສຳພາດ, ໃນນັ້ນມີແມ່ຍິງ 2,997 (99.9%) ແມ່ນໄດ້ໃຫ້ການຮ່ວມມືໃນການສຳພາດ ແລະ ອີກແມ່ຍິງ 3 ຄົນ ແມ່ນບໍ່ໃຫ້ຄວາມຮ່ວມມືໃນການສຳພາດ ຍ້ອນບໍ່ຢູ່ເຮືອນ ແລະ ອີກສອງຄົນແມ່ນປະຕິເສດບໍ່ໃຫ້ການສຳພາດ, ແຕ່ໂດຍລວມແລ້ວ, ການສຳຫຼວດນີ້ແມ່ນບັນລຸອັດຕາການຕອບທີ່ດີ.

## 3.2. ຄຸນລັກສະນະທາງດ້ານປະຊາກອນ ແລະ ເສດຖະກິດ-ສັງຄົມ

### 3.2.1 ພູມສັນຖານ, ຊົນເຜົ່າ, ການສຶກສາ ແລະ ສະຖານະພາບຂອງຄູ່ຮ່ວມຊີວິດຂອງຜູ້ຖືກສຳພາດ

ໃນບັນດາຜູ້ໃຫ້ສຳພາດຈຳນວນ 2,997 ຄົນທີ່ມີອາຍຸລະຫວ່າງ 15-64 ປີ, 1,000 ຄົນ (33.4%) ແມ່ນຢູ່ເຂດຕົວເມືອງ, 1,741 ຄົນ (58.1%) ແມ່ນຢູ່ເຂດຊົນນະບົດ ແລະ 256 ຄົນ (8.5%) ແມ່ນຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ແບ່ງຕາມພາກ, ຜູ້ເຂົ້າຮ່ວມ ຈຳນວນ 817 ຄົນ (27.3%) ແມ່ນມາຈາກພາກເໜືອ, 1,575 ຄົນ (52.6%) ມາຈາກພາກກາງ, ແລະ 604 ຄົນ (20.1%) ມາຈາກພາກໃຕ້ (ຮູບທີ 3.1). ໂດຍລວມແລ້ວ, 2 ສ່ວນ 3 ຂອງຜູ້ຖືກສຳພາດແມ່ນຢູ່ເຂດຊົນນະບົດ, ເຊິ່ງເຄິ່ງໜຶ່ງແມ່ນຢູ່ເຂດພາກກາງ. ໃນນີ້, 2,846 ຄົນ (95%) ແມ່ນເຄີຍມີຄູ່ຮ່ວມຊີວິດ. ໃນເພດຂອງຫົວໜ້າໃນແຕ່ລະຄົວເຮືອນໂດຍລວມ, 85.8% ແມ່ນເພດຊາຍ, 14.0% ແມ່ນແມ່ຍິງ ແລະ 0.2% ແມ່ນຮ່ວມກັນປົກຄອງ. ໃນເຂດຕົວເມືອງ, 80.1% ຂອງຫົວໜ້າຄອບຄົວແມ່ນເພດຊາຍ, 19.6% ແມ່ນເພດຍິງ ແລະ 0.3% ແມ່ນຮ່ວມກັນປົກຄອງ, ໃນຂະນະທີ່ໃນເຂດຊົນນະບົດແມ່ນ 88.5%, 11.4%, ແລະ 0.1% ຕາມລຳດັບ. ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ, ແມ່ນມີ 89.5%, 10.3% ແລະ 0.2% ຕາມລຳດັບ. ແມ່ຍິງທີ່ເປັນຫົວໜ້າຄອບຄົວແມ່ນມີຢູ່ໃນເຂດຕົວເມືອງຫຼາຍກວ່າເຂດອື່ນໆ.

ຮູບທີ 3.1 ການແບ່ງຕາມພູມສັນຖານຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ, ປີ 2014 (ຈຳນວນ=2,997)



ດ້ານຊົນເຜົ່າ, ຄືດັ່ງສະແດງໃນຮູບທີ 3.2, ສ່ວນໃຫຍ່ແມ່ນຊົນເຜົ່າລາວ (70.6%), ຕາມດ້ວຍຂະມຸ (20.9%), ມົ້ງ (3.2%) ແລະ ອື່ນໆ (5.3%).




ການແບ່ງຕາມອາຍຸຂອງຜູ້ຕອບແບບສອບຖາມ (ຮູບທີ 3.3), ອາຍຸຜູ້ໃຫ້ສໍາພາດສ່ວນໃຫ່ຍແມ່ນຢູ່ໃນກຸ່ມ 20 ປີຂຶ້ນໄປ (22.1%), 30 ປີຂຶ້ນໄປ (22.3%) ແລະ 40 ປີຂຶ້ນໄປ (26.9%), ໃນຂະນະທີ່ກຸ່ມທີ່ມີອາຍຸ 50 ປີຂຶ້ນໄປແລະ 60 ປີຕົ້ນໆ ມີ 17.4% ແລະ 4.6% ຕາມລໍາດັບ ໂດຍມີອາຍຸສະເລ່ຍເທົ່າກັບ 39.6 ປີ.



ຮູບທີ 3.4 ລະດັບການສຶກສາຂອງຜູ້ເຂົ້າຮ່ວມສໍາພາດໃນເຂດຕົວເມືອງ ແລະ ຊົນນະບົດ, ແມ່ຍິງໃນເຂດຕົວເມືອງ 36.4% ແລະ 46.5% ແມ່ນເຂດຊົນນະບົດ ແລະ 40.3% ແມ່ນເຂດຊົນນະບົດທີ່ບໍ່ມີເສັ້ນທາງ ເຊິ່ງບັນດາຜູ້ຕອບແບບສອບຖາມ ໄດ້ສໍາເລັດການສຶກສາຂັ້ນປະຖົມເປັນຢ່າງໜ້ອຍ. ສໍາລັບການສຶກສາຂັ້ນສູງກວ່າ, ມີ 29.0% ໃນເຂດຕົວເມືອງ ແລະ 8.9% ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ບໍ່ມີເສັ້ນທາງ ເຊິ່ງບັນດາຜູ້ຕອບແບບສອບຖາມໄດ້ສໍາເລັດການສຶກສາ. ອັດຕາສ່ວນຮ້ອຍຂອງບັນດາແມ່ຍິງທີ່ບໍ່ໄດ້ຮຽນໃນລະບົບການສຶກສາພາກບັງຄັບ, ຜູ້ໃຫ້ສໍາພາດໃນເຂດຊົນນະບົດ ທີ່ບໍ່ມີເສັ້ນທາງເຂົ້າເຖິງ (52.7%) ເຊິ່ງມີຫຼາຍກວ່າ ບັນດາຜູ້ໃຫ້ສໍາພາດໃນເຂດຕົວເມືອງ(12.5%) ແລະ ໃນເຂດຊົນນະບົດ (32.8%). ໂດຍລວມແລ້ວ, ປະຊາກອນໃນເຂດຕົວເມືອງ ແມ່ນມີອັດຕາສໍາເລັດການສຶກສາສູງກວ່າ ແລະ ປະຊາກອນໃນຊົນນະບົດແມ່ນມີອັດຕາການບໍ່ໄດ້ຮຽນໜັງສືສູງກວ່າ.







ດ້ານສະຖານະພາບຂອງຄູ່ຮ່ວມຊີວິດໃນປັດຈຸບັນ (ຮູບທີ 3.5), ຫຼາຍກວ່າ 3/4 (81.6%) ຂອງຜູ້ໃຫ້ສໍາພາດແມ່ນຢູ່ໃນສະຖານະພາບແຕ່ງງານໃນປັດຈຸບັນ, 7.4% ແມ່ນບໍ່ເຄີຍແຕ່ງງານ, 5.1% ເປັນໝ້າຍ, 4.3% ແມ່ນຢ່າຮ້າງ/ແຍກກັນຢູ່, 1.1% ແມ່ນຢູ່ກິນກັບຄູ່ຮ່ວມຊີວິດ (ການຢູ່ກິນໂດຍບໍ່ໄດ້ແຕ່ງງານ) ແລະ 0.5% ແມ່ນຄູ່ຮັກທີ່ລົມກັນເລື້ອຍໆ.

### 3.2.2 ສະຖານະພາບທາງດ້ານເສດຖະກິດ-ສັງຄົມ

ໃນການສຳຫຼວດທາງດ້ານປະລິມານ ຍັງໄດ້ເກັບກຳຂໍ້ມູນ ລັກສະນະຂອງໂຄງລ່າງພື້ນຖານຂອງເຮືອນ, ຕົວຢ່າງແຫຼ່ງນ້ຳດື່ມ, ຫ້ອງນ້ຳ, ອຸປະກອນທີ່ໃຊ້ເຮັດຫຼົງຄາ ແລະ ໄຟຟ້າໃນເຮືອນ. ໃນການສຳຫຼວດນີ້ກໍ່ຍັງໄດ້ເບິ່ງ ການເປັນເຈົ້າຂອງໃນຊັບສິນຄົງທີ່ 6 ຢ່າງດ້ວຍກັນຄື: ພາຫະນະ 4 ປະເພດທີ່ແຕກຕ່າງກັນ, ການເປັນເຈົ້າກຳມະສິດທີ່ດິນ, ຈຳນວນຫ້ອງນອນ ແລະ ຈຳນວນຄົນໃນຄອບຄົວ. ການສຳຫຼວດໄດ້ສະ ແດງໃຫ້ເຫັນເຖິງແຫຼ່ງທີ່ມາຂອງນ້ຳດື່ມ, ປະເພດສິ່ງຂອງທີ່ອຳນວຍຄວາມສະດວກທາງດ້ານສຸຂະອະນາໄມ ແລະ ອຸປະກອນຫຼັກທີ່ໃຊ້ເຮັດຫຼັງຄາ. ແຫຼ່ງທີ່ມາຂອງນ້ຳດື່ມສ່ວນໃຫຍ່ແມ່ນມາຈາກນ້ຳສ້າງ (21.2%),ນ້ຳບາດານ (10.7%) ແລະ "ອື່ນໆ" (38.0%). ສ່ວນຄົວເຮືອນທີ່ເຫຼືອແມ່ນຖືກຈັດແບ່ງອີກ 8 ປະເພດຂອງແຫຼ່ງນ້ຳເພີ່ມເຕີມຄື: ນ້ຳບາດານ (7.2%), ບໍ່ນ້ຳສາທາລະນະ (6.0%) ແລະ ທໍ່ນ້ຳໃນຄົວເຮືອນ (3.1%). ດ້ານຫ້ອງນ້ຳແມ່ນມີສອງປະເພດຫຼັກ, ເຊິ່ງມີປະມານ 2/3 (64.0%) ແມ່ນນຳໃຊ້ວິດຊຸດ ແລະ 27.8% ແມ່ນນຳໃຊ້ປ່າເປັນຫ້ອງນ້ຳ. ຫຼາຍກວ່າເຄິ່ງໜຶ່ງ (55.7%) ບອກວ່າອຸປະກອນຫຼັກທີ່ໃຊ້ມຸງຫຼັງຄາແມ່ນສັງກະສີ ແລະ ຫຼາຍກວ່າ 1/3 (35.8%) ໃຊ້ກະເບື້ອງ ຫຼື ຫຼັງຄາເບຕົງ. ຄົວເຮືອນສ່ວນໃຫຍ່ແມ່ນມີໄຟຟ້າໃຊ້ (87.6%). ການເປັນເຈົ້າຂອງໃນຊັບສິນໃນຄົວເຮືອນທີ່ມີຄວາມແຕກຕ່າງກັນສູງ. ຫຼາຍກວ່າ 3/4 ຂອງຄົວເຮືອນມີໂທລະສັບເປັນຂອງຕົວເອງ (84.3%) ຫຼື ໂທລະພາບ (77.6%) ແລະ ຫຼາຍກວ່າເຄິ່ງໜຶ່ງແມ່ນມີຕູ້ເຢັນ (56.5%). ຫຼາຍກວ່າ 1 ໃນ 10 ຂອງຄົວເຮືອນແມ່ນມີຄອມພິວເຕີ (11.1%). ໃນຂະນະທີ່ຄົວເຮືອນສ່ວນໃຫຍ່ແມ່ນມີລົດຈັກ (79.6%), ກໍ່ຍັງມີຈຳນວນໜຶ່ງມີລົດໃຫຍ່ (15.5%). ຄົວເຮືອນສ່ວນໃຫຍ່ໄດ້ເປັນເຈົ້າຂອງກຳມະສິດທີ່ດິນ (92.3%).

ຈາກການວິເຄາະໃນການຈຳແນກບັນດາຄົວເຮືອນຕ່າງໆ ເປັນກຸ່ມທີ່ມີຄວາມຮັ່ງມີທາງດ້ານຊັບສິນ, ຫຼາຍກວ່າ 1/5 ຂອງຄົວເຮືອນ (21.3%) ຖືກຈັດເຂົ້າໃນປະເພດທີ່ມີຊັບສິນໜ້ອຍທີ່ສຸດ, 32.9% ຢູ່ໃນປະເພດທີ່ມີຊັບສິນໃນລະດັບກາງ ແລະ 45.8% ແມ່ນກຸ່ມປະເພດທີ່ມີຊັບສິນຫຼາຍທີ່ສຸດ (ເອກະສານຊ້ອນທ້າຍທີ IV).

## 3.3 ຄວາມຮູ້ສຶກຂອງຜູ້ຖືກສຳພາດຫຼັງຈາກການໃຫ້ສຳພາດຢູ່ພາກສະໜາມ

ໄລຍະເວລາສະເລ່ຍໃນການສຳພາດໃນບົດສຳຫຼວດນີ້ແມ່ນ 52 ນາທີ ສຳລັບບັນດາຜູ້ຖືກສຳພາດທີ່ບໍ່ໄດ້ລາຍງານການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ, 63 ນາທີສຳລັບຜູ້ທີ່ລາຍງານການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍເທົ່ານັ້ນ, 59 ນາທີ ສຳລັບຜູ້ທີ່ເປີດເຜີຍການໃຊ້ຄວາມຮຸນແຮງທາງເພດພຽງຢ່າງດຽວ ແລະ 66 ນາທີສຳລັບຜູ້ຖືກສຳພາດທີ່ລາຍງານທັງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ.

ໃນເວລາຖາມຜູ້ຖືກສຳພາດວ່າເຂົາເຈົ້າມີຄວາມຮູ້ສຶກແນວໃດໃນຕອນທ້າຍຂອງການສຳພາດ, ໃນການສຳຫຼວດທາງດ້ານປະລິມານ 87.9% ທີ່ບໍ່ໄດ້ລາຍງານການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ ໂດຍຄູ່ຮ່ວມຊີວິດ ເຊິ່ງເຂົາເຈົ້າໄດ້ຕອບວ່າຮູ້ສຶກ "ດີ" ຫຼື "ດີຂຶ້ນ". ເຊັ່ນດຽວກັນ, 86.0% ຂອງຜູ້ຖືກສຳພາດທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍພຽງຢ່າງດຽວ, 80.9% ແມ່ນຜູ້ຖືກສຳພາດທີ່ເຄີຍຖືກຄວາມຮຸນແຮງທາງເພດພຽງຢ່າງດຽວ ແລະ 92.7% ແມ່ນຜູ້ໃຫ້ສຳພາດທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ ທີ່ຮູ້ສຶກ "ດີ" ຫຼື "ດີຂຶ້ນ" ຫຼັງຈາກການສຳພາດ. ຜູ້ຖືກສຳພາດເກືອບທັງໝົດແມ່ນຍິນດີທີ່ຈະໃຫ້ຕິດຕໍ່ຫາອີກຄັ້ງໜຶ່ງຖ້າມີຄວາມຈຳເປັນ - ບັນດາຜູ້ຖືກສຳພາດທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ (100%), ຜູ້ຖືກສຳພາດທີ່ລາຍງານວ່າບໍ່ເຄີຍຖືກຄວາມຮຸນແຮງ (99.5%) ແລະ ຜູ້ທີ່ເປີດເຜີຍກ່ຽວກັບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ(99.8%) ແລະ ການໃຊ້ຄວາມຮຸນແຮງທາງເພດ (98.8%).

## 3.4 ຜົນກະທົບຂອງການສຳຫຼວດຕໍ່ນັກເດີນສຳຫຼວດ

ຍ້ອນວ່າການສຳຫຼວດນີ້ແມ່ນກ່ຽວຂ້ອງກັບຫົວຂໍ້ທີ່ມີຄວາມລະອຽດອ່ອນ ເຊິ່ງຈະຖືກປົກປິດໄວ້ໃນສັງຄົມລາວ, ແມ່ຍິງທີ່ມີສ່ວນຮ່ວມໃນການສຳຫຼວດດັ່ງກ່າວເຊິ່ງມີບົດບາດຂອງນັກວິໄຈ ແລະ ນັກກວດກາ ອາດຈະສາມາດເຮັດໃຫ້ເກີດຄວາມໂສກເສົ້າພາຍໃນຈິດໃຈ ແລະ ຫຼັກຖານຂອງບັນດາຜົນກະທົບດັ່ງກ່າວໄດ້ຖືກບັນທຶກໄວ້. ໂດຍລວມແລ້ວ ນັກເດີນສຳຫຼວດໄດ້ລາຍງານວ່າ ເຂົາເຈົ້າໄດ້ຮັບຜົນປະໂຫຍດຈາກບັນດາຄວາມຮູ້ໃໝ່ໆ ແລະ ການປູກຈິດສຳນຶກ.

> *"ສ່ວນຕົວແລ້ວຂ້ອຍຮູ້ສຶກຕົກໃຈຫຼາຍ ຕໍ່ລະດັບການໃຊ້ຄວາມຮຸນແຮງທີ່ແມ່ຍິງຕ້ອງອົດທົນ. ຂ້ອຍບໍ່ເຄີຍຄິດມາກ່ອນວ່າ ຄວາມຮຸນແຮງໃນຄອບຄົວຈະມີຄວາມຮຸນແຮງຫຼາຍໃນ ສປປ ລາວ, ເຊິ່ງເປັນປະເທດທີ່ມີຄວາມສະຫງົບສຸກ ແລະ ມີຮີດຄອງປະເພນີທີ່ເຂັ້ມແຂງ ແລະ ມີຄວາມເຊື່ອຖືທາງສາສະໜາພຸດ."*

ນັກເດີນສຳຫຼວດ ໄດ້ເຂົ້າຮ່ວມຫຼາຍໆ ຂັ້ນຕອນຂອງການສະຫຼຸບທົບທວນຄືນພວກເຂົາເວົ້າວ່າ ເຂົາເຈົ້າໄດ້ຮັບການສ້າງຄວາມເຂັ້ມແຂງໂດຍຜ່ານປະສົບການຕ່າງໆ ໃນການສຳຫຼວດໃນຄັ້ງນີ້, ເຊິ່ງໄດ້ໃຫ້ຄວາມຫວັງແກ່ເຂົາເຈົ້າໃນການແກ້ໄຂບັນຫາຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວ ໃນ ສປປ ລາວ, ໂດຍການເລີ່ມການເປັນນັກເດີນສຳຫຼວດພາກສະໜາມໃນຄັ້ງນີ້.

*"ຂ້ອຍຮູ້ສຶກດີໃຈຫຼາຍທີ່ໄດ້ມີສ່ວນຮ່ວມໃນການສຳຫຼວດໃນຄັ້ງນີ້, ເຊິ່ງຂ້ອຍຄິດວ່າມັນເປັນບັນຫາທີ່ມີຄວາມສຳຄັນຫຼາຍ ແລະ ຂ້ອຍກໍ່ຫວັງວ່າ ຜົນການສຳຫຼວດໃນຄັ້ງນີ້ ຈະສາມາດສົ່ງເສີມຄວາມຮັບຮູ້ ໃຫ້ກັບຫຼາຍໆຄົນ, ລວມທັງຕົວຂອງຂ້ອຍເອງ ແມ່ນບໍ່ຢາກຈະເຊື່ອໃນລະດັບການໃຊ້ຄວາມຮຸນແຮງໃນ ສປປ ລາວ. ການສຳຫຼວດໃນຄັ້ງນີ້ ອາດຈະສະທ້ອນໃຫ້ເຫັນເຖິງສະຖານະການ ແລະ ການສະໜອງຫຼັກຖານທີ່ຕ້ອງການ ເພື່ອໃຫ້ລັດຖະບານລາວ ແລະ ບັນດາອົງການຈັດຕັ້ງສາກົນ ໄດ້ເຂົ້າໃຈບັນຫາທີ່ແມ່ຍິງລາວໄດ້ປະເຊີນໃນປັດຈຸບັນ ແລະ ລວມທັງບັນດາບັນຫາອື່ນໆ ທີ່ບໍ່ຄວນຖືກເມີນເສີຍ. ຂ້ອຍຫວັງວ່າບັນຫາເຫຼົ່ານີ້ຈະຖືກຍອມຮັບ ແລະ ໄດ້ຮັບການຊ່ວຍເຫຼືອຈາກທຸກໆ ຂະແໜງການ, ເຊິ່ງໄດ້ຮຽກຮ້ອງໃຫ້ທຸກຂະແໜງການເຂົ້າມາເຮັດວຽກຮ່ວມກັນເພື່ອແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເພາະວ່າ ການຊ່ວຍເຫຼືອໃນປັດຈຸບັນຍັງມີຈຳກັດ, ແລະ ການຂາດຊັບພະຍາກອນມະນຸດ ແລະ ຊັບພະຍາກອນອື່ນໆ."*

# 4

# ຄວາມຮຸນແຮງ ຕໍ່ແມ່ຍິງໂດຍ ຜົວ ຫຼື ຄູ່ຮ່ວມຊີວິດ

# ພາກທີ 4. ຄວາມຮຸນແຮງຕໍ່ແມ່ຍິງຈາກຜົວ ຫຼື ຄູ່ຮ່ວມຊີວິດ

**ຜົນໄດ້ຮັບຫຼັກຂອງການສຳຫຼວດ:**

- ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 11.6% ແມ່ນເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ໃນຊ່ວງຊີວິດ ແລະ 4.0% ໃນໄລຍະ 12 ເດືອນທີ່ຜ່ານມາ (ການໃຊ້ຄວາມຮຸນແຮງໃນປັດຈຸບັນ).
- ໃນຈຳນວນແມ່ຍິງທີ່ເຄີຍຖືພາ, 1.8% ໄດ້ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ໃນລະຫວ່າງການຖືພາຢ່າງໜ້ອຍໜຶ່ງຄັ້ງ.
- ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 7.2% ແມ່ນເຄີຍຖືກຄວາມຮຸນແຮງທາງເພດ ໃນຊ່ວງຊີວິດ ແລະ 3.1% ໃນໄລຍະ 12 ເດືອນທີ່ຜ່ານມາ.
- ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 15.3% ແມ່ນເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໃນຊ່ວງຊີວິດ ແລະ 6.0% ໃນໄລຍະ 12 ເດືອນທີ່ຜ່ານມາ.
- ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 26.2% ເປີດເຜີຍວ່າ ເຄີຍຖືກຄວາມຮຸນແຮງທາງດ້ານຈິດໃຈ ໃນຊ່ວງຊີວິດ ແລະ 10.5% ໃນໄລຍະ 12 ເດືອນທີ່ຜ່ານມາ.
- ເມື່ອເບິ່ງຈາກທັງສາມປະເພດຂອງການໃຊ້ຄວາມຮຸນແຮງ ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ເຫັນວ່າ 30.3% ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ, ທາງເພດ ແລະ/ຫຼື ທາງດ້ານຈິດໃຈ.
- ປະມານ 34.8% ຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຖືກຄວບຄຸມການປະພຶດຈາກຄູ່ຮ່ວມຊີວິດ ແລະ 6.8% ເຄີຍຖືກລ່ວງລະເມີດທາງດ້ານເສດຖະກິດ ໃນຊ່ວງຊີວິດຂອງແມ່ຍິງ.

## 4.1 ພາກສະເໜີ

ໃນບົດນີ້ ຈະໄດ້ນຳສະເໜີອັດຕາສ່ວນ, ຮູບແບບ ແລະ ຄຸນລັກສະນະ ຂອງປະເພດຕ່າງໆທີ່ແຕກຕ່າງກັນຂອງຄວາມຮຸນແຮງຂອງແມ່ຍິງ ຈາກຜົວຄົນປັດຈຸບັນ/ໃນອະດີດ ແລະ/ຫຼື ຄູ່ຮ່ວມຊີວິດເພດຊາຍ. ມີຫຼາຍຮູບແບບການໃຊ້ຄວາມຮຸນແຮງທີ່ແຕກຕ່າງກັນເຊິ່ງລວມມີ: ຄວາມຮຸນແຮງທາງຮ່າງກາຍ, ທາງເພດ, ທາງຈິດໃຈ ແລະ ທາງດ້ານເສດຖະກິດ ແລະ ການຄວບຄຸມການປະພຶດຄືດັ່ງນິຍາມຂອງອົງການອະນາໄມໂລກ ທີ່ໄດ້ກ່າວມາໃນ ຮູບທີ 2.2 ໄລຍະເວລາຂອງການໃຊ້ຄວາມຮຸນແຮງແມ່ນກຳນົດເອົາໃນຊ່ວງຊີວິດ ແລະ ໄລຍະ 12 ເດືອນທີ່ຜ່ານມາ ເຊິ່ງເກີດຂຶ້ນກ່ອນການສຳພາດ (ປັດຈຸບັນ). ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງ ຈາກຄູ່ຮ່ວມຊີວິດ ໃນຊ່ວງຊີວິດ ໄດ້ສະແດງເປັນເປັນອັດຕາສ່ວນຮ້ອຍ ໃນກຸ່ມແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດທີ່ລາຍງານວ່າຖືກຄວາມຮຸນແຮງ ໜຶ່ງ ຫຼື ສອງຮູບແບບຂອງຄວາມຮຸນແຮງ ຈາກຜົວຄົນເກົ່າ ຫຼື ຜົວຄົນປັດຈຸບັນ ຫຼື ຄູ່ຮ່ວມຊີວິດຢ່າງໜ້ອຍໜຶ່ງຄັ້ງໃນຊ່ວງຊີວິດ. ອັດຕາສ່ວນການໃຊ້ຄວາມຮຸນແຮງໄດ້ສະແດງເປັນອັດຕາສ່ວນຮ້ອຍໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດທີ່ໄດ້ລາຍງານວ່າຖືກຄວາມຮຸນແຮງ ໜຶ່ງ ຫຼື ສອງຮູບແບບຄວາມຮຸນແຮງໃນໄລຍະ 12 ເດືອນທີ່ຜ່ານມາ ເຊິ່ງເກີດຂຶ້ນກ່ອນການສຳພາດ. ບັນດາແມ່ຍິງທີ່ລາຍງານກ່ຽວກັບການໃຊ້ຄວາມຮຸນແຮງໃນໄລຍະ 12 ເດືອນທີ່ຜ່ານມາ ຖືກນັບເຂົ້າໃນອັດຕາສ່ວນໃນປັດຈຸບັນ ແລະ ໃນຊ່ວງຊີວິດ.

ໃນການສຳຫຼວດດ້ານປະລິມານ, ປະສົບການຕໍ່ປະເພດຕ່າງໆຂອງຄວາມຮຸນແຮງແມ່ນຖືກສຳຫຼວດອີງຕາມພຶດຕິກຳ, ອັດຕາສ່ວນ, ຄວາມຖີ່ ແລະ ຄວາມເສຍຫາຍ ເຊັ່ນດຽວກັນກັບຄວາມຮຸນແຮງຫຼາຍຮູບແບບທີ່ເກີດຂຶ້ນພ້ອມໆກັນ. ໃນການສຳຫຼວດດ້ານຄຸນນະພາບ, ຄຳບອກເລົ່າ ແລະ ເລື່ອງເລົ່າຕ່າງໆກ່ຽວກັບຊີວິດຂອງແມ່ຍິງ ແລະ ຜູ້ຊາຍ, ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆ ຫຼື ຜູ້ທີ່ເຮັດວຽກນຳອົງການຈັດຕັ້ງຕ່າງໆທີ່ໄດ້ຖືກສຳພາດ ແລະ ນຳສະເໜີເພື່ອເພີ່ມຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ຜົນຂອງການສຳຫຼວດທາງດ້ານປະລິມານ.

## 4.2 ຄວາມຮຸນແຮງທາງດ້ານຮ່າງກາຍ

### 4.2.1 ອັດຕາສ່ວນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນປັດຈຸບັນ ແລະ ໃນຊ່ວງຊີວິດ

ໂດຍລວມແລ້ວ ອັດຕາສ່ວນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນຊ່ວງຊີວິດ ຈາກຄູ່ຮ່ວມຊີວິດ ຫຼື ຜົວ ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໃນ ສປປ ລາວ ແມ່ນ 11.6% (ຮູບທີ 4.1), ເຊິ່ງມີຄວາມແຕກຕ່າງກັນພຽງເລັກໜ້ອຍເທົ່ານັ້ນລະຫວ່າງເຂດຕົວເມືອງ ແລະ ຊົນນະບົດຄື (12.0% ຫາ 12.4%). ຢູ່ພາກເໜືອ, ແມ່ຍິງທີ່ລາຍງານກ່ຽວກັບການໃຊ້ຄວາມຮຸນແຮງໜ້ອຍກວ່າຄື (9.6%) ພາກກາງ (12.1%) ແລະ ພາກໃຕ້

(12.9%). ໂດຍລວມແລ້ວ ອັດຕາສ່ວນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນປັດຈຸບັນແມ່ນ 4.0%, ເຊິ່ງມີຄວາມແຕກຕ່າງກັນພຽງເລັກໜ້ອຍລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດຄື (4.0% ຫາ 4.4%) ແລະ ໃນບັນດາພາກຕ່າງໆ (3.5% ຫາ 5.5%).

ຮູບທີ 4.1 ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນຊ່ວງຊີວິດ ແລະ ໃນປັດຈຸບັນຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍແບ່ງຕາມພາກ, ສປປ ລາວ, ປີ 2014 (ຈຳນວນ=2,847)




ຮູບທີ 4.2 ສະແດງໃຫ້ເຫັນອັດຕາການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍແບ່ງຕາມກຸ່ມອາຍຸ. ອັດຕາສ່ວນທີ່ມີສູງທີ່ສຸດແມ່ນໃນກຸ່ມແມ່ຍິງທີ່ມີອາຍຸລະຫວ່າງ 30 ແລະ 40 ປີຂຶ້ນໄປ ເຊິ່ງມີຫຼາຍກວ່າກຸ່ມແມ່ຍິງທີ່ມີອາຍຸໃນລະຫວ່າງ 20 ປີຂຶ້ນໄປ, ທັງໃນອັດຕາສ່ວນຄວາມຮຸນແຮງໃນປັດຈຸບັນ ແລະ ໃນຊ່ວງຊີວິດ. ໃນກຸ່ມແມ່ຍິງທີ່ຢູ່ໃນກຸ່ມອາວຸໂສ, ອັດຕາສ່ວນຄວາມຮຸນແຮງຕໍ່ແມ່ຍິງໃນຊ່ວງຊີວິດຂອງແມ່ຍິງກຸ່ມອາຍຸ 60 ປີຂຶ້ນໄປແມ່ນ ມີຫຼາຍກວ່າແມ່ຍິງກຸ່ມອາຍຸ 50 ປີຂຶ້ນໄປພຽງເລັກໜ້ອຍ, ແຕ່ໂດຍລວມແລ້ວອັດຕາສ່ວນຄວາມຮຸນແຮງແມ່ນຫຼຸດລົງຕາມອາຍຸ.

ຮູບທີ 4.2 ອັດຕາສ່ວນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍຈັດຕາມອາຍຸ, ສປປ ລາວ, ປີ 2014 (ຈຳນວນ=2,847)



ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ທີ່ບໍ່ມີການສຶກສາ ມີທ່າອ່ຽງຖືກຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຜົວ ຄູ່ຮ່ວມຊີວິດ/ຜົວ (14.6% ໃນຊ່ວງຊີວິດ) ເຊິ່ງຫຼາຍກວ່າແມ່ຍິງທີ່ມີການສຶກສາ (10.1-11.3% ໃນຊ່ວງຊີວິດ) ເຊິ່ງອັດຕາສ່ວນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນປັດຈຸບັນ ແລະ ໃນຊ່ວງຊີວິດ (ຮູບທີ 4.3). ອັດຕາສ່ວນໃນປັດຈຸບັນ, ແມ່ຍິງທີ່ບໍ່ໄດ້ຮັບການສຶກສາ ແມ່ນມີອັດຕາສ່ວນຖືກຄວາມຮຸນແຮງ (4.9%) ເຊິ່ງຫຼາຍກວ່າ ແມ່ຍິງທີ່ຮຽນຈົບຊັ້ນປະຖົມມີ (3.7%) ແລະ ການສຶກສາໃນລະດັບຊັ້ນສູງມີ (3.3%).

ຮູບທີ 4.3 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ
ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ
ໂດຍຈັດຕາມລະດັບການສຶກສາ, ສປປ ລາວ, ປີ 2014 (ຈຳນວນ=2,847)




ໃນຜົນໄດ້ຮັບຂອງສຳຫຼວດທາງດ້ານຄຸນນະພາບ, ແມ່ຍິງທີ່ຖືກສຳພາດບາງຄົນທີ່ເປັນຜູ້ຖືກເຄາະຮ້າຍແມ່ນມີການສຶກສາຢູ່ໃນລະດັບມະຫາວິທະຍາໄລ ຫຼື ໂຮງຮຽນວິຊາຊີບ ຫຼື ເຮັດວຽກໃນຕຳແໜ່ງທີ່ມີຕຳແໜ່ງບໍລິຫານນຳອົງການລັດ, ຂະນະທີ່ແມ່ຍິງອື່ນໆ ແມ່ນມີການສຶກສາທີ່ຈຳກັດຄືອາດຈະຈົບຊັ້ນມັດທະຍົມປີທີ 2 ຫຼື ຈົບພຽງແຕ່ຊັ້ນປະຖົມເທົ່ານັ້ນ. ການຖືກຄວາມຮຸນແຮງ ແລະ ການອົດກັ້ນຕໍ່ການໃຊ້ຄວາມຮຸນແຮງໃນຊີວິດຄູ່ແມ່ນບໍ່ມີຄວາມແຕກຕ່າງກັນເລີຍ ລະຫວ່າງແມ່ຍິງທີ່ມີລະດັບການສຶກສາທີ່ແຕກຕ່າງກັນ. ແຕ່ວ່າ ການສຶກສາ ແລະ ໜ້າວຽກຂອງຜົວເປັນປັດໄຈທີ່ສຳຄັນທີ່ມີຜົນກະທົບຕໍ່ການໃຊ້ຄວາມຮຸນແຮງ. ນອກຈາກດ້ານການສຶກສາແລ້ວ, ແມ່ຍິງສ່ວນຫຼາຍຕ້ອງປະເຊີນກັບບັນຫາທາງດ້ານການເງິນ, ໜຶ່ງໃນເຫດຜົນດັ່ງກ່າວແມ່ນຍ້ອນຂາດການສະໜັບສະໜູນ ຈາກຜົວ/ຄູ່ຮ່ວມຊີວິດ. ໃນການສົນທະນາກຸ່ມຜູ້ໃຫຍ່ເພດຊາຍ ໄດ້ເວົ້າວ່າ ແມ່ຍິງທີ່ມີການສຶກສາໃນລະດັບຕ່ຳຈະມີຂໍ້ຈຳກັດໃນການໂອ້ລົມກັບຜົວ ແລະ ການເຮັດໃຫ້ຜົວໃຈເຢັນ, ການນຳໃຊ້ທັກສະຂອງແມ່ຍິງແມ່ນເປັນສິ່ງສຳຄັນທີ່ຈະເຮັດໃຫ້ຄອບຄົວມີຄວາມສາມັກຄີກັນ. ຢ່າງໃດກໍ່ຕາມ, ສິ່ງນີ້ບໍ່ໄດ້ຮັບການຢືນຢັນຈາກແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍວ່າ ການໃຊ້ຄວາມຮຸນແຮງແມ່ນບໍ່ໄດ້ຂຶ້ນກັບການປະພຶດ ຫຼື ບໍ່ປະພຶດບາງຢ່າງຂອງແມ່ຍິງເອງ, ຫຼື ການຕັດສິນໃຈທີ່ຈະຕໍ່ຕ້ານ/ທ້າທາຍຕໍ່ຜົວຂອງເຂົາເຈົ້າ ຫຼື ລະດັບການສຶກສາສະເໝີໄປ.

ຕົວຢ່າງຄຳເວົ້າທີ່ລະບຸໃນໜ້ານີ້ຂອງບົດສຳຫຼວດ ແມ່ນໄດ້ມາຈາກການສຳພາດໂດຍກົງ ແລະ ການສົນທະນາກຸ່ມ ຮ່ວມກັບຜູ້ເຂົ້າຮ່ວມທີ່ເປັນແມ່ຍິງ ແລະ ຜູ້ຊາຍ ລວມທັງການສຳພາດຜູ້ໃຫ້ຂໍ້ມູນຫຼັກ.

**ຜູ້ໃຫຍ່ເພດຊາຍ, ໃນເຂດຊົນນະບົດ.**

***"ບາງເທື່ອອາດຈະເປັນຍ້ອນ ແມ່ຍິງຄົນນັ້ນບໍ່ໄດ້ຮຽນສູງ, ລາວຈຶ່ງອາດຈະບໍ່ຮູ້ວິທີການລົມກັບຜົວຂອງລາວ."***

### 4.2.2 ພຶດຕິກຳການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ

ຮູບທີ 4.4 ໄດ້ສະແດງໃຫ້ເຫັນເຖິງການປະພຶດທີ່ແຕກຕ່າງກັນຂອງຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຜົວ ຫຼື ຄູ່ຮ່ວມຊີວິດ ໃນກຸ່ມແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ. ຄືດັ່ງໄດ້ສະເໜີໃນເບື້ອງຕົ້ນ, ແມ່ຍິງ 11.6% ບອກວ່າເຂົາເຈົ້າຖືກຄວາມຮຸນແຮງທາງດ້ານຮ່າງກາຍຢ່າງໜ້ອຍໜຶ່ງພຶດຕິກຳ. ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດທັງໝົດ, ເຫັນວ່າ 8% ແມ່ນເຄີຍຖືກຕົບ ຫຼື ຖືກແກວ່ງວັດຖຸໃສ່ ແລະ 7.1% ເຄີຍຖືກຊຸກ ຫຼື ຖືກຍູ້ຢ່າງຮຸນແຮງໃນຊ່ວງຊີວິດຂອງເຂົາເຈົ້າ. ບັນດາການປະພຶດເຫຼົ່ານີ້ແມ່ນຖືກຈັດຢູ່ໃນປະເພດ ການໃຊ້ຄວາມຮຸນແຮງ 'ລະດັບກາງ'. ແມ່ຍິງທີ່ຖືກຕີດ້ວຍກຳປັ້ນ ຫຼື ວັດຖຸອື່ນໆ (4.9%), ຖືກເຕະ, ລາກ ຫຼື ທຸບ (4.3%), ຖືກບີບຄໍ ຫຼື ຖືກເອົາໄຟລົນແບບເຈຕະນາ (1.8%) ແລະ ຖືກແກວ່ງ ຫຼື ໃຊ້ອາວຸດຕີ (3.0%) ແມ່ນຖືກຈັດຢູ່ໃນປະເພດຂອງການໃຊ້ຄວາມຮຸນແຮງໃນລະດັບ 'ຮ້າຍແຮງ'. ຮູບທີ 4.5 ສະແດງໃຫ້ເຫັນ ອັດຕາສ່ວນການໃຊ້ຄວາມຮຸນແຮງໃນຊ່ວງຊີວິດຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ເຊິ່ງຖືກບັນທຶກວ່າເປັນພຶດຕິກຳທີ່ຮ້າຍແຮງທີ່ສຸດໃນສອງປະເພດ. ໂດຍລວມແລ້ວ, ແມ່ຍິງສ່ວນໃຫຍ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍໃນລະດັບທີ່ຮ້າຍແຮງ (7.3%) ຫຼາຍກວ່າ ການຖືກຄວາມຮຸນແຮງທາງດ້ານຮ່າງກາຍໃນລະດັບກາງ (4.2%), ທ່າອ່ຽງດັ່ງກ່າວແມ່ນກວມທັງໃນເຂດຕົວເມືອງ ແລະ ຊົນນະບົດ (ຮູບທີ 4.5).

ຮູບທີ 4.4. ອັດຕາສ່ວນຂອງພຶດຕິກຳການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ຮູບທີ 4.5 ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນຊ່ວງຊີວິດ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຈັດຕາມລະດັບຄວາມຮ້າຍແຮງ, ສປປ ລາວ, ປີ 2014 (ຈຳນວນ=2,847)




### 4.2.3 ຄວາມຖີ່ຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ

ຮູບທີ 4.6 ສະແດງໃຫ້ເຫັນເຖິງຄວາມຖີ່ຂອງການປະພຶດທີ່ແຕກຕ່າງກັນຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໃນໄລຍະ 12 ເດືອນທີ່ຜ່ານມາ. ແມ່ຍິງເກືອບເຄິ່ງໜຶ່ງໃນຈຳນວນແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແມ່ນຖືກຕົບຕີ ຫຼື ຖືກໂຍນວັດຖຸຕ່າງໆໃສ່ (47.0%) ແລະ/ຫຼື ຖືກຊຸກ ຫຼື ຍູ້ຄີ (47.3%) ແມ່ນຫຼາຍກວ່າ 5 ຄັ້ງໃນຊ່ວງຊີວິດຂອງພວກເຂົາ. ແມ່ຍິງຫຼາຍກວ່າເຄິ່ງໜຶ່ງໄດ້ຮັບບາດເຈັບຈາກການຖືກຄວາມຮຸນແຮງທາງດ້ານຮ່າງກາຍ, ເຊັ່ນ ການຖືກເຕະ ຫຼື ຖືກລາກມີ (59.0%), ຖືກບີບຄໍ ຫຼື ຖືກເອົາໄຟລົນມີ (61.7%) ແລະ ຖືກຂົ່ມຂູ່ດ້ວຍອາວຸດມີ (56.0%) ເຊິ່ງທັງໝົດແມ່ນຫຼາຍກວ່າ 5 ຄັ້ງ. ນີ້ໄດ້ສະແດງໃຫ້ເຫັນເຖິງສິ່ງທີ່ຈາກພຶດຕິກຳການໃຊ້ຄວາມຮຸນແຮງຢູ່ເລື້ອຍໆ.

ຮູບທີ 4.6 ຄວາມຖີ່ຂອງພຶດຕິກຳຕ່າງໆ ຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ໃນຜົນຂອງການສຳຫຼວດດ້ານຄຸນນະພາບເຫັນວ່າ ແມ່ຍິງທີ່ເຂົ້າຮ່ວມໃນການສຳພາດແບບເຈາະຈົ້ມ ແລະ ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ໄດ້ລາຍງານຫຼາຍໆພຶດຕິກຳຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ເຊັ່ນ ການຖືກຕີ (ໂດຍໄມ້ ຫຼື ໝວກກັນນ໊ອກ), ທຸບ, ບີບຄໍ ແລະ ເຕະ ຈົນເຮັດໃຫ້ແມ່ຍິງມີຮອຍພົກຊ້ຳ ແລະ ບາດເຈັບສາຫັດ. ບົດລາຍງານສ່ວນໃຫຍ່ແມ່ນມີຫຼາຍໆພຶດຕິກຳໃນການໃຊ້ຄວາມຮຸນແຮງ ແລະ ກໍ່ເກີດຂຶ້ນຫຼາຍຄັ້ງໃນຊ່ວງຊີວິດ.

> *"ຕັ້ງແຕ່ລາວມີເມຍນ້ອຍ ລາວກໍ່ຕີຂ້ອຍ ປະມານ 7 ຫາ 8 ເທື່ອແລ້ວ. ຂ້ອຍບໍ່ສາມາດເວົ້າກັບລາວໄດ້ ຫຼື ເວົ້າເລື່ອງເມຍນ້ອຍຂອງລາວກໍ່ບໍ່ໄດ້. ຖ້າຂ້ອຍເວົ້າ, ລາວຈະໃຈຮ້າຍ ແລະ ຕີຂ້ອຍ. ລາວຕີ, ເຕະ ແລະ ບີບຄໍຂ້ອຍ, ຕີຫົວ ແລະ ຄໍ, ຕີບໍລິເວນທີ່ສາມາດຂ້າຂ້ອຍໄດ້. ໃນກໍລະນີຫຼ້າສຸດ, ລາວຕີ,ເຕະ ຫຼັງ ແລະ ສະໂພກຂອງຂ້ອຍ [ຢ່າງແຮງ] ເຊິ່ງເຮັດໃຫ້ຂ້ອຍບໍ່ສາມາດໄປວຽກເປັນອາທິດ. ຂ້ອຍຄິດວ່າສະໂພກຂ້ອຍຫຼຸດໂບກ."*
>
> **ແມ່ຍິງຜູ້ຖືກເຄາະຮ້າຍ, ແຂວງສາລະວັນ**

#### 4.2.4 ຄວາມຮຸນແຮງທາງດ້ານຮ່າງກາຍໃນເວລາຖືພາ

ອັດຕາສ່ວນຂອງແມ່ຍິງທີ່ເຄີຍຖືພາທີ່ໄດ້ລາຍງານວ່າຖືກຄວາມຮຸນແຮງທາງດ້ານຮ່າງກາຍໃນລະຫວ່າງການຖືພາຢ່າງໜ້ອຍໜຶ່ງຄັ້ງ ແມ່ນ 1.8% (ຮູບທີ 4.7). ໂດຍແບ່ງຕາມແຕ່ລະພາກ, ບັນຫານີ້ແມ່ນມີຫຼາຍໃນເຂດຕົວເມືອງ (2.6%) ຫຼາຍກວ່າເຂດຊົນນະບົດ (1.4%) ແລະ ເຂດຊົນນະບົດມີບໍ່ມີເສັ້ນທາງເຂົ້າເຖິງ (2.1%). ນອກຈາກນີ້ແລ້ວ, ແມ່ຍິງທີ່ມີການສຶກສາສູງກວ່າ ແມ່ນໄດ້ລາຍງານກ່ຽວກັບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ (0.8%), ເຊິ່ງໜ້ອຍກວ່າແມ່ຍິງທີ່ມີການສຶກສາຕ່ຳກວ່າ (ບໍ່ໄດ້ຮຽນໜັງສື 2.2%, ປະຖົມ 1.8% ແລະ ມັດທະຍົມ 2.2%).

ຮູບທີ 4.7. ອັດຕາສ່ວນ ຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໃນລະຫວ່າງການຖືພາ ຂອງແມ່ຍິງທີ່ເຄີຍຖືພາ, ສປປ ລາວ, ປີ 2014 (ຈຳນວນ=2,744)




## 4.3 ການໃຊ້ຄວາມຮຸນແຮງທາງເພດ

### 4.3.1 ອັດຕາສ່ວນການໃຊ້ຄວາມຮຸນແຮງທາງເພດ

ອັດຕາສ່ວນໂດຍລວມ ຂອງການໃຊ້ຄວາມຮຸນແຮງທາງເພດຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດໃນຊ່ວງຊີວິດແມ່ນມີ 7.2% (ຮູບທີ 4.8). ຖ້າຈັດແບ່ງຕາມພູມສັນຖານ, ແມ່ຍິງທີ່ຢູ່ໃນເຂດຕົວເມືອງແມ່ນມີອັດຕາສ່ວນຖືກຄວາມຮຸນແຮງ (8.6%) ເຊິ່ງຫຼາຍກວ່າແມ່ຍິງຢູ່ເຂດຊົນນະບົດທີ່ມີ (6.3%) ແລະ ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ (8.1%). ຖ້າຈັດແບ່ງຕາມພາກ, ພາກເໜືອມີອັດຕາການໃຊ້ຄວາມຮຸນແຮງທາງເພດຕໍ່ແມ່ຍິງ (4.4%) ໜ້ອຍກວ່າທາງພາກກາງທີ່ມີ (8.6%) ແລະ ພາກໃຕ້ (7.6%). ໃນຂະນະດຽວກັນ, ອັດຕາສ່ວນຄວາມຮຸນແຮງທາງເພດໃນໄລຍະ 12 ເດືອນທີ່ຜ່ານມາແມ່ນມີ 3.1%, ເຫັນວ່າອັດຕາສ່ວນມີຄວາມແຕກຕ່າງກັນພຽງເລັກໜ້ອຍລະຫວ່າງເຂດຕົວເມືອງຄື (3.1%) ແລະ ເຂດຊົນນະບົດ (3.3%), ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງແມ່ນມີອັດຕາສ່ວນໜ້ອຍສຸດຄື (2.3%). ອັດຕາສ່ວນການໃຊ້ຄວາມຮຸນແຮງທາງເພດຕໍ່ແມ່ຍິງໃນຊ່ວງຊີວິດກໍ່ບໍ່ແຕກຕ່າງກັນ, ຄືແມ່ຍິງຖືກຄວາມຮຸນແຮງທາງເພດເຊິ່ງແບ່ງຕາມເຂດ, ເຂດພາກເໜືອມີ (2.2%) ພາກກາງມີ (3.3%) ແລະ ພາກໃຕ້ແມ່ນ (3.9%).

ຮູບທີ 4.8 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)



ຖ້າຈັດແບ່ງຕາມເກນອາຍຸ ແມ່ນແຕກຕ່າງກັນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ໄວໜຸ່ມຍິງແມ່ນມີທີ່ອ່ຽງຫຼາຍກວ່າທີ່ຈະຖືກຄວາມຮຸນແຮງທາງເພດໃນປັດຈຸບັນ ແລະ ໃນຊ່ວງຊີວິດ. ຄືດັ່ງທີ່ສະແດງໃນ ຮູບທີ 4.9, ອັດຕາສ່ວນການໃຊ້ຄວາມຮຸນແຮງທາງເພດໃນຊ່ວງຊີວິດໃນກຸ່ມໄວໜຸ່ມຍິງອາຍຸ 15-19 ປີແມ່ນ 12.9% ທຽບກັບແມ່ຍິງກຸ່ມອາຍຸ 50 ແລະ 60 ປີຂຶ້ນໄປ (4.6% ຫາ 7.8%, ຕາມລຳດັບ). ເຖິງແມ່ນວ່າແມ່ຍິງໃນກຸ່ມອາຍຸ 50 ປີຂຶ້ນໄປ ແລະ 60 ປີຕົ້ນໆ ທີ່ໄດ້ລາຍງານກ່ຽວກັບການໃຊ້ຄວາມຮຸນແຮງທາງເພດໃນຊ່ວງຊີວິດ, ບໍ່ແມ່ນການໃຊ້ຄວາມຮຸນແຮງໃນປັດຈຸບັນ.

ຮູບທີ 4.9 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງເພດ ຈາກຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໂດຍຈັດຕາມກຸ່ມອາຍຸ, ສປປ ລາວ, ປີ 2014 (ຈຳນວນ=2,847)




ໂດຍກ່ຽວພັນກັບລະດັບການສຶກສາ (ຮູບທີ 4.10), ແມ່ຍິງທີ່ຈົບການສຶກສາທີ່ສູງກວ່າແມ່ນມີທ່າອ່ຽງສູງກວ່າທີ່ຈະຖືກຄວາມຮຸນແຮງທາງເພດຄືມີ (8.2%) ໃນຊ່ວງຊີວິດ ຫຼາຍກວ່າແມ່ຍິງທີ່ບໍ່ໄດ້ຮຽນໜັງສືທີ່ມີ (6.3%) ແລະ ການສຶກສາຂັ້ນມັດທະຍົມ (6.6%).

ຮູບທີ 4.10. ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງເພດ ຈາກຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຈັດໂດຍລະດັບການສຶກສາ, ສປປ ລາວ, ປີ 2014 (ຈຳນວນ=2,847)



### 4.3.2 ພຶດຕິກຳຂອງການໃຊ້ຄວາມຮຸນແຮງທາງເພດ

ຮູບທີ 4.11 ສະແດງເຖິງພຶດຕິກຳທີ່ແຕກຕ່າງກັນຂອງການໃຊ້ຄວາມຮຸນແຮງທາງເພດ. ແມ່ຍິງ 5.9% ແມ່ນຖືກບັງຄັບໃຫ້ມີເພດສຳພັນຢ່າງໜ້ອຍໜຶ່ງຄັ້ງໃນຊ່ວງຊີວິດ, 5.6% ແມ່ນຍິນຍອມມີເພດສຳພັນຍ້ອນຄວາມຢ້ານກົວ ແລະ 1.3% ແມ່ນຖືກບັງຄັບໃຫ້ກະທຳທາງເພດໃນຮູບແບບທີ່ໜ້າອັບອາຍ ແລະ ເສຍກຽດສັກສີ. ຖ້າຈັດແບ່ງຕາມພາກ, ສ່ວນໃຫຍ່ແມ່ນແມ່ຍິງທີ່ອາໄສຢູ່ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ໄດ້ລາຍງານວ່າຖືກບັງຄັບໃຫ້ມີເພດສຳພັນເຖິງ (7.6%) ແລະ ການມີເພດສຳພັນຍ້ອນຄວາມຢ້ານກົວ (7.5%) ທຽບກັບແມ່ຍິງທີ່ຢູ່ໃນເຂດຕົວເມືອງມີ (6.5%, 6.4%) ແລະ ໃນເຂດຊົນນະບົດ (5.4%, 4.9%), ຕາມລຳດັບ.

ຮູບທີ 4.11 ອັດຕາສ່ວນຂອງພຶດຕິກຳສະເພາະ ຂອງການໃຊ້ຄວາມຮຸນແຮງທາງເພດ
ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




### 4.3.3 ຄວາມຖີ່ຂອງການກະທຳຄວາມຮຸນແຮງທາງເພດ

ໃນການກະທຳໃດໜຶ່ງຂອງການໃຊ້ຄວາມຮຸນແຮງທາງເພດໃນໄລຍະ 12 ເດືອນທີ່ຜ່ານມາ, ແມ່ຍິງທີ່ຖືກຄວາມຮຸນແຮງທາງເພດເກືອບ 70% ແມ່ນຖືກບັງຄັບໃຫ້ມີເພດສຳພັນແບບໜ້າລັງກຽດ ແລະ ອັບອາຍ ຫຼາຍກວ່າ 5 ຄັ້ງ, ເກືອບ 60% ແມ່ນໄດ້ມີເພດສຳພັນທີ່ບໍ່ຕ້ອງການແຕ່ເຮັດຍ້ອນຄວາມຢ້ານກົວ ຫຼາຍກວ່າ 5 ຄັ້ງ ແລະ ເກືອບເຄິ່ງໜຶ່ງຄື (48.8%) ແມ່ນຖືກໃຊ້ກຳລັງບັງຄັບໃຫ້ມີເພດສຳພັນຫຼາຍກວ່າ 5 ຄັ້ງ (ຮູບທີ 4.12).

ຮູບທີ 4.12 ຄວາມຖີ່ຂອງການກະທຳສະເພາະ ຂອງການໃຊ້ຄວາມຮຸນແຮງທາງເພດ
ໂດຍສາມີ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ,
ສປປ ລາວ, ປີ 2014 (ຈຳນວນ=2,847))



ເຖິງແມ່ນວ່າຈະມີກໍລະນີການໃຊ້ຄວາມຮຸນແຮງທາງເພດໜ້ອຍກວ່າໃນການສໍາຫຼວດທາງດ້ານຄຸນນະພາບ, ໃນການສໍາພາດແບບເຈາະຈີ້ມ ຜູ້ຖືກເຄາະຮ້າຍບາງຄົນ ໄດ້ເວົ້າວ່າ ເຂົາເຈົ້າຖືກຄວາມຮຸນແຮງຫຼາຍຮູບແບບ (ຄວາມຮຸນແຮງທາງເພດ, ທາງຮ່າງກາຍ ແລະ ທາງຈິດໃຈ). ຕົວຢ່າງຕໍ່ໄປນີ້, ຜູ້ໃຫ້ສໍາພາດ ໄດ້ປະເຊີນບັນຫາທີ່ລາວປະຕິເສດການມີເພດສໍາພັນກັບຜົວຍ້ອນລາວລາວບໍ່ຕ້ອງການມີເພດສໍາພັນໂດຍບໍ່ຢ້ານກົວຕໍ່ຜົນກະທົບທີ່ຈະຕາມມາ.

**ແມ່ຍິງ, 28 ປີ, ແຂວງວຽງຈັນ**

*"ຂ້ອຍເຮັດວຽກມາເມື່ອຍແລ້ວ ແລະ ຂ້ອຍກໍ່ບໍ່ຢາກມີເພດສໍາພັນກັບລາວ. ເຖິງຢ່າງໃດກໍ່ຕາມ, ລາວກໍ່ຍັງພະຍາຍາມລູບຄໍາຮ່າງກາຍຂອງຂ້ອຍ, ເຊັ່ນ ກອດ, ຈູບ ແລະ ພະຍາຍາມທີ່ຈະມີເພດສໍາພັນກັບຂ້ອຍ. ແຕ່ຖ້າຂ້ອຍປະຕິເສດ ລາວກໍ່ຈະໃຈຮ້າຍ ແລະ ກ່າວຫາວ່າ ແລະ ຈົ່ມວ່າໃຫ້ຂ້ອຍໝົດມື້ວ່າຂ້ອຍມີຊາຍຄົນໃໝ່. ນອກຈາກນັ້ນແລ້ວ, ຂ້ອຍກໍ່ບໍ່ມັກທີ່ລາວປ້ອຍດ່າພໍ່ ແລະ ແມ່ຂອງຂ້ອຍ. ເຫດຜົນທີ່ຂ້ອຍປະຕິເສດບໍ່ມີເພດສໍາພັນກັບລາວກໍ່ຍ້ອນວ່າລາວຈະບໍ່ພໍໃຈຖ້າມີເພດສໍາພັນພຽງແຕ່ຄັ້ງດຽວ. ຄືລາວຕ້ອງການຢາກມີເພດສໍາພັນມື້ລະ 2 ຫາ 3 ຄັ້ງ ເຊິ່ງເປັນໄປບໍ່ໄດ້ທີ່ຂ້ອຍຈະສະໜອງໃຫ້ລາວ, ເພາະວ່າບາງຄັ້ງຂ້ອຍກໍ່ເມື່ອຍຫຼາຍຫຼັງຈາກເຮັດວຽກແລ້ວ. ເຖິງຢ່າງໃດກໍ່ຕາມ, ບາງຄັ້ງຂ້ອຍກໍ່ມີເພດສໍາພັນກັບລາວໂດຍທີ່ບໍ່ມີຄວາມຮູ້ສຶກຫຍັງ ພຽງແຕ່ເຮັດໃຫ້ລາວມີຄວາມສຸກ ແລະ ບໍ່ຈົ່ມວ່າອີກ."*

## 4.4 ອັດຕາສ່ວນຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຕໍ່ແມ່ຍິງ

ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ ເປັນເລື່ອງທໍາມະດາສໍາລັບການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ເຊິ່ງມັກເກີດຂຶ້ນທັງສອງຢ່າງ ເຊິ່ງຖືວ່າເປັນສ່ວນໜຶ່ງຂອງຊີວິດຄູ່ ຫຼາຍກວ່າຈະກາຍເປັນກໍລະນີຄວາມຮຸນແຮງສະເພາະ. ເມື່ອກວດສອບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຈາກຄູ່ຮ່ວມຊີວິດແລ້ວ, ການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຂອງແມ່ຍິງແມ່ນ ໄດ້ຖືກນໍາໃຊ້ເປັນຕົວຊີ້ວັດຕົ້ນຕໍສໍາລັບການວິເຄາະປຽບທຽບ.

ດັ່ງສະແດງໃນຮູບທີ 4.13, ອັດຕາສ່ວນການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ/ຫຼືທາງເພດໃນຊ່ວງຊີວິດໂດຍລວມແມ່ນ 15.3%. ແມ່ຍິງທີ່ອາໄສໃນເຂດຕົວເມືອງແມ່ນມີອັດຕາສ່ວນຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຫຼາຍກວ່າ ແມ່ຍິງໃນເຂດຊົນນະບົດ ແລະ ເຂດຊົນນະບົດມີ່ບໍ່ມີເສັ້ນທາງເຂົ້າເຖິງ. ໃນການຈັດແບ່ງຕາມພາກ, ພາກໃຕ້ມີ (17.2%) ແລະ ພາກກາງມີ (16.3%) ເຊິ່ງມີອັດຕາການໃຊ້ຄວາມຮຸນແຮງສູງກວ່າພາກເໜືອຄື (11.9%). ອັດຕາສ່ວນໂດຍລວມໃນປັດຈຸບັນແມ່ນ 6.0%, ເຊິ່ງມີທ່າອ່ຽງທີ່ໃກ້ຄຽງກັນລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດ ແລະ ໃນແຕ່ລະພາກ.

ຮູບທີ 4.13 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຈັກໂດຍພາກ, ສປປ ລາວ, ປີ 2014 (ຈໍານວນ=2,847)




ຮູບທີ 4.14 ສະແດງການຈັດແບ່ງຕາມກຸ່ມອາຍຸ. ແມ່ຍິງທີ່ຢູ່ໃນກຸ່ມອາຍຸ 30 ປີ ຕົ້ນໆແມ່ນມີທ່າອ່ຽງສູງໃນການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດໃນຊ່ວງຊີວິດ (23.9% ໃນກຸ່ມ 30-34 ປີ). ອັດຕາສ່ວນການຖືກຄວາມຮຸນແຮງທາງຮ່າງກາຍ ແລະ ຫຼື ທາງເພດໃນປັດຈຸບັນ, ໄວໜຸ່ມ (15-19 ປີ) ມີອັດຕາສ່ວນຖືກຄວາມຮຸນແຮງໃນລະດັບສູງທີ່ສຸດຄື (13.6%), ຕາມມາດ້ວຍກຸ່ມອາຍຸ 30 ປີ ຂຶ້ນໄປ ມີ (11.8%).

ຮູບທີ 4.14 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ
ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຈັດໂດຍອາຍຸ, ສປປ ລາວ, ປີ 2014 (ຈຳນວນ=2,847)




ອັດຕາສ່ວນການຖືກຄວາມຮຸນແຮງໃນຊ່ວງຊີວິດ ໂດຍຈັດແບ່ງຕາມລະດັບການສຶກສາແມ່ນມີຄວາມແຕກຕ່າງກັນພຽງເລັກໜ້ອຍເທົ່ານັ້ນ (ຮູບທີ 4.15). ແມ່ຍິງທີ່ບໍ່ໄດ້ເຂົ້າໂຮງຮຽນແມ່ນມີອັດຕາສ່ວນຖືກຄວາມຮຸນແຮງໃນຊ່ວງຊີວິດ (17.7%), ຫຼາຍກວ່າແມ່ຍິງທີ່ມີລະດັບການສຶກສາ (14.3% ຫາ 15.4%).

ຮູບທີ 4.15 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ
ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ
ຈັດໂດຍລະດັບການສຶກສາ, ສປປ ລາວ, ປີ 2014 (ຈຳນວນ=2,847)




## 4.5 ລວມທຸກປະເພດຄວາມຮຸນແຮງທີ່ແຕກຕ່າງກັນຈາກຄູ່ຮ່ວມຊີວິດ

ຄວາມຮຸນແຮງທີ່ທັບຊ້ອນກັນ(ການຖືກຄວາມຮຸນແຮງທັງສອງປະເພດ)ຂອງປະເພດຄວາມຮຸນແຮງຈາກຄູ່ຮ່ວມຊີວິດ,ການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ ແມ່ນປະເພດຂອງການໃຊ້ຄວາມຮຸນແຮງທີ່ໄປຄຽງຄູ່ກັນ (ຮູບທີ 4.16). ການສຳຫຼວດໃນຄັ້ງນີ້ແມ່ນ 15.3% ຂອງແມ່ຍິງທີ່ໄດ້ລາຍງານວ່າຖືກຄວາມຮຸນແຮງທາງຮ່າງກາຍ ຫຼື ທາງເພດພຽງຢ່າງໃດຢ່າງໜຶ່ງ ຫຼື ທັງສອງ.

ຮູບທີ 4.16 ລວມຕົວເລກ ແລະ ອັດຕາການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໃນຊ່ວງຊີວິດ




## 4.6 ຄວາມຮຸນແຮງທາງຈິດໃຈ

ການລ່ວງລະເມີດທາງຈິດໃຈ ແມ່ນຮູບແບບໜຶ່ງຂອງການໃຊ້ຄວາມຮຸນແຮງທີ່ແມ່ຍິງພົບພໍ້ຫຼາຍ. ຄວາມຮຸນແຮງທາງຈິດແມ່ນການຫຼອກລວງ ແລະ ການຂົ່ມຂູ່ ແລະ ການທຳຮ້າຍທາງຈິດໃຈຫຼາຍກວ່າເຮັດໃຫ້ບາດເຈັບເປັນບາດແຜທາງຮ່າງກາຍ. ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງທາງຈິດໃຈ ສ່ວນຫຼາຍແມ່ນບໍ່ລືມຄວາມຮູ້ສຶກຜິດເຫຼົ່ານັ້ນ ແລະ ຮູບແບບການໃຊ້ຄວາມຮຸນແຮງນີ້ສ່ວນຫຼາຍແມ່ນມັກຈະບໍ່ໃຫ້ຄວາມສຳຄັນ ແລະ ຖືກເບິ່ງຂ້າມ, ເຊິ່ງບັນຫາດັ່ງກ່າວບໍ່ໄດ້ຖືກຮັບຮູ້ ເນື່ອງຈາກທຳມະຊາດຂອງບັນຫາດັ່ງກ່າວແມ່ນຍາກທີ່ຈະອະທິບາຍໄດ້ ແລະ ຖືກປົກປິດບໍ່ມີການເປີດເຜີຍໃຫ້ຄົນອື່ນຮັບຮູ້. ດັ່ງນັ້ນ, ການໃຊ້ຄວາມຮຸນແຮງທາງຈິດໃຈ ກໍ່ຍັງຖືກເບິ່ງຂ້າມ ແລະ ເຫັນວ່າເປັນບັນຫາທີ່ບໍ່ສຳຄັນ ເມື່ອທຽບກັບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ.

ການສຳຫຼວດນີ້ ແມ່ນປະຕິບັດຕາມມາດຕະຖານຂອງແບບສອບຖາມ ຈາກອົງການອະນາໄມໂລກ, ເຊິ່ງໄດ້ໃຫ້ນິຍາມ "ການໃຊ້ຄວາມຮຸນແຮງທາງຈິດໃຈ" ແມ່ນພຶດຕິກຳສະເພາະເຊັ່ນດູຖູກ(ໝິ່ນປະໝາດ), ເຮັດໃຫ້ອັບອາຍ ເສຍໜ້າຕໍ່ໜ້າຄົນອື່ນ, ເຮັດໃຫ້ເກີດຄວາມຢ້ານກົວ, ຂົ່ມຂູ່ໃຫ້ເກີດຄວາມເສຍຫາຍ ຫຼື ເຮັດໃຫ້ຕົນເອງບໍ່ມີຄຸນຄ່າ (ຫຼື ບໍ່ມີສັກສີບໍ່ໝັ້ນໃຈຕົນເອງ). ຄືດັ່ງສະແດງໃນຮູບທີ 4.17, ອັດຕາສ່ວນການໃຊ້ຄວາມຮຸນແຮງທາງຈິດໃຈຕໍ່ແມ່ຍິງໃນຊ່ວງຊີວິດຊີວິດ ແມ່ນ 26.2%. ໂດຍແບ່ງຕາມພູມສັນຖານ, ແມ່ຍິງທີ່ອາໄສຢູ່ໃນເຂດຊົນນະບົດມີບໍ່ມີເສັ້ນທາງເຂົ້າເຖິງແມ່ນຖືກຄວາມຮຸນແຮງ ທາງຈິດໃຈເຖິງ (28.6%) ຫຼາຍກວ່າແມ່ຍິງໃນເຂດຕົວເມືອງ ແລະ ຊົນນະບົດຄື (24.6% ແລະ 26.7%, ຕາມລຳດັບ). ຖ້າແບ່ງຕາມແຕ່ລະພາກ (3 ພາກ), ແມ່ຍິງຢູ່ເຂດພາກເໜືອຖືກຄວາມຮຸນແຮງທາງຈິດໃຈ (19.9%) ໜ້ອຍກວ່າ ພາກກາງ (28.4%) ແລະ ພາກໃຕ້ (29.1%). ທ່າອ່ຽງຂອງອັດຕາສ່ວນການໃຊ້ຄວາມຮຸນແຮງທາງຈິດໃຈໃນປັດຈຸບັນໂດຍລວມ ແມ່ນບໍ່ແຕກຕ່າງກັນກັບອັດຕາຄວາມຮຸນແຮງໃນຊ່ວງຊີວິດ.

ຮູບທີ 4.17 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ອັດຕາສ່ວນຄວາມຮຸນແຮງທາງຈິດໃຈໃນຊ່ວງຊີວິດໃນແມ່ຍິງກຸ່ມອາຍຸຕ່າງໆ ເຫັນວ່າບໍ່ມີຄວາມແຕກຕ່າງກັນຫຼາຍ, ຍົກເວັ້ນແມ່ຍິງກຸ່ມອາຍຸ 30-34 ປີ ມີ(35.7%) ຄືສະແດງໃນຮູບທີ 4.18. ເຖິງຢ່າງໃດກໍ່ຕາມ, ໄວໜຸ່ມຍິງແມ່ນມີອັດຕາສ່ວນຄວາມຮຸນແຮງທາງຈິດໃຈທີ່ສູງຂຶ້ນໃນປັດຈຸບັນ. ທ່າອ່ຽງທີ່ແມ່ຍິງໃນກຸ່ມອາຍຸສູງ ແມ່ ນຖືກຄວາມຮຸນແຮງທາງຈິດໃຈທີ່ມີອັດຕາສ່ວນຄວາມຮຸນແຮງໃນປັດຈຸບັນ ແມ່ນທີ່ຄ້າຍຄືກັນກັບຜົນຂອງການສຳຫຼວດການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ.

ຮູບທີ 4.18 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຈັດໂດຍກຸ່ມອາຍຸ, ສປປ ລາວ, ປີ 2014 (ຈຳນວນ=2,847)




ຖ້າເບິ່ງໃນດ້ານລະດັບການສຶກສາ (ຮູບທີ 4.19), ແມ່ຍິງທີ່ມີການສຶກສາສູງກວ່າ ໄດ້ເປີດເຜີຍອັດຕາການຖືກຄວາມຮຸນແຮງທາງຈິດໃຈໃນຊ່ວງຊີວິດທີ່ຜ່ານມາ, ເຫັນວ່າ 31.2% ສຳລັບແມ່ຍິງທີ່ມີການສຶກສາສູງ ແລະ 30.4% ສຳລັບແມ່ຍິງມີການສຶກສາຊັ້ນມັດທະຍົມ, ທຽບກັບຊັ້ນປະຖົມແມ່ນມີ (23.9%) ແລະ ແມ່ຍິງທີ່ບໍ່ໄດ້ເຂົ້າໂຮງຮຽນ (25.2%).

ຮູບທີ 4.19 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ຈັດໂດຍລະດັບການສຶກສາ, ສປປ ລາວ, ປີ 2014 (ຈຳນວນ=2,847)




ຈຳນວນແມ່ຍິງທີ່ໄດ້ຖືກຖາມວ່າ ຮູບແບບຕ່າງໆທີ່ແມ່ຍິງຖືກຄວາມຮຸນແຮງທາງຈິດໃຈໄດ້ເກີດຂຶ້ນເລື້ອຍເທົ່າໃດໃນຊ່ວງຊີວິດທີ່ຜ່ານມາ ແລະ ໃນຊ່ວງ 12 ເດືອນທີ່ຜ່ານມາ. ເຊິ່ງມີ 19.9% ແມ່ນແມ່ຍິງໄດ້ເປີດເຜີຍວ່າເຂົາເຈົ້າຖືກດູຖູກ ແລະ ເຮັດໃຫ້ຮູ້ສຶກບໍ່ດີໃນຊ່ວງຊີວິດທີ່ຜ່ານມາ (ຮູບທີ 4.20). ແມ່ຍິງທີ່ໄດ້ຖືກຖາມວ່າ ຮູບແບບຕ່າງໆທີ່ແມ່ຍິງຖືກຄວາມຮຸນແຮງທາງຈິດໃຈໄດ້ເກີດຂຶ້ນເລື້ອຍເທົ່າໃດອີງຕາມຄວາມຖີ່, ຫຼາຍກວ່າເຄິ່ງໜຶ່ງຂອງແມ່ຍິງ ຄື (59.6%) ເຄີຍຖືກໝິ່ນປະໝາດ ຫຼື ເຮັດໃຫ້ອັບອາຍຫຼາຍກວ່າ 5 ຄັ້ງ ແລະ ເກືອບເຄິ່ງໜຶ່ງ (49.7%) ເຮັດໃຫ້ມີຄວາມຢ້ານກົວ ຫຼື ຖືກຂົ່ມຂູ່ ຫຼາຍກວ່າ 5 ຄັ້ງ.

ຮູບທີ 4.20 ອັດຕາສ່ວນຂອງພຶດຕິກຳທີ່ແຕກຕ່າງກັນ ຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ຮູບທີ 4.21 ສະແດງເຖິງອັດຕາສ່ວນເຂດທັບຊ້ອນກັນຂອງຄວາມຮຸນແຮງທາງຮ່າງກາຍ, ທາງເພດ ແລະ ທາງຈິດໃຈ. ເກືອບ 1 ສ່ວນ 3 ຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ (30.3%) ໄດ້ລາຍງານ ຄືຢ່າງໜ້ອຍ 1 ໃນ 3 ປະເພດຂອງຄວາມຮຸນແຮງ, ເຊິ່ງໃນນັ້ນການໃຊ້ຄວາມຮຸນແຮງທາງຈິດໃຈແມ່ນຮູບແບບທີ່ຫຼາຍທີ່ສຸດຂອງການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ.

ຮູບທີ 4.21 ການຖືກຄວາມຮຸນແຮງທາງຮ່າງກາຍ, ຈິດໃຈ ແລະ ທາງເພດ ໂດຍຜົວ/ຄູ່ຮ່ວມຊີວິດ

ລວມ ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ (ຈຳນວນ=2,847)

**ກຸ່ມທີ່ບໍ່ມີການໃຊ້ຄວາມຮຸນແຮງ**

ຈຳນວນ=1,945




ເຊັ່ນດຽວກັນ, ແມ່ຍິງທີ່ໃຫ້ສຳພາດສ່ວນໃຫຍ່ໃນການສຳຫຼວດທາງດ້ານຄຸນນະພາບ ແມ່ນເຄີຍຖືກຄວາມຮຸນແຮງທາງຈິດໃຈ. ຜູ້ຖືກເຄາະຮ້າຍໄດ້ຖືກລ່ວງລະເມີດທາງຄຳເວົ້າ ແລະ ການເຮັດໃຫ້ອັບອາຍຂາຍໜ້າ ບໍ່ພຽງແຕ່ໃນຄວາມສຳພັນສ່ວນຕົວເທົ່ານັ້ນ, ແຕ່ຍັງເຮັດໃຫ້ເກີດຄວາມອັບອາຍຕໍ່ໜ້າຂອງຄົນອື່ນໆ ເຊັ່ນ: ຄອບຄົວ, ພີ່ນ້ອງ ແລະ ໝູ່ເພື່ອນ. ອີງຕາມການບອກເລົ່າຂອງແມ່ຍິງ, ການໃຊ້ຄວາມຮຸນແຮງທາງຈິດໃຈແມ່ນເກີດຂຶ້ນຍ້ອນຄວາມຫຶງຫວງ ແລະ ການບໍ່ເຊື່ອໃຈ ໂດຍພົວພັນກັບຄວາມບໍ່ສັດຊື່ຂອງຜົວ ແລະ ພຶດຕິກຳໃນການດື່ມສິ່ງມຶນເມົາ. ຕົວຢ່າງ, ແມ່ຍິງທີ່ຢູ່ໃນການບອກເລົ່າລຸ່ມນີ້ຮູ້ສຶກບໍ່ດີຕໍ່ເມຍນ້ອຍ ທີ່ເປັນສາເຫດຂອງການຖືກໃຊ້ຄວາມຮຸນແຮງທາງຈິດໃຈຍ້ອນວ່າເປັນສິ່ງທີ່ກະທົບຕໍ່ຈິດໃຈຂອງແມ່ຍິງ.

*"ບໍ່ມີໃຜຮູ້ດອກວ່າໃນໃຈຂ້ອຍຮູ້ສຶກເຈັບປວດຫຼາຍເທົ່າໃດ".*

**ແມ່ຍິງທີ່ຖືກເຄາະຮ້າຍ, ຊົນນະບົດ**

***"ຕັ້ງແຕ່ລູກຊາຍຂອງຂ້ອຍເກີດຂຶ້ນມາ, ຜົວຂອງຂ້ອຍກໍ່ຫຼຸດຜ່ອນການໃຊ້ຄວາມຮຸນແຮງລົງ, ແຕ່ກໍ່ຫຼຸດລົງບໍ່ຫຼາຍປານໃດ. ລາວມີເມຍນ້ອຍ. ລາວໄປຢູ່ແຕ່ກັບເມຍນ້ອຍຈົນບໍ່ສົນໃຈນຳລູກ ແລະ ເມຍເລີຍ. ລາວກັບບ້ານຊ້ຳ, ຫຼື ບໍ່ກັບເລີຍ, ລາວໂທລົມກັບເມຍນ້ອຍຄືນນັ້ນຕໍ່ໜ້າຂ້ອຍເລີຍ ເຮັດໃຫ້ຂ້ອຍຮູ້. ລາວບໍ່ສົນໃຈຄວາມຮູ້ສຶກຂອງຂ້ອຍ."***

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

## 4.7 ການຄວບຄຸມພຶດຕິກຳ

ການຄວບຄຸມພຶດຕິກຳ ໄດ້ຖືກນິຍາມວ່າແມ່ນຮູບແບບການປະພຶດ ທີ່ເຮັດໃຫ້ບຸກຄົນໃດໜຶ່ງຕົກຢູ່ພາຍໃຕ້ອຳນາດຂອງຜູ້ກະທຳຜິດ ແລະ/ຫຼື ເຮັດໃຫ້ຂຶ້ນກັບເຂົາ ໂດຍການແຍກບໍ່ໃຫ້ຮັບການຊ່ວຍເຫຼືອ, ການເຂົ້າເຖິງຊັບພະຍາກອນ ຫຼື ຄວາມສາມາດໃນການສ້າງສາພັດນາຕົນເອງຂອງພວກເຂົາ, ການເຮັດໃຫ້ແມ່ຍິງຂາດອິດສະຫຼະພາບ, ການຕໍ່ຕ້ານ ແລະ ຫຼົບໜີ ແລະ ການຄວບຄຸມການປະພຶດຂອງກິດຈະກຳປະຈຳວັນຂອງເຂົາເຈົ້າ.[11] ການສຳຫຼວດທີ່ປະຕິບັດຕາມວິທີການສຳຫຼວດຂອງອົງການອະນາໄມໂລກ, ການວັດແທກບັນດາພຶດຕິກຳແມ່ນວັດແທກຈາກການຈຳກັດການຕິດຕໍ່ສື່ສານລະຫວ່າງແມ່ຍິງກັບສະມາຊິກຄອບຄົວ ແລະ ໝູ່ເພື່ອນຂອງເຂົາເຈົ້າ, ພະຍາຍາມທີ່ຈະຮູ້ສະຖານທີ່ ທີ່ແມ່ຍິງຢູ່ຕະຫຼອດເວລາ, ການລະເລີຍ ແລະ ເມີນເສີຍ ຕໍ່ແມ່ຍິງ ແລະ ການຄວບຄຸມການເຂົ້າເຖິງການເບິ່ງແຍງສຸຂະພາບ (ຕົວຢ່າງ, ແມ່ຍິງຕ້ອງຂໍອະນຸຍາດຜົວເພື່ອຈະໄປປິ່ນປົວຢູ່ໂຮງໝໍ), ມີຄວາມສົງໄສຕະຫຼອດວ່າແມ່ຍິງບໍ່ມີຄວາມສັດຊື່ຕໍ່ຕົນ ແລະ ມີອາລົມໃຈຮ້າຍຕະຫຼອດເວລາ ຖ້າຮູ້ວ່າແມ່ຍິງລົມນຳຊາຍອື່ນ (Garcia-Moreno ພ້ອມຄະນະ.,2005:36).

ຮູບທີ 4.22 ສະແດງເຖິງອັດຕາສ່ວນການຖືກຄວາມຮຸນແຮງໃນຊ່ວງຊີວິດ ຄືການຄວບຄຸມພຶດຕິກຳໃນຮູບແບບຕ່າງໆ ໃນກຸ່ມແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ມີ 34.8% ທີ່ເຄີຍຖືກໜຶ່ງໃນຮູບແບບຂອງການຖືກຄວບຄຸມການປະພຶດ. ປະເພດທີ່ເກີດຂຶ້ນເປັນປະຈຳຄື "ພະຍາຍາມທີ່ຈະຮູ້ສະຖານທີ່ ທີ່ແມ່ຍິງຢູ່ຕະຫຼອດເວລາ" ມີ (18.4%), ຈາກນັ້ນແມ່ນ "ມີຄວາມສົງໄສຕະຫຼອດເວລາວ່າແມ່ຍິງບໍ່ມີຄວາມສັດຊື່ຕໍ່ຕົນ" (15.7%) ແລະ "ບໍ່ໃຫ້ແມ່ຍິງຕິດຕໍ່ພົວພັນນຳໝູ່ເພື່ອນຂອງລາວ" (12.4%).

ຮູບທີ 4.22 ອັດຕາສ່ວນຂອງປະເພດ ການຄວບຄຸມການປະພຶດ ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ໃນການສຳຫຼວດທາງດ້ານຄຸນນະພາບ, ແມ່ຍິງສ່ວນໃຫຍ່ຮູ້ສຶກວ່າຖືກຄວບຄຸມຈາກຜົວຂອງພວກເຂົາ ໃນເວລາອອກໄປທາງນອກ, ການກັບບ້ານເດີກ ຫຼື ບັນດາພຶດຕິກຳອື່ນໆ ທີ່ເຮັດໃຫ້ຜົວເກີດຄວາມສົງໃສວ່າບໍ່ສັດຊື່, ເຖິງວ່າຈະບໍ່ມີມູນຄວາມຈິງກໍ່ຕາມ.

**ແມ່ຍິງອາຍຸ 32 ປີ ທີ່ແຕ່ງງານແລ້ວ, ແຂວງນະຄອນຫຼວງ**

***"ເວລາທີ່ໂຫດຮ້າຍທີ່ສຸດແມ່ນຄືນທີ່ຂ້ອຍຕ້ອງເຮັດວຽກເປັນພະນັກງານຂາຍຈີນເດີກ. ລາວຄິດວ່າຂ້ອຍໄປຢູ່ກັບຊາຍອື່ນ ແລະ ລາວກໍ່ນຳຫາຂ້ອຍ. ລາວພົບຂ້ອຍຕອນທີ່ຂ້ອຍຂັບລົດກັບບ້ານ ແລະ ລາວກໍ່ຮ້ອງໃສ່ຂ້ອຍ ແລະ ດ່າຂ້ອຍມາຕະຫຼອດທາງ. ພໍຮອດເຮືອນ ຂ້ອຍຍັງບໍ່ທັນມອດຈັກລົດ ລາວກໍ່ເອົາໝວກກັນກະທົບຂອງລາວຟາດໜ້າຂ້ອຍ ແລະ ກໍ່ບີບຄໍຂ້ອຍ. ອີກເທື່ອໜຶ່ງກໍ່ແມ່ນຕອນທີ່ຂ້ອຍເຮັດວຽກເປັນພະນັກງານອະນາໄມໃນໂຮງແຮມ. ລາວເມົາ ແລ້ວ ລາວກໍ່ມາຫາຂ້ອຍຢູ່ໂຮງແຮມ, ລາວກ່າວຫາຂ້ອຍວ່າຂ້ອຍໄປນອນນຳແຂກໃນໂຮງແຮມ. ຂ້ອຍອັບອາຍຫຼາຍ. ລາວບໍ່ໃຫ້ຂ້ອຍໄປໃສ, ລາວຢ້ານຂ້ອຍໄປເຮັດແນວອື່ນ ຍ້ອນລາວຫຶງຫວງຂ້ອຍຫຼາຍ. ຂ້ອຍບໍ່ກ້າໄປໃສ ແລະ ຢ້ານພຶດຕິກຳດັ່ງກ່າວອີກ ເພາະລາວມີນິໄສບໍ່ດີ. ເວລາທີ່ລາວໃຈຮ້າຍ ລາວຈະຕີຂ້ອຍ, ບາງຄັ້ງຂ້ອຍບໍ່ສາມາດແລ່ນ ແລະ ໜີໄປລີ້ທັນ ແລະ ກໍ່ເຈັບ".***

[11] Womens Aid, ການໃຊ້ຄວາມຮຸນແຮງໃນຄອບຄົວແມ່ນຫຍັງ?
ເບິ່ງໄດ້ທີ່: http://www.womensaid.org.uk/domestic-violence-articles.asp?section=00010001002200410001&itemid=1272, ເຂົ້າເບິ່ງໃນເດືອນພະຈິກ 2014.

## 4.8 ຄວາມຮຸນແຮງທາງເສດຖະກິດ

ການໃຊ້ຄວາມຮຸນແຮງທາງເສດຖະກິດເກີດຂຶ້ນໃນເວລາທີ່ຄູ່ຮ່ວມຊີວິດໄດ້ຄວບຄຸມແມ່ຍິງບໍ່ໃຫ້ເຂົ້າເຖິງຊັບພະຍາກອນທາງເສດຖະກິດ, ເຊິ່ງເຮັດໃຫ້ຫຼຸດຜ່ອນຄວາມສາມາດຂອງຜູ້ຖືກເຄາະຮ້າຍໃນການຊ່ວຍເຫຼືອຕົນເອງ ແລະ ບັງຄັບໃຫ້ຜູ້ຖືກເຄາະຮ້າຍ ຍິງ/ຊາຍ ຕ້ອງເຮັດຕາມຜູ້ກະທຳຜິດໃນດ້ານການເຂົ້າເຖິງການເງິນ ແລະ ການຄວບຄຸມເງິນ.

ຮູບທີ 4.23 ສະແດງເຖິງອັດຕາສ່ວນ ຂອງການໃຊ້ຄວາມຮຸນແຮງທາງເສດຖະກິດທີ່ມີຮູບແບບທີ່ແຕກຕ່າງກັນ ໃນກຸ່ມແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ. ອັດຕາສ່ວນການໃຊ້ຄວາມຮຸນແຮງທາງເສດຖະກິດໃນຊ່ວງຊີວິດທີ່ຜ່ານມາໂດຍລວມ "ເອົາເງິນທີ່ແມ່ຍິງຫາມາໄດ້ ຫຼື ເກັບອອມໄດ້ ໄປຈົນໝົດ" ມີ 5.0%, "ປະຕິເສດບໍ່ໃຫ້ເງິນ" ມີ 4.3% ແລະ ແມ່ຍິງທີ່ຖືກຄວາມຮຸນແຮງດ້ານເສດຖະກິດປະເພດໃດໜຶ່ງ ຫຼື ທັງສອງຮູບແບບນີ້ ແມ່ນມີ 6.8%. ເບິ່ງຕາມເຂດທີ່ແຕກຕ່າງກັນ, ເຂດຕົວເມືອງ ແລະ ໃນພາກກາງມີອັດຕາສ່ວນຫຼາຍທີ່ສຸດໃນທຸກໆ ຕົວຊີ້ວັດ.

ຮູບທີ 4.23 ອັດຕາສ່ວນຂອງປະເພດ ການໃຊ້ຄວາມຮຸນແຮງທາງດ້ານເສດຖະກິດ
ໂດຍຜົວ/ຄູ່ຮ່ວມຊີວິດ ຕໍ່ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ການສຳຫຼວດທາງດ້ານຄຸນນະພາບສະແດງໃຫ້ເຫັນວ່າ ແມ່ຍິງເປັນຜູ່ຮັບຜິດຊອບໃນການບໍລິຫານຈັດການຄ່າໃຊ້ຈ່າຍໃນຄົວເຮືອນ ດ້ວຍລາຍໄດ້ທີ່ມີຈຳກັດ, ແຕ່ແມ່ຍິງບໍ່ໄດ້ຮັບຄວາມເຊື່ອໃຈໃນການໃຊ້ເງິນທີ່ຜູ້ຊາຍຫາມາໄດ້. ຜົນກໍຄືຕ້ອງການໃຫ້ແມ່ຍິງນຳໃຊ້ເງິນທີ່ເຂົາເຈົ້າຫາມາ ເພື່ອຊື້ສິ່ງທີ່ເຂົາເຈົ້າຕ້ອງການ, ຜູ້ຊາຍຮູ້ສຶກອິດສາ ການທີ່ແມ່ຍິງໄດ້ວຽກດີ ແລະ ໄດ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງຫຼັງຈາກເຂົາເຈົ້າກັບມາເຮືອນ. ຫຼື ຍົກຕົວຢ່າງ ຜູ້ຊາຍທີ່ມີເງິນຈຳກັດ ຈະດື່ມສິ່ງມຶນເມົາກັບໝູ່ຄູ່ "ລ້ຽງໝູ່" ເພື່ອຈະໄດ້ລົມກັບ "ສາວເບຍ"[12] ຫຼື ສາວບໍລິການ ແລະ ພຶດຕິກຳທີ່ຜູ້ຊາຍຕ້ອງເຮັດເພື່ອຮັກສາໜ້າຕົນເອງໄວ້. ຜູ້ໃຫ້ຂໍ້ມູນຫຼັກຍັງໄດ້ໃຫ້ຂໍ້ມູນວ່າບັນຫາເສດຖະກິດຄອບຄົວສາມາດເຮັດໃຫ້ມີຂໍ້ຂັດແຍ່ງກັນໃນເລື່ອງເງິນ, ໂດຍສະເພາະຈະມີຄ່າໃຊ້ຈ່າຍເພີ່ມຂຶ້ນໃນກໍລະນີຕ້ອງລ້ຽງລູກ. ບໍ່ມີຄວາມເຊື່ອໃຈໃນການໃຊ້ເງິນ, ລາຍໄດ້ ແລະ ນິໄສການໃຊ້ຈ່າຍ ເຊິ່ງໄດ້ເປີດເຜີຍໃນການສຳພາດຜູ້ໃຫ້ຂໍ້ມູນຫຼັກ.

*"ຜູ້ຊາຍບາງຄົນທີ່ມີເງິນ ເຂົາເຈົ້າກໍ່ມັກຈະໄປດື່ມເຫຼົ້າ ດື່ມເບຍກັບໝູ່ເພື່ອນຂອງເຂົາເຈົ້າ. ຖ້າເຂົາເຈົ້າບໍ່ໄປ ໝູ່ຂອງເຂົາເຈົ້າກໍ່ຈະໂທຫາໃຫ້ໄປຮ່ວມ. ຖ້າເຂົາເຈົ້າບໍ່ມີເງິນ, ເຂົາຈະຖາມເອົາເງິນນຳເມຍ ແລະ ຖ້າຜູ້ເປັນເມຍບໍ່ມີໃຫ້ ກໍ່ຈະເຮັດໃຫ້ເກີດມີຂໍ້ຂັດແຍ່ງ ແລະ ການຕໍ່ສູ້ກັນ."*

**ຜູ້ຊາຍທີ່ເປັນຜູ້ໃຫຍ່, ເຂດຕົວເມືອງ**

[12] 'ສາວເບຍ' ແມ່ນໄວໜຸ່ມຍິງທີ່ຖືກຈ້າງ ແລະ ສົ່ງມາເຮັດວຽກໂດຍບໍລິສັດເບຍ ໃນຖານະເປັນຜູ້ໂຄສະນາ ແລະ ເສີບເບຍໃນຮ້ານອາຫານ ຫຼື ຮ້ານເບຍ. ພວກເຂົາຈະນຸ່ງຊຸດຮັດ ແລະ ເຊັກຊີ ເຊິ່ງແມ່ນຊຸດທີ່ບໍລິສັດສະໜອງໃຫ້ ເພື່ອໂຄສະນາສິນຄ້າ. ບາງຄັ້ງຫຼັງຈາກຊົ່ວໂມງເຮັດວຽກ, ສາວເບຍກໍ່ອອກໄປກັບລູກຄ້າຕໍ່ໃນເລື່ອງຊູ້ສາວ, ແຕ່ເຫດການນີ້ເກີດຂຶ້ນຍ້ອນຄວາມສະໝັກໃຈຂອງທັງສອງຝ່າຍໃນຮູບແບບຂອງຄວາມສຳພັນພຽງຂ້າມຄືນ ຫຼື ຄວາມສຳພັນໄລຍະຍາວ. ທັງສອງຄວາມສຳພັນນີ້ອາດຈະມີເລື່ອງເງິນ ຫຼື ຊັບສິນອື່ນເຂົ້າມາກ່ຽວຂ້ອງ. ສາຍພົວພັນກ່ອນໜ້ານີ້ອາດຢູ່ໃນຮູບແບບຂອງການບໍລິການທາງເພດ, ໃນຂະນະທີ່ຄວາມສຳພັນໃນໄລຍະຍາວ ອາດພັດທະນາໄປເຖິງການທີ່ສາວເບຍກາຍໄປເປັນ "ເມຍນ້ອຍ" ຖ້າຊາຍທີ່ແຕ່ງງານແລ້ວ.

| ຜູ້ໃຫ້ຂໍ້ມູນຫຼັກ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ | *"ເດັກຫຼາຍໆ ຄົນມີຄວາມຕ້ອງການຫຼາຍຢ່າງ. ພໍ່ແມ່ມີການຜິດຖຽງກັນ. ເມຍຕ້ອງການຊື້ສິ່ງຂອງຕ່າງໆ ແຕ່ຜົວບໍ່ຍິນຍອມ. ລວມທັງການທີ່ພໍ່ແມ່ບໍ່ມີເວລາໃຫ້ລູກ ແລະ ຜົວເມຍກໍ່ມີການຈົ່ມວ່າໃຫ້ກັນໃນການລ້ຽງລູກຂອງເຂົາເຈົ້າ. ອີກເຫດຜົນໜຶ່ງສຳລັບການໃຊ້ຄວາມຮຸນແຮງແມ່ນບັນຫາຄວາມທຸກຍາກ ແລະ ບັນຫາທາງດ້ານເສດຖະກິດ. ເດັກມີຄວາມຕ້ອງການ, ແຕ່ບໍ່ມີເງິນພຽງພໍໃນການສະໜອງໃຫ້."* |
|---|---|

ຈາກການສົນທະນາກຸ່ມ ແລະ ການສຳພາດແບບເຈາະເລິກ ໄດ້ຈຳແນກໃຫ້ເຫັນຫຼາຍໆທາງ ທີ່ແມ່ຍິງອາດຈະຖືກຜົນກະທົບ ໃນການໃຊ້ຄວາມຮຸນແຮງໃນຊີວິດ. ໂດຍສະເພາະ, ການສູນເສຍທາງດ້ານການເງິນ ແລະ ການຖືກຄວາມຮຸນແຮງທາງຈິດໃຈ ເຊິ່ງມີຄວາມຖີ່ ແລະ ມີຜົນກະທົບຢ່າງຫຼວງຫຼາຍ.

## 4.9 ພາກສົນທະນາ

ໃນບົດນີ້ ໄດ້ສະແດງໃຫ້ເຫັນເຖິງອັດຕາສ່ວນຂອງປະເພດການໃຊ້ຄວາມຮຸນແຮງທີ່ແຕກຕ່າງກັນ ທີ່ພົວພັນເຖິງດ້ານຄວາມຖີ່ ແລະ ລະດັບຄວາມຮຸນແຮງ, ເຊິ່ງອັດຕາສ່ວນໂດຍລວມຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໃນຊ່ວງຊີວິດທີ່ຜ່ານມາ ແມ່ນມີ 11.6% ແລະ 4.0% ໃນຊ່ວງໄລຍະ 12 ເດືອນທີ່ຜ່ານມາ. ຜົນການສຳຫຼວດນີ້ບໍ່ແຕກຕ່າງຫຼາຍຈາກຜົນການສຳຫຼວດອື່ນໆ ທີ່ຜ່ານມາ ໃນ ສປປ ລາວ, ເຊັ່ນ ການໃຊ້ຄວາມຮຸນແຮງໃນຄອບຄົວໃນເຂດຊົນນະບົດ ແລະ ການວິໄຈທາງດ້ານບົດບາດຍິງ-ຊາຍ (17% ໃນຊ່ວງຊີວິດ) ຕາມຜົນສຳຫຼວດໂດຍກຸ່ມພັດທະນາບົດບາດຍິງ-ຊາຍ ປີ 2003. ເຖິງຢ່າງໃດກໍ່ຕາມ ເຫັນວ່າບໍ່ມີຄວາມແຕກຕ່າງຫຼາຍໃນດ້ານພູມສັນຖານ, ແມ່ຍິງໃນກຸ່ມ ອາຍຸ 30 ປີຂຶ້ນໄປ ແລະ ບໍ່ໄດ້ເຂົ້າໂຮງຮຽນ ແມ່ນມີທ່າອ່ຽງສູງກວ່າທີ່ຈະຖືກຄວາມຮຸນແຮງທາງດ້ານຮ່າງກາຍໃນຊ່ວງຊີວິດ ແລະ ໃນຊ່ວງໄລຍະ 12 ເດືອນການໃຊ້ຄວາມຮຸນແຮງທາງຮ່າງກາຍ ບໍ່ໄດ້ເກີດຂຶ້ນພຽງແຕ່ຄັ້ງດຽວເທົ່ານັ້ນ, ແມ່ຍິງຫຼາຍກວ່າເຄິ່ງໜຶ່ງທີ່ຖືກຄວາມຮຸນແຮງທາງຮ່າງກາຍ ເຊັ່ນ ການແກ່ລາກ/ເຕະ ຫຼື ບີບຄໍ/ເອົາໄຟຈູດ ຫຼາຍກວ່າ 5 ຄັ້ງລຽນຕິດ ແລະ ບໍ່ຢຸດເຊົາ. ຜົນການສຳຫຼວດທີ່ຄ້າຍຄືກັນແມ່ນມີຢູ່ໃນການສຳຫຼວດທາງດ້ານຄຸນນະພາບ. ຈຳນວນແມ່ຍິງທີ່ເຂົ້າຮ່ວມໃນການສຳພາດແບບເຈາະເລິກໄດ້ລາຍງານຫຼາຍໆພຶດຕິກຳຂອງການໃຊ້ຄວາມຮຸນແຮງທາງຮ່າງກາຍຈົນເຮັດໃຫ້ເຂົາເຈົ້າໄດ້ຮັບບາດເຈັບ ລະຫວ່າງ 2 ຫາ 5 ຄັ້ງ ໃນຊ່ວງຊີວິດທີ່ຜ່ານມາ. ການໃຊ້ຄວາມຮຸນແຮງທາງຮ່າງກາຍໃນລະຫວ່າງການຖືພາ, 1.8% ເຄີຍຖືກຄວາມຮຸນແຮງໃນເວລາຖືພາຢ່າງໜ້ອຍໜຶ່ງຄັ້ງ. ທຽບກັບບັນດາປະ ເທດໃນພາກພື້ນນີ້, ອັດຕາການໃຊ້ຄວາມຮຸນແຮງໃນປະເພດນີ້ແມ່ນສູງກວ່າໃນຕົວເມືອງຂອງປະເທດຍີ່ປຸ່ນຄື (1.2%), ແຕ່ໜ້ອຍກວ່າແຂວງໃນປະເທດໄທມີ (2.0%), ຕົວເມືອງໃນປະເທດໄທ (4.5%) (Garcia-Moreno ພ້ອມຄະນະ., 2005), ແລະ ປະເທດຫວຽດນາມ (4.7%) (ລັດຖະບານຂອງປະເທດຫວຽດນາມ, 2010).

ການໃຊ້ຄວາມຮຸນແຮງທາງເພດ, ອັດຕາສ່ວນໂດຍລວມໃນຊ່ວງຊີວິດທີ່ຜ່ານມາ ແມ່ນ 7.2% ແລະ 3.1% ໃນໄລຍະ 12 ເດືອນທີ່ຜ່ານມາ ຕາມລຳດັບ, ເຫັນວ່າສູງ ກວ່າການວິໄຈຂອງກຸ່ມພັດທະນາບົດບາດຍິງ-ຊາຍເຊິ່ງມີ 1.6% ໃນຊ່ວງຊີວິດທີ່ຜ່ານມາ. ເຊິ່ງເຫັນວ່າບໍ່ມີຄວາມແຕກຕ່າງຫຼາຍໃນແຕ່ລະພາກ, ແຕ່ແມ່ຍິງກຸ່ມອາຍຸ 30 ປີຂຶ້ນໄປ ທີ່ມີລະດັບການສຶກສາສູງກວ່າກຸ່ມອື່ນນັ້ນ ແມ່ນມີທ່າອ່ຽງຈະຖືກຄວາມຮຸນແຮງທາງເພດສູງກວ່າກຸ່ມອື່ນໆ. ໃນກຸ່ມແມ່ຍິງອາຍຸສູງ, ຄືແມ່ຍິງກຸ່ມອາຍຸ 60 ປີຂຶ້ນໄປ ແມ່ນອັດຕາຖືກຄວາມຮຸນແຮງໃນຊ່ວງຊີວິດທີ່ຜ່ານມາມີ (7.8%) ເຊັ່ນດຽວກັບແມ່ຍິງກຸ່ມອາຍຸ 20 ປີຂຶ້ນໄປມີ (7.9%), ແຕ່ອັດຕາການຖືກຄວາມຮຸນແຮງທາງເພດໃນປັດຈຸບັນຂອງແມ່ຍິງກຸ່ມອາຍຸ 50 ແລະ 60 ປີຂຶ້ນໄປ ແມ່ນບໍ່ຫຼາຍປານໃດ. ສາເຫດຫຼັກຂອງບັນຫາເຫຼົ່ານີ້ແມ່ນຍັງບໍ່ສາມາດອະທິບາຍໄດ້ຢ່າງຈະແຈ້ງໃນການສຳຫຼວດນີ້, ແຕ່ສາມາດຕີຄວາມໝາຍໄດ້ວ່າແມ່ຍິງທີ່ມີອາຍຸຫຼາຍອາດຖືກຄວາມຮຸນແຮງທາງເພດໃນເວລາທີ່ຍັງເປັນໜຸ່ມ. ເຖິງຢ່າງໃດກໍ່ຕາມ, ການທີ່ກຸ່ມແມ່ຍິງເຫຼົ່ານີ້ມີອາຍຸຫຼາຍຂຶ້ນຈະເຮັດໃຫ້ການໃຊ້ຄວາມຮຸນແຮງທາງເພດຫຼຸດລົງຍ້ອນເຂົາເຈົ້າມີກິດຈະກຳທາງເພດໜ້ອຍລົງ. ນອກຈາກນີ້, ຍັງມີການສັນນິຖານວ່າ ແມ່ຍິງທີ່ມີອາຍຸຫຼາຍແລ້ວນີ້ອາດຈະບໍ່ຮັບຮູ້ ແລະ ບໍ່ເຂົ້າໃຈວ່າບັນດາພຶດຕິກຳດັ່ງກ່າວນັ້ນ ແມ່ນການໃຊ້ຄວາມຮຸນແຮງ ຫຼື ເປັນສິ່ງທີ່ບໍ່ສາມາດຍອມຮັບໄດ້. ເຖິງແມ່ນວ່າ ແມ່ຍິງຈຳນວນໜຶ່ງທີ່ເຂົ້າຮ່ວມການສຳຫຼວດທາງດ້ານປະລິມານ ແລະ ຄຸນນະພາບ ແມ່ນຖືກຄວາມຮຸນແຮງທາງເພດ, ແມ່ຍິງຄົນໜຶ່ງທີ່ເຂົ້າຮ່ວມການສຳຫຼວດທາງດ້ານຄຸນນະພ າບໄດ້ເປີດເຜີຍວ່າ ລາວເຄີຍປະ ເສດ ບໍ່ມີເພ ດສຳພັ ນນຳຜົວຂອງ ລາ ວຍ້ອນລາວບໍ່ຕ້ອງການໂດຍບໍ່ຢ້ານກົວຕໍ່ຜົນທີ່ຈະຕ າມມາ. ເຖິງຢ່າງໃດກໍ່ຕາມ, ແມ່ຍິງຄົນດັ່ງກ່າວກໍ່ບໍ່ໄດ້ຮັບຮູ້ວ່າການມີເພດສຳພັນທີ່ບໍ່ຍິນຍອມທັງສອງຝ່າຍ ແມ່ນການກະທຳທີ່ເປັນການໃຊ້ຄວາມຮຸນແຮງ.

ຜົນຂອງສຳຫຼວດນີ້ຍັງພົບວ່າແມ່ຍິງສ່ວນຫຼາຍໄດ້ຖືກຄວາມຮຸນແຮງ ໂດຍສະເພາະຄວາມຮຸນແຮງທັງທາງຮ່າງກາຍ ແລະ ທາງເພດ, ຫຼາຍກວ່າຖືກຄວາມຮຸນແຮງພຽງຢ່າງໃດໜຶ່ງ. ອັດຕາສ່ວນຂອງແມ່ຍິງທີ່ລາຍງານກ່ຽວກັບການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດ ຫຼື ທັງສອງປະເພດ ແມ່ນມີ 15.3% ໃນນັ້ນ 3.5% ແມ່ນຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ. ຜົນການສຳຫຼວດນີ້ແມ່ນມີຄວາມສອດຄ່ອງກັບບັນດາຜົນສຳຫຼວດອື່ນໆ ໃນຫຼາຍໆ, ລວມທັງການສຳຫຼວດໃນຫຼາຍປະເທດຂອງອົງການອະນາໄມໂລກ.

ຜົນຂອງການສຳຫຼວດຄັ້ງນີ້ສະແດງໃຫ້ເຫັນວ່າ, ອັດຕາສ່ວນການໃຊ້ຄວາມຮຸນແຮງໂດຍລວມແມ່ນ 26.2% ໃນຊ່ວງຊີວິດທີ່ຜ່ານມາ ແລະ 10.5% ໃນໄລຍະ 12 ເດືອນທີ່ຜ່ານມາ, ໜ້ອຍກວ່າ 35% ໃນຊ່ວງຊີວິດທີ່ຜ່ານມາ ຂອງຜົນການວິໄຈທີ່ຜ່ານມາດຳເນີນໂດຍກຸ່ມພັດທະນາບົດບາດຍິງ-ຊາຍ ປີ 2003. ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ທາງເພດ ແລະ/ຫຼື ຈິດໃຈ ແມ່ນ 30.2% ໃນຊ່ວງຊີວິດທີ່ຜ່ານມາ, ສະແດງວ່າເກືອບ 1 ສ່ວນ 3 ຂອງແມ່ຍິງແ ມ່ນຖືກຄວາມຮຸນແຮງປະເພດໃດໜຶ່ງ. ນອກຈາກນັ້ນ, ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງຈິດໃຈຕໍ່ແມ່ຍິງແມ່ນມີອັດຕາສ່ວນສູງທີ່ສຸດໃນການສຳພາດແບບເຈາະຈົ້ມ ຂອງການສຳຫຼວດທາງດ້ານຄຸນນະພາບ ສິ່ງທີ່ແມ່ຍິງມີຄວາມເຈັບປວດຫຼາຍທີ່ສຸດແມ່ນຈາກການໃຊ້ຄວາມຮຸນແຮງທາງຈິດໃຈ. ຈຸດພິເສດຂອງການໃຊ້ຄວາມຮຸນແຮງທາງຈິດໃຈແມ່ນຮັບຮູ້ຫຼາຍກວ່າການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ ດັ່ງທີ່ໄດ້ສະແດງຢູ່ໃນບົດສຳຫຼວດອື່ນໆ, ລວມທັງການສຳຫຼວດລວມຫຼາຍປະເທດຂອງອົງການອະນາໄມໂລກ. ເຖິງຢ່າງໃດກໍ່ຕາມ, ກໍ່ມີການຜິດຖຽງກັນ

ມາຕະຫຼອດວ່າການໃຊ້ຄວາມຮຸນແຮງທາງຈິດໃຈໂດຍວິທີວິທະຍາຂອງການວິໄຈແລ້ວແມ່ນວັດແທກຍາກຫຼາຍ (Garcia-Moreno ພ້ອມຄະນະ., 2005), ຍ້ອນວ່າ ຄວາມຮຸນແຮງທາງຈິດໃຈມີຄວາມສະຫຼັບສັບຊ້ອນຫຼາຍກວ່າການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ ເຊິ່ງມີຫຼາກຫຼາຍພຶດຕິກຳ ແລະ ຮູບແບບທີ່ແຕກຕ່າງກັນໄປໃນແຕ່ລະທ້ອງຖິ່ນ. ຢ່າງໃດກໍ່ຕາມ, ການໃຊ້ຄວາມຮຸນແຮງທາງຈິດໃຈ ແມ່ນຖືກຄອບງຳຈາກການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ, ເຊິ່ງມີການພົວພັນສະໜິດ  ແໜ້ນນຳກັນ (Jewkes, 2010). ນັກວິໄຈບາງທ່ານໄດ້ສະແດງຫຼັກຖານການວິໄຈວ່າ ການລ່ວງລະເມີດທາງດ້ານຈິດໃຈ ເຮັດໃຫ້ເກີດຜົນກະທົບໃນທາງລົບຕໍ່ສຸຂະພາບຈິດ. ຕົວຢ່າງ, ການລ່ວງລະເມີດທາງດ້ານຈິດໃຈໃນຊ່ວງເວລາຖືພາແມ່ນມີຜົນກະທົບຫຼາຍກວ່າ ການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ ຍ້ອນເຮັດໃຫ້ເກີດມີອາລົມໂສກເສົ້າຫຼາຍກວ່າ (Ludermir ພ້ອມຄະນະ., 2010). ການສຳຫຼວດປະຊາກອນຈາກປະເທດຍີ່ປຸ່ນໄດ້ເປີດເຜີຍວ່າ ແມ່ຍິງທີ່ຖືກຄວາມຮຸນແຮງທາງຈິດໃຈ ມີສຸຂະພາບອ່ອນແອກວ່າກຸ່ມອື່ນ, ລວມທັງມີແນວຄິດທີ່ຈະຂ້າຕົວຕາຍ, ມີຄວາມຫຍຸ້ງຍາກໃນການໃຊ້ຊີວິດປະຈຳວັນ, ໃຊ້ເວລາຫຼາຍເດືອນໃນການປິ່ນປົວຫຼາຍ ແລະ ມີບັນຫາການເຈັບປວດທາງດ້ານຈິດໃຈ (Yoshihama ພ້ອມຄະນະ, 2009).

ນອກນັ້ນຄວາມຮຸນແຮງຮູບແບບອື່ນໆ ເຊັ່ນ ການຄວບຄຸມການປະພຶດແລະ ຄວາມຮຸນແຮງທາງດ້ານເສດຖະກິດ ກໍ່ແມ່ນປັດໄຈທີ່ສຳຄັນ ໃນການວັດແທກບໍ່ພຽງແຕ່ການໃຊ້ຄວາມຮຸນແຮງເທົ່ານັ້ນ,  ແຕ່ຍັງສາມາດຊີ້ວັດລະດັບການມີອິດສະຫຼະພາບຂອງແມ່ຍິງໃນການເຂົ້າຮ່ວມກິດຈະກຳ  ແລະ  ຂະບວນການຕັດສິນໃຈຕ່າງໆ.  ໃນການຄວບຄຸມການປະພຶດ,  ແມ່ຍິງ  1  ສ່ວນ  3  ຄົນທີ່ເຄີຍມີຄູ່ຮ່ວມຊີວິດແມ່ນເຄີຍຖືກຄວາມຮຸນແຮງຢ່າງໜ້ອຍໜຶ່ງແບບຂອງການຄວບຄຸມການປະພຶດ, ແມ່ຍິງເກືອບ 20% ແມ່ນຖືກ ຜົວ/ຄູ່ຮ່ວມຊີວິດຕິດຕາມຕະຫຼອດເວລາ ແລະ 15.4% ໄດ້ລາຍງານວ່າ ຄູ່ຮ່ວມຊີວິດຂອງພວກເຂົາສົງໃສຕະຫຼອດວ່າພວກເຂົາບໍ່ຊື່ສັດ. ສະຖິຕິຄວາມຮຸນແຮງດ້ານນີ້ແມ່ນມີສູງກວ່າການໃຊ້ຄວາມຮຸນແຮງທາງຮ່າງກາຍ ຫຼື ທາງເພດ. ການສຶກສາຄົ້ນຄວ້າຫຼາຍໆຢ່າງ ໄດ້ສະແດງໃຫ້ເຫັນວ່າບັນຫາການຄວບຄຸມການປະພຶດໂດຍເພດຊາຍໄດ້ພົວພັນຢ່າງໃກ້ຊິດກັບສາເຫດທີ່ເຮັດໃຫ້ເກີດການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ (Heise ພ້ອມຄະນະ., 1999), ການໃຊ້ຄວາມຮຸນແຮງທາງເພດ (Jenkin, 2000), ການຄວບຄຸມການປະພຶດແມ່ນພົວພັນເຖິງສາເຫດທາງດ້ານອຳນາດ,  ເຊິ່ງເຮັດໃຫ້ເພດຊາຍສາມາດໃຊ້ອຳນາດເຫຼົ່ານັ້ນໃນການຄວບຄຸມແມ່ຍິງໄດ້  ເຊັ່ນດຽວກັນກັບລະບົບລູກນ້ອງ ທີ່ມີໃນວັດທະນະທຳ ແລະ ຄວາມເປັນສຸພາບບຸລຸດ. ໃນການສຳຫຼວດທາງດ້ານຄຸນນະພາບ, ແມ່ຍິງທີ່ໃຫ້ສຳພາດໄດ້ເວົ້າວ່າລາວຖືກຄວບຄຸມພຶດຕິກຳຈາກຜົວໂດຍໃຊ້ຄວາມຮຸນແຮງທາງຮ່າງກາຍໃນເວລາທີ່ໃຈຮ້າຍ  ແລະ  ເກີດຄວາມຫຶງຫວງ  ແລະ  ການສົງໃສວ່າຜູ້ເປັນເມຍບໍ່ມີຄວາມຊື່ສັດ,  ໂດຍສະເພາະໃນເວລາກັບຈາກເຮັດວຽກ.  ການໃຊ້ຄວາມຮຸນແຮງທາງດ້ານເສດຖະກິດ,  ແມ່ຍິງ  6.8%  ແມ່ນຖືກຍຶດເງິນທັງໝົດທີ່ເຂົາຫາມາໄດ້ ຫຼື ຖືກປະຕິເສດບໍ່ໃຫ້ເງິນ, ໂດຍສະເພາະໃນເຂດຕົວເມືອງ. ເຖິງແມ່ນວ່າໃນ ສປປ ລາວ ແມ່ຍິງຈະຮັບຜິດຊອບຄ່າໃຊ້ຈ່າຍພາຍໃນເຮືອນກໍ່ຕາມ, ແມ່ຍິງທີ່ຖືກຄວາມຮຸນແຮງທາງເສດຖະກິດ ໄດ້ເປີດເຜີຍໃນການສຳພາດແບບເຈາະຈົ້ມວ່າ ຜົວຂອງລາວຈະສົງໃສສະເໝີວ່າຜູ້ເປັນເມຍໃຊ້ເງິນເລື້ອຍ. ໃນທາງກົງກັນຂ້າມ, ຜົວແມ່ນໃຊ້ຈ່າຍຫຼາຍໃນການດື່ມສິ່ງມຶນເມົາ ຫຼື ໃຊ້ເງິນກັບໝູ່ ເຊັ່ນດຽວກັນກັບການໃຊ້ເງິນໄປກັບ "ສາວເບຍ" ໃນຮ້ານກິນດື່ມ ຫຼື ໂຮງເຕັ້ນລຳ. ການໃຊ້ຄວາມຮຸນແຮງທາງເສດຖະກິດແມ່ນພົວພັນກັບການບໍ່ເຊື່ອໃຈກັນລະຫວ່າງຄູ່ຜົວເມຍ ແລະ ມີຄວາມຮ້າຍແຮງຍ້ອນສິ່ງມຶນເມົາ ແລະ ຄວາມບໍ່ຊື່ສັດຕໍ່ກັນ.

ການສຳຫຼວດນີ້ສະແດງໃຫ້ເຫັນວ່າ ອັດຕາສ່ວນການໃຊ້ຄວາມຮຸນແຮງ ທາງດ້ານຮ່າງກາຍ, ທາງເພດ ແລະ ຈິດໃຈ ແມ່ນຢູ່ໃນລະດັບຕ່ຳ ຖ້າທຽບໃສ່ການສຶກສາຄົ້ນຄວ້າອື່ນໆຜ່ານມາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໂດຍ ກຸ່ມພັດທະນາບົດບາດຍິງ-ຊາຍ ປີ 2001, ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ  ເພື່ອການພັດທະນາ  ປີ  2009  ແລະ  ໃນບັນດາປະເທດເພື່ອນບ້ານ.  ເຖິງຢ່າງໃດກໍ່ຕາມ,  ຍ້ອນວ່າຫຼາຍໆ  ການຄົ້ນຄວ້າກໍ່ໄດ້ນຳໃຊ້ວິທີການສຶກສາທີ່ແຕກຕ່າງກັນໃນການທົດສອບອັດຕາສ່ວນ, ຜົນກະທົບ ແລະ ຜົນສະທ້ອນທີ່ຕາມມາຂອງການໃຊ້ຄວາມຮຸນແຮງ, ການປຽບທຽບຜົນການສຶກສາເບື້ອງຕົ້ນຈຶ່ງມີຄວາມຫຍຸ້ງຍາກ. ດ້ວຍເຫດນີ້, ອົງການອະນາໄມໂລກທີ່ມີການຄົ້ນຄວ້າແບບຫຼາຍປະເທດຈຶ່ງໄດ້ພັດທະນາວິທີການສຳຫຼວດ, ການວິເຄາະ ແລະ ການນຳສະເໜີຜົນຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນວິທີການທີ່ມີຄວາມໝັ້ນຄົງ. ເຖິງຢ່າງໃດກໍ່ຕາມ, ລະດັບອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງຮ່າງກາຍ  ແລະ  ທາງເພດ  ໃນ  ສປປ  ລາວ  ແມ່ນຍັງຕ່ຳຢູ່ເມື່ອປຽບທຽບກັບ  10  ປະເທດ  ທີ່ເຮັດການຄົ້ນຄວ້າໂດຍໃຊ້ແບບການສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ, ເຊິ່ງມີລະດັບທີ່ໃກ້ຄຽງກັບປະເທດຍີ່ປຸ່ນ. ສິ່ງນີ້ອາດເປັນຜົນມາຈາກການທີ່ບັນຫາເຫຼົ່ານີ້ບໍ່ໄດ້ຖືກລາຍງານ ແລະ ເປັນການຈຳແນກຂອງສັງຄົມທີ່ມີການພົວພັນເຖິງຮີດຄອງປະເພນີຂອງສັງຄົມລາວ. ສິ່ງໜຶ່ງທີ່ສຳຄັນຂອງປະເທດຍີ່ປຸ່ນແມ່ນ ການລາຍງານອັດຕາສ່ວນການໃຊ້ຄວາມຮຸນແຮງຂອງເຂົາເຈົ້າແມ່ນເພີ່ມຂຶ້ນຫຼັງຈາກມີການຄົ້ນຄວ້າແບບຫຼາຍປະເທດຂອງອົງການອະນາໄມໂລກ  ແລະ  ພາຍຫຼັງມີການຍົກລະດັບການບັງຄັບໃຊ້ກົດຫມາຍຕໍ່ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວ. ນອກຈາກນີ້ແລ້ວ, ປັດໄຈນີ້ຍັງເຮັດໃຫ້ມີການປ່ຽນແປງທາງດ້ານວັດທະນະທຳ-ສັງຄົມ  ທີ່ມີການຍອມຮັບຫຼາຍຂຶ້ນທີ່ໃຫ້ແມ່ຍິງລາຍງານ  ຫຼື  ເວົ້າກ່ຽວກັບປະສົບການຖືກຄວາມຮຸນແຮງຂອງພວກເຂົາ.  ເຊັ່ນດຽວກັບກໍລະນີຂອງ ສປປ ລາວ, ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ(ລູກ) ແລະ ຜົນຂອງການສຳຫຼວດນີ້ຈະເປັນແນວທາງໄປສູ່ການສ້າງກຳ ລັງຊຸກຍູ້ໃນການປູກຈິດສຳນຶກ  ແລະ  ການໂຄສະນາກ່ຽວກັບນະໂຍບາຍຕ່າງໆເພື່ອລຶບລ້າງການໃຊ້ຄວາມ ຮຸນແຮງຕໍ່ແມ່ຍິງ. ດ້ວຍເຫດນີ້, ອັດຕາສ່ວນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງທີ່ໄດ້ລາຍງານໃນ ສປປ ລາວ ອາດມີຄວາມເປັນໄປໄດ້ໃນການປ່ຽນແປງໃນໄລຍະສັ້ນໄປຫາໄລຍະກາງ. ສະນັ້ນ, ຂໍ້ມູນຂອງອັດຕາການໃຊ້ຄວາມຮຸນແຮງ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງຄວນຈະໄດ້ຕິດຕາມກວດກາ ແລະ ໃຫ້ທັນກັບສະພາບການໃນອະນາຄົດ ເພື່ອທີ່ຈະສາມາດຮັບຮູ້ ແລະ ເກັບກຳໄດ້ບັນດາການປ່ຽນແປງ ແລະ ຄວາມຄືບໜ້າດ້ານສະຖານະພາບຂອງແມ່ຍິງທີ່ຖືກຄວາມຮຸນແຮງ ພ້ອມກັນນັ້ນຕ້ອງມີຍຸດທະສາດ ແລະ ການຕອບໂຕ້ທີ່ເໝາະສົມ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ຕ້ອງມີການຕິດຕາມ ແລະ ກວດກາ.

# 5

# ຄວາມຮຸນແຮງ ຕໍ່ແມ່ຍິງຈາກ ຄົນອື່ນທີ່ບໍ່ແມ່ນ ຄູ່ຮ່ວມຊີວິດ

# ພາກທີ 5. ຄວາມຮຸນແຮງຕໍ່ແມ່ຍິງ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ

**ຜົນໄດ້ຮັບຫຼັກ:**

- ແມ່ຍິງປະມານ 5,1% ແມ່ນເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ. ອີງຕາມການລາຍງານພົບວ່າ, ຜູ້ກະທຳຜິດສ່ວນຫຼາຍແມ່ນສະມາຊິກຄອບຄົວທີ່ເປັນແມ່ຍິງທີ່ເປັນຜູ້ກະທຳຄວາມຮຸນແຮງຄືມີເຖິງ (34.9%), ໂດຍສະເພາະ ແມ່ນແມ່ຄ້ຽງຫຼືແມ່ນ້ານີ (26.8%).
- ແມ່ຍິງປະມານ 5.3% ທີ່ເຄີຍຖືກຄວາມຮຸນແຮງທາງເພດບາງຮູບແບບແລະ 1.1% ແມ່ນຖືກບັງຄັບໃຫ້ມີເພດສຳພັນ ຕັ້ງແຕ່ອາຍຸ 15 ປີ.
- ອັດຕາຈຳນວນທີ່ແມ່ຍິງຖືກລ່ວງລະເມີດທາງເພດ ໃນໄວເດັກ ແມ່ນມີຄວາມຫຼາກຫຼາຍເຊິ່ງຂຶ້ນກັບວິທີການໃນການໃຊ້ຄຳຖາມສຳພາດ. ອັດຕາສ່ວນທີ່ແມ່ຍິງເປີດເຜີຍກ່ຽວກັບປະສົບການທີ່ຖືກລະເມີດທາງເພດໃນໄວເດັກ (Child Sexual Abuse - CSA) ໂດຍການສຳພາດແບບໜ້າເຊິ່ງໜ້າ ມີພຽງ 0.9%. ຢ່າງໃດກໍ່ຕາມ, ເມື່ອໃຊ້ວິທີການສຳພາດໂດຍໃຊ້ຄຳຖາມເປັນບັດຄຳໂດຍບໍ່ໃສ່ຊື່ແລ້ວເຫັນວ່າ ມີແມ່ຍິງເຖິງ 9.9% ທີ່ບອກວ່າຖືກລະເມີດທາງເພດໃນໄວເດັກ ແລະ ກໍ່ສູງຂຶ້ນເຖິງ 10.3% ເມື່ອນຳໃຊ້ການສຳພາດທັງສອງແບບຄືສຳພາດໂດຍກົງ ແລະ/ຫຼື ການໃຊ້ບັດຄຳ.
- ອັດຕາສ່ວນຂອງແມ່ຍິງທີ່ລາຍງານວ່າຖືກຄວາມຮຸນທາງດ້ານຮ່າງກາຍ ຈາກຄົນທີ່ແມ່ນ ຫຼື ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຫຼື ທັງສອງປະເພດ ແມ່ນກວມເຖິງ 14.4%, ແລະ 10.9% ແມ່ນຖືກຄວາມຮຸນທາງເພດ ແລະ 20.2% ຖືກຄວາມຮຸນທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ.

## 5.1 ພາກສະເໜີ

ມີຫຼາຍຄັ້ງທີ່ໄດ້ຍົກບັນຫາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງສ່ວນຫຼາຍແມ່ນມັກຈະເກີດຂຶ້ນໃນທີ່ພັກອາໄສ ແລະ ການກະທຳຮຸນແຮງສ່ວນຫຼາຍກໍ່ແມ່ນບຸກຄົນທີ່ໃກ້ຊິດ ແລະ ຮູ້ຈັກກັນດີກັບຜູ້ຖືກເຄາະຮ້າຍ ເຊິ່ງເປັນຜູ້ລິງມືກະທຳຜິດເອງ ເຊິ່ງໄດ້ໃຫ້ນິຍາມສະເພາະຄືການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ. ເຖິງຢ່າງໃດກໍ່ຕາມ, ຄຳສັບ 'ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ' ລວມມີການຂົ່ມຂືນ, ການທຳຮ້າຍທາງເພດ ຫຼື ທາງຮ່າງກາຍ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ເຊັ່ນ: ຄົນຮູ້ຈັກ, ໝູ່ເພື່ອນ ຫຼື ຄົນແປກໜ້າ ເຊັ່ນດຽວກັນກັບການລ່ວງລະເມີດທາງເພດທີ່ເກີດຂຶ້ນໃນໄວເດັກ. ໃນພາກນີ້ຈະໄດ້ຄົ້ນຄວ້າກ່ຽວກັບການຖືກຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດຂອງແມ່ຍິງຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ແລະ ການຖືກລ່ວງລະເມີດທາງເພດໃນໄວເດັກ (ກ່ອນອາຍຸ 15 ປີ) ເຊັ່ນດຽວກັນກັບການຈຳແນກຜູ້ກະທຳຜິດ.

## 5.2 ການຖືກຄວາມຮຸນແຮງທາງຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ

ດັ່ງທີ່ສະແດງໃນຮູບທີ 5.1, ແມ່ຍິງ 5.1% ທີ່ໃຫ້ສຳພາດ ແມ່ນເຄີຍຖືກຄວາມຮຸນແຮງທາງຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ໃນຊ່ວງຊີວິດທີ່ຜ່ານມາ. ອີງຕາມການແບ່ງຕາມພູມສັນຖານ ເຫັນວ່າອັດຕາການໃຊ້ຄວາມຮຸນແຮງທາງຮ່າງກາຍໃນກຸ່ມແມ່ຍິງທີ່ຢູ່ໃນເຂດຕົວເມືອງມີ (5.6%) ແລະ ເຂດພາກໃຕ້ (6.6%) ເຊິ່ງຫຼາຍກວ່າເຂດອື່ນໆ. ອັດຕາສ່ວນໂດຍລວມໃນປັດຈຸບັນແມ່ນ 0.9% ເຊິ່ງບໍ່ມີຄວາມແຕກຕ່າງກັນຫຼາຍລະຫວ່າງເຂດຊົນນະບົດ ແລະ ເຂດຕົວເມືອງ ເຊິ່ງມີຄວາມແຕກຕ່າງກັນພຽງ 1% ເທົ່ານັ້ນ.

ຮູບທີ 5.1 ອັດຕາສ່ວນຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ, ປີ 2014 (ຈຳນວນ=2,997)




## 5.3 ຜູ້ກະທຳຄວາມຮຸນແຮງເຊິ່ງເປັນຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ

ຜູ້ກະທຳຄວາມຮຸນແຮງເຊິ່ງເປັນຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດລວມມີສະມາຊິກຄອບຄົວ ແລະ ຄົນອື່ນທີ່ບໍ່ແມ່ນສະມາຊິກໃນຄອບຄົວ. ເຊິ່ງແມ່ຍິງ 4.2% ທີ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດເຊິ່ງເປັນມີຜູ້ກະທຳຄວາມຮຸນແຮງພຽງຄົນດຽວ, ຄື 0.6% ແມ່ນມີຜູ້ກະທຳຜິດຫຼາຍກວ່າໜຶ່ງຄົນ, ເຮົາສາມາດຮັບຮູ້ກຸ່ມຜູ້ກະທຳຄວາມຮຸນແຮງໄດ້ໃນ (ຮູບທີ 5.2). ສິ່ງທີ່ຄວນສັງເກດ, ຜູ້ກະທຳຄວາມຮຸນແຮງສ່ວນໃຫຍ່ແມ່ນສະມາຊິກຄອບຄົວທີ່ເປັນເພດຍິງມີເຖິງ (34.9%), ໂດຍສະເພາະ ແມ່ນແມ່ຄີງຫຼືແມ່ນ້າ ແມ່ນ (26.8%) ຮອງລົງມາແມ່ນແມ່ຍິງທີ່ເປັນໝູ່ ແລະ ຄົນຮູ້ຈັກ ມີ(19.6%). ຜົນສຳຫຼວດດັ່ງກ່າວໄດ້ເຮັດໃຫ້ມີຄວາມເຂົ້າໃຈໃໝ່ຕໍ່ກັບຄວາມສະຫຼັບສັບຊ້ອນ ແລະ ຄວາມຫຍຸ້ງຍາກໃນບັນດາອົງປະກອບຂອງສາຍພົວພັນທີ່ພົວພັນເຖິງການໃຊ້ຄວາມຮຸນແຮງທີ່ເກີດຂຶ້ນໃນຄອບຄົວ.

ຮູບທີ 5.2 ເປີເຊັນຂອງແມ່ຍິງທີ່ໄດ້ລາຍງານ ທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ໂດຍປະເພດຂອງຜູ້ກະທຳຜິດ, ສປປ ລາວ, ປີ 2014 (ຈຳນວນ=2,997)



## 5.4 ການຖືກຄວາມຮຸນແຮງທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ

ການຖືກຄວາມຮຸນແຮງທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ຖືກປະເມີນຈາກຮູບແບບຂອງການບັງຄັບໃຫ້ມີເພດສຳພັນ, ການພະຍາຍາມບັງຄັບໃຫ້ມີເພດສຳພັນ ແລະ/ຫຼື ບັນດາການກະທຳທາງເພດປະເພດໃດໜຶ່ງທີ່ອີກຝ່າຍໜຶ່ງບໍ່ຕ້ອງການ (ຮູບທີ 5.3). ອັດຕາສ່ວນໂດຍລວມຂອງການບັງຄັບມີເພດສຳພັນ ໃນຊ່ວງຊີວິດທີ່ຜ່ານມາ ແມ່ນ 1.1%, ໃນນັ້ນ 5% ແມ່ນ ການພະຍາຍາມບັງຄັບໃຫ້ມີເພດສຳພັນ ແລະ/ຫຼື ບັນດາພຶດຕິກຳການຮ່ວມເພດໃດໜຶ່ງທີ່ອີກຝ່າຍໜຶ່ງບໍ່ມີຄວາມຕ້ອງການອັດຕາສ່ວນຂອງແມ່ຍິງທີ່ລາຍງານພຶດຕິກຳໃດໜຶ່ງຂອງການໃຊ້ຄວາມຮຸນແຮງທາງເພດນີ້ແມ່ນ 5.3%. ອັດຕາການໃຊ້ຄວາມຮຸນແຮງທາງເພດນີ້ບໍ່ມີຄວາມແຕກຕ່າງກັນຫຼາຍລະຫວ່າງໃນເຂດຕົວເມືອງ ແລະ ເຂດຊົນນະບົດ, ແຕ່ໃນພາກໃຕ້ແມ່ນມີອັດຕາການໃຊ້ຄວາມຮຸນແຮງທາງເພດເຖິງ (6.1%) ເຊິ່ງຫຼາຍກວ່າພາກເໜືອ ທີ່ມີ (5.2%) ແລະ ພາກກາງ (5.3%).

ການສົນທະນາສ່ວນໃຫຍ່ໃນການສຳຫຼວດທາງດ້ານຄຸນນະພາບ ແລະ ການສຳພາດໃນບັນຫາທີ່ເຈາະຈົງ ແລະ ປະສົບການພົວພັນກັບຄູ່ຮ່ວມຊີວິດໃກ້ຊິດ ແລະ ມີຜູ້ເຂົ້າຮ່ວມພຽງບາງຄົນເທົ່ານັ້ນທີ່ໄດ້ເວົ້າເຖິງການໃຊ້ຄວາມຮຸນແຮງ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແລະ ໃນຕອນເປັນເດັກ. ໃນກຸ່ມສົນທະນານຳກຸ່ມໄວໜຸ່ມຊາຍ ແລະ ໄວໜຸ່ມຍິງ, ຜູ້ເຂົ້າຮ່ວມໄດ້ສົນທະນາກ່ຽວຫຼາຍກໍລະນີການຖືກຄວາມຮຸນແຮງທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດໃນເຂດຊົນນະບົດ, ໂດຍສະເພາະກໍລະນີການຂົ່ມຂືນ. ໃນຫຼາຍສະຖານະການ, ການສົນທະນາໃນຄອບຄົວອາດຈະລວມເຖິງການເຈລະຈາກັບຜູ້ກະທຳຜິດໃນການຊົດເຊີຍຄ່າເສຍຫາຍ, ໂດຍສະເພາະໃນກໍລະນີທີ່ໄວໜຸ່ມຍິງຖືກຂົ່ມຂືນ ຫຼື ເສຍພົມມະຈັນ(ເສຍຄວາມບໍລິສຸດ) ເຊິ່ງບໍ່ໄດ້ໝັ້ນ ຫຼື ແຕ່ງດອງກັບໄວໜຸ່ມຊາຍ ຢ່າງເປັນທາງການ. ການຮຽກຮ້ອງໃຫ້ມີການແຕ່ງດອງໃນກໍລະນີທີ່ມີການຂົ່ມຂືນແມ່ນເກີດຂຶ້ນຫຼາຍໃນເຂດຊົນນະບົດ. ຄະນະບ້ານອາດຈະບໍ່ໄດ້ເຂົ້າມາຊ່ວຍໃນກໍລະນີທີ່ຄອບຄົວທັງສອງຝ່າຍສາມາດແກ້ໄຂ ແລະ ຕົກລົງກັນໄດ້. ຖ້າໄວໜຸ່ມຍິງອາໄສຢູ່ໄກຈາກຄອບຄົວຂອງລາວ ເຊັ່ນ ອາໄສຢູ່ໂຮງຮຽນ ຫຼື ເຮັດວຽກຢູ່ໃນໂຮງງານ, ອາດຈະບໍ່ມີການລົງໂທດຜູ້ຊາຍທີ່ກະທຳຜິດ ເນື່ອງຈາກແມ່ຍິງຈະມີຄວາມອັບອາຍໃນການຮ້ອງຟ້ອງ.

ຮູບທີ 5.3 ອັດຕາຂອງການໃຊ້ຄວາມຮຸນແຮງທາງເພດ ໃນຊ່ວງຊີວິດ ໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ຂອງຜູ້ຕອບແບບສອບຖາມທັງໝົດ, ສປປ ລາວ, ປີ 2014 (ຈຳນວນ=2,997)




## 5.5 ການໃຊ້ຄວາມຮຸນແຮງທາງເພດໃນໄວເດັກ

ດັ່ງທີ່ອະທິບາຍຜ່ານມາໃນບົດທີ 2, ຍ້ອນການໃຊ້ຄວາມຮຸນແຮງທາງເພດໃນໄວເດັກ ທີ່ເປັນບັນຫາທີ່ມີຄວາມລະອຽດອ່ອນໃນການສົນທະນາ, ຜູ້ຖືກສຳພາດຈຶ່ງໄດ້ຮັບທາງເລືອກຕ່າງໆ ໃນການເປີດເຜີຍບັນດາປະສົບການເຫຼົ່ານັ້ນ. ທາງເລືອກທີໜຶ່ງ, ແມ່ຍິງຖືກຖາມວ່າ ຖ້າເຄີຍມີຄົນອື່ນຈັບບາຍທີ່ມີລັກສະນະລວນລາມທາງເພດ ຫຼື ເຮັດໃຫ້ເຂົາເຈົ້າຕ້ອງກະທຳທາງເພດທີ່ເຂົາເຈົ້າບໍ່ຕ້ອງການ ກ່ອນອາຍຸ 15 ປີ. ໃນຕອນທ້າຍຂອງການສຳພາດ, ຄຳຖາມດັ່ງກ່າວໄດ້ຖືກຖາມອີກຄັ້ງ, ແຕ່ບໍ່ໄດ້ຮຽກຮ້ອງໃຫ້ມີການຕອບນັກເດີນສຳຫຼວດໂດຍກົງ, ແຕ່ໄດ້ມີການໃຊ້ບັດໜ້າແທນ ເຊິ່ງນຳໃຊ້ ບັດໜ້າທີ່ມີນ້ຳຕາຖ້າຄຳຕອບຄື "ແມ່ນ" ຫຼື ໃຊ້ບັດໜ້າທີ່ມີຮອຍຍິ້ມຖ້າຄຳຕອບຄື "ບໍ່ແມ່ນ" (ເບິ່ງຮູບທີ 2.1).

ຮູບທີ 5.4 ສະແດງເຖິງອັດຕາຂອງການຖືກຄວາມຮຸນແຮງທາງເພດໃນໄວເດັກຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ໃນໄວອາຍຸກ່ອນ 15 ປີ. ອັດຕາສ່ວນໂດຍລວມທີ່ໄດ້ຮັບຈາກການສໍາພາດແບບເຊິ່ງໜ້າມີພຽງ 0.6%, ແຕ່ຜົນໄດ້ຮັບຈາກການໃຊ້ບັດຄໍາສອບຖາມ ແມ່ນມີເຖິງ 9.9% ເຊິ່ງຜູ້ຕອບແບບສອບຖາມທັງໝົດໄດ້ເປີດເຜີຍກ່ຽວກັບການຖືກຄວາມຮຸນແຮງທາງເພດໃນໄວເດັກ. ອັດຕາສ່ວນທີ່ລວມທັງການສໍາພາດເຊິ່ງໜ້າ ແລະ ການໃຊ້ບັດຄໍາຖາມແມ່ນເພີ່ມຂຶ້ນເຖິງ 10.3%. ທ່າອ່ຽງທີ່ຄ້າຍຄືກັນແມ່ນເຫັນໄດ້ລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ ແລະ ໃນບັນດາພາກຕ່າງໆ. ສິ່ງເຫຼົ່ານີ້ໄດ້ບົ່ງບອກໃຫ້ເຫັນວ່າການນໍາໃຊ້ບັດຄໍາທີ່ບໍ່ໄດ້ບອກຜູ້ໃຫ້ຂໍ້ມູນ ເຮັດໃຫ້ເພີ່ມອັດຕາສ່ວນຮ້ອຍຂອງການຕອບ.

ຮູບທີ 5.4. ຜູ້ກະທໍາຜິດທີ່ເປັນແມ່ຍິງທີ່ໄດ້ລາຍງານ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ໂດຍແຍກປະເພດຜູ້ກະທໍາຜິດ, ສປປ ລາວ, ປີ 2014 (ຈໍານວນ=2,997)




## 5.6 ການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ

ໃນກຸ່ມແມ່ຍິງທີ່ຖືກສໍາພາດທັງໝົດ (ຈໍານວນ=2,997 ຄົນ), ອັດຕາສ່ວນຂອງແມ່ຍິງທີ່ໄດ້ລາຍງານກ່ຽວກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼື ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຫຼື ທັງສອງ, ສໍາລັບການໃຊ້ຄວາມຮຸນແຮງທາງຮ່າງກາຍແມ່ນມີ 14.4%,, 10.9% ແມ່ນການໃຊ້ຄວາມຮຸນແຮງທາງເພດ ແລະ 20.2% ແມ່ນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ. ໃນກຸ່ມແມ່ຍິງທີ່ຖືກສໍາພາດທັງໝົດ, ອັດຕາການຖືກຄວາມຮຸນແຮງຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແມ່ນມີ 3.7%, ເຊິ່ງການໃຊ້ຄວາມຮຸນແຮງທາງຮ່າງກາຍຈາກຄູ່ຮ່ວມຊີວິດແມ່ນມີ 9.3%, ຕົວເລກນີ້ໄດ້ສະແດງໃຫ້ເຫັນວ່າ ການຖືກຄວາມຮຸນແຮງທາງຮ່າງກາຍຈາກຄູ່ຮ່ວມຊີວິດ ແມ່ນສູງເກືອບສາມທົບ ທຽບກັບການຖືກຄວາມຮຸນແຮງຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ. ການຖືກຄວາມຮຸນແຮງທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດມີ (4.2%) ແລະ ການຖືກຄວາມຮຸນແຮງທາງເພດຈາກຄູ່ຮ່ວມຊີວິດມີ (5.6%) ເຊິ່ງບໍ່ມີຄວາມແຕກຕ່າງກັນຫຼາຍ. ນອກນັ້ນ, ແມ່ຍິງ 6.1% ແມ່ນເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ, ເຊິ່ງທຽບກັບ ມີ 10.9% ແມ່ນແມ່ຍິງທີ່ຖືກຄວາມຮຸນແຮງທາງດ້ານຮ່າງ ກາຍ ແລະ/ຫຼື ທາງເພດຈາກຄູ່ຮ່ວມຊີວິດ. ຢ່າງໃດກໍ່ຕາມ, ໂດຍລວມແລ້ວ ແມ່ຍິງສ່ວນຫຼາຍແມ່ນຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼາຍກວ່າຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ. ໃນຂະນະດຽວກັນ, ການທັບຊ້ອນກັນຂອງການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ, ແມ່ຍິງ 1.4% ເຄີຍຖືກຄວາມຮຸນແຮງທາງຮ່າງກາຍຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ, ແມ່ຍິງ 1.1% ເຄີຍຖືກຄວາມຮຸນແຮງທາງເພດຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແລະ ແມ່ຍິງ 3.2% ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ. ສະຫຼຸບແລ້ວ, ແມ່ຍິງສ່ວນໃຫຍ່ແມ່ນເຄີຍຖືກຄວາມຮຸນແຮງທາງຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ລວມທັງຄົນທີ່ເປັນຄູ່ຮ່ວມຊີວິດ.

## 5.7 ພາກສົນທະນາ

ບົດນີ້ໄດ້ຄົ້ນຄວ້າກ່ຽວກັບການຖືກຄວາມຮຸນແຮງຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ລວມທັງຮູບແບບຂອງການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ. ເຖິງວ່າ ແມ່ຍິງ 5.1% ແມ່ຍິງທີ່ໃຫ້ສໍາພາດຈະເຄີຍຖືກຄວາມຮຸນແຮງທາງຮ່າງກາຍຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ, ແລະ ເຫັນວ່າອັດຕາຄວາມຮຸນແຮງບໍ່ມີຄວາມແຕກຕ່າງກັນຫຼາຍລະຫວ່າງເຂດຕົວເມືອງ/ຊົນນະບົດ ແລະ ໃນທຸກພາກ. ສິ່ງທີ່ພົ້ນເດັ່ນກວ່າໝູ່ຂອງຜົນໄດ້ຮັບຂອງການສໍາຫຼວດໃນບົດນີ້, ສະມາຊິກຄອບຄົວທີ່ເປັນແມ່ຍິງໂດຍສະເພາະແມ່ນ ແມ່ຄີງ ຫຼື ແມ່ນ້າ ແມ່ນຜູ້ກະທໍາຄວາມຮຸນແຮງເປັນສ່ວນໃຫຍ່, ຮອງລົງມາແມ່ນໝູ່ເພື່ອນ ແລະ ຄົນຮູ້ຈັກ. ເຫດຜົນທີ່ອາດເປັນໄປໄດ້ຂອງການສໍາຫຼວດນີ້ຕ້ອງໄດ້ຮັບການພິຈາລະນາຢ່າງຮອບຄອບ. ໃນສັງຄົມລາວ, ຄອບຄົວທີ່ມີພໍ່ນ້າ ຫຼື ແມ່ນ້າ ຫຼື ຄອບຄົວຂະຫຍາຍ ແມ່ນມີສາຍພົວພັນທີ່ສະຫຼັບສັບຊ້ອນ, ໂດຍສະເພາະໃນຈໍານວນສະມາຊິກແມ່ຍິງທີ່ໄດ້ໃຊ້ເວລາເຮັດວຽກເຮືອນຮ່ວມກັນຫຼາຍກວ່າຜູ້ຊາຍ ເຊິ່ງອາດຈະເຮັດໃຫ້ເກີດຄວາມຄຽດ ຫຼື ມີການບັງຄັບທາງຮ່າງກາຍເພື່ອອົບຮົມສັ່ງສອນ. ການສຶກສາຄົ້ນຄວ້າທີ່ຜ່ານມາໄດ້ຊີ້ໃຫ້ເຫັນວ່າຢູ່ປະເທດສະຫະລັດອາເມລິກາ, ການໃຊ້ຄວາມຮຸນແຮງ ຫຼື ການລ່ວງລະເມີດ ເພີ່ມຂຶ້ນຫຼາຍໃນຄອບຄົວທີ່ມີພໍ່ນ້າ ຫຼື ແມ່ນ້າ ເຊິ່ງຄອບຄົວດັ່ງກ່າວມີຄວາມເປັນອັນຕະ ລາຍຫຼາຍກວ່າຄອບຄົວທີ່ມີພໍ່ແມ່ຄີງ (Daly & Wilson, 1996). ໄວໜຸ່ມຍິງລາຍງານວ່າເຂົາເຈົ້າເປັນເປົ້າໝາຍຂອງແມ່ (ແມ່ຄີງ ແລະ ແມ່ນ້າ) ໃນການໃຊ້ຄວາມຮຸນແຮງດ້ານຮ່າງກາຍ ຫຼາຍກວ່າກຸ່ມເພດຊາຍ (Mallett & Rosenthal, 2008, Janus ພ້ອມຄະນະ., 1995). ເຖິງຢ່າງໃດກໍ່ຕາມ, ໃນສະພາບການຂອງ ສປປ ລາວ ບັນຫານີ້ ຍັງເປັນລັກສະນະຂອງການຄາດເດົາ, ສະນັ້ນຈຶ່ງຕ້ອງການວິໄຈເພີ່ມເຕີມ.

ໃນການຖືກຄວາມຮຸນແຮງທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ແມ່ນມີແມ່ຍິງທັງໝົດ 5.3% ທີ່ຖືກສໍາພາດໄດ້ລາຍງານວ່າເຂົາເຈົ້າຖືກບັງຄັບໃຫ້ມີເພດສໍາພັນ ຫຼື ພະຍາຍາມໃຫ້ມີເພດສໍາພັນ ຫຼື ກະທໍາທາງເພດສໍາພັນທີ່ບໍ່ຕ້ອງການທັງສອງຝ່າຍ. ເຊິ່ງສ່ວນຫຼາຍແມ່ນກະທໍາໂດຍໝູ່ທີ່ເປັນຜູ້ຊາຍ ຫຼືຄົນຮູ້ຈັກ. ຂໍ້ມູນນີ້ແມ່ນໜ້ອຍກວ່າທີ່ຄາດຄະເນໃນລະດັບສາກົນພຽງເລັກໜ້ອຍສໍາລັບການຖືກຄວາມຮຸນແຮງທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ທີ່ມີ 7.2% (ອົງການອະນາໄມໂລກ, 2013a). ການສໍາຫຼວດທາງດ້ານຄຸນນະພາບໄດ້ຮັບຮູ້ບາງເລື່ອງເລົ່າ ຫຼື ການສົນທະນາກ່ຽວກັບການຖືກຄວາມຮຸນແຮງຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ, ໂດຍສະເພາະກໍລະນີການຂົ່ມຂືນໄວໜຸ່ມຍິງ, ເຊິ່ງມີການແກ້ໄຂລະຫວ່າງຜູ້ຖືກເຄາະຮ້າຍ ແລະ ຜູ້ກະທໍາຜິດໂດຍຈົບລົງດ້ວຍການແຕ່ງງານ, ໂດຍມີການຕົກລົງເຫັນດີກັນພາຍໃນຄອບຄົວ. ເຊິ່ງໄດ້ມີການແນະນໍາບໍ່ໃຫ້ເປີດເຜີຍກໍລະນີດັ່ງກ່າວໃຫ້ສາທາລະນະໄດ້ຮັບຮູ້, ລວມເຖິງການບໍ່ແຈ້ງຕໍາຫຼວດ ຫຼື ຟ້ອງສານ. ສິ່ງເຫຼົ່ານີ້ໄດ້ຊີ້ບອກໃຫ້ເຫັນວ່າຫຼາຍໆ ກໍລະນີຂອງການຂົ່ມຂືນ ຫຼື ການລ່ວງລະເມີດທາງເພດ ແມ່ນອາດບໍ່ໄດ້ຖືກລາຍງານ ແລະ ກໍ່ຖືກມິດງຽບ ໂດຍໃຊ້ທາງອອກດ້ວຍການແຕ່ງງານ.

ໃນອັດຕາສ່ວນຂອງການລ່ວງລະເມີດທາງເພດໃນໄວເດັກ, ແມ່ຍິງ 0.9% ລາຍງານວ່າ ຖືກການລ່ວງລະເມີດທາງເພດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດໃນໄວເດັກ (ກ່ອນອາຍຸ 15 ປີ) ໂດຍ 0.9% ແມ່ນຈາກການສໍາພາດປາກເປົ່າ, ແຕ່ວ່າອັດຕາສ່ວນຮ້ອຍນີ້ສູງຂຶ້ນປະມານ 10% ຜົນຈາກການສໍາພາດທີ່ໃຊ້ບັດຮູບໜ້າ ແລະ 10.3% ໃນເວລາທີ່ໃຊ້ການສໍາພາດທັງສອງວິທີ. ດ້ວຍເຫດນີ້, ອັດຕາສ່ວນຮ້ອຍໃນການເປີດເຜີຍປະສົບການໂດຍບໍ່ບອກຜູ້ໃຫ້ຂໍ້ມູນຈຶ່ງເພີ່ມສູງຂຶ້ນໃນທາງທີ່ດີ. ເມື່ອທຽບຜົນການສໍາຫຼວດກັບບັນ ດາປະເທດອື່ນໆ ໃນອາຊຽນ, ອັດຕາສ່ວນຮ້ອຍຂອງການລ່ວງລະເມີດທາງເພດກ່ອນອາຍຸ 15 ປີ ແມ່ນມີ 1.5% ໃນປະເທດຫວຽດນາມ (ລັດຖະບານຂອງປະເທດຫວຽດນາມ, 2010), 7.6% ໃນປະເທດໄທ (ຕົວເມືອງ) ແລະ 9.6% ໃນປະເທດຍີ່ປຸ່ນ ໂດຍການສໍາພາດປາກເປົ່າ (Garcia-Moreno ພ້ອມຄະນະ., 2005), ແລະ ສູງຂຶ້ນເຖິງ 2.5%, 8.9% ແລະ 13.8% ໂດຍນໍາໃຊ້ບັດຮູບໜ້າ ຕາມລໍາດັບ (Ibid.), ເຖິງວ່າບັນຫາເຫຼົ່ານີ້ຖືກລາຍງານວ່າອັດຕາການໃຊ້ຄວາມຮຸນແຮງ, ແຕ່ອາດບໍ່ແມ່ນຈໍານວນຂອງບັນດາກໍລະນີທີ່ແທ້ຈິງ. ຢ່າງໃດກໍ່ຕາມ, ການປຽບທຽບແບບງ່າຍດາຍນັ້ນໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ນໍາໃຊ້ບັດຮູບຄົນເຂົ້າໃນການລາຍງານກ່ຽວກັບການລ່ວງລະເມີດທາງເພດໃນໄວເດັກ ໂດຍບໍ່ບອກຜູ້ໃຫ້ຂໍ້ມູນ ເຊິ່ງຈະເຮັດໃຫ້ເຫັນອັດຕາການໃຊ້ຄວາມຮຸນແຮງສູງກວ່າໃນປະເທດຫວຽດນາມ ແລະ ຕົວເມືອງໃນປະເທດໄທ. ບັດຮູບໜ້າ ໄດ້ຖືກໃຊ້ສະເພາະໃນເວລາຖາມຜູ້ໃຫ້ສໍາພາດກ່ຽວກັບໃນກໍລະນີການລ່ວງລະເມີດທາງເພດໃນໄວເດັກ, ຍ້ອນວ່າຄໍາຖາມດັ່ງກ່າວມີຄວາມລະອຽດອ່ອນ ແລະ ມັກໄດ້ຄໍາຕອບທີ່ບໍ່ຖືກກັບຄວາມເປັນຈິງ ຍ້ອນວ່າຢ້ານຈະເຮັດໃຫ້ຖືກຈໍາແນກລວມທັງເຮັດໃຫ້ເກີດການອັບອາຍ ແລະ ເສຍກຽດສັກສີ. ຄືດັ່ງຜົນໄດ້ຮັບ, ທີ່ສາມາດຄາດຄະເນໄດ້ວ່າບໍ່ພຽງແຕ່ການໃຊ້ຄວາມຮຸນແຮງທາງເພດເທົ່ານັ້ນ, ແຕ່ບັນດາຄວາມຮຸນແຮງໃນຮູບແບບອື່ນໆ ທີ່ມີໃນສັງຄົມນີ້ ທີ່ໄດ້ກ່າວມາໃນບົດສໍາຫຼວດອາດຈະຖືກຕົກເຮ່ຍ ແລະ ບໍ່ຖືກລາຍງານ.

# 6

# ທັດສະນະຄະຕິ ແລະ ຄວາມຮັບຮູ້ທີ່ເປັນປັດໄຈພື້ນຖານຂອງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ

# ພາກທີ 6. ທັດສະນະຄະຕິ ແລະ ຄວາມຮັບຮູ້ທີ່ເປັນປັດໄຈພື້ນຖານຂອງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ

**ຜົນໄດ້ຮັບຫຼັກຂອງການສຳຫຼວດ:**

- ແມ່ຍິງ 35.6% ທີ່ຖືກສຳພາດເຫັນດີກັບຄຳເວົ້າທີ່ວ່າ "ເມຍທີ່ດີຕ້ອງຟັງຄວາມຜົວ, ເຖິງວ່າຈະບໍ່ເຫັນດີນຳຜົວກໍ່ຕາມ", 22.9% ເຫັນດີວ່າ "ຜູ້ຊາຍຄວນສະແດງວ່າຕົນເປັນຫົວໜ້າ" ແລະ 29.4% ຍອມຮັບວ່າເມຍຕ້ອງມີເພດສຳພັນກັບສາມີຂອງຕົນ. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ມີທ່າອ່ຽງທີ່ຈະເຫັນດີກັບຄຳເວົ້າດັ່ງເຊິ່ງຖືກກຳນົດດ້ານຮີດຄອງປະເພນີສຳລັບຍິງ-ຊາຍ(ຄວາມບໍ່ເທົ່າທຽມ) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ.
- ແມ່ຍິງທີ່ຖືກສຳພາດເກືອບເຄິ່ງໜຶ່ງຄື (45%) ເຫັນດີວ່າຜົວສາມາດຕີເມຍໄດ້ຖ້າຮູ້ວ່າເມຍບໍ່ມີຄວາມຊື່ສັດຕໍ່ຕົນ. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຂ້ອນຂ້າງຈະຍອມຮັບການໃຊ້ຄວາມຮຸນແຮງຂອງຜົວຕໍ່ເມຍໃນກໍລະນີທີ່ຜົວສົງໃສວ່າເມຍບໍ່ຊື່ສັດຕໍ່ເຂົາ ຫຼື ຖ້າວ່າແມ່ຍິງບໍ່ເຊື່ອຟັງຜົວ, ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ.
- ແມ່ຍິງທີ່ຖືກສຳພາດ ເຖິງ 76.5% ແມ່ນເຫັນດີວ່າ ການປະຕິເສດການມີເພດສຳພັນນຳຜົວແມ່ນມີຄວາມເປັນທຳໃນກໍລະນີແມ່ຍິງບໍ່ຕ້ອງການ ຫຼື ບໍ່ສະບາຍ, ຫຼື ໃນເວລາທີ່ສາມີມຶນເມົາ.
- ສາເຫດຕົ້ນຕໍຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງລວມມີຮີດຄອງເດີມສຳລັບຍິງ-ຊາຍ ທີ່ເປັນຈຸດພິເສດສະເພາະຂອງ ສປປ ລາວ, ການບໍ່ເຊື່ອໃຈ ແລະ ການຫຶງຫວງ ເຊິ່ງກ່ຽວຂ້ອງກັບການນອກໃຈ, ການໃຊ້ສິ່ງມຶນເມົາ, ການວ່າງງານ ຫຼື ມີບັນຫາດ້ານການເງິນ.

## 6.1 ພາກສະເໜີ

ບົດນີ້ໄດ້ນຳສະເໜີຜົນການສຳຫຼວດກ່ຽວກັບທັດສະນະຄະຕິຕໍ່ຍິງ-ຊາຍ ແລະ ຄວາມຮັບຮູ້ຂອງຜູ້ໃຫ້ສຳພາດທັງໝົດ, ໂດຍສະເພາະແມ່ນບັນດາເຫດຜົນທີ່ຍົກມາເປັນຂໍ້ອ້າງຂອງ ສາມີ ຫຼື ຄູ່ຮ່ວມຊີວິດເພື່ອການທຸບຕີ ແລະ ການປະຕິເສດການມີເພດສຳພັນກັບ ສາມີ ຫຼື ຄູ່ຮ່ວມຊີວິດ ລວມທັງປັດໄຈອື່ນໆທີ່ຮັບຮູ້ຈາກການສຳຫຼວດທາງດ້ານປະລິມານທີ່ພົວພັນເຖິງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ.

ໃນການສຳຫຼວດ ດ້ານຄຸນນະພາບ, ບາງສະຖານະການສະເພາະໄດ້ຖືກພິຈາລະນາ ເຊິ່ງລວມມີຮີດຄອງປະເພນີຕໍ່ບົດບາດຍິງ-ຊາຍ ແລະ ທັດສະນະຄະຕິ, ເຊັ່ນ ການຍອມຮັບຂອງເມຍຕໍ່ຄວາມຕ້ອງການຂອງສາມີ ແລະ ການມີເພດສຳພັນ ລວມທັງທັດສະນະຄະຕິຕ່າງໆຕໍ່ການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ. ບັນດາທັດສະນະຄະຕິເຫຼົ່ານີ້ໄດ້ຝັງເລິກຢູ່ໃນວັດທະນະທຳ ແລະ ສັງຄົມລາວ, ການສຳຫຼວດທາງດ້ານຄຸນນະພາບ ສາມາດເຮັດໃຫ້ມີການສຶກສາຄົ້ນຄວ້າຢ່າງເລິກເຊິ່ງ ລວມທັງການຊຸກຍູ້ການ ວິເຄ າະຂໍ້ມູນທາງສະຖິຕິ ໂດຍມີການລວມເອົາບັນດາທັດສະນະຄະຕິ ແລະ ຄວາມຮູ້ສຶກຂອງແມ່ຍິງ ແລະ ບັນດາສະພາບການຕ່າງໆທີ່ ຍາກ ຈະ ອ ະທິບາຍໄດ້. ໃນຂົງເຂດນີ້, ບັນຫາຫຼັກຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໄດ້ຖືກກຳນົດຢູ່ໃນ 4 ຫຼັກການດັ່ງນີ້.[13]

ກ) ຄວາມບົກພ່ອງ ຫຼື ລົ້ມເຫຼວຂອງແມ່ຍິງໃນການປະຕິບັດຕາມຄວາມຄາດຫວັງທີ່ກຳນົດໄວ້ສຳລັບຍິງ-ຊາຍ, ລວມທັງການເຄົາລົບນັບຖື ແລະ ການຕອບສະໜອງຄວາມຕ້ອງການທາງເພດຕໍ່ສາມີ

ຂ) ການຫຶງຫວງ, ບໍ່ເຊື່ອໃຈ, ການນອກໃຈຂອງສາມີ (ມີເລື່ອງທີ່ກ່ຽວຂ້ອງກັບເມຍນ້ອຍ)

ຄ) ການໃຊ້ສິ່ງມຶນເມົາ ຫຼື ຢາເສບຕິດ

ງ) ບັນຫາການວ່າງງານ, ຄວາມຄຽດ ຫຼື ຄວາມກົດດັນທາງດ້ານການເງິນ ຫຼື ບັນຫາການເງິນ.

[13] ຄຳສັບທີ່ໃຊ້ເຂົ້າໃນບົດນີ້ ແມ່ນມາຈາກ 4 ພື້ນຖານ ທີ່ໄດ້ແປໂດຍກົງຈາກການອະທິບາຍບົດຄວາມ ໃນພາສາລາວໃນການສຳພາດ ແລະ ກຸ່ມສົນທະນາ, ແລະ ບໍ່ແມ່ນການແປໂດຍບໍ່ເ ສຍຄ່າຈາກຜູ້ຂຽນ.

## 6.2 ທັດສະນະຄະຕິຂອງແມ່ຍິງຕໍ່ບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງ

### 6.2.1 ຄວາມແຕກຕ່າງທາງດ້ານພູມສັນຖານ ແລະ ກຸ່ມທີ່ເຄີຍຖືກ ຫຼື ບໍ່ເຄີຍຖືກຄວາມຮຸນແຮງ

ດັ່ງທີ່ໄດ້ສະແດງໃນຮູບທີ 6.1, ເຊິ່ງມີ 3 ຄຳເວົ້າທີ່ເປັນຕົວແທນຂອງແມ່ຍິງ (ເມຍທີ່ເຊື່ອຟັງ, ທັດສະນະຄະຕິແບບຜະເດັດການ ແລະ ໜ້າທີ່ທາງເພດ), ແມ່ຍິງຈຳນວນຫຼາຍເຫັນດີວ່າ "ເມຍທີ່ດີຕ້ອງເຊື່ອຟັງຜົວ, ເຖິງວ່າຈະບໍ່ເຫັນດີນຳຜົວກໍ່ຕາມ" ມີ (35.6%). ໂດຍແຍກຕາມພູມສັນຖານ, ແມ່ຍິງໃນເຂດຊົນນະບົດ (38.9%) ແລະ ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ (39.7%) ເຫັນດີກັບບັນດາຄຳເວົ້າເຫຼົ່ານີ້ຫຼາຍກວ່າ. ແມ່ຍິງໃນເຂດພາກເໜືອເຫັນດີກັບຄຳເວົ້າເຫຼົ່ານີ້ (40.0%), ເຊິ່ງຫຼາຍກວ່າພາກກາງ ທີ່ມີ (35.4%) ແລະ ພາກໃຕ້ (30.2%). ທັດສະນະຄະຕິທີ່ຜູ້ຊາຍມີສິດອຳນາດເໜືອກວ່າແມ່ຍິງ ຍິ່ງມີອັດຕາສູງໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ມີ (37.1%), ເຊິ່ງຫຼາຍກວ່າໃນເຂດຊົນນະບົດ (24.3%) ແລະ ໃນຕົວເມືອງ (16.8%). ແມ່ຍິງໃນເຂດພາກໃຕ້ແມ່ນເຫັນດີໃນແນວຄວາມຄິດດ້ານໜ້າທີ່ທາງເພດຂອງແມ່ຍິງມີ (36.0%), ເຊິ່ງຫຼາຍກວ່າເຂດພາກເໜືອ (22.1%).

**ຮູບກັບທີ 6.1 P-value ແມ່ນຫຍັງ?**

p-value ຊ່ວຍກຳນົດວ່າມີການຍອມຮັບ ຫຼື ປະຕິເສດສົມມຸດຖານ ຫຼື ບໍ່, ເຊິ່ງສະແດງເຖິງ "ຄວາມບໍ່ແຕກຕ່າງກັນ" ໃນລະຫວ່າງ 2 ເຫດ ການ. ການຕັດສິນແມ່ນເກີດຂຶ້ນກັບຄ່າ p-value ທີ່ນ້ອຍກວ່າຈຸດທຽບຖານ ແມ່ນຈະປະຕິເສດສົມມຸດຖານ. ຈຸດຕັດນີ້ເອີ້ນວ່າ "ລະດັບຄວາມສຳຄັນ", ເຊິ່ງຕັ້ງຄ່າແມ່ນ 0.05, 0.01 ຫຼື 0.001. ຄ່າ p-value ທີ່ໜ້ອຍກວ່າ, ເຮັດໃຫ້ການປຽບທຽບຂອງສອງກຸ່ມມີຄວາມແຕກຕ່າງກັນ.

ແມ່ຍິງທີ່ບໍ່ໄດ້ຮຽນໜັງສື ແມ່ນເຫັນດີຕໍ່ຮີດຄອງປະເພນີທີ່ເມຍຈະຕ້ອງເຊື່ອຟັງຜົວ (43.8%) ແລະ ທັດສະນະຄະຕິແບບຜະເດັດການຂອງຜູ້ຊາຍ (28.7%) ເຊິ່ງຫຼາຍກວ່າບັນດາແມ່ຍິງທີ່ມີການສຶກສາ, ບັນດາຄຳເວົ້າເຫຼົ່ານີ້ຍັງໄດ້ຮັບການເຫັນດີເຫັນພ້ອມຈາກແມ່ຍິງກຸ່ມອາຍຸ 50 ແລະ 60 ຂຶ້ນໄປ ເມື່ອປຽບທຽບກັບແມ່ຍິງໃນກຸ່ມອາຍຸທີ່ນ້ອຍກວ່າ.

ຮູບທີ 6.1 ທັດສະນະຄະຕິກ່ຽວກັບສິດສະເໝີພາບຍິງ-ຊາຍ: ອັດຕາສ່ວນຂອງແມ່ຍິງທີ່ຖືກສຳພາດ ທີ່ເຫັນດີກັບປະໂຫຍກສະເພາະໃດໜຶ່ງ ໂດຍການແຍກຕາມພູມສັນຖານ, ສປປ ລາວ, 2014 (ຈຳນວນ=2,997)




ນອກນັ້ນຍັງໄດ້ພະຍາຍາມວິເຄາະເພື່ອພິສູດໃຫ້ເຫັນຄວາມແຕກຕ່າງດ້ານທັດສະນະຄະຕິຂອງແມ່ຍິງ ຕໍ່ ບົດບາດຍິງ-ຊາຍ ລະຫວ່າງກຸ່ມແມ່ຍິງທີ່ເຄີຍຖືກ ຫຼື ບໍ່ເຄີຍຖືກຄວາມຮຸນແຮງທາງເພດ, ໂດຍການປຽບທຽບຄ່າກາງໃນການທົດສອບຄ່າຄວາມສຳຄັນ, p-value (ຮູບກັບທີ 6.1). ຄືດັ່ງທີ່ສະແດງໃນຮູບທີ 6.2, ຜົນການສຶກສາເຫັນວ່າ ມີຄ່າຄວາມສຳຄັນແຕກຕ່າງກັນລະຫວ່າງ ແມ່ຍິງທີ່ເຄີຍຖືກ ຫຼື ບໍ່ເຄີຍຖືກຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ. ໃນດ້ານອັດຕາສ່ວນທີ່ເຫັນດີໃນບັນດາຄຳເວົ້າທີ່ວ່າ: "ຜູ້ຊາຍຄວນສະແດງວ່າຕົນເອງເປັນຫົວໜ້າ" ($p<0.001$) ແລະ "ເມຍຕ້ອງມີເພດສຳພັນກັບຜົວ" ($p<0.001$). ແຕ່ບໍ່ມີຄວາມແຕກຕ່າງກັນຫຼາຍລະຫວ່າງ "ເມຍທີ່ດີຕ້ອງເຊື່ອຟັງຜົວເຖິງວ່າຈະບໍ່ເຫັນດີກໍ່ຕາມ".

ຮູບທີ 6.2 ທັດສະນະຄະຕິກ່ຽວກັບສິດສະເໝີພາບຍິງ-ຊາຍ: ອັດຕາສ່ວນຂອງແມ່ຍິງທີ່ຖືກສຳພາດ ທີ່ເຫັນດີກັບປະໂຫຍກສະເພາະໃດໜຶ່ງ ຂອງແມ່ຍິງທີ່ ເຄີຍ/ບໍ່ເຄີຍ ມີປະສົບການ ໃນການຖືກໃຊ້ຄວາມຮຸນແຮງ, ສປປ ລາວ, 2014 (ຈຳນວນ=2,997)




### 6.2.2 ຄວາມລົ້ມເຫຼວຂອງແມ່ຍິງໃນການປະຕິບັດຕາມໜ້າທີ່ທາງເພດ

ການສຳຫຼວດທາງດ້ານຄຸນນະພາບໄດ້ສະແດງໃຫ້ເຫັນປັດໄຈຕ່າງໆທີ່ເປັນສາເຫດຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດໃກ້ຊິດ ເຊິ່ງປັດໜຶ່ງແມ່ນຄວາມລົ້ມເຫຼວໃນການປະຕິບັດໜ້າທີ່ທາງເພດຂອງແມ່ຍິງ. ສູນກາງສະຫະພັນແມ່ຍິງລາວ ໄດ້ຮຽກຮ້ອງໃຫ້ແມ່ຍິງທຸກຄົນຕັ້ງໜ້າປະຕິບັດຄຳຂວັນ "3 ດີ", ລວມມີ "ການເປັນແມ່ທີ່ດີ, ເປັນເມຍທີ່ດີ ແລະ ເປັນພົນລະເມືອງທີ່ດີ". ໃນໄລຍະທີ່ຜ່ານມາ, ຄຳຂວັນ 3 ດີນີ້ໄດ້ມີການຜັນຂະຫຍາຍຈາກ ການເປັນແມ່ຍິງດີ (ເມຍທີ່ດີ) ມາເປັນ "ພົນລະເມືອງດີ, ພັດທະນາດີ ແລະ ຄອບຄົວວັດທະນະທຳດີ".[14] ໃນກຸ່ມສົນທະນາຂອງກຸ່ມແມ່ຍິງຊົນນະບົດ ແລະ ໃນຕົວເມືອງ, ແມ່ຍິງໃນບັນດາກຸ່ມດັ່ງກ່າວໄດ້ເວົ້າຢ່າງຈະແຈ້ງວ່າ ບໍ່ມີຜົນຫຍັງເລີຍໃນການທີ່ແມ່ຍິງເອົາໃຈສາມີໂດຍການແຕ່ງຢູ່ຄົວກິນ, ເຮັດໃຫ້ສາມີເພິ່ງພໍໃຈໃນການມີເພດສຳພັນ, ພະຍາຍາມຮັກສາຮູບຮ່າງໜ້າຕາໃຫ້ຈົບງາມຕະຫຼອດເວລານັ້ນ ແລະ ຮັບຜິດຊອບພາລະໜ້າທີ່ໃນການເບິ່ງແຍງລູກ, ແມ່ຍິງກໍ່ຍັງມີຄວາມສ່ຽງໃນເວລາຜູ້ເປັນສາມີໃຈຮ້າຍ. ເຊິ່ງແມ່ຍິງເຫຼົ່ານີ້ກໍ່ບໍ່ໄດ້ກ່າວເຖິງການໃຊ້ຄວາມຮຸນແຮງທາງຮ່າງກາຍຕໍ່ເຂົາເຈົ້າຖ້າວ່າເຂົາເຈົ້າບໍ່ປະຕິບັດວຽກເຮືອນໃຫ້ຫຼ້ອນໜ້າທີ່, ເຂົາເຈົ້າເວົ້າວ່າ ບັນດາສາມີ ມີຄວາມຊອບທຳທີ່ຈະໃຈຮ້າຍ ແລະ ອອກໄປທ່ຽວມີຄວາມສຸກກັບແມ່ຍິງອື່ນທີ່ມີສະເໜ່ກວ່າ ແລະ ເອົາໃຈເຂົາເຈົ້າເກັ່ງກວ່າ.

> ***"ຂ້ອຍຄິດວ່າເຫດຜົນທີ່ຜົວມີເມຍນ້ອຍແມ່ນຍ້ອນເມຍ. ອາດຈະເປັນຍ້ອນເວລາຜົວກັບມາເຮືອນແລ້ວບໍ່ມີອາຫານຕັ້ງຢູ່ເທິງໂຕະໂລດ. ພາເຂົ້າບໍ່ຫງາຍພາງາຍບໍ່ແຕ່ງ, ນີ້ອາດຈະແມ່ນເຫດຜົນທີ່ຜູ້ຊາຍໄປມີເມຍນ້ອຍ."***
>
> **ແມ່ຍິງອາວຸໂສ, ເຂດຊົນນະບົດ**

ແມ່ຍິງທີ່ຖືກເຄາະຮ້າຍໄດ້ອະທິບາຍສະຖານະການທີ່ເຂົາເຈົ້າຖາມສາມີຂອງເຂົາເຈົ້າວ່າ "ລາວໄປໃສມາ", "ລາວໄປກັບໃຜ" ຫຼື ຖາມ ຫຼື ຜິດກັນເລື່ອງເງິນ. "ການບໍ່ໃຫ້ກຽດ" ນີ້ນຳໄປສູ່ການປະທະກັນ.[15] ແມ່ຍິງທີ່ໃຊ້ເວລາຢູ່ກັບຫມູ່ ຫຼື ເພື່ອນຮ່ວມງານ ແລະ ບໍ່ໄດ້ເອົາສາມີໄປນຳ ແມ່ນອາດຈະຖືກຄວາມຮຸນແຮງຕອບກັບມາ, ເຊິ່ງອາດຈະມີການດູຖູກ ຫຼື ຖຽງຜູ້ເປັນສາມີ.

[14] ກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ IV ໄດ້ຮັບຮອງເອົາການປັບປຸງຄຳຂວັນດັ່ງກ່າວ.

[15] ຄຳສັບ 'ການບໍ່ໃຫ້ກຽດ' ແມ່ນມີການແປໂດຍກົງຈາກພາສາລາວ. ຄຳສັບ 'ການບໍ່ໃຫ້ກຽດ" ແລະ "ບໍ່ໃຫ້ກຽດເຊິ່ງກັນແລະກັນ" ຖືກໃຊ້ 13-14 ຄັ້ງໃນການສຳພາດ.

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

*"ຖ້າສາມີກໍາລັງກິນ ແລະ ດື່ມຢູ່ກັບໝູ່ ແລະ ເມຍມາກອດກາເບິ່ງ, ສາມີອາດຈະຄິດວ່າເມຍບໍ່ໃຫ້ກຽດລາວ ແລະ ໂທນໍາລາວ ແລະ ບອກໃຫ້ລາວກັບເມືອເຮືອນ. ການກະທໍານີ້ອາດຈະເຮັດໃຫ້ເກີດ ມີການຜິດຖຽງກັນ ແລະ ຜົວອາດຈະຕີເມຍໄດ້."*

ແມ່ຍິງອາວຸໂສທີ່ເຂົ້າຮ່ວມໃນການສົນທະນາກຸ່ມມັກຈະເຫັນດີວ່າຖ້າບໍ່ພະຍາຍາມເຮັດໃຫ້ສາມີເພິ່ງພໍໃຈ ອາດຈະເຮັດໃຫ້ເສຍລາວໄປໄດ້.

*"ພວກເຂົາເຊື່ອໝູ່ຫຼາຍກວ່າເຊື່ອເມຍ. ເຂົາເຈົ້າບໍ່ຢຸດດື່ມ. ໝູ່ຂອງເຂົາເຈົ້າຈະລ້ຽງ ແລະ ຊວນເຂົາເຈົ້າຕະຫຼອດ ແລະ ຊຸກຍູ້ໃຫ້ດື່ມຫຼາຍໆ. ເມື່ອລາວກັບມາເຮືອນລາວກໍ່ປຽບທຽບໜ້າຂີ້ລ້າຍຂອງເມຍກັບແມ່ຍິງງາມໆໃນຮ້ານເບຍ."*

**ແມ່ຍິງອາວຸໂສ, ເຂດຕົວເມືອງ**

ຜູ້ໃຫ້ຂໍ້ມູນຫຼັກທີ່ເຮັດວຽກກັບຜູ້ຖືກເຄາະຮ້າຍໄດ້ເວົ້າວ່າ ຄຸນຄ່າທາງຮີດຄອງປະເພນີໃນ ສປປ ລາວເຮັດໃຫ້ແມ່ຍິງເປັນພຽງຊັບສົມບັດຂອງສາມີ ແລະ ເປັນສາເຫດເຮັດໃຫ້ເກີດການໃຊ້ຄວາມຮຸນແຮງ. ທັດສະນະດ້ານການໃຫ້ຄຸນຄ່າຕໍ່ຍິງ-ຊາຍທີ່ແຕກຕ່າງກັນກໍ່ໄດ້ເຮັດໃຫ້ແມ່ຍິງມີຄວາມສ່ຽງ ເຊິ່ງຄືກັນກັບການຄ້າມະນຸດ. ຫຼັກຖານ ແລະ ທັດສະນະຕ່າງໆໄດ້ນໍາສະເໜີຢ່າງຈະແຈ້ງໂດຍອໍານາດການປົກຄອງຂັ້ນບ້ານ, ຕໍາຫຼວດ, ສະຫະພັນແມ່ຍິງ ແລະ ແພດ ທີ່ຍອມຮັບວ່າ ແມ່ຍິງເກີດມາເພື່ອເປັນທາດຂອງສາມີ.

**ຜູ້ໃຫ້ຂໍ້ມູນຫຼັກ, ເພດຍິງ, ສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ**

*"ສາມີສາມາດເຮັດຫຍັງກໍ່ໄດ້ຍ້ອນວ່າລາວຈ່າຍເງິນຄ່າດອງແລ້ວ", "ແມ່ຍິງຄືຊັບສົມບັດທີ່ຜູ້ຊາຍເອົາໄວ້ມີເພດສໍາພັນ."*

ເຖິງຢ່າງໃດກໍ່ຕາມ, ຍັງມີປັດໄຈອື່ນໆທີ່ບັນດາຜູ້ເຂົ້າຮ່ວມໄດ້ຍົກຂຶ້ນມາຄື ບັນດາແມ່ຍິງ ຫຼື ຄອບຄົວຂອງເຂົາມີຄວາມຄາດຫວັງທີ່ຈະເປັນເຈົ້າກໍາມະສິດຊັບສິນ. ຜູ້ຖືກເຄາະຮ້າຍຫຼາຍໆ ຄົນໄດ້ຢັ້ງຢືນໃນກຸ່ມສົນທະນາຂອງກຸ່ມຜູ້ຊາຍອາວຸໂສເພື່ອຈໍາແນກແຫຼ່ງທີ່ມາຂອງອໍານາດໃນສາຍພົວພັນທີ່ແຕກຕ່າງກັນ, ທີ່ແມ່ຍິງບໍ່ມີສິດໃນການໄດ້ຮັບມໍລະດົກ. ເປັນເລື່ອງປົກກະຕິໃນ ສປປ ລາວ ທີ່ຄູ່ແຕ່ງງານຈະອາໄສຢູ່ໃນເຮືອນ ຫຼື ດິນ ທີ່ພໍ່ແມ່ຂອງຜູ້ເປັນເມຍເປັນເຈົ້າຂອງກໍາມະສິດ. ຖ້າຄອບຄົວຂອງແມ່ຍິງບໍ່ມີຊັບສົມບັດໃນການປະກອບສ່ວນ, ແມ່ຍິງຄົນນັ້ນອາດຈະບໍ່ໄດ້ຮັບການໃຫ້ກຽດ ຄືດັ່ງຄອບຄົວອື່ນໆທີ່ໄດ້ປະກອບສ່ວນຫຼາຍ. ສິ່ງເຫຼົ່ານີ້ເຮັດໃຫ້ແມ່ຍິງທີ່ບໍ່ມີມໍລະດົກຍິ່ງມີຄວາມດ້ອຍໂອກາດ ແລະ ສ່ຽງໃນການຖືກໃຊ້ຄວາມຮຸນແຮງ ແລະ ກໍ່ບໍ່ສາມາດໜີຈາກສະພາບນັ້ນໄດ້.

*"ໃນເວລາທີ່ລາວຮ້ອງ ແລະ ເຮັດສຽງດັງໃສ່ຂ້ອຍ, ຂ້ອຍຮູ້ສຶກເສຍໃຈ. ຂ້ອຍເປັນຄົນກໍາພ້າ, ເວລາທີ່ລາວເວົ້າເລື່ອງປົມດ້ອຍຂອງຂ້ອຍມັນເຮັດໃຫ້ຂ້ອຍເສຍໃຈ. ຖ້າລາວໄລ່ຂ້ອຍໜີຂ້ອຍຄືຈະບໍ່ມີບ່ອນໄປ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

**ຜູ້ຊາຍອາວຸໂສ, ເຂດຕົວເມືອງ**

*"ແມ່ຍິງຄົນນັ້ນບໍ່ມີຫຍັງເລີຍ ແລະ ລາວຕ້ອງອາໄສເຮືອນຜົວຂອງລາວ, ດັ່ງນັ້ນລາວຈຶ່ງເຮັດຕາມສິ່ງທີ່ຜົວລາວຕ້ອງການ. ຜົວລາວຈະຕີ ຫຼື ເຕະລາວກໍ່ໄດ້, ແລ້ວແຕ່ໃຈລາວ. ຖ້າຜູ້ຍິງຄົນນັ້ນທົນບໍ່ໄດ້, ສິ່ງດຽວທີ່ລາວເຮັດໄດ້ກໍ່ຄື ໜີ."*

ຄວາມເຊື່ອທາງດ້ານວັດທະນະທໍາ ທີ່ແມ່ຍິງຕ້ອງເຮັດຕາມຄໍາສັ່ງຂອງສາມີ ເຮັດໃຫ້ຈໍາກັດຂີດຄວາມສາມາດຂອງແມ່ຍິງໃນການຕັດສິນໃຈຢ່າງມີອິດສະຫຼະ ຫຼື ເຮັດໃນສິ່ງທີ່ກົງກັນຂ້າມກັບຄວາມຕ້ອງການຂອງສາມີ.

## 6.3 ທັດສະນະຄະຕິຂອງແມ່ຍິງ ຕໍ່ການໃຊ້ຄວາມຮຸນແຮງທາງຮ່າງກາຍຕໍ່ແມ່ຍິງໂດຍຄູ່ຮ່ວມຊີວິດ

### 6.3.1 ຄວາມແຕກຕ່າງຕາມແບ່ງພູມສັນຖານ ແລະ ຄວາມແຕກຕ່າງລະຫວ່າງກຸ່ມທີ່ເຄີຍຖືກ ຫຼື ບໍ່ເຄີຍ ຖືກຄວາມຮຸນແຮງ

ທັດສະນະຂອງແມ່ຍິງຕໍ່ການໃຊ້ຄວາມຮຸນແຮງຈາກສາມີ ແລະ ຄູ່ຮ່ວມຊີວິດ ໄດ້ຖືກປະເມີນໂດຍໃຊ້ 6 ຄໍາຖາມ (ຮູບທີ 6.3). ແມ່ຍິງເກືອບເຄິ່ງໜຶ່ງເຫັນດີວ່າຜົວສາມາດຕີເມຍໄດ້ຖ້າລາວບໍ່ຊື່ສັດ (45%) ແລະ ເຊິ່ງທ່າອ່ຽງນີ້ມີຢູ່ທຸກພື້ນທີ່ ແລະ ທຸກພາກ. ໃນດ້ານລະດັບການສຶກສາ, ແມ່ຍິງທີ່ມີລະດັບການສຶກສາສູງຈະບໍ່ເຫັນດີກັບຄໍາເວົ້າທີ່ວ່າ "ຈະຖືກຕີຖ້າເຮັດວຽກເຮືອນບໍ່ແລ້ວ" (1.9%) ແລະ "ຖືກຕີຖ້າປະຕິເສດການມີເພດສໍາພັນນໍາຜົວ" ຄືມີ (5.0%) ເຊິ່ງໜ້ອຍກວ່າເມື່ອທຽບກັບແມ່ຍິງທີ່ບໍ່ໄດ້ເຂົ້າໂຮງຮຽນ ເຊິ່ງມີ(6.8%) ແລະ (14.6%), ຕາມລໍາດັບ. ໄວໜຸ່ມຍິງເຫັນດີກັບຄໍາເວົ້າທີ່ວ່າ "ຈະຖືກຕີຖ້າລາວບໍ່ເຊື່ອຟັງຜົວຂອງລາວ" (22.1%), ທຽບກັບແມ່ຍິງທີ່ມີອາຍຸ 50 ປີຂຶ້ນໄປ (11.7% , ແລະ 11.9% ໃນກຸ່ມ 50 ປີປາຍໆ).[16]

ຮູບທີ 6.3 ທັດສະນະຄະຕິທີ່ກໍ່ໃຫ້ເກີດການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໃນຄູ່ຊີວິດ
ໃນຈໍານວນຜູ້ຕອບແບບສອບຖາມທັງໝົດໂດຍພາກ, ສປປ ລາວ, 2014 (ຈໍານວນ=2,997)
'ຜູ້ຊາຍມີເຫດຜົນທີ່ດີໃນການຕີເມຍຂອງເຂົາ ຖ້າວ່າ...'




ຖ້າປຽບທຽບລະຫວ່າງແມ່ຍິງທີ່ ເຄີຍຖືກ ຫຼື ບໍ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ແລະ ຫຼື ຄວາມຮຸນແຮງທາງເພດ (ຮູບທີ 6.4), ເຊິ່ງເຫັນວ່າສະຖິຕິມີຄວາມແຕກຕ່າງກັນຫຼາຍລະຫວ່າງເຫດຜົນຂອງຜູ້ຊາຍໃນການຕີເມຍຂອງຕົນ ຖ້າວ່າ "ຜົວພົບວ່າເມຍບໍ່ຊື່ສັດຕໍ່ຕົນ" ($p<0.001$), ຕາມດ້ວຍ "ຖ້າວ່າເມຍບໍ່ຟັງຄວາມລາວ" ($p<0.01$) ແລະ "ຖ້າວ່າຜົວສົງໃສວ່າເມຍຂອງຕົນບໍ່ຊື່ສັດ" ($p<0.05$).

[16] ຄືດັ່ງໄດ້ສະແດງໃນຮູບທີ 4.2, ໄວໜຸ່ມແມ່ນຄົນທີ່ມີກຸ່ມອາຍຸ 15-19 ປີ ແລະ ກຸ່ມອາຍຸ 50 ປີ ເຊິ່ງໄດ້ແບ່ງອອກເປັນ 2 ກຸ່ມຍ່ອຍຄື 50-54 ແລະ 55-59 ປີ.

ຮູບທີ 6.4 ທັດສະນະຄະຕິທີ່ກໍ່ໃຫ້ເກີດການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍໃນຄູ່ຊີວິດ: ອັດຕາສ່ວນຂອງແມ່ຍິງທີ່ເວົ້າວ່າ ເຂົາເຈົ້າເຫັນດີວ່າ ຜູ້ຊາຍມີເຫດຜົນທີ່ດີໃນການຕີເມຍຂອງເຂົາ ຕາມເຫດຜົນດ້ານລຸ່ມ, ສປປ ລາວ, 2014 (ຈຳນວນ=2,997)




## 6.3.2 ຄວາມບໍ່ເຊື່ອໃຈ ແລະ ການຫຶງຫວງ ທີ່ພົວພັນເຖິງການນອກໃຈ

ຜົນການສຳຫຼວດທາງດ້ານຄຸນນະພາບ ກໍ່ໄດ້ຈຳແນກຄວາມບໍ່ເຊື່ອໃຈ ແລະ ການຫຶງຫວງ ທີ່ພົວພັນເຖິງການນອກໃຈຂອງສາມີ ແລະ ການມີເມຍນ້ອຍ ທີ່ເປັນປັດໃຈຫຼັກທີ່ເປັນສາຍເຫດໃຫ້ເກີດມີການໃຊ້ຄວາມຮຸນແຮງ.[17] ນາຍບ້ານໃນເຂດຕົວເມືອງ ແລະ ຊົນນະບົດ, ໃນກຸ່ມສົນທະນາ ແລະ ແພດຕ່າງກໍ່ໄດ້ຍົກບັນຫາຂອງເມຍນ້ອຍ ທີ່ເປັນບັນຫາຂອງການແຕ່ງງານ.

*"ອີກໜຶ່ງທ່າອ່ຽງໃໝ່ຂອງສັງຄົມທີ່ທັນສະໄໝ ຄືການທີ່ຜູ້ຊາຍມີເມຍນ້ອຍ. ລາວມີເມຍນ້ອຍເພື່ອສະແດງໃຫ້ເຫັນວ່າລາວທັນສະໄໝ."*

**ຜູ້ໃຫ້ຂໍ້ມູນຫຼັກ, ເພດຍິງ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ**

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

*"ເມຍນ້ອຍຄົນທຳອິດຂອງລາວແມ່ນຄົນທີ່ລາວພົບໃນຊ່ວງປີໃໝ່ລາວ ໃນເດືອນພຶດສະພາ-ມິຖຸນາ ໃນປີ 2014, ແລະ ຕັ້ງແຕ່ນັ້ນມາ ລາວກໍ່ເລີ່ມທີ່ຈະຕີຂ້ອຍ."*

*"ຖ້າຜົວອອກໄປກັບແມ່ຍິງຄົນອື່ນ ຫຼື ອອກໄປດື່ມເຫຼົ້າ, ລາວຈະບໍ່ຕີເມຍຂອງລາວ, ແຕ່ລາວບໍ່ກັບມາເຮືອນໃນເວລາທີ່ຄວນຈະກັບ, ບໍ່ສົນໃຈວ່າລູກເມຍຢູ່ເຮືອນຈະມີເຂົ້າກິນບໍ່. ເມຍຖ້າຜົວຂອງລາວກັບມາເຮືອນ, ລາວຮ້ອງໄຫ້, ລາວໄປແຈ້ງຫ້ອງການບ້ານ. ຜົວເວົ້າວ່າລາວອາດຈະກັບມາເຮືອນ, ແຕ່ກໍ່ບໍ່ເຄີຍກັບມາເລີຍ. ລາວໄປກັບແມ່ຍິງຄົນອື່ນ. ນີ້ກໍ່ແມ່ນໜຶ່ງໃນການໃຊ້ຄວາມຮຸນແຮງເຊັ່ນກັນ.."*

**ຜູ້ໃຫ້ຂໍ້ມູນຫຼັກ, ສະຫະພັນແມ່ຍິງລາວ, ເພດຍິງ, ເຂດຕົວເມືອງ**

ຜູ້ເຂົ້າຮ່ວມຫຼາຍຄົນໄດ້ເວົ້າວ່າ ຄວາມບໍ່ເຊື່ອໃຈ ແລະ ການນອກໃຈ ບໍ່ພຽງແຕ່ກໍ່ໃຫ້ເກີດການໃຊ້ຄວາມຮຸນແຮງທາງຮ່າງກາຍເທົ່ານັ້ນ, ແຕ່ຍັງລວມທັງການໃຊ້ຄວາມຮຸນແຮງທາງຈິດໃຈນຳ.

[17] ການອິດສາຂອງຜົວແມ່ນຍ້ອນຜົວຄິດວ່າ (ປົກກະຕິບໍ່ແມ່ນບໍ່ຖືກ) ເມຍຂອງຕົນບໍ່ຊື່ສັດ ເມື່ອຄວາມເປັນຈິງ ແມ່ນຕົວຜົວເປັນຄົນບໍ່ຊື່ສັດ ຫຼື ນອກໃຈເມຍ. ຜູ້ໃຫ້ສຳພາດຫຼາຍຄົນວ່າເປັນເລື່ອງປົກກະຕິທີ່ຜູ້ຊາຍໃນລາວຈະມີເມຍນ້ອຍ ແລະ ມັນເຮັດໃຫ້ເມຍບໍ່ຄ່າ.

ແມ່ຍິງທີ່ຖືກສາມີຂົ່ມຂູ່ ຫຼື ມີເມຍນ້ອຍ ໄດ້ອະທິບາຍເຖິງການຖືກຄວາມຮຸນແຮງທາງຈິດໃຈ, ເຊັ່ນຄວາມໂສກເສົ້າ, ບໍ່ມີຄວາມເຊື່ອໝັ້ນຕົນເອງ ແລະ ບໍ່ເຂົ້າສັງຄົມ. ທີ່ຄ້າຍຄືກັນລະນີດັ່ງກ່າວ, ສາມີທີ່ຫຶງຫວງເມຍຂອງຕົນອາດຈະເປັນຜູ້ໃຊ້ຄວາມຮຸນແຮງ ໂດຍການຕິດຕາມເມຍຂອງຕົນ, ກ່າວຫາວ່າເມຍນອກໃຈຕົນ ແລະ ເຮັດໃຫ້ເກີດການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ຈິດໃຈ. ເມື່ອຄວາມມຶນເມົາບວກກັບຄວາມຫຶງຫວງ, ຜົນກະທົບຍິ່ງຈະເຮັດໃຫ້ສາຍສຳພັນຄູ່ຜົວເມຍຖືກທຳລາຍ, ຍ້ອນການຂາດຄວາມໄວ້ວາງໃຈກັນ ແລະ ການປະຕິບັດຕໍ່ກັນໃນຄອບຄົວເຊິ່ງເຮັດໃຫ້ຂາດຄວາມຄວາມສາມັກຄີ.

| ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ | *"ຍ້ອນຄວາມຫຶງຫວງໂດຍບໍ່ມີຂອບເຂດ ແລະ ຫຶງຫວງເມຍຫຼາຍເກີນໄປ, ເຮັດໃຫ້ເມຍບໍ່ສາມາດອອກໄປດື່ມກິນຂ້າງນອກໄດ້, ເຂົາເຈົ້າບໍ່ເຊື່ອໃຈເຊິ່ງກັນແລະກັນເຮັດໃຫ້ເສຍຄວາມຮູ້ສຶກຕໍ່ກັນທັງສອງຝ່າຍ."* |
|---|---|

## 6.3.3 ການໃຊ້ສິ່ງມຶນເມົາ ແລະ ສິ່ງເສບຕິດ

| *"ໃນເວລາທີ່ລາວເມົາ, ລາວຈະຕີຂ້ອຍ."* | ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ |
|---|---|

ສປປ ລາວ ເປັນປະເທດທີ່ມີອັດຕາການດື່ມສິ່ງມຶນເມົາຫຼາຍທີ່ສຸດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ຍ້ອນວ່າເປັນສິ່ງທີ່ຍອມຮັບໄດ້ທີ່ແມ່ຍິງ ແລະ ຜູ້ຊາຍຈະດື່ມ. ການດື່ມສິ່ງມຶນເມົາໃນງານບຸນ ແລະ ງານລ້ຽງຕ່າງໆ ແມ່ນມີການອັດຕາສ່ວນຫຼາຍທັງໃນກຸ່ມໄວໜຸ່ມ ແລະ ຜູ້ໃຫຍ່,[18] ແລະ ກໍ່ໄດ້ມີການຍົກບັນຫານີ້ຂຶ້ນໃນກຸ່ມສົນທະນາຂອງກຸ່ມຜູ້ອາວຸໂສເພດຊາຍ, ການເພີ່ມຂຶ້ນຂອງຮ້ານເບຍ ແລະ ສະຖານບັນເທີງຕ່າງໆ. ໃນການສຳຫຼວດທາງດ້ານຄຸນນະພາບ, ສິ່ງມຶນເມົາແມ່ນໄດ້ຖືກຍົກຂຶ້ນທັງໃນກຸ່ມສົນທະນາຂອງແມ່ຍິງ ແລະ ຜູ້ຊາຍ ວ່າແມ່ນປັດໃຈຫຼັກທີ່ເຮັດໃຫ້ເກີດການໃຊ້ຄວາມຮຸນແຮງ. ຖ້າມີຫຼາຍປັດໃຈຮ່ວມກັນ ເຊັ່ນການຫຶງຫວງ, ຄວາມບໍ່ເຂົ້າໃຈກັນ, ແລະ ການດື່ມສິ່ງມຶນເມົາເປັນສິ່ງທີ່ຈະນຳໄປສູ່ອາລົມໃຈຮ້າຍທີ່ເຮັດໃຫ້ມີການປະທະກັນ ແລະ ກ້າວໄປສູ່ການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ.

| ໄວໜຸ່ມຊາຍ, ເຂດຕົວເມືອງ | *"ຜູ້ຊາຍບາງຄົນຕິດເຫຼົ້າ. ຕອນລາວບໍ່ເມົາ ລາວກໍ່ເປັນຄົນດີ, ແຕ່ຕອນທີ່ລາວເມົາຖ້າເມຍຂອງລາວເວົ້າບາງຢ່າງທີ່ລາວບໍ່ມັກ, ລາວຈະຕີຫຼືປ້ອຍດ່າເມຍຂອງລາວ."* |
|---|---|

| *"ເວລາລາວດື່ມເຫຼົ້າ, ລາວບໍ່ສາມາດຄວບຄຸມອາລົມຂອງລາວໄດ້. ຂ້ອຍບໍ່ສາມາດເວົ້າຫຍັງກັບລາວໄດ້ເລີຍ ເພາະວ່າຈະເຮັດໃຫ້ລາວໃຈຮ້າຍແລ້ວເລີ່ມທຳລາຍເຄື່ອງຂອງຕ່າງໆໃນເຮືອນ. ຕັ້ງແຕ່ມີລູກຊາຍ ຜົວຂ້ອຍກໍ່ໃຈເຢັນລົງ, ແຕ່ກໍ່ບໍ່ຫຼາຍປານໃດ."* | ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ |
|---|---|

ຜູ້ເຂົ້າຮ່ວມຈຳນວນໜ້ອຍໜຶ່ງເທົ່ານັ້ນທີ່ເຫັນວ່າ ສິ່ງມຶນເມົາບໍ່ແມ່ນປັດໃຈສຳຄັນ.

| ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ | *"ຂ້ອຍບໍ່ເຄີຍໄດ້ຍິນວ່າຜົວຈະຕີເມຍໃນເວລາເມົາ, ເຄີຍໄດ້ຍິນແຕ່ລາວຈະຕີເມຍໃນເວລາທີ່ລາວມີເມຍນ້ອຍ."* |
|---|---|

[18] ການສຳຫຼວດເບື້ອງຕົ້ນໃນການດື່ມສິ່ງມຶນເມົາ: ອັດຕາສ່ວນ ແລະ ຜົນກະທົບຈາກການດື່ມຂອງບຸກຄົນ: ອົງການອະນາໄມໂລກ; 2012 (ບົດລາຍງານໄດ້ຖືກນຳສະເໜີໃນເດືອນຕຸລາ 2013, ວຽງຈັນ).

ສຳລັບແມ່ຍິງ, ທີ່ສາມີທີ່ໃຊ້ເງິນໄປກັບການດື່ມສິ່ງມຶນເມົາກັບໝູ່ ຫຼື ກັບແມ່ຍິງຄົນອື່ນ ຫຼື ກັບເມຍນ້ອຍ ແມ່ນໜຶ່ງໃນການໃຊ້ຄວາມຮຸນແຮງທາງຈິດໃຈ ແລະ ການຜິດຖຽງກັນກໍ່ມັກຈະເກີດຂຶ້ນເລື້ອຍໆ ເມື່ອສາມີກັບມາເຮືອນ. ຜູ້ຊາຍອາວຸໂສໃນກຸ່ມສົນທະນາໄດ້ວິຈານການດື່ມສິ່ງມຶນເມົາກັບໝູ່ ຫຼື ການກ່າວຫາວ່າພວກເຂົາໄປໃຊ້ເວລາກັບແມ່ຍິງຄົນອື່ນທີ່ເປັນການບໍ່ໃຫ້ກຽດ ແລະ ການກະທຳດັ່ງກ່າວແມ່ນສາເຫດຂອງບັນຫາໃນການໃຊ້ຄວາມຮຸນແຮງ, ບໍ່ແມ່ນການດື່ມ.

ໃນເຂດຕົວເມືອງ, ບັນຫາສິ່ງເສບຕິດ ເຊັ່ນ ຢາບ້າ, ອາດເປັນສາເຫດຫຼັກທີ່ເຮັດໃຫ້ມີການໃຊ້ຄວາມຮຸນແຮງໃນຄອບຄົວ ອີງຕາມຜູ້ໃຫ້ຂໍ້ມູນຫຼັກ ແລະ ກຸ່ມສົນທະນາ. ການຕິດສິ່ງເສບຕິດ ແລະ ຄວາມຕ້ອງເງິນເພື່ອໄປຊື້ສິ່ງເຫຼົ່ານັ້ນ ນຳໄປສູ່ພຶດຕິກຳໃນການລັກຊັບສິນໃນຄອບຄົວ ແລະ ການຕອບໂຕ້ກັບຜູ້ທີ່ຕິດສິ່ງເສບຕິດອາດຈະເຮັດໃຫ້ເກີດມີຄວາມຮຸນແຮງໃນການຜິດຖຽງກັນ. ການໃຊ້ຄວາມຮຸນແຮງທີ່ຮ້າຍແຮງ ແລະ ເປັນໄພທີ່ຂົ່ມຂູ່ຕໍ່ຊີວິດ, ໂດຍລວມແລ້ວ ແມ່ນພົວພັນເຖິງຜູ້ທີ່ຕິດຢາບ້າ.

| | |
|---|---|
| *"ຖ້າຜົວຕີເມຍ, ເມຍມີສິດທີ່ຈະເອົາຜົວເຂົ້າຄຸກ. ກໍລະນີສ່ວນໃຫຍ່ແມ່ນຜົວທີ່ຕິດຢາເສບຕິດ."* | ຜູ້ໃຫ້ຂໍ້ມູນຫຼັກ, ປກສ ບ້ານ, ເພດຊາຍ, ເຂດຕົວເມືອງ |

### 6.3.4 ການວ່າງງານ ແລະ ຄວາມກົດດັນທາງການເງິນ

ການວ່າງງານ ແລະ ຄວາມກົດດັນທາງການເງິນ ພົວພັນເຖິງຄວາມບໍ່ປອດໄພ ຫຼື ການຫຶງຫວງ ຫຼື ຄວາມບໍ່ເຊື່ອໃຈກັນ ລະຫວ່າງຄູ່ຮ່ວມຊີວິດ. ການມີລາຍໄດ້ທີ່ຈຳກັດ ແລະ ພາລະອັນໜັກໜ່ວງຂອງແມ່ຍິງໃນການບໍລິຫານຄ່າໃຊ້ຈ່າຍພາຍໃນເຮືອນ ແມ່ນສະພາບການທີ່ໄດ້ອະທິບາຍເມື່ອຜູ້ຊາຍບໍ່ເຊື່ອໝັ້ນແມ່ຍິງໃນການໃຊ້ຈ່າຍເງິນທີ່ຜົວຫາມາ ຫຼື ຮຽກຮ້ອງໃຫ້ແມ່ຍິງຕ້ອງເອົາຄ່າຈ້າງທີ່ເມຍຫາມາໄດ້ໃຫ້ຜົວ ເພື່ອໃຊ້ໃນສິ່ງທີ່ແມ່ຍິງບໍ່ເຫັນດີນຳ. ໃນອີກສະພາບການໜຶ່ງແມ່ນ ຜູ້ຊາຍມີຄວາມອິດສາໃນວຽກທີ່ແມ່ຍິງເຮັດ ແລະ ໄດ້ມີການໃຊ້ຄວາມຮຸນແຮງໃນຕອນທີ່ແມ່ຍິງກັບມາເຮືອນ. ເຊັ່ນຕົວຢ່າງອື່ນ, ຜູ້ຊາຍທີ່ບໍ່ມີເງິນກໍ່ຈະໄປດື່ມສິ່ງມຶນເມົາກັບໝູ່ຂອງລາວທີ່ "ລ້ຽງ" ລາວ ແລະ ກໍ່ໄດ້ລົມກັບ "ສາວເບຍ" ແລະ ເຮັດໃຫ້ເກີດພຶດຕິກຳແບບເກົ່າຊ້ຳໆ ເຊິ່ງເຮັດເພື່ອຮັກສາໜ້າຕາ. ຜູ້ໃຫ້ຂໍ້ມູນຫຼັກໄດ້ເວົ້າວ່າ ສະຖານະພາບເສດຖະກິດຄອບຄົວ ເຮັດໃຫ້ເກີດມີການຜິດຖຽງກັນໃນເລື່ອງບັນຫາການເງິນ ໂດຍສະເພາະຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນຍ້ອນການລ້ຽງລູກ. ຄວາມບໍ່ໄວ້ວາງໃຈກັນໃນການໃຊ້ເງິນ, ລາຍໄດ້ ແລະ ນິໄສໃນການໃຊ້ເງິນ ກໍ່ໄດ້ຖືກຍົກຂຶ້ນມາສົນທະນາ ໂດຍຜູ້ຊ່ຽວຊານຈາກ ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ແລະ ນາຍບ້ານ.

| | |
|---|---|
| *"ຜູ້ຊາຍບາງຄົນມີເງິນ ແລະ ລາວກໍ່ມັກທີ່ຈະໄປດື່ມກິນກັບໝູ່ຂອງລາວ. ຖ້າລາວບໍ່ໄປ, ໝູ່ຂອງລາວກໍ່ຈະໂທມາຊວນ. ຖ້າເຂົາເຈົ້າບໍ່ມີເງິນ, ເຂົາເຈົ້າຈະຖາມເອົາເງິນນຳເມຍ ແລະ ຖ້າວ່າເມຍບໍ່ມີໃຫ້, ກໍ່ຈະມີການຜິດຖຽງ ແລະ ຕີກັນ."* | ເພດຊາຍອາວຸໂສ, ເຂດຕົວເມືອງ |

| | |
|---|---|
| ຜູ້ໃຫ້ຂໍ້ມູນຫຼັກ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ | *"ລູກຫຼາຍຄົນກໍ່ມີຄວາມຕ້ອງການຫຼາຍອັນ. ພໍ່ແມ່ມີການຜິດຖຽງກັນ. ເມຍຕ້ອງການຊື້ສິ່ງຂອງຕ່າງໆ ແຕ່ຜົວບໍ່ຍິນຍອມ. ລວມທັງບັນຫາທີ່ພໍ່ແມ່ບໍ່ມີເວລາສຳລັບລູກ ແລະ ຜົວເມຍກໍ່ມີການຈົ່ມວ່າໃຫ້ກັນໃນການລ້ຽງລູກຂອງເຂົາເຈົ້າ. ອີກເຫດຜົນໜຶ່ງສຳລັບການໃຊ້ຄວາມຮຸນແຮງແມ່ນບັນຫາຄວາມທຸກຍາກ ແລະ ບັນຫາທາງດ້ານເສດຖະກິດ. ລູກເຕົ້າມີຄວາມຕ້ອງການ, ແຕ່ບໍ່ມີເງິນພຽງພໍໃນການສະໜອງໃຫ້."* |

ເຫດການສະເພາະທີ່ສົ່ງຜົນກະທົບຕໍ່ຄວາມກົດດັນທາງດ້ານການເງິນ ແລະ ເຮັດໃຫ້ແມ່ຍິງປັ່ນປ່ວນຄືເລີ່ມຈາກສາມີໄດ້ສ້າງໜີ້ສິນໄປກັບເມຍນ້ອຍ, ເອົາເງິນທີ່ຄອບຄົວສະສົມໄປຊື້ລົດ ແລະ ເຮືອນ ແລະ ເດີນທາງໄປຫາແມ່ຍິງອື່ນ. ແມ່ຍິງ ຫຼື ຄອບຄົວຂອງລາວໄດ້ຂໍ ເງິນຈາກສາມີທີ່ "ຕິດ" ເມຍນ້ອຍ, ສຸດທ້າຍກໍ່ສົ່ງຜົນໃຫ້ເກີດການໃຊ້ຄວາມຮຸນແຮງ. ເຖິງວ່າຫຼັງຈາກການຢ່າຮ້າງ, ແມ່ຍິງອາດຈະຍັງຄົງແບບຮັບພາລະໜີ້ສິນດັ່ງກ່າວ ທີ່ເກີດຂຶ້ນຈາກສາມີທີ່ກໍ່ໄວ້ທີ່ໄປມີເມຍນ້ອຍກ່ອນການຢ່າຮ້າງ. ແມ່ຍິງທີ່ໃຫ້ສຳພາດຄົນໜຶ່ງເວົ້າວ່າ ລາວຮູ້ວ່າສາມີຂອງລາວໄດ້ຄົບຫາ ແລະ ພົວພັນກັບແມ່ຍິງທີ່ຢູ່ແຂວງອື່ນມາສອງປີແລ້ວ. ການຢ່າຮ້າງເຮັດໃຫ້ຜູ້ເປັນເມຍຕ້ອງແບກຮັບພາລະໜີ້ສິນຂອງສາມີເຄິ່ງໜຶ່ງ ແລະ ຍັງຕ້ອງໄດ້ແບ່ງເຮືອນ ແລະ ທີ່ດິນຄືນເຄິ່ງເຊິ່ງເປັນຊັບຂອງພໍ່ເມຍ, ເຊິ່ງເປັນບັນຫາທາງການເງິນທີ່ໃຫຍ່ຫຼວງຂອງຜູ້ເປັນເມຍ.

ເຖິງວ່າແມ່ຍິງຈະມີວຽກເຮັດ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງກໍ່ຍັງສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມໃນດ້ານເສດຖະກິດ-ສັງຄົມ. ການສຳຫຼວດນີ້ພົບວ່າສ່ວນໃຫຍ່ ຄືແມ່ຍິງ(ຫຼາຍກວ່າ 80%) ໄດ້ເຂົ້າຮ່ວມໃນບາງກິດຈະກຳທີ່ສ້າງເສດຖະກິດທີ່ເປັນທາງການ ຫຼື ບໍ່ເປັນທາງການ. ເຖິງຢ່າງໃດກໍ່ຕາມ, ຖ້າການໃຊ້ຄວາມຮຸນແຮງສ້າງຄວາມເສຍຫາຍຢ່າງຮ້າຍແຮງໃນດ້ານສຸຂະພາບ ແລະ ຊີວິດປະຈຳວັນຂອງແມ່ຍິງ, ກິດຈະກຳສ້າງເສດຖະກິດ-ສັງຄົມ ຂອງແມ່ຍິງຄົນນັ້ນກໍ່ຈະຖືກຜົນກະທົບໄປນຳ. ຕົວຢ່າງ ການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ເຮັດໃຫ້ແມ່ຍິງບໍ່ສາມາດໄປເຮັດວຽກໄດ້, ຍ້ອນໄດ້ຮັບບາດເຈັບ ແລະ ຄວາມຢ້ານກົວ ແລະ ອັບອາຍວ່າຮອຍບາດແຜຕ່າງໆ ຈະສົ່ງຜົນກະທົບຕໍ່ບຸກຄະລິກກະພາບໃນເວລາອອກສູ່ສາທາລະນະຂອງລາວ. ທາງດ້ານຈິດໃຈ ກໍ່ຈະເຮັດໃຫ້ແມ່ຍິງຄົນນັ້ນເກີດຄວາມໂສກເສົ້າ, ເສຍໜ້າ ແລະ ເສຍຄວາມໝັ້ນໃຈຕົນເອງໃນການເຂົ້າສັງຄົມ, ເຊິ່ງສະກັດກັ້ນການເຮັດວຽກຂອງແມ່ຍິງ. ສະຖານະການນີ້ ຍິ່ງເຮັດໃຫ້ມີຄວາມຫຍຸ້ງຍາກຫຼາຍສຳລັບແມ່ຍິງ ໂດຍສະເພາະຖ້າເຮັດວຽກໃນຕະຫຼາດ ຫຼື ເປັນພະນັກງານຂາຍ ເພາະວ່າອາຊີບຂອງເຂົາເຈົ້າຈະຕ້ອງມີບຸກຄະລິກກະພາບທີ່ດີຕະຫຼອດຢູ່ຕໍ່ໜ້າລູກຄ້າ ເພື່ອເຮັດໃຫ້ການຂາຍປະສົບຄວາມສຳເລັດ. ແມ່ຍິງທີ່ຖືກໃຊ້ຄວາມຮຸນແຮງຍ້ອນຄວາມຫຶງຫວງຂອງສາມີ ສ່ວນຫຼາຍຈະຖືກບັງຄັບໃຫ້ອອກຈາກວຽກຍ້ອນການເມົາ ແລະ ອາລະວາດຂອງສາມີໃນບ່ອນເຮັດວຽກ.

> *"ບາງເທື່ອທີ່ລາວບໍ່ໄດ້ເຮັດວຽກ, ລາວກໍ່ດື່ມສິ່ງມຶນເມົາຕັ້ງແຕ່ຕອນສວາຍ. ຖ້າລາວບໍ່ໄດ້ເຮັດວຽກ ລາວກໍ່ຈະໄປກວດເບິ່ງຂ້ອຍ ຢູ່ບ່ອນເຮັດວຽກຂອງຂ້ອຍ. ຂ້ອຍບອກໃຫ້ລາວກັບເມືອເຮືອນ, ມັນເປັນຕາອາຍແຂກອາຍຄົນຫຼາຍທີ່ລາວເມົາຈົນຍ່າງບໍ່ທ່ຽງແລ້ວ ແລະ ຍັງມາຮ້ອງໂວຍວາຍສຽງດັງໃສ່ຂ້ອຍອີກ."*
>
> **ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

## 6.4 ທັດສະນະຄະຕິຕໍ່ສິດໃນການປົກປ້ອງຕົນເອງທາງເພດ

### 6.4.1 ຄວາມແຕກຕ່າງໃນແຕ່ລະພາກ

ທັດສະນະຄະຕິຂອງແມ່ຍິງຕໍ່ສິດໃນການປົກປ້ອງຕົນເອງທາງເພດ ໄດ້ຖືກປະເມີນໂດຍການຖາມວ່າ ແມ່ຍິງວ່າສາມາດປະຕິເສດການມີເພດສຳພັນຖ້າວ່າລາວບໍ່ເຕັມໃຈ ຫຼື ບໍ່ສະບາຍ, ຖ້າວ່າສາມີເມົາ ຫຼື ທຳລະມານລາວ (ຮູບທີ 6.5). ແມ່ຍິງ 76.5% ເຫັນດີວ່າ ສາມາດປະຕິເສດບໍ່ມີເພດສຳພັນໄດ້ຖ້າວ່າລາວບໍ່ມີອາລົມຮ່ວມ ຫຼື ບໍ່ສະບາຍ (87.1%), ໃນເວລາທີ່ສາມີເມົາ (80.8%) ແລະ ຖ້າວ່າຖືກທຳລະມານ (86.6%). ຜົນສຳຫຼວດດັ່ງກ່າວເຫັນວ່າບໍ່ມີຄວາມແຕກຕ່າງກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ແຕ່ພາກໃຕ້ ມີອັດຕາສ່ວນຫຼາຍກວ່າ ພາກເໜືອ ແລະ ພາກກາງເລັກໜ້ອຍ. ບໍ່ມີຫຼັກຖານໃນດ້ານກຸ່ມອາຍຸ ຫຼື ລະດັບການສຶກສາ ທີ່ມີຄວາມແຕກຕ່າງກັນຫຼາຍໃນການຕອບຄຳຖາມຂອງບັນດາແມ່ຍິງທີ່ເຄີຍຖືກ ຫຼື ບໍ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ແລະ/ຫຼື ທາງເພດໂດຍຄູ່ຮ່ວມຊີວິດ.

ຮູບທີ 6.5 ທັດສະນະຄະຕິຂອງແມ່ຍິງ ຕໍ່ການປົກຄອງຕົນເອງໃນດ້ານເພດ ຂອງຈຳນວນຜູ້ຕອບແບບສອບຖາມທັງໝົດ ໂດຍພາກ, ສປປ ລາວ, ປີ 2014 (ຈຳນວນ=2,997) ແມ່ຍິງທີ່ເຫັນດີວ່າ 'ແມ່ຍິງທີ່ສາມາດປະຕິເສດການມີເພດສຳພັນ ຖ້າວ່າ:



### 6.4.2 ການຂົ່ມຂືນໃນຄູ່ບ່າວສາວ ແລະ ການທຳຮ້າຍທາງເພດ

ເຖິງແມ່ນວ່າມີພຽງບາງກໍລະນີຂອງການໃຊ້ຄວາມຮຸນແຮງທາງເພດໂດຍຄູ່ຮ່ວມຊີວິດໃກ້ຊິດ ທີ່ໄດ້ຖືກລາຍງານໃນການສຳຫຼວດທາງດ້ານຄຸນນະພາບ, ເຊິ່ງໄດ້ສຸມໃສ່ "ການຂົ່ມຂືນໃນຄູ່ບ່າວສາວ" ຫຼື "ການທຳ ຮ້າຍທາງເພດ ຫຼື ການຂົ່ມຂືນ" ເຊິ່ງເກີດຂຶ້ນໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ.

ໄວໜຸ່ມຍິງໃນນະຄອນຫຼວງວຽງຈັນຮູ້ສຶກວ່າ ການໃຊ້ຄວາມຮຸນແຮງທາງເພດເກີດຂຶ້ນສ່ວນຫຼາຍແມ່ນຂົ່ມຂືນໃນຄູ່ບ່າວສາວ (ເບິ່ງເອກະສານຊ້ອນທ້າຍທີ III) ເຊິ່ງມີສາເຫດມາຈາກການທີ່ໄວໜຸ່ມຍິງນຸ່ງເຄື່ອງທີ່ "ເຊັກຊີ" ເຊິ່ງເຮັດໃຫ້ແຟນທີ່ເປັນຜູ້ຊາຍເຂົ້າໃຈວ່າແມ່ຍິງຄົນນັ້ນຕ້ອງການມີເພດສຳພັນກັບລາວ. ໄວໜຸ່ມຍິງໃນເຂດຕົວເມືອງ ແລະ ຊົນນະບົດຮູ້ສຶກວ່າ ການຂົ່ມຂືນໃນຄູ່ບ່າວສາວ ແມ່ນການໃຊ້ຄວາມຮຸນແຮງທາງເພດ, ແຕ່ໄວໜຸ່ມຍິງໃນເຂດຊົນນະບົດບໍ່ເຄີຍໄດ້ຍິນເລື່ອງນີ້ມາກ່ອນ ແລະ ການມີເພດສຳພັນກ່ອນແຕ່ງງານເປັນສິ່ງທີ່ຮັບບໍ່ໄດ້. ເຖິງຢ່າງໃດກໍ່ຕາມ, ໄວໜຸ່ມຍິງໃນເຂດຕົວເມືອງຮູ້ສຶກວ່າການມີເພດສຳພັນກ່ອນແຕ່ງງານລະຫວ່າງໜຸ່ມສາວເປັນເລື່ອງທຳມະດາ.

**ໄວໜຸ່ມຍິງ, ເຂດຕົວເມືອງ:** *"ຖ້າເຈົ້ານຸ່ງກະໂປ່ງສັ້ນ, ຄືເຈົ້າຕ້ອງການໃຫ້ຄົນອື່ນເຫັນຮ່າງກາຍຂອງເຈົ້າ."*

*"ຜູ້ຊາຍຜິດທີ່ຄິດວ່າແມ່ຍິງລໍ້ໃຈຕົນ, ແຕ່ແມ່ຍິງກໍ່ຜິດທີ່ແຕ່ງຕົວ ເຊັກຊີ ໂພດ."* **ໄວໜຸ່ມຍິງ, ເຂດຊົນນະບົດ**

**ໄວໜຸ່ມຍິງ, ເຂດຕົວເມືອງ:** *"ໃນທຸກມື້ນີ້, ຖ້າເຂົາເຈົ້າເປັນແຟນກັນ, ຖ້າເຂົາເຈົ້າຢາກມີເພດສຳພັນນຳກັນກ່ອນແຕ່ງງານ ມັນກໍ່ບໍ່ແມ່ນບັນຫາໃຫຍ່. ເຖິງຢ່າງໃດກໍ່ຕາມ, ຖ້າເຂົາເຈົ້າບໍ່ຮູ້ຈັກກັນ ນັ້ນກໍ່ອາດຈະເປັນການຂົ່ມຂືນ."*

ບັນດາຜູ້ຊາຍເຫັນດີວ່າ ທັງສອງຝ່າຍຜິດໃນກໍລະນີຂອງການຂົ່ມຂືນໃນຄູ່ບ່າວສາວ ເຊິ່ງໄດ້ມີການສົນທະນາໃນການສຳຫຼວດນີ້, ແຕ່ກໍ່ໄດ້ຖິ້ມໂທດໃຫ້ກັບແມ່ຍິງ ຍ້ອນວ່າເຂົາເຈົ້າແຕ່ງຕົວ ເຊັກຊີ ແລະ ຍັງມີການດື່ມສິ່ງມຶນເມົາຫຼາຍຈົນເກີນໄປ. ໄວໜຸ່ມຊາຍໃນເຂດຕົວເມືອງ ແລະ ຊົນນະບົດໄດ້ເວົ້າວ່າແມ່ຍິງບໍ່ໄດ້ຂັດຂືນຢ່າງເຕັມທີ່ ແລະ ຄວນຮ້ອງສຽງດັງເພື່ອເຮັດໃຫ້ຄົນອື່ນໄດ້ຍິນ. ໃນເຂດຊົນນະບົດ, ໄວໜຸ່ມຊາຍຮູ້ສຶກວ່າມັນບໍ່ເໝາະສົມທີ່ແມ່ຍິງຈະອອກໄປຫຼິ້ນນອກເຮືອນໃນເວລາກາງຄືນຖ້າບໍ່ມີຄົນໃນຄອບຄົວໄປນຳ. ໄວຫນຸ່ມຊາຍໃນເຂດຕົວເມືອງເວົ້າວ່າມັນເປັນເລື່ອງປົກກະຕິທີ່ແມ່ຍິງຈະມີເພດສຳພັນກັບແຟນຂອງລາວ.

*"ໃນສັງຄົມຂອງພວກເຮົາ ເວລາທີ່ຜູ້ຊາຍຮູ້ວ່າໝູ່ຂອງເຂົາເຈົ້າໄປມີເພດສຳພັນ, ເຂົາກໍ່ຢາກຈະເຮັດແບບນັ້ນເຊັ່ນກັນ."* **ໄວໜຸ່ມຊາຍ, ເຂດຕົວເມືອງ**

**ໄວໜຸ່ມຊາຍ, ເຂດຕົວເມືອງ:** *"ເປັນເລື່ອງປົກກະຕິທີ່ຈະມີເພດສຳພັນ ເພາະວ່າເຂົາເຈົ້າເປັນແຟນກັນ."*

*"ຊາຍຄົນນັ້ນອາດຈະຄິດວ່າລາວຈະຕ້ອງບັງຄັບແຟນລາວເລັກໜ້ອຍເພື່ອໃຫ້ແຟນຂອງລາວຍອມ."* **ໄວໜຸ່ມຊາຍ, ເຂດຊົນນະບົດ**

ບັນດາໄວໜຸ່ມຊາຍ, ທີ່ເຂົ້າຮ່ວມໃນການສົນທະນາໃນເຫດການຕ່າງໆ, ຮັບຮູ້ວ່າມັນມີຄວາມສ່ຽງຖ້າວ່າແມ່ຍິງເກີດຂັດຂືນ ແລະ ຜົນທີ່ຕາມມາອາດຈະຮ້າຍແຮງໄດ້.

| ໄວໜຸ່ມຊາຍ, ເຂດຊົນນະບົດ | *"ຊາຍຄົນນັ້ນແຂງແຮງຫຼາຍ, ຖ້າແມ່ຍິງຂັດຂືນ, ລາວອາດຈະຖືກຕີໄດ້."* |
|---|---|

| *"ແມ່ຍິງຄົນນັ້ນເມົາ ແລະ ກຳລັງໂປ້ເປືອຍຢູ່. ຖ້າວ່າລາວຮ້ອງ, ທຸກໆຄົນຈະມາເຫັນລາວກຳລັງໂປ້ເປືອຍ ເຊິ່ງມັນເປັນຕາອາຍຫຼາຍສຳລັບລາວ. ນອກຈາກນັ້ນແລ້ວ, ຖ້າລາວສົ່ງສຽງດັງ, ຊາຍຄົນນັ້ນຈະເຮັດໃຫ້ລາວເຈັບປວດສາຫັດເຖິງແມ່ນວ່າຈະເປັນແຟນກັນກໍ່ຕາມ."* | ໄວໜຸ່ມຊາຍ, ເຂດຕົວເມືອງ |
|---|---|

ຄືດັ່ງທີ່ໄດ້ລະບຸໄວ້ໃນບົດທີ 5, ຖ້າວ່າແມ່ຍິງຖືກຂົ່ມຂືນໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ກໍ່ຈະມີຫຼາຍໆຂະບວນການເຈລະຈາ ລະຫວ່າງຜູ້ກະທຳຜິດ, ຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງຍິງຄົນນັ້ນ. ໃນກໍລະນີສ່ວນໃຫຍ່, ການຮຽກຮ້ອງໃຫ້ມີການແຕ່ງງານກັນຈະເປັນການແກ້ໄຂບັນຫາຢູ່ໃນເຂດຊົນນະບົດ ເພື່ອບໍ່ໃຫ້ມີມົນທິນ ແລະ ຮັກສາໜ້າຕາຂອງຄອບຄົວຜູ້ເສຍຫາຍ. ແຕ່ຖ້າວ່າຍິງຄົນນັ້ນອາໄສຢູ່ຫ່າງໄກຈາກຄອບຄົວ ມາຢູ່ໃນຕົວເມືອງ, ອາດຈະບໍ່ມີການລົງໂທດຕໍ່ຊາຍຄົນນັ້ນເລີຍຍ້ອນຄວາມອັບອາຍຈົນເກີນໄປ ແລະ ບໍ່ກ້າດຳເນີນຄະດີ.

## 6.5 ທັດສະນະຄະຕິ ແລະ ຄວາມຄິດເຫັນຂອງຜູ້ຊາຍ

### 6.5.1 ເຫດຜົນຂອງການໃຊ້ຄວາມຮຸນແຮງ

| *"ຖ້າບາງຄົນຈະຕີຄົນອື່ນ, ເຂົາເຈົ້າບໍ່ຈຳເປັນຕ້ອງມີເຫດຜົນຫຍັງດອກ."* | ເພດຊາຍອາວຸໂສ, ເຂດຊົນນະບົດ |
|---|---|

ການສຳຫຼວດນີ້ໄດ້ຄົ້ນພົບຄວາມແຕກຕ່າງກັນທາງດ້ານເຫດຜົນລະຫວ່າງຍິງ-ຊາຍ ໃນການໃຊ້ຄວາມຮຸນແຮງ. ກຸ່ມສົນທະນາຂອງເພດຊາຍອາວຸໂສໄດ້ເວົ້າວ່າ ເງິນ ຫຼື ການທີ່ບໍ່ມີເງິນແມ່ນບັນຫາພື້ນຖານໃນການໃຊ້ຄວາມຮຸນແຮງ, ໃນຂະນະທີ່ເພດຊາຍໃນເຂດຕົວເມືອງ ແລະ ຊົນນະບົດໄດ້ເວົ້າບັນຫາຄ່າໃຊ້ຈ່າຍທີ່ສູງຂຶ້ນຍ້ອນການລ້ຽງລູກ ເຮັດໃຫ້ເກີດມີການຜິດຖຽງກັນໃນຄອບຄົວ. ໄດ້ມີການເວົ້າເລື້ອຍໆວ່າ ຮູບຮ່າງ ແລະ ທັດສະນະຄະຕິຂອງແມ່ຍິງຕໍ່ສາມີ ກໍ່ແມ່ນປັດໃຈໜຶ່ງທີ່ສຳຄັນທີ່ເຮັດໃຫ້ສາມີໄປມີເມຍນ້ອຍ ຫຼື ໄປກັບແມ່ຍິງອື່ນ. ທັດສະນະທີ່ວ່າເມຍບໍ່ໃຫ້ກຽດຜົວກໍ່ແມ່ນສາເຫດຫຼັກອັນໜຶ່ງທີ່ເຮັດໃຫ້ມີການໃຊ້ຄວາມຮຸນແຮງ. ຊາວບ້ານທີ່ເປັນເພດຊາຍ ແລະ ປກສ ບ້ານໃນເຂດຕົວເມືອງ ແລະ ຊົນນະບົດກໍ່ໄດ້ກ່າວວ່າ ການດື່ມສິ່ງມຶນເມົາ ແລະ ການໃຊ້ຈ່າຍຂອງຜູ້ຊາຍເປັນສາເຫດພື້ນຖານໃນການຜິດຖຽງກັນລະຫວ່າງຜົວເມຍ, ໂດຍສະເພາະແມ່ນສາມີໃຊ້ຈ່າຍເງິນຫຼາຍໃຫ້ກັບມີເມຍນ້ອຍ. ຜູ້ຊາຍກໍ່ໄດ້ເວົ້າເຂົາເຈົ້າມີຄວາມຕ້ອງການທີ່ແຕກຕ່າງຈາກແມ່ຍິງ.

| ເພດຊາຍອາວຸໂສ, ເຂດຊົນນະບົດ | *"ເມຍໜ້າດຳ ແລະ ຂີ້ລ້າຍ ໜ້າແຫຼ້ໜ້າດຳ, ເຈົ້າບໍ່ສາມາດຫາຄວາມງາມຈາກລາວໄດ້ເລີຍ. ສະນັ້ນ ຖ້າຕອນໃດທີ່ລາວເຮັດໃຫ້ເຈົ້າໃຈຮ້າຍ ເຈົ້າກໍ່ຕີລາວເລີຍ ເພື່ອຈະໄດ້ປະກັນ."* |
|---|---|

| *"ບໍ່ວ່າຈະມີເກີດຫຍັງຂຶ້ນກໍ່ຕາມ, ມັນຕ້ອງມີເຫດຜົນທີ່ຜູ້ຊາຍເຮັດແບບນັ້ນ. ເມຍອາດຈະໃຈຮ້າຍ ແລະ ຮ້ອງສຽງດັງໃສ່ລາວ."* | ເພດຊາຍອາວຸໂສ, ເຂດຊົນນະບົດ |
|---|---|

ການຍອມຮັບໃນການມີເມຍນ້ອຍ ສ່ວນຫຼາຍຜູ້ເປັນເມຍກໍ່ຈຳໃຈຍອມຮັບສະພາບ ຖ້າວ່າສາມີຍັງສືບຕໍ່ສະໜັບສະໜູນ ແລະ ລ້ຽງດູຄອບຄົວ.

**ເພດຊາຍອາວຸໂສ, ເຂດຊີນນະບົດ**

*"ສາມີຄວນເປັນຫຼັກໃນການຮັບຜິດຊອບຄອບຄົວຂອງລາວ. ເວລາທີ່ລາວອອກນອກ [ໄປຫາເມຍນ້ອຍ] ແລະ ໃຊ້ຈ່າຍຫຼາຍຈົນເກີນໄປ, ລາວບໍ່ໄດ້ເສຍແຕ່ເງິນເທົ່ານັ້ນ, ແຕ່ຍັງເສຍຫົວໃຈອີກດ້ວຍ, ຫົວໃຈຂອງຄອບຄົວ, ລູກ ແລະ ເມຍ. ພຶດຕິກຳນີ້ຈະທຳລາຍອະນາຄົດຂອງຄອບຄົວ."*

*"[ເມື່ອ] ເຈົ້າໄດ້ພົວພັນກັບຜູ້ສາວ, ມັນຄືກັບການພົວພັນກັບຢາເສບຕິດ. ເຈົ້າບໍ່ສາມາດຢຸດໄດ້ຍ້ອນເຈົ້າຕິດແລ້ວ."*

**ເພດຊາຍອາວຸໂສ, ເຂດຊີນນະບົດ**

ຜູ້ຊາຍອາວຸໂສແມ່ນມີຕຳແໜ່ງທີ່ມີຄວາມຮັບຜິດຊອບ, ເຊັ່ນ ປກສ, ຮູ້ສຶກວ່າ ສິ່ງມຶນເມົາມີອິດທິພົນ ແລະ ມີບົດບາດຫຼາຍ.

**ຜູ້ໃຫ້ຂໍ້ມູນຫຼັກ, ປກສ ບ້ານ, ເຂດຊີນນະບົດ, ເພດຊາຍ**

*"ການດື່ມສິ່ງມຶນເມົາແມ່ນບັນຫາຫຼັກ. ຖ້າບໍ່ມີການດື່ມສິ່ງມຶນເມົາ, ກໍ່ຈະບໍ່ມີບັນຫາ. ຂ້ອຍຄິດວ່ານີ້ກໍ່ແມ່ນການໃຊ້ຄວາມຮຸນແຮງເຊັ່ນກັນ. ຫຼັງຈາກການດື່ມສິ່ງມຶນເມົາ, ເມຍອາດຈະເວົ້າບາງຢ່າງ ແລະ ຜົວກໍ່ອາດຈະເວົ້າບາງຢ່າງ. ສິ່ງເຫຼົ່ານີ້ເຮັດໃຫ້ເກີດມີການໃຊ້ຄວາມຮຸນແຮງໃນຄອບຄົວ."*

*"ການຜິດຖຽງກັນແມ່ນເລື່ອງປົກກະຕິໃນບ້ານນີ້, ຍ້ອນວ່າ [ນີ້ແມ່ນເລື່ອງຂອງ] ຜົວເມຍ. ພວກເຮົາບໍ່ສາມາດເຮັດຫຍັງໄດ້. ສິ່ງທີ່ເຮົາສາມາດເຮັດໄດ້ຄື ໃນມື້ຕໍ່ໄປ, ຫຼັງຈາກເຂົາເຈົ້າຜິດຖຽງກັນແລ້ວໆ, ຄືການເຊີນພວກເຂົາຂຶ້ນຫ້ອງການບ້ານເພື່ອກ່າວຕັກເຕືອນ ແລະ ບໍ່ໃຫ້ເຮັດອີກ. ກໍລະນີສ່ວນໃຫຍ່ແມ່ນບໍ່ມີການໃຊ້ຄວາມຮຸນແຮງໃນລະດັບຮ້າຍແຮງ. ນອກຈາກການດື່ມສິ່ງມຶນເມົາແລ້ວ ກໍ່ບໍ່ມີກໍລະນີອື່ນ. ໃນເວລາ 20 ປີ ທີ່ຂ້ອຍເປັນ ປກສ, ຂ້ອຍຫາກໍ່ເຫັນກໍລະນີການໃຊ້ຄວາມຮຸນແຮງຍ້ອນເມົາເຫຼົ້າພຽງແຕ່ໜຶ່ງກໍລະນີເທົ່ານັ້ນ."*

**ຜູ້ໃຫ້ຂໍ້ມູນຫຼັກ, ປກສ ບ້ານ, ເພດຊາຍ, ເຂດຕົວເມືອງ**

ໃນການສຳພາດຜູ້ຊາຍ, ຄືກັບກຸ່ມແມ່ຍິງ, ຮູ້ສຶກວ່າການໃຊ້ຄວາມຮຸນແຮງ ແລະ ຄວາມວຸ້ນວາຍຕ່າງໆ ຈະຖືກແກ້ໄຂໄດ້ດີທີ່ສຸດໂດຍຄອບຄົວ, ບໍ່ແມ່ນໂດຍອຳນາດການປົກຄອງ.

**ຜູ້ໃຫ້ຂໍ້ມູນຫຼັກ, ປກສ ບ້ານ, ເພດຊາຍ, ເຂດຕົວເມືອງ**

*"ຖ້າຜົວເມຍຕີກັນ ແລະ ຕຳຫຼວດບ້ານບໍ່ໄດ້ເຂົ້າມາຫຍຸ້ງກ່ຽວ, ເຈົ້າກໍ່ບໍ່ຄວນເຂົ້າໄປຫຍຸ້ງ. ເຂົາເຈົ້າຮັບຜິດຊອບເລື່ອງຂອງເຂົາເຈົ້າເອງໄດ້. ເຂົາເຈົ້າເວົ້າວ່າມັນເປັນຍ້ອນເຂົາເຈົ້າເມົາ."*

ດ້ວຍເຫດນີ້, ແມ່ຍິງຈຶ່ງຖືກຊຸກຍູ້ໃຫ້ຈັດການກັບການໃຊ້ຄວາມຮຸນແຮງຈາກສາມີ ດ້ວຍຕົວຂອງລາວເອງ.

ໃນກໍລະນີມີການຂົ່ມຂືນໃນຄູ່ບ່າວສາວ, ໄວໜຸ່ມຊາຍໃນເຂດຕົວເມືອງ ແລະ ຊົນນະບົດ ມີຄວາມກັງວົນເລື່ອງການຖືພາ ຫຼື ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ. ຖ້າແມ່ຍິງຖືພາຈາກການຖືກຂົ່ມຂື່ນ, ການເອົາລູກອອກເຖື່ອນ ຫຼື ການຂ້າຕົວຕາຍ ເຊິ່ງແມ່ນສິ່ງທີ່ກຸ່ມໄວໜຸ່ມຊາຍໃນເຂດຕົວເມືອງກ່າວເຖິງວ່າອາດຈະເປັນຜົນທີ່ຕາມມາ. ໃນເຂດຊົນນະບົດກໍ່ໄດ້ມີການເວົ້າເຖິງການຂ້າຕົວຕາຍ, ແຕ່ການໃຫ້ແຕ່ງງານກັນແມ່ນສິ່ງທີ່ຖືກຊຸກຍູ້ໃຫ້ປະຕິບັດໃນກໍລະນີທີ່ມີການຖືພາ, ບັງຄັບໃຫ້ຄູ່ດັ່ງກ່າວອອກຈາກໂຮງຮຽນ ແລະ ທຳລາຍອະນາຄົດຂອງເຂົາ.

*"ຖ້າແມ່ຍິງຄົນນັ້ນຖືພາໃນໄລຍະຮຽນໜັງສື, ມັນທຳລາຍອະນາຄົດຂອງລາວ. ຖ້າລາວເວົ້າວ່າຊາຍຄົນນັ້ນແມ່ນພໍ່ຂອງເດັກໃນທ້ອງ, ຊາຍຄົນນັ້ນກໍ່ຕ້ອງອອກໂຮງຮຽນເຊັ່ນ, ດັ່ງນັ້ນທັງສອງຄົນແມ່ນຈະເສຍອະນາຄົດ. ແມ່ຍິງຄົນນັ້ນຈະອັບອາຍຍ້ອນວ່າລາວຖືພາ. ບາງຄົນກໍ່ອາຍ ແລະ ບໍ່ກ້າໄປເຮັດວຽກ ເຊິ່ງຖ້າລາວບໍ່ໄປເຮັດວຽກລາວກໍ່ຈະບໍ່ມີເງິນ ແລ້ວລາວກໍ່ຈະຕົກຢູ່ໃນສະຖານະການທີ່ລຳບາກ."*

**ໄວໜຸ່ມຊາຍ, ເຂດຊົນນະບົດ**

| ໄວໜຸ່ມຊາຍ, ເຂດຕົວເມືອງ | *"ຍ້ອນເຂົາເຈົ້າບໍ່ເຂົ້າໃຈວ່ານີ້ແມ່ນຄວາມເຊື່ອທາງດ້ານຮີດຄອງປະເພນີ. [ແມ່ຍິງທີ່ຢູ່ໃນເຫດການດັ່ງກ່າວ] ອາດຈະຄິດໃນແງ່ລົບວ່າເປັນຫຍັງເລື່ອງນີ້ຈຶ່ງເກີດຂຶ້ນກັບລາວ. ລາວບໍ່ຄວນທີ່ຈະໄປກັບຊາຍຄົນນັ້ນ, ລາວສູນເສຍທຸກສິ່ງທຸກຢ່າງ ແລະ ສູນເສຍໂອກາດໃນການທີ່ຈະເປັນຄົນທີ່ດີກວ່ານີ້. ລາວອາດຕ້ອງການເອົາລູກອອກ ຫຼື ເຮັດໃນສິ່ງທີ່ຮ້າຍຮ້າຍກວ່ານັ້ນ, ຂ້າຕົວຕາຍ ແລະ ຄິດວ່າສູນເສຍທຸກສິ່ງທຸກຢ່າງໄປໝົດແລ້ວ."* |
|---|---|

## 6.6 ການສົນທະນາ

ເຖິງແມ່ນວ່າຈະມີການປ່ຽນຄຳຂວັນ "3 ດີ" (ເປັນແມ່ທີ່ດີ, ເປັນເມຍທີ່ດີ ແລະ ເປັນພົນລະເມືອງດີ) ມາເປັນ "ພົນລະເມືອງດີ, ພັດທະນາດີ ແລະ ມີຄອບຄົວວັດທະນະທຳດີ" ໃນການຕອບສະໜອງຕໍ່ການປ່ຽນແປງທາງດ້ານບົດບາດຍິງ-ຊາຍ ແລະ ການສົ່ງເສີມຄຸນຄ່າທາງສັງຄົມ, ເຊິ່ງກໍ່ມີການປ່ຽນແປງພຽງແຕ່ເລັກໜ້ອຍເທົ່ານັ້ນໃນສັງຄົມລາວ. ແນວຄວາມຄິດເບື້ອງຕົ້ນຂອງຄຳຂັວນ "3 ດີ" ແມ່ນຖືກຍອມຮັບ ແລະ ຢູ່ໃນສັງຄົມລາວຢ່າງເລິກເຊິ່ງ. ຄວາມເຊື່ອຕ່າງໆ ຍັງຄົງຝັງຢູ່ໃນແຕ່ລະບຸກຄົນ ເຊັ່ນວ່າ "ເມຍທີ່ດີຄວນຊື່ສັດຕໍ່ຜົວ ແລະ ເຮັດໃຫ້ຜົວໝັ້ນໃຈ", "ເມຍຄວນແນະນຳໃຫ້ຜົວເອົາຊະນະ ແລະ ຜ່ານຜ່າອຸປະສັກຕ່າງໆໃຫ້ໄດ້", "ແມ່ທີ່ດີຄວນສອນລູກ", ແລະ "ແມ່ຍິງຄວນຮຽນວິທີໃນການເບິ່ງແຍງລູກ, ໃນເຊິ່ງເຂົາເຈົ້າຕ້ອງເຂົ້າໃຈຈິດຕະສາດຂອງເດັກ" (Ngaosyvathn, 1995). ໃນທາງກົງກັນຂ້າມ, ຄຳຂວັນ "3 ດີ" ບໍ່ເຄີຍຈະຖືກຈັດຕັ້ງປະຕິບັດໂດຍຜູ້ຊາຍໃນການປະພຶດຕົນເປັນ "ສາມີທີ່ດີ" (Ibid.). ຄຳຂວັນ "3 ດີ" ໄດ້ປຸກລະດົມໃຫ້ແມ່ຍິງມີຄວາມຮູ້ ແລະ ທັກສະຫຼາຍຂຶ້ນ, ແຕ່ບໍ່ໄດ້ສົ່ງເສີມອິດສະຫຼະພາບຂອງແມ່ຍິງ. ແທນທີ່ຈະສົ່ງເສີມອິດສະຫຼະພາບຂອງແມ່ຍິງ, ແຕ່ໄດ້ສົ່ງເສີມໃຫ້ແມ່ຍິງທີໜ້າທີ່ຮັບຜິດຊອບໃນວຽກເຮືອນທີ່ເພີ່ມຂຶ້ນ, ໃນຂະນະທີ່ແມ່ຍິງທີ່ມີອິດສະຫຼະໃນການອອກໄປເຮັດວຽກນອກບ້ານ (Ireson-Doolittle & Moreno-Black, 2004). ບັນຫານີ້ອາດເຮັດໃຫ້ເກີດມີຂໍ້ຂັດແຍ່ງກັນໃນດ້ານບົດບາດຍິງ-ຊາຍ ໃນຄຳຂວັນ "3 ດີ" ເຊິ່ງອາດຈະເຮັດໃຫ້ເພີ່ມການຍອມຮັບ ແລະ ອົດກັ້ນຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ດັ່ງທີ່ໄດ້ລະບຸໃນບົດທີ 1, ແມ່ຍິງ, ຜູ້ຊາຍ ແລະ ໄວໜຸ່ມທີ່ຍອມຮັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຖ້າວ່າລາວຫາກປະຕິບັດຕາມພາລະໜ້າທີ່ບໍ່ສຳເລັດ ເຊິ່ງອາດຈະເປັນພື້ນຖານຂອງຄຸນຄ່າຂອງຄຳຂວັນ "3 ດີ" (ກະຊວງສາທາລະນະສຸກ & ສູນສະຖິຕິແຫ່ງຊາດ, 2012).

ການສຳຫຼວດໄດ້ສະແດງໃຫ້ເຫັນວ່າ ແມ່ຍິງ 1/3 ຄິດວ່າ ເມຍທີ່ດີຕ້ອງເຊື່ອຟັງສາມີ, ເຖິງວ່າຈະບໍ່ເຫັນດີກັບລາວກໍ່ຕາມ, ໂດຍສະເພາະໃນເຂດຊົນນະບົດ ແລະ ເຂດພາກເໜືອ. ນອກຈາກນີ້ແລ້ວ ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນມີທ່າອ່ຽງທີ່ຈະເຫັນດີໃນການທີ່ຕ້ອງໃຫ້ສາມີມີເພດສຳພັນນຳຕະຫຼອດ ເຊິ່ງກຸ່ມນີ້ເຫັນດີຫຼາຍກວ່າກຸ່ມແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງດັ່ງກ່າວ. ແມ່ຍິງທີ່ເຮັດຜິດຮີດຄອງປະເພນີກໍ່ຈະມີຄວາມດ້ອຍໂອກາດໃນການຂັດຂືນ ແລະ ຮູ້ສຶກວ່າເປັນໜ້າທີ່ໃນການປະຕິບັດຕາມຮີດຄອງປະເພນີສຳລັບຍິງ-ຊາຍ, ຕາມໜ້າທີ່ ແລະ ສາຍພົວພັນ. ຕົວຢ່າງ ແມ່ຍິງທີ່ໃຫ້ສຳພາດ ໃນການສຳຫຼວດທາງດ້ານຄຸນນະພາບໄດ້ເວົ້າວ່າ ຖ້າແມ່ຍິງບໍ່ເຮັດວຽກເຮືອນຕາມໜ້າທີ່, ສາມີຈະໄປຫາແມ່ຍິງຄົນໃໝ່ ແລະ ກໍ່ໃຫ້ເກີດການໃຊ້ຄວາມຮຸນແຮງຕໍ່ຜູ້ເປັນເມຍ. ໃນດ້ານທັດສະນະຄະຕິທາງດ້ານບົດບາດຍິງ-ຊາຍ ຕໍ່ການໃຊ້ຄວາມຮຸນແຮງທາງຮ່າງກາຍໂດຍຄູ່ຮ່ວມຊີວິດ, ແມ່ຍິງພຽງ 5.6% ທີ່ຖືກສຳພາດເວົ້າວ່າ ຈະຖືກສາມີ ຕີ ຖ້າແມ່ຍິງບໍ່ເຮັດວຽກເຮືອນຕາມໜ້າທີ່, ຜົນສຳຫຼວດນີ້ແມ່ນບໍ່ກົງກັບການຄົ້ນຄວ້າທີ່ຜ່ານມາ, (MICS/DHS, 2011-2012) ເຊິ່ງໄດ້ບອກວ່າເຄິ່ງໜຶ່ງຂອງແມ່ຍິງ ແລະ ຜູ້ຊາຍ ຍອມຮັບ ການໃຊ້ຄວາມຮຸນແຮງ ຖ້າແມ່ຍິງຄົນນັ້ນບໍ່ປະຕິບັດຕາມຮີດຄອງປະເພນີ ແລະ ໜ້າທີ່. ອີກຂໍ້ມູນໜຶ່ງແມ່ນ ເຄິ່ງໜຶ່ງຂອງແມ່ຍິງທີ່ໃຫ້ສຳພາດເຫັນດີວ່າ ສາມີສາມາດຕີເມຍຂອງຕົນໄດ້ຖ້າພົບວ່າເມຍບໍ່ຊື່ສັດຕໍ່ຕົນ ເຊິ່ງມີການຍອມຮັບກັນໃນທຸກກຸ່ມອາຍຸ ແລະ ທຸກໆ ພາກ, ໂດຍສະເພາະໃນບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ທຽບກັບກຸ່ມທີ່ບໍ່ເຄີຍຖືກຄວາມຮຸນແຮງ. "ຄວາມບໍ່ຊື່ສັດ" ລວມທັງການນອກໃຈຜົວ, ແຕ່ການສຳຫຼວດນີ້ບໍ່ບອກຢ່າງຈະແຈ້ງວ່າແມ່ຍິງຈະຍອມຮັບການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ຖ້າມີເຫດຜົນສະເພາະໃນການຍອມຮັບຕໍ່ພຶດຕິກຳນັ້ນໂດຍຄົນສ່ວນໃຫຍ່ໃນສັງຄົມ.

ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງທາງເພດ, ແມ່ຍິງ 1/3 ເຫັນດີວ່າ ແມ່ຍິງມີໜ້າທີ່ໃນການມີເພດສຳພັນກັບສາມີຂອງຕົນ ແລະ ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ເຫັນດີຫຼາຍກວ່າກຸ່ມທີ່ບໍ່ເຄີຍຖືກຄວາມຮຸນແຮງ. ເຖິງຢ່າງໃດກໍ່ຕາມ, ການບໍລິຫານເອງທາງດ້ານເພດ, ແມ່ຍິງ 8/10 ໄດ້ຕອບວ່າ ແມ່ຍິງທີ່ແຕ່ງງານແລ້ວກໍ່ສາມາດປະຕິເສດການມີເພດສຳພັນໄດ້ຖ້າວ່າລາວບໍ່ຕ້ອງການ, ບໍ່ສະບາຍ ຫຼື ໃນເວລາທີ່ສາມີເມົາ. ມີການໂຕ້ຖຽງກັນຕະຫຼອດກ່ຽວກັບການທີ່ແມ່ຍິງຖືກບັງຄັບໃຫ້ມີເພດສຳພັນທີ່ບໍ່ຕ້ອງການ ຫຼື ການມີເພດສຳພັນໃນບາງສາສະໜາ, ວັດທະນະທຳ ຫຼື ຮີດຄອງປະເພນີ ຂອງຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ ແລະ ຄວາມກົດດັນທາງດ້ານເສດຖະກິດໂດຍການໃຊ້ຄວາມຮຸນແຮງ. ການບໍລິຫານຕົນເອງໃນທາງເພດ ໝາຍເຖິງ ລະດັບຂອງຄວາມອິດສະຫຼະຂອງແມ່ຍິງໃນການຕັດສິນໃຈທີ່ຈະອອກຈາກຄວາມດ້ອຍໂອກາດທັງຫຼາຍຈາກການຖືກບັງຄັບໃຫ້ມີເພດສຳພັນທີ່ບໍ່ຕ້ອງການ ເຊິ່ງເປັນບັນຫາທາງດ້ານຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ ແລະ ສິດທິມະນຸດຂອງແມ່ຍິງ (Day, 1996). ແມ່ຍິງທີ່ໃຫ້ສຳພາດໃນການສຳຫຼວດນີ້ເຫັນດີທີ່ວ່າເມຍຈະຕ້ອງສະໜອງການມີເພດສຳພັນໃຫ້ກັບສາມີ, ແຕ່ໃນຄວາມເປັນຈິງແລ້ວນີ້ແມ່ນຄວາມເຊື່ອທີ່ບໍ່ຖືກຕ້ອງ, ແມ່ຍິງສາມາດປະຕິເສດການມີເພດສຳພັນໃນກໍລະນີທີ່ມີສິ່ງມຶນເມົາມາກ່ຽວຂ້ອງ, ໃນເວລາທີ່ພວກເຂົາບໍ່ສະບາຍ ຫຼື ບໍ່ຍິນຍອມ. ການອະທິບາຍນີ້ເຮັດໃຫ້ພາບທີ່ປະປົນກັນ, ແຕ່ຜົນໄດ້ຮັບໄດ້ສະແດງໃຫ້ເຫັນແລ້ວວ່າ ແມ່ຍິງລາວແມ່ນສາມາດປົກຄອງຕົນເອງ ແລະ ມີອິດສະຫຼະ ໃນການປະຕິເສດການມີເພດສຳພັນທີ່ບໍ່ປາຖະໜາ ກັບສາມີ ແລະ ຄູ່ຮ່ວມຊີວິດຂອງເຂົາເຈົ້າໄດ້. ໃນການສຳຫຼວດທາງດ້ານຄຸນນະພາບ, ການຂົ່ມຂືນຄູ່ແຕ່ງງານ ຫຼື ພຶດຕິກຳທາງເພດທີ່ບໍ່ຕ້ອງການໃນລະຫວ່າງຄູ່ຮ່ວມຊີວິດ ກໍ່ໄດ້ຖືກສົນທະນາ. "ການຂົ່ມຂືນໃນຄູ່ບ່າວສາວ" ແມ່ນບັນຫາທີ່ໄດ້ສຸມໃສ່ໃນຄູ່ຮ່ວມຊີວິດທີ່ເປັນໄວໜຸ່ມ. ໄວໜຸ່ມຍິງ-ຊາຍສ່ວນໃຫຍ່ໄດ້ເນັ້ນໜັກໄປທາງດ້ານທັດສະນະຄະຕິ ແລະ ພຶດຕິກຳຂອງໄວໜຸ່ມຍິງໃນການນຸ່ງເຄື່ອງ "ເຊັກຊີ" ຫຼື ການເມົາ. ຜູ້ເຂົ້າຮ່ວມເພດຊາຍບາງຄົນໄດ້ບອກເລົ່າຄວາມເຊື່ອວ່າ ການຂົ່ມຂືນຈະເກີດຂຶ້ນເມື່ອແມ່ຍິງບໍ່ປ້ອງກັນຕົວເອງໃນເວລາຢູ່ກັບຜູ້ຊາຍ. ການຕອບໃນລັກສະນະນີ້ໄດ້ບົ່ງບອກຢ່າງຊັດເຈນແລ້ວວ່າແມ່ຍິງຍັງຄົງຕ້ອງ ຮັບຜິດຊອບ ສຳລັບການຖືກຂົ່ມຂືນ ຫຼື ການທຳຮ້າຍທາງເພດອື່ນໆ.

ສິ່ງມຶນເມົາ ແລະ ການນອກໃຈ ໃນການສຳຫຼວດທາງດ້ານຄຸນນະພາບ ແມ່ນປັດໄຈທີ່ເຊື່ອມໂຍງເຖິງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ບວກກັບການທີ່ສັງຄົມຍອມຮັບໃນການດື່ມສິ່ງມຶນເມົາ, ຍ້ອນການເພີ່ມຂຶ້ນຂອງຮ້ານອາຫານ ແລະ ຮ້ານເບຍ ທີ່ຂາຍສິ່ງມຶນເມົາໃນ ສປປ ລາວ. ການດື່ມສິ່ງມຶນເມົາໂດຍຜູ້ກະທຳຜິດ ສາມາດນຳໄປສູ່ການໃຊ້ຄວາມຮຸນແຮງ, ບາງຄັ້ງອາດເປັນຍ້ອນເຂົາເຈົ້າບໍ່ສາມາດຄວບຄຸມສະຕິຂອງຕົນເອງໄດ້. ໃນປະເທດຫວຽດນາມ, ຕົວຢ່າງ ການເມົາແລ້ວຂັບລົດ ອາດກໍ່ໃຫ້ເກີດຄວາມຮຸນແຮງ, ຜູ້ຊາຍທີ່ມີຄວາມຄຽດກໍ່ໄດ້ໃຊ້ສິ່ງມຶນເມົາໃນການແກ້ຕົວວ່າເຂົາເຈົ້າບໍ່ສາມາດຄວບຄຸມຕົນເອງໄດ້ (ລັດຖະບານຂອງປະເທດຫວຽດນາມ, 2010). ການຫຶງຫວງ ແລະ ຄວາມບໍ່ໄວ້ວາງໃຈກັນ ເຊິ່ງພົວພັນເຖິງການນອກໃຈກັນ ໄດ້ຮັບການແກ້ໄຂໃນການສຳພາດແບບເຈາະເລິກ ແລະ ການສົນທະນາກຸ່ມ, ແຕ່ກໍລະນີນີ້ແມ່ນການດື່ມສິ່ງມຶນເມົາ ແລະ ສ້າງໂອກາດໃຫ້ຕົນເອງໄປພົບກັບແມ່ຍິງອື່ນ ເຊັ່ນ "ສາວເບຍ". ສິ່ງມຶນເມົາ ແລະ ການນອກໃຈ ບໍ່ແມ່ນບັນຫາໂດຍກົງໃນການໃຊ້ຄວາມຮຸນແຮງ, ແຕ່ມີຫຼາຍປັດໄຈເຮັດໃຫ້ມີຄວາມສ່ຽງໃນການໃຊ້ຄວາມຮຸນແຮງຫຼາຍຂຶ້ນ ສຳລັບຜູ້ກະທຳຜິດ ແລະ ຜູ້ຖືກເຄາະຮ້າຍ. ຄວາມຫຍຸ້ງຍາກທາງດ້ານການເງິນກໍ່ໄດ້ຖືກຍົກຂຶ້ນມາວ່າມີການພົວພັນຢ່າງໃກ້ຊິດກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ການວິໄຈສະແດງໃຫ້ເຫັນວ່າ ໃນຄູ່ຮ່ວມຊີວິດທີ່ຮູ້ສຶກວ່າມີບັນຫາທາງດ້ານການເງິນໃນລະດັບສູງ, ອັດຕາການໃຊ້ຄວາມຮຸນແຮງທາງຄອບຄົວແມ່ນ 9.5% ທຽບກັບ 2.7% ຄູ່ຮ່ວມຊີວິດທີ່ຮູ້ສຶກວ່າມີບັນຫາທາງດ້ານການເງິນໃນລະດັບຕ່ຳ (Benson & Fox, 2004). ບັນຫານີ້ໄດ້ສະແດງໃຫ້ເຫັນວ່າຄວາມຕຶງຄຽດທາງເສດຖະກິດເຮັດໃຫ້ມີຄວາມສ່ຽງໃນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງສູງຂຶ້ນ, ການໃຊ້ຄວາມຮຸນແຮງໃນຄອບຄົວກໍ່ເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ຍັງເປັນກັບດັກໃຫ້ເຂົາເຈົ້າຈົມຢູ່ກັບຄວາມທຸກຍາກ ແລະ ການຖືກລ່ວງລະເມີດ (Renzetti, 2009). ການສຳຫຼວດນີ້ບໍ່ສາມາດສະແດງຫຼັກຖານໃນການພົວພັນກັນທາງ ດ້ານຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ແຕ່ກໍ່ແມ່ນບັນຫາຖັດມາໃນການເຮັດໃຫ້ເກີດຄວາມສ່ຽງໃນການໃຊ້ຄວາມຮຸນແຮງ.

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແມ່ນຖືກຂັບເຄື່ອນໂດຍບັນດາປັດໄຈທີ່ມີການພົວພັນກັບຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ, ປະສົບການໃນໄວເດັກ ແລະ ຮູບແບບໃນດ້ານລົບຂອງຄວາມເປັນສຸພາບບຸລຸດ (Fulu ພ້ອມຄະນະ., 2013). ການສຳຫຼວດນີ້ມີເປົ້າໝາຍແມ່ນການໃຫ້ຄວາມຮູ້ກ່ຽວກັບທຳມະຊາດຂອງການການໃຊ້ຄວາມຮຸນແຮງ ໂດຍສະເພາະທັດສະນະຄະຕິຂອງຜູ້ຊາຍໃນຄວາມເປັນສຸພາບບຸລຸດ, ຄວາມເຊື່ອໃນສັງຄົມ, ການຈັດຕັ້ງ ແລະ ກົດລະບຽບສັງຄົມ ແລະ ລະບົບໃນການສົ່ງເສີມການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ໃນຂະນະທີ່ຜູ້ຊາຍບາງຄົນທີ່ເຂົ້າຮ່ວມໃນການສົນທະນາກຸ່ມເຫັນດີວ່າບໍ່ແມ່ນຜູ້ຊາຍທຸກຄົນຈະໃຊ້ຄວາມຮຸນແຮງ, ເຫດຜົນສຳລັບພຶດຕິກຳດັ່ງກ່າວໄດ້ຖືກຈຳແນກ ຕົວຢ່າງ: ຄວາມຫຍຸ້ງຍາກທາງດ້ານການເງິນ, ຮູບຮ່າງ ແລະ ທັດສະນະຄະຕິຂອງເມຍ, ສິ່ງມຶນເມົາ ແລະ ການນອກໃຈ. ບາງທັດສະນະເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າສາເຫດຂອງຄວາມຮຸນແຮງແມ່ນມາຈາກແມ່ຍິງ ຫຼາຍກວ່າຜູ້ຊາຍ. ປັດໄຈອື່ນໆ ກໍ່ໄດ້ຖືກຍົກຂຶ້ນໂດຍຜູ້ເຂົ້າຮ່ວມ ເຊັ່ນ ການປະຕິບັດກິດຈະວັດປະຈຳວັນ ກໍ່ໄດ້ຖືກນຳມາສົນທະນາ, ແຕ່ກໍ່ບໍ່ໄດ້ເນັ້ນໃນດ້ານຮີດຄອງປະເພນີຕໍ່ຍິງ-ຊາຍ, ຄວາມເປັນສຸພາບບຸລຸດ ຫຼື ປັດໄຈທີ່ກ່ຽວພັນເຖິງລະບົບສັງຄົມອື່ນໆ. ນອກຈາກນັ້ນ ບັນດາຜູ້ນຳທ້ອງຖິ່ນຫຼາຍໆ ທ່ານກໍ່ຍັງລາຍງານວ່າບໍ່ເຄີຍພົບເຫັນກໍລະນີການໃຊ້ຄວາມຮຸນແຮງທີ່ຮ້າຍແຮງຈັກເທື່ອ ແລະ ຫຼາຍທ່ານກໍ່ເນັ້ນໜັກວ່າຄວນເປັນການແກ້ໄຂພາຍໃນຄອບຄົວ ຫຼາຍກວ່າການແຊກແຊງຈາກພາຍນອກ.

# 7

# ຄວາມສຳພັນລະຫວ່າງ ການຖືກຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມຊີວິດ ແລະ ສຸຂະພາບ ຮ່າງກາຍ, ຈິດໃຈ ແລະ ສຸຂະພາບ ຈະເລີນພັນຂອງແມ່ຍິງ

# ພາກທີ 7. ຄວາມສຳພັນລະຫວ່າງການຖືກຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມຊີວິດ ແລະ ສຸຂະພາບຮ່າງກາຍ, ຈິດໃຈ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ

**ຜົນໄດ້ຮັບຫຼັກຂອງການສຳຫຼວດ:**

- 43.1% ຂອງແມ່ຍິງທີ່ລາຍງານກ່ຽວກັບ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ໃນຊ່ວງຊີວິດ ແມ່ນໄດ້ຮັບບາດເຈັບຈາກເຫດການຄວາມຮຸນແຮງດັ່ງກ່າວ, ໃນນັ້ນ ມີ 20.2% ທີ່ຖືກບາດເຈັບຫຼາຍກວ່າ 5 ຄັ້ງ.
- ແມ່ຍິງທີ່ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນມີສຸຂະພາບບໍ່ແຂງແຮງ (22.1%), ມີບັນຫາໃນການຍ່າງ (9.7%), ພົບຄວາມຫຍຸ້ງຍາກໃນການເຮັດກິດຈະວັດປະຈຳວັນ (7.8%), ມີຄວາມເຈັບປວດ (6.2%) ແລະ ສູນເສຍຄວາມຊົງຈຳ ແລະ ສະມາທິ (10.9%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນເຫດການຄວາມຮຸນແຮງເຫຼົ່ານີ້ (14.0%, 5.9%, 4.7%, 3.5% ແລະ 6.7%, ຕາມລຳດັບ).
- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນຈະມີຄວາມຄິດໃນການຂ້າຕົວຕາຍເຖິງ (10.5%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບເຫດການຄວາມຮຸນແຮງເຫຼົ່ານີ້ (2%)
- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນຈະມີຄວາມເຈັບປວດທາງດ້ານຈິດໃຈ (ວັດແທກໂດຍແບບສອບຖາມການລາຍງານດ້ວຍຕົນເອງ-SRQ) ສະເລ່ຍ 5.7 % ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບເຫດການຄວາມຮຸນແຮງເຫຼົ່ານີ້ (3.8 %).
- ແມ່ຍິງທີ່ເຄີຍຖືພາ ແລະ ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນຈະມີຄວາມສ່ຽງໃນການຫຼຸລູກຫຼາຍກວ່າ (30.6%) ແລະ ການເອົາລູກອອກ (18.5%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນເຫດການຄວາມຮຸນແຮງເຫຼົ່ານີ້ (20.4% ແລະ 8.7 %, ຕາມລຳດັບ).
- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນຈະມີທ່າອ່ຽງໃນການດື່ມເຫຼົ້າໃນລະຫວ່າງການຖືພາ (25.6%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບເຫດການຄວາມຮຸນແຮງເຫຼົ່ານີ້ (13.3%).
- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນຈະມີທ່າອ່ຽງໃນການຄຸມກຳເນີດ (12.3%, ໃຊ້ຖົງຢາງອະນາໄມເປັນສ່ວນໃຫຍ່) ແລະ ຮ້ອງຂໍໃຫ້ຄູ່ຮ່ວມຊີວິດຂອງເຂົາເຈົ້າໃຊ້ຖົງຢາງອະນາໄມ (11.6%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບເຫດການຄວາມຮຸນແຮງເຫຼົ່ານີ້ (5.5% ແລະ 5.7%, ຕາມລຳດັບ).

## 7.1 ພາກສະເໜີ

ດັ່ງທີ່ໄດ້ສົນທະນາໃນບົດທີ 1, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໄດ້ພົວພັນເຖິງຜົນກະທົບທີ່ຮ້າຍແຮງ ແລະ ມີຜົນກະທົບຫຼາຍຕໍ່ສຸຂະພາບ ແລະ ຄຸນນະພາບຊີວິດ ໃນຊ່ວງຊີວິດ. ນີ້ເປັນບັນຫາໃຫຍ່ຕໍ່ມະນຸດ ແລະ ຄ່າໃຊ້ຈ່າຍໃນດ້ານເສດຖະກິດ-ສັງຄົມ. ບົດນີ້ແມ່ນໄດ້ທົດສອບເພີ່ມເຕີມທາງດ້ານຜົນກະທົບຕໍ່ສຸຂະພາບຂອງແມ່ຍິງ. ການວິເຄາະທຳອິດແມ່ນວິເຄາະທາງດ້ານຜົນກະທົບໂດຍກົງໃນຮູບແບບຂອງການບາດເຈັບທີ່ມີສາເຫດມາຈາກການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະຫຼື ທາງເພດໂດຍຄູ່ຮ່ວມຊີວິດ, ຈາກນັ້ນກໍ່ສຳຫຼວດການພົວພັນກັນລະຫວ່າງແມ່ຍິງທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແລະ ສຸຂະພາບທາງດ້ານຮ່າງກາຍ ຫຼື ຈິດໃຈ ກັບມາດຕາສ່ວນການສຳຫຼວດ ເພື່ອວັດແທກສະຖານະພາບທາງດ້ານສຸຂະພາບໃນປັດຈຸບັນ. ພາກສຸດທ້າຍໃນບົດນີ້ໄດ້ນຳສະເໜີທາງດ້ານສຸຂະພາບຈະເລີນພັນ, ລວມທັງຜົນໄດ້ຮັບທີ່ພົວພັນເຖິງການຖືພາ ແລະ ການໃຊ້ວິທີຄຸມກຳເນີດ.

## 7.2 ການບາດເຈັບ ແລະ ຜົນກະທົບທາງກົງຂອງການໃຊ້ຄວາມຮຸນແຮງທາງຮ່າງກາຍ ຫຼື ທາງເພດ

### 7.2.1 ອັດຕາສ່ວນ, ຄວາມຖີ່ ແລະ ຄວາມຮ້າຍແຮງຂອງການບາດເຈັບ

ຄືດັ່ງທີ່ສະແດງໃນຮູບທີ 7.1, ແມ່ຍິງ ທີ່ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ທີ່ເກີດບາດເຈັບໃນຊ່ວງຊີວິດເຖິງ 43.1%. ແມ່ຍິງທີ່ອາໄສຢູ່ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ມີອັດຕາສ່ວນຂອງການບາດເຈັບແບບຖາວອນຈາກການໃຊ້ຄວາມຮຸນແຮງ (45.9%) ເຊິ່ງຫຼາຍກວ່າແມ່ຍິງທີ່ຢູ່ໃນເຂດຕົວເມືອງ (40.5%). ແມ່ຍິງທີ່ຢູ່ໃນເຂດພາກເໜືອ ມີອັດຕາການບາດເຈັບ (46.7%) ສູງກວ່າ ແມ່ຍິງໃນເຂດພາກກາງ (41.8%). ໂດຍລວມແລ້ວ, ເກືອບເຄິ່ງໜຶ່ງຂອງແມ່ຍິງທີ່ຖືກຄວາມຮຸນແຮງແມ່ນເຈັບປວດກັບການຖືກບາດເຈັບ.

ຮູບທີ 7.1 ການລາຍງານຂອງແມ່ຍິງວ່າໄດ້ຮັບບາດເຈັບ ເຊິ່ງເປັນຜົນມາຈາກຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດ ໃນຊ່ວງໄລຍະເວລາຕະຫຼອດຊີວິດ, ສປປ ລາວ, ປີ 2014 (ຈຳນວນ =470)




ໃນກຸ່ມແມ່ຍິງທີ່ເຄີຍຖືກບາດເຈັບ, 20.2% ແມ່ນເຄີຍຖືກບາດເຈັບຫຼາຍກວ່າ 5 ຄັ້ງ (ຮູບທີ 7.2). ໃນປະເພດຂອງການບາດເຈັບ, 37.9% ໄດ້ລາຍງານການບາດເຈັບເລັກນ້ອຍ ເຊັ່ນ ຮອຍຂູດ, ຮອຍເຫຼີ່ມ ແລະ ຮອຍພົກຊ້ຳ. ໃນການບາດເຈັບທີ່ຮ້າຍແຮງຂຶ້ນ, 8.7% ມີການບາດເຈັບໃນຫູ ແລະ ຕາ, 2 .1% ບາດເຈັບທາງຊ່ອງຄອດ ຫຼື ຮູທະວານ, ຖືກຕັດ ແລະ ເປັນບາດແຜເລິກ, 1.6% ແມ່ນ ກະດູກແຕກ ແລະ ກະດູກຫັກ. ໂດຍລວມແລ້ວ, 8.6% ຂອງແມ່ຍິງທີ່ເຄີຍຖືກບາດເຈັບໄດ້ລາຍງານວ່າ ເຮັດໃຫ້ເຂົາເຈົ້າສູນເສຍຄວາມຈື່ຈຳ ຫຼື ຂາດສະມາທິ ແລະ 11.5% ແມ່ນຕ້ອງການປິ່ນປົວຈາກຄວາມເຈັບປວດດັ່ງກ່າວ.

ຮູບທີ 7.2 ຄວາມຖີ່ຂອງການໄດ້ຮັບບາດເຈັບຈາກການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ, ປີ 2014 (ຈຳນວນ=470)




ການສຳຫຼວດທາງດ້ານຄຸນນະພາບໄດ້ ສະແດງໃຫ້ເຫັນວ່າ ແມ່ຍິງທີ່ຖືກເຄາະຮ້າຍ ບາງຄັ້ງກໍ່ມີການບາດເຈັບຮ້າຍແຮງ ແລະ ຍາວນານ, ເຊິ່ງເຮັດໃຫ້ຕ້ອງໄດ້ປິ່ນປົວຫຼາຍຄັ້ງ, ກະດູກແຕກ, ຖືກຕັດ ແລະ ເປັນຮອຍຊ້ຳ. ເຖິງວ່າບາດແຜທາງຮ່າງການຈະສາມາດຮັກສາໃຫ້ເຊົາໄດ້, ແຕ່ຄວາມຢ້ານກົວໃນການຖືກທຳຮ້າຍນັ້ນ ສົ່ງຜົນທາງດ້ານພຶດຕິກຳຂອງແມ່ຍິງ ຕໍ່ສາມີຂອງລາວ.

*"ລາວໃຊ້ທ່ອນໄມ້ຕີຂ້ອຍ ຈົນຂ້ອຍຕ້ອງໄດ້ເຂົ້າໂຮງໝໍ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

*"ເມື່ອພວກເຮົາກັບຮອດເຮືອນ ຂ້ອຍບໍ່ມີເວລາເວົ້າຫຍັງເລີຍ, ຍັງບໍ່ທັນໄດ້ມອດຈັກລົດຈັກຊໍ້າ, ລາວກໍ່ເຂົ້າມາຫາ ແລ້ວໃຊ້ໝວກກັນນັອກຕີຫົວຂ້ອຍ. ຕອນນັ້ນໜ້າຂ້ອຍມີແຕ່ຮອຍຊໍ້າ ແລະ ຂ້ອຍກໍ່ບໍ່ສາມາດໄປຂາຍເສື້ອຜ້າໄດ້ໃນມື້ຕໍ່ໄປ. ຂ້ອຍອາຍ. ໜ້າຂ້ອຍມີແຕ່ຮອຍຊໍ້າ, ຄໍກໍ່ມີແຕ່ຮອຍຊໍ້າ ແລະ ຮອຍບີບຍ້ອນລາວບີບຄໍຂ້ອຍ."*

*"ຂ້ອຍມີຮອຍຊໍ້າຕະຫຼອດເວລາ, ແຕ່ຂ້ອຍກໍ່ບໍ່ໄດ້ໄປໂຮງໝໍ. ຂ້ອຍເຈັບປວດໄປໝົດທັງຮ່າງກາຍ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

| | |
|---|---|
| **ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ** | *"ການໃຊ້ຄວາມຮຸນແຮງທາງຮ່າງກາຍໂດຍປົກກະຕິແລ້ວ ແມ່ນການໃຊ້ມື ຫຼື ກຳປັ້ນຕີ. ເວລາທີ່ມັນຮຸນແຮງຫຼາຍ, ສຳລັບຂ້ອຍແມ່ນຕອນທີ່ເຈັບຫຼາຍຈົນຂ້ອຍໄດ້ເຂົ້າໂຮງໝໍ."* |

## 7.3 ສະພາບດ້ານສຸຂະພາບທົ່ວໄປ ແລະ ສຸຂະພາບຈິດ

### 7.3.1 ການພົວພັນກັນລະຫວ່າງ ການໃຊ້ຄວາມຮຸນແຮງທາງຮ່າງກາຍ, ທາງເພດ ແລະ ຈິດໃຈ ກັບສຸຂະພາບທົ່ວໄປ ແລະ ສຸຂະພາບຈິດໃຈ

ການໃຊ້ຄວາມຮຸນແຮງທາງຮ່າງກາຍ ຫຼື ທາງເພດ, 32.3% ແມ່ນມີຜົນກະທົບຕໍ່ສຸຂະພາບໂດຍທົ່ວໄປຂອງແມ່ຍິງທີ່ໄດ້ລາຍງານການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ ລາຍງານບັນຫາສຸຂະພາບໃຫຍ່ໆ, ໃນຂະນະທີ່ 27.5% ໄດ້ລາຍງານ ບັນຫາສຸຂະພາບທີ່ບໍ່ຮ້າຍແຮງ ແລະ 40.2% ເວົ້າວ່າບໍ່ໄດ້ຮູ້ສຶກວ່າມີຜົນກະທົບຫຍັງ. ນອກຈາກການລາຍງານສ່ວນບຸກຄົນແລ້ວ, ບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດຍັງໄດ້ຖືກປຽບທຽບກັບກຸ່ມທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງດັ່ງກ່າວໄດ້ປະເຊີນກັບບັນຫາສຸຂະພາບທາງຮ່າງກາຍ ແລະ ຈິດໃຈ. ການສຳຫຼວດໄດ້ມີຄຳຖາມອີງຕາມ 5 ມາດຖານກ່ຽວກັບສຸຂະພາບໂດຍທົ່ວໄປ (ຄຳຖາມຍ່ອຍ): ສຸຂະພາບບໍ່ດີ, ບັນຫາໃນການຍ່າງ, ຜົນກະທົບຕໍ່ຊີວິດປະຈຳວັນ, ອາການເຈັບ ເຊັ່ນດຽວກັນກັບການສູນເສຍຄວາມຊົງຈຳ ຫຼື ສະມາທິສັ້ນ.

ຮູບທີ 7.3 ແມ່ນການປຽບທຽບທາງດ້ານສຸຂະພາບທົ່ວໄປຂອງແມ່ຍິງທີ່ເຄີຍຖືກ ແລະ ບໍ່ເຄີຍ ຖືກຄວາມຮຸນແຮງ. ໂດຍລວມແລ້ວ, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ຈະມີບັນຫາທາງສຸຂະພາບໃນທຸກ ດ້ານເຊັ່ນ: ສຸຂະພາບບໍ່ດີ ($p<0.01$), ບັນຫາໃນການຍ່າງ ($p<0.05$), ຜົນກະທົບຕໍ່ຊີວິດປະຈຳວັນ ($p<0.05$), ອາການເຈັບ ($p<0.05$) ແລະ ການສູນເສຍຄວາມຊົງຈຳ ຫຼື ສະມາທິສັ້ນ. ($p<0.01$).

ຮູບທີ 7.3 ສະພາບດ້ານສຸຂະພາບໂດຍລວມຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ທີ່ເຄີຍ ແລະ ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ການສຳຫຼວດນີ້ຍັງໄດ້ວິເຄາະຄວາມເຈັບປວດທາງດ້ານຈິດໃຈ, ເຊິ່ງໄດ້ວັດແທກໂດຍແບບສອບຖາມການລາຍງານດ້ວຍຕົນເອງ (SRQ) ທີ່ພັດທະນາໂດຍອົງການອະນາໄມໂລກ.[19] ຮູບທີ 7.4 ສະແດງເຖິງຄະແນນ SRQ ໂດຍສະເລ່ຍໃນສະພາບຈິດໃຈຂອງຜູ້ໃຫ້ສຳພາດທີ່ເປັນແມ່ຍິງທີ່ເຄີຍ ແລະ ບໍ່ເຄີຍ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດໃນໄລຍະເວລາ 4 ອາທິດກ່ອນການສຳພາດ. ຄະແນນສະເລ່ຍຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ (5.7%) ແມ່ນຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນບັນຫາເຫຼົ່ານີ້ (3.8%), ລວມທັງຄ່າຄວາມສຳຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນທັງສອງກຸ່ມ ($p<0.001$). ເມື່ອເບິ່ງອັດຕາສ່ວນຂອງແມ່ຍິງໂດຍແບບສອບຖາມການລາຍງານດ້ວຍຕົນເອງ (SRQ) ທີ່ມີຄະແນນ 10 ຫຼື ຫຼາຍກວ່າ (ຮູບທີ 7.5), ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງມີອາການຂອງຄວາມເຈັບປວດທາງດ້ານຈິດໃຈ (21.5%) ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບບັນຫາເຫຼົ່ານີ້ (9.5%), ສະແດງໃຫ້ເຫັນໃນຄ່າຄວາມສຳຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນທັງສອງກຸ່ມ ($p<0.001$).

[19] SRQ ແມ່ນເຄື່ອງມືທີ່ຖືກອອກແບບມາເພື່ອການທົດສອບການຖືກລົບກວນທາງດ້ານຈິດໃຈ, ໂດຍສະເພາະ ໃນບັນດາປະເທດກຳລັງພັດທະນາ, ເຊິ່ງມີຄຳຖາມປິດ "ແມ່ນ" ຫຼື "ບໍ່ແມ່ນ" 20 ຄຳຖາມ, ເຊິ່ງຄະແນນສູງສຸດແມ່ນ 20, ຖ້າໄດ້ຄະແນນຫຼາຍສະແດງວ່າມີຄວາມເປັນໄປໄດ້ສູງໃນການມີສະພາວະໂສກເສົ້າ. ວິທີດັ່ງກ່າວສາມາດເຮັດໄດ້ດ້ວຍຕົນເອງ ຫຼື ໃຫ້ຜູ້ສຳພາດຖາມ. ສຳລັບລາຍລະອຽດ, ກະລຸນາເບິ່ງ http://whqlibdoc.who.int/hq/1994/WHO_MNH_PSF_94.8.pdf

ຮູບທີ 7.4 ການປຽບທຽບຄະແນນສະເລ່ຍຂອງ SRQ ສໍາລັບຄວາມເຈັບປວດທາງດ້ານຈິດໃຈໃນໄລຍະເວລາ 4 ອາທິດ ທີ່ຜ່ານມາຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ, ປີ 2014 (ຈໍານວນ=2,846)




ຮູບທີ 7.5 SRQ ໃນຄະແນນ 10 ຫຼືສູງກວ່າ ໃນໄລຍະເວລາ 4 ອາທິດທີ່ຜ່ານມາຂອງແມ່ຍິງທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ, ປີ 2014 (ຈໍານວນ=2,846)




ໃນການປຽບທຽບລະຫວ່າງແມ່ຍິງທີ່ເຄີຍ ຫຼື ບໍ່ເຄີຍ ຖືກຄວາມຮຸນແຮງທາງຈິດໃຈ (ຮູບທີ 7.6), ຄະແນນສະເລ່ຍຂອງ SRQ ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຈິດໃຈ ແມ່ນ 4.8 ແລະ 3.6 ສໍາລັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້, ໂດຍຄ່າຄວາມສໍາຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນທັງສອງກຸ່ມ (p<0.001). ການຂ້າຕົວຕາຍ, ຄືໄດ້ສະແດງໃນຮູບທີ 7.7, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຈິດໃຈ ມີທ່າອ່ຽງມີແນວຄິດຢາກຂ້າຕົວຕາຍເຖິງ (3.9%) ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້ (1.4%) (p<0.001), ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຈິດໃຈ ພະຍາຍາມທີ່ຈະຂ້າຕົວຕາຍ (1.1%) ທຽບກັບແມ່ຍິງທີ່ບໍ່ເຄີຍປະເຊີນກັບບັນຫາເຫຼົ່ານີ້ (0.5%) (p<0.05).

ຮູບທີ 7.6 ການປຽບທຽບຄະແນນສະເລ່ຍຂອງ SRQ ສໍາລັບຄວາມເຈັບປວດທາງດ້ານຈິດໃຈຂອງແມ່ຍິງ ທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຈິດໃຈ, ສປປ ລາວ, ປີ 2014 (ຈໍານວນ=2,377)




ຮູບທີ 7.7 ການປຽບທຽບຂອງການມີແນວຄິດໃນການຂ້າຕົວຕາຍລະຫວ່າງແມ່ຍິງ ທີ່ເຄີຍ/ບໍ່ເຄີຍ ຖືກໃຊ້ຄວາມຮຸນແຮງທາງດ້ານຈິດໃຈ, ສປປ ລາວ, ປີ 2014 (ຈໍານວນ=2,377)




ການສໍາຫຼວດໃນຄັ້ງນີ້ຍັງໄດ້ປຽບທຽບລະຫວ່າງກຸ່ມທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແລະ ກຸ່ມທີ່ບໍ່ເຄີຍປະເຊີນກັບບັນຫາເຫຼົ່ານີ້. ດັ່ງທີ່ສະແດງໃນຮູບທີ 7.8, ກຸ່ມທີ່ຖືກຄວາມຮຸນແຮງທາງເພດ ແມ່ນມີຄະແນນສະເລ່ຍSRQ ແມ່ນ 6.2 ເຊິ່ງຫຼາຍກວ່າກຸ່ມທີ່ບໍ່ເຄີຍ 4.2 (p<0.001).

ການຄິດຂ້າຕົວຕາຍ (ຮູບທີ 7.9), ແມ່ຍິງທີ່ຄິດຂ້າຕົວຕາຍໃນບາງຄັ້ງ ມີເຖິງ 10.5%, , ໃນຂະນະທີ່ 2.0% ແມ່ນກຸ່ມແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ (p<0.001). ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຈິດໃຈ ເຊິ່ງໄດ້ພະຍາຍາມຂ້າຕົວຕາຍ ມີເຖິງ3.8%, ໃນຂະນະທີ່ແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງບໍ່ເຄີຍພະຍາຍາມຂ້າຕົວຕາຍເລີຍຈັກຄັ້ງ, ເຊິ່ງສະແດງໃນຄວາມແຕກຕ່າງທາງສະຖິຕິ (p=0.04). ນອກຈາກທັງໝົດນີ້ແລ້ວ, ສິ່ງທີ່ເຂົ້າໃຈຢ່າງຈະແຈ້ງແລ້ວວ່າ ຄ່າຄວາມສໍາຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນທັງສອງກຸ່ມມີຄວາມແຕກຕ່າງກັນຫຼາຍ ລະຫວ່າງກຸ່ມທີ່ເຄີຍ ແລະ ບໍ່ເຄີຍຖືກຄວາມຮຸນແຮງທາງຈິດໃຈ, ເຖິງແມ່ນວ່າທັງສອງກຸ່ມຈະເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດມາແລ້ວກໍ່ຕາມ.

ຮູບທີ 7.8 ອັດຕາສະເລ່ຍຂອງການຕອບ SRQ ສໍາລັບຄວາມເຈັບປວດທາງດ້ານຈິດໃຈລະຫວ່າງແມ່ຍິງ ທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼື ທາງເພດ ທີ່ເຄີຍ ແລະ ບໍ່ເຄີຍຖືກລ່ວງລະເມີດທາງດ້ານຈິດໃຈ, ສປປ ລາວ, ປີ 2014 (ຈໍານວນ=479)




ຮູບທີ 7.9 ແນວຄິດໃນການຂ້າຕົວຕາຍ ລະຫວ່າງແມ່ຍິງທີ່ເຄີຍ ຖືກການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ເຄີຍ ແລະ ບໍ່ເຄີຍຖືກລ່ວງລະເມີດທາງດ້ານຈິດໃຈ, ສປປ ລາວ, ປີ 2014 (ຈໍານວນ=479)




ການໃຊ້ບໍລິການໃນການປິ່ນປົວ ຫຼື ນໍາໃຊ້ຢາປົວ ເຊັ່ນ ການຜ່າຕັດ ຫຼື ການປິ່ນປົວຢູ່ໂຮງໝໍ, ເຫັນວ່າບໍ່ມີຄວາມແຕກຕ່າງໃນຄ່າຄວາມສໍາຄັນທາງສະຖິຕິຂອງທັງທັງສອງກຸ່ມ (p=0.448 ແລະ p=0.140, ຕາມລໍາດັບ) ລະຫວ່າງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ແລະ ບໍ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ. ໃນກຸ່ມນີ້, ແມ່ຍິງທີ່ຖືກຄວາມຮຸນແຮງ ແມ່ນມີທ່າອ່ຽງສູງໃນການໄປປຶກສາກັບທ່ານໝໍມີ (42.1%) ເຊິ່ງຫຼາຍກວ່າກຸ່ມທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້ຄື (31%),ໃນລະດັບຄວາມສໍາຄັນແມ່ນ (p<0.001).

ໃນການສໍາຫຼວດທາງດ້ານຄຸນນະພາບ, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງ ກາຍ ແລະ ຈິດໃຈ ແມ່ນຈະໃຊ້ເວລາໃນການຮັກສາບາດແຜທາງດ້ານຈິດໃຈ ດົນກວ່າທາງດ້ານຮ່າງກາຍ.

*"ໃນດ້ານສຸຂະພາບຈິດຂອງຂ້ອຍ, ຂ້ອຍຄິດວ່າຂ້ອຍບໍ່ປົກກະຕິ. ເວລາທີ່ລາວຕີຂ້ອຍ, ແມ່ນແລ້ວ ມື້ນັ້ນຂ້ອຍເຈັບ. ແຕ່ກໍ່ເຊົາ, ແຕ່ທາງດ້ານຈິດໃຈຂ້ອຍຕ້ອງໃຊ້ເວລາດົນເພື່ອທີ່ຈະຮັກສາໄດ້. ມີຫຼາຍໆເຫດການກ່ຽວກັບສິ່ງທີ່ລາວໄດ້ກະທໍາກັບຂ້ອຍແມ່ນມີໃນຫົວຂອງຂ້ອຍຕະຫຼອດເວລາ ລາວເຮັດຄືຂ້ອຍບໍ່ມີຄ່າຫຍັງ, ໃຈຮ້າຍ ແລະ ປ່ອຍດ່າຂ້ອຍທຸກຄັ້ງທີ່ລາວກັບມາເຮືອນ. ແຕ່ເວລາທີ່ຜູ້ສາວເມຍນ້ອຍຂອງລາວໂທມາ, ລາວກໍ່ເວົ້າສຽງອ່ອນສຽງຫວານ ເຊັ່ນວ່າ "ໂດຍ, ຂ້ອຍຮອດເຮືອນແລ້ວ, ຂອບໃຈທີ່ໂທມາ". ເຫດການເຫຼົ່ານັ້ນມັນຕິດຕາຂ້ອຍຢູ່ຕະຫຼອດເວລາ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

*"ຖ້າລາວຕີ, ນັ້ນຄືການໃຊ້ຄວາມຮຸນແຮງ. ແຕ່ເຖິງວ່າລາວຊິດ່າ ຫຼື ຮ້ອງໃສ່ ຂ້ອຍລ້າໆ ຂ້ອຍກະຄິດວ່ານັ້ນກໍ່ແມ່ນການໃຊ້ຄວາມຮຸນແຮງເຊັ່ນກັນ ເພາະວ່າມັນເຮັດໃຫ້ຂ້ອຍເສຍໃຈ ແລະ ບໍ່ມີຄວາມສຸກ."*

*"ຂ້ອຍຢ້ານ ເວລາທີ່ລາວໃຈຮ້າຍ. ຂ້ອຍຢ້ານລາວຊິຈູດເຮືອນໃນຕອນກາງຄືນ ຄືດັ່ງທີ່ລາວເຄີຍຂົ່ມຂູ່ໄວ້. ເຖິງແມ່ນວ່າ ຂ້ອຍຈະໄປເຮັດວຽກໄດ້ ແລະ ຍິ້ມຫົວໄດ້ຄືຄົນປົກກະຕິ. ບໍ່ມີໃຜຮູ້ດອກວ່າພາຍໃນໃຈຂອງຂ້ອຍມັນເຈັບປວດຫຼາຍສໍ່າໃດ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

ຜູ້ຊາຍໃນບ້ານບາງຄົນ ເວົ້າເລື່ອງແມ່ຍິງທີ່ຖືກເຄາະຮ້າຍທີ່ຮູ້ສຶກໂສກເສົ້າ, ເສຍໃຈ ແລະ ໝົດຫວັງ.

| ເພດຊາຍອາວຸໂສ, ເຂດຊົນນະບົດ | *"ແມ່ຍິງຄົນນັ້ນທຸກທໍລະມານຫຼາຍທີ່ຜົວຂອງລາວໄປມີເມຍນ້ອຍ ແລະ ປ່ອຍໃຫ້ລາວຮັບພາລະລ້ຽງລູກຄົນດຽວ. ບາງເທື່ອລາວອາດຈະຫາທາງອອກໂດຍຖ້າລາວຂ້າຕົວຕາຍ. ລາວບໍ່ມີໃຜໃຫ້ຖາມ, ຄວາມຮູ້ລາວກໍ່ຈຳກັດ. ໃນຄອບຄົວຂອງລາວ, ຜົວມີເມຍນ້ອຍ."* |
|---|---|

## 7.4 ການພົວພັນກັນລະຫວ່າງການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ

ດັ່ງທີ່ໄດ້ສະແດງໃນຮູບທີ 7.10, 30.6% ຂອງແມ່ຍິງທີ່ເຄີຍຖືພາທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດໄດ້ລາຍງານກ່ຽວກັບການຫຼຸລູກ, ສໍາລັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້ແມ່ນມີ20.4% ($p<0.001$). ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ 18.5% ແມ່ນເຄີຍຫຼຸລູກ ຖ້າທຽບກັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງແມ່ນ 8.7% ($p<0.001$), ເຊິ່ງໄດ້ຊີ້ບອກເຖິງຄ່າຄວາມສໍາຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນຂອງທັງສອງກຸ່ມ ຕໍ່ການຫຼຸລູກ ແລະ ການເອົາລູກອອກ. ນອກຈາກນັ້ນຍັງມີຄວາມແຕກຕ່າງກັນ ໃນການປະເຊີນບັນຫາລູກຕາຍຄາທ້ອງໃນລະຫວ່າງສອງກຸ່ມດັ່ງກ່າວ, ເຖິງວ່າຈະບໍ່ມີຄ່າຄວາມສໍາຄັນທາງສະຖິຕິກໍ່ຕາມ.

ຮູບທີ 7.10 ຜົນໄດ້ຮັບດ້ານການຈະເລີນພັນຂອງແມ່ຍິງທີ່ເຄີຍຖືພາ, ອີງຕາມປະສົບການທີ່ຖືກໃຊ້ຄວາມຮຸນແຮງຈາກສາມີ/ຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈໍານວນ=2,744)




ຮູບທີ 7.11 ສະແດງບັນດາປັດໃຈທີ່ກ່ຽວຂ້ອງກັບການຖືພາຄັ້ງສຸດທ້າຍຂອງແມ່ຍິງທີ່ເກີດລູກໃນໄລຍະ 5 ປີທີ່ຜ່ານມາ. ຮູບນີ້ສະແດງໃຫ້ເຫັນວ່າແມ່ຍິງເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ມີທ່າອ່ຽງໃນການດື່ມສິ່ງມຶນເມົາໃນລະຫວ່າງຖືພາ (25.6%), ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້ (13.3%) ($P<0.05$).

ຮູບທີ 7.11 ປັດໄຈທີ່ກ່ຽວຂ້ອງກັບການຖືພາຄັ້ງສຸດທ້າຍຂອງແມ່ຍິງທີ່ມີການເກີດລູກໃນໄລຍະ 5 ປີ ທີ່ຜ່ານມາ, ສປປ ລາວ, ປີ 2014 (N=968)




ການພົວພັນຢ່າງໃກ້ຊິດລະຫວ່າງການໃຊ້ຄວາມຮຸນແຮງ ແລະ ການໃຊ້ຢາຄຸມກຳເນີດ (ຮູບທີ 7.12). ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໄດ້ໃຊ້ຢາຄຸມກຳເນີດ ເຖິງ 61.9% ຖ້າທຽບໃສ່ແມ່ຍິງທີ່ບໍ່ເຄີຍຄວາມຮຸນແຮງ ແມ່ນມີ 51.3% ($p<0.001$). ຄູ່ຊີວິດຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ 4.4% ໄດ້ປະຕິເສດການໃຊ້ຢາຄຸມ ເຊິ່ງທຽບກັບ 1.5% ຂອງແມ່ຍິງທີ່ບໍ່ເຄີຍປະເຊີນກັບຄວາມຮຸນແຮງເຫຼົ່ານີ້ ($p<0.001$). ໃນການໃຊ້ຖົງຢາງອະນາໄມ, 12.3% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໄດ້ໃຊ້ຖົງຢາງອະນາໄມກັບຄູ່ຮ່ວມຊີວິດໃນປັດຈຸບັນ ຫຼື ອາດີດ, ແຕ່ແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງແມ່ນໃຊ້ພຽງ 5.5% ($p<0.001$) ແລະ 11.6% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໄດ້ຂໍໃຫ້ຄູ່ຮ່ວມຊີວິດ ໃນປັດຈຸບັນ ຫຼື ອາດີດ ໃຊ້ຖົງຢາງອະນາໄມ ທຽບກັບ 5.7% ຂອງແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້ ($p<0.001$).

ຮູບທີ 7.12 ການໃຊ້ການຄຸມກຳເນີດໃນກຸ່ມແມ່ຍິງທີ່ເຄີຍມີຄູ່ຮັກທີ່ຖືກ ແລະ ບໍ່ຖືກຄວາມຮຸນແຮງທາງຮ່າງກາຍ ແລະ ຫຼື ທາງເພດ, ສປປ ລາວ, 2014 (ຈຳນວນ=2,845)



## 7.5 ພາກສົນທະນາ

ການສຳຫຼວດຫຼາຍຢ່າງທີ່ຜ່ານມາໄດ້ສະແດງຫຼັກຖານອັນຈະແຈ້ງແລ້ວວ່າ ຜົນກະທົບທາງລົບທີ່ສຳຄັນຂອງ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນຜົນກະທົບຕໍ່ສຸຂະພາບທາງຮ່າງກາຍ ແລະ ຈິດໃຈຂອງແມ່ຍິງ (Campbell, 2002). ເຫດຜົນທາງດ້ານສຸຂະພາບຂອງແມ່ຍິງ ແລະ ທິດສະດີ ໄດ້ແນະນຳວ່າ ບັນຫາທາງດ້ານສຸຂະພາບແມ່ນຜົນກະທົບຕົ້ນຕໍຂອງການລະເມີດຫຼາຍກວ່າບັນດາປັດໄຈອື່ນທີ່ຜ່ານມາ (Ibid.), ເຖິງວ່າການສຳຫຼວດດັ່ງກ່າວບໍ່ໄດ້ເນັ້ນໜັກໃນດ້ານວິທີການແກ້ໄຂບັນຫາສາຍພົວພັນເຫຼົ່ານັ້ນ.

ຈຸດປະສົງຫຼັກສຳລັບບົດນີ້ ແມ່ນການຈຳແນກບັນດາຜົນກະທົບສະເພາະຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ທາງເພດ ແລະ ທາງຈິດໃຈ ຕໍ່ສຸຂະພາບທາງດ້ານຮ່າງກາຍ, ສຸຂະພາບຈະເລີນພັນ ແລະ ສຸຂະພາບຈິດຂອງແມ່ຍິງ. ໂດຍລວມແລ້ວ, ຜົນໄດ້ຮັບຂອງການສຳຫຼວດນີ້ ມີການເຊື່ອມໂຍງກັນລະຫວ່າງການໃຊ້ຄວາມຮຸນແຮງ ແລະ ສຸຂະພາບ ເຊິ່ງຄ້າຍຄືບົດສຳຫຼວດທີ່ຜ່ານມາ (Ibid, Campbell ພ້ອມຄະນະ, 2002), ລວມທັງການສຳຫຼວດໃນຫຼາຍປະເທດຂອງອົງການອະນາໄມໂລກ. ໃນການສຳຫຼວດນີ້, ແມ່ຍິງເກືອບເຄິ່ງໜຶ່ງຄື (43.1%) ທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນຖືກບາດເຈັບ, ໂດຍສະເພາະກຸ່ມທີ່ອາໄສຢູ່ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ອັດຕາສ່ວນແມ່ຍິງທີ່ຖືກຄວາມຮຸນແຮງໃນ ສປປ ລາວ ແມ່ນຫຼາ ຍກວ່າປະເທດອື່ນຖ້າທຽບກັບບັນດາປະເທດໃນລາຍຊື່ທີ່ໄດ້ສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ. ແລະ ເທົ່າກັນກັບແຂວງໃນປະເທດໄທ (43.9%) ແລະ ບັນດາເມືອງຂອງປະເທດເປຣູ (45.9%), ແລະ ແຂວງຂອງປະເທດເປຣູ (55.4%) ຫຼາຍທີ່ສຸດ (Garcia-Moreno ພ້ອມຄະນະ., 2005). ໃນການສຳຫຼວດທາງດ້ານຄຸນນະພາບ, ໃນການສຳພາດແບບເຈາະຈົ້ມ ແມ່ຍິງທີ່ຖືກເຄາະຮ້າຍໄດ້ເປີດເຜີຍກ່ຽວກັບການຖືກຕີຈາກຜົວຂອງເຂົາເຈົ້າ ໂດຍການໃຊ້ສິ່ງຂອງທຸບຕີຈົນເປັນຮອຍຊ້ຳ ແລະ ບາງຄັ້ງຈົນເຖິງຂັ້ນເຂົ້າໂຮງໝໍ.

ການພົວພັນກັນລະຫວ່າງການໃຊ້ຄວາມຮຸນແຮງ ແລະ ອາການເຈັບປ່ວຍທາງຮ່າງກາຍ ແມ່ນມີການສຳຫຼວດໃນລະດັບສາກົນ (Campbell ພ້ອມຄະນະ., 2002, Plichta & Falik, 2001, Plichta & Abraham, 1996,). ໃນການສຳຫຼວດນີ້, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ໄດ້ລາຍງານບັນຫາສຸຂະພາບທີ່ບໍ່ດີ ຫຼື ບໍ່ດີຫຼາຍ, ມີຄວາມເຈັບປວດ, ບັນຫາໃນການໃຊ້ຊີວິດປະຈຳວັນ, ການຍ່າງ ລວມທັງຄວາມສາມາດໃນການຈື່ຈຳ ແລະສະມາທິສັ້ນ ທຽບກັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ໃນດ້ານຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ສຸຂະພາບຈິດ, ອາການທີ່ຈະແຈ້ງທີ່ສຸດແມ່ນອາການໂສກເສົ້າ, ອາການຫຼັງການເກີດຄວາມຄຽດໃນຈິດໃຈ ແລະ ຄວາມກັງວົນ (Woods, 2000, Golding, 1999, Campbell ພ້ອມດ້ວຍຄະນະ., 1996). ການຖືກຄວາມຮຸນແຮງມີການພົວພັນກັນຢ່າງສະໜິດແໜ້ນຕໍ່ພຶດຕິກຳການຂ້າຕົວຕາຍ, ກິນບໍ່ໄດ້ ນອນບໍ່ຫຼັບ, ການບໍ່ເຂົ້າສັງຄົມ ແລະ ການເພີ່ມຂຶ້ນໃນການຖືກລະເມີດຊ້ຳເລື້ອຍໆ (Kaslow ພ້ອມດ້ວຍຄະນະ., 2002, Golding, 1999, Campbell & Lewandowski, 1997, Bergman & Brismar, 1991). ການສຳຫຼວດຄັ້ງນີ້ພົບວ່າແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ມີຄະແນນແບບສອບຖາມການລາຍງານດ້ວຍຕົນເອງ (SRQ) ໃນລະດັບສູງ, ໃນການວັດແທກຄວາມເຈັບປວດທາງດ້ານຈິດໃຈ ແມ່ນລວມທັງການຄິດຂ້າຕົວຕາຍນຳ, ເຊິ່ງທຽບກັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ນອກຈາກນີ້, ແມ່ຍິງທີ່ຖືກຄວາມຮຸນແຮງທາງດ້ານຈິດໃຈເລື້ອຍໆມີຄະແນນແບບສອບຖາມການລາຍງານດ້ວຍຕົນເອງ (SRQ) ແລະ ການຄິດຂ້າຕົວຕາຍໃນລະດັບສູງກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ຄ່າກາງຂອງຄະແນນແບບສອບຖາມການລາຍງານດ້ວຍຕົນເອງ (SRQ) ຂອງບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ແມ່ນສູງກວ່າ ໃນເມືອງຂອງຍີ່ປຸ່ນທີ່ມີ (2.6) ແລະ ປະເທດຊາມົວ (3.6), ແຕ່ຕ່ຳກວ່າໃນເມືອງ (6.9) ແລະ ແຂວງຂອງປະເທດໄທ (7.9). ການສຳຫຼວດຂອງ ສປປ ລາວ ໃນດ້ານຜົນກະທົບທາງດ້ານສຸຂະພາບຈິດແມ່ນຄ້າຍຄືກັນກັບຜົນສຳຫຼວດຂອງບັນດາປະເທດກຳລັງພັດທະນາ ແລະ ບັນດາປະເທດອຸດສາຫະກຳອື່ນໆ ລວມທັງການສຳຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ ແລະ ການວິໄຈອື່ນໆ (Jewkes, 2013, Oram & Howard, 2013). ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທີ່ຖືກສຳພາດໃນການສຳຫຼວດທາງດ້ານຄຸນນະພາບກໍ່ໄດ້ລາຍງານກ່ຽວກັບການຄິດຂ້າຕົວຕາຍ, ຄວາມໂສກເສົ້າ, ເສຍໃຈ ແລະ ໝົດຫວັງ.

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ກໍ່ຍັງສົ່ງຜົນກະທົບທາງເພດ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ. ເຖິງວ່າ ສປປ ລາວ ຈະບໍ່ມີຂໍ້ມູນຂອງການຫຼຸລູກ ແລະ ການເອົາລູກອອກທີ່ຜິດກົດໝາຍກໍ່ຕາມ, ຜົນການສຳຫຼວດນີ້ສະແດງໃຫ້ເຫັນວ່າມີອັດຕາການຫຼຸລູກ ແລະ ການເອົາລູກອອກ ໃນກຸ່ມແມ່ຍິງທີ່ເຄີຍຖືພາທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດໃນໄລຍະຖືພາ ຫຼາຍກວ່າບັນດາແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ສາຍພົວພັນນີ້ບໍ່ສາມາດໄດ້ຮັບການພິສູດໃນການສຶກສາດັ່ງກ່າວ. ສະນັ້ນ ຈຶ່ງມີຄວາມຮຽກຮ້ອງຕ້ອງການໃຫ້ມີການວິໄຈເພີ່ມເຕີມໃນດ້ານການພົວພັນກັນລະຫວ່າງຜົນກະທົບທາງລົບຕໍ່ສຸຂະພາບຈະເລີນພັນ (ໂດຍສະເພາະໃນລະຫວ່າງຖືພາ) ແລະ ການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນສະພາບການຂອງ ສປປ ລາວ.

ໃນການໃຊ້ຢາຄຸມກຳເນີດ, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງມີທ່າອ່ຽງໃນການໃຊ້ຢາຄຸມກຳເນີດຫຼາຍກວ່າ ແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ, ໂດຍສະເພາະການໃຊ້ຖົງຢາງອະນາໄມ. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໄດ້ຂໍໃຫ້ຄູ່ຮ່ວມຊີວິດ ໃຊ້ຖົງຢາງອະນາໄມ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ ເຖິງແມ່ນວ່າການສຳຫຼວດດ້ານນີ້ແມ່ນໄດ້ກວມເອົາກຸ່ມອາຍຸລະດັບກວ້າງ ຕັ້ງແຕ່ໄວໜຸ່ມ ຈົນຮອດ 64 ປີ, ອັດຕາການໃຊ້ຢາຄຸມກຳເນີດແມ່ນສູງຫຼາຍ ທຽບກັບຂໍ້ມູນປະຊາກອນໃນການສຳຫຼວດດັດຊະນີໝາຍທາງສັງຄົມລາວໃນປີ 2011-2012, ທີ່ກວມ 49.8% ຂອງແມ່ຍິງໃນໄວຈະເລີນພັນ. ເຫດຜົນໃນ ການໃຊ້ຢາຄຸມກຳເນີດໃນບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງແມ່ນຍັງບໍ່ທັນຈະແຈ້ງ, ແຕ່ຫຼາຍໆ ການສຳຫຼວດສະແດງໃຫ້ເຫັນເຖິງຄວາມກັງວົນໃນການຖືພາແບບບໍ່ຕ້ອງການ ແລະ ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ, ຍ້ອນຜູ້ຊາຍສ່ວນໃຫຍ່ແມ່ນມີຄູ່ນອນຫຼາຍຄົນ (Garcia-Moreno ພ້ອມດ້ວຍຄະນະ., 2005). ອີກຄຸນລັກສະນະໜຶ່ງຂອງຜົນກະທົບຕໍ່ສຸຂະພາບຂອງແມ່ຍິງຄືແມ່ຍິງໄດ້ລາຍງານກ່ຽວກັບການດື່ມສິ່ງມຶນເມົາໃນລະຫວ່າງການຖືພາຄັ້ງສຸດທ້າຍ. ຜົນການສຳຫຼວດທີ່ຄ້າຍຄືກັນ ໄດ້ຖືກລາຍງານໃນຫຼາຍໆການສຳຫຼວດ (Eaton ພ້ອມດ້ວຍຄະນະ., 2012, Jewkes, 2013). ເຖິງຢ່າງໃດກໍ່ຕາມ, ຍ້ອນການສຳຫຼວດດັ່ງກ່າວບໍ່ໄດ້ທົດສອບປະຫວັດຂອງແມ່ຍິງກ່ຽວກັບບັນຫາທີ່ກ່ຽວຂ້ອງກັບສິ່ງມຶນເມົາ, ແລະ ບໍ່ແນ່ໃຈວ່າການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ ແມ່ນມີສາເຫດມາຈາກພຶດຕິກຳການດື່ມສິ່ງມຶນເມົາ ຫຼື ບໍ່.

# ໘

# ສາຍພົວພັນລະຫວ່າງ ການຖືກຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມ ຊີວິດ ແລະ ເດັກ

# ພາກທີ 8. ສາຍພົວພັນລະຫວ່າງການຖືກຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມຊີວິດ ແລະ ເດັກ

**ຜົນໄດ້ຮັບຫຼັກຂອງການສໍາຫຼວດ:**

- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງສ່ວນຫຼາຍ ລາຍງານວ່າ ລູກຂອງເຂົາເຈົ້າແມ່ນມີບັນຫາຫຼາຍຢ່າງເຊັ່ນ: ນອນຝັນຮ້າຍ, ຍ່ຽວໃສ່ບ່ອນ, ເປັນເດັກທີ່ບໍ່ມັກປາກ, ໃຈຮ້າຍງ່າຍ, ເສັງຕົກ ຫຼື ຄ້າງຫ້ອງ ແລະ ຂາດຮຽນ ຫຼື ອອກໂຮງຮຽນ ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້.
- ປະມານ 40% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍຈາກຄູ່ຮ່ວມຊີວິດ ລາຍງານວ່າ ລູກຂອງເຂົາເຈົ້າເຫັນເຫດການຄວາມຮຸນແຮງຢ່າງໜ້ອຍໜຶ່ງຄັ້ງ.
- ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນມີທີ່ທ່າອ່ຽງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້ ເຊັ່ນ: 1) ມີແມ່ເປັນຜູ້ຖືກເຄາະຮ້າຍທີ່ຖືກຄູ່ຊີວິດທໍາຮ້າຍ, 2) ມີພໍ່ ຫຼື ຄູ່ຮ່ວມຊີວິດ ທີ່ມີແມ່ທີ່ເປັນຜູ້ຖືກເຄາະຮ້າຍທີ່ຖືກຄູ່ຮ່ວມຊີວິດຕີ ແລະ 3) ມີຄູ່ຮ່ວມຊີວິດທີ່ເປັນຜູ້ເຄາະຮ້າຍທີ່ຖືກຕີຕອນຍັງເປັນເດັກ.

## 8.1 ພາກສະເໜີ

ບົດນີ້ສະແດງເຖິງ ຄວາມສໍາພັນກັນລະຫວ່າງການໃຊ້ຄວາມຮຸນແຮງ ທາງດ້ານຮ່າງກາຍ ແລະຫຼື ທາງເພດຈາກຄູ່ຮ່ວມຊີວິດ ແລະ ຊີວິດການເປັນຢູ່ຂອງເດັກ ແລະ ການຮ ຽນຂອງເດັກ. ພ້ອມນັ້ນຍັງໄດ້ນໍາສະເໜີຜົນຂອງການສໍາຫຼວດຈາກແມ່ຍິງທີ່ລູກຂອງເຂົາເຈົ້າໄດ້ເຫັນເຫດການໃຊ້ຄວາມຮຸນແຮງທາງຮ່າງກາຍ. ນອກຈາກນັ້ນ, ຍັງໄດ້ຖາມກ່ຽວກັບປະສົບການຂອງແມ່ຍິງທີ່ຖືກເຄາະຮ້າຍ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວຈາກຄູ່ຮ່ວມຊີວິດໃນເວລາທີ່ເຕີບໃຫຍ່. ການສໍາຫຼວດທາງດ້ານຄຸນນະພາບ ຍັງໄດ້ສໍາຫຼວດກ່ຽວກັບພຶດຕິກໍາ ແລະ ການໂຕ້ຕອບຂອງເດັກທີ່ພົບເຫັນການໃຊ້ຄວາມຮຸນແຮງ, ແລະ ສິ່ງທີ່ເປັນຜົນກະທົບຕໍ່ເດັກໃນອະນາຄົດຂອງເຂົາເຈົ້າ.

## 8.2 ຜົນກະທົບຕໍ່ຊີວິດການເປັນຢູ່ຂອງເດັກ

ຮູບທີ 8.1 ສະແດງເຖິງ ຊີວິດການເປັນຢູ່ຂອງເດັກ ອາຍຸ 6-11 ປີ ຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ. ທຽບກັບແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ ກັບ ແມ່ຍິງທີ່ບໍ່ເຄີຍປະເຊີນກັບບັນຫາເຫຼົ່ານີ້. ບັນດາມາດຖານແມ່ນລວມທັງການຕອບໂຕ້ທາງດ້ານຮ່າງກາຍ ແລະ ຈິດໃຈຂອງເດັກ ລວມທັງພຶດຕິກໍາໃນໂຮງຮຽນ. ຄ່າຄວາມສໍາຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນໃນປາກົດການຂອງພຶດຕິກໍາ 'ຝັນຮ້າຍ', 'ບໍ່ມັກປາກ ຫຼື ອາຍ', 'ມັກຕໍ່ຕ້ານ' ແລະ 'ການຕອບໂຕ້ທາງຮ່າງກາຍ ແລະ ອາລົມ ປະມານສອງ ຫຼື ຫຼາຍຮູບແບບ' ໃນບັນດາເດັກ ແລະ ແມ່ຍິງທີ່ເຄີຍ ແລະ ບໍ່ເຄີຍ ຖືກຄວາມຮຸນແຮງ ($p<0.001$). ເກືອບເຄິ່ງໜຶ່ງຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ (43.4%) ໄດ້ລາຍງານວ່າເຂົາເຈົ້າກາຍເປັນຄົນບໍ່ມັກເວົ້າ, ມິດງຽບ ຫຼື ມີພຶດຕິກໍາທີ່ອຽງອາຍ. ນອກຈາກນີ້ ຍັງມີຄ່າຄວາມສໍາຄັນທາງສະຖິຕິທີ່ມີຄວາມແຕກຕ່າງກັນ ໃນການ 'ຍ່ຽວໃສ່ບ່ອນນອນ', 'ຄ້າງຫ້ອງ ຫຼື ຮຽນຊໍ້າຊັ້ນ' ແລະ 'ອອກໂຮງຮຽນ' ລະຫວ່າງສອງກຸ່ມດັ່ງກ່າວ ($p<0.05$).

ໃນກຸ່ມເດັກທີ່ເຫັນເຫດການໃຊ້ຄວາມຮຸນແຮງພາຍໃນເຮືອນ ເຊິ່ງໄດ້ລາຍງານໂດຍແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ (ຮູບທີ 8.2), 40.6% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ລາຍງານວ່າລູກຂອງເຂົາເຈົ້າເຄີຍເຫັນເຫດການ ໃຊ້ຄວາມຮຸນແຮງໜຶ່ງ ຫຼື ສອງຄັ້ງ, 10% ແມ່ນເຫັນຫຼາຍຄັ້ງ ແລະ 13% ນັບບໍ່ໄດ້. ແມ່ຍິງທີ່ອາໄສໃນເຂດຕົວເມືອງ ແລະ ຊົນນະບົດທີ່ເຄີຍຖືກຄວາມຮຸນແຮງແມ່ນມີທ່າອ່ຽງທີ່ມີລູກທີ່ເຄີຍເຫັນເຫດການໃຊ້ຄວາມຮຸນແຮງຢ່າງໜ້ອຍໜຶ່ງຄັ້ງ ເຊິ່ງຫຼາຍກວ່າບັນດາແມ່ຍິງໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ, ໃນຂະນະທີ່ແມ່ຍິງເຄິ່ງໜຶ່ງຈາກພາກເໜືອໄດ້ລາຍງານວ່າ ລູກຂອງເຂົາເຈົ້າເຄີຍເຫັນເຫດການໃຊ້ຄວາມຮຸນແຮງຢ່າງໜ້ອຍໜຶ່ງຄັ້ງ.

ຮູບທີ 8.1 ການເປັນຢູ່ທີ່ດີຂອງເດັກອາຍຸ 6-11 ປີ ທີ່ໄດ້ລາຍງານໂດຍແມ່ຍິງ ທີ່ເຄີຍ ແລະ ບໍ່ເຄີຍ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼື ທາງເພດ, ສປປ ລາວ, ປີ 2014 (ຈຳນວນ=2,847)




ຮູບທີ 8.2 ເດັກທີ່ເຫັນການໃຊ້ຄວາມຮຸນແຮງ ທີ່ລາຍງານໂດຍແມ່ຍິງທີ່ຖືກຄວາມຮຸນແຮງທາງຮ່າງກາຍ ໂດຍຄູ່ຮ່ວມຊີວິດ, ສປປ ລາວ, ປີ 2014 (ຈຳນວນ=348)




ການໃຊ້ຄວາມຮຸນແຮງມີການພົວພັນຢ່າງໃກ້ຊິດກັບປະສົບການຊີວິດຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດໃນໄລຍະທີ່ເຂົາເຈົ້າເປັນໄວໜຸ່ມ. ແມ່ຍິງ 11.6% ເຄີຍໄດ້ຍິນ ຫຼື ເຄີຍເຫັນແມ່ຂອງຕົນຖືກແມ່ຜົວຕີ, 4.0% ລາຍງານວ່າ ແມ່ຜົວຂອງຕົນຖືກຜົວຕີ ແລະ ແມ່ຍິງ 5.3% ລາຍງານວ່າ ຜົວຂອງຕົນຖືກຕີຕອນຍັງນ້ອຍ.

ເມື່ອປຽບທຽບກັນລະຫວ່າງແມ່ຍິງທີ່ເຄີຍ ແລະ ບໍ່ເຄີຍ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ (ຮູບທີ 8.3), ເຊິ່ງມີຄວາມແຕກຕ່າງກັນຫຼາຍກ່ຽວກັບການສຳພັດຄວາມຮຸນແຮງຂອງແມ່ຜູ້ຖືກເຄາະຮ້າຍ. ໃນຂະນະທີ່ 9.9% ຂອງແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງລາຍງານວ່າ ແມ່ຕົນເຄີຍຖືກຜົວຕີ, 20.6% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງກໍ່ລາຍງານວ່າແມ່ຂອງຕົນກໍ່ເຄີຍຖືກຜົວຕີເຊັ່ນກັນ (p<0.001). ໃນຂະນະທີ່, ແມ່ຍິງ 6.7% ທີ່ເຄີຍຖືກຄວາມຮຸນແຮງ ແລະ 3.5% ທີ່ບໍ່ເຄີຍຖືກຄວາມຮຸນແຮງ ໄດ້ລາຍງານວ່າແມ່ຂອງຄູ່ຮ່ວມຊີວິດຂອງພວກເຂົາ ກໍ່ເຄີຍຖືກຜົວ

ຕີເຊັ່ນກັນ (p<0.001). ຄ່າຄວາມສຳຄັນທາງສະຖິຕິມີຄວາມແຕກຕ່າງກັນໃນປະສົບການຂອງຄູ່ຮ່ວມຊີວິດຂອງແມ່ຍິງ, 13.9% ຂອງຄູ່ຮ່ວມຊີວິດຂອງແມ່ຍິງ ທີ່ເຄີຍຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ 3.8% ຂອງຄູ່ຮ່ວມຊີວິດຂອງແມ່ຍິງ ທີ່ບໍ່ເຄີຍຖືກຄວາມຮຸນແຮງ ເຄີຍຖືກຕີໃນເວລາທີ່ໃຫຍ່ຂຶ້ນມາ (p<0.001).

ຮູບທີ 8.3 ແມ່ຍິງທີ່ລາຍງານການໃຊ້ຄວາມຮຸນແຮງກັບແມ່ຂອງລາວ, ຫຼື ແມ່ຍ່າຂອງລາວ, ແລະ ກັບຄູ່ຮ່ວມຊີວິດຂອງລາວໃນຕອນທີ່ຄູ່ຮ່ວມຊີວິດລາວຍັງນ້ອຍ ໃນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ທີ່ເຄີຍ ແລະ ບໍ່ເຄີຍມີປະສົບການໃນການຖືກໃຊ້ຄວາມຮຸນແຮງ, ສປປ ລາວ, ປີ 2014 (N=2,847)




ຜູ້ເຂົ້າຮ່ວມໃນການສຳຫຼວດທາງດ້ານຄຸນນະພາບ ບໍ່ໄດ້ຖືກຖາມສະເພາະກ່ຽວກັບຜົນກະທົບຂອງການໃຊ້ຄວາມຮຸນແຮງໃນຄອບຄົວຕໍ່ເດັກ. ເຖິງຢ່າງໃດກໍ່ຕາມ, ແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍບາງຄົນຄືກັນກັບຜູ້ຊາຍ ແລະ ແມ່ຍິງໃນກຸ່ມສົນທະນາໄດ້ສະແດງຄວາມເຫັນກ່ຽວກັບຜົນກະທົບຂອງການໃຊ້ຄວາມຮຸນແຮງ.

*"ເວລາທີ່ພວກເຮົາຜິດກັນ ແລະ ຕີກັນ, ຂ້ອຍຄິດວ່າລູກຕ້ອງຮູ້ ຍ້ອນວ່າລູກໄຫ້ທຸກໆຄັ້ງ, ໂດຍສະເພາະລູກຊາຍຂ້ອຍທີ່ຍັງກິນນົມແມ່ຢູ່."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

*"ລູກຊາຍຂອງຂ້ອຍບໍ່ເຊື່ອຟັງຂ້ອຍ ແລະ ຕີຂ້ອຍເວລາທີ່ບໍ່ໄດ້ໃຈລາວ. ຂ້ອຍບໍ່ຮູ້ວ່າເປັນຫຍັງລາວຈິ່ງເຕະ ແລະ ຕີຂ້ອຍ, ຂ້ອຍພະຍາຍາມເຮັດທຸກຢ່າງ ລວມທັງທ່ານໝໍກໍ່ພະຍາຍາມຊ່ວຍ. ທຸກໆຄົນໃນສາລະວັນ ເວົ້າວ່າເຂົາເຈົ້າບໍ່ເຄີຍເຫັນເດັກນ້ອຍຄົນໃດດື້ສໍ່າລູກຂ້ອຍມາກ່ອນ. ເວລາທີ່ຂ້ອຍໄດ້ຍິນຄົນອື່ນເວົ້າແນວນັ້ນຂ້ອຍຮູ້ສຶກເສຍໃຈ. ເຂົາເຈົ້າບໍ່ຮູ້ວ່າຂ້ອຍຜ່ານຫຍັງມາແດ່. ຂ້ອຍຢ້ານສິ່ງທີ່ລູກຂ້ອຍຈະເປັນເມື່ອຕອນລາວໃຫຍ່ຂຶ້ນ.."*

ໄວໜຸ່ມຊາຍກໍ່ໄດ້ສະແດງຄວາມກັງວົນຂອງຕົນຕໍ່ຜົນກະທົບທີ່ຈະເກີດຂຶ້ນກັບເດັກ.

*"ເວລາທີ່ເຂົາເຈົ້າ [ເດັກ] ເຮັດຜິດ, ຫຼັງຈາກນັ້ນເຂົາເຈົ້າກໍ່ຈະຖືກຕີ. ເວລາທີ່ເຂົາເຈົ້າມີຄອບຄົວເປັນຂອງຕົນເອງ, ເຂົາເຈົ້າກໍ່ຈະເຮັດຄືເກົ່າ."*

ໄວໜຸ່ມຊາຍ, ເຂດຕົວເມືອງ

ໄວໜຸ່ມຊາຍ, ເຂດຊົນນະບົດ

*"ປະຊາຊົນໃນບ້ານບໍ່ສາມາດເຂົ້າໄປຫຍຸ້ງກັບເລື່ອງຄອບຄົວ. ມັນບໍ່ດີ. ຕົວຢ່າງ, ຖ້າພໍ່ແມ່ຕີກັນ, ລູກຂອງເຂົາເຈົ້າກໍ່ຈະອ່ອນແອ ແລະ ອາລົມບໍ່ດີ. ເດັກຈະຄິດວ່າການຜິດຖຽງກັນ ແລະ ການຕີກັນໃນຄອບຄົວເປັນເລື່ອງປົກກະຕິ, ເຂົາເຈົ້າກໍ່ຈະເຮັດແບບດຽວກັນກັບຄອບຄົວຂອງເຂົາ."*

ກຸ່ມຜູ້ຊາຍອາວຸໂສ ບໍ່ສົນໃຈວ່າຈະເກີດຜົນກະທົບແນວໃດຕໍ່ດ້ານຮ່າງກາຍ ແລະ ຈິດໃຈຂອງແມ່ຍິງ. ເຖິງຢ່າງໃດກໍ່ຕາມ, ພວກເຂົາຮູ້ສຶກວ່າພຶດຕິກຳເຫຼົ່ານີ້ຈະເຮັດໃຫ້ເດັກມີບັນຫາ ແລະ ເຮັດໃຫ້ຄອບຄົວແຕກແຍກ, ເຮັດໃຫ້ເດັກກາຍເປັນຜູ້ໃຫຍ່ທີ່ມີບັນຫາໃນອະນາຄົດ.

*"ມັນຈະມີຜົນກະທົບຕໍ່ເດັກ, ເຂົາຈະມີບັນຫາ ແລະ ຈະຮູ້ສຶກດູຖູກ. ບາງຄັ້ງເຂົາເຈົ້າອາດຈະເຫັນພໍ່ແມ່ຂອງເຂົາຕີກັນ ແລະ ໄປລີ້ ແລະ ໄຫ້. ເວລາເຂົາເຈົ້າໄປໂຮງຮຽນ, ເຂົາເຈົ້າອາດຈະບອກໝູ່ວ່າພໍ່ແມ່ຂອງຕົນຕີກັນ."*

ເພດຊາຍອາວຸໂສ, ເຂດຕົວເມືອງ

ຜູ້ຊາຍສູງອາຍຸໄດ້ເວົ້າວ່າ ເດັກຈະອາຍຖ້າວ່າຄອບຄົວຜິດກັນ ແລະ ຈະນໍາໄປສູ່ບັນຫາສັງຄົມ ແລະ ຈະແຍກອອກຈາກຄອບຄົວ.

ຜູ້ໃຫ້ຂໍ້ມູນຫຼັກ, ນາຍບ້ານ, ເຂດຕົວເມືອງ

*"ຄອບຄົວທີ່ມີບັນຫາຈະເຮັດໃຫ້ເດັກກາຍເປັນຄົນຂີ້ລັກ ແລະ ໃຊ້ສິ່ງເສບຕິດ, ຍ້ອນວ່າເຂົາເຈົ້າບໍ່ໄດ້ຮັບຄວາມອົບອຸ່ນຈາກຄອບຄົວ."*

ໄວໜຸ່ມຍິງຄົນໜຶ່ງໃນກຸ່ມສົນທະນາ, ເຊິ່ງເປັນຄົນທີ່ເຕີບໃຫຍ່ຂຶ້ນມາໃນເຮືອນທີ່ມີການໃຊ້ຄວາມຮຸນແຮງ, ກໍ່ຍັງເບິ່ງໂລກໃນແງ່ດີໃນສະຖານະການຂອງລາວ.

*"ເຖິງວ່າແມ່ຂອງຂ້ອຍຈະຢູ່ພາຍໃຕ້ອຳນາດຂອງພໍ່, ມັນເປັນແຮງຄົນບັນດານໃຈໃຫ້ຂ້ອຍຕ້ອງມີການສຶກສາ ແລະ ຫາເງິນເພື່ອຕົນເອງ ແລະ ຊ່ວຍແມ່."*

ໄວໜຸ່ມຍິງ, ເຂດຕົວເມືອງ

ແມ່ຍິງບາງຄົນເວົ້າຢ່າງໝັ້ນໃຈວ່າເຂົາເຈົ້າຈະປົກປ້ອງລູກຂອງເຂົາໄດ້, ຍ້ອນລູກບາງຄົນກໍ່ບໍ່ຢູ່ເຮືອນເວລາພໍ່ແມ່ຜິດກັນ ຫຼື ມີການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ອາໄສຢູ່ບ່ອນອື່ນແຍກຈາກພໍ່ແມ່.

ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ

*"ໃນເວລາທີ່ລູກຍັງນ້ອຍ, ລາວເຄີຍຕີລູກ. ແຕ່ຕອນນີ້ລູກໃຫຍ່ແລ້ວ ລາວເລີຍບໍ່ຕີ ຍ້ອນເຂົາເຈົ້າເປັນໄວໜຸ່ມແລ້ວ. ການຕີລູກຕໍ່ໜ້າຄົນອື່ນເປັນສິ່ງທີ່ໜ້າອັບອາຍຫຼາຍ."*

> *"ຂ້ອຍບໍ່ເຫັນວ່າຈະມີຜົນກະທົບຫຍັງຕໍ່ວຽກ ແລະ ລູກຂອງຂ້ອຍ. ລູກຍັງນ້ອຍຢູ່, ຂ້ອຍຄິດວ່າເຂົາເຈົ້າຍັງບໍ່ຮູ້ຫຍັງ."*
>
> **ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

ໂດຍລວມແລ້ວ ເຫັນວ່າເດັກບໍ່ໄດ້ຮັບຜົນກະທົບຮ້າຍແຮງໃນຫຼາຍກໍລະນີໃຊ້ຄວາມຮຸນແຮງທີ່ເກີດຂຶ້ນໃນເວລາທີ່ເດັກບໍ່ຢູ່ໃນເຮືອນ ຫຼື ນອນຢູ່ຫ້ອງອື່ນ. ມີແມ່ຍິງພຽງຈຳນວນໜຶ່ງເທົ່ານັ້ນທີ່ກັງວົນເລື່ອງລູກຂອງເຂົາຈະຮັບຮູ້ເລື່ອງການໃຊ້ຄວາມຮຸນແຮງ.

> **ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**
>
> *"ຂ້ອຍຄິດວ່າມັນບໍ່ສົ່ງຜົນກະທົບກັບລູກຂ້ອຍດອກ ຍ້ອນຂ້ອຍເບິ່ງແຍງລາວຢ່າງດີ ແລະ ບໍ່ເຄີຍເຮັດໃຫ້ລາວຮູ້ສຶກວ່າລາວດ້ອຍກວ່າເດັກທີ່ມີທັງພໍ່ ແລະ ແມ່. ບໍ່ມີແຕ່ຂ້ອຍທີ່ພົບບັນຫານີ້. ຂ້ອຍຈະເວົ້າກັບລູກຂ້ອຍເວລາທີ່ລາວໃຫຍ່ຂຶ້ນ, ລາວຈະເຂົ້າໃຈ."*

## 8.3 ພາກສົນທະນາ

ໃນການສຳຫຼວດນີ້, ມີ 7 ມາດຖານປະກອບເຂົ້າໃນການຕອບໂຕ້ທາງຮ່າງກາຍ ແລະ ຈິດໃຈ ຄືກັນກັບກັບບັນຫາໃນໂຮງຮຽນ ເຊິ່ງໄດ້ໃຊ້ເປັນຕົວຊີ້ວັດເພື່ອການປະເມີນຜົນກະທົບຕໍ່ເດັກ. ພວກເຂົາໄດ້ເປີດເຜີຍວ່າ ເດັກທີ່ອາໄສຢູ່ກັບແມ່ທີ່ເຄີຍຖືກຄວາມຮຸນແຮງໃນຄອບຄົວມີທ່າອ່ຽງໄດ້ຮັບຄວາມເຈັບປວດຈາກການຝັນຮ້າຍ, ຍ່ຽວໃສ່ບ່ອນນອນ, ອາລົມບໍ່ດີ ແລະ ຫຍຸ້ງຍາກໃນການຮ່ຳຮຽນ. ນອກຈາກນັ້ນ, ການໃຊ້ຄວາມຮຸນແຮງຍັງມີຜົນກະທົບທາງລົບ ຕໍ່ສຸຂະພາບຂອງເດັກ ແລະ ຂະບວນການພັດທະນາຂອງເຂົາເຈົ້າ.

ແມ່ຍິງເກືອບເຄິ່ງໜຶ່ງທີ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ມີລູກທີ່ຮັບຮູ້ໃນກໍລະນີຖືກຄວາມຮຸນແຮງຫຼາຍກວ່າໜຶ່ງຄັ້ງ. ໂດຍການເຫັນເຫດການເຫຼົ່ານັ້ນ, ເດັກອາດຈະຖືກພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍຄົນທີສອງທີ່ຖືກທຳຮ້າຍທາງຈິດໃຈ ແລະ ດ້ານອາລົມ. ເຖິງແມ່ນວ່າເມື່ອເວລາທີ່ເດັກໃຫຍ່ຂຶ້ນ ເຂົາເຈົ້າກໍ່ຈະບໍ່ເຫັນເຫດການ ການໃຊ້ຄວາມຮຸນແຮງໃນຄອບຄົວແລ້ວກໍ່ຕາມ, ຜົນກະທົບຈະຢູ່ໃນຊ່ວງຊີວິດການເປັນຜູ້ໃຫຍ່ຂອງເຂົາເຈົ້າ. ຫຼັກຖານສະແດງໃຫ້ເຫັນວ່າເດັກຊາຍທີ່ເຫັນເຫດການທີ່ພໍ່ທຳຮ້າຍແມ່ ຈະເຮັດໃຫ້ເດັກຊາຍຄົນນັ້ນມີຄວາມສ່ຽງໃນການທີ່ຈະໄປໃຊ້ຄວາມຮຸນແຮງຕໍ່ຄູ່ຮັກຂອງລາວໃນໄວໜຸ່ມ ແລະ ໃຊ້ຄວາມຮຸນແຮງຕໍ່ຄູ່ຮ່ວມຊີວິດໃນຕອນເປັນຜູ້ໃຫຍ່.[20] ເດັກຍິງທີ່ເຫັນເຫດການ ການໃຊ້ຄວາມຮຸນແຮງໃນຄອບຄົວຈະເຊື່ອວ່າການໃຊ້ຄວາມຮຸນແຮງເປັນສິ່ງທີ່ຍອມຮັບໄດ້ ແລະ ອາດຈະບໍ່ສາມາດປົກປ້ອງຕົນເອງຈາກການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລ້ວແມ່ຍິງເຫຼົ່ານັ້ນອາດຈະໂທດຕົວເອງທີ່ເປັນຜູ້ເຮັດໃຫ້ມີສະຖານະການທີ່ມີການໃຊ້ຄວາມຮຸນແຮງເກີດຂຶ້ນ ແລະ ຍັງອົດກັ້ນຕໍ່ພຶດຕິກຳຂອງຄູ່ຮ່ວມຊີວິດທີ່ບໍ່ໃຫ້ກຽດຕົນເອງ. ການວິໄຈສະແດງໃຫ້ເຫັນວ່າແມ່ຍິງທີ່ເຕີບໃຫຍ່ຂຶ້ນມາໃນເຮືອນທີ່ມີການໃຊ້ຄວາມຮຸນແຮງໃນຄອບຄົວ ແມ່ນຈະມີອັດຕາສ່ວນດ້ານຄວາມສ່ຽງທີ່ສູງຂຶ້ນທີ່ຈະກາຍເປັນຜູ້ຖືກເຄາະຮ້າຍຂອງການໃຊ້ຄວາມຮຸນແຮງໃນຕອນເປັນຜູ້ໃຫຍ່.[21]

ການເຊື່ອມໂຍງກັນລະຫວ່າງການໃຊ້ຄວາມຮຸນແຮງ ແລະ ປະສົບການໃນໄວເດັກກໍ່ໄດ້ຖືກຍົກຂຶ້ນມາໃນການສຳຫຼວດນີ້. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ແມ່ນມີທ່າອ່ຽງທີ່ມີແມ່ທີ່ເຄີຍຖືກຕີຈາກຄູ່ຮ່ວມຊີວິດ, ຜົວ ຫຼື ຄູ່ຮ່ວມຊີວິດທີ່ແມ່ຂອງລາວເຄີຍຖືກຕີໂດຍຄູ່ຮ່ວມຊີວິດ ແລະ ຄູ່ຮ່ວມຊີວິດທີ່ເຄີຍຖືກຕີໃນຕອນເປັນເດັກ. ເດັກທີ່ເຕີບໃຫຍ່ຂຶ້ນໃນຄອບຄົວທີ່ມີການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຈາກຄູ່ຮ່ວມຊີວິດ ຈະຮຽນຮູ້ໃນການຍອມຮັບພຶດຕິກຳການໃຊ້ຄວາມຮຸນແຮງນີ້ ແລະ ອາດຈະກາຍເປັນຜູ້ຖືກເຄາະຮ້າຍ (ອົງການອະນາໄມໂລກ, 2010). ນອກຈາກນີ້ ການໃຊ້ຄວາມຮຸນແຮງໃນໄວເດັກກໍ່ຍັງພົວພັນເຖິງຜູ້ກະທຳຜິດໃນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼືທາງເພດ ຈາກຄູ່ຮ່ວມຊີວິດ ການໃຊ້ຄວາມຮຸນແຮງທາງຮ່າງກາຍ, ທາງເພດ ແລະ ທາງຈິດໃຈ, ການປ່ອຍປະລະເລີຍ ແລະ ການເຫັນເຫດການທີ່ແມ່ເຄີຍຖືກຄວາມຮຸນແຮງ (Fulu ພ້ອມດ້ວຍຄະນະ., 2013). ດັ່ງນັ້ນ ທຸກຮູບການໃນການໃຊ້ຄວາມຮຸນແຮງໃນໄວເດັກ, ລວມທັງເດັກຊາຍທີ່ມີທ່າອ່ຽງທີ່ຈະກາຍເປັນຜູ້ກະທຳຜິດໃນການໃຊ້ຄວາມຮຸນແຮງ, ດັ່ງນັ້ນ ຈຶ່ງຄວນມີການປ້ອງກັນຕັ້ງແຕ່ໃນໄວເດັກ ແລະ ໄວໜຸ່ມ. ຄອບຄົວທີ່ດີ, ແລະ ການສ້າງສະພາບແວດລ້ອມທີ່ປາສະຈາກການໃຊ້ຄວາມຮຸນແຮງພາຍໃນໂຮງຮຽນຈຶ່ງເປັນສິ່ງທີ່ຕ້ອງສົ່ງເສີມ.

ແມ່ຍິງທີ່ໃຫ້ສຳພາດໃນການສຳຫຼວດທາງດ້ານຄຸນນະພາບໄດ້ເວົ້າວ່າ ມີຜົນກະທົບຫຼາຍຢ່າງຕໍ່ລູກຊາຍຂອງລາວເຊິ່ງເຮັດໃຫ້ ລູກຮ້ອງໄຫ້, ໂດຍສະເພາະໃນເວລາທີ່ລາວ ແລະ ຜົວ ຕີກັນ. ແມ່ຍິງອີກຄົນໜຶ່ງສະແດງຄວາມກັງວົນສຳລັບບັນຫາພຶດຕິກຳຂອງລູກຊາຍຂອງລາວ, ຍ້ອນສະພາບແວດລ້ອມທີ່ມີການໃຊ້ຄວາມຮຸນແຮງທີ່ຢູ່ອ້ອມຕົວລາວໃນຊີວິດປະຈຳວັນ. ຜູ້ຊາຍທີ່ຢູ່ໃນກຸ່ມສົນທະນາ ກໍ່ໄດ້ສະແດງຄວາມກັງວົນໃນເລື່ອງວົງຈອນຂອງການໃຊ້ຄວາມຮຸນແຮງທີ່ຈະທຳຮ້າຍຄົນຮຸ່ນຕໍ່ໄປ. ເຖິງວ່າບັນດາກໍລະນີການໃຊ້ຄວາມຮຸນແຮງຈະຍັງຖືກພິຈາລະນາວ່າ "ເປັນບັນຫາໃນຄອບຄົວ" ກໍ່ຕາມ, ຜູ້ເຂົ້າຮ່ວມເຫັນວ່າ ມັນຮ້າຍແຮງກວ່ານັ້ນເມື່ອມີເດັກມາກ່ຽວຂ້ອງ. ເຖິງຢ່າງໃດກໍ່ຕາມ, ຍັງບໍ່ມີການປະຕິບັດງານສະເພາະໃນການປົກປ້ອງເດັກ ແລະ ປ້ອງກັນການໃຊ້ຄວາມຮຸນແຮງໃນຄອບຄົວ ທີ່ໄດ້ຮັບການແກ້ໄຂ ແລະ ມີຂໍ້ແນະນຳ.

---

[20] Swerdlow-Freed, D. H. ມາດຕະການຄຸ້ມຄອງເດັກ: 'ການໃຊ້ຄວາມຮຸນແຮງໃນຄອບຄົວ ຕໍ່ແມ່ຍິງ ແລະ ເດັກ', ສາມາດເຂົ້າເບິ່ງໄດ້ທີ່: http://www.drswerdlow-freed.com/pdf/child-custody/DOMESTIC%20VIOLENCE%20AGAINST%20WOMEN%20AND%20CHILDREN.2011.pdf

[21] Ibid.

໙

# ຍຸດທະສາດການ ຈັດການ ແລະ ແກ້ໄຂ ຂອງແມ່ຍິງຕໍ່ການ ຖືກຄວາມຮຸນແຮງ ຈາກຄູ່ຮ່ວມຊີວິດ

# ພາກທີ 9. ຍຸດທະສາດການຈັດການ ແລະ ແກ້ໄຂ ຂອງແມ່ຍິງຕໍ່ການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ

**ຜົນໄດ້ຮັບຫຼັກຂອງການສໍາຫຼວດ:**

- ໃນຈໍານວນແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼື ທາງເພດຈາກຄູ່ຮ່ວມຊີວິດ, 43.2% ບໍ່ເຄີຍບອກຄົນອື່ນ. ໃນກຸ່ມແມ່ຍິງທັງໝົດທີ່ລາຍງານການໃຊ້ຄວາມຮຸນແຮງ, ບຸກຄົນທີ່ເຂົາເຈົ້າໄປຫາຄື ສະມາຊິກຄອບຄົວ ເຊັ່ນ ພໍ່ແມ່ (34.2%) ແລະ ອ້າຍເອື້ອຍນ້ອງ (36.9%), ຫຼື ໝູ່ເພື່ອນ (19.5%).
- ພຽງ 28.6% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ທີ່ໄປຂໍຄວາມຊ່ວຍເຫຼືອຈາກອໍານາດການປົກຄອງທ້ອງຖິ່ນ, 18.9% ໄປຂໍຄວາມຊ່ວຍເຫຼືອຈາກຜູ້ນໍາຂັ້ນທ້ອງຖິ່ນ ແລະ 11.7% ຈາກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. ມີແມ່ຍິງຈໍານວນໜ້ອຍເທົ່ານັ້ນທີ່ເຂົ້າຫາອົງການຈັດຕັ້ງຂອງແມ່ຍິງ, ຕໍາຫຼວດ ຫຼື ແພດໝໍ.
- ເຫດຜົນຫຼັກທີ່ຜູ້ຖືກເຄາະຮ້າຍໄປຂໍຄວາມຊ່ວຍເຫຼືອ ແມ່ນຍ້ອນເຂົາເຈົ້າ "ບໍ່ສາມາດອົດທົນກັບ [ການໃຊ້ຄວາມຮຸນແຮງອີກຕໍ່ໄປ]" ມີ (64.2%) ແລະ ຍ້ອນ "ໄດ້ຮັບການຊຸກຍູ້ຈາກຄອບຄົວ ຫຼື ໝູ່ເພື່ອນ" (39.7%). ບາງຄົນຖືກຜົວ ຫຼື ຄູ່ຮ່ວມຊີວິດ ຂົ່ມຂູ່ວ່າຈະຂ້າໃຫ້ຕາຍ ຫຼື ບາດເຈັບສາຫັດ. ເຫດຜົນຕົ້ນຕໍທີ່ບໍ່ໄດ້ໄປຂໍການຊ່ວຍເຫຼືອແມ່ນຍ້ອນ "ຄວາມອັບອາຍ" (36.6%) ແລະ "ເຫັນວ່າເປັນເລື່ອງເລັກນ້ອຍ" (ຄິດວ່າມັນບໍ່ຮ້າຍແຮງ) (35.3%). ແມ່ຍິງບາງຄົນຖືກບັງຄັບໃຫ້ຍຸຕິຄວາມສໍາພັນກັບຄູ່ຮ່ວມຊີວິດ. ໂດຍລວມແລ້ວແມ່ຍິງຫຼາຍໆ ຄົນ, ໂດຍສະເພາະໃນເຂດຊົນນະບົດ, ຖືກຄອບຄົວບອກ ຫຼື ຜູ້ນໍາຊຸມຊົນບອກໃຫ້ອົດທົນ ແລະ ໃຫ້ແກ້ໄຂບັນຫາດັ່ງກ່າວພາຍໃນຄອບຄົວ.
- 15.2% ຂອງແມ່ຍິງທີເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼື ທາງເພດໃນເຂດຕົວເມືອງ ແລະ ຊົນນະບົດ ໄດ້ໜີອອກຈາກເຮືອນໜຶ່ງຄັ້ງ, ໃນຂະນະທີ່ 3.1% ຂອງແມ່ຍິງໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ໄດ້ໜີອອກຈາກເຮືອນໜຶ່ງຄັ້ງ. ເຫດຜົນຫຼັກທີ່ໜີອອກຈາກເຮືອນແມ່ນຍ້ອນເຂົາເຈົ້າບໍ່ສາມາດທົນໄດ້ອີກຕໍ່ໄປເຖິງ (74.5%) ແລະ ຢ້ານທີ່ຈະຖືກຂ້າ (17.9%). ໃນບັນດາແມ່ຍິງທີ່ໜີອອກຈາກເຮືອນ, ເຫດຜົນຫຼັກທີ່ເຂົາເຈົ້າກັບມາກໍ່ຍ້ອນບໍ່ຢາກແຍກຈາກລູກ (66.1%) ແລະ ຫວັງວ່າຄູ່ຮ່ວມຊີວິດຈະມີການປ່ຽນແປງ (38.6%).
- ມີແມ່ຍິງທີ່ຖືກຄວາມຮຸນແຮງເຖິງ21.2% ໄດ້ສູ້ຄືນຢ່າງໜ້ອຍໜຶ່ງຄັ້ງ ແລະ ແມ່ຍິງຫຼາຍກວ່າເຄິ່ງໜຶ່ງຄື(51%) ໄດ້ລາຍງານວ່າຄວາມຮຸນແຮງໄດ້ຫຼຸດລົງພາຍຫຼັງທີ່ໄດ້ຕໍ່ສູ້ຄືນ.
- ກ່ຽວກັບຄວາມຮັບຮູ້ລະບົບກົດໝາຍທີ່ກ່ຽວຂ້ອງເຖິງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລ້ວ, , ມີແມ່ຍິງເຂດຊົນນະບົດພຽງ 16.9% ແລະ ແມ່ຍິງເຂດຊົນ ພຽງ 5.4% ແລະ ແມ່ຍິງເຂດຊົນນະບົດບໍ່ມີເສັ້ນທາງພຽງ 1.5% ທີ່ຮັບຮູ້ກ່ຽວກັບກົດໝາຍພັດທະນາ ແລະ ປົກປ້ອງແມ່ຍິງ. ແມ່ຍິງທີ່ມີການສຶກສາສູງກວ່າມີຄວາມຮູ້ກ່ຽວກັບກົດໝາຍອື່ນທີ່ກ່ຽວຂ້ອງ, ແມ່ຍິງທີ່ມີການສຶກສາສູງຂັ້ນໄປລະດັບຊັ້ນສູງ ຫຼື ທຽບເທົ່າແມ່ນມີຄວາມຮູ້້ານກົດໝາຍດີກວ່າຄືມີຄວາມຮູ້ (33.4%) ເຊິ່ງສູງກວ່າແມ່ຍິງທີ່ມີການສຶກສາລະດັບປະຖົມທີ່ມີພຽງ (5%) ແລະ ແມ່ຍິງບໍ່ມີການສຶກສາ (1.1%). ລະດັບຄວາມຮູ້ດ້ານກົດໝາຍຂອງແມ່ຍິງແມ່ນກ່ຽວຂ້ອງກັບເຂດທີ່ແມ່ຍິງຢູ່ ແລະ ລະດັບການສຶກສາທີ່ມີຍິງມີ.

## 9.1 ພາກສະເໜີ

ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງຂໍຈາກຄູ່ຮ່ວມຊີວິດ ໄດ້ຕອບໂຕ້ການໃຊ້ຄວາມຮຸນແຮງຕ່າງໆດ້ວຍຫຼາຍວິທີ ເຊັ່ນ: ຂໍຄວາມຊ່ວຍເຫຼືອ, ຮຽກຮ້ອງການປົກປ້ອງ ແລະ ຢູ່ໃຫ້ຫ່າງຈາກຜູ້ກະທໍາຜິດ (Sabina & Tindale, 2008). ໃນບົດສໍາຫຼວດທີ່ຜ່ານມາໄດ້ສຸມໃສ່ວິທີການທີ່ແຕກຕ່າງກັນຂອງແມ່ຍິງໃນການໃຊ້ບໍລິການຂໍຄວາມຊ່ວຍເຫຼືອ ເຊັ່ນ ບ່ອນລີ້ໄພ, ບ້ານພັກສຸກເສີນ ຫຼື ສູນໃຫ້ຄໍາປຶກສາ, ເຊິ່ງມີພຽງສ່ວນໜ້ອຍໜຶ່ງເທົ່ານັ້ນທີ່ຈະຮູ້ຈັກຍຸດທະສາດໃນການຮັບມື, ຫຼື ການຕອບໂຕ້ການໃຊ້ຄວາມຮຸນແຮງ ໃນຊີວິດປະຈໍາວັນ, ແລະ ພິເສດ, ການຊ່ວຍເຫຼືອຈາກຄອບຄົວ ຫຼື ເຄືອຄ່າຍຂອງໝູ່ເພື່ອນລວ ມທັງອົງການຈັດຕັ້ງທີ່ເປັນທາງການ ເຊັ່ນ:ອົງການຈັດຕັ້ງຂອງ ລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ (Garcia-Moreno et al., 2005).

ບົດນີ້ໄດ້ຄົ້ນຄວ້າ ກ່ຽວກັບການຂໍຄວາມຊ່ວຍເຫຼືອເພື່ອແກ້ໄຂບັນຫາການໃຊ້ຄວາມຮຸນແຮງຂອງແມ່ຍິງ ຖ້າໄດ້ຂໍການຊ່ວຍເຫຼືອ ແມ່ຍິງຈະຂໍການຊ່ວຍເຫຼືອຈາກໃຜ ແລະ ມີປັດໄຈຫຍັງແດ່ທີ່ເຮັດໃຫ້ແມ່ຍິງຕັດສິນໃຈໄປຂໍຄວາມຊ່ວຍເຫຼືອ? ໃນການສໍາຫຼວດທາງດ້ານປະລິມານ, ແມ່ຍິງທີ່ໜີອອກຈາກເຮືອນຖືກຖາມກ່ຽວກັບຄວາມຖີ່ ແລະ ເຫດຜົນໃນການໜີອອກຈາກເຮືອນ ແລະ ການກັບຄືນມາເຮືອນ. ຫຼັງຈາກຄໍາຖາມເຫຼົ່ານີ້ ຜູ້ໃຫ້ສໍາພາດກໍ່ຖືກຖາມ

ວ່າ ພວກເຂົາຮັບຮູ້ບັນດາກົດໝາຍທີ່ກ່ຽວຂ້ອງ ໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ລູກຂອງເຂົາເຈົ້າ ຫຼື ບໍ່. ຜົນການສໍາຫຼວດເຫຼົ່ານີ້ມີຄວາມສໍາຄັນຫຼາຍຕໍ່ຄວາມເຂົ້າໃຈເຖິງຊ່ອງຫວ່າງໃນກົດໝາຍທີ່ມີຢູ່, ຄວາມຮັບຮູ້ ແລະ ການນໍາໃຊ້ກົດໝາຍ ແລະ ລະບົບສານ ເຊິ່ງຈະເປັນປະໂຫຍດຫຼາຍໃນການພັດທະນາລະບົບກົດໝາຍ ແລະ ແຜນດໍາເນີນງານປ້ອງກັນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ທີ່ຈະຖືກປັບປຸງເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ.

## 9.2 ໃຜຈະຮັບແຈ້ງຄວາມໃນກໍລະນີມີການໃຊ້ຄວາມຮຸນແຮງເກີດຂຶ້ນ?

ເພື່ອຍົກສູງການຮັບຮູ້ກ່ຽວກັບການລາຍງານຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ພາກສ່ວນທີ່ໄດ້ຮັບການລາຍງານ, ຜູ້ໃຫ້ສໍາພາດໄດ້ຮັບຄໍາຖາມ ທີ່ມີຄໍາຕອບທີ່ມີຫຼາຍທາງເລືອກ. ເກືອບເຄິ່ງໜຶ່ງຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດຈາກຄູ່ຮ່ວມຊີວິດເຖິງ (43.2%) ແມ່ນບໍ່ເຄີຍບອກໃຜ (ຮູບທີ 9.1). ໃນບັນດາແມ່ຍິງທີ່ບອກໃຫ້ບາງຄົນຮູ້, ບຸກຄົນທໍາອິດແມ່ນສະມາຊິກໃນຄອບຄົວເຊັ່ນ ພໍ່ແມ່ເຖິງ (34.2%) ແລະ ອ້າຍເອື້ອຍນ້ອງ (35.9%), ຮອງລົງມາແມ່ນໝູ່ຄູ່ມີ (19.5%), ນ້າບ່າວ,ລຸງ ຫຼື ນ້າສາວ, ປ້າ (17.9%) ແລະ ສະມາຊິກຂອງຄອບຄົວຜົວ ຫຼື ຄູ່ຮ່ວມຊີວິດ. ປະມານ 10% ໄດ້ບອກອໍານາດການປົກຄອງທ້ອງຖິ່ນ ແລະ ເພື່ອນບ້ານ (11.9% ແລະ 9.6%, ຕາມລໍາດັບ). ມີແມ່ຍິງຈໍານວນໜ້ອຍໜຶ່ງເທົ່ານັ້ນທີ່ແຈ້ງຕໍາຫຼວດ, ອົງການຈັດຕັ້ງຂອງແມ່ຍິງ ຫຼື ອົງການຈັດຕັ້ງທາງສັງຄົມຫຼື ໂຮງໝໍ. ກໍລະນີສ່ວນໃຫຍ່, ສະມາຊິກຄອບຄົວໂດຍກົງແມ່ນທາງເລືອກທໍາອິດທີ່ແມ່ຍິງບອອກໃນເວລາມີບັນຫາກັບຄູ່ຮ່ວມຊີວິດ.

ເຊິ່ງຄ້າຍຄືກັບກຸ່ມແມ່ຍິງທີ່ຮ້ອງຂໍການຊ່ວຍເຫຼືອ, ຄື 34.3% ແມ່ນໄດ້ຮັບການຊ່ວຍເຫຼືອຈາກພໍ່ແມ່, 34.5% ຮັບການຊ່ວຍເຫຼືອຈາກ ອ້າຍເອື້ອຍນ້ອງ, ຮອງລົງມາແມ່ນຈາກໝູ່ເພື່ອນມີ (20.2%), ນ້າບ່າວ,ລຸງ ຫຼື ນ້າສາວ,ປ້າ (16.4%) ແລະ ສະມາຊິກຄອບຄົວຂອງຄູ່ຮ່ວມຊີວິດ (16.2%). ປະມານ 10% ໄດ້ຮັບການຊ່ວຍເຫຼືອຈາກນາຍບ້ານ ແລະ ເພື່ອນບ້ານໃກ້ຄຽງ (10.6% ແລະ 9.8%, ຕາມລໍາດັບ), ບັນດາພະນັກງານອື່ນໆ ເຊັ່ນ ຕໍາຫຼວດ, ອົງຂອງຈັດຕັ້ງຂອງແມ່ຍິງ, ແລະ ແພດທີ່ຢູ່ໃນສຸກສາລາ ຫຼື ໂຮງໝໍ ບໍ່ໄດ້ໃຫ້ການຊ່ວຍເຫຼືອຕໍ່ແມ່ຍິງຜູ້ຖືກເຄາະຮ້າຍຫຼາຍພໍເທົ່າໃດ ເຊິ່ງມີພຽງ (2.8% ແລະ 0.9%).

ຮູບທີ 9.1 ອັດຕາສ່ວນຂອງແມ່ຍິງທີ່ໄດ້ບອກໃຫ້ຄົນອື່ນກ່ຽວກັບປະສົບທີ່ຖືກຄວາມຮຸນແຮງ ແລະ ໄດ້ຮັບການຊ່ວຍເຫຼືອຈາກບັນດາແມ່ຍິງທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼື ທາງເພດ, ສປປ ລາວ, ປີ 2014 (ຈໍານວນ=470)




ຮູບທີ 9.2 ໄດ້ສະແດງອັດຕາສ່ວນຂອງແມ່ຍິງທີ່ໄດ້ຂໍການຊ່ວຍເຫຼືອຈາກອໍານາດການປົກຄອງທ້ອງຖິ່ນເມື່ອຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ. ຜູ້ຖືກເຄາະຮ້າຍທັງໝົດທີ່ຂໍການຊ່ວຍເຫຼືອຈາກອໍານາດການປົກຄອງບ້ານແມ່ນ 18.9%, ຖັດມາແມ່ນຈາກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານມີ (11.7%). ແມ່ຍິງຈໍານວນໜຶ່ງເຂົ້າຫາອົງການຈັດຕັ້ງຂອງແມ່ຍິງເຊິ່ງມີ (4.3%), ຫາຕໍາຫຼວດ (3.8%) ແລະ ສຸກສາລາ (2.6%). ຢ່າງໃດກໍ່ຕາມ, ເກືອບບໍ່ມີໃຜເລີຍທີ່ນໍາຄະດີດັ່ງກ່າວຂຶ້ນສູ່ສານ ຫຼື ເຂົ້າຫາການແນະນໍາທາງດ້ານກົດໝາຍ. ເຖິງແມ່ນວ່າ ການຂໍຄວາມຊ່ວຍເຫຼືອຈາກ

ອຳນາດການປົກຄອງຈະມີຈຳກັດ, ການລາຍງານທັງໝົດທີ່ໄດ້ຮັບການຊ່ວຍເຫຼືອທີ່ໜ້າພໍໃຈ. ສິ່ງທີ່ສຳຄັນແມ່ນ ແມ່ຍິງສ່ວນໃຫຍ່ ເຖິງ (71.4%) ທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ບໍ່ໄດ້ຂໍການຊ່ວຍເຫຼືອຈາກອຳນາດການປົກຄອງບ້ານ.

ຮູບທີ 9.2 ອັດຕາສ່ວນຂອງແມ່ຍິງທີ່ຮຽກຮ້ອງການຊ່ວຍເຫຼືອ ຈາກອົງການ/ບຸກຄົນ ໃນອຳນາດການປົກຄອງ, ໃນບັນດາແມ່ຍິງທີ່ລາຍງານທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼື ທາງເພດ, ສປປ ລາວ, ປີ 2014 (ຈຳນວນ=470)




ໝາຍເຫດ: ສາມາດໃຊ້ຫຼາຍຄຳຕອບໄດ້

ຫຼັງຈາກເຫດການຂອງການໃຊ້ຄວາມຮຸນແຮງ, ແມ່ຍິງທີ່ເຂົ້າຮ່ວມການສຳພາດແບບເຈາະຈົ້ມໄດ້ເວົ້າວ່າ ເຂົາເຈົ້າຂໍການຊ່ວຍເຫຼືອຈາກຄອບຄົວ ແລະ ໝູ່ເພື່ອນ. ຖ້າຜົວຍັງສືບຕໍ່ໃຊ້ຄວາມຮຸນແຮງ ແລະ ແມ່ຍິງສາມາດໄປຫາຄອບຄົວຍາດພີ່ນ້ອງ ຫຼື ພໍ່ແມ່ຂອງຜົວ ກໍ່ຈະເຮັດໃຫ້ມີການຍຸຕິການປະທະດັ່ງກ່າວໄດ້.

***"ຂ້ອຍໄປລົມກັບອ້າຍ ແລະ ເອື້ອຍຂອງຂ້ອຍ. ເຂົາເຈົ້າຊ່ວຍຂ້ອຍໄດ້. ພວກເຮົາບໍ່ໄດ້ບອກເລື່ອງນີ້ໃຫ້ຄົນອື່ນຮູ້ເລີຍ, ຕັ້ງແຕ່ມີເຫດການດັ່ງກ່າວເກີດຂຶ້ນ ພຽງຄັ້ງດຽວ ແລະ ລາວກໍ່ບໍ່ໄດ້ຕີ ຫຼື ເຮັດຫຍັງໃສ່ຂ້ອຍອີກເລີຍ. ລາວຕີປະຕູຊື່ໆ, ອ້າຍເອື້ອຍ ບອກໃຫ້ພວກຂ້ອຍໄປລົມກັນເພື່ອຈະປັບຄວາມເຂົ້າໃຈເຊິ່ງກັນ ແລະ ກັນ. ອ້າຍຂອງຂ້ອຍບໍ່ຢາກໃຫ້ບັນຫານີ້ບານປາຍ, ພຽງແຕ່ພະຍາຍາມໃຫ້ອະໄພ ແລະ ປັບຕົວເຂົ້າຫາກັນເພື່ອຄອບຄົວ."***

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

ໃນທາງກົງກັນຂ້າມ, ເວລາທີ່ແມ່ຍິງທີ່ແຕ່ງດອງແລ້ວໄດ້ເວົ້າເລື່ອງສະພາບການຂອງຕົນເອງໃຫ້ຄົນໃດຄົນໜຶ່ງຟັງ, ມີຫຼາຍກໍລະນີ ຄອບຄົວ ແລະ ໝູ່ເພື່ອນ ມັກຈະບອກໃຫ້ເຂົາເຈົ້າອົດທົນ ແລະ ຢູ່ກັບຄູ່ຮ່ວມຊີວິດຕໍ່ໄປ. ເຖິງແມ່ນວ່າຈະຖືກຄວາມຮຸນແຮງທີ່ໜັກໜ່ວງ, ແມ່ຍິງຍັງຖືກປຸກລະດົມໃຫ້ສືບຕໍ່ຢູ່ຮ່ວມກັບຄູ່ຮ່ວມຊີວິດຂອງເຂົາເຈົ້າຕໍ່ໄປ.

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

***"ເຂົາເຈົ້າແນະນຳໃຫ້ຂ້ອຍອົດທົນ ແລະ ພະຍາຍາມລົມກັນດີໆ."***

***"ຕອນທຳອິດທີ່ຂ້ອຍຮູ້ບັນຫານີ້ [ເມຍນ້ອຍ] ແລະ ລາວກໍ່ຕີຂ້ອຍ, ຂ້ອຍບອກໝູ່ຂ້ອຍ ແລະ ເຂົາເຈົ້າບອກຂ້ອຍວ່າໃຫ້ອົດທົນ ແລະ ບໍ່ຕ້ອງບອກໃຜ, ຍ້ອນວ່າມັນເປັນເລື່ອງໜ້າອາຍ, ຂ້ອຍເລີຍເກັບສິ່ງເຫຼົ່ານີ້ໄວ້ໃນໃຈ ຈົນເຮັດໃຫ້ຂ້ອຍກິນບໍ່ໄດ້ນອນບໍ່ຫຼັບ. ຖ້າຂ້ອຍກິນເຂົ້າໄປ, ຂ້ອຍກໍ່ຮາກອອກມາ. ຂ້ອຍຮູ້ສຶກຄືຂ້ອຍຊິຕາຍ."***

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**

## 9.3 ເຫດຜົນທີ່ແມ່ຍິງຂໍຄວາມຊ່ວຍເຫຼືອ ຫຼື ບໍ່ຂໍຄວາມຊ່ວຍເຫຼືອ

ເຫດຜົນຫຼັກຂອງແມ່ຍິງທີ່ຖືກຄວາມຮຸນແຮງ ຕັດສິນໃຈຂໍຄວາມຊ່ວຍເຫຼືອ ຍ້ອນວ່າເຂົາເຈົ້າບໍ່ສາມາດທົນໄດ້ອີກຕໍ່ໄປ ເຖິງ (64.2%) ແລະ ຍ້ອນຖືກຊຸກຍູ້ຈາກຄອບຄົວ ຫຼື ໝູ່ເພື່ອນໃຫ້ໄປຂໍການຊ່ວຍເຫຼືອ ມີ(39.7%). ເຫດຜົນອື່ນແມ່ນຍ້ອນຖືກຂົ່ມຂູ່ຈາກຄູ່ຮ່ວມຊີວິດ (14.6%) ແລະ ຍ້ອນຖືກບາດເຈັບສາຫັດ (11.4%) (ຕາລາງທີ 9.1). ສາເຫດທີ່ບໍ່ໄດ້ຂໍການຊ່ວຍເຫຼືອແມ່ນ ຍ້ອນຄວາມອັບອາຍໃນການເປີດເຜີຍການໃຊ້ຄວາມຮຸນແຮງ (36.6%), ເຫັນວ່າເປັນເລື່ອງບໍ່ສຳຄັນ (ບໍ່ຮ້າຍແຮງ)(35.3%), ຢ້ານເປັນມົນທິນຕໍ່ຄອບຄົວ (16.4%), ຢ້ານໄດ້ແຍກຈາກຄູ່ຮ່ວມຊີວິດ (16.3%) ແລະ ບໍ່ຢາກແຍກຈາກລູກ (8.5%).

**ຕາລາງທີ 9.1 ເຫດຜົນໃນການຂໍ ຫຼື ບໍ່ຂໍ ຄວາມຊ່ວຍເຫຼືອຈາກອົງການຈັດຕັ້ງຕ່າງໆ ໃນກຸ່ມແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ໃນ ສປປ ລາວ, ປີ 2014 (ຈຳນວນ=346)**

| ເຫດຜົນຫຼັກທີ່ໄປຂໍຄວາມຊ່ວຍເຫຼືອ (ຈຳນວນ=123) | | ເຫດຜົນຫຼັກທີ່ບໍ່ຂໍຄວາມຊ່ວຍເຫຼືອ | |
|---|---|---|---|
| ຖືກຊຸກຍູ້ຈາກໝູ່ເພື່ອນ ຫຼື ຄອບຄົວ | 39.7% | ບໍ່ຮູ້ ຫຼື ບໍ່ຕອບ | 2.6% |
| ບໍ່ສາມາດທົນໄດ້ອີກຕໍ່ໄປ | 64.2% | ຢ້ານການຂົ່ມຂູ່/ຜົນທີ່ຕາມມາ | 7.3% |
| ຖືກບາດເຈັບສາຫັດ | 11.4% | ເຫັນເປັນເລື່ອງບໍ່ສຳຄັນ | 35.3% |
| ຖືກຂົ່ມຂູ່ຈະຂ້າໃຫ້ຕາຍ | 14.6% | ຄວາມອັບອາຍ | 36.6% |
| ຖືກຂົ່ມຂູ່ວ່າຈະຕີລູກ | 6.3% | ບໍ່ເຊື່ອວ່າຈະມີໃຜຊ່ວຍໄດ້ | 3.4% |
| ເຫັນລູກເຈັບ | 6.4% | ຢ້ານຄວາມສຳພັນຢຸດຕິລົງ | 16.3% |
| ຖືກໄລ່ອອກຈາກເຮືອນ | 2.4% | ຢ້ານເສຍລູກ | 8.5% |
| ຢ້ານຕົນເອງຈະຂ້າສາມີ | 3.7% | ຢ້ານຄອບຄົວເສື່ອມເສຍຊື່ສຽງ | 16.4% |
| ຢ້ານຜົວຈະຂ້າຕົນເອງ | 11.7% | ບໍ່ຮູ້, ບໍ່ມີທາງອອກ | 2.6% |
| ອື່ນໆ | 14.7% | ອື່ນໆ | 20.1% |

ໝາຍເຫດ: ສາມາດຕອບໄດ້ຫຼາຍຂໍ້

ໃນການສຳຫຼວດທາງດ້ານຄຸນນະພາບ ກໍ່ພົບຜົນການສຳຫຼວດທີ່ໃກ້ຄຽງກັນ. ໃນຫຼາຍໆ ກໍລະນີ, ບໍ່ໄດ້ມີການຮ້ອງຂໍຄວາມຊ່ວຍເຫຼືອສຸກເສີນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ຍ້ອນຢ້ານມີມົນທິນໃນຊີວິດການແຕ່ງດອງ. ຕ່າງກັບຜົນການສຳຫຼວດທາງດ້ານປະລິມານ, ໄວໜຸ່ມຍິງບໍ່ມັກບອກໝູ່ຂອງລາວຍ້ອນຢ້ານຖືກຈົ່ມຂວັນ. ດ້ວຍເຫດນີ້ ແມ່ຍິງສ່ວນຫຼາຍຈຶ່ງຮູ້ສຶກປອດໄພທີ່ສຸດໃນການລົມກັບພໍ່ແມ່, ແຕ່ບາງຄົນກໍ່ບໍ່ແນ່ໃຈວ່າພໍ່ແມ່ຈະເຊື່ອ ຫຼື ບໍ່ໃນກໍລະນີການຂົ່ມຂືນໃນຄູ່ບ່າວສາວ.

ແມ່ຍິງບາງຄົນເປີດເຜີຍໃນການສຳພາດແບບເຈາະຈົງ ວ່າບໍ່ໄດ້ເວົ້າກ່ຽວກັບປະສົບການຂອງພວກເຂົາມາຫຼາຍເດືອນແລ້ວ ຫຼື ບາງຄົນບໍ່ເຄີຍເວົ້າເລີຍ (ກ່ອນການໃຫ້ສຳພາດ), ຢ້ານຈະເຮັດໃຫ້ພາບລັກຂອງຕົນເອງ ຫຼື ຂອງຜົວບໍ່ດີ. ຄວາມອັບອາຍຂາຍໜ້າຂອງແມ່ຍິງທີ່ຖືກຄວາມຮຸນແຮງແມ່ນມີຫຼັກຖານ ແລະ ຜູ້ຖືກເຄາະຮ້າຍບາງຄົນບໍ່ເປີດເຜີຍປະສົບການດັ່ງກ່າວໃນການສຳພາດ ຫຼື ບໍ່ບອກໝົດ. ບັນດາອົງການຈັດຕັ້ງຂອງແມ່ຍິງສັງເກດເຫັນເລື້ອຍໆ.

**ຜູ້ໃຫ້ຂໍ້ມູນຫຼັກ, ເພດຍິງ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ**

***"ຄົນສ່ວນຫຼາຍແມ່ນຢ້ານເຮັດໃຫ້ພໍ່ແມ່ອັບອາຍ ຖ້າເຂົາເຈົ້າແຈ້ງເຫດການດັ່ງກ່າວຫາໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. ທຸກສິ່ງທຸກຢ່າງຄວນລົມກັນຢູ່ໃນເຮືອນ."***

ເຖິງວ່າຈະມີຄົນອື່ນເຫັນເຫດການໃນການໃຊ້ຄວາມຮຸນແຮງກໍ່ຕາມ, ຄົນສ່ວນໃຫຍ່ແມ່ນໃຊ້ເວລາດົນທີ່ຈະເວົ້າກ່ຽວກັບບັນຫາດັ່ງກ່າວ. ຄວາມອັບອາຍແມ່ນສິ່ງສຳຄັນທີ່ແມ່ຍິງໄດ້ປະເຊີນເຊັ່ນດຽວກັບການຢາກຊ່ວຍປົກປ້ອງຄົນອື່ນໆ, ໂດຍສະເພາະແມ່ນຕໍ່ບຸກຄົນທີ່ບໍ່ແມ່ນຄົນໃນຄອບຄົວ, ເພື່ອປ້ອງກັນ ແລະ ບໍ່ໃຫ້ຂາຍໜ້າໃນຊຸມຊົນນັ້ນ.

*"ແມ່ຂອງຊາຍຄົນນັ້ນເຄີຍເປັນນາຍບ້ານ. ລາວຈຶ່ງບໍ່ຢາກໃຫ້ພວກເຂົາເຂົ້າມາກ່ຽວຂ້ອງ ເພາະມັນຈະເຮັດໃຫ້ຄອບຄົວເກີດຄວາມອັບອາຍຂາຍໜ້າ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

*"ພວກເຮົາບໍ່ສາມາດບອກຄົນອື່ນໄດ້ກ່ຽວກັບບັນຫາຄອບຄົວ. ພວກເຮົາຕ້ອງຮັກສາເປັນຄວາມລັບ, ມັນເປັນເລື່ອງທີ່ໜ້າອາຍຖ້າບອກຄົນອື່ນໝົດ."*

ເວລາບອກຄົນອື່ນໆ, ຖ້າມີທາງເລືອກໃນການຢ່າຮ້າງແມ່ຍິງຈະຖືວ່ານັ້ນແມ່ນຜົນໄດ້ຮັບທີ່ຮ້າຍແຮງທີ່ສຸດ ແລະ ໝູ່ເພື່ອນ ແລະ ສະມາຊິກຄອບຄົວກໍ່ຊຸກຍູ້ໃຫ້ຮັກສາສະຖານະພາບແຕ່ງດອງນັ້ນໄວ້ ເພາະວ່າການຢ່າຮ້າງຖືວ່າເປັນສິ່ງທີ່ໜ້າອັບອາຍຂາຍໜ້າຫຼາຍ.

*"ຂ້ອຍຄິດວ່າມັນເປັນເລື່ອງຂອງຄອບຄົວ ແລະ ເປັນເລື່ອງສ່ວນຕົວ. ຖ້າເຮົາລົມກັບຄົນດີ, ເຮົາຈະ ໄດ້ຮັບຄຳແນະນຳທີ່ດີ, ແຕ່ຖ້າເຮົາລົມກັບຄົນບໍ່ດີ, ຄົນໆນັ້ນຈະຍຸແຍ່ໃຫ້ພວກເຮົາປະກັນ."*

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

**ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

*"ຖ້າຂ້ອຍຄິດຫຼາຍຂ້ອຍຈະກິນບໍ່ໄດ້ ນອນບໍ່ຫຼັບ. ຂ້ອຍຢ້ານເປັນແມ່ຮ້າງ. ຂ້ອຍບໍ່ຮູ້ວ່າຂ້ອຍຊິເຮັດແນວໃດ."*

ເຖິງຢ່າງໃດກໍ່ຕາມ, ໃນຫຼາຍກໍລະນີ ແມ່ຍິງໄດ້ຂໍໃຫ້ຄົນອື່ນ ຊ່ວຍນຳສິ່ງເລື່ອງຂອງລາວໄປຫາໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຍ້ອນເຂົາເຈົ້າຢ້ານຜົວກັບມາແກ້ແຄ້ນ ແລະ ທຳຮ້າຍ. ຜູ້ເຂົ້າຮ່ວມສ່ວນໃຫຍ່ເວົ້າວ່າ ນອກຈາກຈະແມ່ນສະມາຊິກຂອງຄອບຄົວ ແລະ ຍ້ອນການຮ້ອງຂໍຄວາມຊ່ວຍເຫຼືອຈຶ່ງຈະມີບາງຄົນເຂົ້າມາຊ່ວຍໃນເວລາທີ່ແມ່ຍິງຕົກຢູ່ໃນອັນຕະລາຍ. ທັດສະນະຄະຕິຕໍ່ການຊ່ວຍເຫຼືອໂດຍທົ່ວໄປ - ທີ່ໄດ້ອະທິບາຍໃນກຸ່ມສົນທະນາ, ຜູ້ຖືກເຄາະຮ້າຍທີ່ໃຫ້ສຳພາດ ແລະ ຄຳຄິດເຫັນຂອງຜູ້ໃຫ້ຂໍ້ມູນຫຼັກ - ເລື່ອງຂອງຄອບຄົວກໍ່ຄວນເກັບໄວ້ໃນຄອບຄົວ ແລະ ນີ້ຈະເຮັດໃຫ້ເກີດສະຖານະການທີ່ເປັນອັນຕະລາຍຕໍ່ແມ່ຍິງ ຜູ້ທີ່ບໍ່ສາມາດເຂົ້າເຖິງການຊ່ວຍເຫຼືອຂອງອຳນາດການປົກຄອງບ້ານ.

*"ຖ້າແມ່ຍິງຄົນນັ້ນແມ່ນຄົນໃນຄອບຄົວຂອງຂ້ອຍ, ຂ້ອຍສາມາດບອກ ແລະ ຫ້າມເຂົາເຈົ້າໄດ້. ແຕ່ຖ້າລາວບໍ່ແມ່ນຄົນໃນຄອບຄົວຂອງຂ້ອຍ, ຂ້ອຍກໍ່ບໍ່ສາມາດຊ່ວຍຫຍັງໄດ້."*

**ແມ່ຍິງອາວຸໂສ, ເຂດຊົນນະບົດ**

ຖ້າເປັນຄອບຄົວຂອງຄູ່ໜຸ່ມສາວ ທີ່ບໍ່ສາມາດຫາທາງອອກໃນການແກ້ໄຂບັນຫາ ຫຼື ໃນກໍລະນີຂອງຄູ່ຜົວເມຍ, ພໍ່ແມ່ ແລະ ຄູ່ແຕ່ງງານ ຕ່າງກໍ່ຮູ້ສຶກວ່າເຂົາເຈົ້າຕ້ອງການຄວາມຊ່ວຍເຫຼືອ ແມ່ນປຶກສານຳຕາງໜ້າສະຫະພັນແມ່ຍິງລາວ ແລະ ຫຼື ນາຍບ້ານ. ສ່ວນໃຫຍ່ກໍລະນີໃຊ້ຄວາມຮຸນແຮງ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຈະຕັກເຕືອນ, ປັບໃໝ ແລະ ຮຽກຮ້ອງໃຫ້ຜູ້ກະທຳຜິດປ່ຽນແປງພຶດຕິກຳ ທີ່ປະຕິບັດຕໍ່ຄູ່ຮ່ວມຊີວິດ. ສ່ວນໃຫຍ່ກໍ່ຈະມີການແບ່ງບົດບາດ ແລະ ໜ້າທີ່ກັນລະຫວ່າງຄູ່ຮ່ວມຊີວິດ, ຜູ້ເປັນເມຍຈະຮຽກຮ້ອງໃຫ້ເຂົ້າໃຈສະພາບ ແລະ ຊອກຫາຈຸດທີ່ເຮັດໃຫ້ເກີດຄວາມສາມັກຄີກັນ. ໂດຍລວມແລ້ວ, ຄູ່ຮ່ວມຊີວິດຕ້ອງເຂົ້າພົບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານເພື່ອປຶກສາຫາລື ແລະ ໄກເກ່ຍ ຢ່າງໜ້ອຍ 3 ຄັ້ງ ກ່ອນຈະຖືກອະນຸມັດໃຫ້ຢ່າງຮ້າງໄດ້.

*"ມັນງ່າຍທີ່ບອກໃຫ້ຄົນອື່ນອົດທົນ ແລະ ອົດກັ້ນ, ແຕ່ພາຍໃນໃຈຂອງຂ້ອຍມັນຕາຍແລ້ວ".*

*ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ*

> *"ຖ້າຜົວເມຍຜິດຖຽງກັນ ແລະ ຜົວໜີໄປໂດຍບໍ່ເວົ້າຫຍັງ, ເຂົາເຈົ້າຍັງບໍ່ທັນໄດ້ຢ່າຮ້າງກັນ. ຖ້າຜົວໜີປະຄອບຄົວເຖິງ 3 ເດືອນ ແລະ ກັບມາ, ຄອບຄົວສາມາດປັບໃໝລາວໄດ້. ເມຍອາດຈະໃຫ້ຜົວມາແຕ່ງເອົາອີກເທື່ອໜຶ່ງ. ເຂົາເຈົ້າເອີ້ນວ່າ "ຂັນຫ້າ", ການຂໍໂທດພໍ່ແມ່ຂອງເມຍ. ຖ້າເມຍໃໝ ໝູ, ຜົວຕ້ອງຫາໝູມາໃຫ້ ຫຼື ເພື່ອໃຫ້ຄອບຄົວຝ່າຍເມຍກິນ. ລາວອາດຈະຕ້ອງໄດ້ແຕ່ງ "ຂັນຫ້າ" ຫຼື "ຂັນແປດ" (ການຂໍຄະມາທີ່ສູງກວ່າຂັນຫ້າ) ໃຫ້ກັບພໍ່ເຖົ້າ ແມ່ເຖົ້າ. ນີ້ຄືການປັບໃໝ ຜົວ ອີງຕາມຮີດຄອງປະເພນີ. ຖ້າລາວແມ່ນຄົນມັກຫຼິ້ນມັກທ່ຽວ ແລະ ມີເມຍນ້ອຍ, ລາວເຮັດຄວາມຜິດແປດປະການ, ດັ່ງນັ້ນລາວຈຶ່ງຕ້ອງແຕ່ງ "ຂັນຫ້າ" ແລະ "ຂັນແປດ".*
>
> **ນາຍບ້ານ, ເຂດຊົນນະບົດ**

## 9.4 ການໜີອອກຈາກເຮືອນ ຍ້ອນການໃຊ້ຄວາມຮຸນແຮງ

ດັ່ງທີ່ໄດ້ສະແດງໃນຮູບທີ 9.3, 13.3% ຂອງແມ່ຍິງທີ່ຖືກຄວາມຮຸນແຮງ ໄດ້ໜີອອກຈາກເຮືອນຢ່າງໜ້ອຍໜຶ່ງຄັ້ງ. ໃນເຂດຕົວເມືອງ, ມີແມ່ຍິງ 15.2% ທີ່ໜີອອກຈາກເຮືອນຢ່າງໜ້ອຍໜຶ່ງຄັ້ງ ແລະ 17.3% ທີ່ແມ່ຍິງໜີອອກຈາກເຮືອນຢ່າງໜ້ອຍສອງຄັ້ງ. ສິ່ງທີ່ໜ້າສົນໃຈຄື ແມ່ຍິງໃນເຂດຊົນນະບົດຈຳນວນພຽງໜ້ອຍດຽວທີ່ໜີອອກຈາກເຮືອນ, ໂດຍສະເພາະໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງແມ່ນມີແມ່ຍິງຫຼາຍກວ່າ 90% ທີ່ບໍ່ເຄີຍໜີອອກຈາກເຮືອນເລີຍ. ເມື່ອສັງເກດເບິ່ງໃນແຕ່ລະພາກ, ມີຄວາມແຕກຕ່າງກັນເລັກໜ້ອຍລະຫວ່າງພາກເໜືອ ແລະ ພາກກາງ, ໃນຂະນະທີ່ສ່ວນໃຫຍ່ໃນເຂດພາກໃຕ້ ແມ່ຍິງແມ່ນບໍ່ເຄີຍໜີອອກຈາກເຮືອນ.

ເຫດຜົນຫຼັກທີ່ແມ່ຍິງໜີອອກຈາກເຮືອນຫຼັງຈາກທີ່ຖືກຄວາມຮຸນແຮງ ແມ່ນຄ້າຍຄືກັບກໍລະນີທີ່ແມ່ຍິງຂໍການຊ່ວຍເຫຼືອໃນພາກທີ່ຜ່ານມາ. ເຫດຜົນຕ່າງໆ ນີ້ລວມທັງ "ບໍ່ສາມາດທົນອີກຕໍ່ໄປ [ການໃຊ້ຄວາມຮຸນແຮງ] ອີກຕໍ່ໄປ" (74.5%), ຮອງລົງມາແມ່ນ "ຢ້ານຖືກຂ້າ" (17.9%) ແລະ "ຂົ່ມຂູ່ວ່າຈະຂ້າ" (16.4%). ເຖິງແມ່ນວ່າ ແມ່ຍິງ 110 ຄົນທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ເຂົາເຈົ້າໜີອອກຈາກເຮືອນ ແລະ ສຸດທ້າຍກໍ່ກັບມາ; ແມ່ຍິງ 66.1% ລາຍງານວ່າເຂົາເຈົ້າບໍ່ຢາກໜີປະລູກ, 38.6% ຄິດວ່າຜົວ ຫຼື ຄູ່ຮ່ວມຊີວິດຈະປ່ຽນແປງຕົນເອງ, 26.5% ແມ່ນຜົວບອກໃຫ້ກັບມາເຮືອນ ແລະ 21.7% ຍັງຮັກຜົວຢູ່. ສະຫຼຸບແລ້ວ, ຄວາມຜູກພັນກັບລູກ ແລະ ຜົວ/ຄູ່ຮ່ວມຊີວິດ ແມ່ນປັດໄຈຫຼັກໃນການເຮັດໃຫ້ແມ່ຍິງກັບຄືນມາເຮືອນ.

ຮູບທີ 9.3 ສ່ວນຮ້ອຍຂອງແມ່ຍິງທີ່ໜີອອກຈາກເຮືອນ ແລະ ຄວາມຖີ່ຂອງການໜີອອກຈາກເຮືອນ, ໃນບັນດາແມ່ຍິງທີ່ລາຍງານການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ, ປີ 2014 (ຈຳນວນ=470)




ສຳລັບແມ່ຍິງທີ່ຖືກເຄາະຮ້າຍສ່ວນຫຼາຍ ໃນການສຳພາດຂອງການສຳຫຼວດທາງດ້ານຄຸນນະພາບ, ເຫັນວ່າ ການຢ່າຮ້າງເປັນຜົນໄດ້ຮັບທີ່ໂຫດຮ້າຍທີ່ສຸດ ຍ້ອນວ່າເຂົາເຈົ້າຖືກໂນ້ມນ້າວໂດຍໝູ່ເພື່ອນ ແລະ ຄອບຄົວ ໃຫ້ຮັກສາສະຖານະພາບແຕ່ງດອງເອົາໄວ້ຍ້ອນຄວາມອັບອາຍໃນການຢ່າຮ້າງ.

ແມ່ຍິງທີ່ຖືກເຄາະຮ້າຍບາງຄົນເວົ້າວ່າ ເຂົາເຈົ້າຮູ້ສຶກເຂັ້ມແຂງຂຶ້ນຫຼັງຈາກມີການຕໍ່ຕ້ານຜົວຂອງເຂົາເຈົ້າ, ໃນຂະນະທີ່ບາງຄົນລາຍງານ ໄດ້ກັບຄືນໄປສູ່ຊີວິດກ່ອນແຕ່ງດອງ ແຕ່ມີລູກເພີ່ມເຂົ້າມາ. ບາງຄົນຮູ້ສຶກພູມໃຈທີ່ໄດ້ສົ່ງເສີມຄອບຄົວ ແລະ ເຫັນລູກຂອງເຂົາເຈົ້າຮຽນຈົບ. ໃນຂະນະທີ່ກ້າວໄປເຖິງຈຸດທີ່ມີຄວາມສຸກ ແລະ ສະຫງົບ, ເຂົາເຈົ້າຮັບຮູ້ວ່າສິ່ງເຫຼົ່ານີ້ຕ້ອງໃຊ້ເວລາ.

## 9.5 ການປົກປ້ອງຕົນເອງຂອງແມ່ຍິງ

ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍຈາກຄູ່ຮ່ວມຊີວິດ ໄດ້ຖືກຖາມກ່ຽວກັບການທີ່ເຂົາເຈົ້າໄດ້ເຄີຍຕໍ່ສູ້ໂດຍໃຊ້ຮ່າງກາຍຕອບໂຕ້ ຫຼື ປົກປ້ອງຕົນເອງ. ຮູບທີ 9.4 ສະແດງໃຫ້ເຫັນວ່າເກືອບ 40% ຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ໄດ້ຕໍ່ສູ້ກັນຢ່າງໜ້ອຍໜຶ່ງຄັ້ງ, ໃນຂະນະທີ່ຫຼາຍກວ່າ 60% ໄດ້ພະຍາຍາມ. ແມ່ຍິງໃນເຂດຕົວເມືອງ ແລະ ຊົນນະບົດ ແມ່ນມີທ່າອ່ຽງໃນການປົກປ້ອງຕົນເອງ (23% ແລະ 21.5%, ຕາມລຳດັບ) ທີ່ຕໍ່ຕ້ານຜົວໜຶ່ງ ຫຼື ສອງຄັ້ງ ເຊິ່ງຫຼາຍກວ່າແມ່ຍິງທີ່ຢູ່ໃນເຂດຊົນນະບົດມີ່ບໍ່ມີເສັ້ນທາງເຂົ້າເຖິງ (13.2%).

ແມ່ຍິງທີ່ຖືກເຄາະຮ້າຍບາງຄົນທີ່ເຄີຍໄດ້ຕໍ່ສູ້ກັບ ໄດ້ລາຍງານໃນການສຳພາດແບບເຈາະຈົ້ມວ່າ ໃນເວລາທີ່ປະເຊີນໜ້າກັບຄູ່ຮ່ວມຊີວິດທີ່ກຳລັງໂມໂຫ, ເຂົາເຈົ້າຈະພະຍາຍາມບໍ່ເຮັດໃຫ້ສະຖານະການຮຸນແຮງຂຶ້ນ. ເວລາທີ່ຖືກຄວາມຮຸນແຮງທາງຮ່າງກາຍ ແລະ ໃນລະຫວ່າງການຕົບຕີ, ແມ່ຍິງຈະພະຍາຍາມໜີໄປສະຖານທີ່ ທີ່ປອດໄພ ເຊັ່ນ ເຮືອນຂອງພໍ່ແມ່ ຫຼື ສະມາຊິກໃນຄອບຄົວ.

> **ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຊົນນະບົດ**
>
> *"ຂ້ອຍບໍ່ໄດ້ເວົ້າຫຍັງ, ຂ້ອຍບໍ່ໄດ້ຖຽງ. ຂ້ອຍພຽງແຕ່ລີ້ຢູ່ເຮືອນພໍ່ແມ່ຂອງຂ້ອຍ."*

ຮູບທີ 9.4 ສ່ວນຮ້ອຍຂອງແມ່ຍິງທີ່ຕໍ່ສູ້ຄືນ, ໃນບັນດາແມ່ຍິງທີ່ລາຍງານການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ, ສປປ ລາວ, ປີ 2014 (ຈຳນວນ=357)




ຮູບທີ 9.5 ສະແດງເຖິງຜົນກະທົບຂອງການຕໍ່ສູ້ຕ້ານຄືນຜົວ. ໂດຍລວມແລ້ວ, ຫຼາຍກວ່າເຄິ່ງໜຶ່ງຂອງແມ່ຍິງທີ່ໄດ້ຕອບວ່າການໃຊ້ຄວາມຮຸນແຮງຫຼຸດລົງ (51%). ພຽງ 15% ທີ່ເວົ້າວ່າບໍ່ມີການປ່ຽນແປງຫຍັງເລີຍ, ເກືອບ 60% ຂອງແມ່ຍິງທີ່ຢູ່ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງລາຍງານວ່າບໍ່ມີການປ່ຽນແປງ ແລະ ລາຍງານວ່າ ມີການປ່ຽນແປງ. ເຖິງຢ່າງໃດກໍ່ຕາມ, ເປັນສິ່ງທີ່ສຳຄັນຫຼາຍໃນການຮັບຮູ້ຢ່າງຈະແຈ້ງວ່າ ການຕໍ່ສູ້ກັບຄືນແມ່ນມີສ່ວນເຮັດໃຫ້ຜົວຫຼຸດຜ່ອນການໃຊ້ຄວາມຮຸນແຮງ ຫຼື ຢຸດຕິການໃຊ້ຄວາມຮຸນແຮງຂອງຜົວເລີຍ.

ຮູບທີ 9.5 ຜົນກະທົບຂອງການຕໍ່ສູ້ກັບ ໃນບັນດາແມ່ຍິງຜູ້ທີ່ມີການຕໍ່ສູ້ໃນກໍລະນີຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ສປປ ລາວ, ປີ 2014 (N=137)




## 9.6 ຄວາມຮູ້ທາງດ້ານລະບົບກົດໝາຍ ແລະ ການມີສ່ວນຮ່ວມຂອງສານ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

ການສຳຫຼວດໃນພາກນີ້ແມ່ນ ໄດ້ສຳຫຼວດວ່າແມ່ຍິງຮັບຮູ້ກ່ຽວກັບລະບົບການຊ່ວຍເຫຼືອ ອີງຕາມກົດໝາຍ ແລະ ລະບົບຍຸຕິທຳ. 32.5% ຂອງແມ່ຍິງໃນເຂດຕົວເມືອງ ຮູ້ຈັກກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ໃນທາງກົງກັນຂ້າມ, 19.7% ໃນເຂດຊົນນະບົດ ແລະ 5.0% ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ໃນຂະນະທີ່ 16.8% ໃນເຂດຕົວເມືອງ ຮູ້ກົດໝາຍອື່ນໆ ເຊັ່ນ ກົດໝາຍອາຍາ, ເຊິ່ງໃນເຂດຊົນນະບົດມີໜ້ອຍກວ່າ (6.2%) ແລະ ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ (1.6%).

ຮູບທີ 9.6 ສະແດງວ່າ 16.9% ຂອງແມ່ຍິງໃນເຂດຕົວເມືອງ ຮູ້ຈັກກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ກົດໝາຍອື່ນໆ, ໃນຂະນະທີ່ມີພຽງ 5.4% ໃນເຂດຊົນນະບົດ ແລະ 1.5% ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ດ້ວຍເຫດນີ້, ແມ່ຍິງໃນເຂດຕົວເມືອງ ມີຄວາມຮູ້ທີ່ກ່ຽວຂ້ອງທາງດ້ານກົດໝາຍ ຫຼາຍກວ່າແມ່ຍິງໃນເຂດຊົນນະບົດ. ການມີການສຶກສາໃນລະດັບສູງກວ່າ ກໍ່ເຮັດໃຫ້ມີຄວາມຮູ້ທາງດ້ານກົດໝາຍຫຼາຍກວ່າ, 3.4% ສຳລັບການສຶກສາໃນຊັ້ນສູງ, 12.8% ໃນຊັ້ນມັດທະຍົມ, 5% ສຳລັບຊັ້ນປະຖົມ ແລະ 1.1% ສຳລັບແມ່ຍິງທີ່ບໍ່ໄດ້ຮຽນໜັງສື.

ຮູບທີ 9.6 ສ່ວນຮ້ອຍຂອງຄວາມຮູ້ຂອງແມ່ຍິງກ່ຽວກັບ LDPW ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ ໃນບັນດາແມ່ຍິງທີ່ເຄີຍ/ບໍ່ເຄີຍ ມີປະສົບການຖືກໃຊ້ຄວາມຮຸນແຮງ, ສປປ ລາວ, ປີ 2014 (ຈຳນວນ=2,997)




ຮູບທີ 9.7 ສ່ວນຮ້ອຍຂອງຄວາມຮູ້ຂອງແມ່ຍິງກ່ຽວກັບ LDPW ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ ລະຫວ່າງແມ່ຍິງທີ່ເຄີຍ/ບໍ່ເຄີຍ ມີປະສົບການຖືກໃຊ້ຄວາມຮຸນແຮງ, ສປປ ລາວ, ປີ 2014 (ຈຳນວນ=2,847)



ຮູບທີ 9.7 ປຽບທຽບຄວາມຮູ້ຂອງແມ່ຍິງໃນດ້ານກົດໝາຍກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໂດຍອີງໃສ່ວ່າ ເຂົາເຈົ້າເຄີຍ ຫຼື ບໍ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ. ຜົນສໍາຫຼວດສະແດງໃຫ້ເຫັນວ່າ ແມ່ຍິງທີ່ຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຮູ້ຈັກກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ໜ້ອຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນບັນຫາເຫຼົ່ານີ້ ($p<0.01$). ເມື່ອເອົາຄວາມຮູ້ຂອງແມ່ຍິງກ່ຽວກັບກົດໝາຍອື່ນໆ ຫຼື ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ກົດໝາຍອື່ນມາປຽບທຽບກັນ, ຄ່າຄວາມສໍາຄັນທາງສະຖິຕິ ບໍ່ໄດ້ມີຄວາມແຕກຕ່າງກັນຫວ່າງທັງສອງກຸ່ມ.

ໃນການສໍາຫຼວດທາງດ້ານຄຸນນະພາບ, ມີຜູ້ໃຫ້ສໍາພາດພຽງໜ້ອຍດຽວ ທີ່ມີຄວາມຮູ້ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ແຕ່ມີຄວາມສັບສົນລະຫວ່າງ ສົນທິສັນຍາວ່າດ້ວຍສິດ ແລະ ການປົກປ້ອງເດັກ, ຄິດວ່າມັນພົວພັນເຖິງການໃຊ້ແຮງງານເດັກ. ໄວໜຸ່ມຊາຍໃນກຸ່ມສົນທະນາ ໄດ້ຮຽນຮູ້ກ່ຽວກັບກົດໝາຍໃນໂຮງຮຽນ. ໂດຍລວມແລ້ວ, ແມ່ຍິງທີ່ສາມາດອະທິບາຍແນວຄິດໃນການພັດທະນາຂອງແມ່ຍິງ ໂດຍຜ່ານການພົວພັນເຖິງການມີສິດສະເໝີພາບກັບເພດຊາຍ, ການເຂົ້າເຖິງການສຶກສາ ແລະ ໂອກາດໃນການໄດ້ຮັບຕໍາແໜ່ງທາງສາຍລັດ, ໂດຍສະເພາະຕໍາແໜ່ງເຈົ້າເມືອງ. ຫຼາຍຄົນຍັງເຊື່ອວ່າກົດໝາຍຊ່ວຍສົ່ງເສີມໃຫ້ແມ່ຍິງບໍ່ເຫັນດີກັບຜູ້ຊາຍ, ແຕ່ຜູ້ທີ່ຮັບຜິດຊອບໂດຍກົງຕໍ່ການປົກປ້ອງແມ່ຍິງບາງຄົນ ບໍ່ໄດ້ມີຄວາມຮູ້ໃນດ້ານກົດໝາຍ.

> *"ຂ້ອຍບໍ່ເຄີຍເຫັນ [ກົດໝາຍທີ່ກ່ຽວຂ້ອງ]. ຂ້ອຍໄປປະຊຸມເລື້ອຍໆ ແຕ່ກໍ່ບໍ່ເຄີຍໄດ້ຍິນຈັກເທື່ອ. ຂ້ອຍບໍ່ຮູ້ວ່າກົດໝາຍນີ້ຖືກນໍາໃຊ້ຕອນໃດ."*
>
> **ຜູ້ໃຫ້ຂໍ້ມູນຫຼັກ, ປກສ, ເພດຊາຍ, ເຂດຊົນນະບົດ**

> **ຜູ້ໃຫ້ຂໍ້ມູນຫຼັກ, ປກສ, ເພດຊາຍ, ເຂດຕົວເມືອງ**
>
> *"ຂ້ອຍເຄີຍເຫັນ [ກົດໝາຍທີ່ກ່ຽວຂ້ອງ]. ແຕ່ຂ້ອຍບໍ່ເຄີຍໄດ້ອ່ານ. ຂ້ອຍບໍ່ຮູ້ວ່າຈະຕອບແນວໃດເພາະຂ້ອຍບໍ່ໄດ້ອ່ານມັນ."*

ຜູ້ໃຫ້ສໍາພາດໃນເຂດຊົນນະບົດຮູ້ສຶກວ່າກົດໝາຍບໍ່ໄດ້ປົກປ້ອງແມ່ຍິງ, ຍ້ອນການໃຊ້ຄວາມຮຸນແຮງໃນຄອບຄົວແມ່ນເລື່ອງຂອງຄອບຄົວ ແລະ ອໍານາດການປົກຄອງບໍ່ມີສິດເຂົ້າມາຫຍຸ້ງກ່ຽວ.

> *"ຖ້າເມຍຕາຍ, ມັນກະເປັນອີກເລື່ອງໜຶ່ງ. ສິ່ງເຫຼົ່ານີ້ແມ່ນຂຶ້ນກັບແຕ່ລະບ້ານ."*
>
> **ເພດຊາຍອາວຸໂສ, ເຂດຊົນນະບົດ**

ແມ່ຍິງທີ່ໃຫ້ສໍາພາດສ່ວນໃຫຍ່ ເຊື່ອວ່າເຂົາເຈົ້າ ແລະ ຄອບຄົວ ບໍ່ໄດ້ຮັບຄວາມຍຸຕິທໍາຈາກສານ. ໃນການສໍາພາດແພດໃນນະຄອນຫຼວງວຽງຈັນ, ໄດ້ມີການບັນທຶກວ່າແມ່ຍິງທີ່ຕ້ອງການທົດສອບທາງດ້ານພະຍານຫຼັກຖານທາງອາດຊະຍາກໍາ ຕາມການກ່າວຫາໃນການຂົ່ມຂືນ ຕ້ອງຈ່າຍຄ່າບໍລິການນັ້ນດ້ວຍຕົນເອງ. ຄໍາແນະນໍາຂອງອົງການຈັດຕັ້ງໃນການຊ່ວຍໃຫ້ແມ່ຍິງເຂົ້າໃຈສິດຂອງເຂົາເຈົ້າ, ແລະ ຍ້ອນວ່າລະບົບການສ້າງກົດໝາຍລະບຸແນວນັ້ນ.

> **ຜູ້ໃຫ້ສໍາພາດຫຼັກ, ເພດຍິງ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ**
>
> *"ເຖິງວ່າພວກເຮົາຈະມີກົດໝາຍ, ຖ້າບໍ່ມີການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ມັນກໍ່ຈະບໍ່ມີຜົນຫຍັງ. ກົດໝາຍຄວນຈະແຈ້ງ ແລະ ສະເພາະເຈາະຈົງ. ທຽບກັບປະເທດອື່ນ, ກົດໝາຍຂອງພວກເຮົາມີຄວາມຫຍຸ້ງຍາກໃນການປະຕິບັດຕາມ."*

> *"ຂ້ອຍຢາກໃຫ້ມີອົງການຈັດຕັ້ງ ທີ່ຊ່ວຍແມ່ຍິງໃນການນໍາທາງໄປສູ່ຄວາມຍຸຕິທໍາ ແລະ ລະບົບສານ, ດັ່ງນັ້ນການຕັດສິນຂອງສານຈຶ່ງຈະມີຄວາມເທົ່າທຽມກັນຂອງແມ່ຍິງໃນສະຖານະການເຫຼົ່ານີ້."*
>
> **ແມ່ຍິງທີ່ຖືກເຄາະຮ້າຍ, ເຂດຕົວເມືອງ**

## 9.7 ພາກສົນທະນາ

ຜົນການສໍາຫຼວດໃນບົດນີ້ສະແດງໃຫ້ເຫັນເຖິງຄວາມຫຍຸ້ງຍາກ ແລະ ບັນຫາທີ່ສັບຊ້ອນ ທີ່ແມ່ຍິງທີ່ຖືກຄວາມຮຸນແຮງໄດ້ຊອກຫາຄວາມຊ່ວຍເຫຼືອ ແລະ ຂໍ້ມູນທີ່ຈໍາເປັນໃນການແກ້ໄຂຄວາມລໍາບາກຂອງພວກເຂົາ. ເກືອບເຄິ່ງໜຶ່ງຂອງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດບໍ່ເຄີຍລາຍງານຈັກເທື່ອ ແລະ ຄົນທີ່ຮ້ອງຂໍການຊ່ວຍເຫຼືອແມ່ນ ຍ້ອນເຂົາເຈົ້າບໍ່ສາມາດທົນໄດ້ອີກຕໍ່ໄປ, ເຖິງແມ່ນວ່າຈະໄດ້ຮັບການຂູ່ຂູ້ຈາກຄອບຄົວ ແລະ ໝູ່ເພື່ອນ. ເຖິງຢ່າງໃດກໍ່ຕາມ, ແມ່ຍິງຫຼາຍຄົນທີ່ບໍ່ໄດ້ໄປຫາໃຜເລີຍຍ້ອນຄວາມອັບອາຍ, ຄວາມຢ້ານ ແລະ ທັດສະນະຄະຕິທີ່ຄິດວ່າເປັນເລື່ອງບໍ່ສໍາຄັນ. ຜົນການສໍາຫຼວດນີ້ ມີຄວາມໃກ້ຄຽງກັນກັບການສໍາຫຼວດອື່ນໆ ທີ່ຜ່ານມາ ກ່ຽວກັບການໃຊ້ຄວາມຮຸນແຮງໃນຄອບຄົວ ໂດຍກຸ່ມພັດທະນາບົດບາດຍິງ-ຊາຍ. ການທີ່ແມ່ຍິງຕັດສິນໃຈໃນການຂໍ ຫຼື ບໍ່ຂໍການຊ່ວຍເຫຼືອແມ່ນມີການພົວພັນຢ່າງສະໜິດແໜ້ນກັບຄວາມຖີ່ ແລະ ຄວາມຮ້າຍແຮງຂອງການລ່ວງລະເມີດ. ການຢືນຢັນຢ່າງໜຶ່ງແມ່ນແມ່ຍິງທີ່ຖືກຄວາມຮຸນແຮງ ຮູ້ສຶກໝົດຫວັງໃນການປ່ຽນແປງ ແລະ ບໍ່ຄາດຫວັງໃນການຂໍຄວາມຊ່ວຍເຫຼືອ (Walker, 1979). ອີກໜຶ່ງສົມມຸດຖານແມ່ນສາຍພົວພັນທີ່ກົງກັນຂ້າມກັນ - ແມ່ຍິງຫຼາຍຄົນຈະຂໍການຊ່ວຍເຫຼືອເວລາການລ່ວງລະເມີດມີຄວາມອັນຕະລາຍຫຼາຍ (Gondolf, & Fisher, 1988). ໃນສະພາບການຂອງ ສປປ ລາວ, ແມ່ຍິງຮູ້ສຶກໝົດຫວັງ ແລະ ບໍ່ມີອໍານາດ ຍ້ອນຮີດຄອງປະເພນີທາງດ້ານບົດບາດຍິງ-ຊາຍ ແລະ ທັດສະນະຄະຕິໃນການເຂົ້າເຖິງການລາຍງານຖືກຈໍາກັດຍ້ອນ ມັນທົນ ແລະ ການເສຍໜ້າ ສໍາລັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວ. ພ້ອມກັນນັ້ນ, ຍ້ອນສາຍພົວພັນທາງອໍານາດທີ່ບໍ່ເທົ່າທຽມກັນໃນດ້ານບົດບາດຍິງ-ຊາຍ ທີ່ຍັງມີແນວຄວາມຄິດວ່າແມ່ຍິງຄວນຢູ່ພາຍໃຕ້ຜູ້ຊາຍ, ແມ່ຍິງຢ້ານການແກ້ແຄ້ນຈາກຜົວ ຖ້າວ່າການໃຊ້ຄວາມຮຸນແຮງມີການລາຍງານ, ເຊິ່ງອາດຈະມີແນວໂນ້ມ ເຮັດໃຫ້ກ້າວໄປເຖິງການຢ່າຮ້າງ ຫຼື ການແຍກກັນຢູ່.

ແມ່ຍິງສ່ວນໃຫຍ່ທີ່ຂໍການຊ່ວຍເຫຼືອ, ທໍາອິດແມ່ນເຂົ້າຫາຄອບຄົວ ແລະ ໝູ່ເພື່ອນ, ຫຼາຍກວ່າເຄືອຄ່າຍ ແລະ ການບໍລິການທີ່ເປັນທາງການຈາກຜູ້ນໍາທ້ອງຖິ່ນ, ຕໍາຫຼວດ ຫຼື ອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງ ຄືດັ່ງທີ່ໄດ້ລາຍງານໃນການສໍາຫຼວດໂດຍກຸ່ມພັດທະນາບົດບາດຍິງ-ຊາຍ (GDG, 2005) ແລະ ການສໍາຫຼວດແບບຫຼາຍປະເທດຂອງອົງການອະນາໄມໂລກ (Garcia-Moreno ພ້ອມດ້ວຍຄະນະ., 2005). ທ່າອ່ຽງທີ່ຄ້າຍຄືກັນແມ່ນການພົບວ່າ ການຂໍຄວາມຊ່ວຍເຫຼືອໂດຍສ່ວນໃຫຍ່ແມ່ນຂໍຄວາມຊ່ວຍເຫຼືອຈາກຄອບຄົວ ແລະ ໝູ່ເພື່ອນ, ໃນຂະນະທີ່ມີການເຂົ້າມາມີສ່ວນຮ່ວມຈາກຜູ້ນໍາທ້ອງຖິ່ນ, ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ແລະ ສະຫະພັນແມ່ຍິງລາວ. ເມື່ອເກີດບັນຫາຂຶ້ນລະຫວ່າງຄູ່ຜົວເມຍ, ໃນຂັ້ນເບື້ອງຕົ້ນແມ່ນຂໍຄໍາແນະນໍາຈາກຄອບຄົວ ຫຼື ຜູ້ໃຫຍ່ທີ່ເຄົາລົບ. ໃນເຂດຊົນນະບົດ, ຈະມີພຽງແຕ່ພໍ່ແມ່, ໝູ່ສະໜິດ ແລະ ສະມາຊິກໃນຄອບຄົວທີ່ໄວ້ວາງໃຈ ເຊິ່ງຈະບໍ່ເອົາເລື່ອງພາຍໃນ ໄປເວົ້າພາຍນອກ. ໄວໜຸ່ມຍິງ ແລະ ຊາຍ ທີ່ເຂົ້າຮ່ວມໃນກຸ່ມສົນທະນາເວົ້າວ່າ ພໍ່ແມ່ ແມ່ນຄົນທີ່ຈະຂໍຄໍາປຶກສາ ທີ່ໄວ້ໃຈໄດ້ກວ່າໝູ່ເພື່ອວ່າຈະບໍ່ເອົາຂໍ້ມູນຄວາມລັບຂອງເຂົາເຈົ້າໄປເປີດເຜີຍ ເຊິ່ງມີຄວາມສ່ຽງທີ່ຈະເຮັດໃຫ້ຄູ່ແຕ່ງດອງ ແລະ ຄອບຄົວເກີດຄວາມອັບອາຍ.

> *"ໃນປະເທດອື່ນໆ, ປະຊາຊົນ ຈະໄປແຈ້ງຕໍາຫຼວດໂດຍກົງ ຖ້າມຄົນຕີ ຫຼື ເຕະກັນ. ແຕ່ວ່າໃນບ້ານຂອງພວກເຮົາ, ເຮົາບໍ່ສາມາດເຮັດແບບນັ້ນໄດ້."*
>
> *ແມ່ຍິງໄວໜຸ່ມ, ເຂດຕົວເມືອງ*

ພາຍໃຕ້ກົດໝາຍແພ່ງ, ການຜິດຖຽງກັນພາຍໃນຄອບຄົວຈະຖືກໄກ່ເກ່ຍໂດຍໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ຍ້ອນບັນຫາດັ່ງກ່າວບໍ່ແມ່ນບັນຫາ "ໃນລະດັບໃຫຍ່", ດັ່ງທີ່ໄດ້ລະບຸວ່າ: "ຂໍ້ຂັດແຍ່ງເລັກນ້ອຍ ຫຼື ຂໍ້ຂັດແຍ່ງທີ່ມີມູນຄ່າບໍ່ສູງ ເຊັ່ນ ການຜິດຖຽງກັນໃນຄອບຄົວ, ການຜິດຖຽງກັນກ່ຽວກັບສັດລ້ຽງ, ສິດທິຕໍ່ເສັ້ນທາງ ແລະ ຂໍ້ຂັດແຍ່ງດ້ານອື່ນໆ ຕ້ອງໄດ້ຮັບການແກ້ໄຂໂດຍໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ".[22] ໃນກໍລະນີການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ນອກຈາກກໍລະນີທີ່ຮຸນແຮງ ຫຼື ຈົນເຖິງຂັ້ນເສຍຊີວິດ, ກໍລະນີດັ່ງກ່າວຈະຖືກຊ່ວຍເຫຼືອໃນຂັ້ນບ້ານ. ຖ້າມີການຕໍ່ສູ້ເຊິ່ງມີຫຼັກຖານ ແລະ ພະຍານຈາກເພື່ອນບ້ານ ຫຼື ຊາວບ້ານຄົນອື່ນໆ, ປກສ ບ້ານຈະຖືກແຈ້ງໃຫ້ມາຢຸດຕິການຕໍ່ສູ້ໃນທັນທີ, ຖ້າບໍ່ດັ່ງນັ້ນ ກໍລະນີດັ່ງກ່າວຈະຖືກສົ່ງຕໍ່ເຖິງໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ. ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານປະກອບມີສະມາຊິກ 6 ທ່ານ ເຊິ່ງປະກອບມີ ນາຍບ້ານ, ຕົວແທນສະຫະພັນແມ່ຍິງບ້ານ, ປກສ ຫຼື ຕໍາຫຼວດ, ແນວໂຮມ ແລະ ບັນດາໜ່ວຍງານບໍລິຫານຂັ້ນບ້ານຄົນອື່ນໆ. ຄູ່ກໍລະນີດັ່ງກ່າວມີສິດນໍາເອົາຂໍ້ຂັດແຍ່ງໄປໄກ່ເກ່ຍ ໂດຍໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ 3 ຄັ້ງ ເຊິ່ງມີອໍານາດໃນການກໍານົດການປັບໃໝ ແລະ ຂະບວນການຕັດສິນໃຈໃນການຢ່າຮ້າງ ທີ່ຢູ່ນອກເໜືອຈາກຄໍາເຫັນຂອງອໍານາດການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ. ຖ້າບໍ່ມີຂໍ້ຕົກລົງເຫັນດີນໍາກັນໃນຂັ້ນບ້ານ, ຄູ່ແຕ່ງດອງຕ້ອງນໍາກໍລະນີດັ່ງກ່າວຂຶ້ນສູ່ອໍານາດການປົກຄອງຂັ້ນເມືອງ ແລະ ສານ ເພື່ອທົບທວນ ແລະ ໄກ່ເກ່ຍ. ຮູບທີ 9.8 ສະແດງເຖິງຂະບວນການທາງການໃນການຂໍການຊ່ວຍເຫຼືອ ຖ້າຄູ່ແຕ່ງດອງບໍ່ສາມາດຄືນດີກັນໄດ້ເອງ. ໃນກໍລະນີທີ່ຮ້າຍແຮງ, ເຊັ່ນ ການຄາດຕະກໍາ, ປກສ ບ້ານ, ຕໍາຫຼວດເມືອງ ແລະ ສານ ຈະເປັນຜູ້ຮັບຜິດຊອບ. ໃນເຂດຕົວເມືອງ, ປກສ ແລະ ນາຍບ້ານ ແມ່ນ "ພະນັກງານ" ຄົນທໍາອິດທີ່ຈະເປັນຜູ້ຊ່ວຍ ແລະ ສະມາຊິກຄອບຄົວມີຄວາມສໍາຄັນໜ້ອຍກວ່າໃນເຂດຊົນນະບົດ.

ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ຈະໃຊ້ວິທີການແບບອານຸລັກນິຍົມ ແລະ ຫຼີກລ່ຽງການແຊກແຊງທີ່ຫຼາຍຈົນເກີນໄປ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ. ເຖິງແມ່ນວ່າ ຈະມີການອອກກົດໝາຍໃໝ່ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ມີປະສິດທິພາບໃນການຊ່ວຍເຫຼືອຕາມຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ, ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ຍັງເປັນຈຸດສູນກາງສໍາລັບແມ່ຍິງໃນການຊອກຫາທາງອອກ. ແນ່ນອນວ່າ ຫຼັກການ ແລະ ຂະບວນການຂອງໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ໄດ້ລະບຸພິເສດຢູ່ໃນກົດໝາຍໃໝ່ວ່າດ້ວຍການຕ້ານ ແລະ ກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເພື່ອການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ເຊິ່ງຄ້າຍຄືກັນກັບລະບົບທີ່ມີຢູ່ (ຮູບທີ 9.8) ແລະ ຄາດວ່າຈະມີການປ່ຽນແປງເລັກນ້ອຍ. ໝາຍຄວາມວ່າຜູ້ຖືກເຄາະຮ້າຍຄືງບໍ່ມີຫຼາຍທາງເລືອກໃນການຂໍຄວາມຊ່ວຍເຫຼືອ. ໃນຂະນະທີ່ຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ ສາມາດເປັນຜູ້ຕິດຕໍ່ຄົນທໍາອິດ, ແຕ່ເຂົາເຈົ້າຈະເນັ້ນແຕ່ການຊ່ວຍເຫຼືອທາງດ້ານການແພດ ຫຼື ສຸຂະພາບຈິດ. ສະນັ້ນ, ຖ້າວ່າມີການໄກ່ເກ່ຍ ຫຼື ການຕົກລົງກັນ, ຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ ຄວນສົ່ງຕໍ່ຜູ້ຖືກເຄາະຮ້າຍໄປຫາອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ.

---

[22] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ມາດຕາທີ 79 (2004).

**ຮູບທີ 9.8 ຂະບວນການໃນການຊອກຫາການສະໜັບສະໜູນທີ່ເປັນທາງການ ເພື່ອການໄກ່ເກ່ຍ**




ເຖິງວ່າໃນການສຳຫຼວດທາງດ້ານປະລິມານ ຈະມີຜູ້ຖືກເຄາະຮ້າຍຫຼາຍກວ່າ 50 ຄົນ ທີ່ໄດ້ຂໍການຊ່ວຍເຫຼືອຈາກໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ. ສ່ວນຫຼາຍແມ່ນພໍໃຈກັບການຊ່ວຍເຫຼືອ, ແຕ່ກໍ່ຂັດແຍ່ງກັບຜົນການສຳຫຼວດທາງດ້ານຄຸນນະພາບ. ຜູ້ເຂົ້າຮ່ວມຫຼາຍໆ ຄົນໃນການການສຳພາດແບບເຈາະຈີ້ມ ແລະ ໃນການສົນທະນາກຸ່ມ ຮູ້ສຶກວ່າໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ບໍ່ສາມາດຊ່ວຍແມ່ຍິງໃນການແກ້ໄຂບັນຫາໃນໄລຍະຍາວໄດ້. ໃນຂະນະທີ່ ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ຮັບຟັງ ແລະ ໃຫ້ຄຳປຶກສາກັບຄູ່ຜົວເມຍ, ເຂົາເຈົ້າພະຍາຍາມທີ່ຈະໄກ່ເກ່ຍທັງສອງຝ່າຍໃຫ້ກັບມາຄືນດີກັນ, ເຊິ່ງເຮັດໃຫ້ແມ່ຍິງກັບໄປຢູ່ໃນສະພາບແວດລ້ອມທີ່ມີການໃຊ້ຄວາມຮຸນແຮງຄືເກົ່າ. ວິທີການຂອງຜູ້ນຳຊຸມຊົນໃນການຄຸ້ມຄອງກໍລະນີການໃຊ້ຄວາມຮຸນແຮງ ປະກອບດ້ວຍຄວາມພະຍາຍາມຫຼາຍຢ່າງທີ່ຫຼົ້ມເຫຼວໃນການຊຸກຍູ້ໃຫ້ຄູ່ຮ່ວມຊີວິດຢຸດຕິການໃຊ້ຄວາມຮຸນແຮງ. ອີກບັນຫາໜຶ່ງທີ່ສຳຄັນແມ່ນກ່ຽວກັບຂະບວນການສືບທອດຂອງສະຖາບັນ. ໃນ ສປປ ລາວ, ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານຈະໄດ້ຮັບການຍ້ອງຍໍຈາກລັດຖະບານ ຖ້າບໍ່ມີການລາຍງານກ່ຽວກັບການໃຊ້ຄວາມຮຸນແຮງໃນຊຸມຊົນ ຫຼື ຄອບຄົວ ແລະ ບັນຫາອື່ນໆ. ດ້ວຍເຫດນີ້ ຈຶ່ງເຮັດໃຫ້ມີທັດສະນະຄະຕິໃນການຈັດຕັ້ງປະຕິບັດທີ່ 'ບໍ່ລາຍງານ' ແລະ 'ປິດລັບໄວ້' ເຊິ່ງເປັນປົກກະຕິຂອງອົງການຈັດຕັ້ງທ້ອງຖິ່ນ. ຜົນທີ່ຕາມມາກໍ່ຄື, ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ສ່ວນໃຫຍ່ແມ່ນຈະພະຍາຍາມແກ້ໄຂບັນຫາເຫຼົ່ານີ້ຢ່າງມິດງຽບ ເຖິງວ່າເຂົາເຈົ້າຈະຢາກລາຍງານ ແລະ ຂໍການຊ່ວຍເຫຼືອຈາກທາງການ. ໂດຍລວມແລ້ວ, ຜູ້ເຂົ້າຮ່ວມການຄົ້ນຄວ້າບາງຄົນຍົກປະເດັນຂອງການມີບົດບາດ ແລະ ຂີດຄວາມສາມາດທີ່ຈຳກັດໃນການຈູງໃຈ, ຄຸນນະທຳ ແລະ ທັດສະນະຄະຕິຂອງຜູ້ນຳ ທີ່ກ່ຽວຂ້ອງກັບຮີດຄອງປະເພນີທາງວັດທະນະທຳ-ສັງຄົມ ເພື່ອການປົກປ້ອງຄວາມສະຫງົບໃນ ສປປ ລາວ.

ເພື່ອແກ້ໄຂຂໍ້ຄົງຄ້າງໃນດ້ານນີ້, ການສົ່ງເສີມ ການຝຶກອົບຮົມ ຫຼື ການໃຫ້ຄວາມຮູ້ແກ່ອົງການຈັດຕັ້ງຂອງຊຸມຊົນ ໃນການປ່ຽນແປງທັດສະນະຄະຕິອາດຈະເປັນການປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຂັ້ນພື້ນຖານທີ່ມີປະສິດທິພາບ. ມັນເປັນສິ່ງລະອຽດອ່ອນສຳລັບໜ່ວຍໄກ່ເກ່ຍຄະດີຂັ້ນບ້ານທີ່ຈະເຂົ້າໃຈຄວາມສະຫຼັບສັບຊ້ອນໃນບັນຫາທີ່ພົວພັນເຖິງຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ເພື່ອການປ່ຽນແປງທາງພຶດຕິກຳ ແລະ ການຫັນປ່ຽນທາງສັງຄົມ. ຄວາມຮັບຮູ້ໃນບັນຫາທີ່ເກືອບຈະຖືກປິດລັບທັງໝົດຈະເສີມຂະຫຍາຍຄຸນນະພາບໃນການໃຫ້ຄຳປຶກສາ ແລະ ການແກ້ໄຂການໃຊ້ຄວາມຮຸນແຮງໃນຄອບຄົວຢ່າງຈິງຈັງ. ການຝຶກອົບຮົມດັ່ງກ່າວຈະຊ່ວຍຊຸກຍູ້ໃຫ້ກຸ່ມທີ່ມີອິດທິພົນໃນສັງຄົມເກີດຄວາມເຂົ້າໃນຮີດຄອງປະເພນີທາງດ້ານບົດບາດຍິງ-ຊາຍ ເຊັ່ນດຽວກັນກັບອຳນາດທີ່ບໍ່ເທົ່າທຽມກັນໃນສາຍພົວພັນລະຫວ່າງຍິງ-ຊາຍ ເຊິ່ງພົວພັນກັບການເປັນຫົວໜ້າຄອບຄົວ ແລະ ຄວາມເປັນສຸພາບບຸລຸດ ເຊິ່ງເຮັດໃຫ້ຜູ້ຊາຍມີອຳນາດເໜືອແມ່ຍິງ

ໃນການມີອຳນາດ ເໜືອກວ່າ ແລະ ສາມາດຄວບຄຸມໄດ້, ຍ້ອນວ່າສິ່ງນີ້ແມ່ນກົກເຫງົ້າຂອງບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ນອກຈາກນີ້, ໂຄງການດັ່ງກ່າວຄວນສົ່ງເສີມໃຫ້ມີຫຼາຍໆ ການຕອບໂຕ້ ແລະ ທາງອອກໃຫ້ກັບຜູ້ຖືກເຄາະຮ້າຍໃນບັນຫາທີ່ມີຄວາມລະອຽດອ່ອນນີ້, ມີການສະໜອງທັກສະ ແລະ ຄວາມຮູ້ໃນວິທີການທີ່ສາມາດປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງຈາກການໃຊ້ຄວາມຮຸນແຮງໃນປັດຈຸບັນ ຫຼື ອະນາຄົດໄດ້ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ເພື່ອໃຫ້ຟື້ນຟູຈາກການໃຊ້ຄວາມຮຸນແຮງ.

ໃນຂະນະດຽວກັນ, ທາງອອກໂດຍກົງໃນການຫຼີກໜີຈາກການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແມ່ນການໜີອອກຈາກເຮືອນ. ໃນຂະນະທີ່ 1/3 ຂອງຜູ້ໃຫ້ສຳພາດໄດ້ໜີອອກຈາກເຮືອນຍ້ອນບັນຫາການໃຊ້ຄວາມຮຸນແຮງ, 2/3 ຕັດສິນໃຈບໍ່ໜີ ຍ້ອນຍັງເປັນຫ່ວງລູກ ແລະ ຍັງຮັກຜົວຂອງຕົນຢູ່. ແມ່ຍິງຈຳນວນຫຼາຍທີ່ຕັດສິນໃຈຢູ່ເຮືອນຄືເກົ່າ ດ້ວຍຄວາມຫວັງທີ່ວ່າຜົວຂອງເຂົາເຈົ້າຈະມີການປ່ຽນແປງ ຫຼື ເຂົາເຈົ້າຍັງຮັກຜົວຢູ່. ໃນຄວາມເປັນຈິງແລ້ວ, ສະພາບການໃນປະເທດລາວ ແມ່ນແມ່ຍິງບໍ່ສາມາດຕັດສິນໃຈໃນການຢຸດຕິຄວາມຮຸນແຮງ ໂດຍການໜີອອກຈາກເຮືອນ. ໃນທາງກົງກັນຂ້າມກັນ, ການສຳຫຼວດຫຼາຍໆ ຄັ້ງທີ່ຜ່ານມາໄດ້ສະແດງໃຫ້ເຫັນວ່າ ແມ່ຍິງທີ່ຖືກລ່ວງລະເມີດຫຼາຍຄົນ ເລືອກທີ່ຈະບໍ່ຢູ່: ການສຳຫຼວດໜຶ່ງສະແດງ ໃຫ້ເຫັນວ່າ 88% ຂອງແມ່ຍິງທີ່ໜີອອກຈາກເຮືອນຢ່າງໜ້ອຍໜຶ່ງຄັ້ງຫຼັງຈາກມີເຫດການລ່ວງລະເມີດ (Dobash & Dobash, 1979), ແລະ ອີກສອງການສຳຫຼວດໃຫ້ເຫັນວ່າ 50% (Campbell ພ້ອມດ້ວຍຄະນະ, 1998) ແລະ 41% (Ellsberg ພ້ອມດ້ວຍຄະນະ., 2001), ຕາມລຳດັບ. ການຫຼົບໜີແມ່ນຂະບວນການ ແລະ ກໍ່ບໍ່ໄດ້ເກີດຂຶ້ນພຽງແຕ່ຄັ້ງດຽວເທົ່ານັ້ນ (Ibid.). ແມ່ຍິງໃນການສຳຫຼວດໄດ້ອະທິບາຍວ່າການໜີອອກຈາກເຮືອນເປັນວິທີການທີ່ຈະປະເຊີນກັບຄວາມຫຍຸ້ງຍາກ, ລຳບາກ, ໂດດດ່ຽວ ແລະ ທຸກຍາກ (Steutel, 1998). ສຳລັບຜົນການສຳຫຼວດ ແລະ ປະເດັນຫຼັກໃນການສຳຫຼວດຄັ້ງນີ້, ເຊິ່ງສາມາດຄາດເດົາໄດ້ວ່າ ແມ່ຍິງລາວທີ່ເຄີຍຖືກຄວາມຮຸນແຮງ ຈະຖືກບັງຄັບໃຫ້ຢູ່ເຮືອນ ຍ້ອນມົນທິນທາງສັງຄົມ ແລະ ຄວາມອັບອາຍທີ່ພົວພັນເຖິງການຢ່າຮ້າງ ຫຼື ການແຍກກັນຢູ່ ລວມກັບຄວາມກັງວົນໃນຄວາມຫຍຸ້ງຍາກທາງດ້ານເສດຖະກິດ ທີ່ອາດຈະເຮັດໃຫ້ເກີດຄວາມເຈັບປວດໃນຫຼາຍໆ ທາງທີ່ແຕກຕ່າງກັນ, ແທນທີ່ຫຼຸດພົ້ນອອກຈາກການໃຊ້ຄວາມຮຸນແຮງ.

ອີກໜຶ່ງບັນຫາທີ່ສຳຄັນຄືລະດັບການຊ່ວຍເຫຼືອຂອງໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ. ບ້ານພັກສຸກເສີນສຳລັບແມ່ຍິງ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ທີ່ໄດ້ສ້າງຕັ້ງຂຶ້ນໂດຍສູນກາງສະຫະພັນແມ່ຍິງລາວ ຢູ່ທີ່ນະຄອນຫຼວງວຽງຈັນ ໃນປີ 2006 ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານລາວ ແລະ ບັນດາຜູ້ໃຫ້ທຶນ. ນອກຈາກການເນັ້ນໜັກ ທາງດ້ານການໃຊ້ຄວາມຮຸນແຮງໃນຄອບຄົວ, ໄດ້ມີການໃຫ້ການບໍລິການສຳລັບບັນດາກໍລະນີການຄ້າມະນຸດ ແລະ ການລ່ວງລະເມີດທາງເພດ. ການໃຫ້ບໍລິການພິເສດ ລວມມີການສະໜອງທີ່ພັກເຊົາຊົ່ວຄາວ, ການໃຫ້ຄຳປຶກສາທາງດ້ານກົດໝາຍ, ການສົ່ງຕໍ່ທາງດ້ານສາທາລະນະສຸກ, ການຝຶກວິຊາຊີບ ແລະ ການສົ່ງກັບເມືອເຮືອນຢ່າງປອດໄພ. ນອກຈາກສູນກາງສະຫະພັນແມ່ຍິງລາວແລ້ວ ກໍ່ບໍ່ມີອົງການຈັດຕັ້ງອື່ນທີ່ສະໜອງທີ່ພັກເຊົາຊົ່ວຄາວໃຫ້ກັບແມ່ຍິງທີ່ຖືກເຄາະຮ້າຍໃນ ສປປ ລາວ ທີ່ຈະຫຼົບໜີອອກຈາກສະຖານະການໃນການລ່ວງລະເມີດ, ເຊັ່ນ ການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການຂົ່ມຂືນ. ຕົວຢ່າງ ທີ່ພັກເຊົາຊົ່ວຄາວ ສາມາດຊ່ວຍແມ່ຍິງໄດ້ໃນຫຼາຍທາງ, ແຕ່ການເຂົ້າເຖິງສາຍດ່ວນກໍ່ມີການບໍລິການທີ່ບໍ່ສະໝໍ່າສະເໝີ. ເຖິງຢ່າງໃດກໍ່ຕາມ, ບັນດາອົງການຈັດຕັ້ງທີ່ເຮັດວຽກກ່ຽວກັບບັນຫາທາງດ້ານບົດບາດຍິງ-ຊາຍ ແລະ ແມ່ຍິງທີ່ດ້ອຍໂອກາດ ທີ່ໄດ້ເວົ້າວ່າ ການບໍລິການແມ່ນຫົນທາງດຽວໃນການຊ່ວຍເຫຼືອແມ່ຍິງທີ່ຕ້ອງການຄວາມຊ່ວຍເຫຼືອ.

| | |
|---|---|
| **ຜູ້ໃຫ້ຂໍ້ມູນຫຼັກ, ເພດຍິງ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ** | ***"ພວກເຮົາກໍ່ສົ່ງຕໍ່ເຂົາເຈົ້າໄປທີ່ພັກຊົ່ວຄາວຂອງສູນກາງສະຫະພັນແມ່ຍິງລາວ, ເຂົາເຈົ້າສາມາດໂທຫາເບີສາຍດ່ວນໂດຍບໍ່ເສຍຄ່າ. ເຖິງວ່າການໃຫ້ບໍລິການຈະຊັກຊ້າ, ແຕ່ກໍ່ເຮັດວຽກໄດ້ດີ."*** |

ເຖິງຢ່າງໃດກໍ່ຕາມ, ຊັບພະຍາກອນທີ່ມີຢູ່ເປັນສິ່ງຈຳກັດປະສິດທິພາບຂອງມັນ. ການທີ່ບໍ່ໄດ້ສຳພາດແມ່ຍິງທີ່ຢູ່ໃນບ້ານພັກຊົ່ວຄາວໂດຍກົງ, ການສຳຫຼວດໃນຄັ້ງນີ້ຈຶ່ງບໍ່ສາມາດເກັບກຳຄວາມຄິດເຫັນ ແລະ ຄຳແນະນຳໃນການບໍລິການ ແລະ ການຊ່ວຍເຫຼືອທີ່ມີຄຸນນະພາບ. ເຖິງຢ່າງໃດກໍ່ຕາມ, ມີຄວາມຕ້ອງການໃນການແກ້ໄຂບັນຫາໂດຍຂໍຄວາມຮ່ວມມືຈາກຫຼາຍພາກສ່ວນ ແລະ ທົ່ວປະເທດ ເພື່ອການແບ່ງປັນພາລະຫນ້າທີ່ໃນການຊ່ວຍເຫຼືອແມ່ຍິງທີ່ດຳລົງຊີວິດໃນສະຖານທີ່ ທີ່ມີການໃຊ້ຄວາມຮຸນແຮງ. ນອກຈາກນີ້, ນອກຈາກຊັບພະຍາກອນທີ່ມີຢູ່ແລ້ວ, ສູນກາງສະຫະພັນແມ່ຍິງລາວ ຄວນປ່ຽນຈາກວິທີການທີ່ມີຄວາມເປັນອະນຸລັກນິຍົມ ທີ່ຈຳກັດຄວາມສາມາດໃນການປ່ຽນແປງຮີດຄອງປະເພນີທາງດ້ານບົດບາດຍິງ-ຊາຍ ແລະ ທັດສະນະຄະຕິໃນການຍອມຮັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ເສີມຂະຫຍາຍການໂຄສະນາເພື່ອສົ່ງເສີມການຕອບໂຕ້ທີ່ຫ້າວຫັນ.

ໃນດ້ານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍພາກສ່ວນອື່ນໆທີ່ກ່ຽວຂ້ອງ, ການໃຫ້ບໍລິການທາງດ້ານສາທາລະນະສຸກ ແມ່ນຈຸດການຕິດຕໍ່ທຳອິດສຳລັບແມ່ຍິງທີ່ຖືກຄວາມຮຸນແຮງໃນຄອບຄົວ ແລະ ການທຳຮ້າຍທາງເພດ, ເຖິງວ່າເຂົາເຈົ້າຈະບໍ່ເປີດເຜີຍການໃຊ້ຄວາມຮຸນແຮງນັ້ນກໍ່ຕາມ (ອົງການອະນາໄມໂລກ, 2013ຂ). ເຊັ່ນດຽວກັນ, ເຫັນວ່າແມ່ຍິງທີ່ຖືກລ່ວງລະເມີດ ໄດ້ນຳໃຊ້ການບໍລິການທາງດ້ານສາທາລະນະສຸກ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນກັບບັນຫາເຫຼົ່ານີ້ (Ibid.), ດັ່ງກໍລະນີໃນ ສປປ ລາວ ນີ້ແມ່ນມີຄວາມຈຳເປັນຫຼາຍໃນການສ້າງຂີດຄວາມສາມາດຂອງຜູ້ສະໜອງການບໍລິການທາງດ້ານສາທາລະນະສຸກໃຫ້ມີການຊ່ວຍເຫຼືອແມ່ຍິງ ແລະ ເດັກທີ່ຖືກຄວາມຮຸນແຮງຢ່າງຖືກຕ້ອງ ແລະ ເໝາະສົມ. ການຈຳແນກ, ປິ່ນປົວ ແລະ ສົ່ງຕໍ່ຢ່າງທັນເວລາ ໄປເຖິງຜູ້ຊ່ຽວຊານສະເພາະ ຫຼື ສະຖາບັນຕ່າງໆ ແມ່ນຫົວໃຈສຳຄັນ. ອົງການອະນາໄມໂລກໄດ້ພັດທະນາຄູ່ມືການປິ່ນປົວ ເຊິ່ງໄດ້ຮ່ວມມືກັບ UNFPA ແລະ UN Women ເພື່ອຜູ້ສະໜອງການບໍລິການດ້ານສາທາລະນະສຸກ ໃຫ້ເປັນຄູ່ມືໃນການຈັດຕັ້ງປະຕິບັດ (ອົງການອະນາໄມໂລກ, 2013ຂ). ຄູ່ມືນີ້ສາມາດຊ່ວຍ ຜູ້ສະໜອງການບໍລິການດ້ານສາທາລະນະສຸກ ໃນ ສປປ ລາວ ພັດທະນາຂີດຄວາມສາມາດ ໃນການປູກຈິດສຳນຶກ ໃນເລື່ອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເພີ່ມຄວາມຮູ້ ແລະ ທັກສະໃນການຕອບໂຕ້ທີ່ເໝາະສົມເພື່ອແມ່ຍິງໃນການປິ່ນປົວ.

ອີກໜຶ່ງອຸປະສັກສຳລັບແມ່ຍິງ ໃນການແກ້ໄຂບັນຫາການໃຊ້ຄວາມຮຸນແຮງ ແມ່ນການຂາດຂໍ້ມູນໃນຂະບວນການທາງດ້ານກົດໝາຍ. ໂດຍລວມແລ້ວ, ຄວາມຮູ້ຂອງແມ່ຍິງໃນດ້ານກົດໝາຍ ແລະ ລະບົບຍຸຕິທຳກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຍັງບໍ່ທັນລະອຽດ ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ຈຳນວນ 1/3 ໃນເຂດຕົວເມືອງ ຮູ້ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ໃນຂະນະທີ່ອັດຕາສ່ວນໃນເຂດຊົນນະບົດ ມີພຽງ 10%. ນອກຈາກນີ້ ຄວາມຮູ້ທາງດ້ານກົດໝາຍ ແລະ ລະບົບຍຸຕິທຳກ່ຽວຂ້ອງກັບລະດັບການສຶກສາ. 1/3 ຂອງແມ່ຍິງທີ່ສຳເລັດການສຶກສາຊັ້ນສູງຮັບຮູ້ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ທຽບກັບ 1% ຂອງແມ່ຍິງທີ່ບໍ່ໄດ້ຮຽນໜັງສື ແລະ 5% ຂອງແມ່ຍິງທີ່ຮຽນຊັ້ນປະຖົມ. ນອກຈາກນັ້ນແລ້ວ, ແມ່ຍິງທີ່ຖືກຄວາມຮຸນແຮງແມ່ນບໍ່ໄດ້ຮັບການແຈ້ງກ່ຽວກັບກົດໝາຍທີ່ສະໜອງການປົກປ້ອງ ແລະ ຊ່ວຍເຫຼືອບຸກຄົນ ແລະ ສັງຄົມ ຄືດັ່ງບັນດາແມ່ຍິງທີ່ບໍ່ເຄີຍປະເຊີນກັບບັນຫາເຫຼົ່ານີ້. ດ້ວຍເຫດນີ້, ການສະໜອງໂຄງການ ແລະ ການບໍລິການທີ່ຈຳເປັນ, ໂດຍສະເພາະ ຄວນມີການເອົາໃຈໃສ່ຕໍ່ຜູ້ຖືກເຄາະຮ້າຍ ໃນການເຂົ້າເຖິງການຊ່ວຍເຫຼືອ ແລະ ການໃຫ້ຄຳປຶກສາທີ່ທັນເວລາ. ນີ້ເປັນຕົວຊີ້ວັດວ່າມັນເປັນສິ່ງທີ່ຈຳເປັນເລັ່ງດ່ວນຫຼາຍໃນການປູກຈິດສຳນຶກໃນລະບົບກົດໝາຍ, ໂດຍສະເພາະປະຊາຊົນທີ່ຢູ່ໃນເຂດຊົນນະບົດ, ເພື່ອຄວາມເຂົ້າໃຈທີ່ພຽງພໍຂອງສິດທິທາງດ້ານກົດໝາຍ ລວມທັງການປົກປ້ອງ, ປ້ອງກັນ ແລະ ການບັງຄັບໃຊ້ກົດໝາຍຕໍ່ຜູ້ກະທຳຜິດ.

ໃນຂະນະດຽວກັນ, ຄືດັ່ງໃນບົດທີ 1, ກົດໝາຍປັດຈຸບັນ ທີ່ກ່ຽວຂ້ອງກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (ກົດໝາຍອາຍາ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ) ບໍ່ໄດ້ສະໜອງຄວາມຕ້ອງການທັງໝົດຂອງຜູ້ຖືກເຄາະຮ້າຍ. ຕົວຢ່າງບໍ່ໄດ້ລວມຄູ່ຮ່ວມຊີວິດທີ່ບໍ່ໄດ້ແຕ່ງດອງຖືກຕ້ອງຕາມກົດໝາຍ ເຂົ້າໃນກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ບໍ່ມີແນວຄິດກ່ຽວກັບການຂົ່ມຂືນຄູ່ສົມລົດ, ບໍ່ມີມາດຕະການປະເມີນການສົ່ງຕໍ່ໄປສູ່ບັນດາທີ່ພັກຊົ່ວຄາວ ຫຼື ສະຖານທີ່ ທີ່ປອດໄພອື່ນ, ລະບົບການຫຼຸດຜ່ອນໂທດທີ່ເຂົ້າໃຈຍາກ ແລະ ຄວາມສະຫຼັບສັບຊ້ອນໃນຂະບວນການຕຸລາການ. ດ້ວຍສະພາບດັ່ງກ່າວ, ການພັດທະນາ ກົດໝາຍໃໝ່ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໄດ້ມີບົດບາດທີ່ສຳຄັນໃນການບຸກທະລຸບັນດາຂໍ້ຈຳກັດທາງດ້ານກົດໝາຍທີ່ມີຢູ່ ແລະ ປັບປຸງວິທີການຈັດຕັ້ງປະຕິບັດເພື່ອການສະໜອງຄວາມຕ້ອງການທີ່ແທ້ຈິງຂອງແມ່ຍິງ ແລະ ເດັກ ທີ່ເຈັບປວດຈາກການໃຊ້ຄວາມຮຸນແຮງ ແລະ ການຖືກລ່ວງລະເມີດ.

# 10

# ປັດໄຈຕ່າງໆທີ່ກ່ຽວພັນ ກັບການໃຊ້ຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມຊີວິດ

# ພາກທີ 10. ປັດໄຈຕ່າງໆທີ່ກ່ຽວພັນກັບການຖືກຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມຊີວິດ

**ຜົນໄດ້ຮັບຫຼັກຂອງການສຳຫຼວດ:**

- ໃນຈຳນວນແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ຜູ້ທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ການລ່ວງລະເມີດທາງເພດ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ແມ່ນມີທ່າອ່ຽງທີ່ຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເຖິງ 3.9 ເທົ່າ.
- ແມ່ຍິງທີ່ຖືກລ່ວງລະເມີດ ຫຼື ຖືກທຳຮ້າຍທາງເພດ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຕັ້ງແຕ່ອາຍຸ 15 ປີ ແມ່ນມີທ່າອ່ຽງທີ່ຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເຖິງ 2.9 ເທົ່າ.
- ແມ່ຍິງທີ່ຖືກລ່ວງລະເມີດ ຫຼື ຖືກທຳຮ້າຍທາງເພດ ຕັ້ງແຕ່ອາຍຸ 15 ປີ ແມ່ນມີທ່າອ່ຽງທີ່ຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເຖິງ 2.4 ເທົ່າ.
- ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ເຄີຍມີການໃຊ້ຄວາມຮຸນແຮງກັບຜູ້ຊາຍຄົນອື່ນ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເຖິງ 4 ເທົ່າ.
- ແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ມີຄວາມສຳພັນກັບແມ່ຍິງຄົນອື່ນ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເຖິງ 2.5 ເທົ່າ.
- ແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ມີການດື່ມສິ່ງມຶນເມົາເປັນຈຳນວນຫຼາຍ ໃນທຸກໆມື້ ຫຼື ທຸກໆອາທິດ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າຄົນທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເກືອບສອງທົບ.
- ແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ເຄີຍຖືກທຸບຕີໃນຕອນຍັງນ້ອຍ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ຫຼາຍກວ່າແມ່ຍິງທີ່ມີຄູ່ຮ່ວມຊີວິດ ທີ່ບໍ່ເຄີຍປະເຊີນສິ່ງເຫຼົ່ານີ້ ເຖິງ 3.8 ເທົ່າ.
- ແມ່ຍິງທີ່ອາໄສຢູ່ໃນບ້ານທີ່ບໍ່ມີລະບົບການຊ່ວຍເຫຼືອໃນເວລາຕ້ອງການ ເຊັ່ນ: ໃນເວລາເຈັບເປັນ ຫຼື ເກີດອຸບັດເຫດໃນຄອບຄົວ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼາຍກວ່າແມ່ຍິງທີ່ອາໄສຢູ່ໃນບ້ານທີ່ມີລະບົບການຊ່ວຍເຫຼືອ ເຖິງ 3.5 ເທົ່າ.

## 10.1 ພາກສະເໜີ

ໃນພາກນີ້ແມ່ນສະແດງໃຫ້ເຫັນເຖິງປັດໃຈທີ່ມີການພົວພັນກັບການຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຫຼືທາງເພດຈາກຄູ່ຮ່ວມຊີວິດໃນຊ່ວງຊີວິດ ແລະ ປະຈຸບັນ (12 ເດືອນຜ່ານມາ) ຂອງແມ່ຍິງເຄີຍການນຳໃຊ້ຄ່າຖົດຖອຍແບບຫຼາຍຕົວປ່ຽນ. ຍ້ອນມີການເບິ່ງໃນຫຼາຍມິຕິ ແລະ ຫຼາຍໜ່ວຍງານ ໃນການສຳຫຼວດຄັ້ງນີ້, ການວິເຄາະນີ້ບໍ່ໄດ້ນຳສະເໜີຜົນກະທົບລະຫວ່າງການໃຊ້ຄວາມຮຸນແຮງ ແລະ ບັນດາຕົວຊີ້ວັດອື່ນໆ ທີ່ຖືກເລືອກ. ເຖິງຢ່າງໃດກໍ່ຕາມ, ບົດແນະນຳຂອງການສຳຫຼວດຄັ້ງນີ້ແມ່ນຊ່ວຍໃຫ້ພວກເຮົາໃຈ້ແຍກວິທີການປ້ອງກັນ ແລະ ການແຊກແຊງເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດກົດໝາຍ ແລະ ແຜນດຳເນີນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ (2020-2014) ແລະ ເດັກນ້ອຍ. ເບື້ອງຕົ້ນ,

**ກັບທີ. 10.1 ຄ່າທົດຖອຍທີ່ມີຫຼາຍຕົວແປຜົນ ແມ່ນຫຍັງ?**

ຄ່າທົດຖອຍສະໜອງຂໍ້ມູນ ຫຼື ຄ່າຖົດຖອຍ ວັດແທກສາຍພົວພັນລະຫວ່າງເງື່ອນໄຂ (ສອງເງື່ອນໄຂ) ຕົວປ່ຽນຕາມ (ຜົນໄດ້ຮັບ) ແລະ ການຕໍ່, ເງື່ອນໄຂ ຫຼື ຕົວປ່ຽນອິດສະຫຼະ (ການສຳຫຼວດ), ໂດຍຜັນປ່ຽນຕົວປ່ຽນຕາມ ມາເປັນຄະແນນຄວາມເປັນໄປໄດ້. ມັນມີຕົວປ່ຽນດຽວ ແລະ ຫຼາຍຕົວປ່ຽນ. ໃນການສຳຫຼວດນີ້, ຄ່າຖົດຖອຍຂອງຫຼາຍຕົວປ່ຽນຖືກນຳໃຊ້ເພື່ອກຳນົດ ປັດໄຈ (ຄຸນລັກສະນະ ຫຼື ປະສົບການຂອງແມ່ຍິງທີ່ໃຫ້ສຳພາດ) ແມ່ນມີການພົວພັນກັບແມ່ຍິງທີ່ຖືກ ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ. ຖ້າ p-value ໜ້ອຍກວ່າ 0.05, ຄ່າຄວາມສຳຄັນທາງສະຖິຕິແມ່ນຖືກຍອມຮັບ ເວລາທີ່ສ່ວນຮ້ອຍຂອງແມ່ຍິງທີ່ຖືກ ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ເຊິ່ງຫຼາຍກວ່າກຸ່ມອື່ນ, ຕົວຢ່າງ, ການຖືກລ່ວງລະເມີດທາງເພດໃນໄວເດັກ ຫຼື ໄວໜຸ່ມ ທຽບກັບກຸ່ມທີ່ບໍ່ເຄີຍ. ຄ່າຖົດຖອຍຫຼາຍຕົວປ່ຽນ ຈະຜະລິດ 'ອັດຕາຄວາມຜິດພາດ Odds Ratio', ເຊິ່ງແມ່ນອັດຕາສ່ວນຂອງຄວາມເປັນໄປໄດ້ຂອງປະກົດການ ຂອງເຫດການ ຫຼື ບໍ່ມີປະກົດການ (ເບິ່ງກັບ 10.2).

ບົດນີ້ໄດ້ສະເໜີວິທີການໃນການວິເຄາະ, ລວມມີ ກຸ່ມຕົວຢ່າງ ແລະ ປັດໄຈ ທີ່ພົວພັນເຖິງການເພີ່ມຂຶ້ນຂອງຄວາມສ່ຽງຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໃນໄລຍະປັດຈຸບັນ.

## 10.2 ວິທີການໃນການວິເຄາະ

ຮູບແບບຄ່າຖົດຖອຍແບບຫຼາຍຕົວປ່ຽນ (ກັບທີ 10.1) ໄດ້ຖືກນໍາໃຊ້ເພື່ອສໍາຫຼວດປັດໄຈທີ່ພົວພັນເຖິງການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ, ດັດປັບເພື່ອປັດໄຈທີ່ອາດຈະສັບສົນ. ກຸ່ມຕົວຢ່າງທີ່ໃຊ້ໃນການວິເຄາະແມ່ນ ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ.[23]

ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, 470 ຄົນ ໄດ້ລາຍງານການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຈາກຜົວ ຢ່າງໜ້ອຍໜຶ່ງຄັ້ງໃນຊ່ວງຊີວິດ, ໃນຂະນະທີ່ 2,377 ຄົນ ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ສໍາລັບຮູບແບບທາງດ້ານສະຖິຕິ, ການນໍາໃຊ້ກຸ່ມຕົວຢ່າງສໍາຮອງແມ່ນ ແມ່ຍິງ 187 ຄົນ ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໃນໄລຍະ 12 ເດືອນທີ່ຜ່ານມາ ລວມທັງກຸ່ມທີ່ເປີດເຜີຍການຖືກຄວາມຮຸນແຮງ (ກຸ່ມ 8 ໃນຮູບທີ 10.1). ກຸ່ມນີ້ຖືກປຽບທຽບກັບແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ 2,377 ຄົນ ທີ່ບໍ່ເຄີຍລາຍງານກ່ຽວກັບການໃຊ້ຄວາມຮຸນແຮງ ຈາກຄູ່ຮ່ວມຊີວິດ (ກຸ່ມ 4 ໃນຮູບທີ 10.1).

ມີພຽງແຕ່ແມ່ຍິງທີ່ເຄີຍຖືກຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນປັດຈຸບັນ ຫຼື ໄລຍະທີ່ຜ່ານມາ (ບໍ່ພຽງແຕ່ຜູ້ທີ່ລາຍງານການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດທີ່ຜ່ານມາພຽງເທົ່ານັ້ນ), ຍ້ອນວ່າຂໍ້ມູນຄຸນລັກສະນະຂອງຄູ່ຮ່ວມຊີວິດ ຖືກເກັບກໍາຂໍ້ມູນທາງດ້ານຄູ່ຮ່ວມຊີວິດໃນປັດຈຸບັນ ແລະ ທີ່ຜ່ານມາເທົ່ານັ້ນ. ດ້ວຍເຫດນີ້, ແມ່ຍິງ 17 ຄົນ ທີ່ລາຍງານການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຈາກຄູ່ຮ່ວມຊີວິດໃນອະດີດເທົ່ານັ້ນ ທີ່ບໍ່ໄດ້ນັບເອົາເຂົ້າໃນການວິເຄາະ ທີ່ຄຸນລັກສະນະຂອງຄູ່ຮ່ວມຊີວິດໄດ້ຖືກພິຈາລະນາ. ແມ່ຍິງ 187 ຄົນ ທີ່ລາຍງານການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນປັດຈຸບັນ ແລະ ທີ່ຜ່ານມາ ໄດ້ຖືກລວມເຂົ້າໃນການວິເຄາະຂອງການເປີດເຜີຍການໃຊ້ຄວາມຮຸນແຮງໃນປັດຈຸບັນ.

**ຮູບທີ 10.1 ຈໍານວນຂອງແມ່ຍິງໃນການສໍາຫຼວດ ອີງຕາມສະຖານະພາບຂອງຄູ່ຮ່ວມຊີວິດຂອງເຂົາເຈົ້າ ແລະ ປະສົບການຂອງເຂົາເຈົ້າ ທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດຈາກຄູ່ຮ່ວມຊີວິດ**




[23] ການວິເຄາະປັດໄຈສ່ຽງ ໄດ້ເຮັດຕາມແຜນຕົວແບບທີ່ໄດ້ຈັດຕັ້ງປະຕິບັດສໍາລັບການສໍາຫຼວດລະດັບຊາດກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຂອງປະເທດຫວຽດນາມ ໃນປີ 2010. Jansen H. ພ້ອມດ້ວຍຄະນະ. "ເປັນຫຍັງແມ່ຍິງບາງຄົນໃນປະເທດຫວຽດນາມປະເຊີນກັບການໃຊ້ຄວາມຮຸນແຮງຈາກຜົວມີ ຫຼາຍກວ່າກຸ່ມອື່ນ? ປັດໄຈສ່ຽງທີ່ພົວພັນເຖິງການໃຊ້ຄວາມຮຸນແຮງຈາກຜົວ ໂດຍການສໍາຫຼວດຫຼາຍຂະແໜງການໃນລະດັບຊາດ." ວິທະຍາສາດສັງຄົມ ແລະ ການຢາ (ສິງ ປີ 2015).

ການວິເຄາະ ໄດ້ມີການປຽບທຽບປັດໄຈສ່ຽງສໍາລັບແມ່ຍິງທີ່ລາຍງານການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນປັດຈຸບັນ ຫຼື ຄົນຫຼ້າສຸດ, ໃນໄລຍະ 12 ເດືອນທີ່ຜ່ານມາ, ກັບແມ່ຍິງທີ່ບໍ່ເຄີຍຖືກບັນຫາການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດຈາກຄູ່ຮ່ວມຊີວິດ. ການວິເຄາະສຸມໃສ່ປັດໄຈທີ່ຈະເພີ່ມຄວາມສ່ຽງ ("ຕົວປ່ຽນອິດສະຫຼະ" ຫຼື "ຕົວປ່ຽນຕາມ"), ເລືອກຕາມແບບແຜນແນວຄວາມຄິດ (ກອບວຽກທາງດ້ານຄວາມສໍາພັນ, ເບິ່ງບົດທີ 1) ແລະ ການເຜີຍແຜ່ຜົນການສໍາຫຼວດທາງດ້ານປັດໄຈສ່ຽງ ເຊັ່ນດຽວກັນກັບ ສົມມຸດຖານ ໃນສະພາບການສະເພາະ ທີ່ກ່ຽວຂ້ອງກັບການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນສະພາບການຂອງ ສປປ ລາວ. 40 ປັດໄຈ ກ່ຽວກັບແມ່ຍິງ, ຜົວຂອງເຂົາເຈົ້າ, ພີ່ນ້ອງ ແລະ ໝູ່ບ້ານ ໄດ້ຮັບການທົດສອບ. ປັດໄຈທີ່ລວມທັງ ຄຸນລັກສະນະທາງດ້ານສັງຄົມ-ປະຊາກອນ ຂອງແມ່ຍິງ ແລະ ຜົວ (ອາຍຸ ແລະ ການສຶກສາ), ປະສົບການອື່ນໆ ຂອງການໃຊ້ຄວາມຮຸນແຮງ, ທັດສະນະຄະຕິ, ພຶດຕິກໍາຂອງຜົວ, ຄຸນລັກສະນະຂອງຄູ່ແຕ່ງດອງ ແລະ ການຊ່ວຍເຫຼືອຈາກ ຄອບຄົວ ແລະ ເຄືອຄ່າຍໃກ້ຊິດ. 40 ຕົວປ່ຽນ ຫຼື ປັດໄຈ ແລະ ປະເພດຂອງເຂົາ ແມ່ນຢູ່ໃນເອກະສານຊ້ອນທ້າຍທີ V. ສໍາລັບແຕ່ລະປັດໄຈ, ການແຍກປະເພດ (ກຸ່ມສໍາຮອງ) ເຊັ່ນດຽວກັນກັບ ອັດຕາສ່ວນການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ທາງເພດ ໃນປັດຈຸບັນສໍາລັບກຸ່ມສໍາຮອງໃນກຸ່ມຕົວຢ່າງທັງໝົດ ຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດໄດ້ຖືກທົບທວນກ່ອນການວິເຄາະສາເຫດທີ່ນໍາໄປສູ່ປັດໄຈສ່ຽງຂອງກຸ່ມຕົວຢ່າງສໍາຮອງ.

**ກັບທີ 10.2 ອັດຕາສ່ວນທີ່ບໍ່ສອດຄ່ອງກັນ ແລະ ປັດໄຈທີ່ກໍ່ໃຫ້ເກີດຄວາມສັບສົນ**

ຜົນຂອງຄ່າຖົດຖອຍຫຼາຍຕົວປ່ຽນ ໄດ້ສ້າງ 'ອັດຕາຄວາມຜິດພາດ', ແປຜົນຈໍານວນທີ່ແມ່ຍິງຈະຖືກຄວາມຮຸນແຮງ ໃນປັດໄຈສະເພາະ. ຕົວຢ່າງ, ອັດຕາຄວາມຜິດພາດຂອງການເກີດການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ປະສົບການທີ່ຜ່ານມາໃນການຖືກລ່ວງລະເມີດທາງເພດ ແມ່ນ 2.5 ໝາຍຄວາມວ່າແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງເພດໃນໄວເດັກ ແມ່ນ 2.5 ທົບ ຫຼາຍກວ່າການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ ທຽບກັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງເຫຼົ່ານີ້. ນີ້ແມ່ນອັດຕາສ່ວນ ທີ່ບໍ່ສາມາດດັດແປງ ຫຼື ອັດຕາຄວາມຜິດພາດ, ໝາຍຄວາມວ່າປັດໄຈອື່ນໆ ນອກເໜືອຈາກການໃຊ້ຄວາມຮຸນແຮງທາງເພດນີ້ ແມ່ນຈະບໍ່ພິຈາລະນາວ່າແມ່ນການພົວພັນກັນ.

ໃນທາງກົງກັນຂ້າມ, ປັດໄຈອື່ນເຊັ່ນ ອາຍຸ, ການສຶກສາ, ສະພາບເສດຖະກິດ-ສັງຄົມ, ຫຼື ລັກສະນະຂອງຄູ່ຮ່ວມຊີວິດ ເຊິ່ງອາດສົ່ງຜົນເຖິງຜົນໄດ້ຮັບ. ບັນດາປັດໄຈອື່ນໆ ເຫຼົ່ານີ້ ເອີ້ນວ່າປັດໄຈທີ່ເຮັດໃຫ້ສັບສົນ (ຕົວປ່ຽນ), ເຊິ່ງແມ່ນ 'ສິ່ງອື່ນ' ຫຼື ຕົວປ່ຽນທີ່ເບິ່ງບໍ່ເຫັນ ທີ່ເຊື່ອມໂຍງກັນກັບຜົນໄດ້ຮັບ. ການດັດປັບອັດຕາຄວາມຜິດພາດ (AOR) ໃນບັນດາປັດໄຈທີ່ເຮັດໃຫ້ສັບສົນ ໃນຂະນະດຽວກັນ ແລະ ຄ່າຂອງການເຊື່ອມໂຍງກັນລະຫວ່າງປັດໄຈທີ່ຕ່າງກັນ, ເພາະສະນັ້ນ ຈຶ່ງເຫັນພາບທີ່ຈະແຈ້ງຂຶ້ນໃນທໍາມະຊາດທີ່ສັບຊ້ອນຂອງການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ.

ເຖິງວ່າການຖືກຄວາມຮຸນແຮງໃນໄລຍະປັດຈຸບັນ ແລະ ໃນຊ່ວງຊີວິດ ໄດ້ວັດແທກໃນບົດອື່ນໆ, ການວິເຄາະຫຼາຍຕົວປ່ຽນນີ້ ໄດ້ເລືອກພຽງແຕ່ການຖືກຄວາມຮຸນແຮງໃນໄລຍະປັດຈຸບັນເທົ່ານັ້ນ ຍ້ອນວ່າຂໍ້ເສຍຂອງ ການຖືກຄວາມຮຸນແຮງໃນຊ່ວງຊີວິດ ແມ່ນຈະກວມເອົາແມ່ຍິງທີ່ເຄີຍຖືກຖືກຄວາມຮຸນແຮງໃນເວລາດົນນານມາແລ້ວ, ກ່ອນປັດໄຈສ່ຽງ (ໃນປັດຈຸບັນ) ຈະກ່ຽວຂ້ອງ. ຂໍ້ເສຍອື່ນໆ ໃນການຖືກຄວາມຮຸນແຮງໃນຊ່ວງຊີວິດ ແມ່ນອາດຈະເຮັດໃຫ້ຮື້ຟື້ນຄວາມລໍາອຽງ. ນອກຈາກນັ້ນ, ການພົວພັນກັນຂອງການຖືກຄວາມຮຸນແຮງ ອາດຈະເບົາບາງລົງ ຍ້ອນແມ່ຍິງທີ່ເຄີຍຖືກຖືກຄວາມຮຸນແຮງໃນຊ່ວງຊີວິດ ອາດຈະບໍ່ໄດ້ອາໄສຢູ່ໃນສະພາບທີ່ມີການໃຊ້ຄວາມຮຸນແຮງດັ່ງກ່າວແລ້ວ, ເຊິ່ງອາດຈະເຮັດໃຫ້ການພົວພັນດັ່ງກ່າວເບົາບາງລົງ. ໃນບັນດາຂໍ້ດີຂອງການພົວພັນກັບການຖືກຄວາມຮຸນແຮງໃນປັດຈຸບັນ ຫຼາຍກວ່າໃນຊ່ວງຊີວິດ, ແມ່ນມີການພົວພັນທີ່ແນ່ນອນກວ່າ. ມັນຍັງມີການກ່ຽວຂ້ອງກັນຫຼາຍກວ່າສໍາລັບການແຊກແຊງໃນການແກ້ໄຂບັນຫາໃນປັດຈຸບັນຂອງແມ່ຍິງ.

ຂະບວນການວິເຄາະ, ຄ່າຖົດຖອຍຕົວປ່ຽນດຽວ ແມ່ນໄດ້ຄິດໄລ່ເພື່ອປະເມີນຄວາມຜິດພາດເບື້ອງຕົ້ນເທົ່ານັ້ນ ເຊິ່ງຈະພິຈາລະນາພຽງແຕ່ປັດໄຈທີ່ສົນໃຈເທົ່ານັ້ນ. ຕົວປ່ຽນທີ່ເຫັນວ່າພົວພັນກັບການຖືກຄວາມຮຸນແຮງໃນຄູ່ຊີວິດ. ຕົວປ່ຽນທີ່ເຫັນວ່າພົວພັນກັບການຖືກຄວາມຮຸນແຮງໃນຄູ່ຊີວິດໃນ ຕົວແບບຄ່າຖົດຖອຍຕົວປ່ຽນດຽວ. ກົດວິເຄາະນີ້ໄດ້ພິຈາລະນາຕົວປ່ຽນທາງດ້ານອາຍຸ, ຊົນເຜົ່າ ແລະ ພາກ ເພື່ອຊອກຫາ ຄ່າດັດປັບອັດຕາຄວາມຜິດພາດ (AOR), ໃນລະຫວ່າງຂັ້ນຕອນໃນການຊອກຫາຕົວປ່ຽນ ໃນຮູບແບບຖານຂໍ້ມູນສຸດທ້າຍ. ຮູບແບບສຸດທ້າຍລວມມີຕົວປ່ຽນທັງໝົດກັບ P-value ຂອງ 0.05 ຫຼື ໜ້ອຍກວ່າ, ພິຈາລະນາວ່າມີຄວາມສໍາຄັນໃນການກໍານົດປັດໄຈ ທີ່ອິດສະຫຼະພົວພັນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ.

## 10.3 ປັດໄຈທີ່ພົວພັນເຖິງການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນໄລຍະ 12 ເດືອນທີ່ຜ່ານມາ

3 ປັດໄຈຕົ້ນຕໍ (ຄວາມເປັນມາ ແລະ ຄຸນລັກສະນະຂອງແມ່ຍິງ, ຄວາມເປັນມາ ແລະ ປະຫວັດໃນໄວເດັກຂອງຜູ້ຊາຍ ເຊັ່ນດຽວກັນກັບ ປັດໄຈອື່ນໆ) ແລະ 8 ປັດໄຈສະເພາະ ໄດ້ຖືກກໍານົດໃນການພົວພັນກັບການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄູ່ຮ່ວມຊີວິດ ທີ່ແມ່ຍິງຖືກ (ຮູບທີ 10.2 ແລະ ເອກະສານຊ້ອນທ້າຍທີ V). ຄ່າກາງ ແລະ ຄ່າສຸດທ້າຍ ແມ່ນຖືກນໍາສະເໜີໃນ ເອກະສານຊ້ອນທ້າຍທີ V.

(1) ຄວາມເປັນມາ ແລະ ຄຸນລັກສະນະຂອງແມ່ຍິງ:

- ➢ ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ແມ່ນ 3.9 ທົບ ທີ່ມີທ່າອ່ຽງປະເຊີນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້ ($p<0.001$).
- ➢ ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ຫຼື ການທໍາຮ້າຍທາງເພດ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ແມ່ນ 2.9 ທົບ ທີ່ມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້ ($P<0.02$).

➢ ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ຫຼື ການທຳຮ້າຍທາງເພດ ຕັ້ງແຕ່ອາຍຸ 15 ປີ ແມ່ນ 2.4 ທົບ ທີ່ມີທ່າອ່ຽງໃນການປະເຊີນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້ (P<0.04)

(2) ຄວາມເປັນມາຂອງຜູ້ຊາຍ ແລະ ປະຫວັດໃນໄວເດັກ ຂອງຜົວ ຫຼື ຄູ່ຮ່ວມຊີວິດ:

➢ ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ດື່ມສິ່ງມຶນເມົາ ແມ່ນ ມີ ເກືອບສອງທົບ ທີ່ມີທ່າອ່ຽງໃນການປະ ເຊີ ນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດຫຼາຍ ກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້. (p<0.03).

➢ ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ຕີກັບຊາຍອື່ນ ແມ່ນມີ 4.2 ທົບ ທີ່ມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກ ບັນຫາເຫຼົ່ານີ້. (P<0.01)

➢ ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ມີແມ່ຍິງອື່ນ ແມ່ນມີ 2.5 ທົບ ທີ່ມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້. (P<0.03)

➢ ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ເຄີຍຖືກຕີໃນຕອນເປັນເດັກ ແມ່ນມີ 3.8 ທົບ ທີ່ມີທ່າອ່ຽງໃນການປະເຊີນກັບ ການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້. (p<0.001)

(3) ປັດໄຈອື່ນໆ:

➢ ແມ່ຍິງທີ່ມີເພື່ອນບ້ານທີ່ບໍ່ຊ່ວຍເຫຼືອໃນເວລາເຫັນບາງຄົນໃນຄອບຄົວເຈັບປ່ວຍ ຫຼື ເກີດອຸບັດເຫດ ແມ່ນມີທ່າອ່ຽງໃນການປະເຊີນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້ 3.5 ທົບ (p<0.03)

ຮູບທີ 10.2. ບັນດາປັດໄຈທີ່ກ່ຽວຂ້ອງກັບ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ




ໝາຍເຫດ: 95% ຄ່າຄວາມເຊື່ອໝັ້ນ (CI) ໃຊ້ໃນການຄາດຄະເນ ຄ່າຄວາມຖືກຕ້ອງຂອງອັດຕາຄວາມຜິດພາດ. ນີ້ແມ່ນລຳດັບຂອງຄ່າ (ຄ່າຕ່ຳກວ່າ ແລະ ສູງກວ່າ) ທີ່ຈະບັນລຸຄວາມເຊື່ອໝັ້ນ 95% ເຊິ່ງເປັນຄ່າທີ່ແທ້ຈິງຂອງອັດຕາຄວາມຜິດພາດ. ຖ້າຄ່າຄວາມເຊື່ອໝັ້ນ ບໍ່ແມ່ນ 1, ຜົນວິເຄາະແມ່ນມີຄວາມສຳຄັນທາງດ້ານສະຖິຕິ. ຖ້າມີຄ່າເທົ່າ 1, ອັດຕາຄວາມຜິດພາດ ແມ່ນບໍ່ມີຄວາມສຳຄັນທາງດ້ານສະຖິຕິ.

## 10.4 ພາກສົນທະນາ

ບົດນີ້ໄດ້ທົດສອບປັດໄຈທີ່ເພີ່ມຄວາມສ່ຽງຂອງການຖືກຄວາມຮຸນແຮງຕໍ່ແມ່ຍິງຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ. ປັດໄຈທີ່ມີຄວາມສຳຄັນທີ່ເພີ່ມຄວາມສ່ຽງຂອງແມ່ຍິງໃນການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ, ພຶດຕິກຳຂອງຜູ້ຊາຍທີ່ຕໍ່ຕ້ານສັງຄົມ ເຊັ່ນ ການຕີກັນ, ສິ່ງມຶນເມົາ, ການນອກໃຈ, ປະສົບການທີ່ຜ່ານມາໃນການຖືກຄວາມຮຸນແຮງ ແລະ ບໍ່ມີລະບົບການຊ່ວຍເຫຼືອຈາກເພື່ອນບ້ານ ຫຼື ບ້ານ.

ປັດໄຈທີ່ພົວພັນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ການຖືກຄວາມຮຸນແຮງທາງເພດ ສາມາດຈຳແນກໂດຍ ກອບວຽກໃນຕົວແບບທາງດ້ານສາຍພົວພັນລະຫວ່າງຜູ້ຊາຍ ແລະ ແມ່ຍິງ, ເຊັ່ນ ຄຸນລັກສະນະຂອງບຸກຄົນ (ອາຍຸ, ການສຶກສາ, ລາຍໄດ້, ການທາລຸນເດັກ, ພຶດຕິກຳທີ່ຕໍ່ຕ້ານສັງຄົມ, ອາການເຈັບປ່ວຍທາງຈິດ, ການໃຊ້ເປັນປະຈຳ, ການຍອມຮັບການຖືກຄວາມຮຸນແຮງ), ສາຍພົວພັນ (ການມີຄູ່ຮ່ວມຊີວິດຫຼາຍຄົນ ຫຼື ການນອກໃຈ), ບ້ານ (ການລົງໂທດທີ່ເບົາບາງໃນບ້ານ, ຄວາມທຸກຍາກ) ແລະ ສັງຄົມ (ຮີດຄອງທາງດ້ານບົດບາດຍິງ-ຊາຍ ແລະ ຮີດຄອງປະເພນີສັງຄົມໃນການສົ່ງເສີມການຖືກຄວາມຮຸນແຮງ) (ອົງການອະນາໄມໂລກ, 2010). ການຖືກຄວາມຮຸນແຮງຕໍ່ແມ່ຍິງຂອງຜູ້ຊາຍທີ່ພົວພັນກັບຄວາມສຳພັນກັນ ທີ່ມີຄວາມສະຫຼັບສັບຊ້ອນໃນລະດັບບຸກຄົນ, ສາຍພົວພັນ, ບ້ານ ແລະ ສັງຄົມ. ບັນດາປັດໄຈເຫຼົ່ານີ້ບໍ່ສາມາດຕີຄວາມຢ່າງໂດດດ່ຽວໄດ້ ແລະ ຄວນທີ່ຈະນຳໃຊ້

ສະພາບແວດລ້ອມທີ່ເປັນຢູ່ໃນວົງກວ້າງຂອງອັດຕາສ່ວນໃນຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ (Fulu ພ້ອມດ້ວຍຄະນະ., 2014). ຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ຮີດຄອງທາງສັງຄົມໄດ້ປະຕິເສດ ແລະ ສະກັດກັ້ນການຖືກຄວາມຮຸນແຮງຕໍ່ແມ່ຍິງເປັນປັດໄຈປົກປ້ອງເບື້ອງຕົ້ນ. ບັນດາປັດໄຈປົກປ້ອງອື່ນໆ ຂອງການຖືກຄວາມຮຸນແຮງຕໍ່ແມ່ຍິງ ແມ່ນ 'ການສຶກສາ', 'ສະພາບແວດລ້ອມໃນຄອບຄົວ ແລະ ການລ້ຽງດູ', 'ການຈາກໄປຂອງຄູ່ຮ່ວມຊີວິດ','ການສະໜັບສະໜູນຂອງຄອບຄົວ','ການອາໄສຢູ່ໃນຄອບຄົວໃຫຍ່','ການຢູ່ຮ່ວມກັນເປັນສະມາຄົມ' ແລະ 'ຄວາມສາມາດຂອງແມ່ຍິງໃນການຮັບຮູ້ຄວາມສ່ຽງຂອງການຖືກຄວາມຮຸນແຮງທາງເພດ' (ອົງການອະນາໄມໂລກ, 2010, Gidycz ພ້ອມດ້ວຍຄະນະ.2007, Schwartz ພ້ອມດ້ວຍຄະນະ., 2006, Ellsberg ພ້ອມດ້ວຍຄະນະ.,1999).

ການສຳຫຼວດພົບວ່າໃນລະດັບບຸກຄົນ, ແມ່ຍິງທີ່ເຄີຍຖືກກັບການລ່ວງລະເມີດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດໃນຕອນຍັງນ້ອຍ ແລະ ກໍ່ຍັງມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ທຽບກັບແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້. ຜົນການສຳຫຼວດນີ້ໄປໃນທິດທາງດຽວກັນກັບການສຳຫຼວດຈາກປະເທດອິນເດຍ ທີ່ແມ່ຍິງທີ່ເຄີຍຖືກການລ່ວງລະເມີດຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແມ່ນມີທ່າອ່ຽງໃນການລາຍງານ ການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້ ເຖິງ 3.8 ທົບ (Boyle ພ້ອມດ້ວຍຄະນະ., 2009).

ສຳລັບຜູ້ຖືກເຄາະຮ້າຍ, ປະຫວັດຂອງການຖືກຄວາມຮຸນແຮງໃນຫຼາຍເຊັ່ນຄົນ ແມ່ນເປັນການຄາດຄະເນທີ່ສຳຄັນ ສຳລັບການຖືກຄວາມຮຸນແຮງໃນປັດຈຸບັນ ແລະ ໃນຊ່ວງຊີວິດ. ເມື່ອແມ່ຍິງເຕີບໃຫຍ່ໃນຄອບຄົວທີ່ແມ່ຂອງລາວຖືກຕີ, ລາວຈະຮຽນຮູ້ວ່າການຖືກຄວາມຮຸນແຮງເປັນເລື່ອງ "ທຳມະດາ" ມັນແມ່ນສ່ວນໜຶ່ງຂອງຄວາມສຳພັນລະຫວ່າງຍິງ-ຊາຍ (ສູນຊ່ວຍເຫຼືອສຸກເສີນສຳລັບແມ່ຍິງຂອງປະເທດ ຟິຈິ, 2013). ດ້ວຍເຫດນີ້, ໜຶ່ງປັດໄຈໃນການປົກປ້ອງ ແມ່ນຮັບປະກັນວ່າວິທີການລ້ຽງລູກ ແລະ ສະພາບແວດລ້ອມທີ່ສົ່ງເສີມທາງເລືອກໃນການມີຊີວິດທີ່ດີ ແລະ ແຂງແຮງໃນຄອບຄົວ ແລະ ບ້ານ.

ສຳລັບມາດຕະການໃນການປ້ອງກັນເບື້ອງຕົ້ນ, ໃນກໍລະນີທີ່ເດັກຖືກທາລຸນ ລວມທັງການລ່ວງລະເມີດທາງເພດ, ໄດ້ມີການແນະນຳຫຼາຍທາງເລືອກໃນວິທີການປ້ອງກັນ. ສິ່ງເຫຼົ່ານີ້ແມ່ນເພື່ອກຳນົດ ແລະ ປິ່ນປົວເດັກທີ່ມີອາການທາງຈິດ, ສະໜອງການຊ່ວຍເຫຼືອສຳລັບເດັກ ແລະ ໄວໜຸ່ມທີ່ຖືກທາລຸນ ແລະ/ຫຼື ຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ການຈັດຫາການຝຶກອົບຮົມໃນໂຮງຮຽນ ສຳລັບການພັດທະນາທັກສະທາງສັງຄົມ ແລະ ອາລົມ ແລະປ້ອງກັນການຂົ່ມເຫງ ແລະ ທຸກຮູບແບບຂອງການໃຊ້ຄວາມຮຸນແຮງ (ອົງການອະນາໄມໂລກ, 2010). ຍ້ອນການລ່ວງລະເມີດທາງເພດ ຫຼື ກໍລະນີການທຳຮ້າຍຕ່າງໆ ແມ່ນບໍ່ໄດ້ຮັບການລາຍງານ ໃນ ສປປ ລາວ ຄືດັ່ງທີ່ໄດ້ເປີດເຜີຍໃນການສຳຫຼວດທາງດ້ານຄຸນນະພາບ, ການປ່ຽນແປງທາງດ້ານຮີດຄອງປະເພນີວັດທະນະທຳ ແລະ ສັງຄົມໃນປັດຈຸບັນເປັນສິ່ງທີ່ສຳຄັນຫຼາຍ ໂດຍເນັ້ນໃສ່ການຮັກສາກຽດສັກສີຂອງຄອບຄົວ ແລະ ຄວາມບໍລິສຸດທາງເພດ, ເຊັ່ນດຽວກັນກັບ ຄວາມເປັນສຸພາບບຸລຸດ ທີ່ສະແດງອອກໃນທາງເພດ, ການເປັນຫົວໜ້າທີ່ເຂັ້ມແຂງຂອງເພດຊາຍ, ການມີສິດ ອຳນາດເໜືອກວ່າແມ່ຍິງ, ຄວາມເຂັ້ມແຂງທາງຮ່າງກາຍ ແລະ ສັກສີຂອງຜູ້ຊາຍ, ເຊິ່ງມັກມີການພົວພັນເຖິງການຂົ່ມຂືນ.

ອີກໜຶ່ງປັດໄຈສ່ວນບຸກຄົນ ທີ່ກ່ຽວກັບຜູ້ຊາຍໃນການສຳຫຼວດຄັ້ງນີ້ ແມ່ນອັດຕາສ່ວນຄູ່ຮ່ວມຊີວິດຂອງແມ່ຍິງທີ່ຕີກັບຜູ້ຊາຍຄົນອື່ນ. ຄວາມໂມໂຫງ່າຍທີ່ນຳໄປສູ່ການຕໍ່ສູ້ ຊຶ່ງກາຍເປັນບັນຫາຮ້າຍແຮງຂຶ້ນຍ້ອນສະພາບຄວາມເປັນມາຂອງຄອບຄົວ, ເຊິ່ງເດັກຊາຍຖືກກັບສາຍພົວພັນທີ່ບໍ່ຄົງທີ່ຍ້ອນການຖືກຄວາມຮຸນແຮງ. ໃນການສຳຫຼວດນີ້, ພຶດຕິກຳຕໍ່ຕ້ານຂອງຜູ້ຊາຍທີ່ພົວພັນເຖິງການຕໍ່ສູ້ ແມ່ນການຄາດຄະເນທີ່ເຂັ້ມແຂງທີ່ສຸດໃນ ການຖືກຄວາມຮຸນແຮງທຽບກັບປັດໄຈອື່ນໆ, ບັນທຶກ AOR ຂອງ 4.21. ບາງການສຳຫຼວດທີ່ຜ່ານມາ ໄດ້ແນະນຳກ່ຽວກັບການພົວພັນກັນ ລະຫວ່າງອາການຂອງບຸກຄະລິກທີ່ຕໍ່ຕ້ານສັງຄົມ ແລະ ຄຸນລັກສະນະທີ່ກ່ຽວຂ້ອງອື່ນໆ (ເຊັ່ນ ເຮັດໂດຍບໍ່ຄິດ ແລະ ການບໍ່ເຫັນໃຈຄົນອື່ນ) ແລະ ຜູ້ທີ່ໃຊ້ຄວາມຮຸນແຮງຕໍ່ຄູ່ຮ່ວມຊີວິດ ຫຼື ໃຊ້ຄວາມຮຸນແຮງທາງເພດ (Ibid.). ທັດສະນະຄະຕິສ່ວນບຸກຄົນກໍ່ແມ່ນອີກວິທີໜຶ່ງໃນການປົກປ້ອງ ແລະ ແຊກແຊງ. ເຖິງຢ່າງໃດກໍ່ຕາມ, ມັນຄົງຈະເປັນໄປບໍ່ໄດ້ທີ່ ຈະເຫັນຜົນກະທົບທີ່ສຳຄັນໃນຄວາມຖີ່ຂອງການໃຊ້ຄວາມຮຸນແຮງດ້ວຍຕົນເອງ (Fulu ພ້ອມດ້ວຍ ຄະນະ., 2013). ໃນການປ້ອງກັນເບື້ອງຕົ້ນ, ສິ່ງທີ່ອາດຈະເປັນຈິງທີ່ສຸດຄືການອອກແບບ ແລະ ແນະນຳມາດຕະການສຳລັບໄວໜຸ່ມຊາຍ ແລະ ເດັກຊາຍທີ່ມີເປົ້າໝາຍໃນການພັດທະນາທັກສະທາງສັງຄົມ ແລະ ອາລົມ ເພື່ອເຂົ້າໃຈການສື່ສານກັບຫຼາຍໆຄົນ, ສາຍພົວພັນທີ່ມີການໃຫ້ກຽດເຊິ່ງກັນ ແລະ ກັນ ແລະ ການເຈລະຈາຕໍ່ລອງໃນໂຮງຮຽນ ເຊັ່ນດຽວກັນກັບໃນບ້ານ ເຊິ່ງເປັນຫົວຂໍ້ການຝຶກອົບຮົມທີ່ລະອຽດອ່ອນ. ເຊັ່ນດຽວກັນ, ຜູ້ຊາຍທີ່ຖືກລ່ວງລະເມີດໃນເວລາທີ່ເປັນເດັກ ມີທ່າອ່ຽງໃນການ ໃຊ້ຄວາມຮຸນແຮງຕໍ່ຄູ່ຮ່ວມຊີວິດ. ນີ້ແມ່ນຫຼັກຖານທີ່ສຳຄັນຂອງປະສົບການໃນໄວເດັກ. ຖ້າຜູ້ຊາຍເຄີຍຖືກຄວາມຮຸນແຮງໃນຕອນເປັນເດັກ, ລາວບໍ່ພຽງແຕ່ມີຄວາມສ່ຽງທີ່ຈະຖືກກັບບັນຫາທາງດ້ານຊີວິດການເປັນຢູ່, ສຸຂະພາບ ແລະ ການຮຽນເທົ່ານັ້ນ, ແຕ່ຍັງມີຄວາມສ່ຽງໃນການທີ່ຈະກາຍເປັນຜູ້ກະທຳຜິດ ໃນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຕອນທີ່ລາວກາຍເປັນຜູ້ໃຫຍ່ (ສູນຊ່ວຍເຫຼືອສຸກເສີນສຳລັບແມ່ຍິງຂອງ ປະເທດ ຟິຈິ, 2013).

ສິ່ງມຶນເມົາກໍ່ໄດ້ຖືກຄົ້ນພົບໃນການສຶກສາໃນຄັ້ງນີ້ ວ່າເປັນສາເຫດຂອງການໃຊ້ຄວາມຮຸນແຮງ. ການວິເຄາະແບບຫຼາຍຕົວປ່ຽນ ແລະ ການສຳຫຼວດທາງດ້ານຄຸນນະພາບ ສະແດງໃຫ້ເຫັນຄວາມເສຍຫາຍໃນການໃຊ້ສິ່ງມຶນເມົາ ເຊິ່ງພົວພັນເຖິງການກະທຳຜິດໃນການໃຊ້ຄວາມຮຸນແຮງຕໍ່ຄູ່ຮ່ວມຊີວິດ ແລະ ການໃຊ້ຄວາມຮຸນແຮງທາງເພດ. ໃນບາງກໍລະນີ, ຜູ້ຊາຍໄດ້ໃຊ້ສິ່ງມຶນເມົາໃນການກະຕຸ້ນຕົນເອງລ່ວງໜ້າ ເພື່ອຈະຕົບຕີຄູ່ຮ່ວມຊີວິດ ຍ້ອນຄິດວ່າການກະທຳນີ້ ເປັນສິ່ງທີ່ສັງຄົມຄາດຫວັງ ແລະ ຍອມຮັບໄດ້ (Jewkes, 2002). ມີຫຼາຍໆ ການສຳຫຼວດທີ່ຄົ້ນພົບການພົວພັນກັນລະຫວ່າງການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ການຖືກຄວາມຮຸນແຮງທາງເພດ ແລະ ຄວາມເສຍຫາຍຈາດການໃຊ້ສິ່ງມຶນເມົາ ແລະ ຢາເສບຕິດໃນປະເທດກຳລັງພັດທະນາ ແລະ ປະເທດທີ່ພັດທະນາແລ້ວ (ອົງການອາຫານໂລກ, 2010). ນອກຈາກຜົນການສຳຫຼວດນີ້ແລ້ວ, ມີການຖົກຖຽງວ່າຕ້ອງມີການທົບທວນຄືນຢ່າງລະມັດລະວັງໃນການເຊື່ອມໂຍງດັ່ງກ່າວ ຍ້ອນວ່າຫຼັກຖານສຳລັບສາຍພົວພັນລະຫວ່າງການໃຊ້ສິ່ງມຶນເມົາ ແລະ ການໃຊ້ຄວາມຮຸນແຮງ ແມ່ນຍັງອ່ອນແອ (Gil-Gonzalez ພ້ອມດ້ວຍຄະນະ., 2006). ຜົນກະທົບຂອງການໃຊ້ສິ່ງມຶນເມົາໃນປະສົບການໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ການຖືກຄວາມຮຸນແຮງທາງເພດ, ສິ່ງເຫຼົ່ານີ້ບໍ່ໄດ້ຮັບການອະທິບາຍ ແລະ ຢັ້ງຢືນຢ່າງຈະແຈ້ງ. ການທີ່ຜູ້ຊາຍໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ກໍ່ມີການພົວພັນກັບຫຼາຍໆ ປັດໄຈທີ່ມີຄວາມສະຫຼັບສັບຊ້ອນ ແລະ ບໍ່ສາມາດແຍກອອກຈາກກັນໄດ້. ທີ່ຈິງແລ້ວ, ບັນດາປັດໄຈເຫຼົ່ານີ້ແມ່ນຈະເຊື່ອມໂຍງກັບຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ. ດ້ວຍເຫດນີ້, 'ການຢຸດຕິພຽງແຕ່ປັດໄຈດຽວ - ເຊັ່ນ ການໃຊ້ສິ່ງມຶນເມົາ - ຈຶ່ງບໍ່ສາມາດຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໄດ້ (Fulu ພ້ອມດ້ວຍຄະນະ., 2013)'.

ໃນລະດັບຂອງສາຍພົວພັນ, ຜູ້ຊາຍທີ່ມີຄູ່ນອນຫຼາຍຄົນ ຄືດັ່ງທີ່ໄດ້ຮັບການລາຍງານຈາກແມ່ຍິງ ແມ່ນມີທ່າອ່ຽງໃນການເປັນຜູ້ກະທຳຜິດ ໃນການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຫຼື ການໃຊ້ຄວາມຮຸນແຮງທາງເພດ. ບັນຫາຂອງການມີຄູ່ນອນຫຼາຍຄົນ ກໍ່ຍັງໄດ້ລະບຸຢ່າງຈະແຈ້ງໃນການວິເຄາະແບບຫຼາຍຕົວປ່ຽນ ແລະ ການສຳຫຼວດທາງດ້ານຄຸນນະພາບ. ຜູ້ຊາຍຈະຊອກຫາຄູ່ນອນຫຼາຍໆຄົນ ເພື່ອການເຂົ້າສັງຄົມກັບໝູ່ເພື່ອນ ແລະ ເພື່ອສັກສີຂອງຕົນ, ໃນຂະນະທີ່ບໍ່ມີອາລົມຄວາມຮູ້ສຶກເຂົ້າມາພົວພັນ ແລະ ປາສະຈາກຂໍ້ຜູກມັດທາງຄວາມຮູ້ສຶກ ກັບຄູ່ນອນເຫຼົ່ານັ້ນ (Jewkes ພ້ອມດ້ວຍຄະນະ., 2006). ເຊັ່ນກັນກັບ ທັດສະນະຄະຕິໃນການມີຄູ່ນອນຫຼາຍຄົນ ຫຼື ການມີເພດສຳພັນກັບໂສເພນີ ເຊິ່ງເປັນຜົນມາຈາກການລວມກັນຂອງຄວາມວຸ້ນວາຍຢູ່ກັບສິ່ງເຫຼົ່ານີ້ຫຼາຍຈົນເກີນໄປ (hetero) ການມີເພດສຳພັນ ຫຼື ອຳນາດທາງເພດເໜືອກວ່າແມ່ຍິງ (Malamuth, 2003). ຂະບວນການດັ່ງກ່າວແມ່ນລວມຢູ່ໃນຄວາມເປັນບຸລຸດທີ່ຕ້ອງມີຄວາມເຂັ້ມແຂງ, ແຂງກະດ້າງ ແລະ ການມີອຳນາດເໜືອຊາຍອື່ນເຊັ່ນກັນ (Knight & Sims-Knight, 2003). ໃນການສຳຫຼວດທາງດ້ານຄຸນນະພາບ, ບັນຫາເມຍນ້ອຍແມ່ນໄດ້ຮັບການລາຍງານເຊິ່ງພົວພັນກັບການດື່ມສິ່ງມຶນເມົາ ແລະ "ສາວເບຍ" ໃນສະຖານບັນເທີງ. ການນອກໃຈ ລວມທັງການບໍ່ເຊື່ອໃຈກັນ ເຊິ່ງເປັນສາເຫດໃນການເຮັດໃຫ້ມີການຜິດຖຽງກັນໃນຄູ່ຜົວເມຍ. ຄວາມບໍ່ເພິ່ງພໍໃຈໃນຊີວິດແຕ່ງດອງ ແລະ ການບໍ່ລົງຮອຍກັນ ແມ່ນຍິ່ງເຮັດໃຫ້ເກີດການກະທຳຜິດ ແລະ ປະສົບການໃນການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ (Tang & Lai, 2008, Morrison ພ້ອມດ້ວຍຄະນະ., 2004, Stith ພ້ອມດ້ວຍຄະນະ., 2004). ຄ້າຍຄືກັນກັບບັນຫາທີ່ກ່ຽວຂ້ອງກັບສິ່ງມຶນເມົາ, ການນອກໃຈຂອງ ຜົວ ຫຼື ຄູ່ຮ່ວມຊີວິດ ພຽງຢ່າງດຽວບໍ່ແມ່ນຮາກເຫງົ້າຂອງບັນຫາການໃຊ້ຄວາມຮຸນແຮງ. ການສຳຫຼວດເພີ່ມເຕີມກ່ຽວກັບຄວາມແຕກແຍກກັນ ແລະ ຜິດຖຽງກັນ ເຊິ່ງພົວພັນກັບການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ເຊິ່ງອາດຈະຕ້ອງເບິ່ງວ່າ ເປັນພຽງແຕ່ເປັນບາງພາກສ່ວນຂອງຜົນໄດ້ຮັບ ຫຼື ຂະບວນການເຫຼົ່ານີ້ຈະນຳໄປສູ່ການໃຊ້ຄວາມຮຸນແຮງ (Fulu ພ້ອມດ້ວຍ ຄະນະ., 2013).

ໃນຂັ້ນບ້ານ, ການສະໜັບສະໜູນແມ່ນອີງຕາມການຊ່ວຍເຫຼືອ ແລະ ຄວາມສາມັກຄີ, ເຊັ່ນດຽວກັບປັດໄຈທີ່ຈຳເປັນໃນການປົກປ້ອງແມ່ຍິງ ແລະເດັກຈາກການຖືກຄວາມຮຸນແຮງ. ການສຳຫຼວດນີ້ໄດ້ພົບວ່າ ແມ່ຍິງທີ່ອາໄສຢູ່ໃນບ້ານທີ່ມີການຊ່ວຍເຫຼືອຄົນທີ່ຕ້ອງການຄວາມຊ່ວຍເຫຼືອ, ເຊັ່ນໃນເວລາເຈັບເປັນ ຫຼື ເກີດອຸບັດເຫດ, ຄອບຄົວທີ່ບ້ານມີການຊ່ວຍເຫຼືອກັນນັ້ນ ຈະມີຄວາມສ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໜ້ອຍກວ່າບ້ານທີ່ບໍ່ມີການຊ່ວຍເຫຼືອກັນ. ໃນຄວາມເປັນຈິງ, ແມ່ຍິງທີ່ຖືກຄວາມຮຸນແຮງ ແມ່ນຈະພົບຄວາມຫຍຸ້ງຍາກໃນການຂໍຄວາມຊ່ວຍເຫຼືອ ແລະ ນີ້ກໍ່ເຮັດໃຫ້ມີຄວາມຫຍຸ້ງຍາກຕໍ່ເພື່ອນບ້ານໃນການທີ່ຈະຊ່ວຍແມ່ຍິງເຫຼົ່ານັ້ນໃຫ້ທັນເວລາ ໃນເວລາທີ່ມີການໃຊ້ຄວາມຮຸນແຮງໃນຄອບຄົວ. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດນີ້ໄດ້ສະແດງໃຫ້ເຫັນວ່າ ລະບົບການຊ່ວຍເຫຼືອຈາກເພື່ອນບ້ານທີ່ເຂັ້ມແຂງ ສາມາດເປັນປັດໄຈສຳຄັນໃນການຢຸດຕິການໃຊ້ຄວາມຮຸນແຮງ ແລະ ສ້າງສະພາບແວດລ້ອມທີ່ຈະບໍ່ອົດກັ້ນຕໍ່ການໃຊ້ຄວາມຮຸນແຮງ. ການຊ່ວຍເຫຼືອດັ່ງກ່າວ ຄວນທີ່ຈະໄດ້ຮັບການສ້າງຄວາມເຂັ້ມແຂງ ໂດຍອຳນາດການປົກຄອງໃນບ້ານທີ່ສາມາດເຂົ້າເຖິງໄດ້ ແລະ ການປຸກລະດົມ ທີ່ສະໜອງບັນດາກິດຈະກຳ ແລະ ການແຊກແຊງຕ່າງໆ ເຊັ່ນ ການປະຊຸມໃນບ້ານ, ການຝຶກອົບຮົມ ແລະ ຄວາມລະອຽດອ່ອນໃນການປ່ຽນແປງຮີດຄອງປະເພນີ ແລະ ຄຸນຄ່າທາງດ້ານບົດບາດຍິງ-ຊາຍ ທີ່ນຳໄປສູ່ການໃຊ້ຄວາມຮຸນແຮງໃນບ້ານ. ການຝຶກອົບຮົມສາມາດຈັດໄດ້ໂດຍ ໜ່ວຍໄກ່ເກ່ຍຄະດີຂັ້ນບ້ານ ເພື່ອເສີມຂະຫຍາຍຂີດຄວາມສາມາດ ແລະ ສົ່ງເສີມການແກ້ໄຂບັນຫາໂດຍບ້ານຢ່າງກວ້າງຂວາງ ເພື່ອການລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (Jewkes, 2002). ໃນຂະນະດຽວກັນ, ບັນດາກິດຈະກຳໃນການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ສາມາດເຮັດໄດ້ໃນຂັ້ນບ້ານ ເພື່ອບັນລຸການປູກຈິດສຳນຶກ, ການສົ່ງເສີມສິດທິແມ່ຍິງ, ການສະໜອງຂໍ້ມູນກ່ຽວກັບສະຖານທີ່ ທີ່ປອດໄພໃຫ້ແມ່ຍິງມີສ່ວນຮ່ວມ, ສົ່ງເສີມການບັງຄັບໃຊ້ການລົງໂທດທີ່ເຄັ່ງຄັດຕໍ່ຜູ້ກະທຳຜິດ ແລະ ການລົງໂທດ ທາງກົດໝາຍເພື່ອຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນສັງຄົມລາວ.

# ພາກສະຫຼຸບ

# ພາກທີ 11. ພາກສະຫຼຸບ

## 11.1 ພາກສະເໜີ

ການສຳຫຼວດນີ້ມີເປົ້າໝາຍໃນການສະໜອງຫຼັກຖານທີ່ເຂັ້ມແຂງຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ລວມທັງການໃຊ້ຄວາມຮຸນແຮງໃນຄອບຄົວ, ເພື່ອການສ້າງນະໂຍບາຍ ແລະ ການເປັນກະບອກສຽງ ເພື່ອການແກ້ໄຂບັນຫາຢ່າງມີປະສິດທິພາບໃນ ສປປ ລາວ. ໂດຍການເຮັດການສຳຫຼວດທີ່ອີງຕາມປະຊາກອນໃນຂອບເຂດທົ່ວປະເທດ, ຕາມດ້ວຍວິທີການສຶກສາແບບຫຼາຍປະເທດຂອງອົງການອະນາໄມໂລກ, ຜົນການສຳຫຼວດໃນຄັ້ງນີ້ ໄດ້ສະໜອງຂໍ້ມູນທີ່ແຂງແຮງ ເຊິ່ງສະແດງໃຫ້ເຫັນສະຖານະການທີ່ແມ່ຍິງຖືກຄວາມຮຸນແຮງ. ຜົນການສຳຫຼວດຈະປະກອບສ່ວນຢ່າງແທ້ຈິງຕໍ່ບັນດານະໂຍບາຍ ແລະ ການຈັດຕັ້ງປະຕິບັດ ເຊັ່ນ ແຜນດຳເນີນງານແຫ່ງຊາດ ກ່ຽວກັບການປ້ອງກັນ ແລະ ລຶບລ້າງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປ ລາວ (2014-2020), ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ບົດລາຍງານສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການ ຈຳແນກຕໍ່ແມ່ຍິງ (CEDAW) ແລະ ການໂຄສະນາອື່ນໆ.

ບົດນີ້ໄດ້ມີການສະຫຼຸບສັງລວມໂດຍຫຍໍ້ ກ່ຽວກັບຜົນການສຶກສາ ລວມເຖິງ ການປະເມີນບັນດາທ່າແຮງ ແລະ ຂໍ້ຈຳກັດຕ່າງໆ.

## 11.2 ອັດຕາສ່ວນ, ປະເພດ ແລະ ຄວາມຖີ່ ຂອງການໃຊ້ຄວາມຮຸນແຮງ

ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ, ອັດຕາສ່ວນໂດຍລວມ ຂອງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແມ່ນ 11.6% ໃນຊ່ວງຊີວິດ ແລະ 4.0% ໃນໄລຍະ 12 ເດືອນທີ່ຜ່ານມາ. ຜົນການສຳຫຼວດນີ້ ແມ່ນບໍ່ແຕກຕ່າງຈາກການສຳຫຼວດທີ່ຜ່ານມາ, ເຊັ່ນ ການສຳຫຼວດການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ບົດບາດຍິງຊາຍໃນເຂດຊົນນະບົດ (17% ໃນຊ່ວງຊີວິດ) ເຊິ່ງໄດ້ດຳເນີນການສຳຫຼວດໂດຍ ກຸ່ມພັດທະນາບົດບາດຍິງ-ຊາຍ ໃນປີ 2013. ໃນດ້ານການໃຊ້ຄວາມຮຸນແຮງໃນທາງເພດ, ອັດຕາໂດຍລວມແມ່ນ 7.2% ໃນຊ່ວງຊີວິດ ແລະ 3.1% ໃນໄລຍະ 12 ເດືອນທີ່ຜ່ານມາ, ເຊິ່ງສູງກວ່າຜົນການສຳຫຼວດຈາກກຸ່ມພັດທະນາບົດບາດຍິງ-ຊາຍ (1.6%). ໃນຂະນະທີ່ບໍ່ມີຄວາມແຕກຕ່າງໃນບັນດາພູມສັນຖານທີ່ແຕກຕ່າງກັນໃນການສຳຫຼວດຄັ້ງນີ້, ແມ່ຍິງກຸ່ມໄວໜຸ່ມ ແລະ ໃນກຸ່ມອາຍຸ 30 ປີຂຶ້ນໄປ ທີ່ມີການສຶກສາໃນລະດັບສູງກວ່າກຸ່ມອື່ນ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງທາງເພດ. ການສຳຫຼວດພົບວ່າແມ່ຍິງໄດ້ຖືກການຖືກຄວາມຮຸນແຮງຫຼາຍຮູບແບບ, ໂດຍແຍກກັນ ຫຼື ລວມກັນ, ເຊິ່ງຫຼາຍກວ່າການຖືກຄວາມຮຸນແຮງທາງເພດພຽງຮູບແບບດຽວ ຄື 15.3% ຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດໄດ້ລາຍງານການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ. ອັດຕາສ່ວນການຖືກຄວາມຮຸນແຮງທາງດ້ານຈິດໃຈ ໃນບັນດາແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດ ແມ່ນ 26.2% ໃນຊ່ວງຊີວິດ ແລະ 10.5% ໃນໄລຍະ 12 ເດືອນທີ່ຜ່ານມາ. ບັນຫານີ້ກໍ່ຍັງເກີດຂຶ້ນຫຼາຍທີ່ສຸດຈາກ 3 ຮູບແບບຂອງການໃຊ້ຄວາມຮຸນແຮງ ແລະ ແມ່ຍິງຫຼາຍໆ ຄົນທີ່ໃຫ້ສຳພາດໃນການສຳຫຼວດທາງດ້ານຄຸນນະພາບ ໄດ້ລາຍງານວ່າເຂົາເຈົ້າເຈັບປວດຈາກການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ. ໂດຍທຳມະຊາດຂອງການໃຊ້ຄວາມຮຸນແຮງທາງດ້ານຈິດໃຈ ແມ່ນບໍ່ສາມາດເບິ່ງເຫັນ ແລະ ຖືກເບິ່ງຂ້າມ, ເຊິ່ງຕ່າງຈາກການໃຊ້ຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ, ແຕ່ການຖືກຄວາມຮຸນແຮງທາງດ້ານຈິດໃຈກໍ່ມີຜົນກະທົບຫຼາຍຕໍ່ຊີວິດ ແລະ ສຸຂະພາບຂອງແມ່ຍິງເຊັ່ນກັນ. ໂດຍການລວມອັດຕາການຖືກຄວາມຮຸນແຮງທາງຮ່າງກາຍ, ທາງເພດ ແລະ ຈິດໃຈ. ເກືອບ 1/3 (30.3%) ຂອງແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດຖືກຄວາມຮຸນແຮງໜຶ່ງໃນສາມປະເພດນີ້ ຢ່າງໜ້ອຍໜຶ່ງຄັ້ງໃນຊ່ວງຊີວິດ. ປະເພດຂອງການໃຊ້ຄວາມຮຸນແຮງອື່ນໆ, ເຊັ່ນ ການຄວບຄຸມພຶດຕິກຳ ແລະ ຄວາມຮຸນແຮງທາງເສດຖະກິດ ກໍ່ແມ່ນບັນດາປັດໄຈສຳຄັນໃນການວັດແທກລະດັບອິດສະຫຼະພາບຂອງແມ່ຍິງ ໃນບັນດາກິດຈະກຳ ແລະ ຂີດຄວາມສາມາດໃນການຕັດສິນໃຈ. 34.8% ຂອງແມ່ຍິງທີ່ຖືກການຄວບຄຸມພຶດຕິກຳ ຈາກຄູ່ຮ່ວມຊີວິດ ໃນບາງຊ່ວງໃນຊ່ວງຊີວິດ ແລະ 6.8% ທີ່ເຄີຍຖືກການລ່ວງລະເມີດທາງເສດຖະກິດ ໂດຍການຍຶດລາຍໄດ້ທັງໝົດ ແລະ ການບໍ່ໃຫ້ເງິນ.

ການຖືກຄວາມຮຸນແຮງຈາກບຸກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ປະກອບມີ ປັດໄຈທາງຮ່າງກາຍ ແລະ ທາງເພດໃນການສຳຫຼວດ ຄັ້ງນີ້. 5.1% ຂອງແມ່ຍິງທີ່ໃຫ້ສຳພາດ ໄດ້ຖືກຄວາມຮຸນແຮງທາງຮ່າງກາຍຈາກບຸກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ ອາຍຸ 15 ປີ, ເຊິ່ງມີຄວາມແຕກຕ່າງກັນເລັກນ້ອຍ ລະຫວ່າງ ເຂດຕົວເມືອງ ຫຼື ຊົນນະບົດ ແລະ ໃນແຕ່ລະພາກ. ສະມາຊິກຄອບຄົວທີ່ເປັນແມ່ຍິງ, ໂດຍສະເພາະ ແມ່ ຫຼື ແມ່ນ້າ, ແມ່ນຜູ້ກະທຳຜິດໂດຍສ່ວນໃຫຍ່ ທີ່ຕາມດ້ວຍໝູ່ເພື່ອນທີ່ເປັນເພດຍິງ ແລະ ຄົນຮູ້ຈັກ. ການແຜ່ຫຼາຍໂດຍລວມຂອງການບັງຄັບໃນການມີເພດສຳພັນແມ່ນ 1.1% ສຳລັບຜູ້ຖືກສຳພາດ, ໃນຂະນະທີ່ການພະຍາຍາມໃນການມີເພດສຳພັນ ຫຼື ການມີເພດສຳພັນທີ່ບໍ່ຕ້ອງການ ແມ່ນ 5% ແລະ ການຖືກຄວາມຮຸນແຮງທາງເພດ ແມ່ນ 5.3%. ໃນດ້ານການຖືກລ່ວງລະເມີດທາງເພດໃນໄວເດັກ, ອັດຕາສ່ວນໂດຍລວມໄດ້ກຳນົດຈາກການສຳພາດແບບໜ້າເຊິ່ງໜ້າ ແມ່ນມີພຽງ 0.9%, ແຕ່ສ່ວນຮ້ອຍໄດ້ເພີ່ມສູງຂຶ້ນເປັນ 9.9% ໃນເວລາທີ່ໃຊ້ເຕັກນິກບັດໜ້າ ແລະ ເພີ່ມສູງຂຶ້ນເຖິງ 10.3% ໃນການລວມທັງສອງວິທີການ. ນອກຈາກນີ້ແລ້ວ, ການສຳຫຼວດຍັງໄດ້ລວມເອົາບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໂດຍຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດ ແລະ ການຖືກຄວາມຮຸນແຮງທາງເພດໃນຕອນເປັນເດັກ ເຊິ່ງມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ. ການສັງລວມອັດຕາສ່ວນການຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດຈາກຄູ່ຮ່ວມຊີວິດ ແລະ ຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດແມ່ນ 20.2%, ໃນຂະນະທີ່ການຖືກຄວາມຮຸນແຮງທາງເພດພຽງຢ່າງດຽວແມ່ນ 10.9% ແລະ ການຖືກຄວາມຮຸນແຮງທາງຮ່າງກາຍແມ່ນ 14.4%.

ການເກັບກຳຂໍ້ມູນທີ່ມີຄຸນນະພາບກ່ຽວກັບອັດຕາສ່ວນ ແມ່ນຄວາມທ້າທາຍຢ່າງຍິ່ງໃນຫຼາຍໆປະເທດ ລວມທັງໃນ ສປປ ລາວ ເຊິ່ງບໍ່ມີຄວາມແຕກຕ່າງເນື່ອງຈາກອັດຕາທີ່ສູງຂອງການບໍ່ຍອມເປີດເຜີຍຂໍ້ມູນ, ຄືດັ່ງທີ່ໄດ້ສະແດງໃນບົດລາຍງານການລະເມີດທາງເພດໃນໄວເດັກໂດຍການໃຊ້ ບັດຮູບໜ້າ. ເຖິງຢ່າງໃດກໍ່ຕາມ, ອາດຈະມີອີກຫຼາຍກໍລະນີທີ່ບໍ່ໄດ້ຮັບການລາຍງານ ທີ່ອາດຈະບໍ່ແມ່ນພຽງແຕ່ການໃຊ້ຄວາມຮຸນແຮງທາງເພດເທົ່ານັ້ນ, ແຕ່ການຖືກຄວາມຮຸນແຮງໃນຮູບແບບອື່ນທີ່ໄດ້ກ່າວເຖິງໃນການສຳຫຼວດຄັ້ງນີ້.

## 11.3 ຄວາມຄິດ ແລະ ທັດສະນະຄະຕິ ຂອງແມ່ຍິງ ແລະ ຜູ້ຊາຍຕໍ່ການຖືກຄວາມຮຸນແຮງຕໍ່ແມ່ຍິງ

ຮາກເຫງົ້າຂອງຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ ເຊິ່ງແມ່ນສາເຫດພື້ນຖານຂອງການຖືກຄວາມຮຸນແຮງຕໍ່ແມ່ຍິງ. ຄວາມບໍ່ເທົ່າທຽມກັນດັ່ງກ່າວ ເຮັດໃຫ້ແມ່ຍິງ ແລະ ເດັກຍິງ ມີຄວາມສ່ຽງ ແລະ ງ່າຍທີ່ຈະຖືກຄວາມຮຸນແຮງທາງຮ່າງກາຍ, ທາງເພດ ແລະ ຈິດໃຈ ຈາກຜູ້ຊາຍ ພ້ອມນັ້ນ ລວມທັງຂໍ້ຈຳກັດດ້ານຄວາມສາມາດໃນການລາຍງານ ແລະ ໄດ້ຮັບການຊ່ວຍເຫຼືອຢ່າງເໝາະສົມ. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນ ສປປ ລາວ ແມ່ນຖືກຍອມຮັບໂດຍວັດທະນະທຳ ແລະ ມີການບັງຄັບໂດຍອຳນາດທາງດ້ານກົດປະເພນີ ຍິງ-ຊາຍ, ການເປັນຫົວໜ້າຄອບຄົວ ແລະ ການທີ່ແມ່ຍິງຢູ່ພາຍໃຕ້ອຳນາດ, ເຊິ່ງໄດ້ສະແດງອອກຢູ່ໃນຫຼາຍໆ ການສຳຫຼວດທີ່ຜ່ານມາ. ໃນການສຳຫຼວດຄັ້ງນີ້ ໄດ້ຖາມຜູ້ໃຫ້ສຳພາດທຸກໆຄົນ ກ່ຽວກັບມຸມມອງ ແລະ ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, 1/3 ຂອງແມ່ຍິງໄດ້ລາຍງານວ່າ "ເມຍທີ່ດີ" ຕ້ອງເຊື່ອຟັງຄວາມຜົວ, ເຖິງວ່າຈະບໍ່ເຫັນດີນຳກໍ່ຕາມ ໂດຍສະເພາະໃນເຂດຊົນນະບົດ ແລະ ໃນພາກເໜືອ. ໝາຍຄວາມວ່າ ແມ່ຍິງທີ່ຝ່າຝືນກົດປະເພນີສຳລັບຍິງ-ຊາຍ ຈະກາຍເປັນຜູ້ດ້ອຍໂອກາດໃນການຕໍ່ຕ້ານ ແລະ ຮູ້ສຶກວ່າຕ້ອງເຮັດຕາມພາລະໜ້າທີ່ ແລະ ບັນທັດຖານ ຫຼື ກົດປະເພດນີສຳລັບຍິງ-ຊາຍ. ນອກຈາກນັ້ນ, ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດແມ່ນມີຄວາມເຊື່ອສູງຕໍ່ທັດສະນະຄະຕິກ່ຽວກັບອຳນາດໃນການປົກຄອງຄູ່ຮ່ວມຊີວິດ ແລະ ໜ້າທີ່ຂອງແມ່ຍິງທີ່ຕ້ອງມີເພດສຳພັນ ເຊິ່ງຫຼາຍກວ່າບັນດາແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ. ໃນທາງກົງກັນຂ້າມ, ແມ່ຍິງທີ່ຖືກສຳພາດສ່ວນໃຫຍ່ ໄດ້ຕອບວ່າ ແມ່ຍິງທີ່ແຕ່ງງານແລ້ວສາມາດປະຕິເສດການມີເພດສຳພັນໄດ້ຖ້າບໍ່ມີອາລົມ, ຖ້າບໍ່ສະບາຍ ຫຼື ກໍລະນີຜົວຢູ່ໃນສະພາບມຶນເມົາ. ຜົນການສຳຫຼວດນີ້ສະແດງໃຫ້ເຫັນຫຼາຍທັດສະນະຄະຕິ, ແຕ່ໃນຂະນະດຽວກັນ ກໍ່ສະແດງໃຫ້ເຫັນເຖິງການປົກຄອງຕົນເອງຂອງແມ່ຍິງ ແລະ ອິດສະຫຼະພາບໃນການເລືອກປະຕິເສດການມີເພດສຳພັນທີ່ບໍ່ຕ້ອງການກັບຜົວ ຫຼື ຄູ່ຮ່ວມຊີວິດ. ອີກໜຶ່ງຄວາມແຕກຕ່າງໃນທັດສະນະຄະຕິກ່ຽວກັບບົດບາດຍິງ-ຊາຍ ໃນການຖືກຄວາມຮຸນແຮງທາງຮ່າງກາຍຈາກຄູ່ຮ່ວມຊີວິດ ເຊິ່ງເກືອບເຄິ່ງໜຶ່ງຂອງແມ່ຍິງ ເຫັນດີວ່າຜົວສາມາດຕີເມຍຂອງຕົນໄດ້ຖ້າເມຍບໍ່ຊື່ສັດ ໂດຍບໍ່ກ່ຽວກັບກຸ່ມອາຍຸ ຫຼື ເຂດທີ່ຢູ່ອາໃສ. ບັນຫານີ້ເກີດຂຶ້ນ ໂດຍສະເພາະໃນບັນດາແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງຮ່າງກາຍ ທຽບກັບແມ່ຍິງທີ່ບໍ່ເຄີຍຖືກຄວາມຮຸນແຮງ. ການ "ບໍ່ຊື່ສັດ" ລວມມີ ການນອກໃຈຂອງເມຍ, ແຕ່ນີ້ໝາຍຄວາມວ່າແມ່ຍິງຍອມຮັບ ແລະ ປັບຕົວຕາມພຶດຕິກຳການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ຖ້າມີເຫດຜົນສະເພາະທີ່ຖືກກຳນົດອອກ ແລະ ພິຈາລະນາເຖິງເຫດຜົນທີ່ພຽງພໍ.

ໃນການສຳຫຼວດທາງດ້ານຄຸນນະພາບ, ເຫດຜົນຫຼັກຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໄດ້ແບ່ງເປັນ 4 ພາກຄື: 1) ບົກຜ່ອງຂອງແມ່ຍິງໃນການປະຕິບັດຕາມຄວາມຄາດຫວັງດ້ານພາລະບົດບາດຍິງ-ຊາຍ, ລວມທັງການເຄົາລົບນັບຖື ແລະ ການສະໜອງຄວາມຕ້ອງການທາງເພດຂອງຜົວ, 2) ການຫຶງຫວງ ຫຼື ຄວາມບໍ່ເຊື່ອໃຈ ຫຼື ນອກໃຈ, 3) ການໃຊ້ສິ່ງມຶນເມົາ ຫຼື ຢາເສບຕິດແລະ 4) ບັນຫາການວ່າງງານ ຫຼື ມີບັນຫາທາງດ້ານການເງິນ. ແມ່ຍິງບາງຄົນເວົ້າວ່າ ຜູ້ຊາຍໄປຫາແມ່ຍິງຄົນອື່ນ ຍ້ອນເມຍຂອງຕົນບົກພ່ອງໃນການເປັນພຽງເມຍທີ່ດີ ເຊິ່ງສະແດງອອກໃນການບໍ່ຮັກສາຊັບສິນໃນ ຄອບຄົວ ຫຼື ບໍ່ສາມາດສະໜອງກິດຈະວັດປະຈຳວັນໃຫ້ຜົວໄດ້, ເຊິ່ງເຮັດໃຫ້ເກີດຄວາມໃຈຮ້າຍ ແລະ ການໃຊ້ຄວາມຮຸນແຮງ. ສິ່ງມຶນເມົາ ແລະ ການນອກໃຈກໍ່ຖືກລາຍງານເລື້ອຍໆ ວ່າເປັນປັດໄຈເຊື່ອມໂຍງເຖິງການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ. ການໃຊ້ສິ່ງມຶນເມົາໂດຍຜູ້ກະທຳຜິດ ສາມາດນຳໄປສູ່ການໃຊ້ຄວາມຮຸນແຮງ, ບາງຄັ້ງເປັນຍ້ອນລາວຮູ້ສຶກເສຍໜ້າ. ການນອກໃຈ ແລະ ການບໍ່ເຊື່ອໃຈກັນໃນຄູ່ແຕ່ງດອງ ແມ່ນພົວພັນກັບການດື່ມສິ່ງມຶນເມົາ, ໂດຍສ້າງໂອກາດໃນການຊອກຫາແມ່ຍິງອື່ນ ເຊັ່ນ "ສາວເບຍ". ອີກຈຸດໜຶ່ງຄື ຄວາມຫຍຸ້ງຍາກທາງດ້ານການເງິນທີ່ພົວພັນເຖິງການວ່າງງານ ແລະ ການໃຊ້ຈ່າຍຂອງຜົວໃນການດື່ມສິ່ງມຶນເມົາ ແລະ ເມຍນ້ອຍ. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດບໍ່ສາມາດສະໜອງການວິເຄາະໃນການພົວພັນກັນລະຫວ່າງຄວາມຕຶງຄຽດທາງດ້ານການເງິນ ແລະ ການໃຊ້ຄວາມຮຸນແຮງ. ສິ່ງມຶນເມົາ, ການນອກໃຈ ແລະ ຄວາມຕຶງຄຽດທາງດ້ານການເງິນ ບໍ່ແມ່ນສາເຫດທາງກົງຂອງການໃຊ້ຄວາມຮຸນແຮງ, ແຕ່ອາດເປັນປັດໄຈຂັ້ນທີສອງໃນການເພີ່ມຄວາມສ່ຽງຂອງການໃຊ້ຄວາມຮຸນແຮງ ສຳລັບຜູ້ກະທຳຜິດ ແລະ ຜູ້ຖືກເຄາະຮ້າຍຂອງການໃຊ້ຄວາມຮຸນແຮງ.

ການສຳຫຼວດນີ້ ກໍ່ມີເປົ້າໝາຍໃນການເຂົ້າໃຈຢ່າງເລິກເຊິ່ງໃນມຸມມອງຂອງຜູ້ຊາຍ, ໂດຍສະເພາະ ທາງດ້ານຄວາມເປັນສຸພາບບຸລຸດ, ຄວາມເຊື່ອໃນການເປັນຫົວໜ້າຄອບຄົວ, ສະຖາບັນຕ່າງໆ ແລະ ຮີດຄອງປະເພນີທາງສັງຄົມ. ການຖືກຄວາມຮຸນແຮງຕໍ່ແມ່ຍິງ ແມ່ນຖືກຂັບເຄື່ອນໂດຍບັນດາປັດໄຈທີ່ພົວພັນເຖິງຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ, ສະພາບແວດລ້ອມໃນການຍອມຮັບການໃຊ້ຄວາມຮຸນແຮງໃນສັງຄົມ, ປະສົບການໃນໄວເດັກ ແລະ ການໃຊ້ຮູບແບບໃນທາງລົບຂອງຄວາມເປັນຊາຍ. ໃນຂະນະທີ່ບໍ່ແມ່ນຜູ້ຊາຍໝົດທຸກຄົນຈະໃຊ້ຄວາມຮຸນແຮງ, ກຸ່ມສົນທະນາຂອງຜູ້ຊາຍກຳນົດບັນດາປັດໄຈເບື້ອງຫຼັງຂອງການໃຊ້ຄວາມຮຸນແຮງ ເຊັ່ນ ຄວາມຫຍຸ້ງຍາກທາງດ້ານການເງິນ, ຮູບຮ່າງ ແລະ ທັດສະນະຄະຕິຂອງແມ່ຍິງ, ສິ່ງມຶນເມົາ ແລະ ການນອກໃຈ, ເຊິ່ງບໍ່ແມ່ນສາເຫດໂດຍກົງຂອງການໃຊ້ຄວາມຮຸນແຮງ. ຜູ້ຊາຍຫຼາຍໆ ຄົນຍັງເນັ້ນໜັກວ່າ ການໃຊ້ຄວາມຮຸນແຮງແມ່ນບັນຫາຄອບຄົວທີ່ຄວນແກ້ໄຂໂດຍບໍ່ຈຳເປັນຕ້ອງມີການແຊກແຊງຈາກພາຍນອກ ແລະ ການຍອມຮັບບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນໄດ້ຝັງເລິກຢູ່ໃນບ້ານ ແລະ ສັງຄົມ. ດ້ວຍເຫດນີ້, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຈຶ່ງພົວພັນເຖິງຮີດຄອງທາງດ້ານບົດບາດຍິງ-ຊາຍ, ຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ອຳນາດທີ່ບໍ່ເທົ່າທຽມກັນ ໂດຍສະເພາະໃນສະຖານະການຂອງປະເທດລາວ ເຊິ່ງບໍ່ຄ່ອຍໄດ້ຮັບການຍົກປະເດັນ ແລະ ສົນທະນາໃນວົງກວ້າງ.

## 11.4 ການພົວພັນລະຫວ່າງການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ບັນຫາສຸຂະພາບ ແລະ ຊີວິດຂອງແມ່ຍິງ, ລູກ ແລະ ຄອບຄົວ

ການສຳຫຼວດນີ້ ໄດ້ສະແດງໃຫ້ເຫັນເຖິງປະສົບການໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງແມ່ຍິງ, ລູກ ແລະ ຄອບຄົວ. ເກືອບເຄິ່ງໜຶ່ງຂອງແມ່ຍິງ (43.1%) ທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໄດ້ຮັບບາດເຈັບຈາກເຫດການຖືກຄວາມຮຸນແຮງດັ່ງກ່າວ. ໂດຍສະເພາະແມ່ນໃນບັນດາແມ່ຍິງທີ່ຢູ່ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ຫຼາຍກວ່າ 2/3 ຂອງແມ່ຍິງທີ່ຖືກບາດເຈັບ ເຊິ່ງມີອາການບາດເຈັບສາຫັດ, ມີຄວາມອັນຕະລາຍຢ່າງຮ້າຍແຮງຕໍ່ຄວາມປອດໄພຂອງເຂົາເຈົ້າ. ດ້ານສະຖານະພາບຂອງສຸຂະພາບ, ແມ່ຍິງທີ່ຖືກ ຄວາມຮຸນແຮງແມ່ນມີທ່າອ່ຽງມີສຸຂະພາບທີ່ບໍ່ດີ ຫຼື ບໍ່ດີຫຼາຍ, ມີບັນຫາໃນການຍ່າງ, ຄວາມເຈັບປວດ ແລະ ບັນຫາໃນການຈື່ຈຳ ທຽບກັບແມ່ຍິງທີ່ບໍ່ເຄີຍຖືກ

ບັນຫາຄວາມຮຸນແຮງ. ໃນດ້ານຄວາມເຈັບປວດທາງດ້ານຈິດໃຈ ທີ່ວັດແທກໂດຍແບບສອບຖາມການລາຍງານດ້ວຍຕົນເອງ, ແມ່ຍິງທີ່ຖືກຄວາມຮຸນແຮງ ແມ່ນມີຄະແນນທີ່ສູງກວ່າ ໃນການຄິດຂ້າຕົວຕາຍ ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາຄວາມຮຸນແຮງ. ນອກຈາກນັ້ນແລ້ວ, ແມ່ຍິງທີ່ຖືກຄວາມຮຸນແຮງທາ ງຈິດໃຈມີຄະແນນທີ່ສູງກວ່າໃນແບບສອບຖາມການລາຍງານດ້ວຍຕົນເອງ ໃນການຄິດຂ້າຕົວຕາຍ ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາຄວາມຮຸນແຮງ. ສິ່ງສຳຄັນແມ່ນ ການບາດເຈັບ ແລະ ສຸຂະພາບທີ່ບໍ່ດີ ບໍ່ພຽງແຕ່ເປັນຄວາມກັງວົນທາງດ້ານສຸຂະພາບເທົ່ານັ້ນ, ຍັງມີຜົນກະທົບເຖິງຊີວິດການເປັນຢູ່ຂອງແມ່ຍິງ, ໂດຍສະເພາະແມ່ນ ກິດຈະກຳໃນການສ້າງເສດຖະກິດ. ແມ່ຍິງທີ່ຖືກສຳພາດໃນການສຳຫຼວດທາງດ້ານຄຸນນະພາບໄດ້ເວົ້າວ່າ ການຖືກຄວາມຮຸນແຮງທາງຮ່າງກາຍ ເຮັດໃຫ້ບໍ່ສາມາດເຮັດວຽກໄດ້ ຍ້ອນຄວາມເຈັບປວດຈາກການບາດເຈັບ ແລະ ຮອຍຊໍ້າທີ່ສົ່ງຜົນກະທົບເຖິງບຸກຄະລິກຂອງເຂົາເຈົ້າ. ໃນດ້ານຈິດໃຈຄືເຂົາເຈົ້າຈະມີຄວາມໂສກເສົ້າ, ເສຍໜ້າ ແລະ ບໍ່ຢາກລົມກັບຄົນອື່ນໆ, ເຊິ່ງເຮັດໃຫ້ເກີດຂໍ້ຈຳກັດໃນການຈ້າງງານ.

ການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໄດ້ສົ່ງຜົນກະທົບທາງລົບທາງດ້ານເພດ ແລະ ສຸຂະພາບຈະເລີນພັນຂອງແມ່ຍິງ. ແມ່ຍິງທີ່ເຄີຍມີຄູ່ຮ່ວມຊີວິດທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ແມ່ນມີທ່າອ່ຽງໃນການຫຼູລູກ ແລະ ການເອົາລູກອອກ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາຄວາມຮຸນແຮງ ໃນລະຫວ່າງການຖືພາ. ສຳລັບໃນການໃຊ້ຢາຄຸມກຳເນີດ, ແມ່ຍິງທີ່ຖືກຄວາມຮຸນແຮງແມ່ນ ມີທ່າອ່ຽງໃນການໃຊ້ຢາຄຸມກຳເນີດ, ໂດຍສະເພາະຖົງຢາງອະນາໄມ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາ. ເຊັ່ນດຽວກັນກັບແມ່ຍິງທີ່ເຄີຍຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດຄົນປັດຈຸບັນ ຫຼື ຄົນຫຼ້າສຸດ ແມ່ນມີທ່າອ່ຽງໃນການໃຊ້ຢາຄຸມກຳເນີດ, ໂດຍສະເພາະຖົງຢາງອະນາໄມ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາ. ມັນຍັງບໍ່ຈະແຈ້ງໃນເຫດຜົນວ່າເປັນຫຍັງແມ່ຍິງທີ່ເຄີຍຖືກຄວາມຮຸນແຮງຈຶ່ງມີອັດຕາການຄຸມກຳເນີດຫຼາຍກວ່າ, ແຕ່ຫຼາຍໆ ການ ສຳຫຼວດໄດ້ຍົກປະເດັນຄວາມກັງວົນຂອງແມ່ຍິງໃນການຖືພາທີ່ບໍ່ປາຖະໜາ ແລະ ການຕິດເຊື້ອພະຍາດຕິດຕໍ່ ທາງເພດສຳພັນ. ນອກຈາກນັ້ນ, ຍັງມີຜົນສຳຫຼວດທີ່ວ່າ: ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງແມ່ນມີທ່າອ່ຽງໃນການດື່ມສິ່ງມຶນເມົາໃນເວລາຖືພາ. ການສຳຫຼວດນີ້ບໍ່ໄດ້ຖາມກ່ຽວກັບ ປະຫວັດທີ່ຜ່ານມາຂອງແມ່ຍິງກ່ຽວກັບບັນຫາທີ່ກ່ຽວຂ້ອງກັບສິ່ງມຶນເມົາ, ດ້ວຍເຫດນີ້ ຈຶ່ງຍັງບໍ່ມີຄວາມແນ່ນອນໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນລະຫວ່າງການຖືພາ ທີ່ເປັນຍ້ອນນິໄສໃນການດື່ມ.

ການໃຊ້ຄວາມຮຸນແຮງໃນຄອບຄົວ ກໍ່ມີຜົນກະທົບທາງລົບຕໍ່ຊີວິດ ແລະ ການພັດທະນາຂອງເດັກ ຫຼື ລູກ ເຊັ່ນກັນ. ການສຳຫຼວດສະແດງໃຫ້ເຫັນວ່າເດັກທີ່ຢູ່ໃນຄອບຄົວທີ່ມີການໃຊ້ຄວາມຮຸນແຮງໃນຄອບຄົວ ແມ່ນມີບັນຫາທາງຮ່າງກາຍ ແລະ ຈິດໃຈ ເຊັ່ນດຽວກັນກັບບັນຫາໃນໂຮງຮຽນ. ຕົວຢ່າງ, ເດັກທີ່ອາໄສຢູ່ກັບແມ່ທີ່ມີການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແມ່ນມີທ່າອ່ຽງໃນການໄດ້ຮັບຄວາມເຈັບປວດໂດຍການຝັນຮ້າຍ, ຍ່ຽວໃສ່ບ່ອນ, ມິດງຽບ ຫຼື ມັກຕໍ່ຕ້ານ ແລະ ມີຄວາມຫຍຸ້ງຍາກໃນການຮຽນໃນໂຮງຮຽນ ຫຼາຍກວ່າຄົນອື່ນໆ. ການສຳຫຼວດນີ້ໄດ້ຄົ້ນພົບການພົວພັນກັນຢ່າງຈະແຈ້ງລະຫວ່າງການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ແລະ ປະສົບການໃນໄວເດັກໃນການໃຊ້ຄວາມຮຸນແຮງ. ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ ແມ່ນມີທ່າອ່ຽງຫຼາຍກວ່າ 2 ທົບ ທີ່ແມ່ເຄີຍຖືກຕີຈາກຄູ່ຮ່ວມຊີວິດທຽບກັບ ແມ່ຍິງທີ່ແມ່ຂອງເຂົາເຈົ້າບໍ່ເຄີຍຖືກກັບບັນຫາດັ່ງກ່າວ. ເຊັ່ນດຽວກັນກັບແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ເຄີຍຖືກຕີໃນໄວເດັກ ແມ່ນມີທ່າອ່ຽງໃນການໃຊ້ຄວາມຮຸນແຮງ ທີ່ເກີດຈາກຄູ່ຮ່ວມຊີວິດຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້.

## 11.5 ການຕອບໂຕ້ຂອງແມ່ຍິງ ຕໍ່ຄວາມຮຸນແຮງ, ຍຸດທະສາດໃນການຫຼຸດຜ່ອນຜົນກະທົບ ແລະ ລະບົບການຊ່ວຍເຫຼືອ

ເກືອບເຄິ່ງໜຶ່ງຂອງແມ່ຍິງທີ່ຖືກຄວາມຮຸນແຮງແມ່ນບໍ່ເຄີຍລາຍງານ. ໃນຈຳນວນແມ່ຍິງທີ່ລາຍງານ, ສ່ວນຫຼາຍແມ່ນຈະຂໍຄວາມຊ່ວຍເຫຼືອຈາກຄອບຄົວ ແລະ ໝູ່ເພື່ອນ ເປັນກຸ່ມຄົນທຳອິດ, ຫຼາຍກວ່າຂໍຄວາມຊ່ວຍເຫຼືອຈາກອຳນາດການປົກຄອງທີ່ເປັນທາງການ ເຊັ່ນ: ຜູ້ນຳທ້ອງຖິ່ນ, ຕຳຫຼວດ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ. ແມ່ຍິງທີ່ຂໍຄວາມຊ່ວຍເຫຼືອແມ່ນຍ້ອນເຂົາເຈົ້າບໍ່ສາມາດອົດທົນໄດ້ອີກຕໍ່ໄປ ຫຼື ເຂົາເຈົ້າຖືກຊຸກຍູ້ຈາກຄອບຄົວ ແລະ ໝູ່ເພື່ອນ. ແມ່ຍິງຄົນອື່ນໆ ບໍ່ໄປຂໍຄວາມຊ່ວຍເຫຼືອຍ້ອນຄວາມອັບອາຍ, ຄວາມຢ້ານກົວ ແລະ ທັດສະນະຄະຕິໃນການເຫັນວ່າບໍ່ແມ່ນເລື່ອງສຳຄັນ. ແມ່ຍິງຮູ້ສຶກໝົດຫວັງ ແລະ ບໍ່ມີອຳນາດ ຍ້ອນຮີດຄອງວັດທະນະທຳ ແລະ ກົດປະເພນີຕໍ່ເພດຍິງ-ຊາຍ ທີ່ຈຳກັດການລາຍງານ ແລະ ການເຂົ້າເຖິງ ເຊິ່ງເຮັດໃຫ້ຢ້ານກົວວ່າຈະມີມົນທິນ ຫຼື ສ້າງຄວາມອັບອາຍຕໍ່ຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາ. ຍ້ອນຄວາມບໍ່ເທົ່າທຽມກັນໃນອຳນາດການພົວພັນລະຫວ່າງເພດຍິງ-ຊາຍ ທີ່ສະໜັບສະໜູນວ່າແມ່ຍິງຕ້ອງຢູ່ໃຕ້ການນຳພາຂອງຜູ້ຊາຍ, ແມ່ຍິງຢ້ານການແກ້ແຄ້ນຈາກຜົວ ຖ້າວ່າມີການລາຍງານການໃຊ້ຄວາມຮຸນແຮງ ແລະ ຜົນທີ່ຈະຕາມມາ ທີ່ພົວພັນເຖິງການຢ່າຮ້າງ ແລະ ການແຍກກັນຢູ່.

ໃນຂະນະທີ່ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ສະຫະພັນແມ່ຍິງລາວ ແມ່ນອົງການຈັດຕັ້ງຕົ້ນຕໍ ໃນການຊ່ວຍເຫຼືອຄອບຄົວ ໃນການແກ້ໄຂຂໍ້ຂັດແຍ່ງ ແລະ ການປົກປ້ອງສິດທິຂອງແມ່ຍິງ ແລະ ຄວາມປອດໄພ, ໃນຄວາມເປັນຈິງແລ້ວ ພາລະບົດບາດຂອງເຂົາເຈົ້າແມ່ນມີຈຳກັດ. ໃນການສຳຫຼວດທາງດ້ານຄຸນນະພາບ ທີ່ຜູ້ເຂົ້າຮ່ວມໄດ້ເປີດເຜີຍວ່າ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານບໍ່ໄດ້ສະໜອງການຊ່ວຍເຫຼືອທີ່ມີປະສິດທິພາບ ເພື່ອຊ່ວຍແມ່ຍິງແກ້ໄຂບັນຫາໃນໄລຍະຍາວ ແລະ ຍືນຍົງໄດ້. ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ຮັບຟັງ ແລະ ໃຫ້ຄຳແນະນຳຄູ່ແຕ່ງດອງ, ແຕ່ມັກຈະໄກ່ເກ່ຍໃຫ້ຄູ່ແຕ່ງດອງມີການປານີປານອມກັນ ແລະ ໃຫ້ກັບໄປຢູ່ນຳກັນ ເຖິງວ່າຈະຍັງມີສະພາບແວດລ້ອມຂອງການໃຊ້ຄວາມຮຸນແຮງຢູ່. ສະພາບການນີ້ ຈະຍັງຄົງສືບຕໍ່ເກີດຂຶ້ນກັບຊີວິດ ແລະ ສຸຂະພາບຂອງແມ່ຍິງເຮັດໃຫ້ເກີດອັນຕະລາຍ. ໂດຍລວມແລ້ວ, ວິທີການຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນເນັ້ນໃສ່ການປ່ຽນແປງພຶດຕິກຳ, ເຊັ່ນ ການໃຫ້ຜົວຢຸດຕິການລະເມີດ ແລະ ໃຫ້ເມຍອົດທົນ ໂດຍການເຊື່ອຟັງຜົວ ແລະ ຜູ້ໃຫຍ່. "ວິທີການແກ້ໄຂທີ່ບໍ່ເດັດຂາດນີ້" ຍາກທີ່ຈະຢຸດຕິການໃຊ້ຄວາມຮຸນແຮງໄດ້.

ສູນກາງສະຫະພັນແມ່ຍິງລາວ ໄດ້ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍໃຫ້ບໍລິການທີ່ພັກເຊົາຊົ່ວຄາວ, 'ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ' ໃນນະຄອນຫຼວງວຽງຈັນ. ໃນຄວາມສາມາດຮອງຮັບທີ່ພັກເຊົາໃຫ້ກັບແມ່ຍິງ ແລະ ເດັກຍິງ ຈຳນວນ 50 ຄົນ, ສູນນີ້ຈະເຕັມຕະຫຼອດ ແລະ ສາຍດ່ວນກໍ່ບໍ່ໄດ້ຖືກຈັ ດຕັ້ງປະຕິບັດຕະຫຼອດເວລາ. ນອກຈາກນັ້ນ ຊັບພະຍາກອນແມ່ນມີຈຳກັດຫຼາຍ, ບໍ່ມີອົງການຈັດຕັ້ງອື່ນ ໃຫ້ການຊ່ວຍເຫຼືອ

ຜູ້ຖືກເຄາະຮ້າຍໂດຍກົງ. ໂດຍລວມແລ້ວ, ສູນກາງສະຫະພັນແມ່ຍິງລາວ ໄດ້ຮັບການຊຸກຍູ້ໃຫ້ມີການປ່ຽນວິທີການເຮັດວຽກຈາກແບບອານຸລັກນິຍົມມາເປັນການບຸກທະລຸໃນການປ່ຽນແປງຮີດຄອງທາງດ້ານ ບົດບາດຍິງ-ຊາຍ ແລະ ທັດສະນະຄະຕິໃນການຍອມຮັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ບັນຫານີ້ຕ້ອງການໃຫ້ມີການແກ້ໄຂບັນຫາໂດຍຮ່ວມກັນຂອງຫຼາຍໆຂະແໜງການ ແລະ ໃນທົ່ວປະເທດຢ່າງລະອຽດ ເພື່ອພັດທະນາສະຖາບັນ ທີ່ແບ່ງປັນຄວາມຮັບຜິດຊອບໃນການສະໜັບສະໜູນຄວາມຕ້ອງການຂອງບັນດາແມ່ຍິງທີ່ມີຊີວິດທີ່ອັນຕະລາຍຈາກການໃຊ້ຄວາມຮຸນແຮງ.

ນອກຈາກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ສູນກາງສະຫະພັນແມ່ຍິງລາວ, ຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ ແມ່ນມີທ່າອ່ຽງໃນການເປັນຈຸດຕິດຕໍ່ທຳອິດສຳລັບແມ່ຍິງທີ່ເຄີຍຖືກຄວາມຮຸນແຮງໃນຄອບຄົວ ຫຼື ການທຳຮ້າຍທາງເພດ, ເຖິງວ່າເຂົາເຈົ້າຈະບໍ່ເປີດເຜີຍກ່ຽວກັບການຖືກຄວາມຮຸນແຮງເຫຼົ່ານັ້ນກໍ່ຕາມ. ການສຳຫຼວດນີ້ຍັງຄົ້ນພົບວ່າ ແມ່ຍິງທີ່ເຄີຍຖືກຄວາມຮຸນແຮງ ໄດ້ນຳໃຊ້ການບໍລິການທາງດ້ານສາທາລະນະສຸກ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາຄວາມຮຸນແຮງ. ໃນບັນຫານີ້, ການສ້າງຂີດຄວາມສາມາດຂອງຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ ເພື່ອການຕອບໂຕ້ໃນເຫດການທີ່ມີຄວາມລະອຽດອ່ອນ ແລະ ມີການສະໜອງການປິ່ນປົວທີ່ເໝາະສົມຂອງແມ່ຍິງທີ່ຖືກຄວາມຮຸນແຮງ. ຄູ່ມືການປິ່ນປົວຂອງອົງການອະນາໄມໂລກ ທີ່ຫາກໍ່ພັດທະນາ, ນີ້ແມ່ນຄູ່ມືທີ່ດີໃນການຊ່ວຍຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ ໃນ ສປປ ລາວ ໃນການພັດທະນາຂີດຄວາມສາມາດໃນການຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການຝຶກອົບຮົມຄວາມຮູ້ ແລະ ທັກສະໃນການປິ່ນປົວທີ່ເໝາະສົມໃຫ້ກັບແມ່ຍິງທີ່ຖືກຄວາມຮຸນແຮງ.

ໃນດ້ານຍຸດທະສາດການປົກປ້ອງຕົນເອງຂອງແມ່ຍິງ, ເກືອບ 40% ຂອງແມ່ຍິງທີ່ຖືກຄວາມຮຸນແຮງ ທີ່ຕໍ່ສູ້ຄືນຢ່າງໜ້ອຍ ໜຶ່ງຄັ້ງ ຫຼື ຫຼາຍຄັ້ງໃນຊ່ວງຊີວິດ. ໃນບັນດາແມ່ຍິງທີ່ມີການຕໍ່ສູ້ຄືນ, ຫຼາຍກວ່າເຄິ່ງໜຶ່ງໄດ້ລາຍງານວ່າການໃຊ້ຄວາມຮຸນແຮງຫຼຸດລົງ, ໃນຂະນະທີ່ມີພຽງ 15% ທີ່ເວົ້າວ່າບໍ່ມີການປ່ຽນແປງ. ການສຳຫຼວດນີ້ບໍ່ສາມາດພິສູດປະສິດທິພາບຂອງການຕອບໂຕ້ຄືນຂອງແມ່ຍິງຕໍ່ການໃຊ້ຄວາມຮຸນແຮງຂອງຜົວ. ເຖິງຢ່າງໃດກໍ່ຕາມ, ມັນສາມາດຄາດຄະເນໄດ້ວ່າ ການຕໍ່ຕ້ານຄືນຂອງແມ່ຍິງ ຈະເຮັດໃຫ້ການໃຊ້ຄວາມຮຸນແຮງຫຼຸດລົງ. ຍຸດທະສາດຢ່າງໜຶ່ງຄືການໜີຈາກຄູ່ຮ່ວມຊີວິດ ຫຼື ໜີອອກຈາກເຮືອນ, ແຕ່ 2/3 ຂອງແມ່ຍິງທີ່ຖືກຄວາມຮຸນແຮງ ແມ່ນບໍ່ໜີຍ້ອນຍັງເປັນຫ່ວງລູກ ແລະ ຍັງຮັກຜົວຢູ່.

ໂດຍລວມແລ້ວ, ແມ່ຍິງຍັງມີຄວາມຮູ້ໃນດ້ານກົດໝາຍ ແລະ ຂະບວນການຍຸຕິທຳ ກ່ຽວກັບບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງທີ່ຈຳກັດ. ໃນບັນດາແມ່ຍິງທີ່ມີຄູ່ຮ່ວມຊີວິດ, ຈຳນວນ 1/3 ໃນເຂດຕົວເມືອງທີ່ຮັບຮູ້ກ່ຽວກັບກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ໃນຂະນະທີ່ອັດຕາສ່ວນຂອງແມ່ຍິງໃນເຂດຊົນນະບົດມີພຽງ 10%. ເຊັ່ນດຽວກັນ ຄວາມຮັບຮູ້ທາງດ້ານກົດໝາຍ ແມ່ນພົວພັນເຖິງລະດັບການສຶກສາ, ແມ່ຍິງທີ່ມີການສຶກສາຊັ້ນສູງຈະມີຄວາມຮັບຮູ້ທາງດ້ານກົດໝາຍ ຫຼາຍກວ່າແມ່ຍິງທີ່ບໍ່ໄດ້ຮຽນໜັງສື ຫຼື ຮຽນຊັ້ນປະຖົມ. ການສຳຫຼວດໄດ້ສະແດງໃຫ້ເຫັນວ່າ ແມ່ຍິງທີ່ຖືກຄວາມຮຸນແຮງ ແມ່ນບໍ່ໄດ້ຖືກແຈ້ງໃຫ້ຮູ້ ກົດໝາຍກ່ຽວກັບສິດ ແລະ ການປົກປ້ອງຂອງເຂົາເຈົ້າ ເຊິ່ງໜ້ອຍກວ່າບັນດາແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້. ດ້ວຍເຫດນີ້, ຕ້ອງມີການເອົາໃຈໃສ່ເພີ່ມເຕີມໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃຫ້ໄດ້ຮັບການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການໃຫ້ຄຳປຶກສາຢ່າງພຽງພໍ. ນອກຈາກນັ້ນ, ທຸກໆກິດຈະກຳທີ່ມີເປົ້າໝາຍໃນການກະຈາຍຂໍ້ມູນຂ່າວສານຕ້ອງມີການວາງກຸ່ມເປົ້າໝາຍຄັກແນ່, ເຊັ່ນ ສຸມໃສ່ເດັກໃນໂຮງຮຽນ, ແມ່ຍິງໃນເຂດຊົນນະບົດ ຫຼື ສະມາຊິກໃນຊົນເຜົ່າກຸ່ມນ້ອຍ. ທັງໝົດນີ້, ມັນມີຄວາມຈຳເປັນອັນເລັ່ງດ່ວນ ໃນການໃຫ້ຄວາມຮັບຮູ້ໃນສາທາລະນະກ່ຽວກັບສິດທິທາງກົດໝາຍຂອງແມ່ຍິງ ລວມທັງການປົກປ້ອງ, ການປ້ອງກັນ ແລະ ການລົງໂທດທາງດ້ານກົດໝາຍຕໍ່ຜູ້ກະທຳຜິດ. ກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ທີ່ກ່ຽວຂ້ອງກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ກໍ່ຍັງບໍ່ສາມາດບັນລຸຄວາມຕ້ອງການທັ ງໝົດຂອງ ແມ່ຍິງທີ່ໄດ້ຮັບຜົນກະທົບ ຍ້ອນຄູ່ຮ່ວມຊີວິດທີ່ບໍ່ໄດ້ແຕ່ງດອງຢ່າງຖືກຕ້ອງຕາມກົດໝາຍບໍ່ໄດ້ຖືກລວມເຂົ້າໃນກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ, ການລະເວັ້ນໂທດຂອງການຂົ່ມຂືນຄູ່ແຕ່ງດອງ ແລະ ອົງປະກອບທາງວັດທະນະທຳອື່ນ ທີ່ປິດບັງຂະບວນການທາງກົດໝາຍທີ່ເໝາະສົມ. ການຈັດຕັ້ງປະຕິບັດຂອງກົດໝາຍທີ່ມີຢູ່ໃນປັດຈຸບັນແມ່ນຍັງມີຂໍ້ຈຳກັດ ແລະ ຍັງມີຄວາມທ້າທາຍຫຼາຍຢ່າງ. ຕໍ່ບັນຫາດັ່ງກ່າວ, ການພັດທະນາກົດໝາຍໃໝ່ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ຈະມີບົດບາດທີ່ສຳຄັນເພື່ອເອົາຊະນະບັນຫາຂອງ ກົດໝາຍທີ່ມີຢູ່ ແລະ ວິທີການໃນການຈັດຕັ້ງປະຕິບັດ ເພື່ອບັນລຸຄວາມຕ້ອງການທີ່ແທ້ຈິງຂອງແມ່ຍິງ ແລະ ເດັກທີ່ເຈັບປວດຈາກການໃຊ້ຄວາມຮຸນແຮງ ແລະ ການຖືກລ່ວງລະເມີດ.

## 11.6 ປັດໄຈທີ່ພົວພັນກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໂດຍຜູ້ຊາຍ ແມ່ນມີການພົວພັນກັນຫຼາຍໆ ພາກສ່ວນທີ່ມີຄວາມສະຫຼັບສັບຊ້ອນກັນຂອງປັດໄຈໃນລະດັບສ່ວນບຸກຄົນ, ຄວາມສຳພັນ, ບ້ານ ແລະ ສັງຄົມ. ບັນດາປັດໄຈດັ່ງກ່າວ ບໍ່ສາມາດອະທິບາຍໄດ້ໂດຍການແຍກແຕ່ລະປັດໄຈອອກຈາກກັນ ກັບສະພາບແວດລ້ອມທີ່ກວ້າງຂວາງຂອງຄວາມບໍ່ເທົ່າທຽມກັນລະຫວ່າງເພດຍິງ-ຊາຍ. ຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ເຊັ່ນດຽວກັນກັບຮີດຄອງດ້ານບົດບາດຍິງ-ຊາຍ ແລະ ທາງສັງຄົມ ທີ່ປະຕິເສດ ແລະ ກີດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງແມ່ນປັດໄຈການປົກປ້ອງໃນຂັ້ນພື້ນຖານ.

ໃນການສຳຫຼວດນີ້ ໄດ້ສຳຫຼວດບັນດາປັດໄຈທີ່ພົວພັນກັບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະຫຼື ທາງເພດ ຈາກຄູ່ຮ່ວມຊີວິດ ໂດຍການໃຊ້ຄ່າຖົດຖອຍແບບຫຼາຍຕົວແບບ. ແມ່ຍິງທີ່ຖືກຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ຈາກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ຫຼື ການໃຊ້ຄວາມຮຸນແຮງທາງເພດໂດຍບຸກຄົນອື່ນທີ່ບໍ່ແມ່ນຄູ່ຮ່ວມຊີວິດຕັ້ງແຕ່ອາຍຸ 15 ປີ ທີ່ມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນໄລຍະ 12 ເດືອນທີ່ຜ່ານມາ ແລະ ແມ່ຍິງທີ່ບໍ່ເຄີຍຖືກບັນຫາຄວາມຮຸນແຮງ. ຍ້ອນສະພາບແວດລ້ອມໃນສະຖານທີ່ ທີ່ແມ່ຍິງເຕີບໃຫຍ່ຂຶ້ນເປັນຫົວໃຈສຳຄັນ, ປັດໄຈການປົກປ້ອງທີ່ສຳຄັນ ແມ່ນການຮັບປະກັນການລ້ຽງດູ ແລະ ສະພາບແວດລ້ອມທີ່ຊຸກຍູ້ຊີວິດການເປັນຢູ່ ແລະ ທາງເລືອກທາງດ້ານສຸຂະພາບໃນຄອບຄົວ ແລະ ບ້ານ. ໃນດ້ານປັດໄຈທີ່ພົວພັນກັບ ຜົວ ຫຼື ຄູ່ຮ່ວມຊີວິດ, ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ຕົບຕີກັບຜູ້ຊາຍຄົນອື່ນ ແມ່ນມີທ່າອ່ຽງໃນການເຈັບປວດຈາກການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດໃນໄລຍະ 12 ເດືອນທີ່ຜ່ານມາ ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາເຫຼົ່ານີ້. ປຽບທຽບກັບປັດໄຈອື່ນໆ, ຜູ້ຊາຍທີ່ມີພຶດຕິກຳໃນການຕໍ່ຕ້ານ ທີ່ມີການພົວພັນກັບການຕໍ່ສູ້ທາງຮ່າງກາຍ ແມ່ນການຄາດຄະເນທີ່ຈະແຈ້ງທີ່ສຸດຂອງ

ການໃຊ້ຄວາມຮຸນແຮງ. ເຖິງວ່າມີຄວາມທ້າທາຍໃນການປ່ຽນແປງທັດສະນະຄະຕິຂອງຄົນ, ການປ້ອງກັນຂັ້ນເບື້ອງຕົ້ນມີຄວາມສໍາຄັນຫຼາຍທີ່ສາມາດແນະນໍາ ການສຶກສາໃນການພັດທະນາທັກສະຊີວິດ ແລະ ການດໍາລົງຊີວິດສໍາລັບໄວໜຸ່ມຊາຍ ແລະ ເດັກຊາຍ. ນອກຈາກນັ້ນແລ້ວ, ແມ່ຍິງທີ່ມີຄູ່ຮ່ວມຊີວິດທີ່ມີແມ່ຍິງຄົນອື່ນ ແລະ ມີການດື່ມສິ່ງມຶນເມົາ ແມ່ນມີທ່າອ່ຽງໃນການຖືກຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໃນໄລຍະ 12 ເດືອນທີ່ຜ່ານມາ ເຊິ່ງຫຼາຍກວ່າແມ່ຍິງທີ່ບໍ່ເຄີຍຖືກບັນຫາ. ຄືດັ່ງການນໍາສະເໜີໃນບົດທີ 6, ການນອກໃຈ ແລະ ສິ່ງມຶນເມົາໄດ້ຖືກລາຍງານເລື້ອຍໆ ໂດຍບັນດາຜູ້ເຂົ້າຮ່ວມໃນການສໍາຫຼວດທາງດ້ານຄຸນນະພາບ. ໃນຂະນະທີ່ບັນດາສາເຫດເຫຼົ່ານີ້ກໍ່ໃຫ້ເກີດຄວາມສ່ຽງຂອງການໃຊ້ຄວາມຮຸນແຮງ, ສິ່ງເຫຼົ່ານີ້ບໍ່ແມ່ນສາເຫດໂດຍກົງຂອງການໃຊ້ຄວາມຮຸນແຮງ. ໃນລະດັບບ້ານ, ແມ່ຍິງທີ່ອາໄສໃນບ້ານທີ່ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເຊັ່ນ ໃນເວລາເຈັບປ່ວຍ ຫຼື ເກີດອຸບັດເຫດ, ໃນຄອບຄົວແມ່ນມີທ່າອ່ຽງການໃຊ້ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ ໜ້ອຍກວ່າບັນດາແມ່ຍິງທີ່ອາໄສຢູ່ໃນ ບ້ານທີ່ບໍ່ມີການຊ່ວຍເຫຼືອກັນ. ໃນຂະນະທີ່ມີຄວາມທ້າທາຍສໍາລັບແມ່ຍິງໃນການລາຍງານ ແລະ ຂໍຄວາມຊ່ວຍເຫຼືອຈາກເພື່ອນບ້ານ, ລະບົບການຊ່ວຍເຫຼືອທີ່ເຂັ້ມແຂງຈາກເພື່ອນບ້ານ ສາມາດເອື້ອອໍານວຍໃຫ້ເກີດປັດໄຈໃນການຢຸດຕິການໃຊ້ຄວາມຮຸນແຮງ ແລະ ສ້າງສະພາບແວດລ້ອມທີ່ບໍ່ໃຫ້ມີການອົດກັ້ນຕໍ່ການໃຊ້ຄວາມຮຸນແຮງ.

# 12

# ຜົນສະທ້ອນທາງດ້ານ ນະໂຍບາຍ ແລະ ບັນດາຂໍ້ສະເໜີແນະ

# ພາກທີ 12. ຜົນສະທ້ອນທາງດ້ານນະໂຍບາຍ ແລະ ບັນດາຂໍ້ສະເໜີແນະ

ການສໍາຫຼວດລະດັບຊາດ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດ ຂອງແມ່ຍິງ ໃນ ສປປ ລາວ, 2014 ໄດ້ສະແດງຢ່າງຈະແຈ້ງວ່າ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແມ່ນມີອັດຕາສູງ, ເຊິ່ງຝັງເລິກໃນສັງຄົມ ແລະ ມີຜົນກະທົບຮ້າຍແຮງຕໍ່ສຸຂະພາບ ແລະ ຊີວິດການເປັນຢູ່ຂອງແມ່ຍິງ, ລູກ ແລະ ຄອບຄົວ. ການສໍາຫຼວດນີ້ໄດ້ຮັບການອໍານວຍຄວາມສະດວກ ແລະ ປະສານງານໂດຍ ຄະນະກໍາມະການຊີ້ນໍາລະດັບຊາດ (ປະກອບມີ ຄະນະກໍາມາທິການເພື່ອຄວາມກ້າ ວໜ້ າຂອງແ ມ່ຍິງແຫ່ງຊາດ, ສູນກາງສະຫະພັນແມ່ຍິງລາວ, ສູນສະຖິຕິແຫ່ງຊາດ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງຍຸຕິທໍາ), ໂດຍໄດ້ຮັບການສະໜັບສະໜູນຈາກ ອົງການ UNFPA, UN Women ແລະ WHO. ບັນດາຜົນສະທ້ອນທາງດ້ານນະໂຍບາຍ ແລະ ຂໍ້ສະເໜີແນະ ລຸ່ມນີ້ ແມ່ນຖືກກໍານົດຂຶ້ນ ໂດຍອີງໃສ່ຜົນຂອງການສໍາຫຼວດທີ່ໄດ້ຮັບຈາກ ຂໍ້ມູນອັນກວ້າງຂວາງ ບອກກັບການສົນທະນາຕ່າງໆ ຂອງບັນດາຄະນະກໍາມະການນີ້. ຜົນສະທ້ອນທາງດ້ານນະໂຍບາຍ ແລະ ຂໍ້ສະເໜີແນະນີ້ ແມ່ນຖືກແບ່ງເປັນ 3 ໝວດໃຫຍ່ຄື: 'ພັນທະທາງດ້ານການເມືອງ ແລະ ສະພາບແວດລ້ອມທີ່ເອື້ອອໍານວຍ", 'ການປ້ອງກັນ ແລະ ການປົກປ້ອງຂັ້ນພື້ນຖານ' ແລະ 'ການຕອບໂຕ້'. ຄຽງຄູ່ກັບຫຼັກການເຫຼົ່ານີ້, ຄວາມຕ້ອງການໃນການແກ້ໄຂ, ການປ້ອງກັນ ແລະ ປົກປ້ອງຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງຮຽກຮ້ອງໃຫ້ມີແຜນປະຕິບັດງານສະເພາະ ໂດຍມີຫຼາຍພາກສ່ວນຈາກທຸກໆ ຂະແໜງການ ແລະ ອົງການຈັດຕັ້ງເຂົ້າຮ່ວມ. ຜູ້ສ້າງນະໂຍບາຍ, ລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ, ຜູ້ໃຫ້ທຶນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ ຄວນຄໍານຶງ ແລະ ອີງໃສ່ບັນດາຂໍ້ສະເໜີແນະເຫຼົ່ານີ້ໃນເວລາວາງນະໂຍບາຍ ແລະ ຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ໃນການຊ່ວຍເຫຼືອແມ່ຍິງ ແລະ ເດັກທີ່ປະເຊີນກັບການໃຊ້ຄວາມຮຸນແຮງ.

## 12.1 ການສົ່ງເສີມພັນທະທາງດ້ານການເມືອງ ແລະ ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍຕໍ່ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

### 12.1.1 ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກສະບັບໃໝ່ ແລະ ແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ

ແຕ່ລະປະເທດມີພັນທະທີ່ຈະແຈ້ງໃນການອອກກົດໝາຍ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ກົດໝາຍໃນການແກ້ໄຂທຸກຮູບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ໃນການຕອບໂຕ້ຕໍ່ກົດໝາຍສາກົນ ທາງດ້ານສິດທິມະນຸດ. ກົດໝາຍ ແລະ ນະໂຍບາຍ ໄດ້ມີບົດບາດສໍາຄັນໃນການປ່ຽນທັດສະນະຄະຕິ ແລະ ພຶດຕິກໍາ ໃນການສົ່ງເສີມ ຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ ເຊັ່ນດຽວກັນກັບການພັດທະນາຍຸດທະສາດ ທີ່ມີຄວາມລະອຽດອ່ອນ ເຊັ່ນ ການປູກຈິດສໍານຶກ, ການໃຫ້ບໍລິການທີ່ ເໝາະສົມ ເພື່ອການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຮວມທັງການລົງໂທດຢ່າງຈິງຈັງຕໍ່ຜູ້ກະທໍາຜິດ.

ເຖິງວ່າ ສປປ ລາວ ຈະພັດທະນາກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ນິຍາມຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຍັງແຄບ ແລະ ຍັງມີຫຼາຍໆຊ່ອງວ່າງທີ່ຜູ້ກະທໍາຜິດຈະຫຼົບຫຼີກຈາກການຖືກດໍາເນີນຄະດີ. ໃນການຕອບໂຕ້ກັບບັນຫາດັ່ງກ່າວ ແລະ ຂໍສະເໜີແນະຈາກຄະນະກໍາມະການຂອງສົນທິສັນຍາ CEDAW (ຂໍສະເໜີແນະເລກທີ 24), ລັດຖະບານແຫ່ງ ສປປ ລາວ ໄດ້ຮ່າງກົດໝາຍສະບັບຫຼ້າສຸດ ຄືກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ເຊິ່ງຄອບຄຸມທັງນິຍາມຂອງການໃຊ້ຄວາມຮຸນແຮງ, ວິທີການໃນການປ້ອງກັນ ແລະ ຂໍ້ຫ້າມໃນການໃຊ້ຄວາມຮຸນແຮງ ເຊັ່ນດຽວກັນກັບການປົກປ້ອງພົນລະເມືອງ ລວມທັງລະບົບໄອຍະການ. ບັນດາອົງປະກອບເຫຼົ່ານີ້ຖືກອອກແບບເພື່ອແກ້ໄຂຂໍ້ບົກຜ່ອງໃນກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ທີ່ບໍ່ໄດ້ລວມເອົາການໃຊ້ຄວາມຮຸນແຮງໃນຄູ່ຊີວິດທີ່ບໍ່ໄດ້ແຕ່ງງານກັນ ແລະ ການຂົ່ມຂືນໃນຄູ່ແຕ່ງງານ. ເຖິງຢ່າງໃດກໍ່ຕາມ, ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ສະບັບໃໝ່ ເຊິ່ງຫາກໍ່ເລີ່ມຂະບວນການທີ່ມີຄວາມສະຫຼັບສັບຊ້ອນ ເພື່ອຕອບສະໜອງຄວາມຕ້ອງການຂອງແມ່ຍິງໄດ້ດີຂຶ້ນ ພ້ອມກັບການສະໜອງການບໍລິການໄປຄຽງຄູ່ກັບການປ່ຽນແປງກົດປະເພນີທາງສັງຄົມທີ່ຈະສະໜັບສະໜູນການສ້າງຄວາມເປັນສຸພາບບຸລຸດຈົນເຖິງ ການນໍາໄປສູ່ການໃຫ້ກຽດ ແລະ ຄວາມສໍາພັນທີ່ມີຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ.

ການອອກກົດໝາຍ ຈະມີການຈັດຕັ້ງປະຕິບັດທີ່ມີປະສິດທິພາບຫຼາຍທີ່ສຸດ ໃນເວລາທີ່ມີກອບວຽກທາງດ້ານນະໂຍບາຍ ຮ່ວມກັບແຜນປະຕິບັດງານ ຫຼື ຍຸດທະສາດ. ແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (2014-2020) ຂອງ ສປປ ລາວ ສະໜັບສະໜູນການຈັດຕັ້ງປະຕິບັດຂອງອົງປະກອບພື້ນຖານຂອງກົດໝາຍສະບັບໃໝ່ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ປະກອບມີ ການປ້ອງກັນ, ການປົກປ້ອງ, ການຮ່ວມມື, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການຊ່ວຍເຫຼືອແບບເຊື່ອມສານ. ໃນການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ສະບັບໃໝ່ ແລະ ແຜນປະຕິບັດງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ບັນລຸ, ໄດ້ຮຽກຮ້ອງໃຫ້ມີການຕອບໂຕ້ທີ່ມີປະສິດທິພາບ ໃນບັນດາຂໍ້ສະເໜີແນະລຸ່ມນີ້:

- ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ (ເຊິ່ງຕໍ່ໄປນີ້ຈະເອີ້ນວ່າ'ກົດໝາຍວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່), ນະໂຍບາຍອື່ນໆ ແລະ ແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍ ຈາກການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດ ເຊັ່ນດຽວກັນກັບການລົງໂທດຢ່າງເຂັ້ມງວດຕໍ່ຜູ້ກະທໍາຜິດ ໂດຍອີງຕາມກົດໝາຍວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່. ການປູກຈິດສໍານຶກໃນທົ່ວປະເທດ ກ່ຽວກັບກົດໝາຍວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກສະບັບໃໝ່ ແລະ ການໃຊ້ຄວາມຮຸນແຮງ ແມ່ນຄວາມຜິດທາງອາຍາ ແລະ ລະເມີດຕໍ່ສິດທິມະນຸດ.
- ຮັບປະກັນວ່າຜູ້ຖືກເຄາະຮ້າຍຈະສາມາດເຂົ້າເຖິງໂດຍກົງ ແລະ ທັນເວລາ ຕໍ່ການໃຫ້ຄໍາແນະນໍາທາງດ້ານກົດໝາຍ ຈາກບັນດານັກກົດໝາຍ ແລະ ຜູ້ໃຫ້ຄໍາປຶກສາ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ໄດ້ຮັບຜົນປະໂຫຍດຈາກກົດໝາຍວ່າດ້ວຍການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່.
- ດໍາເນີນການຕິດຕາມຢ່າງໃກ້ຊິດ ແລະ ເປັນໄລຍະ ເພື່ອສັງເກດວ່າ ກົດໝາຍວ່າດ້ວຍການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບໃໝ່ ແມ່ນໄດ້ຖືກ 'ຮັບຮູ້ ແລະ ເຂົ້າເຖິງ' ໂດຍສາທາລະນະ ແລະ ມີການບັງຄັບໃຊ້ໂດຍອໍານາດການປົກຄອງໃນຂັ້ນຕ່າງໆ.
- ແກ້ໄຂທຸກໆ ຂໍ້ຈໍາກັດຂອງບັນດາມາດຕາຂອງກົດໝາຍ ເພື່ອຮັບປະກັນວ່າບັນດາຂໍ້ກົດໝາຍຕ່າງໆ ຈະສາມາດຈັດຕັ້ງປະຕິບັດໄດ້ແທ້ ແລະ ສາມາດຕອບສະໜອງຕາມຄວາມຕ້ອງການຂອງສັງຄົມໄດ້.
- ພັດທະນາແຜນແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງ ຕໍ່ແມ່ຍິງ ໂດຍວິທີໃໝ່ ແລະ ມີເປົ້າໝາຍ ທີ່ຈະສ້າງຄວາມປ່ຽນແປງ ແລະ ກໍານົດຜົນໄດ້ຮັບທີ່ມີປະສິດທິພາບ, ກິດຈະກໍາ, ກອບເວລາ ແລະ ຊັບພະຍາກອນ (ງົບປະມານ, ຊັບພະຍາກອນມະນຸດ ແລະ ຊັບພະຍາກອນອື່ນໆ ທີ່ຈໍາເປັນ ເຊັ່ນ ການປະກອບສ່ວນທາງດ້ານງົບປະມານ ແລະ ສິ່ງຂອງອື່ນໆ) ໂດຍການຮວບຮວມຂໍ້ມູນຈາກນິຕິບຸກຄົນ ແລະ ຂະແໜງການທີ່ກ່ຽວຂ້ອງທັງໝົດ.

### 12.1.2 ການປູກຈິດສໍານຶກສາທາລະນະ ແລະ ການໂຄສະນາປຸກລະດົມ

ການເພີ່ມການປູກຈິດສໍານຶກສາທາລະນະ ແລະ ການໂຄສະນາ ແມ່ນມີຄວາມຈໍາເປັນ ເພື່ອບັນລຸການຜັນປ່ຽນທາງສັງຄົມ ແລະ ການປະຕິຮູບລະບົບ ໂດຍການສົ່ງອິດທິພົນເຖິງທັດສະນະຄະຕິ, ພຶດຕິກໍາ, ນະໂຍບາຍ ແລະ ການປະຕິບັດການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນສັງຄົມລາວ. ຍຸດທະສາດທີ່ສາມາດຜັນຂະຫຍາຍໄດ້ ແມ່ນມີຄວາມຕ້ອງການເພື່ອຂັບເຄື່ອນການໂຄສະນາຜ່ານສື່ຕ່າງໆ ແລະ ແນວຄິດລິເລີ່ມໃນການໂຄສະນາດ້ານນະໂຍບາຍ.

- ສົ່ງເສີມ ແລະ ປຸກລະດົມ ບັນດານັກຂ່າວ ແລະ ສື່ຕ່າງໆ ໃຫ້ສົ່ງເສີມຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ເພື່ອເປັນການປ້ອງກັນຂັ້ນພື້ນຖານ ສໍາລັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ໂດຍການຈັດພິມທາງອີເລັກໂຕນິກ ແລະ ສິ່ງພິມ ເພື່ອເສີມຂະຫຍາຍການປູກຈິດສໍານຶກສາທາລະນະ ແລະ ຈຸດປະກາຍການສົນທະນາຢ່າງຈິງຈັງໃນບັນຫາດັ່ງກ່າວ.
- ພັດທະນາຄູ່ມືສໍາລັບການປູກຈິດສໍານຶກ ຜ່ານລາຍການໂທລະພາບ, DVDs ແລະ ຄູ່ມືການຮຽນການສອນໃນໂຮງຮຽນ ເພື່ອແຜ່ຂະຫຍາຍໄປທົ່ວປະເທດ.[24]
- ພັດທະນາວິທີການພົວພັນສາທາລະນະທີ່ກວມລວມ, ເຊັ່ນ ການອອກຂ່າວ ແລະ ການຈັດພິມເອກະສານ ສາທາລະນະ, ເພື່ອຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ມີການແປ ແລະ ຕີຄວາມໝາຍເປັນພາສາລາວຢ່າງຖືກຕ້ອງ ໂດຍພິຈາລະນາທັງພາສາຊົນເຜົ່າ ອີງຕາມຄວາມຫຼາກຫຼາຍໃນສັງຄົມລາວ.
- ເລັ່ງໃສ່ການໂຄສະນາທາງດ້ານນະໂຍບາຍ ເພື່ອເຜີຍແຜ່ກົດໝາຍ ແລະ ພັດທະນາແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ເພື່ອປ້ອງກັນ ແລະ ຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.
- ສະໜັບສະໜູນການໂຄສະນາເພື່ອປູກຈິດສໍານຶກ, ລວມທັງການຄຸ້ມຄອງກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ສະບັບໃໝ່ ແລະ ແຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນດ້ານການຈັດສັນຊັບພະຍາກອນ ເພື່ອການຈັດຕັ້ງປະຕິບັດ ເຊັ່ນດຽວກັນກັບ ການແຊກແຊງທີ່ມີປະສິດທິພາບ, ລວມທັງຜົນສໍາເລັດ ແລະ ຜົນກະທົບຂອງບັນດາໂຄງການ ແລະ ແຜນງານຕ່າງໆ.

### 12.1.3 ພັນທະໃນການຈັດສັນງົບປະມານ ເພື່ອການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ

ຖ້າບໍ່ມີງົບປະມານທີ່ພຽງພໍ, ການອອກກົດໝາຍຈະບໍ່ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິພາບໄດ້. ການຄໍ້າປະກັນທາງດ້ານຊັບພະຍາກອນ, ໂດຍສະເພາະງົບປະມານທີ່ພຽງພໍ, ແມ່ນຈຸດໃຈກາງໃນການບັນລຸຄວາມພະຍາຍາມໃນການຈັດຕັ້ງປະຕິບັດ ແລະ ເຮັດໃຫ້ເກີດຄວາມຍືນຍົງ. ກົດໝາຍວ່າດ້ວຍ

[24] ຕົວຢ່າງໜຶ່ງແມ່ນ DVD ຫົວຂໍ້ "ສາລະຄະດີຄວາມຮຸນແຮງໃນຄອບຄົວ ໂດຍໂຮງໜັງລາວຄື້ນໃໝ່" ພັດທະນາໂດຍຄະນະກໍາມະການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ຄະນະກໍາມາທິການເພື່ອແມ່ ແລະ ເດັກ ແຫ່ງຊາດ ໂດຍສະໜັບສະໜູນຈາກລັດຖະບານອົດສະຕາລີ. ເບິ່ງວິດີໂອ ທີ່: https://www.youtube.com/watch?v=V4wtjVW5a7s

ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ສະບັບໃໝ່ ແມ່ນຕ້ອງມີການຈັດສັນທາງດ້ານຊັບພະຍາກອນ ເພື່ອການປະຕິບັດທຸກໆ ກິດຈະກຳທີ່ກ່ຽວຂ້ອງເພື່ອລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

- ລະດົມງົບປະມານ ແລະ ຊັບພະຍາກອນຈາກຫຼາກຫຼາຍແຫຼ່ງທຶນ ເຊັ່ນ ຈາກລັດຖະບານ, ຜູ້ໃຫ້ທຶນ, ອົງການຈັດຕັ້ງທາງສັງຄົມ, ຫົວໜ່ວຍທຸລະກິດ ຫຼື ລວມທັງສາທາລະນະ ໃນຮູບແບບຂອງການເງິນ ຫຼື ການປະກອບສ່ວນອື່ນໆ, ລວມທັງການຊ່ວຍເຫຼືອທາງດ້ານວິຊາການ, ສິ່ງອຳນວຍຄວາມສະດວກ, ອຸປະກອນ ຫຼື ເຄື່ອງມືທີ່ຕ້ອງການ ສຳລັບການບໍລິການ ແລະ ການອອກຂ່າວໂດຍບໍ່ເສຍຄ່າໂດຍສື່ຕ່າງໆ ເພື່ອການປູກຈິດສຳນຶກ ແລະ ການເຜີຍແຜ່ຂໍ້ມູນເພື່ອໃຫ້ປະໂຫຍດກັບຜູ້ຖືກເຄາະຮ້າຍ.
- ຕ້ອງຮັບປະກັນຊັບພະຍາກອນ ແລະ ງົບປະມານ ສຳລັບໄລຍະຍາວ ໂດຍເລີ່ມຈາກການອອກແບບ ແລະ ວາງແຜນໂຄງການຕັ້ງແຕ່ຕອນຕົ້ນ.
- ຮັບປະກັນ ແລະ ຈັດສັນງົບປະມານ ແບບຫຼາຍຂະແໜງການ ຫຼື ຂະແໜງການສະເພາະ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ສິ່ງເຫຼົ່ານີ້ ຄວນຮ່ວມກັບງົບປະມານທີ່ຕອບສະໜອງວຽກງານທາງດ້ານບົດບາດຍິງ-ຊາຍ, ເພື່ອສົ່ງເສີມການຈັດສັນທີ່ເທົ່າທຽມກັນ ແລະ ການນຳໃຊ້ຊັບພະຍາກອນຂອງລັດ ສຳລັບຄວາມບໍ່ເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ, ຮັບປະກັນທາງດ້ານສິດທິຂອງແມ່ຍິງ ແລະ ການປັບປຸງພັນທະໃນການປ້ອງກັນ ແລະ ຕອບໂຕ້ການໃຊ້ຄວາມຮຸນແຮງ.
- ຈັດການໂຄສະນາ ສຳລັບການລະດົມທຶນໃນແຕ່ລະໄລຍະ ເພື່ອປ້ອງກັນ ແລະ ລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນສັງຄົມລາວ.

### 12.1.4 ການພັດທະນາຖານຂໍ້ມູນ, ການວິໄຈເພີ່ມເຕີມ, ການຕິດຕາມກວດກາ ແລະ ປະເມີນຜົນ

ການເກັບກຳຂໍ້ມູນ, ພັດທະນາ ແລະ ປັບປຸງຖານຂໍ້ມູນໃຫ້ທັນສະໄໝ ແລະ ການວິໄຈ ຫຼື ການສຳຫຼວດ ໃນແຕ່ລະໄລຍະ ແມ່ນມີຄວາມສຳຄັນທີ່ສຸດເພື່ອການຕິດຕາມສະຖານະການໃນປັດຈຸບັນຂອງການໃຊ້ຄວາມຮຸນແຮງ, ການປ່ຽນແປງ ແລະ ຄວາມກ້າວໜ້າ ໃນການຈັດຕັ້ງປະຕິບັດການກົດໝາຍ ແລະ ແຜນປະຕິບັດງານ. ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ສະບັບໃໝ່ ແລະ ແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ມີການກຳນົດຢ່າງຈະແຈ້ງກ່ຽວກັບຄວາມຕ້ອງການໃນການສ້າງ ແລະ ສ້າງຄວາມເຂັ້ມແຂງທາງດ້ານຖານຂໍ້ມູນ, ສະຖິຕິ ແລະ ລະບົບການວິໄຈ ບັນຫາການໃຊ້ຄວາມຮຸນແຮງ. ຖານຂໍ້ມູນທີ່ເປັນລະບົບ ແລະ ເຂົ້າກັນດີ ຈະເອື້ອອຳນວຍໃຫ້ລັດຖະບານມີຄວາມຮັບຜິດຊອບ ແລະ ປະກອບສ່ວນໃນການວາງແຜນ ແລະ ໃຫ້ບໍລິການທີ່ສະທ້ອນເຖິງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ.

- ສ້າງຖານຂໍ້ມູນທີ່ເຂົ້າກັນດີ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ ແມ່ຍິງ ແລະ ເດັກ ທີ່ເກັບກຳໂດຍຫຼາຍຂະແໜງການທີ່ແຕກຕ່າງກັນ ຈາກພາກລັດ ແລະ ອົງການຈັດຕັ້ງຕ່າງໆ.
- ສ້າງຂີດຄວາມສາມາດໃນການສ້າງລະບົບຖານຂໍ້ມູນທີ່ລວມທັງທັກສະໃນການເກັບກຳຂໍ້ມູນ, ການວິເຄາະທາງສະຖິຕິ ແລະ ການຕີຄວາມໝາຍໃນກອບວຽກຂອງການວິໄຈ ແລະ ບັນດາໂຄງການ ຫຼື ແຜນງານ ເຊິ່ງເບິ່ງໃນດ້ານການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນ.
- ສະໜອງການວິໄຈ ແລະ ກິດຈະກຳເພີ່ມເຕີມ ໃນການເກັບກຳຂໍ້ມູນທີ່ກ່ຽວຂ້ອງ ເພື່ອຄວາມເຂົ້າໃຈຕໍ່ຮີດຄອງທາງດ້ານບົດບາດຍິງ-ຊາຍ, ທັດສະນະຄະຕິ ແລະ ການຂັບເຄື່ອນອື່ນໆ ຂອງການໃຊ້ຄວາມຮຸນແຮງໃນປະຊາກອນກຸ່ມໃຫຍ່ ແລະ ກຸ່ມນ້ອຍ ເພີ່ມຂຶ້ນ (ຊົນເຜົ່າກຸ່ມນ້ອຍ ຫຼື ບ້ານດ້ອຍພັດທະນາ), ເຊິ່ງບໍ່ໄດ້ຮັບການສຳຫຼວດໃນການສຶກສານີ້.
- ປັງປຸງຂໍ້ມູນທີ່ເຊື່ອຖືໄດ້ ແລະ ເປັນໄລຍະ ກ່ຽວກັບການແຜ່ຫຼາຍ, ການເຂົ້າເຖິງລະບົບຍຸຕິທຳ, ຈຳນວນຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດທີ່ຈຳແນກໂດຍສະຖານບໍລິການທາງດ້ານສຸຂະພາບ, ຕຳຫຼວດ, ການແນະນຳທາງກົດໝາຍ ຫຼື ການປົກປ້ອງ ແລະ ການໃຫ້ຄຳປຶກສາ, ແລະບັນດາ ກິດຈະກຳ ຫຼື ໂຄງການ ຫຼື ແຜນງານ.
- ຕິດຕາມຂໍ້ມູນດ້ານງົບປະມານ ແລະ ການໃຊ້ຈ່າຍສາທາລະນະ ສະເພາະກ່ຽວກັບການປ້ອງກັນ ແລະ ການຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຢ່າງໃກ້ຊິດ ເພື່ອຢັ້ງຢືນຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສ.
- ສ້າງຄວາມເຂັ້ມແຂງໃຫ້ການລາຍງານກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແຕ່ຂັ້ນສູນກາງ ຮອດຂັ້ນທ້ອງຖິ່ນ ເພື່ອຊ່ວຍເຫຼືອແມ່ຍິງ ແລະການລາຍງານສູ່ສາທາລະນະ.
- ນຳໃຊ້ຂໍ້ໄດ້ປຽບຂອງບັນດາຂໍ້ມູນ ແລະ ສະຖິຕິທີ່ມີຄວາມຫຼາກຫຼາຍໃນການສຳຫຼວດຄັ້ງນີ້ ເພື່ອການວິເຄາະແບບລົງເລິກໃນອະນາຄົດ.

## 12.2 ການສົ່ງເສີມການປ້ອງກັນຂັ້ນພື້ນຖານ

### 12.2.1 ຄວາມພະຍາຍາມໃນການປ່ຽນແປງສັງຄົມ, ວັດທະນະທຳ ແລະ ຮີດຄອງທາງດ້ານບົດບາດຍິງ-ຊາຍ ທີ່ສົ່ງເສີມການໃຊ້ຄວາມຮຸນແຮງ

ການສຳຫຼວດນີ້ ສະແດງໃຫ້ເຫັນເຖິງຫຼາຍໆ ອຸປະສັກໃນການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງມີຮາກຖານມາຈາກຮີດຄອງທາງດ້ານບົດບາດຍິງ-ຊາຍ ແລະ ສະພາບແວດລ້ອມໃນການຍົກເວັ້ນໂທດຕໍ່ການໃຊ້ຄວາມຮຸນແຮງ, ກັບສາຍພົວພັນທີ່ບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ. ໃນ ສປປ ລາວ, ເຄິ່ງໜຶ່ງຂອງແມ່ຍິງ ແລະ ຜູ້ຊາຍ ຄິດວ່າ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເປັນສິ່ງທີ່ສາມາດຍອມຮັບໄດ້ ຖ້າແມ່ຍິງບໍ່ສາມາດປະຕິບັດຕາມ ຄວາມຮັບຜິດຊອບ ແລະ ພາລະບົດບາດຕາມຮີດຄອງປະເພນີ. ການປ່ຽນແປງຄວາມເຊື່ອ, ຮີດຄອງປະເພນີ, ທັດສະນະຄະຕິ ແລະ ອະຄະຕິທາງດ້ານ ບົດບາດຍິງ-ຊາຍ ມີຄວາມສຳຄັນ ແລະ ການເພີ່ມທະວີຄວາມຮັບຮູ້ຂອງຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງ ທີ່ມີພື້ນຖານທາງເພດ ຈະຕ້ອງບໍ່ບັນລຸພຽງແຕ່ໃນຂັ້ນສູນກາງເທົ່ານັ້ນ, ແຕ່ຕ້ອງແມ່ນລະດັບທ້ອງຖິ່ນດ້ວຍ. ຄວາມພະຍາຍາມເຫຼົ່ານີ້ ສາມາດເຮັດໄດ້ໂດຍການຝຶກອົບຮົມໂດຍອີງໃສ່ຊຸມຊົນເປັນຫຼັກ ເນັ້ນໃສ່ດ້ານຮີດຄອງປະເພນີທາງດ້ານບົດບາດຍິງ-ຊາຍ, ຄວາມເປັນສຸພາບບຸລຸດ ແລະ ຂະບວນການໃນການຜັນປ່ຽນທັດສະນະຄະຕິຕໍ່ບົດບາດຍິງ-ຊາຍ ແລະ ອຳນາດໃນສາຍພົວພັນ. ຕົວຢ່າງ, ລະບົບການວິເຄາະທາງດ້ານບົດບາດຍິງ-ຊາຍໃນການຝຶກອົບຮົມສາມາດສະໜອງເຄື່ອງມື ເພື່ອຄວາມເຂົ້າໃຈສາເຫດ ແລະ ຜົນກະທົບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ຜູ້ເຂົ້າຮ່ວມສາມາດເພີ່ມຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ທຳມະຊາດຂອງການໃຊ້ຄວາມຮຸນແຮງ ແລະ ການພັດທະນາຍຸດທະສາດໃນການລຶບລ້າງຄວາມຮຸນແຮງ, ແລະ ເພີ່ມຄວາມຮັບຮູ້ຂອງຊຸມຊົນກ່ຽວກັບສິດທິຂອງແມ່ຍິງ (Tumursukh et al.,2013).[25] ພິຈາລະນາໜ້າທີ່ຂອງມັນ ໃນການແກ້ໄຂຂໍ້ຂັດແຍ່ງໃນຄອບຄົວ ລວມທັງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຄວນແມ່ນກຸ່ມທຳອິດທີ່ຕ້ອງໄດ້ຮັບການຝຶກອົບຮົມ.

- ສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ທ້າທາຍຮີດຄອງປະເພນີດັ້ງເດີມກ່ຽວກັບບົດບາດຍິງ-ຊາຍ ໃນອົງການຈັດຕັ້ງຂອງຊຸມຊົນ, ໂຮງຮຽນ ແລະ ສະຖານທີ່ເຮັດວຽກເພື່ອຢຸດຕິການໃຊ້ຄວາມຮຸນແຮງຕໍ່ເດັກ.
- ປຸກລະດົມໃຫ້ຊຸມຊົນນຳໃຊ້ແບບແຜນ ການບໍ່ອົດກັ້ນຕໍ່ທຸກຮູບແບບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ມີການບັງຄັບໃຊ້ການລົງໂທດຕໍ່ຜູ້ກະທຳຜິດ ແລະ ຜູ້ທີ່ລະເວັ້ນໂທດໃຫ້ຜູ້ກະທຳຜິດ.
- ສະໜອງການຝຶກອົບຮົມໃນຂັ້ນຊຸມຊົນ ກ່ຽວກັບສິດສະເໝີພາບຍິງ-ຊາຍ ແລະ ວິທີການໃນການຕອບໂຕ້ກັບການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ, ໂດຍສະເພາະການຝຶກອົບຮົມໃຫ້ຜູ້ນຳຊຸມຊົນ, ຜູ້ຊາຍໃນທຸກກຸ່ມອາຍຸ ລວມທັງຜູ້ຮັກສາກົດໝາຍ.
- ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ສົ່ງເສີມໃຫ້ເຂົາເຈົ້າມີສ່ວນຮ່ວມໃນການປ່ຽນແປງຮີດຄອງປະເພນີກ່ຽວກັບບົດບາດຍິງຊາຍ ແລະ ຄວາມບໍ່ເທົ່າທຽມກັນ, ໂດຍຜ່ານການຮັບຮູ້ ແລະ ບົດຮຽນຈາກປະສົບການສ່ວນຕົວຂອງແມ່ຍິງຕໍ່ການຖືກໃຊ້ຄວາມຮຸນແຮງ ແລະ ການຊຸກຍູ້ຕໍ່ຂະບວນການຕັດສິນໃຈ ເພື່ອການປ້ອງກັນ, ປົກປ້ອງ ແລະ ເສລີພາບໃນການເລືອກ. (ເພື່ອປ້ອງກັນການແຕ່ງງານໂດຍການບັງຄັບ ພາຍຫຼັງກໍລະນີການຂົ່ມຂືນ, ການໜີອອກຈາກເຮືອນ).
- ຈັດຫາຫຼາຍໆ ມາດຕະການທີ່ແຕກຕ່າງກັນ ເພື່ອປະກອບເພີ່ມເຂົ້າໃສ່ການຝຶກອົບຮົມທາງດ້ານບົດບາດຍິງ-ຊາຍທີ່ເປັນທາງການ ເຊັ່ນ: ການສະແດງລະຄອນ ແລະ ບົດບາດສົມມຸດ, ໂດຍສະເພາະສຳລັບຊາວບ້ານຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ ແລະ ການຂຽນ.

ຕົວຢ່າງໜຶ່ງຂອງການສົ່ງເສີມການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຊຸມຊົນ ລວມມີ ວິທີການ'SASA!'ທີ່ຈະທົດລອງໃນເຂດຊົນນະບົດຂອງ ສປປ ລາວ (ກັບທີ 12.1).

[25] ວິທີການໜຶ່ງທີ່ມີປະໂຫຍດ ແມ່ນເນັ້ນໃສ່ຮີດຄອງທາງດ້ານບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ແມ່ນ 'ການຜັນປ່ຽນຄວາມເປັນສຸພາບບຸລຸດ ເພື່ອຄວາມຍຸຕິທຳໃນບົດບາດຍິງ-ຊາຍ" ພັດທະນາໂດຍຊຸມຊົນໃນການຮຽນຮູ້ໃນພາກພື້ນອາຊີຕາເວັນອອກ ແລະ ຕາເວັນຕົກສ່ຽງໃຕ້, ໂດຍການສະໜັບສະໜູນຈາກ P4P (ຄູ່ຮ່ວມເພື່ອປ້ອງກັນ). ສຳລັບຂໍ້ມູນ, ກະລຸນາເບິ່ງ "ຜັນປ່ຽນຄວາມເປັນສຸພາບບຸລຸດ ເພື່ອຄວາມຍຸຕິທຳໃນບົດບາດຍິງ-ຊາຍ ຂໍ້ມູນພື້ນຖານເພື່ອການຈັດຕັ້ງປະຕິບັດ (ໂດຍ RLC)", ສະໜັບສະໜູນໂດຍ: ຄູ່ຮ່ວມຊີວິດເພື່ອປ້ອງກັນ UNDP, UNFPA, UN Women ແລະ UNV ໂຄງການຮ່ວມມືລະດັບພາກພື້ນສຳລັບ ການປ້ອງກັນການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ໃນພາກພື້ນອາຊີ ແລະ ປາຊີຟິກ ສາມາດເບິ່ງອອນລາຍໄດ້ທີ່: http://www.partners4prevention.org/sites/default/files/resources/rlc_curriculum_final.pdf

**ກັບທີ 12.1 SASA! ວິທີການ: ໂຄງການລິເລີ່ມ**
**ສຳລັບການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຂັ້ນເບື້ອງຕົ້ນໃນຊຸມຊົນ**

SASA! (Start, Awareness, Support and Action) (ເລີ່ມຕົ້ນ, ປູກຈິດສຳນຶກ, ສະໜັບສະໜູນ ແລະ ປະຕິບັດການ) ແມ່ນວິທີການໃນການປຸກລະດົມຊຸມຊົນ ທີ່ອາໄສຢູ່ໃນບັນດາປະເທດໃນອາຟຣິກາ ຊັບຊາຮາຣາ ເພື່ອປູກຈິດສຳນຶກ ໃນການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການຕໍ່ສູ້ຕ້ານ HIV/AIDS. ເຖິງແມ່ນວ່າຈະລວມທັງອົງປະກອບກ່ຽວກັບ HIV/AIDS, ລະບຽບການ ແລະ ວິທີການທີ່ລະອຽດອ່ອນທາງດ້ານບົດບາດຍິງ-ຊາຍສາມາດນຳໃຊ້ໃນໂຮງຮຽນ ແລະ ຊຸມຊົນ.

ວິທີການ 'SASA!' ໄດ້ມີການແນະນຳໃນການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ໃນດ້ານຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ. ອົງການສະຫະປະຊາຊາດເພື່ອແມ່ຍິງ ໄດ້ມີບົດບາດສຳຄັນໃນການເຜີຍແຜ່ ວິທີການ SASA ໃຫ້ກັບ ສູນກາງສະຫະພັນແມ່ຍິງລາວ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ ແລະ ອົງການແຄຣ໌ສາກົນ. ການແນະນຳຫຼັກສູດດັ່ງກ່າວໄດ້ຈັດຂຶ້ນໃນເດືອນ ມີນາ 2015. ດັ່ງນັ້ນ ອົງການແຄຣ໌ສາກົນ ຈຶ່ງໄດ້ນຳໃຊ້ວິທີການ SASA ໃນປັດຈຸບັນ. ວິທີການດັ່ງກ່າວເປັນປະໂຫຍດ ແລະ ເປັນເຄື່ອງມືທີ່ກ່ຽວຂ້ອງ ສຳລັບການປ້ອງກັນທີ່ມີພື້ນຖານຈາກຊຸມຊົນ ໃນການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ເຊິ່ງຈະມີການທົດລອງຫຼາຍຂຶ້ນໃນລະດັບຊຸມຊົນ.

### 12.2.2 ການສຶກສາ ເພື່ອການບໍ່ອົດກັ້ນ ຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໃນໂຮງຮຽນ

ເດັກຈະເຫັນເຫດການຂອງການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ/ຫຼື ທາງເພດ ໂດຍຄູ່ຮ່ວມຊີວິດເປັນປະຈຳ. ບາງເທື່ອ ເດັກເຫຼົ່ານັ້ນກໍ່ກາຍເປັນຜູ້ຖືກເຄາະຮ້າຍຂອງການໃຊ້ຄວາມຮຸນແຮງ ແລະ ລະເມີດຕໍ່ສິດທິເດັກ. ເຂົາເຈົ້າອາດຈະຢູ່ໃນສະຖານະການທີ່ມີຄວາມອ່ອນແອ, ລວມທັງການປະເຊີນໂດຍກົງ ກັບການລ່ວງລະເມີດ, ການຂົ່ມຂືນ, ການຄ້າມະນຸດ ແລະ ການລອບລາມ.

ການສຳຫຼວດນີ້ໄດ້ສະແດງໃຫ້ເຫັນວ່າ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໄດ້ສົ່ງຜົນກະທົບທາງກົງຕໍ່ການພັດທະນາຂອງເດັກ, ໂດຍສະເພາະທາງດ້ານສຸຂະພາບ, ທັດສະນະຄະຕິ ແລະ ການຮຽນ. ບັນຫາເຫຼົ່ານີ້ຈະສົ່ງຜົນກະທົບໃນທາງລົບຕໍ່ຜົນສຳເລັດຂອງການສຶກສາ ແລະ ຄວາມຄາດຫວັງໃນໄລຍະຍາວ. ເພື່ອຢຸດຕິວົງຈອນຂອງການໃຊ້ຄວາມຮຸນແຮງ ແລະ ການເອື້ອອຳນວຍໃຫ້ເດັກ ແລະ ໄວໜຸ່ມໄດ້ຮຽນຮູ້ກ່ຽວກັບສິດທິຂອງເຂົາເຈົ້າ ແລະ ການປົກປ້ອງ, ຄວາມພະຍາຍາມໃນການປ້ອງກັນໃນໂຮງຮຽນ ສາມາດເປັນຂັ້ນຕອນທີ່ມີປະສິດທິພາບໃນການກ້າວຕໍ່ໄປ.

- ສົ່ງເສີມ ແລະ ຈັດຕັ້ງປະຕິບັດ ບັນດາກິດຈະກຳທາງດ້ານ ສິດທິມະນຸດ ແລະ ສິດສະເໝີພາບຍິງ-ຊາຍ ເຂົ້າໃນລະບົບການຮຽນ-ການສອນພາກບັງຄັບຢູ່ໃນໂຮງຮຽນ.
- ເພີ່ມຄວາມເຂົ້າໃຈຂອງນັກຮຽນ ໃນຄວາມເທົ່າທຽມກັນທາງດ້ານບົດບາດຍິງ-ຊາຍ ແລະ ສິດທິມະນຸດໃນໂຮງຮຽນ, ລວມທັງການໃຊ້ຄວາມຮຸນແຮງໃນໂຮງຮຽນ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ເຊັ່ນດຽວກັນກັບ ການເພີ່ມຄວາມຮູ້ຂອງນັກຮຽນ ແລະ ການເຂົ້າເຖິງລະບົບການຊ່ວຍເຫຼືອໃນເວລາທີ່ພົວພັນກັບການໃຊ້ຄວາມຮຸນແຮງ.
- ເພີ່ມທະວີການປ້ອງກັນການໃຊ້ຄວາມຮຸນແຮງໃນສາຍພົວພັນຂອງເພື່ອນ ແລະ ການສົ່ງເສີມຮີດຄອງທາງດ້ານບົດບາດຍິງ-ຊາຍທີ່ດີ ໂດຍນາຍຄູ. ສະໜອງການສອນ ແລະ ສະໜັບສະໜູນພະນັກງານ ໂດຍຊຸດຝຶກອົບຮົມ ເພື່ອການມີທັກສະທີ່ພຽງພໍສຳລັບການສອນ ແລະ ການສົ່ງເສີມຄວາມເທົ່າທຽມທາງດ້ານບົດບາດຍິງ-ຊາຍ ແລະ ສິດທິມະນຸດ.
- ພັດທະນາຄູ່ມື ແລະ ອຸປະກອນການສອນ ກ່ຽວກັບຄວາມເທົ່າທຽມທາງດ້ານບົດບາດຍິງ-ຊາຍ, ການພົວພັນທີ່ໃຫ້ກຽດເຊິ່ງກັນແລະກັນ, ການສື່ສານ ແລະ ທັກສະຊີວິດ.

ຄ້າຍຄືກັບ SASA! ວິທີການປ້ອງກັນຂັ້ນພື້ນຖານໂດຍອີງໃສ່ຊຸມຊົນເປັນຫຼັກ, ວິທີການນີ້ກໍ່ໄດ້ຖືກນຳໃຊ້ ແລະ ປັບປຸງແຜນງານການປ້ອງກັນການໃຊ້ຄວາມຮຸນແຮງໃນໂຮງຮຽນ (ກັບທີ 12.2).

**ກັບທີ 12.2 ໂຄງການລິເລີ່ມ ສໍາລັບການສຶກສາໃນໂຮງຮຽນ ເພື່ອການປ້ອງກັນຄວາມຮຸນແຮງທີ່ມີພື້ນຖານທາງເພດ**

ໂຄງການລິເລີ່ມທີ່ແນະນໍາ ການສຶກສາໃນໂຮງຮຽນເພື່ອການປ້ອງກັນການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ໃນ ສປປ ລາວ. ກະຊວງສຶກສາທິການ ແລະ ກິລາ ແລະ ອົງການສະຫະປະຊາຊາດເພື່ອແມ່ຍິງ ພັດທະນາຄູ່ມືເພື່ອໃຊ້ໃນໂຮງຮຽນ ເພື່ອຍຸຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ. ຄູ 10 ຄົນທີ່ໄດ້ຮັບການຄັດເລືອກໃຫ້ໄດ້ຮັບການຝຶກໃຫ້ໃນຕົ້ນປີ 2015 ໃນແນວຄິດຂອງຄວາມເທົ່າທຽມກັນໃນບົດບາດຍິງ-ຊາຍ ແລະ ການໃຊ້ຄວາມຮຸນແຮງທີ່ມີພື້ນຖານທາງເພດ ເຊັ່ນດຽວກັນກັບ ຫຼັກການ ແລະ ວິທີການພື້ນຖານ ໃນການສອນນັກຮຽນໂດຍການໃຊ້ຄູ່ມືດັ່ງກ່າວ. ຕາມດ້ວຍການຝຶກອົບຮົມຄູ ແລະ ນັກຮຽນຍິງ 30 ຄົນ ແລະ ຊາຍ 30 ຄົນ ຈາກໂຮງຮຽນມັດທະຍົມໃນນະຄອນຫຼວງວຽງຈັນ ທີ່ໄດ້ເຂົ້າຮ່ວມໃນໂຄງການລິເລີ່ມໂດຍການໃຊ້ຄູ່ມືໃໝ່. ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ເຊື່ອມສານວິທີການຂອງ SASA! ໃນການຝຶກການເຊື່ອມສານວຽກງານບົດບາດຍິງ-ຊາຍ, ເຊິ່ງໄດ້ຝຶກ 3 ຄັ້ງແລ້ວ ໂດຍພະນັກງານຈາກກະຊວງສຶກສາທິການ ແລະ ກິລາ ເຊິ່ງໄດ້ສໍາເລັດຄູ່ມື ສໍາລັບໂຮງຮຽນ ໃນການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ລວມທັງວິທີການຂອງ SASA! ເຊິ່ງຄາດວ່າຈະເປັນເຄື່ອງມືສໍາຄັນໃນການປົກປ້ອງໂຮງຮຽນໃນທົ່ວປະເທດ.

## 12.3 ການກຽມລະບົບການປົກປ້ອງ ແລະ ແກ້ໄຂຢ່າງເໝາະສົມ

ການບໍລິການຂອງຫຼາຍຂະແໜງການທີ່ມີຄຸນນະພາບ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແມ່ນມີຄວາມສໍາຄັນຫຼາຍສໍາລັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ສະບັບໃໝ່ ແລະ ແຜນປະຕິບັດງານແຫ່ງຊາດເພື່ອປ້ອງກັນ ແລະ ລົບລ້າງການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ເດັກ. ເຊິ່ງລວມທັງການເພີ່ມຂຶ້ນໃນການເຂົ້າເຖິງຕໍາຫຼວດ ແລະ ຄວາມຍຸຕິທໍາຂອງແມ່ຍິງ ແລະ ເດັກ, ການຊ່ວຍເຫຼືອທາງດ້ານສະຫວັດດີ-ສັງຄົມ ເຊັ່ນດຽວກັນກັບການບໍລິການໃນການປິ່ນປົວ. ໂດຍສະເພາະ, ການບໍລິການເຫຼົ່ານີ້ ຄວນຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພ, ແລະ ການປົກປ້ອງ, ຮ່ວມກັບການປິ່ນປົວການບາດເຈັບຕ່າງໆ ຢ່າງເໝາະສົມ ແລະ ຜົນກະທົບທາງຈິດໃຈ, ຄວາມຕ້ອງການທາງດ້ານການປິ່ນປົວທາງເພດ ແລະ ສຸຂະພາບຈະເລີນພັນ, ລວມທັງການສະໜອງການເບິ່ງແຍງ ແລະ ການໃຫ້ຄໍາປຶກສາຫຼັງຈາກການຖືກຂົ່ມຂືນ. ວິທີການສະເພາະຂອງຂະແໜງການ ເພື່ອການຊ່ວຍເຫຼືອ ແມ່ນມີຜົນກະທົບໂດຍຂະແໜງການ ໃນບັນດາອົງການຈັດຕັ້ງ ແລະ ຂະແໜງການທີ່ແຕກຕ່າງກັນ. ດ້ວຍເຫດນີ້, ລະບົບການນໍາສົ່ງການໃຫ້ບໍລິການ ຄວນຈະໄດ້ຮັບການຈັດຕັ້ງປະຕິບັດໂດຍການຮ່ວມມື ແລະ ການບໍ່ມີຮອຍຕໍ່ໃນບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ທີ່ເຂົ້າໃຈຂັ້ນຕອນຂອງການບໍລິການຕາມລໍາດັບ ແລະ ການສະໜອງການສົ່ງຕໍ່ທີ່ເໝາະສົມ ແລະ ທັນເວລາ.

### 12.3.1 ສະຫວັດດີການ ແລະ ການບໍລິການທາງສັງຄົມອື່ນໆ

ດັ່ງທີ່ໄດ້ອະທິບາຍໃນບົດທີ 9, ໃນປັດຈຸບັນແມ່ນມີທີ່ພັກເຊົາຊົ່ວຄາວພຽງແຕ່ແຫ່ງດຽວໃນ ສປປ ລາວ ແລະ ສູນກາງສະຫະພັນແມ່ຍິງລາວ ເປັນຜູ້ຈັດຕັ້ງປະຕິບັດການບໍລິການດັ່ງກ່າວ ແມ່ນຍັງມີຂໍ້ຈໍາກັດ, ໂດຍສະເພາະການເຂົ້າເຖິງສາຍດ່ວນ. ການມີສູນພຽງແຫ່ງດຽວໃນທົ່ວປະເທດ ແມ່ນບໍ່ສາມາດສະໜອງຕາມຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍທີ່ຂໍການຊ່ວຍເຫຼືອຈາກອົງການຈັດຕັ້ງທີ່ເປັນທາງການ. ການບໍລິການທາງດ້ານສະຫວັດດີການ ຕ້ອງມີການເພີ່ມທະວີ ແລະ ການສ້າງຂີດຄວາມສາມາດ ເພື່ອການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ມີປະສິດທິພາບ ແລະ ທັນເວລາ.

- ເພີ່ມຈໍານວນບ້ານພັກສຸກເສີນທີ່ມີຄວາມປອດໄພໃນປະເທດ ເພື່ອສະໜອງທີ່ພັກເຊົາໃຫ້ກັບຜູ້ຖືກເຄາະຮ້າຍທີ່ມີລູກຕິດມານໍາ ຈົນກວ່າເຂົາເຈົ້າຈະສາມາດສ້າງຊີວິດຂອງຕົນເອງ ແລະ ສາມາດກັບຄືນສູ່ສັງຄົມໄດ້.
- ສ້າງຕັ້ງກຸ່ມສະຫະວິຊາຊີບ ໃນການຄຸ້ມຄອງກໍລະນີ ສໍາລັບຜູ້ຖືກເຄາະຮ້າຍ, ການປິ່ນປົວ, ສະຫວັດດີການ, ໃຫ້ຄໍາປຶກສາ ແລະ ບໍລິການທາງດ້ານກົດໝາຍ ໃນຂັ້ນສູນກາງ ແລະ ຂັ້ນແຂວງ.
- ເພີ່ມ ແລະ ສ້າງຄວາມເຂັ້ມແຂງການບໍລິການໃຫ້ຄໍາປຶກສາ ໂດຍການຝຶກອົບຮົມໃຫ້ກັບນັກສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາ ເພື່ອສະໜອງການຊ່ວຍເຫຼືອທາງດ້ານເສດຖະກິດ-ສັງຄົມ ແລະ ທາງດ້ານຈິດໃຈໃຫ້ແກ່ຜູ້ຖືກເຄາະຮ້າຍ ເຊັ່ນດຽວກັນກັບ ການສົ່ງຕໍ່ເຂົ້າໃນຂະບວນການຍຸຕິທໍາ.
- ຮັບປະກັນການເຂົ້າເຖິງທີ່ມີປະສິດທິພາບຕໍ່ສາຍດ່ວນຂອງງສູນພັກເຊົາໃນປັດຈຸບັນ ໂດຍການປັບປຸງເບີໂທສາຍດ່ວນ ແລະ ເຮັດໃຫ້ເບີໂທສາຍດ່ວນມີຄວາມງ່າຍຂຶ້ນ (ມີພຽງ 3 ຫຼື 4 ຕົວເລກ), ເພື່ອຈະງ່າຍໃນການຈື່ຈໍາ ໂດຍຜູ້ມີທ່າອ່ຽງໃນການໃຊ້.
- ທົບທວນ ຫຼື ມີແຜນທີ່ຂອງຂອດບໍລິການທີ່ມີຢູ່ ໂດຍສະເພາະການແກ້ໄຂ ຫຼື ຄວາມລະອຽດອ່ອນຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ແລະ ມີຄວາມຮັບຜິດຊອບ ຂອງບັນດາການໃຫ້ບໍລິການເຫຼົ່ານີ້ ສາມາດພັດທະນາ ແລະ ສ້າງຄວາມເຂັ້ມແຂງຜ່ານການຮ່ວມມືທາງດ້ານວິຊາການຂອງອົງການຂອງສະຫະປະຊາຊາດ, ຜູ້ໃຫ້ທຶນ ຫຼື ຜູ້ຊ່ຽວຊານອິດສະຫຼະ ໃນການຮ່ວມມືກັນກັບລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ. ນອກຈາກນີ້ແລ້ວ, ມັນເປັນສິ່ງຈໍາເປັນທີ່ຕ້ອງຈັດຕັ້ງປະຕິບັດກ່ອນ ໃນການຄໍ້າປະກັນງົບປະມານທີ່ພຽງພໍ ລວມທັງການວາງງົບປະມານ, ການພັດທະນາຊັບພະຍາກອນມະນຸດ ແລະ ການປະກອບສ່ວນດ້ານອື່ນ ເພື່ອຂະຫຍາຍການບໍລິການ.

### 12.3.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການສາທາລະນະສຸກ ເພື່ອການຕອບໂຕ້ທີ່ເໝາະສົມສໍາລັບຜູ້ຖືກເຄາະຮ້າຍ

ດັ່ງທີ່ການສຳຫຼວດໄດ້ສະແດງໃຫ້ເຫັນວ່າ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ມີຜົນກະທົບທີ່ຮ້າຍແຮງທັງທາງກົງ ແລະ ທາງອ້ອມ ຕໍ່ສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງແມ່ຍິງ, ທັງໃນໄລຍະສັ້ນ ແລະ ໄລຍະຍາວ. ດ້ວຍເຫດນີ້, ຂະແໜງການສາທາລະນະສຸກ ຈຶ່ງມີບົດບາດທີ່ສໍາຄັນໃນການພະຍາຍາມແກ້ໄຂບັນຫາເຫຼົ່ານີ້ໂດຍ (ກ) ສ້າງຄວາມເຂັ້ມແຂງໃນການປະກອບສ່ວນຂອງຂະແໜງສາທາລະນະສຸກ ສູ່ການຕອບໂຕ້ຂອງຫຼາຍຂະແໜງການຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ລວມທັງການວັດແທກ ແລະ ການປ້ອງກັນ ແລະ (ຂ) ສ້າງຄວາມເຂັ້ມແຂງໃຫ້ກັບຂະແໜງການທີ່ຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ລວມທັງການປິ່ນປົວສໍາລັບແມ່ຍິງທີ່ປະເຊີນການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ແລະ ຄົນທີ່ບໍ່ແມ່ນຄູ່ຮ່ວມຊີວິດໃນການໃຊ້ຄວາມຮຸນແຮງ (ທາງເພດ). ຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ ຄວນເປັນບຸກຄົນທໍາອິດທີ່ຜູ້ຖືກເຄາະຮ້າຍ ຂອງການໃຊ້ຄວາມຮຸນແຮງໂດຍຄູ່ຮ່ວມຊີວິດ ຫຼື ການໃຊ້ຄວາມຮຸນແຮງທາງເພດຕິດຕໍ່ຫາ, ດັ່ງທີ່ການສໍາຫຼວດໄດ້ພົບວ່າ ແມ່ຍິງທີ່ລາຍງານການໃຊ້ຄວາມຮຸນແຮງ ໂດຍຄູ່ຮ່ວມຊີວິດແມ່ນມີທ່າອ່ຽງໃນການຂໍຄໍາປຶກສາຈາກຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ ຫຼາຍກວ່າແມ່ຍິງທີ່ບໍ່ເຄີຍປະເຊີນບັນຫາເຫຼົ່ານີ້. ໃນຂະນະທີ່ການກວດໂດຍຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ ແມ່ນບໍ່ໄດ້ຖືກແນະນໍາ, ຄໍາຖາມທີ່ຖືກຖາມເປັນປະຈໍາແມ່ນໃນສະຖານະການພິເສດ ເຊັ່ນ: ການປິ່ນປົວພິເສດ ແລະ ການກວດເຊື້ອ HIV ແລະ ການໃຫ້ຄໍາປຶກສາ ເວລາປະເມີນສະພາບການທີ່ພົວພັນເຖິງການໃຊ້ຄວາມຮຸນແຮງ, ອາດຈະຖືກພິຈາລະນາ. ຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ ສາມາດສະໜອງການຊ່ວຍເຫຼືອທີ່ສໍາຄັນ ໂດຍການໃຫ້ການບໍລິການໃນການປິ່ນປົວທີ່ເໝາະສົມ ແລະ ການຕິດຕາມ, ກັບການຊ່ວຍເຫຼືອ ແລະ ການສົ່ງຕໍ່ໃຫ້ອົງການຈັດຕັ້ງ ແລະ ການບໍລິການທີ່ທັນເວລາ, ເຊັ່ນ ຫ້ອງການສະຫວັດດີການ, ກຸ່ມຊ່ວຍເຫຼືອ ແລະ ຕໍາຫຼວດ.

ສິ່ງທີ່ມີຄວາມສໍາຄັນເຊັ່ນກັນຄື ການຮັບຮູ້ບັນດາອຸປະສັກທີ່ແມ່ຍິງ ແລະ ເດັກຍິງ ອາດຈະປະເຊີນ ໃນການເຂົ້າເຖິງການເບິ່ງແຍງ. ການສໍາຫຼວດສະແດງໃຫ້ເຫັນວ່າ ຍົກເວັ້ນຜູ້ຖືກເຄາະຮ້າຍ ມີການບາດເຈັບຢ່າງຮ້າຍແຮງ ຫຼື ເສຍຈິດ, ຖ້າບໍ່ດັ່ງນັ້ນແມ່ນຈະມີຈໍານວນໜ້ອຍຫຼາຍທີ່ໄປຄລີນິກ ຫຼື ໂຮງໝໍ ເພື່ອຮັບການປິ່ນປົວ ແລະ ຂໍຄໍາປຶກສາ. ນີ້ອາດຈະເປັນຍ້ອນບໍ່ມີຄວາມສາມາດໃນການອອກຈາກເຮືອນ ຍ້ອນວ່າຈະມີການກວດສອບຕະຫຼອດເວລາໂດຍສາມີ ແລະ/ຫຼື ຄອບຄົວ ແລະ/ຫຼື ຄວາມຫຍຸ້ງຍາກທາງດ້ານການເງິນ ໃນການເຂົ້າເຖິງສິ່ງອໍານວຍຄວາມສະດວກທາງສາທາລະນະສຸກ, ໂດຍສະເພາະໃນເຂດຊົນນະບົດ. ແມ່ຍິງອາດຈະບໍ່ຮູ້ວ່າຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກສາມາດຊ່ວຍເຫຼືອເຂົາເຈົ້າໄດ້ແນວໃດແດ່.

ໃນການຮັບຮູ້ບົດບາດທີ່ສໍາຄັນຂອງຂະແໜງການສາທາລະນະສຸກ ໃນການແກ້ໄຂຕາມຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ, ອົງການອະນາໄມໂລກໄດ້ຈັດພິມຄູ່ມືນະໂຍບາຍ ແລະ ການປິ່ນປົວ ເພື່ອຕອບໂຕ້ຕໍ່ການໃຊ້ຄວາມຮຸນແຮງ ໂດຍຄູ່ຮ່ວມຊີວິດ ແລະ ການໃຊ້ຄວາມຮຸນແຮງທາງເພດ (ອົງການອະນາໄມໂລກ, 2013ຂ). ຄູ່ມືເຫຼົ່ານີ້ໄດ້ສະໜອງຄໍາແນະນໍາ ສໍາລັບຜູ້ໃຫ້ບໍລິການທາງດ້ານສາທາລະນະສຸກ, ຜູ້ຈັດການ ແລະ ຜູ້ວາງນະໂຍບາຍໃນການເບິ່ງແຍງທີ່ສຸມໃສ່ແມ່ຍິງເປັນຫຼັກ, ການຈໍາແນກ ແລະ ການເບິ່ງແຍງຜູ້ຖືກເຄາະຮ້າຍ, ການຝຶກຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ, ນະໂຍບາຍການປິ່ນປົວ ແລະ ການສະໜອງ ລວມທັງການລາຍງານ. ໃນຂະນະດຽວກັນ, ຫຼາຍໆປະເທດໃນພາກພື້ນນີ້ ໄດ້ພັດທະນານະໂຍບາຍລະດັບຊາດ ແລະ ຄູ່ມືການປິ່ນປົວ ຫຼື ພິທີການທີ່ອະທິບາຍບົດບາດຂອງຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ. ເຖິງຢ່າງໃດກໍ່ຕາມ, ສປປ ລາວ ແມ່ນໜຶ່ງໃນບັນດາປະເທດ ທີ່ບໍ່ທັນມີລະບົບດັ່ງກ່າວ. ເພື່ອເພີ່ມທະວີການເຜີຍແຜ່ ແລະ ການປັບປຸງນະໂຍບາຍ ແລະ ຄູ່ມືການປິ່ນປົວ, ອົງການອະນາໄມໂລກໄດ້ພັດທະນາຄູ່ມືການປິ່ນປົວທີ່ໄດ້ຮ່ວມມືກັບ UNFPA ແລະ UN Women ເພື່ອສະໜອງຄູ່ມືໃນການຈັດຕັ້ງປະຕິບັດ ເພື່ອຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ (ອົງການອະນາໄມໂລກ, 2014). ຄູ່ມືໄດ້ເນັ້ນໜັກຕໍ່ຄວາມສໍາຄັນຂອງ'ຂັ້ນທໍາອິດໃນການຊ່ວຍເຫຼືອ', ເຊິ່ງໄດ້ເອົາໃຈໃສ່ໃນ 4 ປະເພດທີ່ຕ້ອງການ. ສິ່ງເຫຼົ່ານີ້ແມ່ນການປິ່ນປົວສຸກເສີນທາງດ້ານ ອາລົມ ຫຼື ຈິດໃຈ, ການປິ່ນປົວສຸກເສີນທາງດ້ານຮ່າງກາຍ, ຄວາມປອດໄພ ແລະ ການຊ່ວຍເຫຼືອ ເຊັ່ນດຽວກັນກັບຄວາມຕ້ອງການໃນການປິ່ນປົວທາງຈິດໃຈ. ຄູ່ມືໄດ້ມີກອບໃນການເປັນຂັ້ນທໍາອິດໃນການຊ່ວຍເຫຼືອ ເຊິ່ງເປັນການປິ່ນປົວທີ່ສໍາຄັນທີ່ສຸດ, ພະນັກງານແພດສາມາດສະໜອງການຊ່ວຍເຫຼືອແມ່ຍິງທາງດ້ານອາລົມ, ຈິດໃຈ, ຄວາມປອດໄພ ແລະ ການຊ່ວຍເຫຼືອ ທີ່ຕ້ອງການ ໂດຍບໍ່ເປີດເຜີຍຄວາມລັບ. ຄູ່ມືນີ້ລວມທັງ 5 ໜ້າທີ່ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ເອີ້ນວ່າ 'LIVES' (ຮັບຟັງ, ສອບຖາມຄວາມຕ້ອງການ ແລະ ຄວາມກັງວົນ, ເຮັດໃຫ້ຖືກຕ້ອງ, ເສີມຂະຫຍາຍຄວາມປອດໄພ, ສະໜັບສະໜູນຊ່ວຍເຫຼືອ). ຄູ່ມືນີ້ແມ່ນຊັບພະຍາກອນທີ່ດີ ທີ່ຊ່ວຍຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ ໃນ ສປປ ລາວ ພັດທະນາຂີດຄວາມສາມາດ ເພື່ອການປູກຈິດສໍານຶກ ໃນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເພີ່ມຄວາມຮູ້ ແລະ ທັກສະໃນການປິ່ນປົວ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢ່າງເໝາະສົມ.

ຂໍ້ສະເໜີແນະລຸ່ມນີ້ ແມ່ນຖືກອອກແບບເພື່ອຍຸດທະສາດໃນການຊ່ວຍເຫຼືອ ແລະ ການຕອບໂຕ້ບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຂະແໜງການສາທາລະນະສຸກ:

- ການປິ່ນປົວຜູ້ຖືກເຄາະຮ້າຍຄວນມີການເຊື່ອມສານກັບການບໍລິການສາທາລະນະສຸກທີ່ມີຢູ່, ຫຼາຍກວ່າການໃຫ້ບໍລິການພຽງຜູ້ດຽວ.
- ສ້າງຕັ້ງລະບົບການດູແລທາງດ້ານສຸຂະພາບຮ່າງກາຍ ແລະ ຈິດໃຈ ທີ່ສາມາດເຂົ້າເຖິງໄດ້ ເຊິ່ງລວມທັງການສຸມໃສ່ເປັນພິເສດຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ. ລະບົບນີ້ສາ ມາດເຊື່ອມສານເຂົ້າກັບສູນຊ່ວຍເຫຼືອສຸກເສີນຄົບວົງຈອນໄດ້.
- ຝຶກອົບຮົມ ແລະ ສ້າງຂີດຄວາມສາມາດໃຫ້ກັບພະນັກງານແພດ (ພະແນກສຸກເສີນ ແລະ ການບໍລິການໄວຈະເລີນພັນ, ແລະ ຄລີນິກຈິດຕະແພດ) ເພື່ອຮັບປະກັນວ່າເຂົາເຈົ້າຈະມີຄວາມຮູ້ ແລະ ທັກສະທີ່ໄດ້ມາດຕະຖານສາກົນ
- ສະໜອງໂອກາດໃຫ້ກັບຜູ້ໃຫ້ບໍລິການທາງງດ້ານສາທາລະນະສຸກ ເພື່ອຮຽນ ແລະ ນໍາໃຊ້ຄູ່ມືການປິ່ນປົວຂອງອົງການອະນາໄມໂລກ ໂດຍເປັນຜູ້ຊ່ວຍເຫຼືອຂັ້ນທໍາອິດ, ລວມທັງ 4 ປະເພດຂອງຄວາມຕ້ອງການ 'ຂັ້ນທໍາອິດໃນການຊ່ວຍເຫຼືອ' ແລະ 'LIVES".
- ການຝຶກອົບຮົມຮ່ວມກັນໃນການຕອບໂຕ້ຜູ້ຖືກເຄາະຮ້າຍໃນການສຶກສາໃນການປິ່ນປົວ ແລະ ເບິ່ງແຍງ.

- ສ້າງຕັ້ງລະບົບການສົ່ງຕໍ່ທີ່ທັນເວລາ ເພື່ອການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ໄປຍັງບັນດາຊ່ຽວຊານສະເພາະດ້ານໃນການປິ່ນປົວ ຫຼື ລະບົບການຊ່ວຍເຫຼືອທາງສັງຄົມ ແລະ ການຮັກສາຄວາມປອດໄພທີ່ກ່ຽວຂ້ອງ.
- ຮັບປະກັນວ່າ ບັນດາ ສູນ/ຄລີນິກ/ໂຮງໝໍ ມີຄວາມປອດໄພ ແລະ ສະດວກສະບາຍສຳລັບຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນໃນການລາຍງານເຫດການການໃຊ້ຄວາມຮຸນແຮງທັງໝົດຈະຖືກປົດລັບ.

### 12.3.3 ການບໍລິການຂອງຕຳຫຼວດ ແລະ ໄອຍະການ

ເຖິງວ່າຕຳຫຼວດ ແລະ ລະບົບກົດໝາຍ ມີບົດບາດສຳຄັນໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ການສຳຫຼວດໃນຄັ້ງນີ້ເຫັນວ່າມີແມ່ຍິງພຽງເລັກນ້ອຍທີ່ໄດ້ນຳໃຊ້ການບໍລິການດັ່ງກ່າວ. ນີ້ອາດບໍ່ແມ່ນພຽງແຕ່ຜົນຂອງຄວາມລັງເລໃຈ, ຄວາມອັບອາຍ ແລະ ມົນທິນ ເທົ່ານັ້ນ, ແຕ່ຍັງເປັນຍ້ອນບໍ່ມີຄວາມຮູ້ ກ່ຽວກັບການບໍລິການ ແລະ ລະບົບການຊ່ວຍເຫຼືອທີ່ມີຢູ່, ເຊັ່ນດຽວກັນກັບ ຕຳຫຼວດ ແລະ ໄອຍະການກໍ່ມີຄວາມຈຳກັດໃນດ້ານປະສົບການ ແລະ ຄວາມສາມາດ ທີ່ຮັບປະກັນຄວາມປອດໄພ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ.

- ຮັບປະກັນວ່າ ຕຳຫຼວດ ແລະ ໄອຍະການຈະຕອບສະໜອງ ແລະ ສືບສວນ-ສອບສວນບັນດາກໍລະນີຂອງການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດ ໃຫ້ມີປະສິດທິພາບເພີ່ມຂຶ້ນ.
- ສະໜອງການເຂົ້າເຖິງຂໍ້ມູນໃຫ້ແກ່ແມ່ຍິງ ເພື່ອເພີ່ມຄວາມຮັບຮູ້ກ່ຽວກັບສິດທິທາງດ້ານກົດໝາຍຂອງແມ່ຍິງ ພາຍໃຕ້ກົດໝາຍພາຍໃນປະເທດ ແລະ ກົດໝາຍສາກົນ ໂດຍຜ່ານຊ່ອງທາງທີ່ເປັນທາງການ ແລະ ບໍ່ເປັນທາງການ.
- ສະໜອງການຝຶກອົບຮົມໃຫ້ກັບບັນດາຜູ້ຮັກສາກົດໝາຍ ແລະ ພະນັກງານທີ່ເຮັດວຽກໃນຂັ້ນເມືອງ ແລະ ຂັ້ນບ້ານ. ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດດັ່ງກ່າວ ຄວນທີ່ຈະສຸມໃສ່ທາງດ້ານບັນຫາທີ່ລະອຽດອ່ອນຕໍ່ເພດຍິງ-ຊາຍໃນລະບົບກົດໝາຍ ລວມທັງການສ້າງຄວາມເຂັ້ມແຂງໃຫ້ຕຳຫຼວດ, ນັກກົດໝາຍ ແລະ ຜູ້ພິພາກສາເພື່ອຮັບປະກັນການບໍລິການທີ່ມີຄວາມລະອຽດອ່ອນທາງເພດສຳລັບຜູ້ຖືກເຄາະຮ້າຍ ແລະ ມາດຕະການທີ່ເໝາະສົມ ເພື່ອການເຂົ້າຫາ ແລະ ການຈັດການກັບບັນດາຜູ້ກະທຳຜິດ.
- ການອຳນວຍຄວາມສະດວກໃຫ້ຜູ້ຖືກເຄາະຮ້າຍໃຫ້ສາມາດເຂົ້າເຖິງລະບົບຍຸຕິທຳໂດຍງ່າຍດາຍ (ຂັ້ນຕອນ, ພະນັກງານທີ່ເຮັດວຽກກ່ຽວກັບກົດໝາຍ, ນັກກົດໝາຍ), ໂດຍປາສະຈາກຄວາມກັງວົນໃນດ້ານຄ່າໃຊ້ຈ່າຍ.
- ທົບທວນ ຂະບວນການຕັດສິນ ແລະ ຂັ້ນຕອນຕ່າງໆ ຂອງສານ ທີ່ດຳເນີນການກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

# ເອກະສານອ້າງອີງ


Belsky, J. (1980). "Child maltreatment: an ecological integration." Am Psychol 35(4): 320-335.

Benson, M. L., Fox, G.L. (2004). "When violence hits home: How economics and neighborhood play a role."Washington D.C., U.S. Department of Justice, National Institute of Justice.

Bergman, B., Brismar, B. (1991). "Suicide attempts by battered wives." ActaPsychiatrScand 83(5): 380-384.

Boyle, M. H., et al. (2009). "Community influences on intimate partner violence in India: Women's education, attitudes towards mistreatment and standards of living." SocSci Med 69(5): 691-697.

Campbell, J., Rose, L., Kub, J., Nedd, D. (1988). "Voices of strength and resistance: A contextual and longitudinal analysis of women's responses to battering" Journal of Interpersonal Violence 13(6): 743-762.

Campbell, J., et al. (2002). "Intimate partner violence and physical health consequences." Arch Intern Med 162(10): 1157-1163.

Campbell, J., Kub, J. E. Rose, L. (1996). "Depression in battered women." Journal of American Medical Women's Association 51(3): 106-110.

Campbell, J. C. (2002). "Health consequences of intimate partner violence." Lancet 359(9314): 1331-1336.

Campbell, J. C. and L. A. Lewandowski (1997)."Mental and physical health effects of intimate partner violence on women and children."PsychiatrClin North Am 20(2): 353-374.

Care International (2009). "Understanding Women's Legal Rights, An analysis of the legal enabling environment for addressing violence against women in the Lao PDR." Vientiane Capital, Care International, Lao Women's Union.

Contreras, J. M. G., J. M (2001). Violenciadoméstica y sexual. In: Guzmán, J. M. et al. (Eds.). Diagnósticosobresalud sexual y reproductiva de adolescentesenAmérica Latina y el Caribe. Mexico city, UNFPA.

Dahlberg, L. K., E. G (2002). Violence – a global public health problem. In: Krug, E.G. et al. (Eds.). World report on violence and health. Geneva, Switzerland: World Health Organization.

Daly, M., Wilson, MI. (1996). "Violence against stepchildren." Current Directions in Psychological Science 5(3): 77-81.

Day, S. (1996). "Women's Sexual Autonomy, Universality, Sexual Rights, and Sexual Orientation at." Journal of Canadian Women Studies 16(3): 46-54.

Dobash, R. E., Dobash, R (1979). "Violence against women: A case against the patriarchy." New York, Free Press.

Eaton, L. A., et al. (2012). "Pregnancy, alcohol intake, and intimate partner violence among men and women attending drinking establishments in a Cape Town, South Africa township." J Community Health 37(1): 208-216.

Ellsberg, M., Caldera, T., Herrera, A., Winkvist, A., Kullgren, G. (1999). "Domestic violence and emotional distress: results from a population based study." American Psychologist 54(1): 30-36.

Ellsberg, M. C., Winkvist, A., Peña, R., Stenlund, H. (2001). "Women's strategic responses to violence ain Nicaragua." Journal of Epidemiology and Community Health 55(8): 547-555.

Fulu, E., Warner, X., Miedema, S., Jewkes, R., Roselli, T., Lang, J. (2013). "Why Do Some Men Use Violence Against Women and How Can We Prevent It? Quantitative Findings from the United Nations Multi-country Study on Men and Violence in Asia and the Pacific." Bangkok, UNDP, UNFPA, UN Women and UNV.

Garcia-Moreno, C., Jansen, HAFM., Ellsberg, M., Heise, L., Watts, C. (2005). "WHO Multi-country Study on Women's Health and Domestic Violence against Women: Initial Results on Prevalence, Health Outcomes and Women's Reponses." Geneva, World Health Organization.

GDG (Gender and Development Group) (2005). Rural Domestic Violence and Gender Research: Lao P.D.R. Vientiane Capital, IDRC and Canada Fund.

Gidycz, C. A., Warkentin, J.B., Orchowski,L.M. (2007). "Predictors of perpetration of verbal, physical, and sexual violence: A prospective analysis of college men." Psychology of Men & Masculinity 8(2): 79-94.

Gil-Gonzalez, D., et al. (2006). "Alcohol and intimate partner violence: do we have enough information to act?" Eur J Public Health 16(3): 279-285.

Golding, J. (1999). "Intimate Partner Violence as a Risk Factor for Mental Disorders: A Meta-Analysis." Journal of Family Violence 14(2): 99-132.

Gondolf, E. W., Fisher, E. R. (1988). "Battered women as survivors: An alternative to treating learned helplessness."Maryland, Lexington Books.

Government of Lao PDR and United Nations (2013).Millennium Development GoalsProgress Report for the Lao PDR 2013, Vientiane.

Government of Viet Nam (2010)."Keeping silent is dying, Results from the National Study on Domestic Violence Against Women in Viet Nam." Ha Noi.

GRID & LWU (2009)."Results of the 2009 Study on Domestic Violence against Women in Lao PDR, Evidence from Five provinces."Gender Empowerment for Poverty Reduction Project.Vientiane Capital, Gender Resource Information and Development Center (GRID) Lao Women's Union with support fromUNDP.

Heise, L. L. (1998). "Violence against women: an integrated, ecological framework." Violence Against Women 4(3): 262-290.

Heise, L. L., Ellsberg, M., Gottemoeller, M (1999)."Violence against women. Population Reports." Baltimore, Maryland, USA, John Hopkins University. Series L, 11(4).

Ireson-Doolittle, C., Moreno-Black, G. (2004)."The Lao, Gender, Power, and Livelihood." Boulder, Colorado, Westview Press.

Jansen, H.A.F.M., Watts, C. et al. (2004). "Interviewer Training in the WHO Multi-Country Study on Women's Health and Domestic Violence." Violence Against Women, 10(7): 831-849.

Janus, M. D., Archambault, FX., Brown, S W., Welsh, L A. (1995). "Physical abuse in Canadian runaway adolescents." Child Abuse & Neglect 19(4): 433-447.

Jenkin, R. (2000). "Introduction to the Special Issue: Defining gender, relationships, and power." Sex Roles 42(78): 467-493.

Jewkes, R. (2002). "Intimate partner violence: causes and prevention." Lancet 359(9315): 1423-1429.

Jewkes, R. (2010). "Emotional abuse: a neglected dimension of partner violence." Lancet 376(9744): 851-852.

Jewkes, R. (2013). "Intimate partner violence as a risk factor for mental health problems in South Africa." Garcia-Moreno &Riecher-Rossler (eds), Violence Against Women and Mental Health, Key issues in mental health, 178: 75-85.

Jewkes, R., et al. (2006). "Rape perpetration by young, rural South African men: Prevalence, patterns and risk factors." SocSci Med 63(11): 2949-2961.

Kaslow, N. J., et al. (2002). "Risk and protective factors for suicidal behaviour in abused African American women." J Consult ClinPsychol 70(2): 311-319.

Knight, R. A. and J. E. Sims-Knight (2003). "The developmental antecedents of sexual coercion against women: testing alternative hypotheses with structural equation modeling." Ann N Y AcadSci 989: 72-85; discussion 144-153.

Ludermir AB., L. G., ValongueiroSA., de Araújo TV., Araya R. (2010). "Violence against women by their intimate partner during pregnancy and postnatal depression: a prospective cohort study." Lancet 376(9744): 903-910.

Malamuth, N. M. (2003). "Criminal and noncriminal sexual aggressors: integrating psychopathy in a hierarchical-mediational confluence model." Ann N Y AcadSci 989: 33-58; discussion 144-153.

Mallett, S., Rosenthal, D. (2008). "Physically violent mothers are a reason for young people's leaving home." Journal of Interpersonal Violence 24(7): 1165-1174.

Ministry of Health and Lao Statistics Bureau (2012). "Lao Social Indicators Survey (LSIS 2011-12)."

Morrison, S., Hardison, J., Mathew, A., O'Neil, J. (2004)."An Evidence-Based Review of Sexual Assault Preventive Intervention Programmes."Prepared for National Institute of Justice North Carolina, Health, Social, and Economics Research.

Ngaosyvathn, N. (1995). "Lao Women Yesterday and Today." Vientiane, Ministry of Culture, Lao PDR.

Oram, S., Howard, LM.(2013). "Intimate partner violence and mental health." Garcia-Moreno &Riecher-Rossler (eds), Violence AgainstWomen and Mental Health, Key issues in mental health, 178: 75-85.

Plichta, S. B. and C. Abraham (1996). "Violence and gynecological health in women <50 years old." Am J ObstetGynecol 174(3): 903-907.

Plichta, S. B. and M. Falik (2001). "Prevalence of violence and its implications for women's health." Women's Health Issues 11(3): 244-258.

Renzetti, C. (2009). "Economic Stress and Domestic Violence." Harrisburg, PA. VAWnet, a project of the National Resource Center on Domestic Violence/Pennsylvania Coalition Against Domestic Violence. Pennsylvannia.

Sabina, C., Tindale, R.S. (2008). "Abuse characteristics and coping resources as predictors of problem-focused coping strategies among battered women." Violence Against Women 14(4): 437-456.

Schramn, W. (1971). Notes on case studies of instructional media projects. Working paper for the Academy for Educational Development. Washington D.C.

Schwartz, J. P., et al. (2006). "Unhealthy parenting and potential mediators as contributing factors to future intimate violence: a review of the literature." Trauma Violence Abuse 7(3): 206-221.

Sleutel, M. R. (1998). "Women's experiences of abuse: a review of qualitative research." Issues Ment Health Nurs 19(6): 525-539.

Stith, S. M. D. B. S., D.B., Penna, C.E., Warda, D.B., Trittb, D. (2004). "Intimate partner physical abuse perpetration and victimization risk factors: A meta-analytic review " Aggression and Violent Behavior 10(1): 65-98.

Tanga, C. S., Laib, B.PY. (2008). "A review of empirical literature on the prevalence and risk markers of male-on-female intimate partner violence in contemporary China, 1987-2006." Aggression and Violent Behavior 13(1): 10-28.

The Irish Joint Consortium on GBV (2012). The Health and Social Consequences of Violence Against Women and Girls International Women's Day 2012: Connecting Girls, Inspiring Futures Joint Consortium on Gender Based Violence. Learning Brief No.9.

Tumursukh, U., Chanthavysouk, K., Uysingco, P., Hernandez, P., Hasyim, N., Muttaqin, F., Quach, T. Sananikone, S., Nakagawa, K., Greig, A., Pawar, A. (2013). Transforming Masculinities Towards Gender Justice Foundational Knowledge for Action. Regional Learning Community for East and Southeast Asia (RLC), Bangkok, Partners for Prevention: a UNDP, UNFPA, UN Women and UNV regional joint programme for gender-based violence prevention in Asia and the Pacific.

United Nations Children's Fund (2014)."The State of World's Children 2014; Every Child Counts, Revealing Disparities, Advancing Children's Rights." New York.

United Nations Development Programme (2014).Explanatory Note on the 2014 Human Development Report composite indices, Lao People's Democratic Republic. UNDP, Lao PDR.

United Nations Development Programme (2014)."Human Development Report 2013; The Rise of the South: Human Progress in a Diverse World." New York, UNDP.

United Nations Education, Science and Cultural Organization (2013/14)."Education for All, Global Monitoring Report, Teaching and Learning, Achieving Quality for All." Paris.

United Nations Population Fund (1998). Violence against Girls and Women: A Public Health Priority, UNFPA Gender Theme Group, Interactive Population Center.

Walker, L. (1979). "The battered woman." New York, Harper & Row.

Woods, S. J. (2000). "Prevalence and patterns of posttraumatic stress disorder in abused and post-abused women." Issues Ment Health Nurs 21(3): 309-324.

World Health Organization (2013a). "Global and regional estimates of violence against women: prevalence and health effects of intimate partner violence and non-partner sexual violence."WHO, London School of Hygiene and Tropical Medicine, South African Medical Research Council, Geneva.

World Health Organization (2013b). "Responding to intimate partner violence and sexual violence against women: WHO clinical and policy guidelines." Geneva.

World Health Organization (2014)."Healthcare for women subjected to intimate partner violence or sexual violence: Clinical Handbook."WHO, UNFPA and UN Women, Geneva.

World Health Organization & London School of Hygiene and Tropical Medicine (2010)."Preventing intimate partner and sexual violence against women: taking action and generating evidence."Geneva, WHO.

World Health Organization (2001)."Putting Women First, Ethical and Safety Recommendations for Research on Domestic Violence Against Women."Geneva, Department of Gender and Women's Health Family and Community Health, WHO.

Yin, R. K. (2003). Case Study Research, Design and Methods, Third Edition, Applied Social Research Methods Series, vol.5, Sage Publications Inc.

Yoshihama M., H. J., Kamano S. (2009). "The role of emotional abuse in intimate partner violence and health among women in Yokohama, Japan."Am J Public Health 99(4): 647-653.

# ເອກະສານຊ້ອນທ້າຍ I.

# ລາຍຊື່ຄະນະ ແລະ ຜູ້ປະສານງານທັງໝົດ

## ຄະນະຊີ້ນຳ ການສຳຫຼວດ

| | |
|---|---|
| ທ່ານ ດຣ. ສະໄໝຈັນ ບຸບຜາ | ຫົວໜ້າສູນສະຖິຕິແຫ່ງຊາດ, ທຽບເທົ່າລັດຖະມົນຕີຊ່ວຍ |
| ທ່ານ ນາງ. ພອນສະຫຼີ ສຸກສະຫວັດ | ຮອງຫົວໜ້າສູນສະຖິຕິແຫ່ງຊາດ, ສູນສະຖິຕິແຫ່ງຊາດ |
| ທ່ານ ນາງ. ຈັນໂສດາ ພອນທິບ | ຫົວໜ້າ ກອງເລຂາຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ |
| ທ່ານ ນາງ. ຈິງຈິດ ຈັນທະລາມີນ | ຮັກສາການຫົວໜ້າກອງເລຂາຄະນະກຳມາທິການເພື່ອແມ່ ແລະ ເດັກແຫ່ງຊາດ |
| ທ່ານ ນາງ. ຈອມແພງ ພູມປັນຍາ | ຫົວໜ້າກົມຈັດຕັ້ງ-ພະນັກງານ, ສູນກາງສະຫະພັນແມ່ຍິງ |
| ທ່ານ ດຣ. ບຸນແຝງ ພູມມະໄລສິດ | ຮອງຫົວໜ້າຫ້ອງການ, ກະຊວງ ສາທາລະນະສຸກ |
| ທ່ານ ນາງ. ທຸມມະລີ ວົງພະຈັນ | ຫົວໜ້າສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ສູນກາສະຫະພັນແມ່ຍິງ |
| ທ່ານ. ລັດສະໝີ ເພັດລາວັນ | ຮັກສາການຫົວໜ້າກົມຄຸ້ມຄອງລະບົບຍຸຕິທຳ, ກະຊວງ ຍຸຕິທຳ |
| ທ່ານ ນາງ. ສົມພອນ ແສງຄຳຢອງ | ຮອງຄະນະບໍລິຫານງານສະຫະພັນແມ່ຍິງ, ກະຊວງປ້ອງກັນຄວາມສະຫງົບ |

## ທີມງານວິຊາການ ແລະ ຄະນະວິຊາການ

| | |
|---|---|
| ນາງ. ທິລະດາ ຈັນທະລານຸວົງ | ຮອງຫົວໜ້າກົມສະຖິຕິສັງຄົມ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |
| ທ່ານ. ທິບສະຫວັນ ອິນທາຮັກ | ຮອງຫົວໜ້າກົມສະຖິຕິສັງຄົມ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |
| ນາງ. ມະໄລກັນ ແກ້ວມຸນຕີ | ຫົວໜ້າພະແນກ ບໍລິຫານ-ຈັດຕັ້ງ, ກອງເລຂາ ຄກມຊ |
| ທ່ານ. ສຸລິສັກ ພົມມະສັກ | ຮອງຫົວໜ້າພະແນກເກັບກຳ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |
| ນາງ. ສຸດາລັກ ພູນສະຫວັດ | ຫົວໜ້າພະແນກຄຸ້ມຄອງ-ບໍລິຫານ, ສູນກາງສະຫະພັນແມ່ຍິງລາວ |
| ນາງ. ສີປະພັນ ມູນທາລາດ | ຮອງຫົວໜ້າ ພະແນກ ຂໍ້ມູນຂ່າວສານ, ໂຄສະນາ ແລະ ຂະບວນການ, ກອງເລຂາ ຄກມຊ |
| ດຣ. ອຳໄພວັນ ປັນຍານຸວົງ | ຮອງຫົວໜ້າພະແນກຄວາມກ້າວໜ້າຂອງແມ່ຍິງ ກະຊວງ ສາທາລະນະສຸກ |
| ນາງ. ຈອນສີ ຄຳດອກທອງ | ຮອງຫົວໜ້າພະແນກທະບຽນຄອບຄົວ, ກົມຄຸ້ມຄອງລະບົບຍຸຕິທຳ, ກະຊວງ ຍຸຕິທຳ |
| ນາງ. ອາດສະໝາ ພັນທະໄຊ | ວິຊາການກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ |
| ນາງ. ດາວົງ ອຸມາວົງ | ວິຊາການ, ກອງເລຂາ ຄະນະກຳມາທິການເພື່ອແມ່ແລະ ເດັກແຫ່ງຊາດ |
| ນາງ. ວັນມະນີ ດິດຕະພົງ | ວິຊາການ, ສູນກາງສະຫະພັນແມ່ຍິງລາວ |
| ນາງ. ພອງມາລາ ລາຊາສີ | ວິຊາການ, ພະແນກຄົ້ນຄວ້າ ແລະ ວິໃຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |
| ທ້າວ. ແຫຼວຄຳ ດວງພະຈັນ | ວິຊາການ, ພະແນກຄົ້ນຄວ້າ ແລະ ວິໃຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |
| ທ້າວ. ບຸນປັນ ອິນທະວົງທອງ | ວິຊາການ, ພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |

## ທີມງານເກັບກຳຂໍ້ມູນພາກສະໜາມ

| | |
|---|---|
| ນາງ. ມະນີວັນ ລາດສີທອງ | ຫ້ອງການສະຖິຕິ ແຂວງ ຫຼວງນ້ຳທາ |
| ນາງ. ປານີ ໄພແກ້ວ | ຫ້ອງການສະຖິຕິ ແຂວງ ບໍ່ແກ້ວ |
| ນາງ. ຈັນສະໝອນ ສຸລິວັນ | ສະຫະພັນແມ່ຍິງ ແຂວງ ຜົ້ງສາລີ |

| | |
|---|---|
| ນາງ. ສົມຈິດ ອຸແສງຄຳ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຜົ້ງສາລີ |
| ນາງ. ຄົວ ລີ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຫຼວງນໍ້າທາ |
| ນາງ. ຕຸ່ນ ສອນດາວັນ | ຫ້ອງການສະຖິຕິ ແຂວງ ຫຼວງພະບາງ |
| ນາງ. ທອງຈັນ ອ່ອນລາວັນ | ຫ້ອງການສະຖິຕິ ແຂວງ ອຸດົມໄຊ |
| ນາງ. ບຸນເລື່ອມ ແກ້ວປະເສີດ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ໄຊຍະບູລີ |
| ນາງ. ແສງເພັດ ສຸກແສງເພັດ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຫຼວງພະບາງ |
| ນາງ. ຕົ່ງ ຫວ່າງ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຫຼວງພະບາງ |
| ນາງ. ບົວເງິນ ເພັດດາວົງ | ຫ້ອງການສະຖິຕິ ແຂວງ ຊຽງຂວາງ |
| ນາງ. ທອນຈັນ ແກ້ວວົງສັກ | ສະຫະພັນແມ່ຍິງ ແຂວງ ຊຽງຂວາງ |
| ນາງ. ແຍງເພັດ ບຸນມີໄຊ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຫົວພັນ |
| ນາງ. ນິດຖະໜອນ ຄຳວິໄລ | ຫ້ອງການສະຖິຕິ ແຂວງ ຫົວພັນ |
| ນາງ. ຈຸລາວັນ ອອນສີພັນລາ | ສະຫະພັນແມ່ຍິງ ແຂວງ ວຽງຈັນ |
| ນາງ. ສອນເພັດ ບັນນະລາດ | ຫ້ອງການສະຖິຕິ ແຂວງ ນະຄອນຫຼວງວຽງຈັນ |
| ນາງ. ຄຳໄພ ຕາທິບ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ໄຊຍະບູລີ |
| ນາງ. ວຽງຄຳ ວົງພະຈັນ | ຫ້ອງການສະຖິຕິ ແຂວງ ວຽງຈັນ |
| ນາງ. ລີຢາງ ຢ່າງ | ສະຫະພັນແມ່ຍິງ ແຂວງ ໄຊຍະບູລີ |
| ນາງ. ສຸດທິດາ ສຸວັນທອງ | ຫ້ອງການສະຖິຕິ ແຂວງ ໄຊຍະບູລີ |
| ນາງ. ກຽນຕາ ວັນນະນາ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຄຳມ່ວນ |
| ນາງ. ເພັງພະຈັນ ໂພທິສານ | ຫ້ອງການສະຖິຕິ ແຂວງ ຄຳມ່ວນ |
| ນາງ. ສຸວັນຄຳ ເມືອງວົງ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ວຽງຈັນ |
| ນາງ. ພອນສະຫວັນ ແກ້ວວິໄຊ | ສະຫະພັນແມ່ຍິງ ແຂວງວຽງຈັນ |
| ນາງ. ທອງລ່ຽນ ພັນຕານຸວົງ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ບໍລິຄຳໄຊ |
| ນາງ. ດາລາວັນ ໄຊຍະຮັກ | ຫ້ອງການສະຖິຕິ ແຂວງ ສະຫວັນນະເຂດ |
| ນາງ. ສຸພາພອນ ໄຊສີງຄາມ | ສະຫະພັນແມ່ຍິງແຂວງ ສະຫວັນນະເຂດ |
| ນາງ. ຈັນສຸກ ໄຕຈັກ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ນະຄອນຫຼວງວຽງຈັນ |
| ນາງ. ກິນນາລອນ ແສງສົມບັດ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ສະຫວັນນະເຂດ |
| ນາງ. ບຸນສູນ ທຳມະວົງ | ສະຫະພັນແມ່ຍິງແຂວງ ບໍລິຄຳໄຊ |
| ນາງ. ສົມຄິດ ຄຳວິໄລສຸກ | ຫ້ອງການສະຖິຕິ ແຂວງ ຈຳປາສັກ |
| ນາງ. ເຂັງຄຳ ວັນນະສີງ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ນະຄອນຫຼວງວຽງຈັນ |
| ນາງ. ສູນໄຖ ຍະແສງ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ສາລະວັນ |
| ນາງ. ຈິດຕະກອນ ຫຼວງອາໄພ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ຈຳປາສັກ |
| ນາງ. ອິນຖະຫອມ ເຮືອງສັກ | ສະຫະພັນແມ່ຍິງ ແຂວງ ຈຳປາສັກ |
| ນາງ. ປອນ ແກ້ວດວງດີ | ຫ້ອງການສະຖິຕິ ແຂວງ ເຊກອງ |
| ນາງ. ພູດອຍ ສຸວັນນະສີ | ຫ້ອງການສະຖິຕິ ແຂວງ ສາລະວັນ |
| ນາງ. ວັນນະນີ ແກ້ວຄູນນາງ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ເຊກອງ |
| ນາງ. ໄພວັນ ຄຳມະວົງສາ | ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແຂວງ ອັດຕະປື |
| ນາງ. ຄຳສຸດາ ອິນທະວົງ | ຫ້ອງການສະຖິຕິ ແຂວງ ອັດຕະປື |

## ທີມງານບໍລິຫານ ແລະ ການເງິນ

| | |
|---|---|
| ນາງ. ສຸດຈະລິດ ໝໍ່ແກ້ວ | ຫົວໜ້າພະແນກການເງິນ ຫ້ອງການ, ສູນສະຖິຕິແຫ່ງຊາດ |
| ນາງ. ແຊມຕາ ສັກຕິກຸນ | ວິຊາການ, ພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |
| ທ້າວ. ເກດສະດາ ພົມມະຈັກ | ວິຊາການ, ພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ |

## ກອງເລຂາ ຄກມຊ (ທີມງານປະສານງານ ແລະ ການເງິນ)

| | |
|---|---|
| ນາງ. ວິໄລວັນ ບຸບຜານຸວົງ | ຫົວໜ້າພະແນກ ແຜນການ ແລະ ການເງິນ, ກອງເລຂາ ຄກມຊ |
| ທ້າວ. ສຸວັນທອນ ສຸວັນນະສັກ | ຮອງຫົວໜ້າ ພະແນກ ນິຕິກຳ ແລະ ນະໂຍບາຍ, ກອງເລຂາ ຄກມຊ |
| ນາງ. ຈິນຕະນາ ອິນທະລືສາ | ວິຊາການ, ພະແນກ ແຜນການ ແລະ ການເງິນ, ກອງເລຂາ ຄກມຊ |
| ນາງ. ສຸກສະຫວັນ ທະນູວຽງ | ວິຊາການ, ພະແນກ ແຜນການ ແລະ ການເງິນ, ກອງເລຂາ ຄກມຊ |
| ນາງ. ທິບພາວອນ ພາວົງ | ວິຊາການ, ພະແນກ ແຜນການ ແລະ ການເງິນ, ກອງເລຂາ ຄກມຊ |

## ສະຖາບັນເບີເນັທ

| | |
|---|---|
| ນາງ. ຄິຣສຕີ  ເລນບາໂລ | ອະດີດຜູ້ຕາງໜ້າ, ສະຖາບັນເບີເນັທ ປະຈຳ ສປປ ລາວ |
| ນາງ. ບັນທິດາ ກົມຜາສຸກ | ນັກຄົ້ນຄວ້າອາວຸໂສ |
| ນາງ. ພອນສະຫວັນ ສີວິໄລ | ຫົວໜ້າທີມງານຄົ້ນຄວ້າ |
| ທ້າວ. ໝູຮັກ ແກ້ວຫາວົງ | ພະນັກງານໂຄງການແມ່ ແລະ ເດັກ |
| ນາງ. ສຸພັດຕາ ຈັນເພັງໄຊ | ທີ່ປຶກສາ |
| ທ້າວ. ທາລະລິນ ວົງສອນເພັດ | ພະນັກງານຕ້ານເອດ ແລະ ບົດບາດຍິງ-ຊາຍ |
| ທ້າວ. ເວສຸລິນ ແກ້ວພິລາ | ທີ່ປຶກສາ |
| ທ້າວ. ຄຳຮູ້ ນັນທະລາດ | ຜູ້ຊ່ວຍພະນັກງານໂຄງການແມ່ ແລະ ເດັກ |

## ຜູ້ຊ່ວຍວິຊາການ ແລະ ທີ່ປຶກສາ

| | |
|---|---|
| ດຣ. ໂທໂມໂກະ ຮອນດາ | ຫົວໜ້າທີ່ປຶກສາ, ສະຫາວິທະຍາໄລໂມນາດ |
| ດຣ. ເຮັນນີກ້າ  A.F.M.<br>(ເຮັນຣຽດ) ເຈນເຊັນ | ນັກຄົ້ນຄວ້າສາກົນ, ຄວາມຮຸນແຮງຕໍ່ແມ່ຍິງ<br>UNFPA ປະຈຳພາກພື້ນອາຊີປາຊີຟິກ (APRO) |
| ນາງ. ງວຽນ ທິ ວຽດ ງ່າ | ທີ່ປຶກສາດ້ານວິຊາການ ວິເຄາະຂໍ້ມູນໂປແກລມ STATA ສຳລັບການສຶກສາ<br>ຄວາມຮຸນແຮງຕໍ່ແມ່ຍິງ ຫ້ອງການ ສະຖິຕິແຫ່ງຊາດ ຫວຽດນາມ |
| ດຣ. ພໍລິນ ກຸນລິເວີ | ທີ່ປຶກສາ ການວິເຄາະຂໍ້ມູນການສຶກສາຄວາມຮຸນແຮງຕໍ່ແມ່ຍິງ, ການວິເຄາະປັດໃຈສ່ຽງ,<br>ມະຫາວິທະຍາໄລອອກແລນ |
| ດຣ. ຊີມາ ວິຢາດສ | ທີ່ປຶກສາເອກະລາດ/ນັກສະຖິຕິສຳລັບຄຳນວນ ດັດສະນີຊັບສິນຂອງຄົວເຮືອນ |

## ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນປະຈຳ ສປປ ລາວ (UNFPA)

| | |
|---|---|
| ດຣ. ຣາດຊັນ ໂມຫາຊາມີ | ຜູ້ຕາງໜ້າ |
| ນາງ. ຣິດສວີນາ ເດ ອາວີສ | ຮອງຜູ້ຕາງໜ້າ |
| ນາງ. ປາຟີວລີ ລີຈີຟຸງ | ຜູ້ຊ່ວຍຜູ້ຕາງໜ້າ |
| ທ່ານ. ພອນໄຊ ສິດທິລາດວົງສາ | ພະນັກງານບົດບາດຍິງຊາຍ ແລະ ຕິດຕາມ ແລະ ປະເມີນຜົນ |
| ນາງ. ດວງຈັນ ວົງນະສິຖານ | ຜູ້ຊ່ວຍແຜນງານ |
| ນາງ. ນິໂຄ ຣໍສິນ | ພະນັກງານສົ່ງເສີມບົດບາດຍິງຊາຍ |

## ອົງການສະຫະປະຊາຊາດເພື່ອຄວາມສະເໝີພາບດ້ານບົດບາດຍິງ-ຊາຍ ແລະ ການມອບສິດເປັນເຈົ້າໃຫ້ແມ່ຍິງ (UN Women)

| | |
|---|---|
| ນາງ. ແອນເດຣຍ ນິເບີກ | ນັກວິເຄາະແຜນງານປະຈຳພາກພື້ນ ເພື່ອຍຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ |
| ນາງ. ສີສຸວັນ ວໍລະບຸດ | ພະນັກງານແຜນງານປະຈຳປະເທດ ເພື່ອຍຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ |
| ທ່ານ. ຕົ່ງທອງ ເພັດສະວົງ | ພະນັກງານວິຊາການປະຈຳປະເທດວຽກງານການເຄື່ອນຍ້າຍ |

## ອົງການອະນາໄມໂລກ (WHO)

| | |
|---|---|
| ນາງ. ວຽງທອງ ມະນີວອນ | ພະນັກງານແຜນງານປະຈຳປະເທດ, ອົງການອະນາໄມໂລກປະຈຳ ສປປ ລາວ |
| ນາງ. ແອນຢານາ ບຸສຊານ | ຜູ້ປະສານງານ, ຫ້ອງການປະຈຳພາກພື້ນປາຊີຟິກໃຕ້ ອົງການອະນາໄມໂລກ |
| ນາງ. ບລີຕາ ແບ | ວິຊາການ, ຫ້ອງການປະຈຳພາກພື້ນປາຊີຟິກໃຕ້ ອົງການອະນາໄມໂລກ |

## ຜູ້ກວດແກ້

| | |
|---|---|
| ທ່ານ. ໄຊມອນ ດລາຫ | ທີ່ປຶກສາກວດແກ້ບົດລາຍງານ |

## ເອກະສານຊ້ອນທ້າຍ II.

## ແບບສອບຖາມໃນການສຳຫຼວດ

**ສູນສະຖິຕິແຫ່ງຊາດ**
**ຮ່ວມກັບ**
**ຄະນະກຳມະທິການ**
**ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ**

**ສປປ ລາວ**

**ການສຳຫລວດກ່ຽວກັບສຸຂະພາບ ແລະ ປະສົບການໃນຊີວິດຂອງແມ່ຍິງ**

**9 ຕຸລາ 2013**

| ລະຫັດທີ່ຕັ້ງ |
|---|
| ແຂວງ.......................................................................... [ ] [ ] |
| ເມືອງ.......................................................................... [ ] [ ] |
| ບ້ານ.......................................................................... [ ] [ ] [ ] |
| ເລກທີບ້ານຕົວແທນ................................................................ [ ] [ ] |
| ຕົວເມືອງ=1/ຊົນນະບົດ=2, ຊົນນະບົດບໍ່ມີເສັ້ນທາງ=3 [ ] |
| ເລກທີຄົວເຮືອນຕົວແທນ ........................................................ [ ] [ ] |
| ຊື່ຂອງຫົວໜ້າຄົວເຮືອນ: ______________________________ |

| ການສຳພາດ | | | | |
|---|---|---|---|---|
| | 1 | 2 | 3 | ຄັ້ງສຸດທ້າຍ |
| ວັນທີ<br><br><br><br>ຊື່ຜູ້ສຳພາດ<br>ຜົນໄດ້ຮັບ*** | ___________<br><br><br><br>___________<br>___________ | ___________<br><br><br><br>___________<br>___________ | ___________<br><br><br><br>___________<br>___________ | ວັນທີ<br>[ ][ ]<br>ເດືອນ<br>[ ][ ]<br>ປີ<br>[ ][ ][ ][ ]<br>ຜູ້ສຳພາດ<br>[ ][ ]<br>ຜົນໄດ້ຮັບ<br>[ ][ ] |
| ການສຳພາດຄັ້ງຕໍ່ໄປວັນທີ<br>ເວລາ<br>ທີ່ຕັ້ງ | ___________<br>___________<br>___________ | ___________<br>___________<br>___________ | | |

| | | | |
|---|---|---|---|
| ສຳເລັດແບບສອບຖາມ?<br><br>[ ] 1. ບໍ່ສຳເລັດ ➦ | <u>*** ລະຫັດຜົນໄດ້ຮັບ</u><br>ປະຕິເສດ (ເວົ້າແຈ້ງ):________________ 11<br>ເຮືອນເປົ່າ/ສະຖານທີ່ບໍ່ຖືກຕ້ອງ ......................... 12<br>ເຮືອນໄດ້ຖືກມ້າງມົດແລ້ວ............................... 13<br>ຊອກເຮືອນບໍ່ເຫັນ/ບໍ່ສາມາດເຂົ້າເຖິງ..................... 14<br>ບໍ່ມີໃຜຢູ່ເຮືອນສຳລັບໄລຍະໃດໜຶ່ງ ...................... 15<br>ສະມາຊິກຄົວເຮືອນບໍ່ຢູ່ໃນເວລາໄປການສຳພາດ ........ **16**<br>ຄົວເຮືອນເລື່ອນການສຳພາດ............................. **17**<br>ຄົວເຮືອນບໍ່ສາມາດເວົ້າພາສາລາວໄດ້..................... 18 | <br><br><br><br><br><br>➦ ຕ້ອງກັບມາອີກຄັ້ງ<br>➦ ຕ້ອງກັບມາອີກຄັ້ງ | ກວດຄືນແບບສອບຖາມ<br>ຄົວເຮືອນຕົວແທນ:<br><br>ຈຳນວນສະມາຊິກທັງໝົດ<br>ໃນຄົວເຮືອນ (Q1)<br>[ ][ ]<br><br>-ຈຳນວນແມ່ຍິງເປົ້າໝາຍ<br>ໃນຄົວເຮືອນທີ່ຖືກ<br>ສຳພາດແມ່ຍິງ.<br>(Q3) [ ][ ]<br><br>ເລກລຳດັບຂອງແມ່ຍິງ<br>ທີ່ຖືກເລືອກເພື່ອສຳພາດ<br>(Q3) [ ][ ] |
| [ ] 2. ແບບສອບຖາມຂອງຄົວເຮືອນ ຕົວແທນ<br>(ທຸກກໍລະນີແບບສອບຖາມຄົວເຮືອນ ຕົວແທນ) ➦ | ແມ່ຍິງຖືກເລືອກປະຕິເສດ (ເວົ້າແຈ້ງ): ___________21<br>ບໍ່ມີແມ່ຍິງເປົ້າມາຍໃນຄົວເຮືອນ......................... 22<br>ແມ່ຍິງຖືກເລືອກບໍ່ຢູ່ເຮືອນ .............................. **23**<br>ແມ່ຍິງຖືກເລືອກເລື່ອນການສຳພາດ..................... **24**<br>ແມ່ຍິງຖືກເລືອກບໍ່ສາມາດໃຫ້ການສຳພາດ.............. 25 | <br><br>➦ ຕ້ອງກັບມາອີກຄັ້ງ<br><u>➦ ຕ້ອງກັບມາອີກຄັ້ງ</u> | |
| [ ] 3. ແບບສອບຖາມຂອງແມ່ຍິງ ສຳເລັດບາງສ່ວນ ➦ | ບໍ່ຕ້ອງການດຳເນີນການສຳພາດຕໍ່ໄປ (ເວົ້າແຈ້ງ) _________<br>__________________________ ............... 31<br>ສ່ວນທີ່ຍັງບໍ່ທັນສຳພາດໃຫ້ເລື່ອນໄປເປັນ<br>ການສຳພາດຄັ້ງຕໍ່ໄປ...................................... **32** | <br><br><br><u>➦ ຕ້ອງກັບມາອີກຄັ້ງ</u> | |
| [ ] 4. ແບບສອບຖາມຂອງແມ່ຍິງ ທີ່ສຳພາດສຳເລັດ ➦ | ........................................................... 41 | | |
| ພາສາຂອງແບບສອບຖາມ<br>ພາສາທີ່ໃຊ້ໃນການສຳພາດ | | | [ ][ ]<br>[ ][ ]<br>[ ] |
| ນັກກວດກາພາກສະໜາມ<br>ຊື່<br>[ ][ ]<br>ມື້<br>[ ][ ]<br>ເດືອນ<br>[ ][ ]<br>ປີ<br>[ ][ ][ ][ ] | ນັກກວດກາຂັ້ນສູນກາງ<br>ຊື່<br>[ ][ ]<br>ມື້<br>[ ][ ]<br>ເດືອນ<br>[ ][ ]<br>ປີ<br>[ ][ ][ ][ ] | | ປ້ອນຂໍ້ມູນໂດຍ<br>ຊື່ຜູ້ປ້ອນຂໍ້ມູນ 1:<br>________________<br>ຊື່ຜູ້ປ້ອນຂໍ້ມູນ 2:<br>________________ |

ຖ້າມີຫລາຍຄົວເຮືອນອາໃສຢູ່ໃນເຮືອນຫລັງດຽວກັນ: ຄວນແຍກແບບສອບຖາມອອກຕ່າງຫາກ

## ແບບສອບຖາມຄົວເຮືອນຕົວແທນ

| | | |
|---|---|---|
| | ສະບາຍດີ, ຂ້າພະເຈົ້າ ຊື່ວ່າ________________________ . ຂ້າພະເຈົ້າໃນນາມສູນສະຖິຕິແຫ່ງຊາດ ແລະ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ. ພວກເຮົາໄດ້ຈັດຕັ້ງປະຕິບັດການສຳຫລວດກ່ຽວກັບສຸຂະພາບ ແລະ ປະສົບການໃນຊີວິດຂອງແມ່ຍິງ. | |
| 1 | ກະລຸນາບອກຂ້າພະເຈົ້າແດ່ວ່າສະມາຊິກທີ່ອາໃສ ແລະ ກິນຢູ່ຮ່ວມກັນໃນຄົວເຮືອນຂອງທ່ານມີຈັກຄົນ ?<br>ສອບຖາມຕື່ມ:<br>ລວມທັງເດັກນ້ອຍ (ເດັກເກີດໃໝ່) ຢູ່ນຳທ່ານບໍ່?<br>ລວມທັງຄົນອື່ນໆທີ່ບໍ່ແມ່ນສະມາຊິກໃນຄົວເຮືອນຂອງທ່ານເຊັ່ນ: ຄົນຮັບໃຊ້ໃນຄົວເຮືອນ, ຜູ້ພັກເຊົາ ຫລື ໝູ່ເພື່ອນທີ່ອາໃສຢູ່ນຳ ແລະ ກິນອາຫານຮ່ວມກັນໃນຄົວເຮືອນນີ້, ຕ້ອງໝັ້ນໃຈ ວ່າບຸກຄົນເຫລົ່ານີ້ລວມເຂົ້າຢູ່ໃນຈຳນວນສະມາຊິກທັງໝົດໃນຄົວເຮືອນ | ຈຳນວນສະມາຊິກທັງໝົດໃນຄົວເຮືອນ<br>[ ][ ] |
| 2 | ຫົວໜ້າຄົວເຮືອນແມ່ນແມ່ຍິງ ຫລື ຜູ້ຊາຍ? | ຊາຍ ............................... 1<br>ຍິງ ................................. 2<br>ແມ່ນທັງສອງ ..................... 3 |

| | ສະມາຊິກຂອງຄົວເຮືອນທີ່ແມ່ນແມ່ຍິງ | ສາຍພົວພັນກັບຫົວໜ້າຄົວເຮືອນ | ທີ່ຢູ່ອາໃສ | | ອາຍຸ | ແມ່ຍິງຢູ່ໃນເປົ້າໝາຍການສຳພາດ | |
|---|---|---|---|---|---|---|---|
| 3 | ມື້ນີ້ພວກຂ້າພະເຈົ້າຢາກຂໍສຳພາດແມ່ຍິງໜຶ່ງທ່ານທີ່ຢູ່ໃນຄົວເຮືອນຂອງທ່ານ, ເພື່ອຊ່ວຍໃນການສຳພາດ ກະລຸນາບອກລາຍຊື່ແມ່ຍິງທີ່ອາໃສຢູ່ໃນຄົວເຮືອນຂອງທ່ານເປັນປົກກະຕິ ແລະ ກິນອາຫານຮ່ວມກັນ. | (ຊື່...) ມີສາຍພົວພັນກັບຫົວໜ້າຄົວເຮືອນຄືແນວໃດ? (ເບິ່ງລະຫັດຂອງສາຍພົວພັນຂ້າງລຸ່ມນີ້) | (ຊື່...)ອາໃສຢູ່ທີ່ນີ້ເປັນປົກກະຕິບໍ່? ກໍລະນີພິເສດ: ໃຫ້ເບິ່ງ (A) ຂ້າງລຸ່ມ. | | (ຊື່...) ອາຍຸໄດ້ຈັກປີ?<br>(ຫລາຍກວ່າ ຫລື ໜ້ອຍກວ່າ) | ເບິ່ງຕາມເງື່ອນໄຂຂ້າງລຸ່ມນີ້<br>(A+B) | |
| ລ/ດ | | | ຢູ່ | ບໍ່ຢູ່ | | ແມ່ນ | ບໍ່ແມ່ນ |
| 1 | | | 1 | 2 | | 1 | 2 |
| 2 | | | 1 | 2 | | 1 | 2 |
| 3 | | | 1 | 2 | | 1 | 2 |
| 4 | | | 1 | 2 | | 1 | 2 |
| 5 | | | 1 | 2 | | 1 | 2 |
| 6 | | | 1 | 2 | | 1 | 2 |
| 7 | | | 1 | 2 | | 1 | 2 |
| 8 | | | 1 | 2 | | 1 | 2 |
| 9 | | | 1 | 2 | | 1 | 2 |
| 10 | | | 1 | 2 | | 1 | 2 |

| | | |
|---|---|---|
| **ລະຫັດ: ສາຍພົວພັນກັບຫົວໜ້າຄົວເຮືອນ** | 06 ແມ່ | 12 ຄົນຮັບໃຊ້ໃນຄົວເຮືອນ |
| **01** ຫົວໜ້າຄົວເຮືອນ | 07 ແມ່ຍ່າ/ແມ່ເຖົ້າ | 13 ຜູ້ພັກເຊົາ |
| **02** ເມຍ (ຄູ່ຮ່ວມນອນ) | 08 ເອື້ອຍ/ນ້ອງສາວ | 14 ໝູ່ເພື່ອນ |
| **03** ລູກສາວ | 09 ເອື້ອຍໄພ້/ນ້ອງໄພ້ | 15 ອື່ນໆບໍ່ແມ່ນພີ່ນ້ອງ: ____________ |
| **04** ລູກໄພ້ | 10 ພີ່ນ້ອງອື່ນໆ | |
| **05** ຫຼານສາວ(ລູກຂອງລູກ) | 11 ລູກລ້ຽງ/ລູກອຸປະຖຳ/ລູກຕິດ | |

**(A) ກໍລະນີພິເສດທີ່ພິຈາລະນາວ່າແມ່ນສະມາຊິກໃນຄົວເຮືອນ:**

- ຄົນຮັບໃຊ້ໃນຄົວເຮືອນ: ຖ້າຫາກພວກເຂົາໄດ້ອາໃສນອນຢູ່ໃນຄົວເຮືອນດັ່ງກ່າວເຖິງ 5 ຄືນ ຕໍ່ອາທິດ ຫລື ຫລາຍກວ່ານັ້ນແມ່ນຈະໄດ້ຈົດກ່າຍເອົາ.
- ຜູ້ມາພັກເຊົານຳ: ຖ້າຫາກພວກເຂົາໄດ້ມາອາໃສນອນຢູ່ໃນຄົວເຮືອນດັ່ງກ່າວກາຍ 4 ອາທິດແມ່ນຈະໄດ້ຈົດກ່າຍເອົາ.

**(B) ເປົ້າໝາຍ:** ແມ່ຍິງໝົດທຸກຄົນທີ່ມີອາຍຸໃນລະຫວ່າງ 15 ຫາ 64 ປີ ທີ່ອາໃສຢູ່ໃນຄົວເຮືອນດັ່ງກ່າວແມ່ນຈະໄດ້ຖືກຈົດກ່າຍ.

**ແມ່ຍິງທີ່ຢູ່ໃນເປົ້າໝາຍໃນຄົວເຮືອນມີຫລາຍກວ່າ 1 ຄົນ:**

- ຊຸມເລືອກເອົາແມ່ຍິງທີ່ຢູ່ໃນເປົ້າໝາຍໃນຄົວເຮືອນ 1 ທ່ານ ເພື່ອສຳພາດ. ຈະມີວິທີການຄັດເລືອກເອົາຕົວແທນການສຳພາດດັ່ງນີ້, ໃຫ້ຂຽນເລກລຳດັບຂອງແມ່ຍິງທີ່ຢູ່ໃນເປົ້າໝາຍຂອງຄົວເຮືອນທັງໝົດໃສ່ເຈ້ຍສະຫລາກ, ແລະ ຫລັງຈາກນັ້ນແມ່ນເອົາໃສ່ໃນກ່ອງເພື່ອໃຫ້ສະມາຊິກໃນຄົວເຮືອນຈົກເອົາສະຫລາກໜຶ່ງໃບເພື່ອໃຫ້ໄດ້ບຸກຄົນໜຶ່ງມາສຳພາດ.
- ຂີດອ້ອມວົງມົນເອົາໝາຍເລກລຳດັບຂອງແມ່ຍິງທີ່ຖືກຄັດເລືອກ. ໃຫ້ຖາມວ່າທ່ານສາມາດສຳພາດຜູ້ທີ່ຖືກຄັດເລືອກເອົາໄດ້ບໍ່. ຖ້າຫາກວ່າລາວບໍ່ຢູ່ເຮືອນ, ທ່ານຄວນຈະນັດເວລາທີ່ຈະກັບຄືນມາສຳພາດ.
- ສືບຕໍ່ສຳພາດແບບສອບຖາມຄົວເຮືອນ

**ບໍ່ມີແມ່ຍິງທີ່ນອນໃນເປົ້າໝາຍຂອງການສຳພາດໃນຄົວເຮືອນດັ່ງກ່າວ**:

- ຄວນບອກວ່າ ""ຂ້າພະເຈົ້າບໍ່ສາມາດສືບຕໍ່ການສຳພາດ ເພາະວ່າຂ້າພະຈະສຳພາດເອົາແຕ່ແມ່ຍິງທີ່ມີອາຍຸໃນລະຫວ່າງ 15-64 ປີ ເທົ່ານັ້ນ"".
- ຂໍຂອບໃຈສຳລັບການໃຫ້ຄວາມຮ່ວມມື
- ຈົບການສຳພາດ.

* ຖ້າໃນຄົວເຮືອນມີຫົວໜ້າຄົວເຮືອນທັງສອງເພດ ແມ່ຍິງ ແລະ ຜູ້ຊາຍ ຄວນເລືອກຜູ້ຊາຍເປັນຫົວໜ້າຄົວເຮືອນ.

ດຳເນີນການສຳພາດໃຜຜູ້ໜຶ່ງທີ່ເປັນຜູ້ໃຫຍ່ໃນຄົວເຮືອນ

| ແບບສອບຖາມສຳລັບຄົວເຮືອນ | | | |
|---|---|---|---|
| | ເນື້ອໃນແບບສອບຖາມ | ລະຫັດ | |
| 1 | ຖ້າທ່ານບໍ່ຂັດຂ້ອງ, ຂ້າພະເຈົ້າຢາກຂໍຖາມຄຳຖາມຈຳນວນໜຶ່ງກ່ຽວກັບຄົວເຮືອນຂອງທ່ານ.<br><br>ແຫຼ່ງນ້ຳດື່ມຕົ້ນຕໍທີ່ຄົວເຮືອນຂອງທ່ານໃຊ້ດື່ມແມ່ນມາຈາກໃສ? | ມີນ້ຳກ໊ອກ/ນ້ຳປະປາໃນເຮືອນ ........ 01<br>ມີນ້ຳກ໊ອກ (ນ້ຳປະປາ) ຢູ່ບໍລິເວນເດີ່ນບ້ານ ........ 02<br>ມີນ້ຳກ໊ອກ ລວມສາທາລະນະ ........ 03<br>ມີນ້ຳສ້າງຢູ່ບໍລິເວນເດີ່ນບ້ານ ........ 04<br>ນ້ຳສ້າງລວມສາທາລະນະ ........ 05<br>ນ້ຳລິນ........ 06<br>ນ້ຳບາດານ ........ 07<br>ແມ່ນ້ຳ/ຫ້ວຍ/ນ້ຳອອກບໍ່/ໜອງ/ເຂື່ອນ ........ 08<br>ນ້ຳຝົນ ........ 09<br>ລົດແກ່ນ້ຳ/ຜູ້ຂາຍນ້ຳ........ 10<br>ອື່ນໆ: ________ 96<br>ບໍ່ຮູ້/ບໍ່ຈື່........ 98<br>ປະຕິເສດ/ບໍ່ຕອບ ........ 99 | |
| 2 | ຄົວເຮືອນຂອງທ່ານມີວິດຖ່າຍປະເພດໃດ? | ວິດຊັກໂຄກຂອງຕົນເອງ ........ 01<br>ວິດຊັກໂຄກໃຊ້ຮ່ວມກັນ ........ 02<br>ວິດແຫ້ງທີ່ມີລະບົບລະບາຍອາກາດ ........ 03<br>ວິດແຫ້ງ ........ 04<br>ແມ່ນ້ຳ/ຄອງບຶງ ........ 05<br>ບໍ່ມີວິດຖ່າຍ/ຖ່າຍຢູ່ປ່າ/ທົ່ງນາ ........ 06<br>ອື່ນໆ: ________ 96<br>ບໍ່ຮູ້/ບໍ່ຈື່........ 98<br>ປະຕິເສດ/ບໍ່ຕອບ ........ 99 | |
| 3 | ຫລັງຄາເຮືອນຕົ້ນຕໍ ມຸ້ງດ້ວຍຫຍັງ ?<br>ໃຫ້ນັກເດີນສຳຫລວດສັງເກດເອງ | ຫລັງຄາທີ່ເຮັດຈາກວັດສະດຸທຳມະຊາດ........ 1<br>ຫລັງຄາເຮືອນແບບບໍ່ຖາວອນ (ພູລາດສະຕິກ/ແກັດເຈ້ຍ) ........ 2<br>ກະເບື້ອງ ຫລື ຄອນກີດ........ 3<br>ສັງກະສີ........ 4<br>ອື່ນໆ: ________ 6<br>ບໍ່ຮູ້/ບໍ່ຈື່........ 8<br>ປະຕິເສດ/ບໍ່ຕອບ ........ 9 | |
| 4 | ໃນຄົວເຮືອນຂອງທ່ານມີສິ່ງເຫລົ່ານີ້ບໍ່: | ມີ / ບໍ່ມີ / ບໍ່ຮູ້<br>1) ໄຟຟ້າ 1 2 8<br>2) ວິທະຍຸ 1 2 8<br>3) ໂທລະພາບ 1 2 8<br>4) ໂທລະສັບ 1 2 8<br>5) ໂທລະສັບມືຖື 1 2 8<br>6) ຕູ້ເຢັນ 1 2 8<br>7) ຄອມພິວເຕີ 1 2 8 | |
| 5 | ສະມາຊິກໃນຄົວເຮືອນຂອງທ່ານມີໃຜຜູ້ໜຶ່ງເປັນເຈົ້າຂອງສິ່ງຂອງດັ່ງລຸ່ມນີ້ບໍ່: | ມີ / ບໍ່ມີ / ບໍ່ຮູ້<br>1) ລົດຖີບ 1 2 8<br>2) ລົດຈັກ 1 2 8<br>3) ລົດໃຫຍ່ 1 2 8 | |

| | | | |
|---|---|---|---|
| 6 | ສະມາຊິກໃນຄົວເຮືອນຂອງທ່ານມີໃຜມີດິນເປັນຂອງຕົນເອງບໍ່? | ມີ ............................................................ 1<br>ບໍ່ມີ ............................................................ 2<br>ບໍ່ຮູ້/ບໍ່ຈື່............................................................ 8<br>ປະຕິເສດ/ບໍ່ຕອບ ............................................................ 9 | |
| 7 | ໃນຄົວເຮືອນຂອງທ່ານມີຫ້ອງນອນຈັກຫ້ອງ? | ຈຳນວນຫ້ອງ ........................................................[ ][ ]<br>ບໍ່ຮູ້/ບໍ່ຈື່........................................................ 98<br>ປະຕິເສດ/ບໍ່ຕອບ ........................................................ 99 | |
| | g) ແມ່ນຫຍັງອື່ນໆ ອີກບໍ່ ກ່ຽວກັບການຮ່ວມເພດ ຫລື ມີລັກສະນະທາງເພດທີ່ທາງບໍ່ຕ້ອງການ: ______________________ | 1 | 2 | 1 | 2 | 8 |
| ກວດເບິ່ງ N02 | **ຖ້າມີຄຳຕອບຢ່າງໜ້ອຍໜຶ່ງຄຳຕອບແມ່ນ '1' ໃນຂໍ້ A. [ ]** ⬇ | | | **ຖ້າມີແຕ່ຄຳຕອບ''2' ໃຫ້ໝາຍ [ ]** ➦ | | ➦ **N06** |

| N09 | a) ໃຜທຳຮ້າຍທ່ານ?<br>ສອບຖາມ:<br>ມີບຸກຄົນອື່ນໆອີກບໍ່?<br>ພີ່ນ້ອງບໍ່ທີ່ທຳຮ້າຍ?<br>ບຸກຄົນຢູ່ໃນໂຮງຮຽນ ຫລື ບ່ອນເຮັດວຽກບໍ່?<br>ໝູ່ເພື່ອນ ຫລື ເພື່ອນບ້ານບໍ່?<br>ແມ່ນຄົນແປກຫນ້າ ຫລື ບຸກຄົນອື່ນໆບໍ່?<br>ຫ້າມອ່ານອອກເປັນລາຍການທັງໝົດທີ່ກ່າວເຖິງ | | b) ຖາມພຽງຄຳຕອບທີ່ຖືກໝາຍໃນຄຳຖາມ a).<br>ມີຈັກຄັ້ງທີ່ໄດ້ເກີດຂຶ້ນ ຕັ້ງທ່ານແຕ່ອາຍຸ 15 ປີ? ໜຶ່ງຄັ້ງ, ສອງສາມຄັ້ງ, ຫລື ຫລາຍໆຄັ້ງ ? | | | c) ຖາມພຽງຄຳຕອບທີ່ຖືກໝາຍໃນ ຄຳຖາມ a).<br>ມີຈັກຄັ້ງທີ່ໄດ້ເກີດຂຶ້ນ ໃນ 12 ເດືອນ ຜ່ານມາ? ໜຶ່ງຄັ້ງ, ສອງສາມຄັ້ງ, ຫລື ຫລາຍໆຄັ້ງ ? | | | |
|---|---|---|---|---|---|---|---|---|---|
| | | | ໜຶ່ງຄັ້ງ | ສອງສາມຄັ້ງ | ຫຼາຍໆຄັ້ງ | ບໍ່ | ໜຶ່ງຄັ້ງ | ສອງສາມຄັ້ງ | ຫຼາຍໆຄັ້ງ |
| | ພໍ່/ພໍ່ລ້ຽງ | A | 1 | 2 | 3 | 0 | 1 | 2 | 3 |
| | ແມ່/ແມ່ລ້ຽງ | B | 1 | 2 | 3 | 0 | 1 | 2 | 3 |
| | ແມ່ຍ່າ/ແມ່ເຖົ້າ | C | 1 | 2 | 3 | 0 | 1 | 2 | 3 |
| | ສະມາຊິກຜູ້ຊາຍ ຄົນອື່ນໃນຄອບຄົວ | D | 1 | 2 | 3 | 0 | 1 | 2 | 3 |
| | ສະມາຊິກແມ່ຍິງ ຄົນອື່ນໃນຄອບຄົວ | E | 1 | 2 | 3 | 0 | 1 | 2 | 3 |
| | ບຸກຄົນໃດໜຶ່ງໃນບ່ອນເຮັດວຽກ - ຜູ້ຊາຍ | F | 1 | 2 | 3 | 0 | 1 | 2 | 3 |
| | ບຸກຄົນໃດໜຶ່ງໃນບ່ອນເຮັດວຽກ - ແມ່ຍິງ | G | 1 | 2 | 3 | 0 | 1 | 2 | 3 |
| | ໝູ່/ຄົນຮູ້ຈັກ - ຜູ້ຊາຍ | H | 1 | 2 | 3 | 0 | 1 | 2 | 3 |
| | ໝູ່/ຄົນຮູ້ຈັກ - ແມ່ຍິງ | I | 1 | 2 | 3 | 0 | 1 | 2 | 3 |
| | ຄົນຮູ້ຈັກມໍ່ໆນີ້ - ຜູ້ຊາຍ | J | 1 | 2 | 3 | 0 | 1 | 2 | 3 |
| | ຄົນຮູ້ຈັກມໍ່ໆນີ້ - ແມ່ຍິງ | K | 1 | 2 | 3 | 0 | 1 | 2 | 3 |
| | ຄົນແປກຫນ້າ - ຜູ້ຊາຍ | L | 1 | 2 | 3 | 0 | 1 | 2 | 3 |
| | ຄົນແປກຫນ້າ - ແມ່ຍິງ | M | 1 | 2 | 3 | 0 | 1 | 2 | 3 |
| | ອາຈານ - ຜູ້ຊາຍ | N | 1 | 2 | 3 | 0 | 1 | 2 | 3 |
| | ອາຈານ - ແມ່ຍິງ | O | 1 | 2 | 3 | 0 | 1 | 2 | 3 |
| | ທ່ານໝໍ/ພະນັກງານແພດ - ຜູ້ຊາຍ | P | 1 | 2 | 3 | 0 | 1 | 2 | 3 |
| | ທ່ານໝໍ/ພະນັກງານແພດ -ແມ່ຍິງ | Q | 1 | 2 | 3 | 0 | 1 | 2 | 3 |
| | ຜູ້ນຳທາງສາດສະໜາ - ຜູ້ຊາຍ | R | 1 | 2 | 3 | 0 | 1 | 2 | 3 |
| | ຕຳຫລວດ/ ທະຫານ - ຜູ້ຊາຍ | S | 1 | 2 | 3 | 0 | 1 | 2 | 3 |
| | ອື່ນໆຜູ້ຊາຍ (ເວົ້າແຈ້ງ)______________________ | W | 1 | 2 | 3 | 0 | 1 | 2 | 3 |
| | ອື່ນໆຜູ້ຍິງ (ເວົ້າແຈ້ງ) ______________________ | X | 1 | 2 | 3 | 0 | 1 | 2 | 3 |

| 1003 | ກ່ອນທ່ານອາຍຸໄດ້ 15 ປີ, ທ່ານຈື່ໄດ້ບໍ່ວ່າ ມີຄົນໃດຄົນໜຶ່ງໃນຄອບຄົວຂອງທ່ານ ເຄີຍສຳພັດທ່ານໃນລັກສະນະທາງເພດບໍ່, ຫລື ເຮັດບາງສິ່ງບາງຢ່າງທີ່ພົວພັນທາງເພດນຳທ່ານໂດຍທີ່ທ່ານບໍ່ຕ້ອງການ?<br>ຖ້າບໍ່: ສອບຖາມຕໍ່: ບຸກຄົນຢູ່ໂຮງຮຽນເດ? ໝູ່ເພື່ອນ ຫລື ເພື່ອນບ້ານຂອງທ່ານເດ? ມີບຸກຄົນອື່ນອີກບໍ່ທີ່ເຮັດແບບນີ້ກັບທ່ານ? ຖ້າແມ່ນ ຖາມຕໍ່ 1003a | ແມ່ນ .....1<br>ບໍ່ແມ່ນ ...**2** | <br><br>**→ 1006** |
|---|---|---|---|

| 1003 a) | a) | | | ຖາມພຽງແຕ່ຜູ້ທີ່ມີຄຳຕອບໃນຄຳຖາມ 1003a | | | | |
|---|---|---|---|---|---|---|---|---|
| | ຖ້າແມ່ນ:<br>ໃຜເຮັດແບບນີ້ກັບທ່ານ?<br>ຖາມຕໍ່:<br>ບຸກຄົນຢູ່ໃນໂຮງຮຽນເດ?<br>ໝູ່ເພືອນ ຫລື ເພື່ອນບ້ານຂອງທ່ານເດ?<br>ມີໃຜເຮັດແບບນີ້ກັບທ່ານ? | | | b) ທ່ານໄດ້ອາຍຸຈັກປີ ໃນເວລາທີ່ບຸກຄົນອື່ນເຮັດແບບນີ້ກັບທ່ານຄັ້ງທຳອິດ? (ຫລາຍຄັ້ງ ຫລື ໜ້ອຍກວ່າ) | c) ລາວອາຍຸໄດ້ຈັກປີ ?<br>ສອບຖາມ: ໂດຍປະມານ (ຫລາຍຄັ້ງ ຫລື ໜ້ອຍກວ່າ) | b) ມີຈັກຄັ້ງທີ່ເກີດຂຶ້ນ | | |
| | | | | | | ໜຶ່ງຄັ້ງ | ສອງສາມຄັ້ງ | ຫຼາຍໆຄັ້ງ |
| | | ພໍ່/ພໍ່ລ້ຽງ | A | [ ][ ] | [ ][ ] | 1 | 2 | 3 |
| | | ແມ່/ແມ່ລ້ຽງ | B | [ ][ ] | [ ][ ] | 1 | 2 | 3 |
| | | ແມ່ຍ່າ/ແມ່ເຖົ້າ | C | [ ][ ] | [ ][ ] | 1 | 2 | 3 |
| | | ສະມາຊິກຜູ້ຊາຍ ຄົນອື່ນໃນຄອບຄົວ | D | [ ][ ] | [ ][ ] | 1 | 2 | 3 |
| | | ສະມາຊິກແມ່ຍິງ ຄົນອື່ນໃນຄອບຄົວ | E | [ ][ ] | [ ][ ] | 1 | 2 | 3 |
| | | ບຸກຄົນໃດໜຶ່ງໃນບ່ອນເຮັດວຽກ - ຜູ້ຊາຍ | F | [ ][ ] | [ ][ ] | 1 | 2 | 3 |
| | | ບຸກຄົນໃດໜຶ່ງໃນບ່ອນເຮັດວຽກ - ແມ່ຍິງ | G | [ ][ ] | [ ][ ] | 1 | 2 | 3 |
| | | ໝູ່/ຄົນຮູ້ຈັກ - ຜູ້ຊາຍ | H | [ ][ ] | [ ][ ] | 1 | 2 | 3 |
| | | ໝູ່/ຄົນຮູ້ຈັກ - ແມ່ຍິງ | I | [ ][ ] | [ ][ ] | 1 | 2 | 3 |
| | | ຄົນຮູ້ຈັກມໍ່ໆນີ້ - ຜູ້ຊາຍ | J | [ ][ ] | [ ][ ] | 1 | 2 | 3 |
| | | ຄົນຮູ້ຈັກມໍ່ໆນີ້ - ແມ່ຍິງ | K | [ ][ ] | [ ][ ] | 1 | 2 | 3 |
| | | ຄົນແປກຫນ້າ - ຜູ້ຊາຍ | L | [ ][ ] | [ ][ ] | 1 | 2 | 3 |
| | | ຄົນແປກຫນ້າ - ແມ່ຍິງ | M | [ ][ ] | [ ][ ] | 1 | 2 | 3 |
| | | ອາຈານ - ຜູ້ຊາຍ | N | [ ][ ] | [ ][ ] | 1 | 2 | 3 |
| | | ອາຈານ - ແມ່ຍິງ | O | [ ][ ] | [ ][ ] | 1 | 2 | 3 |
| | | ທ່ານໝໍ/ພະນັກງານແພດ - ຜູ້ຊາຍ | P | [ ][ ] | [ ][ ] | 1 | 2 | 3 |
| | | ທ່ານໝໍ/ພະນັກງານແພດ -ແມ່ຍິງ | Q | [ ][ ] | [ ][ ] | 1 | 2 | 3 |
| | | ຜູ້ນຳທາງສາດສະໜາ - ຜູ້ຊາຍ | R | [ ][ ] | [ ][ ] | 1 | 2 | 3 |
| | | ຕຳຫລວດ/ ທະຫານ - ຜູ້ຊາຍ | S | [ ][ ] | [ ][ ] | 1 | 2 | 3 |
| | | ອື່ນໆຜູ້ຊາຍ (ເວົ້າແຈ້ງ)____________________ | W | [ ][ ] | [ ][ ] | 1 | 2 | 3 |
| | | ອື່ນໆຜູ້ຍິງ (ເວົ້າແຈ້ງ) ____________________ | X | [ ][ ] | [ ][ ] | 1 | 2 | 3 |
| | | | | | ບໍ່ຮູ້ = 98 | | | |

| | | | |
|---|---|---|---|
| 1003e | ໃນກໍລະນີທີ່ທ່ານໄດ້ອະທິບາຍໃນເບື້ອງຕົ້ນ, ບຸກຄົນນັ້ນແມ່ນໄດ້ໃຊ້ອະໄວຍະເພດ ຫລື ສິ່ງອື່ນໆ ເຂົ້າໄປໃນອະໄວຍະເພດ, ທາງຫລັງ (ຮູທະວານ), ຫລື ທາງປາກ ຂອງທ່ານບໍ່? | ແມ່ນ............................................1<br>ບໍ່ແມ່ນ..........................................2<br>ບໍ່ຮູ້...............................................8<br>ປະຕິເສດ/ບໍ່ມີຄຳຕອບ..........................9 | |
| 1004 | ທ່ານອາຍຸຈັກປີ ໃນເວລາທີ່ທ່ານມີເພດສຳພັນຄັ້ງທຳອິດ?<br>ຖ້າຈຳເປັນ: ພວກເຮົາ ຕ້ອງອະທິບາຍວ່າການຮ່ວມເພດ ແມ່ນລວມທັງການມີເພດສຳພັນທາງປາກ, ທານຮູທະວານ ຫລື ທາງຊ່ອງຄອດ. | ອາຍຸ ປີ (ຫລາຍ ຫລື ໜ້ອຍກວ່າ) .....[ ][ ]<br>ບໍ່ເຄີຍມີເພດສຳພັນ............................**95**<br>ປະຕິເສດ/ບໍ່ມີຄຳຕອບ ........................99 | **➙ພາກ5** |

| | | | |
|---|---|---|---|
| 1005 | ທ່ານອະທິບາຍໄດ້ບໍ່ວ່າ ກ່ຽວກັບການມີເພດສຳພັນຄັ້ງທຳອິດຂອງທ່ານ? ທ່ານສາມາດເວົ້າໄດ້ບໍ່ວ່າ ແມ່ນເກີດມາຂຶ້ນຍ້ອນທ່ານຕ້ອງການ, ຫລື ທ່ານບໍ່ຕ້ອງການມີເພດສຳພັນ ແຕ່ມັນກະເກີດຂຶ້ນ, ຫລືທ່ານຖືກບັງຄັບໃຫ້ມີເພດສຳພັນ? | ຕ້ອງການມີເພດສຳພັນ ........................1<br>ບໍ່ຕ້ອງການ ແຕ່ມີເພດາສຳພັນ .................2<br>ຖືກບັງຄັບໃຫ້ມີເພດສຳພັນ ....................3<br>ບໍ່ຮູ້/ຈື່ບໍ່ໄດ້ ......................................8<br>ປະຕິເສດ/ບໍ່ມີຄຳຕອບ ..........................9 | |
| 1005c | ທ່ານມີເພດສຳພັນຄັ້ງທຳອິດ ກັບຜົວ/ຜູ້ທີ່ທ່ານຢູ່ຮ່ວມນຳ (ໃນຕອນນັ້ນ ຫລື ຫລັງຈາກນັ້ນ), ຫລື ກັບຜູ້ອື່ນ? | ຜົວ..............................................1<br>ຜູ້ອື່ນ ..........................................2<br>ປະຕິເສດ /ບໍ່ມີຄຳຕອບ ..........................9 | |
| 1005a | ຈຳນວນຄູ່ນອນທີ່ແມ່ຍິງມີ ແມ່ນແຕກຕ່າງກັນ ລະຫວ່າງແຕ່ລະບຸກຄົນ. ແມ່ຍິງບາງຄົນ ລາຍງານວ່າມີ 1 ຄູ່ນອນ, ບາງຄົນ ມີ 2 ຫລື ຫລາຍກວ່າ, ແລະ ບາງຄົນລາຍງານວ່າມີຫລາຍຄົນ, ມີຮອດ 50 ຫລື ຫລາຍກວ່າ. <u>ໃນຊີວິດຂອງທ່ານ</u> ມີຜູ້ຊາຍຈັກຄົນທີ່ທ່ານເຄີຍມີເພດສຳພັນນຳ?<br><br>ຖ້າຈຳເປັນ ໃຫ້ຖາມຕື່ມ: ຫລາຍ ຫລື ໜ້ອຍ; ຂ້າພະເຈົ້າບໍ່ຕ້ອງການຮູ້ຈຳນວນທີ່ແນ່ນອນ. | ຄູ່ຮ່ວມນອນ......................[ ][ ][ ]<br>ບໍ່ຮູ້/ຈື່ບໍ່ໄດ້ ................................. 998<br>ປະຕິເສດ /ບໍ່ມີຄຳຕອບ ..................... 999 | |
| 1005b | ຖ້າຕອບວ່າ ມີພຽງຕໍ່ຜູ້ດຽວ ໃນຂໍ້ 1005a; ໃຫ້ຖາມ:<br>ທ່ານມີເພດສຳພັນໃນໄລຍະ 12 ເດືອນຜ່ານມາບໍ່? ຖ້າມີ, ໃສ່ລະຫັດ ""01""<br>ຖ້າບໍ່ມີ, ໃສ່ລະຫັດ ""00""<br>ຖ້າມີຫລາຍກວ່າ 1 ຄົນ ໃນຂໍ້ 1005a, ໃຫ້ຖາມ:<br><br>ໃນບັນດາຜູ້ຊາຍເຫລົ່ານີ້ ມີຈັກຄົນທີ່ທ່ານມີເພດສຳພັນນຳ ໃນໄລຍະ <u>12 ເດືອນຜ່ານມາ</u>?<br>ລວມທັງຄູ່ຮ່ວມນອນ ຫລື ຜົວ ຫລື ຄົນຮັກ ຜູ້ປະຈຸບັນ | ຄູ່ຮ່ວມນອນ......................[ ][ ][ ]<br>ບໍ່ຮູ້/ຈື່ບໍ່ໄດ້ ................................. 998<br>ປະຕິເສດ /ບໍ່ມີຄຳຕອບ ..................... 999 | |
| 1006 | ເມື່ອທ່ານຍັງເປັນເດັກນ້ອຍ, ແມ່ຂອງທ່ານເຄີຍຖືກຕີໂດຍພໍ່ຂອງທ່ານບໍ່ (ຫລື ຜົວຂອງລາວ ຫລື ແຟນຂອງລາວ)? | ແມ່ນ............................................1<br>ບໍ່ແມ່ນ........................................**2**<br>ພໍ່ແມ່ບໍ່ໄດ້ຢູ່ນຳກັນ...............................**3**<br>ບໍ່ຮູ້................................................**8**<br>ປະຕິເສດ/ບໍ່ຕອບ ..............................9 | |

| | | | | | |
|---|---|---|---|---|---|
| 1007 | ໃນເວລາທີ່ທ່ານຍັງເປັນເດັກນ້ອຍ, ມີສະມາຊິກໃນຄອບຄົວຂອງທ່ານເຄີຍປະຕິບັດກັບທ່ານດັ່ງຕໍ່ໄປນີ້ບໍ່: | | ແມ່ນ | ບໍ່ແມ່ນ | ບໍ່ຮູ້ |
| | a) ຕົບ ຫລື ຟາດ ທ່ານ (ດ້ວຍມືເປົ່າ)? | a) ຕົບ | 1 | 2 | 8 |
| | b) ຕົບຕີ ຫລື ແຕະ ທ່ານ ຫລື ຊົກທ່ານດ້ວຍກຳປັ້ນ? | b) ຕີ, ແຕະ | 1 | 2 | 8 |
| | c) ຕີທ່ານໂດຍໃຊ້ສາຍແອວ, ໄມ້, ຝອຍ ຫລື ສິ່ງອື່ນໆ? | c) ຕີໂດຍໃຊ້ອຸປະກອນ ຫລື ເຄື່ອງ | 1 | 2 | 8 |
| | d) ມັດທ່ານໂດຍໃຊ້ເຊືອກ? | d) ມັດໂດຍເຊືອກ | 1 | 2 | 8 |
| | x) ມີຢ່າງອື່ນອີກບໍ່? ໃຫ້ລະບຸ:<br>__________________________ | x) ມີຫຍັງອີກ | 1 | 2 | 8 |

| | | | |
|---|---|---|---|
| *** ກອດຄືນ: ເອກະສານອ້າງອີງ A**<br><br>*(s10mar)* | **ເຄີຍແຕ່ງງານ/ເຄີຍຢູ່ຮ່ວມກັບຜູ້ຊາຍ/ເຄີຍມີແຟນ**<br><br>**(ຕົວເລືອກ K,L,M) [ ]**<br>⬇<br>*(1)* | **ບໍ່ເຄີຍແຕ່ງງານ/ບໍ່ເຄີຍຢູ່ກັບຜູ້ຊາຍ/ບໍ່ເຄີຍມີແຟນ**<br><br>**(ຕົວເລືອກ N) [ ] ➦**<br><br>*(2)* | **➦ພາກ11** |

| | | | |
|---|---|---|---|
| 1008 | ເທົ່າທີ່ທ່ານຮູ້, ແມ່ຍ່າຂອງທ່ານ (ຄົນຫລ້າສຸດ) ໄດ້ຖືກຕີ ຫລື ທຳຮ້າຍຈາກຂອງຜົວລາວບໍ່? | ແມ່ນ.............................................1<br>ບໍ່ແມ່ນ .........................................2<br>ພໍ່ແມ່ບໍ່ໄດ້ຢູ່ນຳກັນ ...............................3<br>ບໍ່ຮູ້..............................................8<br>ປະຕິເສດ/ບໍ່ຕອບ ...............................9 | |
| 1010 | ເທົ່າທີ່ທ່ານຮູ້, ຜົວ/ຄູ່ຮ່ວມນອນ (ຄົນຫລ້າສຸດ) ຂອງທ່ານ ລາວໄດ້ຖືກຕີ ຫລື ທຳຮ້າຍຈາກບຸກຄົນໃດໜຶ່ງໃນຄອບຄົວຂອງລາວເປັນປະຈຳບໍ່, ໃນເວລາລາວຍັງເປັນເດັກນ້ອຍ? | ແມ່ນ.............................................1<br>ບໍ່ແມ່ນ.........................................2<br>ບໍ່ຮູ້..............................................8<br>ປະຕິເສດ/ບໍ່ຕອບ ...............................9 | |

## ພາກທີ 11: ຄວາມເປັນເອກະລາດທາງດ້ານການເງິນ

ປະຈຸບັນນີ້ ຂ້າພະເຈົ້າຈະຖາມທ່ານບາງຄຳຖາມກ່ຽວກັບສິ່ງທີ່ທ່ານເປັນເຈົ້າຂອງ ແລະ ລາຍຮັບຂອງທ່ານ. ພວກເຮົາຕ້ອງການຂໍ້ມູນເພື່ອທຳຄວາມເຂົ້າໃຈສະຖານະທາງດ້ານການເງິນຂອງແມ່ຍິງໃນປະຈຸບັນ.

| | | | ແມ່ນ ທ່ານເປັນເຈົ້າຂອງເອງ | ແມ່ນ ທ່ານເປັນເຈົ້າຂອງຮ່ວມກັບຄົນອື່ນ | ບໍ່ໄດ້ເປັນເຈົ້າຂອງ |
|---|---|---|---|---|---|
| 1101 | ກະລຸນາບອກຂ້າພະເຈົ້າ ກ່ຽວກັບຊັບສິນເຫລົ່ານີ້ທີ່ທ່ານເປັນເຈົ້າຂອງ, ບໍ່ວ່າຈະແມ່ນຂອງທ່ານເອງ ຫລື ເປັນເຈົ້າຂອງຮ່ວມ ກັບຄົນອື່ນ: | | | | |
| | a) ທີ່ດິນ | a) ທີ່ດິນ | 1 | 2 | 3 |
| | b) ເຮືອນຂອງທ່ານ | b) ເຮືອນ | 1 | 2 | 3 |
| | c) ບໍລິສັດ/ທຸລະກິດ | c) ບໍລິສັດ | 1 | 2 | 3 |
| | d) ສັດໃຫຍ່ (ງົວ, ມ້າ, ອື່ນໆ.) | d) ສັດໃຫຍ່ | 1 | 2 | 3 |
| | e) ສັດນ້ອຍ (ໄກ່,ໝູ, ແບ້, ອື່ນໆ.) | e) ສັດນ້ອຍ | 1 | 2 | 3 |
| | f) ຜົນຜະລິດ ຫລື ພືດສະບຽງອາຫານຈາກສວນ ຫລືຕົ້ນໄມ້ | f) ຜົນຜະລິດ | 1 | 2 | 3 |
| | g) ສິ່ງຂອງຂະໜາດໃຫຍ່ໃນຄົວເຮືອນ (ທໍລະພາບ, ຕຽງ, ເຕົາໄຟ) | g) ສິ່ງຂອງໃນຄົວເຮືອນ | 1 | 2 | 3 |
| | h) ເຄື່ອງປະດັບ, ຄຳ ຫລື ວັດຖຸທີ່ມີຄ່າອື່ນໆ | h) ເຄື່ອງປະດັບ | 1 | 2 | 3 |
| | i) ລົດໃຫຍ່ | i) ລົດໃຫຍ່ | 1 | 2 | 3 |
| | j) ເງິນຝາກທະນາຄານ? | j) ເງິນຝາກທະນາຄານ | 1 | 2 | 3 |
| | x) ຊັບສິນອື່ນໆ, ເວົ້າແຈ້ງ<br>ສຳລັບແຕ່ລະລາຍການ, ໃຫ້ສອບຖາມ: ທ່ານເປັນເຈົ້າຂອງຊັບ ສິນເຫລົ່ານີ້ເອງບໍ ຫລື ເປັນເຈົ້າຂອງຮ່ວມກັບຄົນອື່ນໆ? | x) ຊັບສິນອື່ນ:<br>______________________ | 1 | 2 | 3 |

| | | | ແມ່ນ | ບໍ່ແມ່ນ |
|---|---|---|---|---|
| 1102 | ທ່ານຫາເງິນດ້ວຍຕົນເອງບໍ່? | ແມ່ນ ................................................A | ➦*s11mar | |
| | ຖ້າແມ່ນ: ທ່ານເຮັດຫຍັງເພື່ອສ້າງລາຍຮັບ? | b) ອາຊີບ: ______________________.......... | 1 | 2 |
| | | c) ຂາຍ/ຄ້າຂາຍ: __________________ .......... | 1 | 2 |
| | | d) ເຮັດວຽກຕາມລະດູການ: ____________......... | 1 | 2 |
| | | x) ກິດຈະກຳອື່ນໆ (ເວົ້າແຈ້ງ): _________.......... | 1 | 2 |

| * ກວດຄືນ:<br>ເອກະສານອ້າງອີງ A<br><br>*(s11mar)* | ກຳລັງແຕ່ງງານໃນປະຈຸບັນ/ກຳລັງຢູ່ຮ່ວມຜູ້ຊາຍໃນປະຈຸບັນ<br><br>(ຕົວເລືອກ K) [ ] ⬇<br><br>*(1)* | ເປັນໂສດ ຫລື ບໍ່ໄດ້ຢູ່ຮ່ວມກັບຜູ້ຊາຍ ໃນປະຈຸບັນ ຫລື ອາດິດຍັງບໍ່ໄດ້ຢູ່ຮ່ວມກັບແຟນ<br><br>(ຕົວເລືອກ L, M, N) [ ] ➦<br><br>*(2)* | ➦ພາກ.12 |
|---|---|---|---|
| **ກວດຄືນ 1102** | **1. ຕົວເລືອກ b) c) d) ຫລື x) ໃຫ້ໝາຍຕິກໃສ່ [ ]** ⬇ | **2. ຕົວເລືອກ a) [ ] ➦** | **➦1105** |

| | | | |
|---|---|---|---|
| 1103 | ທ່ານສາມາດໃຊ້ຈ່າຍເງິນທີ່ທ່ານຫາມາໄດ້ຕາມທີ່ທ່ານຕ້ອງການໃຊ້ບໍ່, ຫລື ທ່ານເອົາເງິນທັງໝົດ ຫລື ສ່ວນໃດໜຶ່ງໃຫ້ຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນຂອງທ່ານ? | ທ່ານໃຊ້ຈ່າຍເອງ/ທ່ານເລືອກໃຊ້ເອງ ....................................1<br>ເອົາເງິນສ່ວນໃດໜຶ່ງໃຫ້ຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນ.....................2<br>ເອົາເງິນທັງໝົດໃຫ້ຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນ.........................3<br>ບໍ່ຮູ້...............................................................................8<br>ປະຕິເສດ/ບໍ່ຕອບ ...................................................................9 | |
| 1104 | ທ່ານສາມາດເວົ້າໄດ້ບໍ່ວ່າ ເງິນທີ່ທ່ານຫາເຂົ້າມາໃນຄອບຄົວຂອງ ທ່ານແມ່ນຫລາຍກວ່າເງິນຂອງຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນທີ່ເອົາມາໃຊ້ຈ່າຍ ໃນຄົວເຮືອນ, ໜ້ອຍກວ່າ ຫລື ປະມານເທົ່າກັນບໍ່? | ຫລາຍກວ່າຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນ...............................1<br>ໜ້ອຍກວ່າຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນ ...............................2<br>ເທົ່າກັນ ............................................................................3<br>ບໍ່ຮູ້ ...............................................................................8<br>ປະຕິເສດ/ບໍ່ຕອບ ...................................................................9 | |
| 1105 | ທ່ານເຄີຍໄດ້ຢຸດເຊົາ/ປະຕິເສດວຽກ ຍ້ອນຜົວ/ຄູ່ຮ່ວມນອນ/ຄູ່ຮັກ/ແຟນຂອງທ່ານ ບໍ່ຕ້ອງການໃຫ້ທ່ານເຮັດວຽກດັ່ງກ່າວ? | ແມ່ນ...............................................................................1<br>ບໍ່ແມ່ນ............................................................................2<br>ບໍ່ຮູ້/ບໍ່ຈື.........................................................................8<br>ປະຕິເສດ/ບໍ່ຕອບ ...................................................................9 | |
| 1106 | ຜົວ/ຄູ່ຮ່ວມນອນຄູ່/ຄູ່ຮັກ/ແຟນ ຂອງທ່ານ ເຄີຍໄດ້ເອົາເງິນຂອງທ່ານທີ່ຫາມາໄດ້ ຫລື ເງິນເກັບຂອງທ່ານບໍ່ໂດຍທີ່ທ່ານບໍ່ຕ້ອງການໃຫ້? | ບໍ່ເຄີຍ.............................................................................1<br>ໜຶ່ງ ຫລື ສອງຄັ້ງ...................................................................2<br>ຫລາຍຄັ້ງ ..........................................................................3<br>ຫລາຍໆຄັ້ງ/ເກືອບທຸກໆຄັ້ງ.......................................................4<br>ບໍ່ມີຂໍ້ມູນ (ບໍ່ໄດ້ມີການອອມ ຫລື ເກັບໄວ້) ..................................7<br>ບໍ່ຮູ້/ບໍ່ຈື.........................................................................8<br>ປະຕິເສດ/ບໍ່ຕອບ ...................................................................9 | |
| 1107 | ຜົວຄູ່ຮ່ວມນອນ/ຄູ່ຮັກ/ແຟນ ຂອງທ່ານ ເຄີຍປະຕິເສດທີ່ຈະເອົາເງິນໃຫ້ທ່ານ ເພື່ອໃຊ້ຈ່າຍໃນຄົວເຮືອນບໍ່, ໃນຂະນະທີ່ລາວມີເງິນໃຊ້ຈ່າຍ ສຳ ລັບສິ່ງອື່ນໆ? | ບໍ່ເຄີຍ.............................................................................1<br>ໜຶ່ງ ຫລື ສອງຄັ້ງ...................................................................2<br>ຫລາຍຄັງ ..........................................................................3<br>ຫລາຍໆຄັ້ງ/ເກືອບທຸກໆຄັ້ງ.......................................................4<br>ບໍ່ມີຂໍ້ມູນ (ຄົນຮັກບໍ່ໄດ້ຫາເງິນ).................................................7<br>ບໍ່ຮູ້/ບໍ່ຈື.........................................................................8<br>ປະຕິເສດ/ບໍ່ຕອບ ...................................................................9 | |
| 1108 | ໃນກໍລະນີສຸກເສີນ, ທ່ານຄິດວ່າທ່ານພຽງຄົນດຽວສາມາດມີເງິນພຽງພໍໃຊ້ຈ່າຍໃນຄົວເຮືອນບໍ່ ຫລື ສາມາດເບິ່ງແຍງຄອບຄົວໄດ້ພາຍໃນ 4 ອາທິດ? ຕົວຢ່າງ ຂາຍສິ່ງຂອງຂອງທ່ານເອງ, ຫລື ກູ້ຢືມເງິນຈາກຄົນຮູ້ຈັກ, ຫລື ທະນາຄານ ຫລື ຜູ້ໃຫ້ກູ້ ຢືມເງິນ? | ແມ່ນ...............................................................................1<br>ບໍ່ແມ່ນ............................................................................2<br>ບໍ່ຮູ້...............................................................................8<br>ປະຕິເສດ/ບໍ່ຕອບ ...................................................................9 | |

| | | | | | | |
|---|---|---|---|---|---|---|
| 1109 | ທ່ານຮູ້ກົດໝາຍຫຍັງບໍ່ ໃນ ສປປ ລາວ ທີ່ປົກປ້ອງແມ່ຍິງ ຈາກຄວາມຮຸນແຮງທີ່ເກີດຈາກຜົວ/ຄູ່ຮັກຂອງລາວ?<br><br>a) ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ<br>b) ກົດໝາຍອື່ນໆ (ໃຫ້ລະບຸແຈ້ງ) | | ຮູ້ | ບໍ່ | ບໍ່ຮູ້ | ບໍ່ຕອບ |
| | | a) ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ | 1 | 2 | 8 | 9 |
| | | b) ກົດໝາຍອື່ນໆ (ໃຫ້ລະບຸແຈ້ງ)<br>____________________ | 1 | 2 | 8 | 9 |

| ພາກທີ 12: ສໍາເລັດການສໍາພາດ | | | |
|---|---|---|---|
| 1201 | ຕໍ່ຈາກນີ້ຂ້າພະເຈົ້າຕ້ອງການເອົາບັດໃຫ້ທ່ານບັດໜຶ່ງ. ໃນບັດນີ້ແມ່ນມີ ສອງຮູບ. ບໍ່ມີຂໍ້ມູນອື່ນທີ່ຂຽນໃສ່ໃນບັດ. ຮູບທໍາອິດແມ່ນຮູບຫນ້າເສົ້າ, ຮູບທີສອງແມ່ນຮູບສີຫນ້າມີຄວາມສຸກ.<br><br>ບໍ່ວ່າຈະເປັນສິ່ງທີ່ທ່ານໄດ້ບອກໄປແລ້ວ, ຂ້າພະເຈົ້າຢາກໃຫ້ທ່ານໝາຍຮູບທີ່ມີສີຫນ້າເສົ້າລຸ່ມນີ້ ຖ້າມີໃຜຜູ້ໜຶ່ງເຄີຍໄດ້ສໍາພັດລ່ວງລະເມີດທາງເພດ ຫລື ເຮັດສິ່ງໃດສິ່ງໜຶ່ງກັບທ່ານໂດຍທີ່ທ່ານບໍ່ຕ້ອງການ, ກ່ອນທ່ານຮອດອາຍຸ 15 ປີ.<br><br>ກະລຸນາໝາຍຮູບທີ່ສີຫນ້າມີຄວາມສຸກຂ້າງລຸ່ມນີ້ ຖ້າບໍ່ເຄີຍມີການລ່ວງລະເມີດທາງເພດ.<br><br>ຖ້າທ່ານໝາຍບັດແລ້ວ, ກະລຸນາພັບ ແລະ ເອົາໃສຊ່ອງເອກະສານນີ້. ນີ້ເພື່ອໃຫ້ແນ່ໃຈວ່າຂ້າພະເຈົ້າແມ່ນບໍ່ຮູ້ຄໍາຕອບຂອງທ່ານ.<br><br>ເອົາບັດ ແລະ ບິກໃຫ້ຜູ້ຖືກສອບຖາມ. ໃຫ້ແນ່ໃຈວ່າຜູ້ໃຫ້ສໍາພາດພັບບັດ; ເອົາໃສ່ຊອງເອກະສານ; ແລະ ປິດຊ່ອງເອກະສານກ່ອນຈະສົ່ງກັບຄືນໃຫ້ທ່ານ. ກ່ອນຈະສິ້ນສຸດການສໍາພາດ ໃຫ້ແນບຊອງເອກະສານໃສ່ໃນແບບສອບຖາມ (ຫລື ຂຽນລະຫັດຄໍາຖາມໃສໃນຊ່ອງເອກະສານ). | ບັດທີ່ໄດ້ຮັບແມ່ນສໍາເລັດ ........... 1<br><br>ບັດທີ່ໄດ້ຮັບແມ່ນບໍ່ສໍາເລັດ .......... 2 | |
| 1202 | ປະຈຸບັນນີ້ພວກເຮົາໄດ້ສໍາເລັດການສໍາພາດ. ທ່ານມີຄໍາເຫັນຫຍັງບໍ່, ຫລືມີສິ່ງໃດສິ່ງໜຶ່ງບໍ່ທີ່ຈະເພີ່ມໃສ່?<br><br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>________________ | | |

| | | | |
|---|---|---|---|
| 1202 a | ທ່ານມີຄຳແນະນຳ ຫລື ຂໍ້ສະເໜີແນະຫຍັງບໍ່ ທີ່ຈະສາມາດຊ່ວຍຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນປະເທດນີ້?<br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>________________________________________<br>____________ | | |
| 1203 | ຂ້າພະເຈົ້າເຄີຍຖາມກ່ຽວກັບສິ່ງທີ່ຫຍຸ້ງຍາກໃນຫລາຍສິ່ງ. ການສອບຖາມແບບນີ້ເຮັດໃຫ້ທ່ານມີຄວາມຮູ້ສຶກແນວໃດ?<br>ຂຽນຄຳຕອບຂອງຜູ້ໃຫ້ສຳພາດ ລະອຽດໃສ່ລຸ່ມນີ້:<br>____________________________<br>____________________________<br>____________________________<br>____________________________<br>____________________________<br>____________________________<br>____________________________<br>_________________ | ດີ/ດີຂຶ້ນ............................... 1<br>ບໍ່ດີ/ບໍ່ດີຫລາຍກວ່າເກົ່າ.............. 2<br>ເທົ່າເກົ່າ/ ບໍ່ແຕກຕ່າງ................. 3 | |
| 1204 | ທ້າຍສຸດນີ້, ທ່ານເຫັນດີບໍ່ພວກເຮົາອາດຈະຕິດຕໍ່ກັນອີກຄັ້ງ ຖ້າຫາກວ່າທາງເຮົາອາດມີຄຳຖາມເພີ່ມເຕີມ ຈັກສອງສາມຄຳຖາມທີ່ບໍ່ຈະແຈ້ງ?<br>ການກຳນົດເວລາໃນການສຳພາດຕົວຈິງແມ່ນຂຶ້ນກັບການວາງແຜນທີ່ຈະໄປສຳພາດອີກເທື່ອໜຶ່ງ | ໄດ້.................................... 1<br>ບໍ່ໄດ້.................................. 2 | |

***ສຳເລັດ 1   ຖ້າຜູ້ໃຫ້ສຳພາດໄດ້ເປີດເຜີຍບັນຫາ/ຄວາມຮຸນແຮງ***

ຂ້າພະເຈົ້າຂໍຂອບໃຈນຳທ່ານ ທີ່ຊ່ວຍໃຫ້ຄວາມກະຈາງແຈ້ງ. ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນທີ່ທ່ານໄດ້ສະຫລະເວລາອັນມີຄ່າ. ຂ້າພະເຈົ້າຄິດວ່າຄຳຖາມເຫລົ່ານີ້ອາດມີຄວາມຫຍຸ້ງຍາກໃນການໃຫ້ຄຳຕອບ, ແຕ່ວ່າມັນສຳຄັນທີ່ໄດ້ຍິນເລື່ອງລາວຈາກແມ່ຍິງເອງ ເພື່ອຊ່ວຍໃຫ້ພວກຂ້າພະເຈົ້າເຂົ້າໃຈແຈ້ງກ່ຽວກັບບັນຫາ ສຸຂະພາບຂອງແມ່ຍິງ ແລະ ປະສົບການຂອງຄວາມຮຸນແຮງ.

ຈາກສິ່ງທີ່ທ່ານໄດ້ເວົ້າສູ່ຟັງ, ຂ້າພະເຈົ້າສາມາດບອກໄດ້ວ່າທ່ານແມ່ນມີຄວາມຫຍຸ້ງຍາກລຳບາກຫລາຍໃນການດຳລົງຊີວິດຂອງທ່ານ. ບໍ່ວ່າບຸກຄົນໃດກໍ່ບໍ່ມີສິດທີ່ທຳຮ້າຍຄົນອື່ນເຊັ່ນນີ້. ເຖິງຢ່າງໃດກໍ່ຕາມ, ຈາກສິ່ງທີ່ທ່ານເລົ່າສູ່ຟັງຂ້າພະເຈົ້າເຫັນໄດ້ວ່າທ່ານມີຄວາມເຂັ້ມແຂງ, ແລະສາມາດຜ່ານຜ່າອຸປະສັກທີ່ຍາກລຳບາກໄດ້.

ນີ້ແມ່ນບັນຊີລາຍຊື່ອົງການຈັດຕັ້ງທີ່ສາມາດໃຫ້ການສະໜັບສະໜູນ, ພ້ອມທັງໃຫ້ຄຳປຶກສາດ້ານກົດໝາຍ ແລະ ໃຫ້ການບໍລິການໃຫ້ຄຳປຶກແກ່ແມ່ຍິງທ້ອງຖິ່ນ.  ກະລຸນຕິດຕໍ່ພົວພັນນຳເຂົາເຈົ້າ ຖ້າທ່ານຕ້ອງການປຶກສາກ່ຽວບັນຫາຂອງທ່ານ. ການບໍລິການແມ່ນບໍ່ໄດ້ຄິດໄລ່ເງິນ, ແລະ ພວກເຂົາຈະເກັບຮັກສາຂໍ້ມູນທຸກຢ່າງໄວ້ເປັນຄວາມລັບ. ທ່ານສາມາດໄປເພື່ອຂໍຄຳປຶກສາໄດ້ທຸກເວລາທີ່ທ່ານຕ້ອງການ ຫລືພ້ອມ.

***ສຳເລັດ 2 - ຖ້າຜູ້ໃຫ້ສຳພາດບໍ່ໄດ້ເປີດເຜີຍບັນຫາ/ຄວາມຮຸນແຮງ***

ຂ້າພະເຈົ້າຂໍຂອບໃຈນຳທ່ານທີ່ຊ່ວຍໃຫ້ຄວາມກະຈາງແຈ້ງ. ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນທີ່ທ່ານໄດ້ສະຫລະເວລາອັນມີຄ່າ. ຂ້າພະເຈົ້າ ຄິດວ່າຄຳຖາມ ເຫລົ່ານີ້ອາດມີຄວາມຫຍຸ້ງຍາກໃນການໃຫ້ຄຳຕອບ, ແຕ່ວ່າມັນສຳຄັນທີ່ໄດ້ຍິນເລື່ອງລາວຈາກແມ່ຍິງເພື່ອຊ່ວຍໃຫ້ພວກຂ້າ ພະເຈົ້າເຂົ້າໃຈແຈ້ງກ່ຽວກັບບັນຫາ ສຸຂະພາບ ແລະ ປະສົບການໃນຊີວິດຂອງແມ່ຍິງ.

ໃນກໍລະນີທີ່ທ່ານໄດ້ຍິນເລື່ອງຂອງແມ່ຍິງບຸກຄົນອື່ນທີ່ຕ້ອງການຄວາມຊ່ວຍເຫຼືອ, ນີ້ແມ່ນລາຍຊື່ອົງການຈັດຕັ້ງທີ່ສາມາດໃຫ້ການສະໜັບສະໜູນ ຫລື ຊ່ວຍເຫຼືອ, ໃຫ້ຄຳແນະນຳດ້ານກົດໝາຍ ແລະ ໃຫ້ການບໍລິການແກ່ແມ່ຍິງໃນທ້ອງຖິ່ນ. ກະລຸນຕິດຕໍ່ພົວພັນນຳເຂົາເຈົ້າ ຖ້າທ່ານ, ໝູ່ເພື່ອນຂອງທ່ານ ຫລື ພີ່ນ້ອງຂອງທ່ານຕ້ອງການຄວາມຊ່ວຍເຫຼືອ. ການບໍລິການແມ່ນບໍ່ໄດ້ຄິດໄລ່ເງິນ, ແລະ ພວກເຂົາຈະເກັບຮັກສາຂໍ້ມູນ ຂອງແຕ່ລະຄົນໄວ້ເປັນຄວາມລັບ.

| | |
|---|---|
| 1205 | ບັນທຶກເວລາສິ້ນສຸດການສຳພາດ:   ຊົ່ວໂມງ [  ][  ] (24 h) ນາທີ [  ][  ] |
| 1206 | ຖາມຜູ້ໃຫ້ສຳພາດ. ທ່ານຄິດວ່າໃນການສຳພາດຄັ້ງນີ້ແມ່ນດົນປານໃດ ? ຄວນຈະບັນທຶກຕາມການຄາດຄະເນຂອງລາວ<br>ຊົ່ວໂມງ [  ]   ນາທີ [  ][  ] |

## ຄຳເຫັນຂອງຜູ້ສຳພາດ ຫລັງຈາກສຳເລັດການສຳພາດ

________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________
________________________________________________________________________________

**ສຳລັບທາງການເທົ່ານັ້ນ:**
**1 ໂສກເສົ້າ**
**2 ດີໃຈ**
**3 ບໍ່ແຈ້ງ**
**4 ບໍ່ມີຫຍັງໃນບັດ**
**5 ບໍ່ມີບັດ**

<u>ເອກະສານອ້າງອີງ</u> (ຈະຖືກນຳໃຊ້ ໃນຄຳຖາມຄວາມຮຸນແຮງສຳລັບແມ່ຍິງທຸກຄົນທີ່ເຄີຍມີຄົນຮັກ ໃນປະຈຸບັນ ຫລື ໃນອາດີດຜ່ານມາ)

**ຫ້ອງ A. ສະພາບສົມລົດ**

| ກວດຄືນຄຳຖາມ 119 ແລະ 120a. ປະຕິບັດຕາມລູກສອນ ແລະ ເຮັດເຄື່ອງໝາຍບອກພຽງໜຶ່ງຢ່າງເພື່ອຕິດຕາມສະຖານະພາບການສົມລົດ: | | | |
|---|---|---|---|
| 119 | ປະຈຸບັນທ່ານແຕ່ງງານແລ້ວບໍ່, ຢູ່ຮ່ວມກັນ ຫລື ມີຄວາມສຳພັນທາງຊູ້ສາວກັບຜູ້ຊາຍ ໂດຍບໍ່ໄດ້ຢູ່ຮ່ວມກັນ? | ປະຈຸບັນແຕ່ງ ແລະ ອາໃສຢູ່ຮ່ວມກັນ....................................1<br>ປະຈຸບັນແຕ່ງງານບໍ່ໄດ້ຢູ່ຮ່ວມກັນ ........................................2<br>ຢູ່ກັບຜູ້ຊາຍ, ບໍ່ໄດ້ແຕ່ງງານ.................................................3<br>ປະຈຸບັນກຳລັງມີແຟນ (ຄູ່ໝັ້ນ, ຄູ່ຮ່ວມນອນ),<br>ບໍ່ໄດ້ອາໃສຢູ່ນຳກັນ ......................................................4<br>ປະຈຸບັນບໍ່ໄດ້ແຕ່ງງານ ຫລື ອາໃສຢູ່ນຳຜູ້ຊາຍ<br>(ບໍ່ເຄີຍມີຄົບຫາກັບຜູ້ຊາຍ).............................................5<br>ປະຈຸບັນມີຄົນຮັກຮ່ວມແມ່ຍິງ ..........................................6 | [ ] ປະຈຸບັນແຕ່ງງານ ແລະ/ຫລືອາໃສຢູ່ນຳຜູ້ຊາຍ **(K)** (← 1, 2, 3)<br>[ ] ປະຈຸບັນແມ່ນມີເພດສຳພັນກັບຄູ່ຮ່ວມນອນເປັນປົກກະຕິ (ຄູ່ໝັ້ນ) **(L)** (← 4) |
| 120a | ທ່ານເຄີຍແຕ່ງງານ ຫລື ຢູ່ຮ່ວມກັບຜູ້ຊາຍມາກ່ອນບໍ່? | ແມ່ນ, ເຄີຍແຕ່ງງານ ......................................................1<br>ເຄີຍຢູ່ຮ່ວມກັບຄູ່ຮ່ວມນອນຜູ້ຊາຍ, ບໍ່ໄດ້ແຕ່ງງານ.....................3<br>ບໍ່ເຄີຍແຕ່ງງານ ..........................................................5 | [ ] ເຄີຍແຕ່ງງານມາ/ເຄີຍອາໃສຢູ່ຮ່ວມກັບຄູ່ຮ່ວມນອນຜູ້ຊາຍ (ບໍ່ໄດ້ມີຄວາມສຳພັນທາງດ້ານຊູ້ສາວໃນປະຈຸບັນ) **(M1)** (← 1, 3) |
| 120b | ທ່ານເຄີຍມີເພດສຳພັນກັບຜູ້ຊາຍແຕ່ບໍ່ໄດ້ຢູ່ນຳກັນ (ເຊັ່ນວ່າ: ຄູ່ໝັ້ນ ຫລື ຄົບຫາກັນເປັນແຟນ ຫລື ຄູ່ຮັກ)? | ເຄີຍ..............................................................**1**<br>ບໍ່ເຄີຍ...........................................................**2** | [ ] ເຄີຍມີເພດສຳພັນ **(M2)** (← 1)<br>[ ] ບໍ່ເຄີຍແຕ່ງງານ /ບໍ່ເຄີຍຢູ່ຮ່ວມກັບຜູ້ຊາຍ(ບໍ່ເຄີຍມີເພດສຳພັນໃນປະຈຸບັນ ຫລື ໃນອາດີດ) **(N)** (← 2) |
| **123.** | ຈຳນວນຄັ້ງທີ່ແຕ່ງງານ/ທີ່ອາໃສຢູ່ຮ່ວມກັບຜູ້ຊາຍ: | | [ ][ ] **(O)** |

**ຫ້ອງ B. ປະຫວັດດ້ານການຈະເລີນພັນ**

<u>ກວດຄືນ ທຸກໆຄຳຕອບສຳລັບປະຫວັດການຈະເລີນພັນຂອງຜູ້ໃຫ້ສຳພາດ:</u>

**(P)** ຜູ້ໃຫ້ສຳພາດເຄີຍຖືພາຢ່າງໜ້ອຍໜຶ່ງຄັ້ງ (ຄຳຖາມ 308, 1 ຫລື ຫລາຍກວ່ານັ້ນ) [ ] ແມ່ນ [ ] ບໍ່ແມ່ນ

**(Q)** ຜູ້ໃຫ້ສຳພາດເຄີຍເກີດລູກທີ່ມີຊີວິດຢ່າງໜ້ອຍໜຶ່ງຄັ້ງ (ຄຳຖາມ 301, 1 ຫລືຫລາຍກວ່ານັ້ນ) [ ] ແມ່ນ [ ] ບໍ່ແມ່ນ

**(R)** ຜູ້ໃຫ້ສຳພາດເກີດລູກທີ່ຍັງມີຊີວິດຢູ່ (ຄຳຖາມ 303, 1 ຫລື ຫລາຍກວ່ານັ້ນ) [ ] ແມ່ນ [ ] ບໍ່ແມ່ນ

**(S)** ຜູ້ໃຫ້ສຳພາດກຳລັງຖືພາ (ຄຳຖາມ 310, ຕົວເລືອກ 1) [ ] ແມ່ນ [ ] ບໍ່ແມ່ນ

**(T)** ຈຳນວນຄັ້ງຂອງການຖືພາທີ່ລາຍງານ (ຄຳຖາມ 308): [ ]ແມ່ນ [ ]ບໍ່ແມ່ນ

**ຫ້ອງ C. ຄວາມຮຸນແຮງໂດຍຄູ່ຮ່ວມນອນ**

<u>ກວດຄືນ ຫລັງຈາກສຳເລັດການສຳພາດ:</u>

**(U)** ຜູ້ໃຫ້ສຳພາດທີ່ເຄີຍຕົກເປັນເຫຍື່ອກ່ຽວກັບການໃຊ້ຄວາມຮຸນແຮງທາງຮ່າງກາຍ (ຄຳຖາມ 707) [ ] ແມ່ນ [ ] ບໍ່ແມ່ນ

**(V)** ຜູ້ໃຫ້ສຳພາດທີ່ເຄີຍຕົກເປັນເຫຍື່ອກ່ຽວກັບການໃຊ້ຄວາມຮຸນແຮງທາງເພດ (ຄຳຖາມ 708) [ ] ແມ່ນ [ ] ບໍ່ແມ່ນ

# ເອກະສານຊ້ອນທ້າຍ III.

# ຄຳແນະນຳການສຳພາດທາງດ້ານຄຸນນະພາບ (IDI, FGD, KII)

## ການສຳພາດລົງເລິກ (ເຈາະຈົ້ມ) (ຜູ້ຍິງທີ່ເຄີຍຖືກຄວາມຮຸນແຮງ)

**ລະຫັດສຳລັບການບັນທຶກເທບ-------------------------------------- ວັນທີເດືອນປີ: ---------------------------**

**ສະຖານທີ່-------------------------------------- ຜູ້ສຳພາດ: --------------------------------------**

**ຈຸດປະສົງ:**

**ເພື່ອຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບ:**

- ບັນຫາຫຼັກທີ່ແມ່ຍິງ ແລະ ຜູ້ຊາຍປະເຊີນໜ້າໃນຄອບຄົວ;
- ຄວາມຮັບຮູ້ກ່ຽວກັບປະສົບການໃນຊີວິດທີ່ຖືກຄວາມຮຸນແຮງທີ່ເກີດຂຶ້ນ ແລະ ສາເຫດຂອງມັນ;
- ສະຖານະການທີ່ແຕກຕ່າງກັນຂອງຄວາມຮຸນແຮງທີ່ເກີດຂຶ້ນສາມາດຍອມຮັບໄດ້ ແລະບໍ່ສາມາດຍອມຮັບໄດ້;
- ຜົນສະທ້ອນຂອງຄວາມຮຸນແຮງໃນຄອບຄົວຕໍ່ແມ່ຍິງ, ຄອບຄົວຂອງພວກເຂົາເຈົ້າ ແລະຊຸມຊົນ;
- ລະບົບການໄກ່ເກ່ຍ ແລະການຊ່ວຍເຫຼືອ, ໜ່ວຍງານທີ່ຮັບຜິດຊອບໃນຊຸມຊົນບ່ອນທີ່ຜູ່ຖືກເຄາະຮ້າຍດຳລົງຊີວິດຢູ່;
- ການໃຫ້ຄຳແນະນຳ ແລະວິທີທາງໄປສູ່ການແກ້ໄຂສະຖານະການ(ບັນຫາ)ໃນການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

**ເວລາ:** 60-90 ນາທີ

**ການແນະນຳ**

ຂໍຂອບໃຈສຳລັບການເຂົ້າຮ່ວມໃນມື້ນີ້. ຊື່ຂອງຂ້ອຍແມ່ນ.............ມາຈາກສະຖາບັນເບີເນັດ. ພວກເຮົາກຳລັງດຳເນີນການຄົ້ນຄ້ວາກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ພວກເຮົາໄດ້ເຊີນໃຫ້ພວກທ່ານມາໃນມື້ນີ້ເພື່ອຢາກຮຽນຮູ້ກ່ຽວກັບປະສົບການຂອງພວກທ່ານ, ພ້ອມທັງຄຳແນະນຳ ຫຼືຄຳຄິດເຫັນຂອງທ່ານ ເຮັດແນວໃດເພື່ອໃຫ້ພວກເຮົາສາມາດຊ່ວຍເຫຼືອຜູ່ຍິງທີ່ຕົກຢູ່ໃນສະຖານະການຄືຕົວຂອງທ່ານເຄີຍພົບພໍ້ຜ່ານມາ.

ທຸກຂໍ້ມູນທີ່ທ່ານແບ່ງປັນໃຫ້ແມ່ນມີຄຸນຄ່າທີ່ສຸດແລະຈະຖືກຮັກສາເປັນຄວາມລັບຢ່າງດີ. ທ່ານມີສິດທີ່ຈະຢຸດຕິຫຼືບໍ່ຕອບຄຳຖາມຂອງການສຳພາດໄດ້ໃນທຸກໆຈຸດ, ທຸກເວລາຂອງການສຳພາດທີ່ພວກເຮົາໄດ້ຖາມທ່ານ. ຂ້າພະເຈົ້າຈະບໍ່ໄດ້ໃສ່ຊື່ຂອງທ່ານໃນການສຳພາດນີ້.

ຄຳຕອບຂອງທ່ານແມ່ນຈະຊ່ວຍໃຫ້ລັດຖະບານສາມາດເຫັນສະພາບຂອງບັນຫາທີ່ທ່ານໄດ້ພົບພໍ້ຢູ່ ແລະຈະນຳໄປປັບປຸງ ຍົກລະດັບການໃຫ້ການຊ່ວຍເຫຼືອ ແລະ ການບໍລິການທີ່ດີຂຶ້ນກວ່າເກົ່າຕໍ່ຜູ່ຍິງ. ອີກເທື່ອໜຶ່ງຂ້າພະເຈົ້າຢາກຈະຂໍໃຫ້ທ່ານເຊື່ອໝັ້ນວ່າທຸກໆສິ່ງທີ່ທ່ານເລົ່າມານີ້ແມ່ນຈະຖືກຮັກສາເປັນຄວາມລັບ.

ເຫັນດີທີ່ຈະໃຫ້ສຳພາດບໍ? ບັນທຶກການຕອບຮັບເຫັນດີ/ບໍ່ເຫັນດີ

ຖ້າຫາກວ່າທ່ານບໍ່ວ່າຫຍັງ, ພວກເຮົາຢາກຂໍອະນຸຍາດບັນທຶກສຽງໃນການສົນທະນາຂອງພວກເຮົາ.ນີ້ແມ່ນຈະຊ່ວຍໃຫ້ພວກເຮົາບັນທຶກສຽງທີ່ໄດ້ເວົ້າຫຍັງແດ່. ເທບສຽງຈະບໍ່ໄດ້ຖືກເປີດໃຫ້ຄົນອື່ນຟັງ. ພາຍຫຼັງທີ່ຂ້ອຍບັນທຶກຂໍ້ຄວາມສົນທະນາຈາກເທບໃສ່ປຶ້ມບັນທຶກແລ້ວ ກໍ່ຈະລຶບຂໍ້ຄວາມດັ່ງກ່າວຖິ້ມ.ຖ້າຫາກວ່າທ່ານບໍ່ຕ້ອງການຫຼືບໍ່ເຫັນດີໃຫ້ມີການບັນທຶກເທບສຽງໃນເວລາທີ່ມີການສຳພາດຂ້າພະເຈົ້າກໍຈະຈົດບັນທຶກເອົາກໍໄດ້.

ທ່ານອະນຸຍາດໃຫ້ພວກເຮົາບັນທຶກເທບອັດສຽງຂອງການສົນທະນາພວກເຮົານີ້ຫຼືບໍ? ບັນທຶກການຕອບຮັບ ອະນຸຍາດ/ບໍ່ອະນຸຍາດ

ຂອບໃຈ

ຄຳເຫັນໃນການສົນທະນາຈະຖືວ່າສົມບູນພາຍຫຼັງການສຳພາດສິ້ນສຸດ

**ຄຳຖາມຫຼັກ**

**1. ຂໍ້ມູນທົ່ວໄປກ່ຽວກັບສ່ວນຕົວບຸກຄົນ**

- ບອກໃຫ້ຟັງແດ່ກ່ຽວກັບຕົວຂອງທ່ານເອງໄດ້ບໍ່?

- ອາຍຸຈັກປີແລ້ວ?
- ເກີດຢູ່ໃສ? ປັດຈຸບັນຢູ່ໃສ?
- ການສຶກສາ? ທ່ານຮຽນຮອດຊັ້ນໃດ?
- ເຈົ້າເຮັດວຽກຫຍັງ? ໄດ້ມີວຽກເຮັດ(ເປັນພະນັກງານລັດ ຫຼື ເອກະຊົນ....), ເຮັດວຽກຕົນເອງຫຼືຫວ່າງວຽກ(ບໍ່ມີວຽກເຮັດ)ຫຼື ເປັນແມ່ເຮືອນ?
- ທ່ານມີລູກບໍ? ມີຈັກຄົນ, ເປັນຍິງຈັກຄົນ, ອາຍຸເທົ່າໃດ, ຊາຍຈັກຄົນ, ອາຍຸເທົ່າໃດ.
- ກ່ຽວກັບສາມີ/ຜົວ, ພົບກັບລາວໄດ້ແນວໃດ? ລາວອາຍຸເທົ່າໃດ? ລາວເຮັດວຽກກ່ຽວກັບຫຍັງ? ທ່ານແຕ່ງດອງ ຫຼືອາໃສຢູ່ກັບລາວໄດ້ດົນປານໃດແລ້ວ?

**2. ທັດສະນະກ່ຽວກັບປະສົບການຂອງການຖືກຄວາມຮຸນແຮງ**

2.1 ເລົ່າໃຫ້ຂ້ອຍຟັງໄດ້ບໍ່ກ່ຽວກັບການພົວພັນຂອງເຈົ້າ ແລະ ສາມີ/ຜົວ? ຂ້ອຍຢາກໃຫ້ເຈົ້າເລົ່າເຫດການທີ່ເກີດຂຶ້ນ **ລ້າສຸດ** ທີ່ຜົວຂອງເຈົ້າຕີ ຫຼື ປ້ອຍດ່າເຈົ້າ

**ເຈາະຈີ້ມ** ກ່ອນເກີດເລື່ອງ ລ້າສຸດ

- ເຈົ້າຢູ່ໃສ? ແລະ ເຈົ້າກຳລັງເຮັດຫຍັງຢູ່?
- ຜົວເຈົ້າເດ ເຮັດຫຍັງ?
- ມີຫຍັງເກີດຂຶ້ນ? ເຫດການນັ້ນເປັນແນວໃດ?
- ເຈົ້າຄິດວ່າແມ່ນຫຍັງເປັນສາເຫດທີ່ພາໃຫ້ເກີດຄວາມຮຸນແຮງ? (ຕໍ່ຮ່າງກາຍ, ທາງເພດ ຫຼື ຈິດໃຈ/ດ່າຫຼືຜິດກັນ)?

ຫຼັງເກີດເລື່ອງ ລ້າສຸດ

- ຫຼັງເກີດເຫດການນັ້ນແລ້ວເປັນແນວໃດ?
- ເຈົ້າເຮັດຫຍັງ?
- ລາວເດເຮັດຫຍັງ?
- ເຈົ້າຮູ້ສຶກແນວໃດ?
- ເຈົ້າຄິດວ່າຜົວເຈົ້າມີຄວາມຮູ້ສຶກແນວໃດ?
- ມີເຫດການຫຍັງແດ່ທີ່ເກີດຂຶ້ນຫຼັງຈາກນັ້ນ?

ເຫດການຄວາມຮຸນແຮງແບບນີ້ທີ່ເກີດຂຶ້ນເທື່ອທຳອິດ:

- ເຫດການຄວາມຮຸນແຮງແບບນີ້ເກີດຂຶ້ນເທື່ອທຳອິດຕອນໃດ?
- ມີເຫດການຫຍັງແດ່ທີ່ເກີດຂຶ້ນໃນຕອນນັ້ນ?

ເຫດການຄວາມຮຸນແຮງຕະຫຼອດເວລາຄວາມສຳພັນຜົວເມຍ:

- ເຫດການຄວາມຮຸນແຮງນັ້ນເກີດຂຶ້ນເລື້ອຍປານໃດ?
- ເຈົ້າເລີຍຮູ້ສຶກຢ້ານວ່າຈະຄວາມຮຸນແຮງນັ້ນຈະມີຄວາມຮຸນແຮງຈົນເຮັດໃຫ້ເຈົ້າເຈັບເປັນຢ່າງຮຸ່ນແຮງ ຫຼື ເສຍຊີວິດບໍ່?
- ເຈົ້າຮູ້ສຶກຢ້ານຜົວຕະຫຼອດເວລາບໍ່?

2.2 ປະສົບການຄວາມຮຸນແຮງນັ້ນໄດ້ມີຜົນກະທົບແນວໃດແດ່ຕໍ່ຊີວິດຂອງເຈົ້າ?

**ເຈາະຈີ້ມ** ຄວາມສຳພັນຜົວເມຍ
ສຸຂະພາບ ຮ່າງກາຍ ແລະ ຈິດໃຈ?
ຄວາມໝັ້ນໃຈຂອງຕົນເອງ
ວຽກໃນຄົວເຮືອນ ແລະ ໜ້າທີ່ວຽກງານ
ລູກ ແລະ ສະມາຊິກຄົນອື່ນໆໃນຄອບຄົວ
ຊີວິດສ່ວນຕົວ ແລະ ເວລາສ່ວນຕົວ, ແລະ ໝູ່ຄູ

2.3 ເຈົ້າຄິດວ່າສາເຫດຄວາມຮຸນແຮງທີ່ເກີດຂຶ້ນ ໂດຍສະເພາະລະຫ່ວາງຄູ່ຜົວເມຍ ຫຼືຄົນໃນຄອບຄົວດຽວກັນນັ້ນ ເກີດຂຶ້ນຍ້ອນຫຍັງ?

2.4 ເຫດການແນວໃດແດ່ທີ່ເຈົ້າຄິດວ່າເປັນຄວາມຮຸນແຮງສຳຫຼັບເຈົ້າ? ເຫດການຮ້າຍແຮງທີ່ສຸດທີ່ເຈົ້າພົບພໍ້ເປັນແບບໃດ? ເຈົ້າສາມາດເຫຼົ່າໃຫ້ຂ້ອຍຟັງໄດ້ບໍ່?

**3. ການຕອບໂຕ້ຕໍ່ການໃຊ້ຄວາມຮຸນແຮງ**

3.1 ເຈົ້າເຮັດແນວໃດເມື່ອບັນຫາຄວາມຮຸນແຮງເກີດຂຶ້ນ? ເຈົ້າແກ້ໄຂມັນແນວໃດ?

ເຈາະຈີ້ມ: ເຈົ້າໄດ້ລົມໃຫ້ໃຜຟັງບໍ່?
ຖ້າລົມ, ຜູ້ນັ້ນໄດ້ຊ່ວຍເຈົ້າບໍ່? ຊ່ວຍແນວໃດ?
ຖ້າບໍ່ໄດ້ລົມໃຫ້ໃຜຟັງຍ້ອນຫຍັງ?
ເຈົ້າເຄີຍໄດ້ລົມບັນຫາໃຫ້ຄົນອື່ນຟັງນອກຈາກຄົນໃນຄອບຄົວຫຼືໝູ່ເພື່ອນຂອງທ່ານບໍ? (ສະມາຄົມແມ່ຍິງ, ຕຳຫຼວດ, ພະນັກງານສາທາ, ໂຮງໝໍ ແລະ ອື່ນໆ)
ເຈົ້າໄດ້ເລົ່າໃຫ້ບຸກຄົນນັ້ນຟັງເອງບໍ່ ຫຼື ພວກເຂົາເຈົ້າເຂົ້າມາຖາມເຈົ້າເອງ ວ່າເຈົ້າມີບັນຫາຄອບຄົວຫຼືບໍ່?
ຖ້າໄດ້ລົມ,ພວກເຂົາຊ່ວຍໄດ້ຫຼາຍບໍ່? ແລະ ໄດ້ຕາມຄວາມຮຽກຮ້ອງຂອງເຈົ້າບໍ?
ເຈົ້າຄິດວ່າມີຫຍັງບໍ່ ທີ່ສາມາດເຮັດໃຫ້ຜົວເຈົ້າປ່ຽນພຶດຕິກຳຂອງລາວ?
ເຈົ້າອົດທົນກັບຄວາມຮຸນແຮງນັ້ນດົນປານໃດຈິນກ່ວາເຈົ້າຕັດສິນໃຈເລົ່າໃຫ້ໃຜຟັງ?
ສາເຫດຫຍັງທີ່ພາໃຫ້ເຈົ້າຕັດສິນໃຈເລົ່າໃຫ້ຄົນອື່ນຟັງ?

**4. ການໃຫ້ຄຳແນະນຳ**

4.1 ທ່ານຈະໃຫ້ຄຳແນະນຳແນວໃດແດ່ຕໍ່ຜູ່ຍິງຄົນອື່ນໆທີ່ຖືກທາລຸນ ຫຼືໃຊ້ຄວາມຮຸນແຮງຈາກຄູ່ຮັກຫຼື ຜົວ?

4.2 ມີລະບົບການສະໜັບສະໜູນຊ່ວຍເຫຼືອ ສໍາລັບຜູ່ຕົກເປັນເຫຍື່ອຂອງການໃຊ້ຄວາມຮຸນແຮງໃນຊຸມຊົນຂອງເຈົ້າບໍ່? ຖ້າມີ ເຈົ້າມີຄວາມຄາດຫວັງໃຫ້ພວກເຂົາເຮັດຫຍັງແດ່ເພື່ອຊ່ວຍຕົວເຈົ້າເອງ ແລະຜູ່ຍິງອື່ນໆທີ່ຕົກຢູ່ໃນສະຖານະການຄ້າຍຄືກັນນີ້?

4.3 ທ່ານຮູ້ຈັກກົດໝາຍວ່າດ້ວຍການພັດທະນາ ແລະປົກປ້ອງແມ່ຍິງ ເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວຊຶ່ງຮັບຮອງເອົາໃນປີ 2004 ບໍ? ເຈົ້າຄິດວ່າກົດໝາຍນີ້ຈະຊ່ວຍປ້ອງກັນ ການໃຊ້ຄວາມຮຸນແຮງຕໍ່ຜູ່ຍິງຫຼືບໍ່? ຖ້າມີ ເຮັດແນວໃດ? ຖ້າບໍ່ມີ ເປັນຍ້ອນຫຍັງ?

4.4 ເຈົ້າພໍໃຈກັບຜົນທີ່ໄດ້ຮັບ ຈາກຄວາມຊ່ວຍເຫຼືອຂອງພາກສ່ວນຕ່າງໆ ຕໍ່ການແກ້ໄຂສະພາບຄວາມແຮງພາຍໃນຄອບຄົວຂອງເຈົ້າບໍ່? (ຖ້າວ່າລາວໄດ້ແຈ້ງແລະ ຮ້ອງຂໍຄວາມຊ່ວຍເຫຼືອຈາກພາກສ່ວນຕ່າງໆ)

4.5 ຖ້າພໍໃຈ, ຍ້ອນຫຍັງ? ຖ້າຮູ້ວ່າຜົນຈະອອກມາເປັນແບບນີ້ເຈົ້າຈະຊອກຫາຄວາມຊ່ວຍເຫຼືອໄວກ່ວານີ້ບໍ່?

4.6 ຖ້າບໍພໍໃຈ, ຍ້ອນຫຍັງ? ເຈົ້າຢາກເຫັນການປ່ຽນແປງດ້ານໃດແດ່ເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງເຈົ້າຕໍ່ການຊ່ວຍເຫຼືອດ້ານການໃຊ້ຄວາມແຮງພາຍໃນຄອບຄົວ?

**ສະຫຼຸບ:**

ຂໍສະແດງຄວາມຂອບໃຈໃນການມີສ່ວນຮ່ວມແລກປ່ຽນນຳຂ້າພະເຈົ້າ. ຂ້າພະເຈົ້າເຫັນໃຈຕໍ່ຄຳຖາມທີ່ມີຄວາມຫຍຸ້ງຍາກຫຼາຍ,ແລະຂອບໃຈຕໍ່ການໃຫ້ການຮ່ວມມືໃນຄັ້ງນີ້. ສິ່ງທີ່ທ່ານໄດ້ເລົ່າຕໍ່ພວກເຮົານັ້ນແມ່ນມີຄວາມສຳຄັນຫຼາຍ ແລະຈະເປັນສິ່ງທີ່ຊ່ວຍພວກເຮົາໃນການເຮັດວຽກການແກ້ໄຂບັນຫາເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ເພດຍິງ.

- ໃຫ້ລາຍລະອຽດເພື່ອຕິດຕາມ ການໃຫ້ຄຳປຶກສາແນະນຳ, ການຊ່ວຍເຫຼືອ ແບບຮີບດ່ວຍ ແລະ ພາຍຫຼັງ;
- ໃຫ້ລາຍລະອຽດຂໍ້ມູນທົ່ວໄປກ່ຽວກັບການບໍລິການທີ່ມີໃນຊຸມຊົນ.

## ຄຳຖາມສົນທະນາກຸ່ມ

## (ສຳລັບກຸ່ມຍິງ ແລະກຸ່ມຊາຍ)

**ລະຫັດສຳລັບການບັນທຶກເທບ-------------------------------------- ວັນທີເດືອນປີ: --------------------------------------**

**ສະຖານທີ່: --------------------------------------**

**ຈຳນວນຜູ້ເຂົ້າຮ່ວມ: --------------------------------------**

**ລະດັບອາຍຸຂອງຜູ້ເຂົ້າຮ່ວມ: ຜູ້ອາວຸໂສ, ແຕ່ງດອງແລ້ວ, ຜະສົມ(ຄວາມເປັນມາທາງດ້ານເສດຖະກິດ-ສັງຄົມ)**

**ຈຸດປະສົງ:**

ຄັດເລືອກເອົາ 6-8 ຄົນທີ່ມີທີ່ມາແຕກຕ່າງກັນທາງດ້ານປະສົບການ ເພື່ອມາແລກປ່ຽນຄວາມຄິດ ແລະພຶດຕິກຳທີ່ກ່ຽວຂ້ອງກັບຫົວຂໍ້ການສຳຫຼວດ ເຊິ່ງຜູ້ເຂົ້າຮ່ວມບໍ່ໄດ້ຄັດເລືອກວ່າມີຄວາມຮູ້ພື້ນຖານຕໍ່ກັບຄວາມຮຸນແຮງຕໍ່ແມ່ຍິງຫຼືບໍ່ ແລະ ບໍ່ໄດ້ເຂົ້າຮ່ວມເພື່ອໃຫ້ໄດ້ເລື່ອງ (ຮັບຮູ້) ປະສົບການຄວາມຮຸນແຮງຂອງຜູ້ໃດ, ການສົນທະນາແມ່ນເພື່ອຢາກຮູ້ທັດສະນະຄະຕິ ແລະ ຄວາມເຊື່ອຂອງແມ່ຍິງແລະຜູ້ຊາຍກ່ຽວກັບຄວາມຮຸນແຮງ ເຊັ່ນ:

- ບັນຫາຫຼັກທີ່ ແມ່ຍິງແລະຜູ່ຊາຍປະເຊີນ, ບົດບາດ ແລະ ພາບພົດຂອງເພດຍິງແລະເພດຊາຍ.
- ທັດສະນະຄະຕິຕາມແຕ່ລະສະຖານທີ່ບ່ອນທີ່ຄວາມຮຸນແຮງເກີດຂຶ້ນ, ການຮັບຮູ້ຕໍ່ສາຍເຫດທີ່ພາໃຫ້ເກີດຄວາມຮຸນແຮງດັ່ງກ່າວ.
- ສະຖານະການບ່ອນທີ່ມີການໃຊ້ຄວາມຮຸນແຮງທີ່ແຕກຕ່າງກັນທີ່ຍອມຮັບໄດ້ ຫຼື ບໍ່ສາມາດຍອມຮັບໄດ້.
- ສະຖານະການທີ່ມີສະມາຊິກຄອບຄົວເຂົ້າມາກ່ຽວຂ້ອງ, ເພື່ອນບ້ານຫຼືໝູ່ເພື່ອນມາກ່ຽວຂ້ອງຢ່າງເໝາະສົມ.
- ຜົນສະທ້ອນຂອງການໃຊ້ຄວາມຮຸນແຮງທີ່ມີຕໍ່ແມ່ຍິງ, ຕໍ່ຄອບຄົວຂອງພວກເຂົາເຈົ້າ ແລະຊຸມຊົນ
- ທັດສະນະຄະຕິທີ່ວ່າຄວາມຮຸນແຮງໃນຄອບຄົວແມ່ນບັນຫາທີ່ສຳຄັນຕໍ່ສຸຂະພາບແມ່ຍິງ, ກໍ່ຄືບັນຫາທີ່ຜູ່ຊາຍກັງວົນ ຫຼື ເປັນບັນຫາຂອງຄອບຄົວ
- ສະແດງໃຫ້ເຫັນເຖິງທັດສະນະຄະຕິ ແລະວິທີການຕອບໂຕ້ຂອງຂອງຊຸມຊົນຕໍ່ຄວາມຮຸນແຮງ
- ປະເມີນລະບົບການຊ່ວຍເຫຼືອ ແລະການບໍລິການສຳລັບຜູ່ຍິງທີ່ໄດ້ເປີດເຜີຍຕໍ່ຄວາມຮຸນແຮງໃນປັດຈຸບັນ

**ເວລາ:** 90 ນາທີ

**ອຸປະກອນ:** ເຈ້ຍແຜ່ນໃຫຍ່, ບິກຂຽນເຈ້ຍແຜ່ນໃຫຍ່

**ການແນະນຳ:**

ຂໍຂອບໃຈສຳລັບການເຂົ້າຮ່ວມໃນມື້ນີ້. ຂ້າພະເຈົ້າຊື່.............ມາຈາກສະຖາບັນເບີເນັດ. ພວກເຮົາກຳລັງເຮັດການດຳເນີນການຄົ້ນຄວ້າກ່ຽວກັບບັນຫາຄອບຄົວ ແລະວິທີແກ້ໄຂທີ່ອາດເປັນໄປໄດ້. ພວກເຮົາໄດ້ເຊີນໃຫ້ພວກທ່ານມາໃນມື້ນີ້ເພື່ອປຶກສາຫາລືໃນປະເດັນນີ້ກັບບັນດາທ່ານ. ຄວາມຄິດເຫັນ ແລະ ຄຳຕອບຂອງທ່ານຈະໄດ້ຖືກນຳໃຊ້ເພື່ອຊ່ວຍສ້າງຄູ່ມື ແລະ ປັບປຸງລະບົບການໃຫ້ການບໍລິການ ເພື່ອຊ່ວຍແກ້ໄຂບັນຫາຄອບຄົວເປັນຕົ້ນແມ່ນ ບັນຫາຄວາມສຳພັນ ແລະ ການຜິດຖຽງກັນ ເຊິ່ງຜູ້ຍິງກຳລັງພົບພໍ້ໃນປະຈຸບັນ.

ທຸກການປຶກສາຫາລື/ການສົນທະນາໃນມື້ນີ້ຈະຖືກຮັກສາໃຫ້ເປັນຄວາມລັບ. ພວກເຮົາຈະເຮັດເປັນບົດລາຍງານກ່ຽວກັບສິ່ງທີ່ຄົ້ນພົບຂອງພວກເຮົາ, ແຕ່ພວກເຮົາຈະບໍ່ເປີດເຜີຍຊື່ຂອງທ່ານຖ້າພວກເຮົາເອົາຄຳເວົ້າຂອງທ່ານມາອ້າງອີງ.

ຖ້າຫາກວ່າທ່ານບໍ່ມີຄຳຖາມຍັງ, ພວກເຮົາຂໍອະນຸຍາດບັນທຶກສຽງການສົນທະນາໃນຄັ້ງນີ້ ເພື່ອຊ່ວຍໃຫ້ພວກເຮົາບັນທຶກສິ່ງທີ່ເວົ້າມາທັງໝົດ. ເທບສຽງນີ້ຈະບໍ່ໄດ້ເປີດໃຫ້ຄົນອື່ນຟັງເດັດຂາດ. ພາຍຫຼັງທີ່ພວກເຮົາບັນທຶກທຸກຄຳເວົ້າໃນເທບລົງໃສ່ປຶ້ມບັນທຶກແລ້ວ, ພວກເຮົາຈະລຶບຂໍ້ຄວາມ ໃນເທບນີ້ຖິ້ມໝົດ.

ທຸກຄົນຍິນດີຈະເຂົ້າຮ່ວມໃນການສົນທະນານີ້ບໍ່? ບັນທຶກການຕອບຮັບ ເຫັນດີ/ບໍ່ເຫັນດີ

ມີໃຜແດ່ບໍທີ່ບໍ່ຕ້ອງການເຂົ້າຮ່ວມສົນທະນານີ້? ບັນທຶກຖ້າມີຜູ່ໃດໜຶ່ງ ປະຕິເສດບໍ່ເຂົ້າຮ່ວມ

ຂໍຂອບໃຈ

ພວກເຮົາຫວັງວ່າທ່ານຈະວ່າງຕົວຕາມສະບາຍ ແລະ ປະກອບຄໍາຄິດຄໍາເຫັນຢ່າງເປັນກັນເອງ. ບໍ່ມີຄໍາຕອບທີ່ຖືກ ຫຼື ຜິດ, ແຕ່ພວກເຮົາຢາກຈະໄດ້ຍິນຄໍາຄິດເຫັນທີ່ແທ້ຈິງຂອງທ່ານກ່ຽວກັບບັນຫານີ້. ທຸກຄໍາຄິດເຫັນຂອງທ່ານແມ່ນຈະຮັກສາເປັນຄວາມລັບ.

ຈົດບັນທຶກກ່ຽວກັບຄວາມເປັນມາຂອງຜູ່ເຂົ້າຮ່ວມ ແລະຄໍາເຫັນໃນການສົນທະນາ

ຈະຕ້ອງໃຫ້ສໍາເລັດພາຍຫຼັງການສໍາພາດ

**25.ອຸ່ນເຄື່ອງ**

- ກິດຈະກໍາສ້າງຄວາມລຶ້ງເຄີຍລະຫວ່າງຜູ້ເຂົ້າຮ່ວມ ແລະ ທີມງານ
- ສະມາຊິກ ແລະ ຜູ້ເຂົ້າຮ່ວມແນະນໍາຕົນເອງ (ເວົ້າເຣື່ອງຄອບຄົວຂອງທ່ານ, ວຽກງານ ແລະສິ່ງໃດທີ່ທ່ານມັກເຮັດ)
- ຄໍາຖາມກະຕຸ້ນ: ໃນປັດຈຸບັນນີ້, ບັນຫາໃຫ່ຍທີ່ພົບພໍ້ພາຍໃນຄອບຄົວ ມີຫຍັງແດ່?

**26.ອ່ານເລື່ອງ ແລະ ລະບຽບ**

ຂ້າພະເຈົ້າຢາກເລີ່ມການສົນທະນາຂອງພວກເຮົາ ໂດຍອ່ານເລື່ອງໃຫ້ຟັງ, ນິທານນີ້ເປັນພຽງຕົວຢ່າງເພື່ອ ໃຫ້ພວກທ່ານຈິນຕະນາການວ່າເປັນເຫດການຈິງ ທີ່ເກີດຂຶ້ນລະຫວ່າງຜົວ ກັບ ເມັຍ.

**ອ່ານເລື່ອງໃຫ້ກຸ່ມຟັງ:**

*""ນາງ ສີ ອາໃສຢູ່ນໍາສາມີ/ຜົວຂອງລາວຊື່ ທ້າວ ໄຊ. ພວກເຂົາມີລູກ 2 ຄົນ ລູກຊາຍອາຍຸ 3 ປີ ແລະລູກສາວອາຍຸ 5 ປີ. ນາງ ສີຮຽນ ຈົບຊັ້ນປະຖົມປໍ 5 ແລະ ນາງ ມີຮ້ານນ້ອຍໆຂາຍຜັກຢູ່ຕະຫຼາດ, ແຕ່ປະຈຸບັນ, ບາງຄັ້ງ ນາງຮູ້ສຶກບໍ່ມ່ວນຊື່ນ ແລະ ບໍ່ມີຄວາມສຸກເລີຍ, ທ.ໄຊ(ຜົວ)ລັກມີເມຍນ້ອຍ ແລະເອົາເງິນທີ່ຫາມາໄດ້ໃຫ້ ນາງ ເມຍນ້ອຍໝົດ. ທຸກຄັ້ງທີ່ ທ້າວໄຊ ກັບມາເຮືອນ ຫຼັງຈາກທີ່ໄປຫາເມຍນ້ອຍຂອງລາວແລ້ວ, ນາງ ສີ ມັກຜິດຖຽງກັບຜົວຂອງລາວ, ແລະນັ້ນເຮັດໃຫ້ຜົວລາວໃຈຮ້າຍ ແລະທ້າວ ໄຊໄດ້ຮ້ອງສຽງດັງໃສ່ ນາງ ສີ ແລະ ບາງເທື່ອກໍຕົບຕີນາງສີຜູ້ເປັນເມຍ, ແຕ່ນາງ ສີຜູ່ເປັນເມັຍພະຍາຍາມເວົ້າໂອ້ລົມດີໆນໍາຜົວ ແຕ່ຜົວບໍ່ຢາກເວົ້າກ່ຽວກັບມັນອີກ. ຜູ່ເປັນເມັຍເກັບກົດກັບສະຖານະການແບບນີ້ມາໄດ້ 4 ປີ ແລ້ວ ແລະບໍ່ຕ້ອງການບອກໃຜ. ລາວບໍ່ຮູ້ວ່າສີເຮັດແນວໃດດີ......"*

ເອົາລະນໍ ທຸກຄົນເຂົ້າໃຈຕໍ່ສະຖານະການຂອງນາງ ສີ ແລະ ທ້າວ ໄຊບໍ? ຫຼືຢາກໃຫ້ເລົ່າອີກຮອບ

ກ່ອນພວກເຮົາຈະສົນທະນາກັນ, ພວກເຮົາຢາກເວົ້າລະບຽບການໜ້ອຍໜຶ່ງເພື່ອຄວາມສະດວກໃນການສົນທະນາ.

ຕໍ່ໄປນີ້, ຂ້າພະເຈົ້າຈະຂໍຖາມກ່ຽວກັບເລື່ອງທີ່ເລົ່າມານັ້ນ ແລະ ຢາກໃຫ້ພວກເຈົ້າຕອບຄໍາຖ່າມເລົ່ານັ້ນ. ຢາກຢໍ້າວ່າ ບໍ່ມີຄໍາຕອບທີ່ຖືກ ຫຼື ຜິດ. ຢາກໃຫ້ພວກເຮົາສົນທະນາແບບເປັນກັນເອງ ແລະ ຮັບຟັງທຸກຄໍາຄິດເຫັນຂອງທຸກຄົນໃຫ້ຫຼາຍເທົ່າທີ່ເປັນໄປໄດ້. ຖ້າວ່າມີຄໍາເຫັນໃດທີ່ທ່ານບໍ່ເຫັນດີ ຫຼື ມີຄວາມຮູ້ສຶກວ່າມັນບໍ່ຖືກຕ້ອງ, ກະລຸນນາຢ່າອາລົມເສຍ ຫຼື ໃຊ້ອາລົມ, ຢາກຂໍໃຫ້ພວກເຈົ້າຊອກຫາສາເຫດ ແລະ ເຫດຜົນວ່າເປັນຫຍັງຈຶ່ງມີຄວາມຄິດເຫັນທີ່ແຕກຕ່າງເພື່ອມາອະທິບາຍ ແລະ ເປັນຈຸດສົນທະນາຮ່ວມກັນ.

**27.ຄໍາຖາມທີ່ສໍາຄັນ**

ຜູ້ດໍາເນີນການສົນທະນາກຸ່ມໃຫ້ອະທິບາຍກ່ຽວກັບທາງເລືອກຂອງນາງສີ ແລະ ຖາມຜູ້ເຂົ້າຮ່ວມວ່າມີຄວາມຄິດເຫັນແນວໃດຕໍ່ກັບບັນຫາ ດັ່ງນີ້:

**(1) ຄໍາຖາມກ່ຽວກັບ ເລື່ອງຂອງນາງ ສີ**

1.1. ສີກໍາລັງມີບັນຫາຫຍັງຢູ່ນີ້? ແລະ ຄິດວ່າແມ່ນຫຍັງຄືສາຍເຫດຂອງບັນຫາທີ່ເກີດຂຶ້ນກັບລາວ?

1.2. ບັນຫາຂອງທ້າວໄຊເດແມ່ນຫຍັງ? ເຈົ້າຄິດວ່າຍ້ອນຫຍັງທ້າວ ໄຊ ຈຶ່ງເຮັດພຶດຕິກໍາ (ປະຕິບັດ) ຄືແນວນີ້? ແມ່ນຫຍັງທີ່ເຮັດໃຫ້ໄຊປະພຶດຄືແນວນີ້?

1.3. ບັນຫາເຫຼົ່ານີ້ມີຜົນກະທົບຕໍ່ນາງສີແນວໃດ?

**ຄໍາຖາມເຈາະຈົ້ມ** ຕໍ່ຊີວິດປະຈໍາວັນເດ?,

ຕໍ່ວຽກງານ?

ຕໍ່ສຸຂະພາບ ຮ່າງກາຍ ແລະ ຈິດໃຈ?,

ຕໍ່ລູກ?

ຕໍ່ຄວາມເຊື່ອໝັ້ນໃຈຕໍ່ຕົນເອງ?

1.4. ວິທີທີ່ທ້າວໄຊ ປະຕິບັດຕໍ່ນາງສີນັ້ນໃນຊຸມຊົນຂອງເຮົາ ຍອມຮັບໄດ້ບໍ່? ຫຼື ຮັບບໍ່ໄດ້? ຖ້າຍອມຮັບໄດ້ ຍ້ອນຫຍັງ? ແລະ ຖ້າຮັບບໍ່ໄດ້ ຍ້ອນຫຍັງ?

1.5. ຖ້າເຈົ້າເປັນເພື່ອນບ້ານຂອງ ນາງ ສີ ແລະ ເຫັນເຫດການທີ່ເກີດຂຶ້ນ ເຈົ້າຈະເຮັດຫຍັງ?

1.6. ຖ້າເຈົ້າໃກ້ສິດກັບ ທ້າວ ໄຊ, ເຈົ້າຄິດວ່າແມ່ນຫຍັງ ຫຼື ເວລາໃດທີ່ເຈົ້າຈະເຂົ້າໄປຊ່ວຍ ຫຼື ໃຫ້ຄຳແນະນຳ?

**ຖາມເຈາະຈີ້ມ** ໃນຖານະ ເປັນສະມາຊິກຄອບຄົວ, ຍາດພີ່ນ້ອງ, ເພື່ອນບ້ານ, ໝູ່ເພື່ອນ

1.8. ຖ້ານາງສີຕ້ອງການຄວາມຊ່ວຍເຫຼືອ, ນາງສາມາດຂໍການຊ່ວຍເຫຼືອຈາກຊຸມຊົນໄດ້ບໍ່? ຖ້າໄດ້, ແມ່ນໃຜ ຫຼື ອົງການ ໜ່ວຍງານໃດສາມາດຊ່ວຍເຫຼືອນາງ?

**(2) ຄຳຖາມເພີ່ມເຕີມ:**

2.1. ຕາມຄວາມຄິດ/ຄວາມເຈົ້າເຂົ້າໃຈຂອງເຈົ້າ, ນິທານຂອງນາງສີແມ່ນຄວາມຮຸນແຮງບໍ?ຍ້ອນຫຍັງຈຶ່ງແມ່ນ? ແລະ ເປັນຫຍັງບໍ່ແມ່ນ?

2.2. ຕາມຄວາມຄິດ/ຄວາມເຂົ້າໃຈຂອງເຈົ້າ, ເຫດການນີ້ແມ່ນການ ກະທຳຜິດທີ່ຮ້າຍແຮງບໍ?

2.3. ເປັນຄວາມຜິດຂອງທ້າວ ໄຊບໍ່? ເປັນຄວາມຜິດຂອງນາງສີບໍ່? ອະທິບາຍໃຫ້ຟັງແດ່?

2.4. ມີໃຜຄວນຖືກທຳໂທດບໍ່? ມີວິທີແກ້ໄຂທາງອື່ນບໍ່ຢູ່ໃນລາວ ເຮົາ?

**(3) ທ່ານຮູ້ຈັກກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງບໍ? ຊຶ່ງຮັບຮອງເອົາໃນປີ 2004? ເຈົ້າເຂົ້າໃນກ່ຽວກັບກົດໝາຍນັ້ນແນວໃດ?**

3.1. ເຈົ້າຄິດວ່າກົດໝາຍນີ້ສາມາດຊ່ວຍຫຼຸດຜ່ອນ ຫຼື ຢຸດຢັ້ງ ການໃຊ້ຄວາມຮຸນແຮງຕໍ່ຜູ້ຍິງຫຼືບໍ? ຖ້າໃດ້, ເຮັດແນວໃດ? ຖ້າບໍ່ໄດ້, ເປັນຍ້ອນຫຍັງ?

## ການສົນທະນາກຸ່ມເປົ້າໝາຍ

## (ສຳລັບຊາວໜຸ່ມ)

**ລະຫັດສຳລັບການບັນທຶກເທບ---------------------------- ວັນທີເດືອນປີ:----------------------------**

**ສະຖານທີ---------------------------- ເພດ: ຊາຍ /ຍິງ**

**ຈຳນວນຜູ່ເຂົ້າຮ່ວມ: ----------------------------**

**ລະດັບອາຍຸຂອງຜູ່ເຂົ້າຮ່ວມ: ຊາວໜຸ່ມ**

**ຈຸດປະສົງ:**

ຄັດເລືອກເອົາ 6-8 ຄົນທີ່ມີທີ່ມາແຕກຕ່າງກັນທາງດ້ານປະສົບການ ເພື່ອມາແລກປ່ຽນຄວາມຄິດ ແລະພຶດຕິກຳທີ່ກ່ຽວຂ້ອງກັບຫົວຂໍ້ການສຳຫຼວດ ເຊິ່ງຜູ້ເຂົ້າຮ່ວມບໍ່ໄດ້ຄັດເລືອກວ່າມີຄວາມຮູ້ພື້ນຖານຕໍ່ກັບຄວາມຮຸນແຮງຕໍ່ແມ່ຍິງຫຼືບໍ່ ແລະບໍ່ໄດ້ເຂົ້າຮ່ວມເພື່ອໃຫ້ໄດ້ເລື່ອງ(ຮັບຮູ້)ປະສົບການຄວາມຮຸນແຮງຂອງຜູ້ໃດ, ການສົນທະນາແມ່ນເພື່ອຢາກຮູ້ທັດສະນະຄະຕິ ແລະຄວາມເຊື່ອຂອງແມ່ຍິງແລະຜູ້ຊາຍກ່ຽວກັບຄວາມຮຸນເຮງ ເຊັ່ນ:

- ບັນຫາຫຼັກທີ່ ແມ່ຍິງແລະຜູ່ຊາຍປະເຊີນ, ບົດບາດ ແລະ ພາບພົດຂອງເພດຍິງແລະເພດຊາຍ.
- ທັດສະນະຄະຕິຕາມແຕ່ລະສະຖານທີ່ບ່ອນທີ່ຄວາມຮຸນແຮງເກີດຂື້ນ, ການຮັບຮູ້ຕໍ່ສາຍເຫດທີ່ພາໃຫ້ເກີດຄວາມຮຸນແຮງດັ່ງກ່າວ.
- ສະຖານະການບ່ອນທີ່ມີການໃຊ້ຄວາມຮຸນແຮງທີ່ແຕກຕ່າງກັນທີ່ຍອມຮັບໄດ້ ຫຼື ບໍ່ສາມາດຍອມຮັບໄດ້.
- ສະຖານະການທີ່ມີສະມາຊິກຄອບຄົວເຂົ້າມາກ່ຽວຂ້ອງ, ເພື່ອນບ້ານຫຼືໝູ່ເພື່ອນມາກ່ຽວຂ້ອງຢ່າງເໝາະສົມ.
- ຜົນສະທ້ອນຂອງການໃຊ້ຄວາມຮຸນແຮງທີ່ມີຕໍ່ແມ່ຍິງ, ຕໍ່ຄອບຄົວຂອງພວກເຂົາເຈົ້າ ແລະຊຸມຊົນ
- ທັດສະນະຄະຕິທີ່ວ່າຄວາມຮຸນແຮງໃນຄອບຄົວແມ່ນບັນຫາທີ່ສຳຄັນຕໍ່ສຸຂະພາບແມ່ຍິງ, ກໍ່ຄືບັນຫາທີ່ຜູ່ຊາຍກັງວົນ ຫຼື ເປັນບັນຫາຂອງຄອບຄົວ
- ສະແດງໃຫ້ເຫັນເຖິງທັດສະນະຄະຕິ ແລະວິທີການຕອບໂຕ້ຂອງຂອງຊຸມຊົນຕໍ່ຄວາມຮຸນແຮງ
- ປະເມີນລະບົບການຊ່ວຍເຫຼືອ ແລະການບໍລິການສຳລັບຜູ່ຍິງທີ່ໄດ້ເປີດເຜີຍຕໍ່ຄວາມຮຸນແຮງໃນປັດຈຸບັນ

**ເວລາ:** 90 ນາທີ

**ອຸປະກອນ:** ເຈ້ຍແຜ່ນໃຫຍ່, ບິກຂຽນເຈ້ຍແຜ່ນໃຫຍ່

**ການແນະນຳ:**

ຂໍຂອບໃຈສຳລັບການເຂົ້າຮ່ວມໃນມື້ນີ້. ຂ້າພະເຈົ້າຊື່.............ມາຈາກສະຖາບັນເບີເນັດ. ພວກເຮົາກຳລັງເຮັດການດຳເນີນການຄົ້ນຄ້ວາກ່ຽວກັບບັນຫາຄອບຄົວ ແລະ ວິທີແກ້ໄຂທີ່ອາດເປັນໄປໄດ້. ພວກເຮົາໄດ້ເຊີນໃຫ້ພວກທ່ານມາໃນມື້ນີ້ເພື່ອປຶກສາຫາລືໃນປະເດັນນີ້ກັບບັນດາທ່ານ. ຄວາມຄິດເຫັນ ແລະຄຳຕອບຂອງທ່ານຈະໄດ້ຖືກນຳໃຊ້ເພື່ອຊ່ວຍສ້າງຄູ່ມື ແລະ ປັບປຸງລະບົບການໃຫ້ການບໍລິການ ເພື່ອຊ່ວຍແກ້ໄຂບັນຫາຄອບຄົວ ເປັນຕົ້ນແມ່ນ ບັນຫາຄວາມສຳພັນ ແລະ ການຜິດຖຽງກັນ ເຊິ່ງຜູ້ຍິງກຳລັງພົບພໍ້ໃນປະຈຸບັນ.

ທຸກການປຶກສາຫາລື/ການສົນທະນາໃນມື້ນີ້ຈະຖືກຮັກສາໃຫ້ເປັນຄວາມລັບ. ພວກເຮົາຈະເຮັດເປັນບົດລາຍງານກ່ຽວກັບສິ່ງທີ່ຄົ້ນພົບຂອງພວກເຮົາ, ແຕ່ພວກເຮົາຈະບໍ່ເປີດເຜີຍຊື່ຂອງທ່ານຖ້າພວກເຮົາເອົາຄຳເວົ້າຂອງທ່ານມາອ້າງອີງ.

ຖ້າຫາກວ່າທ່ານບໍ່ມີຄຳຖາມຍັງ, ພວກເຮົາຂໍອະນຸຍາດບັນທຶກສຽງການສົນທະນາໃນຄັ້ງນີ້ ເພື່ອຊ່ວຍໃຫ້ພວກເຮົາບັນທຶກສິ່ງທີ່ເວົ້າມາທັງໝົດ. ເທບສຽງນີ້ຈະບໍ່ໄດ້ເປີດໃຫ້ຄົນອື່ນຟັງເດັດຂາດ. ພາຍຫຼັງທີ່ພວກເຮົາບັນທຶກທຸກຄຳເວົ້າໃນເທບລົງໃສ່ປຶ້ມບັນທຶກແລ້ວ, ພວກເຮົາຈະລຶບຂໍ້ຄວາມ ໃນເທບນີ້ຖິ້ມໝົດ.

ທຸກຄົນຍິນດີຈະເຂົ້າຮ່ວມໃນການສົນທະນານີ້ບໍ່? ບັນທຶກການຕອບຮັບ ເຫັນດີ/ບໍ່ເຫັນດີ

ມີໃຜແດ່ບໍທີ່ບໍ່ຕ້ອງການເຂົ້າຮ່ວມສົນທະນານີ້? ບັນທຶກຖ້າມີຜູ່ໃດໜຶ່ງ ປະຕິເສດບໍ່ເຂົ້າຮ່ວມ

ຂໍຂອບໃຈ

ພວກເຮົາຫວັງວ່າທ່ານຈະວ່າງຕົວຕາມສະບາຍ ແລະ ປະກອບຄໍາຄິດຄໍາເຫັນຢ່າງເປັນກັນເອງ. ບໍ່ມີຄໍາຕອບທີ່ຖືກ ຫຼື ຜິດ, ແຕ່ພວກເຮົາຢາກຈະໄດ້ຍິນຄໍາຄິດເຫັນທີ່ແທ້ຈິງຂອງທ່ານກ່ຽວກັບບັນຫານີ້. ທຸກຄໍາຄິດເຫັນຂອງທ່ານແມ່ນຈະຮັກສາເປັນຄວາມລັບ.

ຈົດບັນທຶກກ່ຽວກັບຄວາມເປັນມາຂອງຜູ່ເຂົ້າຮ່ວມ ແລະຄໍາເຫັນໃນການສົນທະນາ

ຈະຕ້ອງໃຫ້ສໍາເລັດພາຍຫຼັງການສໍາພາດ

**1. ອຸ່ນເຄື່ອງ**

- ກິດຈະກໍາສ້າງຄວາມລຶ້ງເຄີຍລະຫວ່າງຜູ້ເຂົ້າຮ່ວມ ແລະ ທີມງານ
- ສະມາຊິກ ແລະ ຜູ້ເຂົ້າຮ່ວມແນະນໍາຕົນເອງ (ເວົ້າເຣື່ອງຄອບຄົວຂອງທ່ານ, ວຽກງານ ແລະສິ່ງໃດທີ່ທ່ານມັກເຮັດ)
- ຄໍາຖາມກະຕຸ້ນ: ໃນປັດຈຸບັນນີ້, ບັນຫາໃຫ່ຍທີ່ພົບພໍ້ທີ່ສຸດຕໍ່ແມ່ຍິງ ( ຜູ່ຊາຍ) ມີຫຍັງແດ່?

**2. ອ່ານເລື່ອງ ແລະລະບຽບການ**

ຂ້າພະເຈົ້າຢາກເລີ່ມການສົນທະນາຂອງພວກເຮົາ ໂດຍອ່ານເລື່ອງໃຫ້ຟັງ, ນິທານນີ້ເປັນພຽງຕົວຢ່າງເພື່ອ ໃຫ້ພວກທ່ານຈິນຕະນາການວ່າເປັນເຫດການຈິງ ທີ່ເກີດຂຶ້ນລະຫວ່າງຜູ້ບ່າວ ແລະ ຜູ້ສາວ

**ເລື່ອງໜຶ່ງ, ສອງປະສົບການ:**

***ນາງ ສີອາຍຸ 19 ປີ***

*""ຂ້ອຍຈະບໍ່ມີວັນລືມໃນຄືນນັ້ນຕະຫຼອດຊີວິດຂອງຂ້ອຍ. ທ້າວ ໄຊແມ່ນແຟນຂອງຂ້ອຍມາດົນແລ້ວ ລາວເປັນຄົນສຸພາບອ່ອນຫວານ, ພວກເຮົາບໍ່ເຄີຍມີຫຍັງກັນຫຼາຍເກີນກ່ວາການກອດ ຫຼື ຈູບກັນ.*

*ມີມື້ໜຶ່ງພວກເຮົາໄດ້ໄປບຸນນໍາກັນ.ໃນມື້ນັ້ນຂ້ອຍໄດ້ ຢືມເຄື່ອງ ເອື້ອຍຂອງຂ້ອຍໃສ່, ຮູ້ສຶກວ່າຊຸດນັ້ນເຮັດໃຫ້ຂ້ອຍເຊັກຊີ້ ເປັນຜູ້ໃຫຍ່ ເປັນທີ່ດຶງດູດຈັບຕາຂອງຫຼາຍໆຄົນ ໃນຄືນນັ້ນ ຂ້ອຍບໍ່ໄດ້ດື່ມເບຍຫຼາຍ ແຕ່ຢາກເມືອ ແລະ ເມົາໜ້ອຍໜຶ່ງ ກໍ່ເລີຍຢາກກັບບ້ານ. ຂ້ອຍກໍ່ໄດ້ຊວນແຟນຂ້ອຍ, ທ້າວໄຊໃຫ້ໄປສົ່ງຂ້ອຍແດ່ ລາວຕົກລົງ ພາຂ້ອຍໄປສົ່ງຢູ່ບ້ານ, ກັບບ້ານເລີຍ ລາວສໍາພັດພາຂ້ອຍໄປ ແວ່ກະຕູບນ້ອຍຊົ່ວຂ້ອຍຊິຮູ້ສຶກຕົວ ທ້າວໄຊບໍ່ໄດ້ພາຂ້ອຍກັບບ້ານເລີຍແຕ່ລາວສໍາພັດພາຂ້ອຍໄປກະຕູບນ້ອຍ (ຖຽງນາ) ແທນ, ໃນຕອນນັ້ນລາວພະຍາຍາມແກ້ເຄື່ອງ ແລະ ມີເພດສໍາພັນນໍາຂ້ອຍ. ຂ້ອຍກະໄດ້ພະຍາຍາມຂັດຂືນຕໍ່ສູ້ກັບລາວ ແຕ່ວ່າຂ້ອຍບໍ່ໄດ້ຮ້ອງຍ້ອນວ່າຂ້ອຍອາຍ ແລະ ຢ້ານຜູ້ອື່ນໄດ້ຍິນ. ຍ້ອນວ່າໄຊແຂງແຮງຫຼາຍຂ້ອຍກະເລີຍໄດ້ຍອມລາວໃນມື້ນັ້ນ. ຫຼັງຈາກນັ້ນລາວກໍ່ພາຂ້ອຍໄປສົ່ງຢູ່ບ້ານ. ນັບແຕ່ມື້ນັ້ນມາຂ້ອຍບໍ່ບໍ່ຢາກເຈິ ແລະ ບໍ່ຢາກລົມກັບລາວອີກ ເປັນຫຍັງທ້າວໄຊເບິ່ງຄືຄົນໃຈດີຄືເຮັດກັບຂ້ອຍແບບນີ້""*

***ທ້າວ ໄຊອາຍຸ 20 ປີ***

*ທ້າວ ໄຊເວົ້າວ່າ, ຂ້ອຍຍັງບໍ່ເຂົ້າໃຈວ່າມີຫຍັງເກີດຂຶ້ນ. ສີ ແລະ ຂ້ອຍ ເປັນແຟນກັບລາວມາໄດ້ 2 ເດືອນແລ້ວ ແຕ່ວ່າພວກເຮົາຍັງບໍ່ທັນມີຫຍັງກັນເທື່ອ, ຂ້ອຍເຄີຍເວົ້າໃຫ້ລາວຟັງວ່າ ຂ້ອຍມັກ ແລະ ສົນໃຈລາວຫຼາຍ ແລະ ລາວຄືຊິຮູ້ວ່າຂ້ອຍຢາກ ມີເພດສໍາພັນກັບລາວມື້ໃດມື້ໜຶ່ງ. ຕອນພວກເຮົາໄປບຸນນໍາກັນ ສີໄດ້ນຸ່ງເຄື່ອງເຊັກຊີ້ຍົ້ວຍວນ ຂ້ອຍກໍ່ເລີຍຄິດວ່າລາວໃຫ້ທ່າຂ້ອຍ ແລະ ພ້ອມແລ້ວທີ່ຈະມີຫຍັງກັນ ພວກເຮົາໄດ້ດື່ມເບຍເຮັດໃຫ້ສີຊຶມປ່ອຍຕົວ ແລະ ບໍ່ຫວງຕົວ ເມື່ອລາວຊວນຂ້ອຍໃຫ້ໄປສົ່ງລາວຢູ່ບ້ານ ໃຫ້ຂ້ອຍຄິດແນວໃດລະ? ແນ່ນອນຂ້ອຍຄິດວ່າລາວໃຫ້ທ່າ, ຕອນທີ່ຂ້ອຍກໍາລັງແກ້ເຄື່ອງລາວນັ້ນ, ລາວຂັດຂືນໜ້ອຍໜຶ່ງແຕ່ຂ້ອຍຄິດວ່າລາວທໍາທ່າຂັດຂືນຊື່ໆ ເພາະວ່າໝູ່ຂ້ອຍໄດ້ບອກວ່າພວກເຂົາເຫັນຕ້ອງຂູ່ຊິ ແລະ ໃຊ້ແຮງໜ້ອຍໜຶ່ງຕອນມີເພດສໍາພັນກັບແຟນຂອງພວກເຂົາເທື່ອທໍາອິດ. ຈັກແຫຼ ຕອນພວກເຮົາມີຫຍັງກັນ ກະຄືວ່າດີຢູ່. ແລະ ບໍ່ມີບັນຫາຫຍັງ ຫຼັງຈາກນັ້ນຂ້ອຍໄດ້ພານາງສີກັບບ້ານ ລາວກໍ່ບໍ່ເວົ້າບໍ່ວ່າຫຍັງ ຕັ້ງແຕ່ນັ້ນມາລາວບໍ່ຢາກເວົ້າຫຍັງ ຫຼື ອອກໄປໃສນໍາຂ້ອຍອີກເລີຍ ຂ້ອຍຄິດວ່າລາວກໍ່ມັກຂ້ອຍຄືກັນເປັນຫຍັງຈຶ່ງເປັນຈັ່ງຊີ້ ?*

ຕໍ່ໄປນີ້, ຂ້າພະເຈົ້າຈະຂໍຖາມກ່ຽວກັບເລື່ອງທີ່ເລົ່າມານັ້ນ ແລະ ຢາກໃຫ້ພວກເຈົ້າຕອບຄໍາຖ່າມເລົ່ານັ້ນ. ຢາກຢໍ້າວ່າ ບໍ່ມີຄໍາຕອບທີ່ຖືກ ຫຼື ຜິດ. ຢາກໃຫ້ພວກເຮົາສົນທະນາແບບເປັນກັນເອງ ແລະ ຮັບຟັງທຸກຄໍາຄິດເຫັນຂອງທຸກຄົນໃຫ້ຫຼາຍເທົ່າທີ່ເປັນໄປໄດ້. ຖ້າວ່າມີຄໍາເຫັນໃດທີ່ທ່ານບໍ່ເຫັນດີ ຫຼື ມີຄວາມຮູ້ສຶກວ່າມັນບໍ່ຖືກຕ້ອງ, ກະລຸນນາຢ່າອາລົມເສຍ ຫຼື ໃຊ້ອາລົມ, ຢາກຂໍໃຫ້ພວກເຈົ້າຊອກຫາສາເຫດ ແລະ ເຫດຜົນວ່າເປັນຫຍັງຈຶ່ງມີຄວາມຄິດເຫັນທີ່ແຕກຕ່າງເພື່ອມາອະທິບາຍ ແລະ ເປັນຈຸດສົນທະນາຮ່ວມກັນ.

**ຄຳຖາມສຳຄັນ:**

1. ພວກເຈົ້າຄິດວ່າເລື່ອງຂອງໃຜຖືກ? (ຍົກມືຂຶ້ນຖ້າໃຜຄິດວ່າ ນາງ ສີ ຖືກແລະ ທ້າວໄຊຖືກ, ຍົກມືຖ້າວ່າທັງສອງຖືກ, ຍົກມືຖ້າບໍ່ແນ່ໃຈ)

   1.1 ເປັນຫຍັງທ່ານຈຶ່ງຄິດແນວນັ້ນ? ເຈົ້າເດຄິດວ່າແມ່ນຫຍັງ?

2. ເຈົ້າຄິດວ່າທັງສອງຄົນມີແນວຄິດ ແລະ ຄວາມເຂົ້າໃຈທີ່ແຕກຕ່າງກັນບໍ?

   **ຖາມເຈາະຈີ້ມ** ເປັນຫຍັງຄືແຕກຕ່າງ? ແລ້ວແຕກຕ່າງກັນແນວໃດ?
   ທາງດ້ານການຍິນຍອມມີເພດສຳພັນເດ?
   ທາງດ້ານການໃຫ້ກຽດແລະນັບຖືເດ?
   ແລ້ວໃຜມີສິດຕັດສິນໃຈໃນເລື່ອງນີ້ ?

3. ປະສົບການນີ້ໄດ້ສົ່ງຜົນກະທົບຕໍ່ ກັບ ນາງ ສີ ແລະ ທ້າວ ໄຊ ແນວໃດ?

   **ຖາມເຈາະຈີ້ມ** ສາຍສຳພັນການເປັນແຟນ
   ການຮຽນ ຫຼື ວຽກ?
   ສຸຂະພາບຮ່າງກາຍ ແລະ ຈິດໃຈ
   ຄວາມໄວ້ວາງໃຈຕໍ່ກັນ?

4. ພວກເຈົ້າຄິດວ່າປະສົບການຂອງ ນາງ ສີ ນັ້ນ ເປັນການໃຊ້ຄວາມຮຸນແຮງທາງເພດບໍ່ຫຼືບໍ່ແມ່ນ ? ຖ້າແມ່ນ ຍ້ອນຫຍັງ? ແລະ ບໍ່ແມ່ນເດຍ້ອນຫຍັງ? ເປັນຫຍັງຈຶ່ງຄິດແນວນັ້ນ?

5. ພວກເຈົ້າເຄີຍ ຮູ້ຈັກ ຫຼື ເຄີຍໄດ້ຍິນ ຜູ້ໃດບໍ? ທີ່ອາດຈະເປັນຄົນໃນ (ຄອບຄົວຂອງ, ພີ່ນ້ອງ, ໝູ່ ຄົນໃນຊຸມຊົນ) ທີ່ເຄີຍຖືກລ່ວງລະເມີດທາງເພດ? ຖ້າມີ, ພວກເຈົ້າຮູ້ສຶກແນວໃດ?

   5.1 ເຈົ້າໄດ້ເຮັດຫຍັງເພື່ອຊ່ວຍ ລາວບໍ່? ຖ້າຊ່ວຍ,ຍ້ອນຫຍັງ? ເຮັດແນວໃດ? ບໍ່ຊ່ວຍ ຍ້ອນຫຍັງ?

6. ສົມໝຸດວ່າມີຄົນຖືກຄວາມຮຸນແຮງທາງເພດ. ພວກເຂົາຄວນເຮັດແນວໃດ? ຍ້ອນຫຍັງ? ສາມາດຮ້ອງຂໍຄວາມຊ່ວຍເຫຼືອໄດ້ຢູ່ໃສ ແລະ ເຮັດແນວໃດ?

   **ຖາມເຈາະຈີ້ມ** ຕຳຫຼວດ ຫຼື ໂຮງໝໍ
   ໝູ່ເພື່ອນ
   ຄອບຄົວ

7. ນິທານຂອງນາງສີ ກັບ ທ້າວໄຊ ເວົ້າເຖິງແຕ່ບັນຫາຄວາມຮຸນແຮງທາງເພດເທົ່ານັ້ນ ພວກເຈົ້າຄິດວ່າມີຄວາມຮຸນແຮງປະເພດອື່ນໆອີກບໍ? ຢູ່ໃນຊຸມຊົນຂອງເຈົ້າ? (ເຊັ່ນ:ການຄວບຄຸມ, ໃຊ້ກຳລັງຮຸນແຮງ, ຄວາມຮຸນແຮງທາງຈິດໃຈ)

   7.1 ເຫດການນັ້ນເປັນເລື່ອງປົກກະຕິບໍ ? ແລ້ວຊຸຊົນຍອມຮັບບໍ ? ຍ້ອນຫຍັງ ?

   7.2 ເຈົ້າຄິດວ່າການກະທຳຕ່າງໆນັ້ນ ຍອມຮັບໄດ້ບໍ່?

8. ພວກເຈົ້າຮູ້ຈັກກົດໝາຍວ່າດ້ວຍການພັດທະນາ ແລະປົກປ້ອງແມ່ຍິງບໍ? ຖ້າບໍ່ຮູ້ຍ້ອນຫຍັງ?

   8.1 ມັນມີກົດໝາຍວ່າດ້ວຍການພັດທະນາ ແລະປົກປ້ອງແມ່ຍິງ ອອກມາຕັ້ງແຕ່ປີ 2004 ພວກເຈົ້າຄິດວ່າຕັ້ງແຕ່ມີກົດໝາຍນີ້ ມັນໄດ້ຊ່ວຍຫຼຸດຜ່ອນຄວາມ ຮຸນແຮງຕໍ່ແມ່ຍິງບໍ? ຖ້າຊ່ວຍ ຊ່ວຍແນວໃດ ? ຖ້າບໍ່ເປັນຍ້ອນຫຍັງ?

## ການສຳພາດຜູ້ໃຫ້ຂໍ້ມູນຫຼັກ

## (ຫົວໜ້າຊຸມຊົນ, ພະນັກງານສາທາລະນະສຸກ, ຕຳຫຼວດ, ສະຫະພັນແມ່ຍິງບ້ານ)

**ລະຫັດເທບບັນທຶກສຽງ: --------------------- ວັນທີເດືອນປີ: -----------------------------**

**ສະຖານທີ່: ------------------------------------------------ ເພດ: ຍິງ/ຊາຍ**

**ຜູ້ໃຫ້ສຳພາດ ----------------------------------------------- ອົງການຈັດຕັ້ງ ------------------------**

**ຈຸດປະສົງ:**

ຂໍ້ມູນຫຼັກໃນການສຳພາດແມ່ນການລວບລວມເອົາຂໍ້ມູນຈາກບຸກຄົນທີ່ເປັນແຫຼ່ງໃຫ້ຄວາມຮັບຮູ້ຂອງບຸກຄົນຫຼືອົງການຈັດຕັ້ງຕ່າງໆໃນຊຸມຊົນກ່ຽວກັບຫົວຂໍ້ທີ່ຈະເປັນຜົນປະໂຫຍດ ເພື່ອຮັບຮູ້ກ່ຽວກັບສາຍພົວພັນລະຫວ່າງຜູ້ຍິງ ແລະຜູ້ຊາຍ ແລະລະບົບການແກ້ໄຂ, ການຕອບໂຕ້ ແລະ ການສະໜັບສະໜູນຊ່ວຍເຫຼືອບັນຫາຄວາມຮຸນແຮງໃນຊຸມຊົນ ໂດຍເນັ້ນໃສ່:

- ເພື່ອຮູ້ບັນຫາຄອບຄົວ ແລະສາຍພົວພັນລະຫວ່າງຍິງ-ຊາຍ, ທຳມະຊາດແລະ ຂອບເຂດ ຂອງການເກີດຄວາມຮຸນແຮງ ຫຼື ຂໍ້ຜິດຖຽງ ທີ່ເກີດໃຫ້ມີຂໍ້ຫຍຸ້ງຍາກສັບສົນ;
- ເພື່ອຊີ້ແຈງໃຫ້ເຫັນທັດສະນະຄະຕິ, ສາເຫດ, ຄວາມສ່ຽງ ແລະຜົນສະທ້ອນຂອງຄວາມຮຸນແຮງ;
- ຊອກຮູ້ທັດສະນະຄະຕິໃນການປົກປ້ອງ/ຊ່ວຍເຫຼືອຈາກບຸກຄົນພາຍນອກ: ແມ່ນໃຜ, ເມື່ອໃດ ແລະ ເຮັດແນວໃດ;
- ເພື່ອຊີ້ໃຫ້ເຫັນຊັບພະຍາກອນທີ່ມີ, ການບໍລິການ ແລະການສະໜັບສະໜູນທີ່ມີເພື່ອຊ່ວຍເຫຼືອຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ຜູ້ລອດຊີວິດ;
- ເພື່ອຊອກຮູ້ບັນດາຂໍ້ສະເໜີແນະນຳເພື່ອກຳນົດນະໂຍບາຍ ແລະພັດທະນາແຜນງານ.

**ເວລາ:** 60-90 ນາທີ

**ການແນະນຳ**

ຂໍຂອບໃຈສຳລັບການເຂົ້າຮ່ວມໃນມື້ນີ້. ຂ້າພະເຈົ້າຊື່.............ມາຈາກສະຖາບັນເບີເນັດ. ພວກເຮົາກຳລັງເຮັດການດຳເນີນການຄົ້ນຄວ້າກ່ຽວກັບບັນຫາຄອບຄົວ ແລະວິທີແກ້ໄຂທີ່ອາດເປັນໄປໄດ້. ພວກເຮົາໄດ້ເຊີນໃຫ້ພວກທ່ານມາໃນມື້ນີ້ເພື່ອປຶກສາຫາລືໃນປະເດັນນີ້ກັບບັນດາທ່ານ. ຄວາມຄິດເຫັນ ແລະຄຳຕອບຂອງທ່ານຈະໄດ້ຖືກນຳໃຊ້ເພື່ອຊ່ວຍສ້າງຄູ່ມື ແລະ ປັບປຸງລະບົບການໃຫ້ການບໍລິການ ເພື່ອຊ່ວຍແກ້ໄຂບັນຫາຄອບຄົວ ເປັນຕົ້ນແມ່ນ ບັນຫາຄວາມສຳພັນ ແລະ ການຜິດຖຽງກັນ ເຊິ່ງຜູ້ຍິງກຳລັງພົບພໍ້ໃນປະຈຸບັນ.

ທຸກການປຶກສາຫາລື/ການສົນທະນາໃນມື້ນີ້ຈະຖືກຮັກສາໃຫ້ເປັນຄວາມລັບ. ພວກເຮົາຈະເຮັດເປັນບົດລາຍງານກ່ຽວກັບສິ່ງທີ່ຄົ້ນພົບຂອງພວກເຮົາ, ແຕ່ພວກເຮົາຈະບໍ່ເປີດເຜີຍຊື່ຂອງທ່ານຖ້າພວກເຮົາເອົາຄຳເວົ້າຂອງທ່ານມາອ້າງອີງ.

ຖ້າຫາກວ່າທ່ານບໍ່ມີຄຳຖາມຍັງ, ພວກເຮົາຂໍອະນຸຍາດບັນທຶກສຽງການສົນທະນາໃນຄັ້ງນີ້ ເພື່ອຊ່ວຍໃຫ້ພວກເຮົາບັນທຶກສິ່ງທີ່ເວົ້າມາທັງໝົດ. ເທບສຽງນີ້ຈະບໍ່ໄດ້ເປີດໃຫ້ຄົນອື່ນຟັງເດັດຂາດ. ພາຍຫຼັງທີ່ພວກເຮົາບັນທຶກທຸກຄຳເວົ້າໃນເທບລົງໃສ່ປຶ້ມບັນທຶກແລ້ວ, ພວກເຮົາຈະລຶບຂໍ້ຄວາມ ໃນເທບນີ້ຖິ້ມໝົດ.

ທຸກຄົນຍິນດີຈະເຂົ້າຮ່ວມໃນການສົນທະນານີ້ບໍ່? ບັນທຶກການຕອບຮັບ ເຫັນດີ/ບໍ່ເຫັນດີ

ມີໃຜແດ່ບໍທີ່ບໍ່ຕ້ອງການເຂົ້າຮ່ວມສົນທະນານີ້? ບັນທຶກຖ້າມີຜູ້ໃດໜຶ່ງ ປະຕິເສດບໍ່ເຂົ້າຮ່ວມ

ຂໍຂອບໃຈ

ຄຳເຫັນໃນການສົນທະນາພາຍຫຼັງການສຳພາດຖືວ່າສົມບູນ

**ຄຳຖາມທີ່ສຳຄັນ:**

**1. ທົ່ວໄປ**

1.1 ທ່ານຊ່ວຍອະທິບາຍກ່ຽວກັບວຽກ ແລະ ໜ້າທີ່ຮັບຜິດຊອບຂອງທ່ານໃຫ້ຟັງແດ່?

**ຖາມເພີ່ມ** ບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບທ່ານແມ່ນຫຍັງ?
ເຮັດວຽກນີ້ດົນປານໃດ? (ຈັກປີ)

**2. ສະຖານະຂອງຊຸມຊົນ**

2.1 ແມ່ນຫຍັງທີ່ເປັນບັນຫາພາຍໃນຄອບຄົວທີ່ພົບເຫັນໃນຊຸມຊົນ ຂອງທ່ານ?

**ຖາມເຈາະຈີ້ມ** ບັນຫາ ລະຫວ່າງຜົວ ແລະ ເມຍ ?
ພໍ່ແມ່, ການສຶກສາ ?
ເສດຖະກິດຄອບຄົວ, ການຫາລາຍໄດ້ ?
ບັນຫາສຸຂະພາບ ?

2.2 ຕາມຄວາມເຂົ້າໃຈຂອງທ່ານ, ຄວາມຮຸນແຮງ (ຄວາມຮຸນແຮງຕໍ່ແມ່ຍິງ) ມີຄວາມໝາຍ ແນວໃດ?

2.3 ເປັນຫຍັງຈິ່ງເກີດມີຄວາມຮຸນແຮງ ຫຼື ຜິດຖຽງກັນພາຍໃນຄອບຄົວ?

- ແມ່ນຫຍັງທີ່ເຮັດໃຫ້ຜູ້ຊາຍໃຊ້ຄວາມຮຸນແຮງ (ດ່າ, ທຸບຕີ) ຕໍ່ແມ່ຍິງ?
- ມີກໍລະນີໃດບໍ່ ທີ່ການໃຊ້ຄວາມຮຸນແຮງ (ທຸບ, ຕີເມຍ) ຕໍ່ເມຍ ເປັນທີ່ຍອມຮັບໄດ້ ຫຼື ມີເຫດຜົນ?

2.4 ມີແມ່ຍິງໃຊ້ຄວາມຮຸນແຮງ (ທຸບຕີ) ຜູ້ຊາຍບໍ? ເປັນຫຍັງຈິ່ງເກີດຂຶ້ນ?

2.5 ທ່ານຄິດວ່າການໃຊ້ຄວາມຮຸນແຮງມີຜົນກະທົບຕໍ່ແມ່ຍິງ, ເດັກນ້ອຍ ແລະ ຜູ້ຊາຍບໍ?

**ຖາມເຈາະຈີ້ມ:** ມັນມີຜົນຕໍ່ການພົວພັນລະຫວ່າງຜົວ-ເມຍ, ຫຼື ລະຫວ່າງສະມາຊິກໃນ
ຄອບຄົວບໍ່?
ມີຜົນຕໍ່ພໍ່ແມ່, ການສຶກສາບໍ?
ມີຜົນຕໍ່ເສດຖະກິດຄອບຄົວ, ການສ້າງລາຍຮັບລາຍໄດ້ຄອບຄົວບໍ່?
ຕໍ່ສຸຂະພາບເດ?

2.6 ທ່ານຄິດວ່າ ແມ່ນຫຍັງເປັນເປັນສາຍເຫດຂອງຄວາມຮຸນແຮງຕໍ່ແມ່ຍິງ?

- ໃຜຕ້ອງເປັນຜູ້ຮັບຜິດຊອບ?
- ໃນທັດສະນະ/ຄວາມຄິດເຫັນ ຂອງທ່ານ ຄວາມຮຸນແຮງເຫຼົ່ານັ້ນຜິດລະບຽບກົດໝາຍບໍ?
- ຄວາມຮຸນແຮງແບບໃດທີ່ຜິດລະບຽບກົດໝາຍ?

2.7 ທ່ານຄິດວ່າຜູ້ຊາຍສາມາດປ່ຽນແປງໄດ້ບໍ່? ທ່ານຈະແນະນຳວິທີໃດ? ອົງການທ່ານສາມາດມີບົດບາດໃດແດ່?

**3. ການປ້ອງກັນ ແລະ ບ່ອນໃຫ້ການສະໜັບສະໜູນຊ່ວຍເຫຼືອ**

3.1 ອົງການທ່ານ ຫຼື ກຸ່ມຂອງທ່ານໄດ້ພະຍາຍາມເຂົ້າໄປຫ້າມ ຫຼື ຊ່ວຍເຫຼືອ ກໍລະນີບັນຫາຄວາມຮຸນແຮງບໍ? ຖ້າເຄີຍ, ກໍລະນີແນວໃດ?

- ມາເຖິງປະຈຸບັນນີ້, ທ່ານພໍນັບໄດ້ບໍວ່າມີຈັກກໍລະນີທີ່ເກີດຂຶ້ນແລະໄດ້ລາຍງານຕໍ່ບ້ານ (ຫຼືຫ້ອງການ) ຂອງທ່ານ?

**ຖາມເຈາະຈີ້ມ:** ມີຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດບໍ?
ມີຜູ້ກະທຳຜິດ?

3.2 ໃນຖານະທີ່ທ່ານເປັນສະມາຊິກຂອງອົງການ ຫຼື ກຸ່ມ, ແມ່ນຫຍັງທີ່ເປັນຈຸດ/ຂໍ້ດີ, ຄວາມສ່ຽງ ແລະ ສິ່ງທ້າທາຍ (ບັນຫາ) ໃນການແກ້ໄຂ ແລະ ຊ່ວຍຜູ່ຖືກເຄາະຮ້າຍ?

3.3 ສະໄໝກ່ອນນັ້ນ ໄດ້ມີວິທີການແກ້ໄຂບັນຫາການໃຊ້ຄວາມຮຸນແຮງພາຍໃນຄອບຄົວໃນຊຸມຊົນ ແນວໃດແດ່? ວິທີການແບບພື້ນບ້ານນັ້ນໄດ້ຜົນບໍ? ເປັນຫຍັງຈຶ່ງວ່າໄດ້ຜົນ ຫຼື ບໍ່ໄດ້ຜົນ?

3.4 ຖ້າແມ່ຍິງໄດ້ຮັບຄວາມຮຸນແຮງ, ລາວຄວນເຮັດແນວໃດເພື່ອໄປຂໍການຊ່ວຍເຫຼືອ ແລະ ຢູ່ໃສໄດ້ແດ່?

3.5 ທ່ານຮູ້ຈັກກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວຊຶ່ງຮັບຮອງໃນປີ 2004 ບໍ?

- ທ່ານຄິດວ່າກົດໝາຍນັ້ນແມ່ນກ່ຽວກັບຫຍັງ?
- ໄດ້ມີການປ່ຽນແປງຫຍັງບໍ ໃນວຽກງານຂອງທ່ານພາຍຫຼັງກົດໝາຍສະບັບນີ້ໄດ້ຖືກຮັບຮອງ?

3.6 ທ່ານມີຄຳແນະນຳຫຍັງບໍເພື່ອປ້ອງກັນຄວາມຮຸນແຮງໃນຄອງຄົວ, ຊຸມຊົນ ແລະ ໃນສັງຄົມ?

3.7 ຄຳແນະນຳເພີ່ມເຕີມ, ຖ້າມີ

## ການສຳພາດຜູ້ໃຫ້ຂໍ້ມູນຫຼັກ

## (ສຳລັບອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມຕ່າງໆຂັ້ນທ້ອງຖິ່ນ)

**ລະຫັດເທບບັນທຶກສຽງ:--------------------- ວັນທີເດືອນປີ: ----------------------------**

**ສະຖານທີ່ ------------------------------------------ ເພດ: ຍິງ/ຊາຍ**

**ຜູ້ສຳພາດ ------------------------------------------ ຊື່ອົງການ ----------------------------**

**ຈຸດປະສົງ:**

ຂໍ້ມູນຫຼັກໃນການສຳພາດແມ່ນການລວບລວມເອົາຂໍ້ມູນຈາກບຸກຄົນທີ່ເປັນແຫຼ່ງທີ່ມາໂດຍກົງໃນຄວາມຮັບຮູ້ຂອງຄົນທີ່ແຕກຕ່າງຫຼືອົງການຈັດຕັ້ງໃນຊຸມຊົນກ່ຽວກັບຫົວຂໍ້ຂອງຜົນປະໂຫຍດ ເພື່ອຮັບຮູ້ກ່ຽວກັບສາຍພົວພັນລະຫວ່າງຜູ້ຍິງ ແລະຜູ້ຊາຍ ແລະລະບົບການແກ້ໄຂ, ການຕອບຮັບ ແລະການສະໜັບສະໜູນຊ່ວຍເຫຼືອບັນຫາຄວາມຮຸນແຮງໃນຊຸມຊົນ ໂດຍເນັ້ນໃສ່:

- ບັນຫາຄອບຄົວຢ່າງຊັດເຈນ ແລະສາຍພົວພັນລະຫວ່າງຍິງ-ຊາຍ, ທຳມະຊາດແລະ ຂອບເຂດ ຂອງການເກີດຄວາມຮຸນແຮງ ຫຼື ຂໍ້ພິກຖຽງການເກີດໃຫ້ມີຂໍ້ຫຍຸ້ງຍາກສັບສົນ;
- ຊີ້ແຈງໃຫ້ເຫັນທັດສະນະຄະຕິ, ສາເຫດ, ຄວາມສ່ຽງ ແລະຜົນສະທ້ອນຂອງຄວາມຮຸນແຮງ;
- ຊອກຮູ້ທັດສະນະຄະຕິໃນການແຊກແຊງ/ຊ່ວຍເຫຼືອຈາກບຸກຄົນພາຍນອກ: ໃຜ, ເມື່ອໃດ ແລະ ເຮັດແນວໃດ;
- ຊີ້ໃຫ້ເຫັນຊັບພະຍາກອນ, ການບໍລິການ ແລະການສະໜັບສະໜູນທີ່ມີເພື່ອຊ່ວຍເຫຼືອຕໍ່ຜູ້ຖືກເຄາະຮ້າຍໃນການໃຊ້ຄວາມຮຸນແຮງ ແລະ ຜູ້ລອດຊີວິດ;
- ຊອກຮູ້ບັນດາຂໍ້ສະເໜີແນະນຳເພື່ອການສ້າງນະໂຍບາຍ ແລະພັດທະນາແຜນງານ.

**ເວລາ:** 60-90 ນາທີ

**ການແນະນຳ**

ຂໍຂອບໃຈທີ່ພວກທ່ານເຂົ້າຮ່ວມໃນມື້ນີ້. ຊື່ຂອງຂ້ອຍແມ່ນ.............ມາຈາກສະຖາບັນເບີເນັດ. ພວກເຮົາກຳລັງເຮັດດຳເນີນການຄົ້ນຄວ້າກ່ຽວກັບສະພາບການຂອງແມ່ຍິງ. ພວກເຮົາໄດ້ເຊີນໃຫ້ພວກທ່ານມາໃນມື້ນີ້ເພື່ອຢາກຮຽນຮູ້ກ່ຽວກັບປະສົບການຂອງພວກທ່ານ ແລະ ຢາກຮູ້ຂໍ້ແນະນຳວ່າຈະເຮັດແນວໃດເພື່ອໃຫ້ພວກເຮົາສາມາດຊ່ວຍເຫຼືອຜູ້ຍິງມີສະຖານະດີຂຶ້ນຄືຕົວຂອງທ່ານເອງ.

ຂໍ້ມູນທັງໝົດທີ່ທ່ານເລົ່າສູ່ພວກເຮົາຟັງແມ່ນມີຄຸນຄ່າທີ່ສຸດ ແລະ ຈະຮັກສາເປັນຄວາມລັບຢ່າງເຂັ້ມງວດ. ທ່ານມີສິດທີ່ຈະຢຸດເຊົາການສຳພາດຕອນໃດກໍ່ໄດ້, ຫຼືບໍ່ຢາກຕອບຄຳຖາມໃດໜຶ່ງທີ່ພວກເຮົາຖາມ.ຂ້າພະເຈົ້າຈະບໍ່ຂຽນຊື່ ຫຼື ທີ່ຢູ່ຂອງທ່ານ.

ຄຳຕອບຂອງທ່ານແມ່ນຈະຊ່ວຍໃຫ້ລັດຖະບານສາມາດເຂົ້າໃຈບັນຫາທີ່ປະເຊີນຢູ່ ແລະ ສາມາດປັບປຸງ ຫຼື ພັດທະນາການບໍລິການທີ່ດີກວ່າຕໍ່ຜູ້ຍິງ. ອີກເທື່ອໜຶ່ງຂ້າພະເຈົ້າຢາກໃຫ້ທ່ານເຊື່ອໝັ້ນວ່າທຸກໆສິ່ງທີ່ທ່ານເລົ່າມານີ້ແມ່ນຈະຖືກຮັກສາເປັນຄວາມລັບ.

ທ່ານເຫັນດີທີ່ຈະໃຫ້ສຳພາດບໍ?                    ບັນທຶກການຕອບຮັບ ເຫັນດີ/ບໍ່ເຫັນດີ

ຖ້າທ່ານບໍ່ຂັດຂ້ອງ, ພວກເຮົາຢາກຂໍອະນຸຍາດບັນທຶກສຽງການສົນທະນາຂອງພວກເຮົາ. ເພາະຈະຊ່ວຍໃຫ້ພວກເຮົາເກັບກຳສິ່ງທີ່ພວກເຮົາເວົ້າ. ເທບສຽງຈະບໍ່ໄດ້ຖືກເປີດໃຫ້ໃຜຟັງ. ພາຍຫຼັງຖອດເທບ ບັນທຶກແລ້ວຈາກເທບອັດສຽງ ແລະ ຂໍ້ມູນບັນທຶກກໍຈະໄດ້ໄດ້ລຶບຖິ້ມ.ຖ້າຫາກບໍ່ຕ້ອງການໃຫ້ມີການບັນທຶກສຽງໃນເວລາສຳພາດຂ້າພະເຈົ້າກໍຈະຈົດບັນທຶກເອົາກໍໄດ້.

ອະນຸຍາດໃຫ້ພວກເຮົາອັດສຽງຂອງການສົນທະນາພວກເຮົານີ້ຫຼືບໍ? ບັນທຶກການຕອບຮັບ ອະນຸຍາດ/ບໍ່ອະນຸຍາດ

ຂອບໃຈ

ຄຳເຫັນໃນການສົນທະນາພາຍຫຼັງການສຳພາດຖືວ່າສົມບູນ

**ຄຳຖາມທີ່ສຳຄັນ:**

**1. ທົ່ວໄປ**

1.1 ທ່ານຊ່ວຍອະທິບາຍກ່ຽວກັບວຽກ ແລະ ໜ້າທີ່ຮັບຜິດຊອບຂອງທ່ານໃຫ້ຟັງແດ່?

**ຖາມເພີ່ມ** ບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບທ່ານແມ່ນຫຍັງ?
ເຮັດວຽກນີ້ດົນປານໃດ? (ຈັກປີ)

1.2 ທ່ານຊ່ວຍອະທິບາຍຫຍໍ້ກ່ຽວໂຄງການ ຫຼື ວຽກງານ ທີ່ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃຫ້ຟັງແດ່?

**ຖາມເຈາະຈີ້ມ:** ຊື່ໂຄງການ ຫຼື ແຜນງານ
ຈຸດປະສົງ, ຜົນໄດ້ຮັບ ແລະ ຜົນກະທົບ( ກຸ່ມເປົ້າໝາຍ)?
ໄລຍະການຈັດຕັ້ງປະຕິບັດ?
ພື້ນທີ່ໂຄງການ?

**2. ສະພາບຄວາມຮຸນແຮງ**

2.1 ໃນທັດສະນະ/ຄວາມເຂົ້າໃຈຂອງທ່ານ, ຄວາມຮຸນແຮງ (ຄວາມຮຸນແຮງຕໍ່ແມ່ຍິງ) ໝາຍວ່າແນວໃດ?

2.2 ເປັນຫຍັງຈິ່ງເກີດຄວາມຮຸນແຮງ ຫຼື ຜິດຖຽງກັນໃນຄອບຄົວ?

- ແມ່ນຫຍັງທີ່ເຮັດໃຫ້ຜູ້ຊາຍໃຊ້ຄວາມຮຸນແຮງ (ດ່າ, ທຸບຕີ) ຕໍ່ແມ່ຍິງ?
- ການໃຊ້ຄວາມຮຸນແຮງ (ທຸບ, ຕີເມຍ) ຕໍ່ເມຍ ເປັນທີ່ຍອມຮັບໄດ້ບໍ ຫຼື ມີເຫດຜົນແລ້ວບໍ?

2.3 ມີແມ່ຍິງໃຊ້ຄວາມຮຸນແຮງ(ທຸບຕີ)ຜູ້ຊາຍບໍ? ເປັນຫຍັງຈິ່ງເກີດຂຶ້ນ?

2.4 ທ່ານຄິດວ່າການໃຊ້ຄວາມຮຸນແຮງມີຜົນກະທົບຕໍ່ແມ່ຍິງ, ເດັກນ້ອຍ, ແລະ ຜູ້ຊາຍບໍ?

**ຖາມເຈາະຈີ້ມ:** ມັນມີຜົນຕໍ່ການພົວພັນລະຫວ່າງ ຜົວ-ເມຍ, ຫຼື ລະຫວ່າງສະມາຊິກໃນ
ຄອບຄົວບໍ່?
ມີຜົນຕໍ່ພໍ່ແມ່, ການສຶກສາບໍ?
ມີຜົນຕໍ່ເສດຖະກິດຄອບຄົວ, ການສ້າງລາຍຮັບລາຍໄດ້ ຄອບຄົວບໍ່?
ຕໍ່ສຸຂະພາບເດ?

**3. ການປ້ອງກັນ ແລະ ບ່ອນໃຫ້ການສະໜັບສະໜູນຊ່ວຍເຫຼືອ**

3.1 ທ່ານໄດ້ໃຫ້ຄວາມຮູ້ກ່ຽວກັບໂຄງການ ແຜນງານຂອງ ອົງການທ່ານ ທີ່ກ່ຽວກັບບັນຫາຄວາມຮຸນແຮງຕໍ່ແມ່ຍິງແລ້ວ, ຕອນນີ້ຂໍຖາມລະອຽດຕື່ມແດ່ວ່າ

- ອົງການ ຫຼື ທີມງານຂອງທ່ານໄດ້ເຂົ້າໄປຊ່ວຍເຫຼືອ ກໍລະນີການໃຊ້ຄວາມຮຸນແຮງໃນຄອບຄົວບໍ່?
- ຖ້າໄດ້ຊ່ວຍ, ແມ່ນເລື່ອງແບບໃດ? ແລະ ມາຮອດປະຈຸບັນໄດ້ຊ່ວຍຈັກກໍລະນີແລ້ວ ທີ່ໄດ້ບັນທຶກ/ລາຍງານຕໍ່ບ້ານ (ຫຼືຫ້ອງການ) ຂອງທ່ານ?

**ຖາມເຈາະຈີ້ມ:** ຕໍ່ຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດ ເດ?
ຜູ້ກະທຳຜິດ?

3.2 ຖ້າແມ່ຍິງໄດ້ຮັບຄວາມຮຸນແຮງ, ລາວຄວນເຮັດແນວໃດເພື່ອຂໍຄວາມຊ່ວຍເຫຼືອ ແລະ ຢູ່ໃສ?

- ຕາມທັດສະນະຂອງທ່ານ, ຄວນແມ່ນໃຜ ຫຼື ອົງການໃດ ທີ່ເຮັດວຽກ ແກ້ໄຂ ຫຼື ປົກປ້ອງຄວາມຮຸນແຮງຕໍ່ແມ່ຍິງໃນຊຸມຊົນ?

3.3 ມີວິທີການປະຕິບັດແບບພື້ນບ້ານບໍ່ ເພື່ອແກ້ໄຂ ບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ?

3.4 ໃນປະສົບການຂອງທ່ານທີ່ໄດ້ຈັດຕັ້ງປະຕິບັດແຜນງານ ໂຄງການ, ແມ່ນຫຍັງທີ່ເປັນຈຸດດີ, ຄວາມສ່ຽງ ແລະ ບັນຫາ (ສິ່ງທ້າທາຍ) ໃນການປ້ອງກັນ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍ?

3.5 ທ່ານໄດ້ປະສານງານສືບທົບກັບອົງການອື່ນ ຫຼື ກຸ່ມອື່ນບໍ ເພື່ອແລກປ່ຽນ ແລະ ໃຫ້ຂໍ້ມູນ ແລະ ໃຫ້ການບໍລິການ?

- ຖ້າມີ, ແມ່ນອົງການໃດ? ມີການປະສານງານກັນຄືແນວໃດ? ແລະເລື່ອງຫຍັງ?

3.6 ຫລັງຈາກກົດໝາຍວ່າດ້ວຍການພັດທະນາ ແລະປົກປ້ອງແມ່ຍິງ ເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວຊຶ່ງຮັບຮອງໃນປີ 2004, ທ່ານເຫັນວ່າໄດ້ມີການປ່ຽນແປງຫຍັງບໍ່ໃນວຽກຂອງທ່ານ ແຕ່ກົດໝາຍເລີ່ມປະກາດໃຊ້? ຖ້າມີ, ແມ່ນຫຍັງ? ປ່ຽນແນວໃດ?

3.7 ທ່ານຈະມີຄຳແນະນຳຫຍັງບໍເພື່ອປ້ອງກັນຄວາມຮຸນແຮງໃນຄອບຄົວ, ຊຸມຊົນ ແລະ ໃນສັງຄົມ?

3.8 ຄຳແນະນຳເພີ່ມເຕີມ, ຖ້າມີ

# ເອກະສານຊ້ອນທ້າຍ IV: ວິທີວິທະຍາໃນການສ້າງ ດັດຊະນີສະຖານະພາບພາບທາງເສດຖະກິດ-ສັງຄົມ

## ການສຳຫລວດແຫ່ງຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງລາວ ປີ 2014

### 1. ຄຳນຳ

ການສຳຫລວດແຫ່ງຊາດ ກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງລາວປີ 2014 ແມ່ນໄດ້ເກັບກຳຂໍ້ມູນຂອງແຕ່ລະຕົວປ່ຽນທີ່ຕິດພັນກັບຊັບສິນພາຍໃນເຮືອນ ສະທ້ອນໃຫ້ເຫັນຄວາມແຕກຕ່າງຂອງສະຖານະພາບທາງເສດຖະກິດ-ສັງຄົມ.

ດັດສະນີນີ້ ແມ່ນອະທິບາຍເຖິງການນຳໃຊ້ວິທີ ແລະ ຂໍ້ມູນ ເຂົ້າໃນການພັດທະນາແບບມາດຕະຖານດຽວ ຫຼື ດັດສະນີສະຖານະພາບເສດຖະກິດ-ສັງຄົມ "ດັດສະນີຊັບສິນ". ສິ່ງທີ່ສຳຄັນຂອງຄ່າດັດສະນີໃນມາດຕະຖານດຽວທີ່ໄດ້ ແມ່ນນຳໃຊ້ຕົວຊີ້ບອກທີ່ແຕກຕ່າງກັນ ໃນການກຳນົດຄ່ານໍ້າໜັກຂອງແຕ່ລະຕົວປ່ຽນ ໂດຍທົ່ວໄປແລ້ວນຳໃຊ້ການວິໃຈອົງປະກອບຫລັກ ເພື່ອພັດທະນາຂໍ້ມູນຄ່າດັດສະນີຊັບ ສິນທາງດ້ານສະຖິຕິ.

ການວິໃຈອົງປະກອບຫລັກ ແມ່ນເປັນເທັກນິກທາງດ້ານສະຖິຕິທີ່ມີຫລາຍຕົວປ່ຽນ ເພື່ອຫຼຸດຈຳນວນ ຕົວປ່ຽນລົງຈາກການລວມກັນຂອງຕົວປ່ຽນເດີມ. ເນື່ອງຈາກລະດັບຄວາມສຳພັນໃນບັນດາຕົວປ່ຽນເດີມມີຄ່າສູງກວ່າໃນຖານຂໍ້ມູນ ຂໍ້ມູນທີ່ຕ້ອງການກໍຄື ອົງປະກອບທີ່ມີຄ່າໜ້ອຍເທົ່ານັ້ນ ຄຸນສົມບັດທີ່ສຳຄັນ ເຊັ່ນວ່າ:ບັນດາອົງປະກອບນັ້ນແມ່ນບໍ່ມີຄວາມສຳພັນຊຶ່ງກັນ ແລະ ກັນ. ດັ່ງນັ້ນ ຈຶ່ງເກັບຂໍ້ມູນຂະໜາດຂອງແຕ່ລະອົງປະກອບໄວ້ໃນຖານຂໍ້ມູນ. ໃນຂັ້ນຕໍ່ໄປແມ່ນນຳເອົາທຸກໆຂັ້ນຕອນຢ່າງລະອຽດຂອງດັດສະນີໄປພັດທະນາຢູ່ໃນການວິໃຈອົງປະກອບຫຼັກໂດຍອີງໃສດັດສະນີຊັບສິນ.

### 2. ວິທີການ

ໃນການສຶກສາແມ່ນໄດ້ນຳໃຊ້ 3 ຂັ້ນຕອນ, ປະຕິບັດຕາມ Vyas ແລະ Kumaranayake 2006 ໂດຍອີງຕາມຂໍ້ມູນດັດສະນີຊັບສິນໃນການສ້າງການວິໃຈອົງປະກອບຫຼັກ, ເນື້ອໃນລາຍລະອຽດ ໃນການວິໃຈ, ການສ້າງການວິໃຈອົງປະກອບຫຼັກ ໂດຍອີງຕາມຂໍ້ມູນດັດສະນີຊັບສິນ ແລະ ການຈຳແນກກຸ່ມຫຼັງ ຄາເຮືອນອອກຕາມຄວາມຮັ່ງມີທາງດ້ານຊັບສິນ. ນຳໃຊ້ໂປຼແກຼມສະຖິຕິ STATA ເວີຊັນ 13.00 ເຂົ້າຊ່ວຍໃນການວິໃຈ.

#### 2.1 ປັດໃຈສຳຄັນໃນການວິໃຈ

ຂັ້ນຕອນທຳອິດ ແມ່ນໄດ້ດຳເນີນການກ່ຽວກັບການວິໃຈຫາຂໍ້ມູນ ທີ່ກ່ຽວຂ້ອງກັບການກຳນົດຕົວຢ່າງທັງໝົດ, ຂະໜາດ, ຄວາມຖີ່ຂອງແຕ່ລະຕົວປ່ຽນ ແ ລະ ຮູບແບບ ຂອງຂໍ້ມູນທີ່ຂາດ ຂອງແຕ່ລະ ຕົວປ່ຽນ ການເກັບກຳສຳຫຼວດຂໍ້ມູນແມ່ນໜ້າວຽກທີ່ມີຄວາມຈຳເປັນ ເພື່ອຮັບປະກັນຂໍ້ມູນໃຫ້ມີຄຸນນະພາບ, ມີຄວາມເໝາະສົມ ແລະ ດຳເນີນການບັນທຶກໄວ້ເປັນຂໍ້ມູນ ເພື່ອນຳໃຊ້ເຂົ້າໃນການວິໃຈໃນຂັ້ນຕອນຕໍ່ໄປ.

***ກຸ່ມຕົວຢ່າງໂດຍລວມ***

ການຈັດຕັ້ງປະຕິບັດແບບຟອມສອບຖາມ ແລະ ຄັດເລືອກເອົາຄົວເຮືອນ ແມ່ນໄດ້ຈັດຕັ້ງປະຕິບັດ ແລະ ສຳເລັດເປັນທີ່ຮຽບຮ້ອຍແລ້ວໃນຈຳນວນທັງໝົດ 2,997 ຄົວເຮືອນ. ສຳລັບຂໍ້ມູນແບບສອບຖາມນັ້ນແມ່ນລວມມີຕົວຊີ້ບອກລາຍການຊັບສິນຂອງແຕ່ລະຄົວເຮືອນ ແລະ ດັດສະນີຊັບສິນທີ່ໄດ້ສ້າງຂຶ້ນໂດຍນຳໃຊ້ຂໍ້ມູນຕົວຈິງທັງໝົດທີ່ໄດ້ເກັບກຳມາ.

***ຄວາມຖີ່ໃນການວິໃຈ***

ຈຸດປະສົງເພື່ອເປັນການສ້າງຂອບເຂດຕົວປ່ຽນທີ່ກະແຈກກະຈາຍຢູ່ຕາມແຕ່ລະຄົວເຮືອນ ແລະແຈ້ງການເຂົ້າລະຫັດຂອງບັນດາຕົວປ່ຽນ. ໃນເມື່ອຕົວປ່ຽນມີຄວາມສຳພັນກັນ ແມ່ນນຳໃຊ້ການວິໃຈອົງປະກອບຫຼັກເຫັນວ່າມີຄວາມເໝາະສົມ, ແຕ່ເມື່ອຕົວປ່ຽນມີການກະແຈກກະຈາຍຕ່າງກັນຫຼາຍໄປທົ່ວແຕ່ລະຄົວເຮືອນ. ອີງຕາມການວິໃຈອົງປະກອບຫຼັກທາງດ້ານຊັບສິນແຕ່ລະຄົວເຮືອນແມ່ນມີຄວາມແຕກຕ່າງກັນ ໃນດ້ານນໍ້າໜັກ. ເຊັ່ນຕົວຢ່າງ: ຊັບສິນທັງໝົດ ຫລື ຊັບສິນບໍ່ມີເຈົ້າຂອງ ຈະບໍ່ສະແດງຕົວປ່ຽນ ແລະ ຄ່ານໍ້າໜັກໃກ້ຄຽງກັບສູນ ໃນລັກສະນະທີ່ສອງຂອງ PCA ເປັນຮູບແບບຂໍ້ມູນທີ່ບໍ່ເໝາະສົມໃຊ້ເຂົ້າ ໃນການວິໃຈ ເນື່ອງຈາກເປັນປະເພດຂໍ້ມູນທີ່ໄດ້ປ່ຽນຮູບແບບເປັນຂໍ້ມູນປະລິມານແລ້ວຊຶ່ງບໍ່ໄດ້ມີຄວາມໝາຍໃດໆເພື່ອຫຼີກລ້ຽງບັນຫານີ້ ສຳລັບປະເພດຕົວປ່ຽນດ້ານປະລິມານແມ່ນໄດ້ບັນທຶກຢູ່ໃນຕົວປ່ຽນບາຍນາລີ (0 ກັບ 1) ການເຮັດສຳຫຼວດດັ່ງກ່າວນີ້ແມ່ນລວມເອົາຂໍ້ມູນຂອງລັກສະນະໂຄງສ້າງຂອງແຕ່ລະຄົວເຮືອນເປັນຕົ້ນວ່າ: ແຫຼ່ງນໍ້າດື່ມ, ປະເພດຂອງຫ້ອງນໍ້າ, ວັດສະດຸທີ່ໃຊ້ມຸງຫຼັງຄາ ແລະ ໄຟຟ້າ. ນອກຈາກນີ້ຍັງໄດ້ເກັບກຳຂໍ້ມູນ ການເປັນເຈົ້າຂອງຊັບສິນຈຳນວນ 6 ລາຍການ, ຍານພາຫະນະ 4 ປະເພດ, ກຳມະສິດທີ່ດິນ ນອກນັ້ນຍັງ ເກັບກຳຈຳນວນຫ້ອງນອນ ແລະ ຈຳນວນສະມາຊິກພາຍໃນຄອບຄົວ.ໃນຕາຕະລາງ 1: ເປັນການສະແດງເນື້ອໃນ ແລະ ການກະຈາຍຄວາມຖີ່ຂອງຕົວປ່ຽນໃນບັນດາຕົວຢ່າງທັງໝົດ.

ຜົນການວິໃຈແມ່ນມີການປ່ຽນແປງຕາມແຫຼ່ງນໍ້າດື່ມຕົ້ນຕໍ, ປະເພດຂອງສຸຂາພິບານ ແລະ ວັດສະດຸ ຫຼັກທີ່ນໍາໃຊ້ມຸງຫຼັງຄາ. ແຫຼ່ງນໍ້າດື່ມທີ່ນໍາໃຊ້ຫລາຍກວ່າໝູ່ ແມ່ນນໍ້າອອກບໍ່ຈາກທໍາມະຊາດກວມເອົາ 21.2%, ມີນໍ້າສະອາດກວມເອົາ 10.7% ແລະ ແຫຼ່ງອື່ນໆກວມເອົາ 38.0% ນອກຈາກນີ້ ແລ້ວຍັງມີແຫຼ່ງນໍ້າຢູ່ 8 ປະເພດເຊັ່ນ: ນໍ້າສ້າງ/ນໍ້າບາດານກວມເອົາ 7.2%, ນໍ້າສາທາລະນະກວມເອົາ 6.0 %, ນໍ້າຕໍ່ເຂົ້າໃນເຮືອນກວມເອົາ 3.1%. ນອກນີ້ຍັງໄດ້ ຄໍາຕອບທີ່ໄດ້ຈາກການຖາມວ່າ ແຫຼ່ງນໍ້າດື່ມຕົ້ນຕໍ(ຈໍານວນ=1,139) ແມ່ນມາຈາກການຕົ້ມນໍ້າ, ນໍ້າສະອາດ, ນໍ້າດື່ມ ຫຼື ບໍລິສຸດ.

ສໍາລັບຫ້ອງນໍ້າຊາວບ້ານໃຫ້ການລາຍງານວ່າມີ 2 ປະເພດ: ປະມານ 2/3 ເປັນສ້ວມຖ່າຍແບບລະບາຍອາກາດກວມເອົາ 64.0% ແລະ 27.8%. ແມ່ນບໍ່ມີສ້ວມຖ່າຍ ຫຼື ໃຊ້ປ່າ/ທົ່ງນາ. 55.7%, ຫຼາຍກວ່າເຄິ່ງໜຶ່ງເວົ້າວ່າສ້ວມຖ່າຍມຸງດ້ວຍສັງກະສີ, 35.8% ຫຼາຍກວ່າ 1/3 ຫຼັງຄາມຸງດ້ວຍກະເບື້ອງ ຫຼື ດິນຂໍ ແລະ ໜ້ອຍກວ່າ 10% ແມ່ນນໍາໃຊ້ໄມ້ທໍາມະຊາດ. ໃນຈໍານວນ 17 ຄອບຄົວໃຫ້ລາຍງານວ່າ ໃນການເຮັດສ້ວມຖ່າຍທັງໝົດແມ່ນນໍາໃຊ້ຈາກທໍາມະຊາດເຊັ່ນ: ໄມ້ໄຜ່, ໄມ້ແປ້ນ, ດິນ ແລະ ຫຍ້າ. ຊາວບ້ານສ່ວນໃຫຍ່ມີໄຟຟ້າໃຊ້ເຖິງ 87.6 %.

ໂດຍທົ່ວໄປແລ້ວທີ່ພົບເຫັນລະດັບການເປັນເຈົ້າຂອງຊັບສິນແມ່ນມີສູງ, ຈໍານວນຊັບສິນທີ່ມີຫຼາຍກວ່າໝູ່ແມ່ນໂທລະສັບມືຖືກວາມເອົາ 84.3%, ໂທລະທັດກວມເອົາ 77.6.% ແລະ ຫລາຍກວ່າເຄິ່ງໜຶ່ງມີຕູ້ ເຢັນໃຊ້ກວມເອົາ 56.5%, ມີສ່ວນໜ້ອຍພຽງແຕ່ 10 ຄົວເຮືອນທີ່ມີຄອມພິວເຕີເປັນຂອງຕົວເອງ ກວມເອົາ 11.1%, ເກືອບທຸກຄົວເຮືອນມີລົດຈັກເປັນຂອງຕົວເອງກວມເອົາ 79.6%, ສໍາລັບລົດໃຫຍ່ຂ້ອນຂ້າງມີໜ້ອຍກວມເອົາ 15.5%, ສ່ວນຫຼາຍຄອບຄົວມີກໍາມະສິດທີ່ດິນເປັນຂອງຕົວເອງກວມເອົາ 92.3%.

**ຕະຕະລາງ 1: ເນື້ອໃນ ແລະ ຄວາມຖີ່ຕົວປ່ຽນກ່ຽວກັບສະຖານະພາບທາງດ້ານເສດຖະກິດ-ສັງຄົມ**

| **ຕົວປ່ຽນຍາວ (ສັນ) ຊື່/ປະເພດຕົວປ່ຽນ** | **ຕົວປ່ຽນ** | **N** | **%/ຄ່າສະເລ່ຍ (ມາດຖານ. dev.) (ຈໍານວນ=2,997)** |
|---|---|---|---|
| ປະເພດແຫຼ່ງຫຼັກ ຂອງນໍ້າດື່ມ (q01) | ກ໋ອກນໍ້າ/ມີທໍ່ນໍ້າຕໍ່ເຂົ້າໄປໃນເຮືອນ | 94 | 3.1 |
| | ກ໋ອກນໍ້າຢູ່ນອກເຮືອນ | 87 | 2.9 |
| | ກ໋ອກນໍ້າສາທາລະນະ | 105 | 3.5 |
| | ອ່າງນໍ້າໃຊ້ສໍາລັບຄົວເຮືອນ | 319 | 10.7 |
| | ອ່າງນໍ້າສາທາລະນະ | 180 | 6.0 |
| | ບໍ່ນໍ້າ | 634 | 21.2 |
| | ນໍ້າສ້າງ/ນໍ້າບາດານ | 217 | 7.2 |
| | ແມ່ນໍ້າ/ຫ້ວຍ/ໜອງ/ອ່າງ/ນໍ້າເຖື່ອນ | 195 | 6.5 |
| | ນໍ້າຝົນ | 23 | 0.8 |
| | ລົດສະແຕ໋ກນໍ້າ/ລົດບັນທຸກ/ຜູ້ຂາຍນໍ້າ | 4 | 0.1 |
| | ອື່ນໆ | 1,139 | 38.0 |
| ປະເພດຫ້ອງນໍ້າ (q02) | ຫ້ອງນໍ້າສ່ວນຕົວແບບທົວສະໂຄກ | 107 | 3.6 |
| | ຫ້ອງນໍ້າລວມແບບທົວສະໂຄກ | 78 | 2.6 |
| | ສ້ວມຖ່າຍແບບມີການລະບາຍອາກາດ | 1,918 | 64.0 |
| | ສ້ວມຖ່າຍປະຖົມປະຖານ/ສ້ວມຖ່າຍ | 52 | 1.7 |
| | ແມ່ນໍ້າ/ລໍາຄອງ | 1 | 0.0 |
| | ບໍ່ມີຫ້ອງນໍ້າ/ໃຊ້ປ່າ/ທົ່ງນາ | 834 | 27.8 |
| | ອື່ນໆ | 7 | 0.2 |
| ປະເພດວັດສະດຸທີ່ໃຊ້ ສໍາລັບມຸງ (q03) | ວັດສະດຸຈາກທໍາມະຊາດ | 238 | 7.9 |
| | ພື້ນຖານ(ຢາງພັດສຕິກ/ເຈ້ຍແກ໋ດ) | 1 | 0.0 |
| | ກະເບື້ອງ ຫຼື ດິນຂໍ | 1,072 | 35.8 |
| | ສັງກະສີ | 1,669 | 55.7 |
| | ອື່ນໆ | 17 | 0.6 |
| ໄຟຟ້າ | ມີ | 2,624 | 87.6 |
| | ບໍ່ມີ | 373 | 12.5 |

| | | | |
|---|---|---|---|
| ວິທະຍຸ | ມີ | 866 | 28.9 |
| | ບໍ່ມີ | 2,131 | 71.1 |
| ໂທລະທັດ | ມີ | 2,325 | 77.6 |
| | ບໍ່ມີ | 672 | 22.4 |
| ໂທລະສັບຕັ້ງໂຕະ | ມີ | 1,283 | 42.8 |
| | ບໍ່ມີ | 1,713 | 57.2 |
| | ບໍ່ຮູ້ | 1 | 0.0 |
| ໂທລະສັບມືຖື | ມີ | 2,525 | 84.3 |
| | ບໍ່ມີ | 472 | 15.8 |
| ຕູ້ເຢັນ | ມີ | 1,694 | 56.5 |
| | ບໍ່ມີ | 1,303 | 43.5 |
| ຄອມພິວເຕີ | ມີ | 334 | 11.1 |
| | ບໍ່ມີ | 2,661 | 88.8 |
| | ບໍ່ຮູ້ | 2 | 0.1 |
| ລົດຖີບ | ມີ | 1,153 | 38.5 |
| | ບໍ່ມີ | 1,842 | 61.5 |
| | ບໍ່ຮູ້ | 2 | 0.1 |
| ລົດຈັກ | ມີ | 2,385 | 79.6 |
| | ບໍ່ມີ | 611 | 20.4 |
| | ບໍ່ຮູ້ | 1 | 0.0 |
| ລົດໃຫຍ່ | ມີ | 463 | 15.5 |
| | ບໍ່ມີ | 2,507 | 83.7 |
| | ບໍ່ຮູ້ | 27 | 0.9 |
| ລົດຕ່ອນໆ | ມີ | 1,054 | 35.2 |
| | ບໍ່ມີ | 1,932 | 64.5 |
| | ບໍ່ຮູ້ | 11 | 0.4 |
| ເຈົ້າຂອງທີ່ດິນ(q06) | ມີ | 2,767 | 92.3 |
| | ບໍ່ມີ | 226 | 7.5 |
| | ບໍ່ຮູ້ | 4 | 0.1 |
| ຫ້ອງທີ່ໃຊ້ເປັນຫ້ອງນອນ (q07) | ສືບຕໍ່ | 2,995 | 2.14 (1.00) |
| ລວມທັງໝົດໃນ ຄົວເຮືອນ (hh1) | ສືບຕໍ່ | 2,997 | 5.78 (2.40) |

## 2.2 ວິທີການວິໄຈ

*ການເຂົ້າລະຫັດຂອງຕົວປ່ຽນ*

ສຳລັບຕາຕະລາງ 2, ແມ່ນອະທິບາຍລະຫັດຂອງແຕ່ລະຕົວປ່ຽນ. ຄຳຕອບທີ່ໄດ້ກ່ຽວກັບແຫຼ່ງນ້ຳດື່ມຕົ້ນຕໍ ແມ່ນນຳມາຈັດກຸ່ມຕາມການບໍລິໂພກນ້ຳ ໂດຍກຳນົດຕົວປ່ຽນເປັນແບບເລກບາຍນາລີທີ່ມີ 5 ຕົວປ່ຽນ.

- ເດີນທໍ່ນ້ຳເຂົ້າໃນເຮືອນ
- ມີນ້ຳສະໜອງເຖິງເຮືອນ ແຕ່ບໍ່ໄດ້ຕໍ່ນ້ຳໃຫ້ຢູ່ໃນເຮືອນ ໂດຍໄດ້ນຳໃຊ້ກ໋ອກນ້ຳຢູ່ນອກບ້ານ ແລະ ມີນ້ຳໃຊ້ຢູ່ກັບເຮືອນ ແລະ ໄດ້ນ້ຳຈາກສະແຕນ້ຳ, ລົດສົ່ງນ້ຳ ແລະ ຜູ້ຂາຍນ້ຳ.
- ນ້ຳສາທາລະນະໄດ້ແກ່ກ໊ອກນ້ຳສາທາລະນະ,ບໍ່ນ້ຳຂ້າງນອກ/ ບໍ່ນ້ຳສາທາລະນະ ແລະ ນ້ຳສ້າງ/ນ້ຳບາດານ.
- ນ້ຳທຳມະຊາດໄດ້ແກ່ ນ້ຳອອກບໍ່, ແມ່ນ້ຳ, ນ້ຳຫ້ວຍ, ໜອງ, ອ່າງນ້ຳ, ນ້ຳເຖື່ອນ ແລະ ນ້ຳຝົນ
- ແຫຼ່ງນ້ຳອື່ນໆ

*ການແບ່ງປະເພດກຸ່ມສ້ວມຖ່າຍອອກເປັນ 5 ປະເພດຄື:*

- ຫ້ອງນ້ຳສ່ວນຕົວ
- ຫ້ອງນ້ຳລວມ ເປັນການນຳໃຊ້ລວມກັນກັບຜູ້ອື່ນ
- ສ້ວມຖ່າຍປ່ອຍທີ່ມີບົບລະບາຍອາກາດ
- ສ້ວມຖ່າຍປ່ອຍແບບປະຖົມປະຖານ
- ບໍ່ມີສຸຂະພິບານ, ບໍ່ມີສ້ວມຖ່າຍ ນຳໃຊ້ປ່າ, ທົ່ງນາ, ແມ່ນ້ຳ, ຮ່ອງ

*3 ຕົວປ່ຽນແບບບາຍນາລີ ສ້າງຂຶ້ນສຳລັບວັດສະດຸທີ່ນຳໃຊ້ມຸງຫຼັງຄາ*

- ນຳໃຊ້ວັດສະດຸຈາກທຳມະຊາດລວມມີ ວັດສະດຸຈາກທຳມະຊາດ, ວັດສະດຸແບບປະຖົມປະຖານ ແລະ ອື່ນໆ
- ກະເບື້ອງ ຫຼື ດິນຂໍ
- ສັງກະສີ

ການນຳໃຊ້ໄຟຟ້າໃນບ້ານເຮືອນ ແລະ ຈຳນວນຊັບສິນທີ່ສາມາດໃຊ້ໄດ້ດົນມີ 6 ລາຍການ, ປະເພດຂອງພາຫະນະ ແລະ ກຳມະສິດທີ່ດິນຍັງຄົງຕ້ອງໄດ້ແຍກຕົວປ່ຽນບາຍນາລີ. ດັດສະນີຄວາມໜາແໜ້ນ ແມ່ນອີງຕາມອັດຕາສ່ວນລະຫວ່າງຈຳນວນສະມາຊິກໃນຄອບຄົວກັບຫ້ອງນອນ.

**ຕາຕະລາງ 2: ເນື້ອໃນຕົວປ່ຽນຂອງສະຖານະພາບເສດຖະກິດ-ສັງຄົມ ທີ່ນຳໃຊ້ເຂົ້າໃນການວິໄຈອີງປະກອບຫຼັກ**

| ເນື້ອໃນຕົວປ່ຽນ (ຊື່ສັ້ນຕົວປ່ຽນ) | ປະເພດ ຕົວປ່ຽນ | ຄ່າຕົວປ່ຽນ | |
|---|---|---|---|
| ກ໋ອກນ້ຳຢູ່ໃນເຮືອນ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ມີອ່າງນ້ຳ ແລະ ກ໋ອກນ້ຳຢູ່ນອກເຮືອນ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ນ້ຳ-ກ໋ອກນ້ຳສາທາລະນະ/ອ່າງ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ແຫຼ່ງນ້ຳທຳມະຊາດ ນ້ຳອອກບໍ່/ແມ່ນ້ຳ/ນ້ຳຝົນ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ນ້ຳອື່ນໆ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຫ້ອງນ້ຳສ່ວນຕົວແບບຫົວສະໂຄກ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຫ້ອງນ້ຳລວມແບບຫົວສະໂຄກ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ສ້ວມຖ່າຍປ່ອຍແບບລະບາຍອາກາດ *(vip)* | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ສ້ວມຖ່າຍແບບຂຸມ *(pit)* | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ບໍ່ມີສ້ວມຖ່າຍ/ໃຊ້ປ່າ/ທົ່ງນາ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |

| | | | |
|---|---|---|---|
| ໃຊ້ວັດສະດຸທຳມະຊາດ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຫຼັງຄາມຸງດ້ວຍກະເບື້ອງ/ດິນຂໍ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຫຼັງຄາມຸງດ້ວຍສັງກະສີ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ໄຟຟ້າ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ວິທະຍຸ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ໂທລະພາບ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ໂທລະສັບຕັ້ງໂຕະ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ໂທລະສັບມືຖື | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຕູ້ເຢັນ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຄອມພິວເຕີ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ລົດຖີບ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ລົດຈັກ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ລົດໃຫຍ່ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ລົດຕ່ອກໆ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ເຈົ້າຂອງກຳມະສິດທີ່ດິນ | *ບາຍນາລີ* | *ບໍ່ມີ=0* | *ມີ=1* |
| ຄວາມໜາແໜ້ນ (ຈຳນວນສະມາຊິກໃນຄອບຄົວ/ຫ້ອງນອນ) | *ສືບຕໍ່* | *0.5-16.0* | |

ຖານຂໍ້ມູນທີ່ສອງແມ່ນລວບລວມເອົາຈຳນວນ ທີ່ມີຄຳຕອບວ່າ "ບໍ່ຮູ້" ສຳລັບຕົວປ່ຽນດັ່ງຕໍ່ໄປນີ້: ເປັນເຈົ້າຂອງໂທລະສັບຕັ້ງໂຕະ, ຄອມພິວເຕີ, ລົດຖີບ, ລົດຈັກ, ລົດໃຫຍ່, ລົດຕ໋ອກໆ, ທີ່ດິນ ແລະ ຈຳ ນວນຫ້ອງນອນ. ສຳລັບຄຳຕອບທີ່ບໍ່ຮູ້ກ່ຽວກັບລາຍການຊັບສິນພາຍໃນເຮືອນ ແລະ ພາຫະນະ ແມ່ນໃຫ້ໃສ່ຄ່າ "ບໍ່" ສຳລັບຄຳຕອບທີ່ໄດ້ຈາກການຖາມຈຳນວນ 2 ຫຼັງຄາເຮືອນກ່ຽວກັບຫ້ອງນອນທີ່ໃຫ້ຄຳຕອບ "ບໍ່ຮູ້"

## 3.ການວິເຄາະອົງປະກອບຫຼັກ

*ການລວມຂອງບັນດາຕົວປ່ຽນ ຢູ່ໃນການວິເຄາະອົງປະກອບຫຼັກ*

ໂດຍອີງໃສ່ການກະຈາຍຄວາມຖີ່ຂອງຕົວຊີ້ບອກທັງໝົດ, ຕົວປ່ຽນທຸກຕົວໄດ້ພິຈາລະນາຢູ່ໃນການວິໃຈອົງປະກອບຫຼັກ. ສິ່ງທີ່ພິຈາລະນາເກັບ ເອົາໄວ້ຢູ່ໃນອົງປະກອບຫຼັກແມ່ນຄ່າຂອງຄວາມຮັ່ງມີທາງດ້ານຊັບສິນ. ຜົນໄດ້ຮັບຂອງການວິໃຈອົງປະກອບຫຼັກ ແມ່ນສະແດງຄ່າຄະແນນ ແລະ ນ້ຳໜັກຂອງແຕ່ລະຕົວປ່ຽນຢູ່ໃນຕາຕະລາງ.

ໂດຍທົ່ວໄປແລ້ວຕົວປ່ຽນໃດໜຶ່ງ ທີ່ມີປັດໃຈຄະແນນເປັນບວກ ແມ່ນຈັດຢູ່ໃນຄວາມຮັ່ງມີທາງດ້ານຊັບ ສິນສູງ ແລະ ກົງກັນຂ້າມແມ່ນຈັດຢູ່ໃນຄວາມຮັ່ງມີທາງດ້ານຊັບສິນຕ່ຳ.ໃນເບື້ອງຕົ້ນການວິໃຈຂອງອົງປະກອບຫຼັກແມ່ນໄດ້ນຳໃຊ້ຂໍ້ມູນຕົວປ່ຽນຊັບສິນຕົວຈິງຕາມຕາຕະລາງ2. ເຖິງຢ່າງໃດກໍຕາມ ນ້ຳໜັກກ່ຽວພັນກັບຕົວປ່ຽນທີ່ດິນແມ່ນເກືອບເທົ່າສູນ(0)ແລະ ຍົກເວັ້ນຮູບແບບທີ່ຕາມມາ. ຜົນໄດ້ຮັບສຸດທ້າຍຂອງຮູບແບບການວິໃຈອົງປະກອບຫຼັກແມ່ນສະແດງຢູ່ໃນຕາຕະລາງ 3

ສຳລັບກໍລະນີຄົວເຮືອນໜຶ່ງມີການໃຊ້ແຫຼ່ງນ້ຳ(ເຊັ່ນ:ນ້ຳຕົ໊ມ,ນ້ຳດື່ມ,ນ້ຳບໍລິສຸດ,ນ້ຳສະອາດ),ມີຫ້ອງນ້ຳ ຫຼື ສ້ວມຖ່າຍແບບລະບາຍອາກາດ, ຫຼັງຄາມຸງດ້ວຍກະເບື້ອງ ຫຼື ດິນຂໍ ແລະ ມີໄຟຟ້າໃຊ້ ແມ່ນຈັດປະເພດຢູ່ໃນໝວດຄະແນນຄວາມຮັ່ງມີດ້ານຊັບສິນສູງ.

ຕົວປ່ຽນສຳລັບໂຄງສ້າງຂອງຄົວເຮືອນອື່ນ ແມ່ນມີທັງນ້ຳໜັກທີ່ເປັນຄ່າບວກຕ່ຳຫຼາຍ ຫຼື ນ້ຳໜັກທາງລົບ. ການໃຊ້ແຫຼ່ງນ້ຳຕົ໊ມຕໍຈາກສາທາລະນະ ຫຼື ຈາກນ້ຳອອກບໍ່ ຫຼື ແມ່ນ້ຳ, ສ້ວມຖ່າຍແບບດັ່ງເດີມ ຫຼື ບໍ່ມີສ້ວມຖ່າຍ ແລະ ຫຼັງຄາມຸງດ້ວຍວັດສະດຸທຳມະຊາດ ຫຼື ສັງກະສີ ແມ່ນສະແດງຄ່ານ້ຳໜັກທາງລົບສູງ.

ສຳລັບຫຼັງຄາເຮືອນໃດທີ່ ມີ ລາຍການຊັບສິນເຊັ່ນ: ໂທລະພາບ, ໂທລະສັບມືຖື, ຕູ້ເຢັນ, ຄອມພິວເຕີ ອາດຈັດຢູ່ໃນຄະແນນທາງດ້ານຊັບສິນສູງ. ສຳລັບຄົວເຮືອນໃດທີ່ມີຍານພາຫະນະ 1 ໃນ 4 ປະເພດນັ້ນແມ່ນຈັດເຂົ້າຢູ່ໃນໝວດຄວາມຮັ່ງມີທາງດ້ານຊັບສິນ, ສຳລັບເຮືອນໃດທີ່ມີລົດຈັກເປັນຂອງຕົວເອງ ຫຼື ລົດທີ່ໃຊ້ ເຂົ້າໃນການຜະລິດແມ່ນໃຫ້ຄະແນນທາງດ້ານນ້ຳໜັກສູງທີ່ສຸດ. ເຮືອນໃດທີ່ມີຄວາມໜາແໜ້ນທາງດ້ານພົນລະ ເມືອງສູງແມ່ນຈັດຢູ່ໃນການໃຫ້ຄະແນນຊັບສິນຕ່ຳກວ່າ.

**ຕາຕະລາງ 3 ສະແດງຜົນໄດ້ຮັບຂອງການວິໄຈອົງປະກອບຫຼັກ**

| ຕົວຊີ້ບອກສະຖານະພາບ ດ້ານເສດຖະກິດ-ສັງຄົມ | ລວມຕົວຢ່າງ (ຈຳນວນ=2,297) ຄ່າສະເລ່ຍ | ມາດຖານ .dev | PC score |
|---|---|---|---|
| ກ໋ອກນ້ຳຢູ່ໃນເຮືອນ | 0.031 | 0.174 | 0.048 |
| ມີນ້ຳໃຊ້ຢູ່ເຮືອນ(ນ້ຳອ່າງ/ກ໋ອກນ້ຳຢູ່ນອກເຮືອນ) | 0.137 | 0.344 | 0.015 |
| ນ້ຳສາທາລະນະ(ກ໋ອກນ້ຳສາທາລະນະ/ອ່າງ) | 0.168 | 0.373 | -0.119 |
| ແຫຼ່ງນ້ຳທຳມະຊາດ(ນ້ຳອອກບໍ່/ແມ່ນ້ຳ/ນ້ຳຝົນ) | 0.284 | 0.451 | -0.244 |
| ນ້ຳອື່ນໆ | 0.380 | 0.485 | 0.291 |
| ຫ້ອງນ້ຳສ່ວນຕົວແບບສະໂຄກ | 0.036 | 0.186 | 0.112 |
| ຫ້ອງນ້ຳລວມແບບສະໂຄກ | 0.028 | 0.166 | 0.081 |
| ສ້ວມຖ່າຍແບບມີການລະບາຍອາກາດ | 0.640 | 0.480 | 0.225 |
| ສ້ວມຖ່າຍແບບຂຸມ | 0.017 | 0.131 | -0.052 |
| ບໍ່ມີສ້ວມຖ່າຍ/ໃຊ້ປ່າ/ທົ່ງນາ | 0.279 | 0.448 | -0.302 |
| ໃຊ້ວັດສະດຸຈາກທຳມະຊາດ | 0.085 | 0.280 | -0.197 |
| ຫຼັງຄາມຸງກະເບື້ອງ/ດິນຂໍ | 0.358 | 0.479 | 0.226 |
| ຫຼັງຄາມຸງສັງກະສີ | 0.557 | 0.497 | -0.108 |
| ໄຟຟ້າ | 0.876 | 0.330 | 0.271 |
| ວິທະຍຸ | 0.289 | 0.453 | 0.043 |
| ໂທລະພາບ | 0.776 | 0.417 | 0.325 |
| ໂທລະສັບຕັ້ງໂຕະ | 0.428 | 0.495 | 0.071 |
| ໂທລະສັບມືຖື | 0.843 | 0.364 | 0.351 |
| ຕູ້ເຢັນ | 0.565 | 0.496 | 0.244 |
| ຄອມພິວເຕີ | 0.111 | 0.315 | 0.196 |
| ລົດຖີບ | 0.385 | 0.487 | 0.176 |
| ລົດຈັກ | 0.796 | 0.403 | 0.249 |
| ລົດໃຫຍ່ | 0.154 | 0.361 | 0.208 |
| ລົດຕ່ອກໆ | 0.352 | 0.478 | 0.037 |
| ຄວາມໜາແໜ້ນ (ຈຳນວນສະມາຊິກໃນຄອບຄົວ/ ຫ້ອງນອນ) | ສືບຕໍ່ | 0.5-16.0 | -0.169 |

### 3.1 ການຈຳແນກຄົວເຮືອນອອກເປັນກຸ່ມຕາມສະຖານະພາບທາງເສດຖະກິດ-ສັງຄົມ

ໂດຍນຳໃຊ້ປັດໃຈຄະແນນ ຈາກນ້ຳໜັກຂອງອົງປະກອບໃນເບື້ອງຕົ້ນ ຈາກນັ້ນຕົວປ່ຽນອິດສະຫຼະສາມາດກຳນົດແຕ່ລະເຮືອນທີ່ມີຄ່າສະເລ່ຍເທົ່າກັບ 0 ແລະ ຄ່າຜິດດ່ຽງມາດຕະຖານເທົ່າກັບ 1 ຊຶ່ງຂຶ້ນ ກັບຕົວປ່ຽນໂຕກຳນົດ. ຄະແນນທາງດ້ານຊັບສິນເຮືອນໃດສູງກວ່າ ສະແດງວ່າເຮືອນນັ້ນມີຄວາມຮັ່ງມີທາງດ້ານຊັບສິນສູງກວ່າ. ຮູບທີ 1 ເປັນຮູບກຣາບສະແດງເຖິງຄະແນນທາງດ້ານຊັບສິນຂອງຄົວເຮືອນ ແລະ ເຫັນໄດ້ວ່າຄ່າຂອງຊັບສິນແມ່ນຕໍ່າລົງໄປຂ້າງໜ້າ "ສູງກວ່າ" ຄ່າຄວາມຮັ່ງມີທາງດ້ານຊັບສິນ.

**ຮູບທີ 1 : ກຣາບຟຣິກເສັ້ນສະແດງການກະຈາຍຄະແນນຄວາມຮັ່ງມີທາງດ້ານຊັບສິນ**




ປະເພດຄວາມຮັ່ງມີທາງດ້ານຊັບສິນຂອງຄົວເຮືອນແມ່ນມີຄວາມແຕກຕ່າງກັນຫຼາຍ ໃນການສຶກສານີ້ ສຳລັບການຕັດຄະແນນໂດຍທົ່ວໄປແລ້ວໄດ້ກຳນົດຫຼັກການທີ່ແຕກຕ່າງກັນຕົວຢ່າງເຊັ່ນ: ການວິໃຈສຳ ລັບ "ຄົວເຮືອນ" ຫຼື "ການໃຈ້ແຍກກຸ່ມ" ອີກວິທີໜຶ່ງກໍຄື ໃຊ້ການຂັບເຄື່ອນຂໍ້ມູນ ຫຼື ການວິໃຈກຸ່ມເພື່ອໃຫ້ໄດ້ ຄ່າປະເພດຄວາມຮັ່ງມີທາງດ້ ານ ຊັບ ສິ ນ . ສຳລັບວິທີການວິໃຈກຸ່ມນີ້ ທາງອົງການອະນາໄມໂລກ ກໍຍັງໄດ້ນຳໃຊ້ເຂົ້າເຮັດການສຶກສາກ່ຽວກັບສະຖານະພາບ ທາງດ້ານເສດຖະກິດ-ສັງຄົມຢູ່ໃນຫຼາຍປະເທດຂອງແມ່ຍິງທີ່ໄດ້ຮັບຄວາມຮຸນແຮງ ແລະ ດ້ານສຸຂະພາບ ທີ່ມີຜົນໄດ້ຮັບຄື: ຕໍ່າ, ກາງ ແລະ ສູງ.

ສຳລັບໃນກໍລະນີສຶກສານີ້, ທັງສອງວິທີນີ້ໄດ້ດຳເນີນການເຮັດສຳຫຼວດ ເພື່ອຈຳແນກຄົວເຮືອນອອກເປັນກຸ່ມທີ່ມີຄວາມຮັ່ງມີທາງດ້ານຊັບສິນ. ຄົວເຮືອນໃດທີ່ໄດ້ຈັດເປັນອັນດັບໜຶ່ງແມ່ນອີງໃສ່ຄະແນນທາງດ້ານຊັບສິນ ແລະ ແຍກອອກເປັນສາມກຸ່ມຂະໜາດເທົ່າກັນ ຕາມວິທີການວິໃຈແບບ" "Tertile".

ໃນແນວທາງທີ່ສອງແມ່ນໃຊ້ K ໝາຍເຖິງການວິໃຈກຸ່ມຄົວເຮືອນອອກເປັນສາມກຸ່ມ. ສຳລັບຄະແນນສະເລ່ຍທີ່ໄດ້ມາຂອງແຕ່ລະກຸ່ມນັ້ນແມ່ນໄດ້ຈາກສອງວິທີດັ່ງກ່າວ. ຊຶ່ງສະແດງໃຫ້ເຫັນໃນຕາຕະລາງ 4. ສະແດງໃຫ້ເຫັນຄວາມແຕກຕ່າງຄະແນນສະເລ່ຍ ລະຫວ່າງກຸ່ມທີ່ຊັບສິນຫຼາຍສຸດ ແລະ ຊັບສິນໜ້ອຍສຸດ ສຳລັບຄ່າສູງສຸດຂອງວິທີການວິໃຈກຸ່ມ (Cluster) ມີຄ່າສູງກວ່າຄື 5.320 ແຕ່ວິທີການວິໃຈແບບ Tertile ມີຄ່າພຽງ 4.942 ສະຫຼຸບໄດ້ວ່າສຳລັບວິທີການວິໃຈກຸ່ມ (Cluster) ດີກວ່າໜ້ອຍໜຶ່ງໃນດ້ານຄວາມແຕກຕ່າງກຸ່ມທີ່ມີຊັບສິນໜ້ອຍສຸດ ແລະ ຫຼາຍສຸດ.

ສຳລັບວິທີການວິໃຈກຸ່ມນີ້ ແມ່ນຫຼາຍກວ່າໜ້ອຍໜຶ່ງ 1 ໃນ 5 ໄດ້ຈຳແນກອອກຕາມກຸ່ມທີ່ມີຊັບສິນນ້ອຍເທົ່າກັບ 21.3% ກຸ່ມທີ່ມີຊັບສິນປານກາງ 32.9% ແລະ ກຸ່ມທີ່ມີຊັບສິນຫຼາຍ 45.8% ເມື່ອປຽບທຽບແລ້ວສຳລັບສອງວິທີນີ້ແມ່ນຄືກັນ 75%

**ຕາຕະລາງ 4: ຄ່າສະເລ່ຍສະຖານະພາບທາງເສດຖະກິດ-ສັງຄົມ ໂດຍອີງຕາມກຸ່ມທີ່ມີຄວາມຮັ່ງມີທາງດ້ານຊັບສິນ**

| | ການວິໃຈແບບໃຈ້ແຍກກຸ່ມ (ຈຳນວນ=2,997) | | | ການວິໃຈແບບກຸ່ມ(ຈຳນວນ=2,997) | | |
|---|---|---|---|---|---|---|
| ລວມຕົວຢ່າງ | ຕໍ່າ | ກາງ | ສູງ | ຕໍ່າ | ກາງ | ສູງ |
| N | 999 | 1.000 | 998 | 637 | 986 | 1.374 |
| % | 33.3 | 33.4 | 33.3 | 21.3 | 32.9 | 45.8 |
| ຄ່າສະເລ່ຍ | -2.649 | 0.358 | 2.293 | -3.361 | -0.559 | 1.959 |
| ຄ່າຜິດດ່ຽງ | 1.220 | 0.672 | 0.654 | 0.940 | 0.758 | 0.786 |
| ຄ່າຕໍ່າສຸດ | -5.817 | -0.891 | 1.375 | -5.817 | -1.958 | 0.704 |
| ຄ່າສູງສຸດ | -0.895 | 1.372 | 3.917 | -1.963 | 0.699 | 3.917 |

ເມື່ອສົມທຽບການເຊື່ອມໂຍງພາຍໃນຂອງແຕ່ລະຕົວປ່ຽນ ຕາມກຸ່ມເຮືອນທີ່ຮັ່ງມີທາງດ້ານຊັບສິນ ເພື່ອ ປະເມີນຄ່າ ເຖິງ ແມ່ນວ່າກຸ່ມນັ້ນມີຄວາມແຕກຕ່າງໃນດ້ານການເປັນເຈົ້າຂອງຊັບສິນກໍຕາມ. ແຕ່ຖ້າຄ່າຕົວຊີ້ບອກຊັບສິນສູງແມ່ນຈະຕ້ອງໄດ້ເຂົ້າຢູ່ໃນກຸ່ມທີ່ມີຊັບສິນຫຼາຍ ແລະ ຊີ້ບອກຕໍ່າແມ່ນຈະຕ້ອງໄດ້ເຂົ້າຢູ່ໃນກຸ່ມທີ່ມີຊັບສິນໜ້ອຍ. ຕາຕະລາງ 5 ສະແດງໃຫ້ເຫັນຄ່າສະເລ່ຍຕົວປ່ຽນຂອງຄວາມເປັນເຈົ້າຂອງຊັບສິນ ຂອງສອງວິທີການວິໃຈກຸ່ມ (Cluster) ແລະ ແບບ Tertile.

ຜົນການວິໃຈພົບວ່າຕົວຊີ້ບອກສ່ວນໃຫຍ່ ທັງສອງວິທີນີ້ແມ່ນມີຄວາມແຕກຕ່າງສໍາລັບການເປັນເຈົ້າຂອງໂດຍອີງຕາມກຸ່ມທີ່ຮັ່ງມີທາງດ້ານຊັບສິນ ເຖິງຢ່າງໃດກໍຕາມສໍາລັບວິທີການວິໃຈກຸ່ມ (Cluster) ແມ່ນມີຄວາມແຕກຕ່າງດີກວ່າ ສໍາລັບກຸ່ມທີ່ມີຊັບສິນຫລາຍ ແລະ ມີຊັບສິນປານກາງ. ໃນຂະນະດຽວກັນນັ້ນສໍາລັບການວິໃຈແບບ Tertile ແມ່ນທາງການການວິເຄາະກວດສອບດີກວ່າ ສໍາລັບກຸ່ມທີ່ມີຊັບສິນຫລາຍ ແລະ ກຸ່ມມີຊັບສິນໜ້ອຍ.

**ຕາຕະລາງ 5: ຄ່າສະເລ່ຍຂອງຕົວປ່ຽນຊັບສິນໂດຍອີງຕາມກຸ່ມທີ່ຮັ່ງມີທາງດ້ານຊັບສິນ (ຈໍານວນ=2,997)**

| | Tertile | | | ແບບກຸ່ມ | | |
|---|---|---|---|---|---|---|
| **SES ຕົວຊີ້ວັດ** | **ໜ້ອຍສຸດ** | **ຄ່າກາງ** | **ສູງສຸດ** | **ໜ້ອຍສຸດ** | **ຄ່າກາງ** | **ສູງສຸດ** |
| ກ໋ອກນໍ້າຢູ່ໃນເຮືອນ | 0.8 | 3.7 | 4.9 | 0.3 | 2.3 | 5.0 |
| ມີນໍ້າໃຊ້ຢູ່ເຮືອນ(ມີອ່າງ/ກ໋ອກນໍ້າຢູ່ນອກເຮືອນ) | 9.8 | 21.9 | 9.3 | 7.4 | 17.3 | 14.0 |
| ນໍ້າສາທາລະນະ(ກ໋ອກນໍ້າສາທາລະນະ/ອ່າງ) | 28.5 | 19.6 | 2.1 | 27.0 | 28.0 | 3.9 |
| ແຫຼ່ງນໍ້າທໍາມະຊາດ(ນໍ້າອອກບໍ່/ແມ່ນໍ້າ/ນໍ້າຝົນ) | 57.6 | 26.1 | 1.6 | 63.9 | 39.1 | 4.4 |
| ນໍ້າອື່ນໆ | 3.3 | 28.7 | 82.1 | 1.4 | 13.3 | 72.7 |
| ຫ້ອງນໍ້າສ່ວນຕົວແບບສະໂຄກ | 0.0 | 0.3 | 10.4 | 0.0 | 0.0 | 7.8 |
| ຫ້ອງນໍ້າລວມແບບສະໂຄກ | 0.5 | 0.6 | 7.4 | 0.2 | 0.7 | 5.6 |
| ສ້ວມຖ່າຍແບບມີການລະບາຍອາກາດ | 27.5 | 82.5 | 82.0 | 21.4 | 61.5 | 85.6 |
| ສ້ວມຖ່າຍແບບຂຸມ | 4.2 | 1.0 | 0.0 | 3.8 | 2.6 | 0.2 |
| ບໍ່ມີສ້ວມຖ່າຍ/ໃຊ້ປ່າ/ທົ່ງນາ | 67.8 | 15.6 | 0.2 | 74.7 | 35.2 | 0.9 |
| ໃຊ້ວັດສະດຸຈາກທໍາມະຊາດ | 23.6 | 1.8 | 0.2 | 31.6 | 4.8 | 0.6 |
| ຫຼັງຄາມຸງກະເບື້ອງ/ດິນຂໍ | 11.5 | 27.3 | 68.5 | 6.6 | 25.1 | 57.0 |
| ຫຼັງຄາມຸງສັງກະສີ | 64.9 | 70.9 | 31.3 | 61.9 | 70.2 | 42.4 |
| ໄຟຟ້າ | 63.4 | 99.3 | 100.0 | 47.9 | 95.8 | 100.0 |
| ວິທະຍຸ | 24.9 | 27.3 | 34.5 | 24.2 | 28.0 | 31.7 |
| ໂທລະທັດ | 37.7 | 95.4 | 99.6 | 17.0 | 86.4 | 99.3 |
| ໂທລະສັບຕັ້ງໂຕະ | 35.1 | 43.6 | 49.7 | 30.1 | 44.6 | 47.4 |
| ໂທລະສັບມືຖື | 60.2 | 93.1 | 99.5 | 49.0 | 86.5 | 99.0 |
| ຕູ້ເຢັນ | 6.5 | 64.2 | 98.9 | 0.6 | 36.5 | 96.8 |
| ຄອມພິວເຕີ | 0.1 | 2.3 | 31.1 | 0.0 | 1.1 | 23.5 |
| ລົດຖີບ | 16.3 | 38.9 | 60.2 | 11.9 | 33.3 | 54.5 |
| ລົດຈັກ | 52.3 | 87.7 | 98.8 | 41.6 | 78.8 | 97.7 |
| ລົດໃຫຍ່ | 1.4 | 4.8 | 40.2 | 1.1 | 3.1 | 30.9 |
| ລົດຕ໋ອກໆ | 27.4 | 46.8 | 31.3 | 19.2 | 46.6 | 34.4 |
| ຄວາມໜາແໜ້ນ | 3.94 | 3.21 | 2.38 | 4.11 | 3.49 | 2.53 |
| | (2.06) | (1.83) | (1.05) | (2.06) | (2.01) | (1.21) |

**4. ສະຫຼຸບ**

ການສະຫຼຸບນີ້ແມ່ນໄດ້ອະທິບາຍເຖິງ ວິທີການວິໃຈອົງປະກອບຫຼັກ ບົນພື້ນຖານຄ່າດັດສະນີ ທີ່ໄດ້ສ້າງຂຶ້ນ ແລະ ໄດ້ນຳເອົາໄປໃຊ້ເຂົ້າໃນການສຳຫຼວດຂໍ້ມູນແຫ່ງຊາດ ກ່ຽວກັບປະສົບການດຳລົງຊີວິດແລະ ດ້ານສຸຂະພາບຂອງແມ່ຍິງລາວໃນປີ 2014 ຈາກການນຳໃຊ້ຕົວຢ່າງທັງໝົດເຂົ້າໃນການວິໃຈອົງປະກອບຫຼັກ, ໂດຍນຳໃຊ້ວິທີການວິໃຈກຸ່ມແບບ (Cluster) ແລະ ແບບ Tertile ເຂົ້າໃນການຈຳແນກກຸ່ມຂອງຄົວເຮືອນທີ່ມີຄວາມຮັ່ງມີທາງດ້ານຊັບສິນ ຕາມການປະເມີນຜົນຂອງການເຊື່ອມໂຍງຂອງທັງສອງວິທີນີ້ ສາມາສະຫຼຸບໄດ້ວ່າ ທັງສອງວິທີນີ້ມີການຄາດຫວັງ ຂໍ້ມູນເບື້ອງຕົ້ນ ຄືການຈຳແນກຫຼັງຄາເຮືອນຕາມຄວາມຮັ່ງມີທາງດ້ານຊັບສິນ.

**ເອກະສານອ້າງອີງ**


ຈະເຮັດແນວໃດ(ຫຼືວ່າບໍ່ລົງມືເຮັດ)ຂອງ Vyas S ແລະ Kumaranayake L (2006). ການສ້າງດັດສະນີສະຖານະພາບທາງດ້ານເສດຖະກິດ-ສັງຄົມ: ວິທີການວິໃຈອົງປະກອບຫຼັກ, ແຜນການ ແລະ ນະໂຍບາຍທາງດ້ານສຸຂະພາບ 21(6): 459-468

# ເອກະສານຊ້ອນທ້າຍ V:
# ການວິເຄາະບັນດາປັດໄຈສ່ຽງຕ່າງໆ

**ກຸ່ມຕົວຢ່າງຍ່ອຍທີ່ໃຊ້ສຳລັບວິເຄາະທາງສະຖິຕິ**

ຂໍ້ມູນຕົວຢ່າງທີ່ໃຊ້ເຂົ້າໃນການວິໄຈຂອງບົດລາຍງານສະບັບນີ້ ເປັນຂໍ້ມູນຂອງຕົວຢ່າງຍ່ອຍທີ່ໄດ້ມາຈາກກຸ່ມຕົວຢ່າງທີ່ເປັນສ່ວນໜຶ່ງ ໃນການສຳຫຼວດຂໍ້ມູນກ່ຽວກັບຄວາມຮຸນແຮງທີ່ມີຕໍ່ແມ່ຍິງຢູ່ໃນປະ ເທດລາວ.

ຈາກການສຳຫຼວດຜູ້ຍິງຈຳນວນ 470 ຄົນໃຫ້ຄຳຕອບວ່າ 16.5% ແມ່ນການຖືກທຳຮ້າຍຮ່າງກາຍ ຫຼື ມີຄວາມຮຸນແຮງທາງເພດຈາກຜູ້ເປັນຄູ່ຄອງ ຫຼື ຜົວເປັນໄລຍະເວລາດົນຢ່າງໜ້ອຍເປັນເວລາເຄິ່ງໜຶ່ງຂອງຊີວິດເຂົາເຈົ້າ ແລະ ໃນຂະນະດຽວກັນຈາກການສຳຫຼວດຜູ້ຍິງຈຳນວນ 2,377 ຄົນ ໃຫ້ຄຳຕອບວ່າ ບໍ່ເຄີຍຖືກທຳຮ້າຍຮ່າງກາຍ ຫຼື ມີຄວາມຮຸນແຮງທາງເພດແຕ່ຢ່າງໃດເລີຍ (ສະແດງໃນຮູບທີ 2)

ສຳລັບແບບຈຳລອງທາງດ້ານສະຖິຕິ ແມ່ນນຳໃຊ້ຂໍ້ມູນຂອງຕົວຢ່າງຍ່ອຍຂອງຈຳນວນຜູ້ຍິງ 187 ຄົນຂອງຜູ້ຍິງສ່ວນຫຼາຍຜູ້ທີ່ຖືກທຳຮ້າຍຮ່າງກາຍ ຫຼື ມີຄວາມຮຸນແຮງທາງເພດຈາກຜູ້ເປັນຄູ່ຄອງ ຫຼື ຜົວ ໃນປັດຈຸບັນ ຫຼື ໃນອະດີດຜ່ານມາເປັນໄລຍະເວລາ 12 ເດືອນ, ຊຶ່ງລວມທັງກຸ່ມຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງ (ກຸ່ມ 8 ໃນຮູບທີ 2)

ໄດ້ສົມທຽບກັບກຸ່ມຜູ້ຍິງໃນຈຳນວນ 2,377 ຄົນ ຜູ້ຍິງທີ່ບໍ່ໃຫ້ຄຳຕອບແຕ່ຢ່າງໃດເລີຍກ່ຽວກັບຄວາມ ຮຸນແຮງ. (ກຸ່ມ 4 ໃນຮູບທີ 2)

ຮູບທີ່ສອງ
ຊີ້ບອກການໃຊ້ກຸ່ມຕົວຢ່າງສຳຮອງ
ເພື່ອການວິເຄາະປັດໄຈສ່ຽງ




ຂໍ້ມູນໃນຮູບແບບການຈຳລອງນີ້ເລືອກເອົາສະເພາະຈຳນວນຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງຈາກຄູ່ຄອງໃນປັດຈຸບັນ ຫຼື ຫຼ້າສຸດ (ບໍ່ແມ່ນຈຳນວນຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງໃນຜ່ານມາ) ເພາະວ່າຂໍ້ມູນກ່ຽວກັບລັກສະນະພຶດຕິກຳຂອງຄູ່ຄອງທີ່ໄດ້ເກັບກຳມານີ້ ເປັນຂໍ້ມູນໃນປັດຈຸບັນ ຫຼື ເປັນຂໍ້ມູນຫຼ້າສຸດ. ສຳລັບຜູ້ຍິງຈຳນວນ 17 ຄົນລາຍງານວ່າພວກເຂົາເຈົ້າຖືກທຳຮ້າຍຮ່າງກາຍ ຫຼື ຄວາມຮຸນແຮງທາງເພດ ຈາກຜູ້ເປັນຄູ່ຄອງໃນໄລຍະຜ່ານມາ. ສະນັ້ນ ໃນຈຳນວນດັ່ງກ່າວນີ້ແມ່ນບໍ່ໄດ້ນຳເຂົ້າໃນການວິໄຈ ບັນຫາດັ່ງກ່າວນີ້ ແມ່ນຍັງໄດ້ຮັບການພິຈາລະນາຄົ້ນຫາສາເຫດຈາກຄູ່ຄອງ. ຜູ້ຍິງຈຳນວນ 283 ຄົນລາຍງານວ່າພວກເຂົາໄດ້ຮັບຄວາມຮຸນແຮງຈາກຄູ່ຄອງໃນປັດຈຸບັນ ຫຼື ໃນຫວ່າງບໍ່ດົນມານີ້ ແຕ່ບໍ່ແມ່ນເປັນເວລາ 12 ເດືອນກ່ອນການສຳຫຼວດ, ຂໍ້ມູນນັ້ນຮັບການວິໄຈພິຈາລະນາເຖິງໂອກາດ ໃນການໃຊ້ຊີວິດຕໍ່ກັບຄວາມຮຸນແຮງ.

ສຳລັບຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງໃນໄລຍະເວລາ 12 ເດືອນຜ່ານມາ ແລະ ຜູ້ຍິງຈຳນວນ 17 ຄົນ ປະເຊີນກັບຄວາມຮຸນແຮງທາງຈາກຜູ້ເປັນຄູ່ຄອງໃນໄລຍະຜ່ານມາ ແມ່ນບໍ່ໄດ້ນຳເຂົ້າໃນການວິໃຈເນື່ອງຈາກວ່າພຶດຕິກຳຂອງຄູ່ຄອງກຸ່ມນີ້ໄດ້ຮັບການວິໃຈແລ້ວ.

**ຕົວປ່ຽນຢູ່ໃນການວິເຄາະຂໍ້ມູນສະຖິຕິ**

***ຜົນໄດ້ຮັບຂອງຕົວປ່ຽນ: ຄວາມຮຸນແຮງທາງເພດ ແລະ/ຫຼື ຄວາມຮຸນແຮງທາງຮ່າງກາຍຂອງຄູ່ຄອງໃນ 12 ເດືອນທີ່ຜ່ານມາ.***

ຜົນຂອງຕົວປ່ຽນ ຫຼື "ຕົວປ່ຽນອິດສະຫຼະ" ຢູ່ໃນການວິໃຈແມ່ນຄວາມຮຸນແຮງທາງເພດ ແລະ ຫຼື ການທຳຮ້າຍຮ່າງກາຍຂອງຄູ່ຄອງ ແລະ ລວມທັງທຸກການກະທຳຄວາມຮຸນແຮງທາງເພດ ຫຼື ທຳຄວາມຮຸນແຮງຕໍ່ຮ່າງກາຍ. (ເບິ່ງຕາມດັດສະນີ 1 ສຳລັບພຶດຕິກຳທີ່ເປັນທຳມະຊາດ) ຜົນຂອງຄວາມຮຸນແຮງທາງເພດ ແລະ ຫຼື ການທຳຮ້າຍຮ່າງກາຍ ແມ່ນເປັນຕົວເລືອກຂອງຕົວປ່ຽນ ຄຳຖາມທີ່ໃຊ້ເຂົ້າໃນການວັດຄວາມຮຸນແຮງທາງເພດ ແລະ ຫຼື ການທຳຮ້າຍຮ່າງກາຍແມ່ນໄດ້ຖືກນຳໃຊ້ຢູ່ໃນຫຼາຍໆປະເທດ ແລະ ປັດຈຸບັນນີ້ແມ່ນໄດ້ຮັບການພິຈາລະນາກຳນົດຄ່າຂອງຄວາມຮຸນແຮງ ຍິ່ງໄປກວ່ານັ້ນດັ່ງທີ່ເຫັນຢູ່ໃນການສຶກສາກ່ຽວກັບການດຳລົງຊີວິດ ແລະ ດ້ານສຸຂະພາບຂອງແມ່ຍິງ, ແມ່ຍິງໄດ້ຮັບຄວາມຮຸນແຮງທາງເພດ ແລະ ຖືກທຳຮ້າຍຮ່າງກາຍຈາກຜູ້ເປັນສາມີທີ່ເຫັນວ່າ ມີຄວາມ ຊັບຊ້ອນ.

ການທົດສອບຄວາມໜ້າເຊື່ອຖືສຳລັບຄວາມຮຸນແຮງທາງເພດ ແລະ ຫຼື ການທຳຮ້າຍຮ່າງກາຍຂອງຄູ່ຄອງທີ່ມີຕໍ່ຜູ້ຍິງ ແມ່ນໄດ້ສະແດງຄ່າສຳປະສິດອານຟາຄູອນບາດ 0.82. ຊຶ່ງຊີ້ບອກລະດັບຄວາມໜ້າເຊື່ອຖືທີ່ດີ /ເປັນທີ່ຍອມຮັບໄດ້.

ໃນກໍລະນີສຶກສາອື່ນໆ ແມ່ນນຳໃຊ້ປັດໃຈສ່ຽງໃນການວິໃຈສຳລັບຄວາມຮຸນແຮງທາງເພດ ແລະ ຫຼື ການທຳຮ້າຍຮ່າງກາຍຂອງຄູ່ຄອງການດຳເນີນການທີ່ແນ່ນອນ ເຊິ່ງຜົນໄດ້ຮັບຂອງຕົວປ່ຽນ ເຊັ່ນດຽວກັນກັບກຸ່ມປະກອບຍ່ອຍທີ່ນຳໃຊ້ເຂົ້າໃນການວິໃຈ ແມ່ນແຕກຕ່າງໃນການຄົ້ນຄວ້າແຕ່ລະຢ່າງ.

ເງື່ອນໄຂໃນການວິເຄາະ ສຳລັບກໍລະນີສຶກສານີ້ມີດັ່ງຕໍ່ໄປນີ້:

- ການສົມທຽບລະຫວ່າງຜູ້ທີ່ໄດ້ຮັບຄວາມຮຸນແຮງ ກັບ ຜູ້ບໍ່ໄດ້ຮັບຄວາມຮັບແຮງໃດໆ(ຮູບທີ 2 ມີຄວາມສອດຄ່ອງກັບກຸ່ມ 5 ທຽບກັບ ກຸ່ມ 4 ຫຼື ກຸ່ມ 6 ທຽບກັບ ກຸ່ມ 4)
- ການສົມທຽບລະຫວ່າງຜູ້ທີ່ໄດ້ຄວາມຮຸນແຮງໃນປັດຈຸບັນ ກັບ ຜູ້ບໍ່ໄດ້ຮັບຄວາມຮຸນແຮງໃນປັດຈຸບັນ(ຮູບທີ 2 ມີຄວາມສອດຄ່ອງກັບກຸ່ມ 8 ທຽບກັບ ກຸ່ມ 9 +ກຸ່ມ 4)
- ການສົມທຽບລະຫວ່າງຜູ້ທີ່ໄດ້ຮັບຄວາມຮຸນແຮງໃນປັດຈຸບັນ ກັບ ຜູ້ບໍ່ໄດ້ຮັບຄວາມຮັບແຮງໃດໆໃນປັດຈຸບັນ(ຮູບທີ 2 ມີຄວາມສອດຄ່ອງກັບກຸ່ມ 8 ທຽບກັບ ກຸ່ມ 4)

ສຳລັບການສຳຫຼວດຂໍ້ມູນກ່ຽວກັບປະສົບການດຳລົງຊີວິດ ແລະ ດ້ານສຸຂພາບຂອງແມ່ຍິງລາວໃນປີ 2014.

ທາງເລືອກທຳອິດ (ກຸ່ມຜູ້ຍິງໄດ້ຮັບຄວາມຮຸນແຮງຈາກຄູ່ຄອງໃນປັດຈຸບັນ ຫຼື ໃນຫວ່າງບໍ່ດົນມານີ້ ໃນ 12 ເດືອນທີ່ຜ່ານມາສົມທຽບກັບ ກຸ່ມຜູ້ຍິງທີ່ບໍ່ໄດ້ຮັບຄວາມຮຸນແຮງຈາກຄູ່ຄອງຢູ່ໃນຊ່ວງການດຳລົງຊີວິດ).

ທາງເລືອກທີສາມ ແມ່ນໄດ້ຮັບການພິຈາລະນາ (ໃນການສົມທຽບລະຫວ່າງ ກຸ່ມຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງຢູ່ໃນການດຳລົງຊີວິດຂອງເຂົາເຈົ້າຈາກຄູ່ຄອງໃນປັດຈຸບັນ ຫຼື ໃນຫວ່າງບໍ່ດົນມາຢູ່ໃນຊ່ວງການດຳລົງຊີວິດ ກັບກຸ່ມຜູ້ຍິງທີ່ບໍ່ໄດ້ຮັບຄວາມຮຸນແຮງຈາກຄູ່ຄອງຢູ່ໃນຊ່ວງການດຳລົງຊີວິດ) ໄດ້ເລືອກເອົາ ""ກຸ່ມຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງ"" ແລະ ""ກຸ່ມຜູ້ຍິງທີ່ບໍ່ໄດ້ຮັບຄວາມຮຸນແຮງໃນຊ່ວງການດຳລົງຊີວິດ"" ເພາະວ່າເປັນຈຸດດ້ອຍຂອງ ""ຄວາມ ຮຸນແຮງໃນຊ່ວງການດຳລົງຊີວິດ"" ຜົນໄດ້ຮັບຂອງຜູ້ຍິງບາງຄົນນັ້ນອາດໄດ້ຮັບຄວາມຮຸນແຮງເປັນເວລາດົນນານໃນອະດີດຜ່ານມາ ແລະໃນບາງກໍລະນີ ກາຍເປັນປັດໃຈສ່ຽງທີ່ກ່ຽວຂອງໃນກ່ອນໜ້າ(ປະຈຸບັນ).

ຈຸດເສຍອື່ນທີ່ນຳໃຊ້ຄວາມຮຸນແຮງໃນຊ່ວງການດຳລົງຊີວິດ ແມ່ນມີຄວາມເປັນໄປໄດ້ໃນການຮຽກຮ້ອງສິດທິຄືນ. ນອກນັ້ນ,ການເຊື່ອມໂຍງກ່ຽວກັບຄວາມຮຸນແຮງ ອາດເປັນການຊ່ວຍຫຼຸດຜ່ອນຄວາມຮຸນແຮງຕໍ່ກັບຊ່ວງການດຳລົງຊີວິດຂອງຜູ້ຍິງໄດ້ຫຼາຍຄົນ ແລະ ອາດຈະບໍ່ສາມາດທົນຢູ່ກັບສະຖານະການທີ່ພວກເຂົາກຳລັງປະເຊີນຢູ່. (ລວມທັງຜູ້ຍິງທີ່ໄດ້ຮັບ ""ຄວາມຮຸນແຮງຜ່ານມາ"" ຜູ້ທີ່ອາດເຮັດໃຫ້ການເຊື່ອມໂຍງຄວາມຮຸນແຮງແບ່ງເບົາລົງ).

ເມື່ອສັງເກດບັນດາຈຸດເດັ່ນຂອງການເຊື່ອມໂຍງໃນປະຈຸບັນ ແມ່ນຫຼາຍກວ່າຄວາມຮຸນແຮງໃນຊ່ວງການດຳລົງຊີວິດ ໃນໜຶ່ງອາດມີຫຼາຍກວ່ານັ້ນກ່ຽວກັບຄວາມກ່ຽວພັນໃນຊົ່ວຄະນະ

ສິ່ງກ່ຽວຂ້ອງ ທີ່ມີການແຊກແຊງເຂົ້າໃນສະພາບຊີວິດການເປັນຢູ່ຂອງຜູ້ຍິງໃນປັດຈຸບັນປະກົດວ່າມີຫຼາຍຂຶ້ນ.

ການອ້າງອີງແມ່ນໄດ້ເລືອກເອົາກຸ່ມຜູ້ຍິງທີ່ບໍ່ເຄີຍຖືກທຳຮ້າຍຮ່າງກາຍ ແລະ/ຫຼື ຄວາມຮຸນແຮງທາງເພດແມ່ນມີຈຳນວນຫຼາຍກວ່າ ແຕ່ບໍ່ແມ່ນກຸ່ມທີ່ຖືກທຳຮ້າຍຮ່າງກາຍ ແລະ/ຫຼື ຄວາມຮຸນແຮງທາງເພດໃນປັດຈຸບັນ, ເພື່ອເປັນການຫຼີກລ້ຽງແບ່ງເບົາບັນຫາທີ່ກ່ຽວຂ້ອງກັບຄວາມຮຸນແຮງ ແມ່ນລວມເອົາກຸ່ມຜູ້ຍິງທີ່ປະເຊີນກັບຄວາມຮຸນແຮງໃນອະດີດ ແຕ່ໄດ້ລວມກຸ່ມທີ່ໄດ້ຮັບຄວາມຮຸນແຮງໃນ 12 ເດືອນທີ່ຜ່ານມາ.

ປັດໃຈສ່ຽງສໍາລັບການໃຊ້ຄວາມຮຸນແຮງຕໍ່ຮ່າງກາຍ ຫຼື ທາງເພດ ການວິເຄາະແມ່ນໄດ້ສຸມໃສ່ໃນການເລືອກປັດໃຈສ່ຽງ(""ຕົວປ່ຽນອິດສະຫຼະ" "ຫຼື" "ຕົວປ່ຽນສໍາພັດ"") ການເລືອກໂດຍອີງໃສ່ພື້ນຖານແນວຄວາມຄິດ ແລະ ເຜີຍແຜ່ຜົນວິເຄາະປັດໃຈສ່ຽງ ເຊັ່ນສົມມຸດວ່າ ບາງປັດໃຈສ່ຽງສະເພາະທີ່ກ່ຽວຂ້ອງກັບການສິດຢາວັກຊິນກັນໂລກໂປລີໂອ ຢູ່ໃນປະເທດລາວ.

ນອກຈາກນີ້ຍັງມີຫຼາຍປັດໃຈສ່ຽງ ຊຶ່ງເຫັນວ່າມີຄວາມຈໍາເປັນ ຕ້ອງໄດ້ມີການຄວບຄຸມບັນດາປັດໃຈນີ້ ຊຶ່ງອາດເຮັດໃຫ້ມີການປົນເປຢູ່ ຜົນໄດ້ຮັບສ່ວນຫຼາຍແມ່ນປະກົດມີຢູ່ໃນກຸ່ມອາຍຸ ແລະ ເຂດພື້ນທີ່ຂອງຜູ້ຕອບ ປັດໃຈດັ່ງກ່າວນີ້ແມ່ນໄດ້ປະຕິບັດຄືກັນກັບແນວທາງໃນການວິໃຈ ຍົກເວັ້ນພວກເຂົາຈັດຢູ່ໃນກຸ່ມຕົວແບບ ບໍ່ວ່າພວກເຂົາມີຄວາມສໍາພັນກັບຜົນໄດ້ຮັບທາງດ້ານຂໍ້ມູສະຖິຕິ ຫຼື ບໍ່. ໄດ້ມີການຕີລາຄາເບິ່ງມີ 40 ປັດໃຈທີ່ກ່ຽວຂ້ອງກັບຜູ້ຍິງ, ສາມີ, ສາຍພົວພັນ ແລະ ຢູ່ໃນສັງຄົມ.

ສໍາລັບປັດໃຈລວມມີ: ລັກສະນະປະຊາກອນຂອງຜູ້ຍິງ ແລະ ສາມີ (ທາງດ້ານອາຍຸ ແລະ ລະດັບການສຶກສາ) ປະສົບການປະເຊີນກັບຄວາມຮຸນແຮງ, ນິໃສ, ກິລິຍາທ່າທາງ, ພຶດຕິກໍາຂອງສາມີ,ລັກສະ ນະຂອງຄູ່ຜົວເມຍ ແລະ ສະໜັບສະໜູນຈາກຄອບຄົວ ແລະ ເຄືອຂ່າຍພົວພັນທີ່ໃກ້ຊິດ.

ລາຍຊື່ປະເພດຂອງຕົວປ່ຽນ ແລະ ຈໍານວນ 40 ຕົວປ່ຽນ/ປັດໃຈ ຢູ່ໃນຕາຕະລາງ 1 ໃນແຕ່ລະປັດໃຈ, ການແບ່ງອອກເປັນຫຼາຍປະເພດ (ກຸ່ມຍ່ອຍ) ນັ້ນກໍຄື ການກະຈາຍຂອງຄວາມຮຸນແຮງທາງເພດ ແລະ / ຫຼື ຄວາມຮຸນແຮງທາງຮ່າງກາຍ ສໍາລັບກຸ່ມຍ່ອຍຢູ່ໃນຕົວຢ່າງທັງໝົດ ຂອງກຸ່ມຜູ້ຍິງທີ່ໄດ້ຮັບຄວາມຮຸນແຮງຈາກຄູ່ຄອງ ແມ່ນໄດ້ເປັນບຸລິມະສິດກວດກາທົບທວນຄືນ ໃນການດໍາເນີນການວິໃຈປັດ ໃຈສ່ຽງຂອງກຸ່ມຕົວຢ່າງຍ່ອຍ.

**ຕາຕະລາງ1: ຕົວປ່ຽນອິດສະຫຼະນຳໃຊ້ເຂົ້າໃນການວິເຄາະປັດໃຈສ່ຽງສຳລັບຄວາມຮຸນແຮງຈາກຄູ່ຄອງໃນປັດຈຸບັນ (ປະເພດທຳອິດແມ່ນໃຊ້ເປັນພື້ນຖານ)**

| ຕົວປ່ຽນ | ປະເພດ |
|---|---|
| **<u>ຄຸນລັກສະນະຂອງແມ່ຍິງ</u>** | |
| ***ການວິເຄາະທາງດ້ານປະຊາກອນ*** | |
| ກຸ່ມອາຍຸ | 16-19, 20-24, 25-29, 30-34, 35-39, 40-44, 45-49, 50-54, 55-59, 60-64 |
| ການສຶກສາ | ປະຖົມ, ມັດທະຍົມຕົ້ນ, ມັດທະຍົມປາຍ, ບໍ່ໄດ້ຮຽນ |
| ສະຖານະພາບຄູ່ຄອງໃນປັດຈຸບັນ | ຄູ່ຄອງໃນປັດຈຸບັນ / ຄູ່ຄອງໃນທີ່ຜ່ານມາ |
| ອາຍຸໃນການແຕ່ງງານຄັ້ງທຳອິດ | ເທົ່າກັບຫຼືນ້ອຍກວ່າ 19 ປີ, ຊ່ວງອາຍຸ 20-29 ປີ, ອາຍຸຫຼາຍກວ່າ 30 ປີຂຶ້ນໄປ, ບໍ່ໄດ້ແຕ່ງງານ |
| ກຸ່ມຊົນເຜົ່າ | ລາວລຸ່ມ, ບໍ່ແມ່ນລາວລຸ່ມ |
| ສາດສະໜາ | ສາດສະໜາພຸດ, ບໍ່ຖືສາດສະໜາພຸດ |
| ລາຍໄດ້ເປັນເງິນສົດ | ບໍ່ໄດ້, ໄດ້ |
| ***ປະສົບການຂອງແມ່ຍິງທີ່ໄດ້ຮັບຄວາມຮຸນແຮງ*** | |
| ການທຳຮ້າຍຮ່າງກາຍຈາກຄົນອື່ນຫຼາຍກວ່າ 15 ປີ | ບໍ່ມີ, ມີ |
| ຄວາມຮຸນແຮງທາງເພດຈາກຄົນອື່ນໜ້ອຍກວ່າ 15 ປີ | ບໍ່ມີ, ມີ |
| ລ່ວງລະເມີດທາງພດອາຍຸຕໍ່າກວ່າ 15 ປີ | ບໍ່ມີ, ມີ |
| ອາຍຸເລີ່ມມີເພດສຳພັນ | <17, 18-21, 22+ |
| ປະສົບການທຳມະຊາດຮູ້ສຶກຢາກມີເພດສຳພັນ | ຢາກມີເພດສຳພັນ, ຂົ່ມຂູ່ / ບັງຄັບ |
| ຄູ່ຄອງທຳຮ້າຍຮ່າງກາຍຜູ້ເປັນແມ່ | ບໍ່ມີ, ມີ |
| ***ພຶດຕິກຳຕໍ່ແມ່ຍິງ*** | |
| ພຶດຕິກຳຕີພັນລະຍາ[24] | ບໍ່ເຄີຍມີຄວາມຍຸດຕິທຳ, ມີຄວາມຍຸດຕິທຳບາງຄັ້ງ |
| **<u>ຄຸນລັກສະນະຂອງຄູ່ຄອງ</u>** | |
| ***ການວິໃຈທາງດ້ານປະຊາກອນ*** | |
| ກຸ່ມອາຍຸ | 15-24 ປີ,25-29 ປີ, 30-34 ປີ, 35-39 ປີ, 40-49 ປີ, ອາຍຸສູງກວ່າ 50 ປີ. |
| ການສຶກສາ | ປະຖົມ, ມັດທະຍົມຕົ້ນ, ມັດທະຍົມປາຍ, ບໍ່ໄດ້ຮຽນ |
| ສະຖານະພາບໃນການເຮັດວຽກ | ເປັນນັກຮຽນ / ເຮັດວຽກ / ອື່ນໆ |
| ***ພຶດຕິກຳການກະທຳຂອງຄູ່ຄອງ*** | |
| ດື່ມສິ່ງມຶນເມົາ | ຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດ / ໜ້ອຍກວ່າໜຶ່ງຄັ້ງຕໍ່ອາທິດ |
| ຕິດຢາ | ເຄີຍ,ບໍ່ເຄີຍ |
| ຕໍ່ສູ້ຕີກັບຄົນຜູ້ຊາຍອື່ນ | ບໍ່ມີ, ມີ |
| ມີການພົວພັນຄົບຊູ້ | ບໍ່ມີ, ມີ / ບາງທີ |
| ***ປະສົບການຄວາມຮຸນແຮງໃນຄູ່ຄອງ*** | |
| ຜູ້ເປັນແມ່ທຳຮ້າຍ | ບໍ່ມີ, ມີ |
| ຖືກທຳຮ້າຍຕີກັບເດັກນ້ອຍ | ບໍ່ມີ, ມີ |

[26] Justification for beating was a rather robust variable (Cronbach alpha coefficient = 0.85). Note, the gender attitudes scale as measured in the survey was rejected as useless because it showed an unacceptably low score when tested for reliability (Cronbach alpha coefficient = 0.36).

| | |
|---|---|
| <u>**ລັກສະນະຂອງຄູ່ຜົວເມຍ / ສາຍພົວພົນ**</u> | |
| ***ລັກສະນະຂອງສາຍພົວພັນ*** | |
| ຄວາມແຕກຕ່າງຂອງອາຍຸ | ອາຍຸແກ່ກວ່າບໍ່ເກີນ 2 ປີ, ແມ່ຍິງເຖົ້າກວ່າ, ສາມີແກ່ກວ່າ 3-8 ປີ , ສາມີແກ່ກວ່າ 9 ປີຂຶ້ນໄປ |
| ຄວາມແຕກຕ່າງທາງດ້ານການສຶກສາ | ລະດັບການສຶກສາເທົ່າກັນ, ແມ່ຍິງຮຽນຈົບຂັ້ນຊັ້ນສູງ, ຜູ້ຊາຍຮຽນຈົບຂັ້ນຊັ້ນສູງ, |
| ການປະກອບສ່ວນສ້າງຄອບຄົວ | ແມ່ຍິງປະກອບສ່ວນໜ້ອຍກວ່າ, ເທົ່າທຽມກັນ, ຫຼາຍ, ແມ່ຍິງບໍ່ມີລາຍຮັບຫຍັງ |
| ບົດບາດຂອງແມ່ຍິງໃນການເລືອກຄູ່ຄອງ | ແມ່ຍິງ/ທັງສອງ, ຝ່າຍໃດຝ່າຍໜຶ່ງ, ບໍ່ໄດ້ຈົດທະບຽນສົມລົດ, |
| ***ຄວາມຮັບຜິດຊອບກ່ຽວກັບເດັກນ້ອຍ*** | |
| ຈຳນວນເດັກນ້ອຍທີ່ມີຊີວິດຢູ່ | ຈຳນວນ 0 ຄົນ, ຈຳນວນ 1-2 ຄົນ, ຈຳນວນ 3-4 ຄົນ, ຈຳນວນ 5 ຄົນຂຶ້ນໄປ, ບໍ່ມີເດັກນ້ອຍ |
| ເພດເດັກນ້ອຍ | ມີແຕ່ລູກຊາຍ, ແຕ່ລູກຍິງ, ມີທັງລູກຊາຍ ແລະ ລູກຍິງ, ບໍ່ມີເດັກນ້ອຍ |
| ***ສະຖານະພາບທາງດ້ານເສດຖະກິດ-ສັງຄົມ*** | |
| ດັດສະນີຊັບສິນພາຍໃນເຮືອນ[25] | ຊັບສິນນ້ອຍ, ຊັບສິນປານກາງ, ຊັບສິນຫຼາຍ |
| ***ຄຸນຄ່າທາງສັງຄົມ*** | |
| ຄວາມຜູກພັນໃກ້ສິດກັບຄອບຄົວຝ່າຍຍິງ | ບໍ່ມີ, ມີ / ໃກ້ສິດທັງສອງ |
| ຄວາມຖີ່ໃນການຕິດຕໍ່ກັບຄອບຄົວຝ່າຍຍິງ | ຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດ, ໜ້ອຍກວ່າໜຶ່ງຄັ້ງຕໍ່ອາທິດ |
| ສ້າງຄອບຄົວຈາກສະມາຊິກສາມາດນັບໄດ້ | ໄດ້, ບໍ່ໄດ້ ບໍ່ຮູ້ / ບໍ່ມີຄຳຕອບ |
| ອາໃສຢູ່ກັບຄອບຄົວຜູ້ເປັນພັນລະຍາ | ບໍ່ແມ່ນ, ແມ່ນ |
| ອາໃສຢູ່ກັບຄອບຄົວຜູ້ເປັນສາມີ | ບໍ່ແມ່ນ, ແມ່ນ |
| ເຕີບໂຕມາໃນສະພາບແວດລ້ອມຊຸມຊົນດຽວກັນ | ບໍ່ແມ່ນ, ແມ່ນ |
| ເຕີບໂຕມາໃນກຸ່ມອື່ນ | ແມ່ນ, ບໍ່ແມ່ນ |
| ໄດ້ຮັບການຊ່ວຍເຫຼືອຈາກບ້ານໃກ້ຄຽງໃນເວລາເຈັບປ່ວຍ | ແມ່ນ, ບໍ່ແມ່ນ |
| ***ຄຸນລັກສະນາທາງພູມມີສາດ*** | |
| ເຂດພື້ນທີ່ | ພາກເໜືອ, ພາກກາງ, ພາກໃຕ້ |
| ໃນເມືອງ / ຊົນລະບົດ | ໃນເມືອງ, ຊົນລະບົດ |

## ຍຸດທະສາດໃນການວິໃຈສຳລັບວິໃຈປັດໃຈສ່ຽງ

ໂດຍການນຳໃຊ້ເນື້ອໃນຂອງຕົວຢ່າງຍ່ອຍ, ການວິເຄາະຕົວຜັນປ່ຽນທົດຖອຍ ເຂົ້າໃນການປະເມີນຂໍ້ມູນດິບຂອງການເຊື່ອມໂຍງລະຫວ່າງແຕ່ລະການບົ່ມຊ້ອນຂອງປັດໃຈສ່ຽງ ແລະ ການໄດ້ຮັບຄວາມຮຸນແຮງຈາກຄູ່ຄອງໃນ 12 ເດືອນທີ່ຜ່ານມາ. ໃນຂະນະດຽວກັນໄດ້ນຳໃຊ້ຫຼາຍຕົວປ່ຽນຖົດຖອຍໂລຈິກ ໃນບັນຊີຄວາມສຳພັນ ສຳລັບຜົນກະທົບຂອງປັດໃຈໃນຫຼາຍປະການພ້ອມກັນ. ຜົນໄດ້ຮັບໄດ້ສະແດງສຳນວນ ""ອັດຕາສ່ວນຄົກ"", ອັດຕາສ່ວນຂອງເລກຄົກຂອງຄວາມຮຸນແຮງຢູ່ໃນ ກຸ່ມທີ່ປະກົດມີລັກສະນະດັ່ງກ່າວ ມາສົມທຽບກັບເລກຄົກຂອງຄວາມຮຸນແຮງຢູ່ໃນກຸ່ມທີ່ບໍ່ປະກົດມີລັກສະນະດັ່ງກ່າວ(ກຸ່ມພື້ນຖານ).

ອັດຕາສ່ວນຄົກຂໍ້ມູນດິບເປັນຜົນຂອງການວິໃຈຕົວຜັນປ່ຽນຕາມ, ພຽງແຕ່ພິຈາລະນາສະເພາະຄ່າເພີ່ມ ຂອງປັດໃຈ, ຜົນໄດ້ຮັບຂອງການວິໃຈຕົວປ່ຽນຫຼາຍຕົວຄືການປັບອັດຕາສ່ວນຄົກ ແລະ ສະທ້ອນໃຫ້ ເຫັນເລກຄົກທີ່ຍັງຄົງມີຢູ່ ທັງທີ່ຜົນຂອງປັດໃຈຕົວອື່ນທັງໝົດເປັນສັດສ່ວນພ້ອມກັນທັງໝົດການວິໃຈ ຕົວຜັນປ່ຽນຕາມຖົດຖອຍ ແມ່ນພິຈາລະນາເປັນຄ່າທີ່ສຳຄັນອາດເປັນຄ່າຂອງ 0.10 ຫຼື ຕ່ຳກວ່າ ຄວາມສຳພັນຂອງບັນດາຕົວປ່ຽນກ່ຽວກັບຄວາມຮຸນແຮງຂອງຄູ່ຄອງ ຢູ່ໃນການວິໃຈຕົວຜັນປ່ຽນຖົດຖອຍ ໄດ້ກວມລວມຢູ່ໃນຮູບແບບຫຼາຍຕົວປ່ຽນໂລຊິກຖົດຖອຍລະດັບກາງ ຊຶ່ງຢູ່ໃນຂັ້ນຕອນກາງທີ່ໄດ້ຮັບຄຳຕອບຂອງບັນດາຕົວປ່ຽນສຸດທ້າຍ ທີ່ຖືກນຳໃຊ້ເຂົ້າໃນຮູບແບບໂລຊິກສຸດທ້າຍ. ສຳລັບອາຍຸ ແລະ ຊົນເຜົ່າແມ່ນລວມຢູ່ໃນ

[27] A proxy for socio-economic status was computed using questions on the assets in the household. The term "Assets index" was preferred because the index does not correspond exactly with the household socio-economic level as estimated in other surveys. The method for computing the SES/assets index is described in Annex 3.

ຕົວແບບບໍ່ວ່າຈະເປັນຄ່າ P (ສໍາລັບປັດໃຈກ່ຽວກັບອາຍຸແມ່ນມີການດັດແປງ ແຕ່ສໍາລັບຊີ້ນເຜົ່າແລ້ວແມ່ນກໍານົດຕາຍໂຕ ເນື່ອງຈາກວ່າບົດລາຍງານໄດ້ສະແດງໃຫ້ເຫັນລະດັບຄວາມຮຸນແຮງຂອງແຕ່ລະເຂດພື້ນທີ່ນັ້ນມີຄວາມແຕກຕ່າງກັນ)

ສໍາລັບຕົວແບບໂລຊິກຫຼາຍຕົວປ່ຽນຖົດຖອຍຂະໜາດກາງ ຄ່າທີ່ໜ້າຈະເປັນແມ່ນ 0.10 ຫຼື ຕໍ່າກວ່າ ແມ່ນເປັນຄ່າທີ່ສໍາຄັນໄດ້ພິຈາລະນາເຂົ້າໃນຕົວແບບສຸດທ້າຍ (ອາຍຸ ແລະ ຊີ້ນເຜົ່າລວມກັນ ) ສໍາລັບຕົວແບບສຸດທ້າຍ ຄ່າທີ່ໜ້າຈະເປັນແມ່ນ 0.05 ຫຼື ຕໍ່າກວ່າແມ່ນໄດ້ພິຈາລະນາເປັນຄ່າທີ່ສໍາຄັນເຂົ້າໃນການຄົ້ນຄວ້າ ຊຶ່ງປັດໃຈໃດທີ່ເປັນຕົວປ່ຽນອິດສະຫຼະ ມີການກ່ຽວຂ້ອງກັບການໃຊ້ວັກຊີນປ້ອງກັນໂລກໂປລີໂອ.

ໃນການວິໃຈທັງໝົດແມ່ນນໍາໃຊ້ໂປຼແກມສະຖິຕິ STATA ເວີຊັນ12.  ປັດໃຈສໍາລັບໂລຊິກຖົດຖອຍ ແມ່ນຄິດເປັນຊັ້ນ ແລະ ໄດ້ລວມເອົາຕົວຢ່າງຍຸດທະສາດຂອງກຸ່ມທໍາມະຊາດ (ຊຶ່ງລວມກັບນໍ້າໜັກ ຕົວຢ່າງ).

# ເອກະສານຊ້ອນທ້າຍ V: ຕາລາງສະຖິຕິ

**ຕາຕະລາງ 3.1. ຕົວຢ່າງບຸກຄົນ ແລະ ຄອບຄົວທີ່ໄດ້ຮັບ ແລະ ສັດສ່ວນຄຳຕອບ ຢູ່ໃນ ສປປ ລາວ ປີ 2014**

| | ໃນເມືອງ | | ຊົນລະບົດ | | ຊົນລະບົດ ທີ່ບໍ່ມີທາງລົດ | | ພາກເໜືອ | | ພາກກາງ | | ພາກໃຕ້ | | ລວມ | |
|---|---|---|---|---|---|---|---|---|---|---|---|---|---|---|
| | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % |
| **ຈຳນວນຄອບຄົວທັງໝົດຢູ່ໃນການເກັບກຳຂໍ້ມູນຕົວຢ່າງ** | **900** | **100.0** | **1,800** | **100** | **300** | **100** | **950** | **100** | **1,473** | **100** | **580** | **100** | **3,000** | **100** |
| ທີ່ຢູ່ອາໃສເປົ່າຫວ່າງ | | - | | - | | - | | - | | - | | - | | - |
| ທີ່ຢູ່ອາໃສຖືກທຳລາຍ | | - | | - | | - | | - | | - | | - | | - |
| ບໍ່ມີທີ່ຢູ່ອາໃສ | | - | | - | | - | | - | | - | | - | | - |
| ພາສາເວົ້າແປກ (ທີ່ບໍ່ໄດ້ມີການຮັບຮອງ) | | - | | - | | - | | - | | - | | - | | - |
| **ຈຳນວນຄອບຄົວທີ່ໄດ້ລົງໄປເກັບກຳຂໍ້ມູນຕົວຈິງ (ມີການຮັບຮອງ)** | **900** | **100.0** | **1,800** | **100** | **300** | **100** | **950** | **100** | **1,473** | **100** | **580** | **100** | **3,000** | **100** |
| ຄອບຄົວທີ່ບໍ່ມາ | | - | | - | | - | | - | | - | | - | | - |
| ບໍ່ມີຄົນຢູ່ພາຍໃນເຮືອນ | | - | 1 | 0 | | - | | - | 1 | 0 | | - | 1 | 0 |
| ປະຕິເສດການຈັດລະດັບຄອບຄົວ | 1 | 0 | 1 | 0 | | - | | - | 2 | 0 | | - | 2 | 0 |
| **ໄດ້ສຳເລັດການສຳພາດຄອບຄົວ (ອັດຕາຄຳຕອບອີງໃສ່ຕົວຈິງ)** | **899** | **99.9** | **1,798** | **99.9** | **300** | **100** | **950** | **100** | **1,470** | **99.8** | **580** | **100** | **2,997** | **99.9** |
| ແມ່ຍິງບໍ່ມີເງື່ອນໄຂພາຍໃນຄອບຄົວ | - | | - | | - | | - | | - | | - | | - | - |
| **ຈຳນວນຄອບຄົວທີ່ແມ່ຍິງມີເງື່ອນໄຂໄດ້ຮັບການຄັດເລືອກ** | **899** | **100.0** | **1,798** | **100** | **300** | **100** | **950** | **100** | **1,470** | **100.0** | **580** | **100** | **2,997** | **100.0** |
| ເລືອກແມ່ຍິງບໍ່ຢູ່ບ້ານ | | - | | - | | - | | - | | - | | - | | - |
| ເລືອກແມ່ຍິງທີ່ບໍ່ມີຄວາມສາມາດໃດໆ | | - | | - | | - | | - | | - | | - | | - |
| ແມ່ຍິງທີ່ໄດ້ຮັບການຄັດເລືອກໄດ້ປະຕິເສດ | | - | | - | | - | | - | | - | | - | | - |
| ບໍ່ຕ້ອງການສືບຕໍ່ (ໄດ້ສຳເລັດໄປແລ້ວບາງສ່ວນ) | | - | | - | | - | | - | | - | | - | | - |
| **ໄດ້ສຳເລັດການສຳພາດໃນລາຍບຸກຄົນ (ອັດຕາຄຳຕອບ ແມ່ນອີງໃສ່ການເລືອກເອົາເຮືອນທີ່ແມ່ຍິງມີເງື່ອນໄຂ)** | **899** | **100.0** | **1,798** | **100.0** | **300** | **100** | **950** | **100** | **1,470** | **100.0** | **580** | **100** | **2,997** | **99.9** |

**ຕາຕະລາງ 3.2 ລັກສະນະຂອງຄຳຕອບຢູ່ໃນຕົວຢ່າງ (ບໍ່ມີນ້ຳໜັກ ແລະ ມີນ້ຳໜັກສຳລັບຈຳນວນແມ່ຍິງທີ່ມີສິດພາຍໃນຄອບຄົວ) ຢູ່ໃນ ສປປ ລາວ ປີ 2014**

| | ໃນເມືອງ (ບໍ່ມີນ້ຳໜັກ) | | | | ຊົນນະບົດ (ບໍ່ມີນ້ຳໜັກ) | | | | ຊົນນະບົດທີ່ບໍ່ມີທາງລົດ (ບໍ່ມີນ້ຳໜັກ) | | | | ລວມ (ບໍ່ມີນ້ຳໜັກ) | | | | ລວມ (ມີນ້ຳໜັກ) | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ຄຳຕອບທັງໝົດ | | ເຄີຍມີຄູ່ຮ່ວມຊີວິດ | | ຄຳຕອບທັງໝົດ | | ເຄີຍມີຄູ່ຮ່ວມຊີວິດ | | ຄຳຕອບທັງໝົດ | | ເຄີຍມີຄູ່ຮ່ວມຊີວິດ | | ຄຳຕອບທັງໝົດ | | ເຄີຍມີຄູ່ຮ່ວມຊີວິດ | | ຄຳຕອບທັງໝົດ | | ເຄີຍມີຄູ່ຮ່ວມຊີວິດ | |
| | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % | ຈຳນວນ | % |
| **ລວມ** | **899** | **100.0** | **831** | **100.0** | **1,798** | **100.0** | **1,726** | **100.0** | **300** | **100.0** | **289** | **100.0** | **2,997** | **100.0** | **2,847** | **100.0** | **2,997** | **100.0** | **2,847** | **100.0** |
| **ເຂດພາກພື້ນ** | | | | | | | | | | | | | | | | | | | | |
| ພາກເໜືອ | 230 | 25.6 | 218 | 26.2 | 580 | 32.3 | 556 | 32.2 | 140 | 46.7 | 131 | 45.3 | 950 | 31.7 | 905 | 31.8 | 817 | 27.3 | 779 | 27.4 |
| ພາກກາງ | 539 | 60.0 | 495 | 59.6 | 848 | 47.2 | 825 | 47.8 | 80 | 26.7 | 78 | 27.0 | 1,467 | 49.0 | 1,398 | 49.1 | 1,575 | 52.6 | 1,500 | 52.7 |
| ພາກໃຕ້ | 130 | 14.5 | 118 | 14.2 | 370 | 20.6 | 346 | 20.1 | 80 | 26.7 | 80 | 27.7 | 580 | 19.4 | 544 | 19.1 | 604 | 20.2 | 568 | 19.9 |
| **ສາສະໜາ** | | | | | | | | | | | | | | | | | | | | |
| ພຸດ | 781 | 86.9 | 725 | 87.2 | 1,150 | 64.0 | 1,114 | 64.5 | 102 | 34.0 | 100 | 34.6 | 2,033 | 67.8 | 1,938 | 68.1 | 2,150 | 71.7 | 2,063 | 72.5 |
| ຄຣິດສະຕຽນ | 6 | 0.7 | 5 | 0.6 | 42 | 2.3 | 37 | 2.1 | 2 | 0.7 | 2 | 0.7 | 50 | 1.7 | 44 | 1.6 | 51 | 1.7 | 42 | 1.5 |
| ຜີ | 108 | 12.0 | 97 | 11.7 | 597 | 33.2 | 568 | 32.9 | 188 | 62.7 | 180 | 62.3 | 893 | 29.8 | 845 | 29.7 | 772 | 25.7 | 728 | 25.6 |
| ອື່ນໆ | 4 | 0.4 | 4 | 0.5 | 9 | 0.5 | 8 | 0.5 | 8 | 2.7 | 7 | 2.4 | 21 | 0.7 | 19 | 0.7 | 24 | 0.8 | 13 | 0.5 |
| **ລະດັບການສຶກສາ** | | | | | | | | | | | | | | | | | | | | |
| ບໍ່ໄດ້ເຂົ້າໂຮງຮຽນ | 112 | 12.5 | 106 | 12.8 | 589 | 32.8 | 573 | 33.2 | 158 | 52.7 | 153 | 52.9 | 859 | 28.7 | 832 | 29.2 | 813 | 27.1 | 801 | 28.1 |
| ປະຖົມ | 327 | 36.4 | 318 | 38.3 | 836 | 46.5 | 816 | 47.3 | 121 | 40.3 | 117 | 40.5 | 1,283 | 42.8 | 1,251 | 43.9 | 1,260 | 42.1 | 1,242 | 43.6 |
| ມັດທະຍົມຕົ້ນ | 199 | 22.1 | 191 | 23.0 | 243 | 13.5 | 226 | 13.1 | 16 | 5.3 | 15 | 5.2 | 458 | 15.3 | 432 | 15.2 | 465 | 15.5 | 432 | 15.2 |
| ອຸດົມສຶກສາ | 261 | 29.0 | 216 | 26.0 | 130 | 7.2 | 112 | 6.5 | 5 | 1.7 | 4 | 1.4 | 396 | 13.2 | 332 | 11.7 | 458 | 15.3 | 372 | 13.1 |
| **ຊົນເຜົ່າ** | | | | | | | | | | | | | | | | | | | | |
| ລາວລຸ່ມ | 760 | 84.5 | 706 | 85.0 | 1,164 | 64.7 | 1,124 | 65.1 | 83 | 27.7 | 82 | 28.4 | 2,033 | 67.8 | 1,912 | 67.2 | 2,115 | 70.6 | 2,030 | 71.3 |

| | | | | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ຂະມຸ | 95 | 10.6 | 84 | 10.1 | 421 | 23.4 | 397 | 23.0 | 185 | 61.7 | 181 | 62.6 | 50 | 1.7 | 662 | 23.3 | 625 | 20.9 | 574 | 20.2 |
| ລາວມົ້ງ | 10 | 1.1 | 10 | 1.2 | 84 | 4.7 | 82 | 4.8 | 7 | 2.3 | 4 | 1.4 | 893 | 29.8 | 96 | 3.4 | 97 | 3.2 | 95 | 3.3 |
| ອື່ນໆ | 34 | 3.8 | 31 | 3.7 | 129 | 7.2 | 124 | 7.2 | 25 | 8.3 | 22 | 7.6 | 21 | 0.7 | 177 | 6.2 | 159 | 5.3 | 149 | 5.2 |
| **ກຸ່ມອາຍຸ** | | | | | | | | | | | | | | | | | | | | |
| 15-19 | 33 | 3.7 | 9 | 1.1 | 104 | 5.8 | 59 | 3.4 | 27 | 9.0 | 21 | 7.3 | 164 | 5.5 | 89 | 3.1 | 203 | 6.8 | 98 | 3.4 |
| 20-24 | 82 | 9.1 | 65 | 7.8 | 275 | 15.3 | 266 | 15.4 | 49 | 16.3 | 47 | 16.3 | 406 | 13.6 | 378 | 13.3 | 384 | 12.8 | 343 | 12.1 |
| 25-29 | 80 | 8.9 | 69 | 8.3 | 212 | 11.8 | 203 | 11.8 | 39 | 13.0 | 37 | 12.8 | 331 | 11.0 | 309 | 10.9 | 279 | 9.3 | 253 | 8.9 |
| 30-34 | 123 | 13.7 | 118 | 14.2 | 266 | 14.8 | 263 | 15.2 | 43 | 14.3 | 43 | 14.9 | 432 | 14.4 | 424 | 14.9 | 311 | 10.4 | 306 | 10.8 |
| 35-39 | 122 | 13.6 | 119 | 14.3 | 263 | 14.6 | 262 | 15.2 | 35 | 11.7 | 34 | 11.8 | 420 | 14.0 | 415 | 14.6 | 357 | 11.9 | 359 | 12.6 |
| 40-44 | 142 | 15.8 | 139 | 16.7 | 232 | 12.9 | 229 | 13.3 | 34 | 11.3 | 34 | 11.8 | 408 | 13.6 | 402 | 14.1 | 424 | 14.2 | 429 | 15.1 |
| 45-49 | 117 | 13.0 | 114 | 13.7 | 176 | 9.8 | 175 | 10.1 | 32 | 10.7 | 32 | 11.1 | 325 | 10.8 | 321 | 11.3 | 381 | 12.7 | 387 | 13.6 |
| 50-54 | 99 | 11.0 | 97 | 11.7 | 127 | 7.1 | 127 | 7.4 | 19 | 6.3 | 19 | 6.6 | 245 | 8.2 | 243 | 8.5 | 314 | 10.5 | 321 | 11.3 |
| 55-59 | 62 | 6.9 | 62 | 7.5 | 86 | 4.8 | 86 | 5.0 | 9 | 3.0 | 9 | 3.1 | 157 | 5.2 | 157 | 5.5 | 206 | 6.9 | 211 | 7.4 |
| 59-64 | 39 | 4.3 | 39 | 4.7 | 57 | 3.2 | 57 | 3.3 | 13 | 4.3 | 13 | 4.5 | 109 | 3.6 | 109 | 3.8 | 137 | 4.6 | 141 | 4.9 |
